**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

(ຮ່າງທີ 5)

# ແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030)

ຄຳຂວັນ: “ຍົກສູງຈິດໃຈມຸ່ງໝັ້ນພັດທະນາ
ຢ່າງແຮງກ້າ, ຕັ້ງໜ້າສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ,
ນຳໃຊ້ທຸກທ່າແຮງຢ່າງມີປະສິດທິຜົນ, ພັດທະນາເສດຖະກິດ-
ສັງຄົມຕາມທິດວ່ອງໄວ, ສີຂຽວ ແລະ ຍືນຍົງ”

**ນະຄອນຫຼວງວຽງຈັນ**
**8 ພະຈິກ 2025**

# ສາລະບານ

ພາກທີ 1: ການສະຫຼຸບຕີລາຄາການຈັດຕັ້ງປະຕິບັດຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025) ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ........................ 1

I. ຕີລາຄາການຈັດຕັ້ງປະຕິບັດຍຸດທະສາດການພັດທະນາເສດຖະກິດ-ສັງຄົມ 10 ປີ (2016-2025)..................2

II. ການສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX(2021-2025) ..........................................................................................................................6

1. ຕີລາຄາທົດທາງລວມ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025)..........6

2. ຜົນໄດ້ຮັບຂອງແຕ່ລະເປົ້າໝາຍ ແລະ ວຽກຈຸດສຸມຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ..................................................................................7

1. ເປົ້າໝາຍທີໜຶ່ງ: ດ້ານເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ ...........7

*1.1 ວຽກງານຊຸກຍູ້ການເຕີບໂຕເສດຖະກິດທີ່ມີຄຸນນະພາບ ແລະ ຍືນຍົງ..............................................7*

*1.2 ວຽກງານສ້າງເສດຖະກິດມະຫາພາກມີຄວາມເຂັ້ມແຂງ ແລະ ໝັ້ນທ່ຽງ.......................................10*

*1.3 ວຽກງານຍົກສູງປະສິດທິພາບການລົງທຶນໃຫ້ມີຄຸນນະພາບ ແລະ ມີປະສິດທິຜົນສູງ .......................13*

*1.4 ວຽກງານພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ຈນວ) ໄປສູ່ຄຸນນະພາບໃໝ່ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ...................................13*

*1.5 ວຽກງານພັດທະນາວິສາຫະກິດລັດ ແລະ ເສດຖະກິດຮ່ວມໝູ່ຂອງປະຊາຊົນ ໃຫ້ມີປະສິດ ທິພາບ ແລະ ປະສິດທິຜົນສູງ ເພື່ອສ້າງພື້ນຖານອັນໜັກແໜ້ນໃຫ້ແກ່ການຜະລິດ ແລະ ການບໍລິການສັງຄົມ ທັງປະກອບສ່ວນສ້າງລາຍຮັບເຂົ້າງົບປະມານລັດໃຫ້ສົມທົບກັບການລົງທຶນ...................................14*

2. ເປົ້າໝາຍທີ ສອງ: ການພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບ ສາມາດຕອບສະໜອງຄວາມຕ້ອງການຂອງການພັດທະນາ, ມີຄວາມສາມາດຄົ້ນຄວ້າ ແລະ ນຳໃຊ້ວິທະຍາສາດ-ເຕັກໂນໂລຊີ ເພື່ອຍົກສູງປະສິດທິພາບ ແລະ ສ້າງມູນຄ່າເພີ່ມການຜະລິດ ແລະ ການບໍລິການ.................................................15

*2.1 ວຽກງານປັບປຸງຄຸນນະພາບການສຶກສາໃນທຸກລະດັບໃຫ້ສູງຂຶ້ນ ແລະ ມີຄວາມພ້ອມໃນການເຊື່ອມໂຍງກັບພາກພື້ນ ແລະ ສາກົນ...............................................................................................15*

*2.2 ວຽກງານປັບປຸງການບໍລິການດ້ານສາທາລະນະສຸກ ແລະ ໂພຊະນາການຢ່າງທົ່ວເຖິງ ແລະ ມີຄຸນນະພາບສູງຂຶ້ນ. ........................................................................................................................18*

*2.3 ວຽກງານພັດທະນາກຳລັງແຮງງານໃຫ້ມີສີມື, ຄວາມສຳນານງານ ແລະ ມີລະບຽບວິໄນສູງຂຶ້ນ ທັງມີຄວາມຫຼາກຫຼາຍວິຊາຊີບ, ມີວຽກເຮັດງານທຳທີ່ໝັ້ນຄົງ, ມີລາຍໄດ້ສູງຂຶ້ນ ..................................21*

*2.4 ວຽກງານສົ່ງເສີມການຄົ້ນຄ້ວາ ແລະ ນຳໃຊ້ຜົນການຄົ້ນຄ້ວາວິທະຍາສາດ, ເຕັກໂນໂລຊີ, ເຕັກ ນິກວິຊາການ, ນະວັດຕະກຳໃໝ່ ແລະ ພູມປັນຍາ ເຂົ້າໃນການຊຸກຍູ້ການພັດທະນາເສດຖະ ກິດ-ສັງຄົມ........24*

3. ເປົ້າໝາຍທີສາມ: ຊີວິດການເປັນຢູ່ຂອງປະຊາຊົນທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນໄດ້ຮັບການຍົກລະດັບໃຫ້ດີຂຶ້ນເທື່ອລະກ້າວ ............................................................................................24

*3.1 ວຽກງານພັດທະນາຊົນນະບົດ ແລະ ເຂດຫ່າງໄກສອກຫຼີກທີ່ຍັງຫຍຸ້ງຍາກ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ, ການປັບປຸງຄຸນຄ່າດ້ານວັດທະນະທຳ ແລະ ວຽກງານສິ່ງແວດລ້ອມໄດ້ຮັບການປັບປຸງດີຂຶ້ນ 24*

*3.2 ວຽກງານປັບປຸງ ແລະ ສະໜອງໂຄງລ່າງພື້ນຖານການບໍລິການດ້ານສາທາລະນຸປະໂພກໃຫ້ປະຊາຊົນຢ່າງທົ່ວເຖິງ.......................................................................................................................26*

*3.3 ວຽກງານສົ່ງເສີມໃຫ້ແມ່ຍິງ ແລະ ເດັກໄດ້ເຂົ້າເຖິງການພັດທະນາ, ມີຄວາມສະເໝີພາບຍິງ-ຊາຍ ແລະ ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດຢ່າງເຕັມສ່ວນຈາກການພັດທະນາເສດຖະກິດ-ສັງຄົມ....26*

DRAFT

*3.4 ວຽກງານສົ່ງເສີມ ແລະ ພັດທະນາຊັບພະຍາກອນໜຸ່ມໃຫ້ມີຄຸນນະພາບ ແລະ ມີວຽກເຮັດງານທຳຫຼາຍຂຶ້ນ ........ 31*

*3.5 ວຽກງານສົ່ງເສີມປະຊາຊົນ ແລະ ຜູ້ອອກແຮງງານພາກວິສາຫະກິດ, ຜູ້ປະກອບອາຊີບພາກອິດສະຫຼະ ເຂົ້າເຖິງການບໍລິການປົກປ້ອງສັງຄົມທີ່ມີປະສິດທິຜົນດີຂຶ້ນ ........ 33*

*3.6 ວຽກງານເກັບກູ້ລະເບີດບໍ່ທັນແຕກ ແລະ ຊີວິດຂອງປະຊາຊົນມີຄວາມປອດໄພຈາກລະເບີດບໍ່ທັນແຕກ ເພີ່ມຂຶ້ນເທື່ອລະກ້າວ ........ 35*

4. ເປົ້າໝາຍທີ 4: ການປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມສົມດຸນ ແລະ ຫຼຸດຜ່ອນຄວາມສ່ຽງຈາກໄພພິບັດຕ່າງໆ36

*4.1 ວຽກງານຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ໃຫ້ມີຄວາມຍືນຍົງ ........ 36*

*4.2 ວຽກງານການເຕີບໂຕສີຂຽວ ແລະ ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ, ກວ້າງຂວາງ ແລະ ເຂົ້າສູ່ລວງເລິກ ........ 39*

*4.3 ວຽກງານເພີ່ມທະວີການປ້ອງກັນ, ການຄວບຄຸມ ແລະ ການຟື້ນຟູຫຼັງໄພພິບັດຕ່າງໆ ........ 43*

5. ເປົ້າໝາຍທີ 5: ການສ້າງໂຄງລ່າງພື້ນຖານທີ່ມີຄວາມເຂັ້ມແຂງ, ນຳໃຊ້ທ່າແຮງ, ກາລະໂອກາດທີ່ຕັ້ງ, ເຂົ້າຮ່ວມຂະບວນການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນຢ່າງເປັນເຈົ້າການ ........ 45

*5.1 ວຽກງານພັດທະນາໂຄງລ່າງພື້ນຖານທີ່ສາມາດເຊື່ອມໂຍງ-ເຊື່ອມຈອດພາຍໃນ, ພາກພື້ນ ແລະ ສາກົນ ເພື່ອເອື້ອອຳນວຍໃຫ້ແກ່ການຜະລິດ, ການບໍລິການ, ການຄ້າ ແລະ ການລົງທຶນ ........ 45*

*5.1.1 ການເຊື່ອມຈອດທາງບົກ, ທາງນ້ຳ, ທາງອາກາດ ແລະ ທາງລາງ ........ 45*

*5.1.2 ການເຊື່ອມຈອດໂທລະຄົມມະນາຄົມ ແລະ ການສື່ສານ ........ 46*

*5.2 ວຽກງານພົວພັນຮ່ວມມື, ການເຊື່ອມໂຍງການຄ້າ ແລະ ການລົງທຶນ ກັບພາກພື້ນ ແລະ ສາກົນ ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ແລະ ກວ້າງຂວາງຂຶ້ນກວ່າເກົ່າ ........ 48*

*5.3 ວຽກງານການພັດທະນາເຂດແຄ້ວນ ແລະ ທ້ອງຖິ່ນໃຫ້ມີຄວາມເຂັ້ມແຂງ ແລະ ສອດຄ່ອງກັບທ່າແຮງບົ່ມຊ້ອນ ........ 48*

*5.4 ວຽກງານພັດທະນາຕົວເມືອງ ແລະ ເຂດເສດຖະກິດພິເສດ ໃຫ້ກາຍເປັນຖານການຜະລິດ, ການລົງທຶນ, ການຄ້າ ແລະ ການທ່ອງທ່ຽວ ເພື່ອເຊື່ອມໂຍງກັບພາກພື້ນ ແລະ ສາກົນ ........ 49*

6. ເປົ້າໝາຍທີ 6: ການຄຸ້ມຄອງ-ບໍລິຫານລັດມີປະສິດທິພາບ, ສັງຄົມມີຄວາມສະເໝີພາບ, ຍຸຕິທຳ ແລະ ໄດ້ຮັບການປົກປ້ອງຕາມທິດການປົກຄອງດ້ວຍກົດໝາຍທີ່ສັກສິດ ແລະ ເຂັ້ມງວດ ........ 51

*6.1 ວຽກງານຍົກສູງປະສິດທິພາບການປົກຄອງ-ການຄຸ້ມຄອງບໍລິຫານລັດໃຫ້ມີຄວາມກະທັດຮັດ, ວ່ອງໄວ ແລະ ເຂັ້ມງວດຕາມກົດໝາຍ ແລະ ວຽກງານ 3 ສ້າງໃຫ້ເຂົ້າສູ່ລວງເລິກ ແລະ ປະຕິບັດຕົວຈິງຢ່າງມີປະສິດທິຜົນ ........ 51*

*6.2 ວຽກງານປັບປຸງກົນໄກ, ລະບຽບການປະສານງານລະຫວ່າງພາກລັດດ້ວຍກັນໃຫ້ມີຄວາມເປັນເອກະພາບ ແລະ ວ່ອງໄວຂຶ້ນ ........ 53*

*6.3 ວຽກງານຮັບປະກັນໃຫ້ມີສະຖຽນລະພາບທາງດ້ານການເມືອງ, ມີຄວາມສະຫງົບ ແລະ ມີຄວາມເປັນລະບຽບ ຮຽບຮ້ອຍໃນສັງຄົມ, ສັງຄົມມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ 53*

7. ການຈັດຕັ້ງປະຕິບັດເງື່ອນໄຂການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ LDC ........ 54

8. ເປົ້າໝາຍການພັດທະນາແບບຍືນຍົງ (SDGs): ........ 55

3. ຕີລາຄາລວມ ........ 56

3.1 ຕີລາຄາຜົນສຳເລັດທີ່ພົ້ນເດັ່ນ ........ 56

3.2 ສາເຫດທີ່ພາໃຫ້ມີຈຸດດີ, ຜົນງານ ........ 56


DRAFT

3.3 ຈຸດອ່ອນ, ຂໍ້ຄົງຄ້າງ ........................................................................................................... 57
3.4 ສາເຫດທີ່ພາໃຫ້ມີຈຸດອ່ອນ, ຂໍ້ຄົງຄ້າງ ........................................................................................... 58
3.5 ບົດຮຽນຖອດຖອນໄດ້ ........................................................................................................ 59
ພາກທີ 2: ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ..................................... 60
I. ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2026-2035) ແລະ ວິໄສທັດຮອດປີ 2055 ຂອງ ສປປ ລາວ ........................................................................................................ 61
II. ຄວາມສຳຄັນຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ......................63
III. ການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່ ............................................................64
IV. ຄາດຄະເນສະພາບແວດລ້ອມທີ່ເອື້ອອຳນວຍ ແລະ ສິ່ງທ້າທາຍ ......................................................... 65
1. ກາລະໂອກາດ ແລະ ສິ່ງທ້າທາຍຂອງພາກພື້ນ, ສາກົນ ແລະ ພາຍໃນ ................................................65
2. ທ່າແຮງບົ່ມຊ້ອນ ........................................................................................................ 65
V. ທິດທາງລວມ, ເປົ້າໝາຍ, ຄາດໝາຍ ແລະ ແຜນວຽກຈຸດສຸມ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ....................................................................................... 68
2. ທິດທາງລວມ ........................................................................................................ 69
3. ເປົ້າໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030) .......................69
4. ແຜນວຽກຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ..........69
4.1 ເປົ້າໝາຍທີ 1: ສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ດ້ວຍການນຳໃຊ້ທ່າແຮງເພື່ອເຮັດໃຫ້ເສດຖະກິດມີສະຖຽນລະພາບ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ ...................69
*4.1.1 ແຜນວຽກຈຸດສຸມທີ 1: ນຳໃຊ້ທ່າແຮງ ເພື່ອຍູ້ແຮງເສດຖະກິດໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄວາມເຂັ້ມແຂງ ແລະ ມີຄຸນນະພາບສູງຂຶ້ນ ............................................................................70*
*4.1.2 ແຜນວຽກຈຸດສຸມທີ 2: ເສດຖະກິດມະຫາພາກມີຄວາມເຂັ້ມແຂງ ແລະ ໝັ້ນທ່ຽງ ..........................79*
*4.1.3 ແຜນວຽກຈຸດສຸມທີ 3: ຍົກສູງປະສິດທິພາບການລົງທຶນ ໃຫ້ມີຄຸນນະພາບ ແລະ ມີປະສິດທິຜົນສູງ...82*
*4.1.4 ແຜນວຽກຈຸດສຸມທີ 4: ພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໄປສູ່ຄຸນນະພາບໃໝ່ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ. .......................83*
*4.1.5 ແຜນວຽກຈຸດສຸມທີ 5: ພັດທະນາລັດວິສາຫະກິດ ແລະ ເສດຖະກິດລວມໝູ່ຂອງປະຊາຊົນ ມີຄຸນນະພາບ ແລະ ມີຄວາມເຂັ້ມແຂງ. ............................................................................84*
*4.1.6 ແຜນວຽກຈຸດສຸມທີ 6: ພັດທະນາເສດຖະກິດດິຈິຕອນໃຫ້ມີຄວາມເຂັ້ມແຂງ ເພື່ອຂັບເຄື່ອນການພັດທະນາເສດຖະກິດ-ສັງຄົມ ໃຫ້ມີການຂະຫຍາຍຕົວທີ່ຍືນຍົງ ..............................................85*
4.2 ເປົ້າໝາຍທີ 2: ພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບສູງຂຶ້ນ ແລະ ສາມາດຮູ້ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ ............................................................................................85
*4.2.1 ແຜນວຽກຈຸດສຸມທີ 1: ພັດທະນາການສຶກສາໃຫ້ມີຄຸນນະພາບ ເພື່ອຮອງຮັບການພັດທະນາຂອງປະເທດຊາດ ..............................................................................................86*
*4.2.2 ແຜນວຽກຈຸດສຸມທີ 2: ປັບປຸງວຽກງານສາທາລະນະສຸກ ແລະ ການບໍລິການດ້ານສາທາລະນະສຸກ ໃຫ້ມີຄຸນນະພາບ ແລະ ທົ່ວເຖິງ ..........................................................................................90*
*4.2.3 ແຜນວຽກຈຸດສຸມທີ 3: ພັດທະນາສີມືແຮງງານໃຫ້ໄດ້ປະລິມານ ແລະ ຄຸນນະພາບ ເພື່ອຕອບສະໜອງຄວາມຕ້ອງການພັດທະນາ ..........................................................................92*
*4.2.4 ແຜນວຽກຈຸດສຸມທີ 4: ບຸກຄະລາກອນຂອງພາກລັດໄດ້ຮັບການພັດທະນາ ແລະ ມີຄຸນນະພາບສູງຂຶ້ນ ..............................................................................................94*

4.3 ເປົ້າໝາຍທີ 3: ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ, ຕົວເມືອງ ແລະ ຊົນນະບົດໄດ້ຮັບການພັດທະນາຢ່າງສົມດູ່ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ຫຼຸດລົງເທື່ອລະກ້າວ ........................95

*4.3.1 ແຜນວຽກຈຸດສຸມທີ 1: ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ມີຄຸນນະພາບດີຂຶ້ນ ........................96*

*4.3.2 ແຜນວຽກຈຸດສຸມທີ 2: ປັບປຸງວຽກງານຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ ໃຫ້ທົ່ວເຖິງ ແລະ ມີຄຸນນະພາບສູງຂຶ້ນ........................98*

*4.3.3 ແຜນວຽກຈຸດສຸມທີ 3: ສົ່ງເສີມ ແລະ ພັດທະນາໄວໜຸ່ມ, ແມ່ຍິງ, ເດັກ ແລະ ຄວາມສະເໝີພາບຍິງ-ຊາຍ ໃຫ້ມີຄຸນນະພາບດີຂຶ້ນ........................100*

*4.3.4 ແຜນວຽກຈຸດສຸມທີ 4: ພັດທະນາວຽກງານຖະແຫຼງຂ່າວໃຫ້ທັນສະໄໝ ແລະ ວ່ອງໄວ, ສົ່ງເສີມວັດທະນະທຳ ທີ່ເປັນເອກະລັກຂອງຊາດ, ກ້າວໜ້າ ແລະ ສ້າງໃຫ້ສັງຄົມມີຄວາມສາມັກຄີເປັນປຶກແຜ່ນ ແລະ ສີວິໄລ ........................104*

*4.3.5 ແຜນວຽກຈຸດສຸມທີ 5: ປັບປຸງລະບົບປະກັນສັງຄົມ-ປົກປ້ອງສັງຄົມໃຫ້ກວ້າງຂວາງ ແລະ ມີຄຸນນະພາບ 105*

*4.3.6 ແຜນວຽກຈຸດສຸມທີ 6: ແກ້ໄຂບັນຫາລະເບີດບໍ່ທັນແຕກ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກລະເບີດບໍ່ທັນແຕກ ໃຫ້ດີຂຶ້ນເທື່ອລະກ້າວ........................108*

4.4 ເປົ້າໝາຍທີ 4: ປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໃຫ້ມີຄວາມຍືນຍົງ ແລະ ສາມາດກຽມພ້ອມຮັບມືກັບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດຕ່າງໆ........................108

*4.4.1 ແຜນວຽກຈຸດສຸມທີ 1: ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດປ່າໄມ້, ທີ່ດິນ, ນ້ຳ ແລະ ແຮ່ທາດ ຢ່າງມີແຜນການ, ປະຢັດ, ໃຫ້ເກີດຜົນປະໂຫຍດສູງສຸດ ແລະ ມີຄວາມຍືນຍົງ........................109*

*4.4.2 ແຜນວຽກຈຸດສຸມທີ 2: ສົ່ງເສີມວຽກງານການເຕີບໂຕສີຂຽວ ແລະ ວຽກງານການແກ້ໄຂບັນຫາປ່ຽນແປງດິນຟ້າອາກາດ ເພື່ອຫຼຸດຜ່ອນ ແລະ ເພີ່ມການດູດຊັບທາດອາຍເຮືອນແກ້ວ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ແລະ ກວ້າງຂວາງ ........................112*

*4.4.3 ແຜນວຽກຈຸດສຸມທີ 3: ເພີ່ມທະວີການປ້ອງກັນ, ການຄວບຄຸມ ແລະ ການຟື້ນຟູຫຼັງໄພພິບັດຕ່າງໆ..113*

4.5 ເປົ້າໝາຍທີ 5: ການເຊື່ອມໂຍງ-ເຊື່ອມຈອດກັບພາກພື້ນ ແລະ ສາກົນຢ່າງກວ້າງຂວາງ ແລະ ມີປະສິດທິຜົນ 114

*4.5.1 ແຜນວຽກຈຸດສຸມທີ 1: ພັດທະນາໂຄງລ່າງພື້ນຖານທີ່ສາມາດເຊື່ອມຈອດ-ເຊື່ອມໂຍງພາຍໃນ, ພາກພື້ນ ແລະ ສາກົນ ເພື່ອເອື້ອອຳນວຍໃຫ້ແກ່ການຜະລິດ, ການບໍລິການ, ການຄ້າ ແລະ ການລົງທຶນ .........114*

*4.5.2 ແຜນວຽກຈຸດສຸມທີ 2: ເສີມຂະຫຍາຍການພົວພັນຮ່ວມມື, ການເຊື່ອມໂຍງການຄ້າ ແລະ ການລົງທຶນກັບພາກພື້ນ ແລະ ສາກົນ ຢ່າງຕັ້ງໜ້າ ແລະ ກວ້າງຂວາງຂຶ້ນກວ່າເກົ່າ........................117*

*4.5.3 ແຜນວຽກຈຸດສຸມທີ 3: ພັດທະນາເຂດແຄວ້ນ ແລະ ທ້ອງຖິ່ນ ໃຫ້ມີຄວາມສົມດຸນ, ເຂັ້ມແຂງ ແລະ ສອດຄ່ອງກັບທ່າແຮງບົ່ມຊ້ອນ........................118*

*4.5.4 ແຜນວຽກຈຸດສຸມທີ 4: ການພັດທະນາຕົວເມືອງ ແລະ ເຂດເສດຖະກິດພິເສດ ໃຫ້ກາຍເປັນຖານການຜະລິດ, ການລົງທຶນ, ການຄ້າ ແລະ ການທ່ອງທ່ຽວ ເພື່ອເຊື່ອມໂຍງກັບພາກພື້ນ ແລະ ສາກົນ .....122*

4.6 ເປົ້າໝາຍທີ 6: ການຄຸ້ມຄອງ-ບໍລິຫານລັດໃຫ້ມີປະສິດທິພາບ, ການເມືອງມີສະຖຽນລະພາບ, ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ຍຸຕິທຳ ແລະ ສີວະໄລ ........................124

*4.6.1 ແຜນວຽກຈຸດສຸມທີ 1: ຍົກສູງປະສິດທິພາບການປົກຄອງ-ການຄຸ້ມຄອງບໍລິຫານລັດໃຫ້ມີຄວາມກະທັດຮັດ, ວ່ອງໄວ ແລະ ເຂັ້ມງວດຕາມກົດໝາຍ ແລະ ແລະ ວຽກງານ 3 ສ້າງ ໃຫ້ເຂົ້າສູ່ລວງເລິກ ແລະ ປະຕິບັດຕົວຈິງຢ່າງມີປະສິດທິຜົນສູງ........................124*

DRAFT

*4.6.2 ແຜນວຽກຈຸດສຸມທີ 2: ປັບປຸງກົນໄກ, ລະບຽບການປະສານງານລະຫວ່າງພາກລັດດ້ວຍກັນໃຫ້ມີຄວາມເປັນເອກະພາບ ແລະ ວ່ອງໄວຂຶ້ນ ......125*

*4.6.3 ແຜນວຽກຈຸດສຸມທີ 3: ຮັບປະກັນໃຫ້ມີສະຖຽນລະພາບທາງດ້ານການເມືອງ, ມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ສັງຄົມມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ ......126*

ພາກທີ 3: ມາດຕະການ, ນະໂຍບາຍ ແລະ ກົນໄກຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ...... 130

I. ມາດຕະການ ແລະ ນະໂຍບາຍ ......131

1. ການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ......131
2. ການພັດທະນາຊັບພະຍາກອນມະນຸດ ......134
3. ສິ່ງເສີມຊີວິດການເປັນຢູ່ທີ່ດີ ແລະ ສັງຄົມທີ່ໜ້າຢູ່ ......135
4. ປົກປັກຮັກສາສິ່ງແວດລ້ອມ ແລະ ຫຼຸດຜ່ອນຄວາມສ່ຽງຈາກຜົນກະທົບຕ່າງໆ ......136
5. ສ້າງໂຄງລ່າງທີ່ມີຄວາມທົນທານ ເພື່ອເຊື່ອມຈອດ-ເຊື່ອມໂຍງໃນທຸກລະດັບ ......137
6. ປັບປຸງການຄຸ້ມຄອງບໍລິຫານພາກລັດ ......137

II. ກົນໄກການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ......138

III. ການແບ່ງຄວາມຮັບຜິດຊອບຈຳນວນໜຶ່ງໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ: ......139

DRAFT

# ພາກທີ 1:
# ການສະຫຼຸບຕີລາຄາ
# ການຈັດຕັ້ງປະຕິບັດແຜນພັດທະນາ
# ເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງ
# ທີ IX (2021-2025)

DRAFT

# I. ຕີລາຄາການຈັດຕັ້ງປະຕິບັດຍຸດທະສາດການພັດທະນາເສດຖະກິດ-ສັງຄົມ 10 ປີ (2016-2025)

ຍຸດທະສາດການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄລຍະ 10 ປີ (2016-2025) ແລະ ວິໄສທັດຮອດປີ 2035 ເປັນແຜນການໄລຍະຍາວ ເພື່ອຜັນຂະຫຍາຍມະຕິກອງປະຊຸມໃຫ່ຍຂອງພັກ ຄັ້ງທີ X ແລະ XI ແລະ ໄດ້ຈັດຕັ້ງປະຕິບັດຜ່ານແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ແລະ ຄັ້ງທີ IX (2021-2025). ແຜນການດັ່ງກ່າວ ໄດ້ດໍາເນີນໃນສະພາບການດ້ານການເມືອງ, ເສດຖະກິດ ແລະ ສັງຄົມໂລກ ມີຜັນແປໂດຍໄວ ແລະ ມີຄວາມສະລັບຊັບຊ້ອນ ໂດຍສະເພາະ ບັນຫາການປ່ຽນແປງລະບຽບການຂອງໂລກແບບໃໝ່, ບັນຫາຂໍ້ຂັດແຍ່ງດ້ານສົງຄາມໃນຫຼາຍພາກພື້ນ, ບັນຫາການລະພະຍາດໂຄວິດ-19 ແລະ ອື່ນໆ ເຊິ່ງໄດ້ສົ່ງຜົນກະທົບຫຼາຍດ້ານຕໍ່ການຜັນຂະຫຍາຍເນື້ອໃນຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ໄລຍະ 10 (2016-2025) ແລະ ວິໄສທັດ ປີ 2030, ເຖິງແນວໃດກໍ່ຕາມ ດ້ວຍຄວາມພະຍາຍາມຂອງສູນກາງພັກ, ລັດຖະບານ, ການຕິດຕາມຢ່າງໃກ້ສິດຂອງສະພາແຫ່ງຊາດ ແລະ ສະພາທ້ອງຖິ່ນ ຕະຫຼອດຮອດປະເທດເພື່ອນ, ຄູ່ຮ່ວມພັດທະນາ ແລະ ການປະກອບສ່ວນຂອງປະຊາຊົນບັນດາເຜົ່າ ໄດ້ເຮັດຫຼາຍຄາດໝາຍໄດ້ຮັບການຈັດຕັ້ງປະຕິບັດ, ເຊິ່ງສາມາດຕີລາຄາໝາກຜົນ ດັ່ງນີ້:

**1. ຜົນສໍາເລັດຂອງການຈັດຕັ້ງປະຕິບັດບັນດາຄາດໝາຍຕົ້ນຕໍຂອງຍຸດທະສາດການພັດທະນາເສດຖະກິດ-ສັງຄົມໃນໄລຍະ 10 ປີ (2016-2025)**

- ການເມືອງມີສະຖຽນລະພາບ ແລະ ໝັ້ນຄົງ ຮັກສາໄດ້ຄວາມສະຫງົບປອດໄພໃນສັງຄົມ ແລະ ຄວາມສາມັກຄີປອງດອງພາຍໃນຊາດ;
- ສປປ ລາວ ສາມາດບັນລຸເງື່ອນໄຂຂອງການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາໃນປີ 2018, 2021, 2024 ແລະ ປະຈຸບັນກໍາລັງຢູ່ໃນໄລຍະຂ້າມຜ່ານອອກຈາກບັນຊີປະເທດດ້ອຍພັດທະນາໃນປີ 2026;
- ການຂະຫຍາຍຕົວເສດຖະກິດຂອງ ສປປລາວ (GDP) ສະເລ່ຍປະມານ 5% ຕໍ່ປີ ເຊິ່ງຕໍ່າກວ່າຄາດໝາຍສູ້ຊົນໃນລະດັບ 7,5% ຕໍ່ປີ. ລາຍຮັບຕໍ່ຫົວຄົນ GDP ສາມາດບັນລຸໄດ້ 2.200 ໂດລາສະຫະລັດ/ຄົນ ໃນປີ 2025 ເພີ່ມຂຶ້ນຈາກລະດັບ 1.700 ໂດລາສະຫະລັດ/ຄົນ ໃນປີ 2015 ເພີ່ມຂຶ້ນປະມານ 30%;
- ອັດຕາຄວາມທຸກຍາກຮອດປີ 2025 ຢູ່ໃນລະດັບ 15%, ຫຼຸດຈາກລະດັບ 23% ປີ 2013;
- ດັດສະນີການພັດທະນາມະນຸດ (HDI) ບັນລຸໄດ້ໃນລະດັບ 0,62 ໃນປີ 2024 ເຊິ່ງຈັດຢູ່ໃນລໍາດັບ 139 ໃນຈໍານວນ 193 ປະເທດ, ສົມທຽບລະດັບຄ່າດັດສະນີການພັດທະນາມະນຸດ 0,47 ໃນປີ 2015;
- ອັດຕາການປົກຫຸ້ມຂອງເນື້ອທີ່ປ່າໄມ້ບັນລຸໄດ້ໃນລະດັບ 63% ເຊິ່ງຕໍ່າກວ່າລະດັບຄາດໝາຍ 70% ທີ່ໄດ້ກໍານົດໄວ້;

**2. ຕີລາຄາການຈັດຕັ້ງປະຕິບັດ 7 ຍຸດທະສາດບູລິມະສິດ**

**2.1 ຍຸດທະສາດການພັດທະນາເສດຖະກິດ ທີ່ມີສະຖຽນລະພາບຕາມທິດຄຸນນະພາບ, ດຸນດ່ຽງ, ຍືນຍົງ ແລະ ສີຂຽວ**

ເສດຖະກິດ ຂອງ ສປປ ລາວ ຍັງສືບຕໍ່ມີການຂະຫຍາຍຕົວດ້ານບວກຢ່າງຕໍ່ເນື່ອງ ໃນໄລຍະທີ່ທົ່ວໂລກ ໄດ້ປະເຊີນກັບສະພາບຄວາມຫຍຸ້ງຍາກດ້ານການເມືອງ, ເສດຖະກິດ ແລະ ການລະບາດຂອງພະຍາດໂຄວິດ-19. ເຖິງຢ່າງໃດກໍ່ຕາມ, ການພັດທະນາເສດຖະກິດຂອງ ສປປ ລາວ ຍັງບໍ່ທັນຮັບປະກັນຕາມທິດຄຸນນະພາບ ແລະ ຍືນຍົງ; ການຫັນປ່ຽນໂຄງປະກອບເສດຖະກິດຍັງບໍ່ທັນໄວຕາມທິດການຫັນເປັນອຸດສາຫະກໍາ ແລະ ທັນສະໄໝ, ອາໄສການຂັບເຄື່ອນຈາກຂະແໜງຊັບພະຍາກອນທໍາມະຊາດ ແລະໂຄງການກໍ່ສ້າງພື້ນຖານຂະໜາດໃຫ່ຍຈໍານວນໜຶ່ງ. ນອກຈາກນັ້ນ, ການຂະຫຍາຍຕົວເສດຖະກິດບໍ່ທັນສ້າງການກະຈ່າຍລາຍໄດ້ທົ່ວສັງຄົມ ແລະ ສ້າງວຽກເຮັດງານທໍາເພີ່ມຂຶ້ນຕາມຄາດໝາຍທີ່ໄດ້ກໍານົດໄວ້.

**2.2 ຍຸດທະສາດຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ (LDC) ແລະ ການຈັດຕັ້ງບັນດາເປົ້າໝາຍການພັດທະນາແບບຍືນຍົງ (SDG)**

❖ **ການປະຕິບັດຍຸດທະສາດຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ (LDC)**

- **ຄາດໝາຍດ້ານລາຍຮັບແຫ່ງຊາດຕໍ່ຫົວຄົນ (GNI Per capita):** ລາຍຮັບແຫ່ງຊາດຕໍ່ຫົວຄົນຂອງ ສປປ ລາວ ໃນການປະເມີນປີ 2024 ສາມາດບັນລຸໄດ້ໃນລະດັບ 2.500 ໂດລາສະຫະລັດ/ຄົນ ເຊິ່ງສູງກວ່າຄ່າລະດັບມາດຕະຖານ 1.360 ໂດລາສະຫະລັດ/ຄົນ ຫຼື ເກືອບ 2 ເທົ່າຂອງຄ່າມາດຕະຖານທີ່ກຳນົດໄວ້ ແລະ ເພີ່ມຂຶ້ນຈາກລະດັບ 1.242 ໂດລາສະຫະລັດ/ຄົນໃນປີ 2015;
- **ດັດສະນີຊັບສິນມະນຸດ (HAI):** ດັດສະນີຊັບສິນມະນຸດຂອງ ສປປ ລາວ ໃນການປະເມີນປີ 2024 ສາມາດບັນລຸໃນລຳດັບ 74,8 ເຊິ່ງສູງກ່ວາຄ່າມາດຕະຖານ 66 ເຊິ່ງ ສປປ ລາວ ສາມາດບັນລຸຄ່າມາດຕະຖານ HAI ນັບແຕ່ການປະເມີນໃນປີ 2018 ເປັນຕົ້ນມາ;
- **ດັດສະນີຄວາມບອບບາງດ້ານເສດຖະກິດ (EVI):** ໃນການປະເມີນປີ 2021 ແລະ 2024, ສປປລາວ ສາມາດປັບປຸງຄ່າດັດສະນີ EVI ໃຫ້ຕໍ່າກວ່າຄາດມາດຕະຖານ 32.

❖ **ການຈັດຕັ້ງບັນດາເປົ້າໝາຍການພັດທະນາແບບຍືນຍົງ (SDG)**

ການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງມາຮອດປະຈຸບັນຍັງບໍ່ທັນມີຕົວຊີ້ວັດໃດໃນຈຳນວນ 18 ຕົວຊີ້ວັດທີ່ ສປປລາວ ສາມາດບັນລຸເປົ້າໝາຍ SDG ໄດ້ເທື່ອ. ໃນນີ້, ມີ 11 ເປົ້າໝາຍຂອງ SDG ທີ່ມີຄວາມຄືບໜ້າດ້ານບວກທີ່ຈະກ້າວໄປສູ່ການບັນລຸຄາດໝາຍ, ມີ 2 ເປົ້າໝາຍທີ່ມີທ່າອ່ຽງຫຼຸດລົງ ແລະ 5 ເປົ້າໝາຍຍັງບໍ່ທັນສາມາດປະເມີນຄວາມຄືບໜ້າໄດ້ ເນື່ອງຈາກຂາດຊຸດຂໍ້ມູນໃນການປະເມີນທ່າອ່ຽງ;

ເຖິງຢ່າງໃດກໍ່ຕາມ, ບັນດາຕົວຊີ້ວັດດ້ານສັງຄົມ ແລະ ການພັດທະນາມະນຸດ ໄດ້ມີຄວາມຄືບໜ້າ ແລະ ມີທິດທາງດ້ານບວກທີ່ຈະບັນລຸ ບັນດາຄາດໝາຍຂອງການພັດທະນາແບບຍືນຍົງສາກົນ (SDG) ແລະ ສາມາດອອກຈາກປະເທດດ້ອຍພັດທະນາໃນປີ 2026 ເປັນຕົ້ນ: ອັດຕາຄວາມທຸກຍາກ, ອັດຕາການເຂົ້າໂຮງຮຽນຂັ້ນປະຖົມ, ອັດຕາການຕາຍຂອງເດັກ ແລະ ອື່ນໆ, ແຕ່ຍັງເຫັນວ່າບັນຫາຄວາມແຕກໂຕນຂອງຕົວຊີ້ວັດດ້ານສັງຄົມ ແລະ ຄວາມທຸກຍາກລະ ຫວ່າງກຸ່ມຄົນຮັ່ງມີ ແລະ ທຸກຍາກ, ເຂດຕົວເມືອງ ແລະ ຊົນນະບົດ, ລະຫວ່າງກຸ່ມຊົນເຜົ່າ ຍັງມີຊ່ອງວ່າງສູງ.

### 2.3 ຍຸດທະສາດການພັດທະນາຊັບພະຍາກອນມະນຸດ

ລະດັບຄວາມຮູ້ ແລະ ຄວາມສາມາດຂອງຊັບພະຍາກອນມະນຸດຍັງຢູ່ໃນລະດັບຕໍ່າກວ່າບັນດາປະເທດຢູ່ໃນພາກພື້ນ. ກຳລັງແຮງງານສ່ວນໃຫຍ່ຍັງຂາດທັກສະສີມື ເຊິ່ງບໍ່ທັນຕອບສະໜອງກັບຄວາມຕ້ອງການຕົວຈິງຂອງພາກການຜະລິດ ແລະ ບໍ່ສາມາດດຶງດູດການລົງທຶນຕ່າງປະເທດທີ່ມີຄຸນນະພາບ. ໃນປັດຈຸບັນ, ລະດັບດັດຊະນີການພັດທະນາມະນຸດຂອງ ສປປ ລາວ ຈັດຢູ່ໃນລະດັບ 139 ໃນ ຈຳນວນທັງໝົດ 191 ປະເທດ (ຂໍ້ມູນປີ 2022). ດ້ານສິ່ງທ້າທ້າຍ, ສປປ ລາວ ຍັງປະເຊີນກັບສະພາບການອອກໂຮງຮຽນ ໃນລະດັບຊັ້ນມັດທະຍົມ ແລະ ບັນຫາຄຸນນະພາບຂອງການຮຽນການສອນ ເຊິ່ງເປັນປັດໄຈສຳຄັນຕໍ່ການຂາດແຮງງານທີ່ທັກສະສີມື ແລະ ເກີດມີສະພາບການວ່າງງານສູງໂດຍສະເພາະແມ່ນກຸ່ມໄວໜຸ່ມ.

### 2.4 ຍຸດທະສາດການປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງຕາມທິດສີຂຽວ

ລັດຖະບານ ໄດ້ສ້າງ ແລະ ປັບປຸງບັນດານະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ນິຕິກຳຕ່າງໆ ເພື່ອຄຸ້ມຄອງຊັບພະຍາກອນທຳມະຊາດ ໃຫ້ມີຄວາມຍືນຍົງ ອັນພົ້ນເດັ່ນ ໄດ້ສຳເລັດຍຸດທະສາດການເຕີບໂຕສີຂຽວ, ຍຸດທະສາດການຄຸ້ມຄອງທີ່ດິນ, ໄດ້ປັບປຸງກົນໄກ ແລະ ລະບຽບການຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ອື່ນໆ ເຊິ່ງເປັນເຄື່ອງມືສຳຄັນໃນການຄຸ້ມຄອງຊັບພະຍາກອນທຳມະຊາດ. ແຕ່ເຖິງແນວໃດກໍ່ຕາມ, ໃນໄລຍະຜ່ານມາການຄຸ້ມຄອງໂຄງການພັດທະນາຈຳນວນນຶ່ງ ຍັງບໍ່ທັນຮັດກຸມ ເຊິ່ງໄດ້ສ້າງຜົນກະທົບຕໍ່ກັບຊັບພະຍາກອນທຳມະຊາດ ແລະ ທຳລາຍສິ່ງແວດລ້ອມ ໂດຍສະເພາະໂຄງການລົງທຶນຂະໜາດໃຫ່ຍໃນຂະແໜງ ຂຸດຄົ້ນແຮ່ທາດ ແລະ ພະລັງງານຈຳນວນ

ໜຶ່ງໄດ້ສ້າງຜົນສະທ້ອນຕໍ່ເຂດປ່າສະຫງວນ, ສ້າງຄວາມເສຍຫາຍໃຫ້ແກ່ແຫຼ່ງນໍ້າ ແລະ ແຫຼ່ງຊີວະນາໆພັນຕ່າງໆ ລວມທັງການເປ່ເພຂອງພື້ນຖານໂຄ່ງລ່າງ ເຊັ່ນ: ເສັ້ນທາງຫຼວງແຫ່ງຊາດຕ່າງໆ.

### 2.5 ຍຸດທະສາດການເພີ່ມທະວີຜົນສັກສິດຂອງລະບົບການຄຸ້ມຄອງບໍລິຫານລັດດ້ວຍກົດໝາຍ

ລັດຖະບານໄດ້ສ້າງບັນດານິຕິກໍາ-ລະບຽບການໃນຫຼາຍຂົງເຂດ, ແຕ່ດ້ານການປະຕິບັດຕົວຈິງ ຍັງບໍ່ທັນເຂັ້ມງວດ ແລະ ເດັດຂາດ ເຊິ່ງເຮັດໃຫ້ການຄຸ້ມຄອງການພັດທະນາເສດຖະກິດ-ສັງຄົມ ບໍ່ທັນໄປຕາມທິດລັດແຫ່ງກົດໝາຍ. ກົນໄກການບໍລິການ ແລະ ອໍານວຍຄວາມສະດວກຂອງລັດໃນຫຼາຍຂົງເຂດວຽກງານ ຍັງບໍ່ທັນເຂັ້ມແຂງ ແລະ ໂລ່ງລ່ຽນ. ນະໂຍບາຍ, ກົນໄກ ແລະ ມາດຕະການສະໜັບສະໜູນ ແລະ ປະສານງານລະຫວ່າງຂະແໜງການຂອງພາກລັດ, ລັດ ແລະ ເອກະຊົນຍັງບໍ່ເຂັ້ມແຂງ ແລະ ບໍ່ໄປໃນລວງດຽວກັນ.

### 2.6 ຍຸດທະສາດການເຊື່ອມໂຍງ-ເຊື່ອມຈອດກັບພາກພື້ນ

ໄດ້ສໍາເລັດການປັບປຸງ ແລະ ພັດທະນາໂຄງລ່າງພື້ນຖານທີ່ສໍາຄັນຫຼາຍຢ່າງ ເປັນຕົ້ນເສັ້ນທາງຫຼວງແຫ່ງຊາດ, ເສັ້ນທາງດ່ວນ, ເສັ້ນທາງລົດໄຟ, ເຂດບໍລິການທ່າບົກ, ທ່າເຮືອສາກົນ ແລະ ອື່ນໆ ເຊິ່ງສາມາດອໍານວຍຄວາມສະດວກໃຫ້ ສປປ ລາວ ກາຍເປັນປະເທດເຊື່ອດຈອດກັບພາກພື້ນ ແລະ ສາກົນ ແລະ ສາມາດຂັບເຄື່ອນການຂະຫຍາຍຕົວເສດຖະກິດ. ຄຽງຄູ່ກັນນັ້ນ, ເສັ້ນທາງແຫ່ງຊາດ ແລະ ແຂວງ ຈໍານວນຫຼາຍຍັງບໍ່ທັນໄດ້ຮັບການປັບປຸງ ແລະ ພຽງພໍຕໍ່ສະພາບຄວາມຕ້ອງການຂອງເສດຖະກິດໃນໄລຍະປັດຈຸບັນ ໂດຍສະເພາະເສັ້ນທາງເຂົ້າເຖິງເຂດການຜະລິດ ເຊິ່ງເປັນອຸປະສັກຕໍ່ການພັດທະນາເສດຖະກິດ-ສັງຄົມ ໃນຫຼາຍທ້ອງຖິ່ນ ແລະ ບໍ່ສາມາດເຊື່ອມຈອດກັບໂອກາດດ້ານເສດຖະກິດໃນເຂດຕົວເມືອງ ແລະ ປະເທດເພື່ອນບ້ານໄດ້ຢ່າງເຕັມສ່ວນ.

### 2.7 ຍຸດທະສາດການຫັນເປັນອຸດສາຫະກໍາ ແລະ ທັນສະໄໝ

ການຫັນເປັນອຸດສາຫະກໍາ ແລະ ທັນສະໄໝຂອງ ສປປລາວ ຍັງບໍ່ທັນມີຄວາມຄືບໜ້າໂດຍໄວ, ພື້ນຖານການຜະລິດອຸດສາ ຫະກໍາປຸງແຕ່ງຍັງມີຈໍາກັດ ເຊິ່ງສະແດງອອກມູນຄ່າຂອງການຜະລິດໃນຂະແໜງອຸດສາຫະກໍາປຸງແຕ່ງກວມເອົາພຽງແຕ່ 8% ຂອງ GDP ເທົ່ານັ້ນ, ເຊັ່ນດຽວກັນກັບຂະແໜງບໍລິການ ແລະ ທັນສະໄໝ ເປັນຕົ້ນ: ການບໍລິການຂົນສົ່ງໂລຊິດສະຕິກ, ທະນາຄານ, ໂທລະຄົມມະນາຄົມ ກວມເອົາພຽງແຕ່ 5,1% ຂອງ GDP. ການຜະລິດອຸດສາຫະກໍາສ່ວນໃຫ່ຍແມ່ນການນໍາໃຊ້ວັດຖຸດິບ ແລະ ເຕັກໂນໂລຊີທີ່ນໍາເຂົ້າຈາກຕ່າງປະເທດ ເຊິ່ງເຮັດໃຫ້ບໍ່ສາມາດສ້າງມູນຄ່າເພີ່ມຕໍ່ເສດຖະກິດໄດ້ຫຼາຍ.

➢ **ສາເຫດທີ່ພາໃຫ້ມີຈຸດອ່ອນ**

- ການຜັນຂະຫຍາຍຍຸດທະສາດເຂົ້າສູ່ແຜນການພັດທະນາຂອງຂະແໜງການ, ແຜນງານ ແລະ ໂຄງການຍັງບໍ່ທັນເປັນຮູບປະທໍາ ແລະ ເປັນລວງດຽວກັນຢ່າງກົມກຽວ. ການສ້າງຍຸດທະສາດຂອງຂະແໜງການບໍ່ທັນຄໍານຶງເຖິງໝາກຜົນ ລວມຂອງການພັດທະນາເສດຖະກິດ-ສັງຄົມທີ່ໄດ້ກໍານົດທິດທາງອອກແລ້ວ;
- ການປະຕິບັດລະບຽບ, ນິຕິກໍາກ່ຽວກັບການພັດທະນາເສດຖະກິດ-ສັງຄົມຍັງບໍ່ທັນເຂັ້ມງວດຮັດກຸມ ແລະ ສັກສິດ ໂດຍສະເພາະການປະຕິບັດລະບຽບວິໄນແຜນການ-ການເງິນ ແລະ ການຄຸ້ມຄອງບັນດາໂຄງການລົງທຶນຂະໜາດໃຫ່ຍ ເຊິ່ງເປັນປັດໃຈສໍາຄັນທີ່ພາໃຫ້ເກີດມີສະພາບການສ້າງໜີ້ສິນ ແລະ ສ້າງຜົນກະທົບຕໍ່ການຄຸ້ມຄອງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ລວມທັງສິ່ງຜົນກະທົບຕໍ່ກັບການດໍາລົງຊີວິດຂອງປະຊາຊົນ;
- ຄວາມຮູ້-ຄວາມສາມາດດ້ານຊັບພະຍາກອນມະນຸດ ບໍ່ທັນສາມາດສ້າງເງື່ອນໄຂຕໍ່ການພັດທະນາເສດຖະກິດ-ສັງຄົມຂອງປະເທດ. ພະນັກງານ-ລັດຖະກອນຍັງມີລະດັບຄວາມຮູ້-ຄວາມສາມາດທີ່ບໍ່ສູງ ແລະ ບໍ່ຕອບສະໜ

DRAFT

ອງໄດ້ຕາມຕ້ອງການຂອງວຽກງານໄລຍະໃໝ່, ການຊັບຊ້ອນຈັດວາງພະນັກງານຈຳນວນໜຶ່ງຍັງບໍ່ຖືກຕາມຕຳແໜ່ງງານ ແລະ ວິຊາສະເພາະ;

- ກົນໄກການເຮັດວຽກລະຫວ່າງຂະແໜງການສູນກາງ ແລະ ທ້ອງຖິ່ນໃນຫຼາຍວຽກງານຍັງບໍ່ທັນກົມກຽວກັນດີ, ຍັງມີກົນໄກຫຼາຍຂັ້ນຫຼາຍຂອດ ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຈຸດສຸມບໍ່ເປັນເອກະພາບ ແລະ ມີປະສິດທິພາບພາບຕໍ່າ, ພ້ອມທັງການແບ່ງຂັ້ນການຄຸ້ມຄອງຍັງບໍ່ທັນຊັດເຈນ;
- ງົບປະມານຊຸກຍູ້ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຍັງບໍ່ພຽງພໍຕໍ່ກັບຄວາມຕ້ອງການຕົວຈິງ, ເນື່ອງຈາກຄວາມຫຍຸ້ງຍາກດ້ານງົບປະມານລັດ, ບັນຫາໜີ້ສິນຄົງຄ້າງ. ບັນດາໂຄງການພັດທະນາ ໂດຍສະເພາະຂະແໜງການພັດທະນາສັງຄົມ ແລະ ແກ້ໄຂຄວາມທຸກຍາກ ຍັງອາໄສແຫຼ່ງທຶນສະໜັບສະໜູນຈາກຄູ່ຮ່ວມພັດທະນາ;
- ການລົງທຶນເຂົ້າໃນການຄົ້ນຄວ້າ ແລະ ພັດທະນາ, ການນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳໃນສະໄໝໃໝ່ແມ່ນມີຄວາມຈຳກັດ ເຊິ່ງເຮັດໃຫ້ ສປປລາວ ເສຍໂອກາດໃນການຊຸກຍູ້ບັນດາຂະແໜງການເສດຖະກິດທີ່ມີທ່າແຮງບົ່ມຊ້ອນ ແລະ ສາມາດແຂ່ງຂັນກັບບັນດາປະເທດຕ່າງໆ;
- ລະບົບຂໍ້ມູນຂ່າວສານ ເພື່ອຕິດຕາມ ແລະ ຊຸກຍູ້ບັນດາໂຄງການພັດທະນາເຊັ່ນ: ຂໍ້ມູນທີ່ດິນ, ຂໍ້ມູນດ້ານສັງຄົມ, ຂໍ້ມູນດ້ານເສດຖະກິດ ແລະ ອື່ນໆຍັງບໍ່ທັນເຂັ້ມແຂງ ແລະ ພຽງພໍເຮັດໃຫ້ການສ້າງໂຄງການພັດທະນາ ແລະ ຕິດຕາມຄວາມຄືບໜ້າຂອງຕົວຊີ້ວັດຂອງການພັດທະນາບໍ່ທັນສະພາບການ ແລະ ຊັກຊ້າ;
- ການປຸກລະດົມເຊີນຊວນທຸກພາກສ່ວນຂອງສັງຄົມປະກອບສ່ວນຕໍ່ການພັດທະນາເສດຖະກິດ-ສັງຄົມຍັງບໍ່ທັນເປັນຮູບປະທຳ, ຂາດຄວາມເປັນເຈົ້າການໃນການແກ້ໄຂບັນດາຂໍ້ຫຍຸ້ງຍາກທີ່ປະເທດພວກເຮົາກຳລັງປະເຊີນໃນປະຈຸບັນ.

➢ **ບົດຮຽນທີ່ຖອດຖອນໄດ້**

- ຕ້ອງຮັບປະກັນສະຖຽນລະພາບດ້ານການເມືອງ, ຄວາມເປັນລະບຽບຮຽບຮ້ອຍດ້ານສັງຄົມ ແລະ ການເສີມຂະ ຫຍາຍມູນເຊື້ອຄວາມສາມັກຄີເປັນປຶກແຜ່ນຂອງປະຊາຊົນບັນດາຊົນເຜົ່າ;
- ລັດຖະບານຕ້ອງສ້າງເງື່ອນໄຂ ແລະ ລົງທຶນເຂົ້າໃສ່ພື້ນຖານໂຄງລ່າງທີ່ຈຳເປັນ ເພື່ອສົ່ງເສີມການຂຸດຄົ້ນທ່າແຮງບົ່ມຊ້ອນຂອງປະເທດໃຫ້ກາຍເປັນຂະແໜງເສດຖະກິດປາຍແຫຼມ ເພື່ອຂັບເຄື່ອນການສ້າງລາຍໄດ້ແຫ່ງຊາດ ແລະ ປັບປຸງການດຳລົງຊີວິດຂອງປະຊາຊົນໃນຂອບເຂດທົ່ວປະເທດ;
- ເອົາໃຈໃສ່ປັບປຸງນະໂຍບາຍການຄຸ້ມຄອງເສດຖະກິດມະຫາພາກໃຫ້ເຂັ້ມແຂງ ໂດຍການປັບປຸງບັນດານິຕິກຳ ແລະ ມາດຕະການທີ່ສອດຄ່ອງກົມກຽວ ເພື່ອຊ່ວຍຊຸກຍູ້ການພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ;
- ຕ້ອງຄົ້ນຄວ້າ, ປັບປຸງ ແລະ ບັງຄັບໃຊ້ບັນດານິຕິກຳ ແລະ ນະໂຍບາຍທີ່ກ່ຽວຂ້ອງກັບການພັດທະນາເສດຖະກິດ-ສັງຄົມທີ່ມີປະສິດທິຜົນ ແລະ ເຂັ້ມງວດເດັດຂາດ ໂດຍສະເພາະການປະຕິບັດລະບຽບແຜນການ-ການເງິນ, ການປະຕິບັດນະໂຍບາຍ ແລະ ລະບຽບການການເກັບລາຍຮັບງົບປະມານ, ຍົກສູງປະສິດທິຜົນຂອງການຄຸ້ມຄອງລາຍຈ່າຍ;
- ລັດຖະບານຕ້ອງເປັນເຈົ້າການໃນການປັບປຸງກົນໄກ, ຂັ້ນຕອນຂອງການບໍລິຫານລັດໃຫ້ມີປະສິດທິພາບ ໂດຍຫຼຸດຜ່ອນກົງຈັກທີ່ບໍ່ມີປະສິດທິຜົນ, ຫຼຸດຂັ້ນຕອນທີ່ຊໍ້າຊ້ອນ, ຖ່ວງດຶງ ແລະ ຫັນເຂົ້າສູ່ການຄຸ້ມຄອງທີ່ທັນສະໄໝ ແລະ ມີລະບຽບການຢ່າງຫັດກຸມ ແລະ ຮັບປະກັນຄວາມເປັນທຳໃຫ້ແກ່ສັງຄົມ;
- ການສ້າງຍຸດທະສາດ ກໍ່ຄືແຜນພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະຕ້ອງຮັບປະກັນວິທະຍາສາດ ໂດຍມີການຄົ້ນຄວ້າ, ວິໄຈຂໍ້ມູນຢ່າງເລິກເຊິ່ງ ເພື່ອຊີ້ໃຫ້ເຫັນເຖິງວິທີການ ແລະ ແຜນປະຕິບັດງານຕົວຈິງໃນແຕ່ລະດ້ານ;

DRAFT

- ຖືເອົາວຽກງານຕິດຕາມ-ກວດກາບັນດາໂຄງການພັດທະນາເປັນບູລິມະສິດ ເພື່ອຮັບປະກັນປະສິດທິພາບ ແລະ ປະສິດທິຜົນໃນການຊຸກຍູ້ການພັດທະນາເສດຖະກິດ-ສັງຄົມຢ່າງຕໍ່ເນື່ອງ;
- ສືບຕໍ່ວຽກງານການຮ່ວມມືດ້ານເສດຖະກິດ-ສັງຄົມ ເພື່ອຍາດແຍ່ງທຶນຮອນ ແລະ ຜົນປະໂຫຍດໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ, ພ້ອມທັງນໍາໃຊ້ເຂົ້າສູ່ຂະແໜງການບູລິມະສິດຢ່າງມີປະສິດທິຜົນ.

## II. ການສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX(2021-2025)

ການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ໃນໄລຍະ 2021-2025 ຜ່ານມາ ແມ່ນດໍາເນີນໃນສະພາບແວດລ້ອມພາກພື້ນ ແລະ ສາກົນສືບຕໍ່ຜັນແປຢ່າງໄວວາ ແລະ ສັບສົນ, ອັນທີ່ພົ້ນເດັ່ນແມ່ນການແຜ່ລະບາດຂອງພະຍາດໂຄວິດ-19 ບວກກັບຂໍ້ຂັດແຍ່ງທາງດ້ານການເມືອງຂອງບາງປະເທດ, ຄວາມຄັດແຍ້ງດ້ານການຄ້າຂອງປະເທດມະຫາອໍານາດ, ສະພາບເສດຖະກິດ-ການເງິນຂອງໂລກຖົດຖອຍ, ການປ່ຽນແປງຂອງດິນຟ້າອາກາດ, ລາຄາພະລັງງານ ແລະ ສະບຽງອາຫານເພີ່ມຂຶ້ນ ແລະ ອື່ນໆ ອັນໄດ້ສົ່ງຜົນກະທົບຕໍ່ບັນດາປະເທດໃນໂລກໃນລະດັບຕ່າງກັນ. ສໍາລັບປະເທດພວກເຮົານອກຈາກໄດ້ຮັບຜົນກະທົບຈາກປັດໄຈທາງນອກແລ້ວ ຍັງປະເຊີນກັບຄວາມຫຍຸ້ງຍາກດ້ານຕ່າງໆເຊັ່ນ: ຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ການລະບາດພະຍາດໂຄວິດ-19, ໄພທໍາມະຊາດທີ່ເກີດຂຶ້ນຕໍ່ເນື່ອງ. ພາຍໃຕ້ການນໍາພາ-ຊີ້ນໍາຂອງກົມການເມືອງສູນກາງພັກ, ການຕິດຕາມ, ຊຸກຍູ້ຢ່າງໃກ້ຊິດ ຂອງສະພາແຫ່ງຊາດ ແລະ ການບໍລິຫານງານຂອງລັດຖະບານ ສົມທົບກັບການສະໜັບສະໜູນຂອງການຈັດຕັ້ງທຸກຂັ້ນ, ການຊ່ວຍເຫຼືອຂອງຄູ່ຮ່ວມພັດທະນາ ແລະ ເພື່ອນມິດ ໃນການຈັດຕັ້ງປະຕິບັດບັນດາແຜນງານ, ໂຄງການຕ່າງໆ ທີ່ກໍານົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX(2021-2025) ສາມາດບັນລຸໝາກຜົນອັນສໍາຄັນ ແລະ ພົ້ນເດັ່ນໃນແຕ່ລະຂົງເຂດ ເຊິ່ງສະແດງອອກຄືດັ່ງນີ້:

### 1. ຕີລາຄາທິດທາງລວມ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025)

ໃນໄລຍະ 5 ປີຜ່ານມາ, ລັດຖະບານ ໄດ້ສຸມທຸກຄວາມພະຍາຍາມ ໃນການປຸກລະດົມທຸກກໍາລັງແຮງຂອງທຸກພາກສ່ວນເສດຖະກິດ ແລະ ສັງຄົມ ຜັນຂະຫຍາຍ 3 ທິດທາງລວມ ເຂົ້າສູ່ວຽກງານຕົວຈິງ ເຊິ່ງໄດ້ໃຫ້ເຮັດບັນດາທິດທາງດັ່ງກ່າວໄດ້ຮັບການຈັດຕັ້ງປະຕິບັດ, ດັ່ງສະແດງອອກດັ່ງນີ້:

1) ປະເທດເຮົາສາມາດບັນລຸເງື່ອນໄຂການຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ 2 ຄັ້ງຕິດຕໍ່ກັນ ຄື ໃນປີ 2018 ແລະ ປີ 2021 ແລະ ຄັ້ງທີ 3 ໃນປີ 2024 ສາມາດບັນລຸໄດ້ອີກ, ໃນປີ 2026 ຄາດວ່າປະເທດເຮົາຈະສາມາດຫຼຸດອອກຈາກສະຖານະພາບຄວາມດ້ອຍພັດທະນາ, ປະເທດຊາດມີສະຖຽນລະພາບ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ; ການປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ແລະການເຕີບໂຕສີຂຽວ ໄດ້ຮັບການເອົາໃຈໃສ່ຢ່າງຕັ້ງໜ້າ ແລະ ມີຄວາມຄືບໜ້າດີ ໃນຄາດໝາຍຈໍານວນໜຶ່ງ. ເຖິງແນວໃດກໍຕາມ, ຍ້ອນໄດ້ຮັບຜົນກະທົບຈາກພາຍນອກ ບວກກັບປະເທດເຮົາມີຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໄດ້ເຮັດໃຫ້ບາງຄາດໝາຍທີ່ຕິດພັນກັບດັດຊະນີລາຍໄດ້ ແລະ ດັດສະນີຊັບສິນມະນຸດ ມີທ່າອ່ຽງຫຼຸດລົງ.

2) ໄດ້ສຸມໃສ່ບຸກທະລຸແກ້ໄຂຈຸດອ່ອນ, ຂໍ້ຄົງຄ້າງ, ອຸປະສັກຕ່າງໆ, ອັນພົ້ນເດັ່ນ ແມ່ນສາມາດຄວບຄຸມ ແລະ ປ້ອງກັນການລະບາດຂອງພະຍາດໂຄວິດ-19 ໄດ້ໃນລະດັບດີສົມຄວນ ຖ້າທຽບໃສ່ຫຼາຍປະເທດໃນໂລກ, ສາມາດຮັກສາສະຖຽນລະພາບເສດຖະກິດມະຫາພາກໂດຍພື້ນຖານ ໂດຍບໍ່ຕົກເຂົ້າວິກິດການຮ້າຍແຮງ. ເຖິງແນວໃດກໍ່ຕາມ, ລາຄາສິນຄ້າ ແລະ ອັດຕາເງິນເຟີ້ຍັງສູງ, ເງິນກີບອ່ອນຄ່າ ເຊິ່ງຈະຕ້ອງໄດ້ສືບແກ້ໄຂໃນຕໍ່ໜ້າ.

3) ໄດ້ສຸມໃສ່ພັດທະນາຊັບພະຍາກອນມະນຸດດ້ວຍມາດຕະການຕ່າງໆຕາມເງື່ອນໄຂຄວາມສາມາດທີ່ມີໃນດ້ານການສຶກສາ, ສາທາລະນະສຸກ ແລະ ການພັດທະນາສີມືແຮງງານ ເຊິ່ງສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງສັງຄົມໄດ້ໃນລະດັບໃດໜຶ່ງ. ແຕ່ວ່າ, ຄຸນນະພາບຂອງຊັບພະຍາກອນມະນຸດທີ່ໄດ້ຮັບການພັດທະນາຈໍານວນໜຶ່ງຍັງບໍ່ທັນສາມາດຮອງຮັບໃຫ້ແກ່ຄວາມຮຽກຮ້ອງຕ້ອງການຂອງການພັດທະນາໃນເງື່ອນໄຂໃໝ່ຕາມທີ່ພັກເຮົາໄດ້ກໍານົດໄວ້; ໄດ້ມີຄວາມພະຍາຍາມເສີມຂະຫຍາຍປັດໄຈ ແລະ ທ່າແຮງບົ່ມຊ້ອນຂອງຊາດ ເຂົ້າໃສ່ການພັດທະນາ ໂດຍສະເພາະແມ່ນໄດ້ສຸມໃສ່ພັດທະນາບັນດາພື້ນຖານໂຄງລ່າງເພື່ອເຊື່ອມໂຍງ-ເຊື່ອມຈອດ ແລະ ການພັດທະນາ

ຊັບພະຍາກອນທຳມະຊາດ ເພື່ອສ້າງລາຍຮັບເຂົ້າປະເທດຕາມຄວາມຈຳເປັນ ແລະ ເງື່ອນໄຂຕົວຈິງ, ແຕ່ການຄຸ້ມຄອງ ແລະ ນຳໃຊ້ຕົວຈິງບາງໂຄງການຍັງບໍ່ທັນມີປະສິດທິຜົນເທົ່າທີ່ຄວນ ອັນໄດ້ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ໃນລະດັບແຕກຕ່າງກັນ.

## 2. ຜົນໄດ້ຮັບຂອງແຕ່ລະເປົ້າໝາຍ ແລະ ວຽກຈຸດສຸມຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025)

### 1. ເປົ້າໝາຍທີໜຶ່ງ: ດ້ານເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ

#### *1.1 ວຽກງານຊຸກຍູ້ການເຕີບໂຕເສດຖະກິດທີ່ມີຄຸນນະພາບ ແລະ ຍືນຍົງ*

**ໃນໄລຍະ 5 ປີຜ່ານມາ (2021-2025) ເສດຖະກິດ ຄາດວ່າຈະຂະຫຍາຍຕົວສະເລ່ຍ ໃນລະດັບ 4.24%** (ແຜນການ 5 ປີ: ສະເລ່ຍໃນລະດັບ 4% ຂຶ້ນໄປ), ໃນນີ້: ປີ 2021 ຂະຫຍາຍຕົວ 3.5%, ປີ 2022 ຂະຫຍາຍຕົວ 4.4%, ປີ 2023 ຂະຫຍາຍຕົວ 4.2%, ປີ 2024 ຂະຫຍາຍຕົວ 4.3% ແລະ ປີ 2025 ຄາດວ່າບັນລຸໄດ້ 4.8%; ເຖິງຢ່າງໃດກໍຕາມ, ຍ້ອນການອ່ອນຄ່າຂອງເງິນກີບ ເຮັດໃຫ້ລວມຍອດຜະລິດຕະພັນພາຍໃນ (GDP) ຕໍ່ຫົວຄົນ ບໍ່ສາມາດບັນລຸໄດ້ຕາມຄາດໝາຍ ສະແດງອອກຄື: ປີ 2021 ປະຕິບັດໄດ້ 2,595 ໂດລາສະຫະລັດ, ປີ 2022 ປະຕິບັດໄດ້ 2,022 ໂດລາສະຫະລັດ, ປີ 2023 ປະຕິບັດໄດ້ 1,880 ໂດລາສະຫະລັດ, ປີ 2024 ປະຕິບັດໄດ້ 1,996 ໂດລາສະຫະລັດ ແລະ ປີ 2025 ຄາດວ່າຈະໄດ້ 2,138 ໂດລາສະຫະລັດ (ແຜນການ 5 ປີ: ໃຫ້ໄດ້ 2,880 ໂດລາສະຫະລັດ); ລວມຍອດລາຍໄດ້ແຫ່ງຊາດ (GNI) ຕໍ່ຫົວຄົນ ປີ 2021 ປະຕິບັດໄດ້ 2,452 ໂດລາສະຫະລັດ, ປີ 2022 ປະຕິບັດໄດ້ 1,901 ໂດລາສະຫະລັດ, ປີ 2023 ປະຕິບັດໄດ້ 1,737 ໂດລາສະຫະລັດ, ປີ 2024 ປະຕິບັດໄດ້ 1,871 ໂດລາສະຫະລັດ ແລະ ປີ 2025 ປະຕິບັດໄດ້ 1,985 ໂດລາສະຫະລັດ ເຊິ່ງເຫັນວ່າຫຼຸດແຜນການວາງໄວ້ (ແຜນການ 5 ປີ: ໃຫ້ໄດ້ 2,280 ໂດລາສະຫະລັດ). ຜົນໄດ້ຮັບໃນແຕ່ລະໂຄງປະກອບສະແດງອອກ ດັ່ງນີ້:

- **ຂະແໜງກະສິກຳ-ປ່າໄມ້:** ໄດ້ສຸມຄວາມພະຍາຍາມປັບປຸງບູລະນະພື້ນຖານວັດຖຸເຕັກນິກຮັບໃຊ້ແກ່ການຜະລິດກະສິກຳ ແລະ ປ່າໄມ້ ເພື່ອຮອງຮັບແກ່ການຜະລິດ (ມີຊົນລະປະທານ, ເຮືອນຮົ່ມ, ໂຮງອົບ, ໂຮງຄັດເມັດ, ສາງເຢັນ, ໂຮງງານຝຸ່ນຊີວະພາບ ແລະ ອື່ນໆ), ອັນໄດ້ເຮັດໃຫ້ຂະແໜງກະສິກຳ ແລະ ປ່າໄມ້ **ຂະຫຍາຍຕົວ ສະເລ່ຍ 2.9%, ກວມເອົາ 19.4% ຂອງ GDP (ແຜນການ 5 ປີ: ຂະຫຍາຍຕົວ 2.5% ແລະ ກວມເອົາ 15.3% ຂອງ GDP)**, ອັນພົ້ນເດັ່ນແມ່ນສາມາດຄ້ຳປະກັນສະບຽງອາຫານໄດ້ໂດຍພື້ນຖານ ແລະ ມີສ່ວນສົ່ງອອກຈຳນວນໜຶ່ງ, ໃນນີ້ ການຜະລິດເຂົ້າເປືອກລວມ ໃນ 5 ປີ ປະຕິບັດໄດ້ 19.15 ລ້ານໂຕນ ສະເລ່ຍປະຕິບັດໄດ້ 3.83 ລ້ານໂຕນຕໍ່ປີ (ແຜນການ 5 ປີ: 3.5-4 ລ້ານໂຕນຕໍ່ປີ), ພືດສະບຽງອາຫານ ສະເລ່ຍປະຕິບັດໄດ້ 2.40 ລ້ານກວ່າໂຕນຕໍ່ປີ (ແຜນການ 5 ປີ: ສະເລ່ຍ 2.12 ລ້ານໂຕນຕໍ່ປີ), ການຜະລິດພືດເປັນສິນຄ້າ ສະເລ່ຍປະຕິບັດໄດ້ 9.40 ລ້ານກວ່າໂຕນຕໍ່ປີ (ແຜນການ 5 ປີ: ສະເລ່ຍ 7.4 ລ້ານໂຕນຕໍ່ປີ); ການຜະລິດພືດເປັນສິນຄ້າທີ່ພົ້ນເດັ່ນແມ່ນ ມັນຕົ້ນ ເພີ່ມຂຶ້ນ 31%, ໝາກໂມ ເພີ່ມຂຶ້ນ 31%, ອ້ອຍ ເພີ່ມຂຶ້ນ 26% ແລະ ກ້ວຍ ເພີ່ມຂຶ້ນ 12%; ຝູງສັດ ຂະຫຍາຍຕົວສະເລ່ຍ 4% ຕໍ່ປີ (ແຜນການ 5 ປີ: 3-4% ຕໍ່ປີ); ການລ້ຽງປາ ແລະ ສັດນ້ຳ ຂະຫຍາຍຕົວ 4.20% ຕໍ່ປີ (ແຜນການ 5 ປີ: 3-4% ຕໍ່ປີ); ການສົ່ງອອກຜົນຜະລິດກະສິກຳ ໃນ 5 ປີ ປະຕິບັດໄດ້ 7,508.48 ລ້ານໂດລາ, ສະເລ່ຍ 1,668.55 ລ້ານໂດລາຕໍ່ປີ (ແຜນການ 5 ປີ: 1,200 ລ້ານໂດລາສະຫະລັດຕໍ່ປີ).

- **ຂະແໜງອຸດສາຫະກຳ:** ໄດ້ສືບຕໍ່ເອົາໃຈໃສ່ປັບປຸງພື້ນຖານ, ວັດຖຸ, ເຕັກນິກ ລວມທັງການປັບປຸງການຈັດຕັ້ງການຜະລິດຕາມທິດທັນເປັນທັນສະໄໝ, ອັນໄດ້ເຮັດໃຫ້ຂະແໜງການນີ້ **ຂະຫຍາຍຕົວສະເລ່ຍ 4.7%, ກວມເອົາ 32.5% ຂອງ GDP (ແຜນການ 5 ປີ: ຂະຫຍາຍຕົວ 4.1% ແລະ ກວມເອົາ 32.3% ຂອງ GDP),** ໃນນີ້ **ມູນຄ່າຂອງຜະລິດຕະພັນອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ** ສາມາດປະຕິບັດໄດ້ 57,610.45 ຕື້ກີບ, ເທົ່າກັບ 69.34% ຂອງແຜນການ 5 ປີ (ແຜນການ 5 ປີ: 83,079.80 ຕື້ກີບ).

+ **ດ້ານພະລັງງານ:** ໄດ້ສຸມໃສ່ພັດທະນາຕາມທ່າແຮງບົ່ມຊ້ອນທາງດ້ານພະລັງງານ ໃນນີ້ລວມທັງພະລັງງານຈາກເຂື່ອນໄຟຟ້າ, ແສງຕາເວັນ, ພະລັງງານລົມ ແລະ ຊີວະມວນ ເຊິ່ງສາມາດຜະລິດພະລັງງານໄຟຟ້າ ໄດ້ 251,052 ລ້ານກິໂລວັດໂມງ, ເທົ່າກັບ 90.93% ຂອງແຜນການ 5 ປີ (ແຜນການ 5 ປີ: 276,096 ລ້ານກິໂລວັດໂມງ), ຄິດເປັນມູນຄ່າ ປະຕິບັດໄດ້ 259,603 ຕື້ກີບ, ເທົ່າກັບ 184.27% ຂອງແຜນການ 5 ປີ (ແຜນການ 5 ປີ: 140,879 ຕື້ກີບ), ການສົ່ງ

ອອກກະແສໄຟຟ້າໄປຕ່າງປະເທດ ປະຕິບັດໄດ້ 195,602 ລ້ານກິໂລວັດໂມງ, ເທົ່າກັບ 117.71% ຂອງແຜນການ 5 ປີ (ແຜນການ 5 ປີ: ໃຫ້ໄດ້ 128,721 ລ້ານກິໂລວັດໂມງ).

+ **ດ້ານບໍ່ແຮ່:** ໄດ້ສືບຕໍ່ພັດທະນາຂະແໜງການບໍ່ແຮ່ຕາມແຜນການທີ່ໄດ້ກຳນົດໄວ້ ອັນພິເສດແມ່ນໄດ້ປະຕິບັດໂຄງການທົດລອງຕາມວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກເສດຖະກິດ-ການເງິນ ເຊິ່ງໃນໄລຍະ 3 ປີ ປະຕິບັດໄດ້ 5,024 ລ້ານໂດລາສະຫະລັດ ຫຼື ເທົ່າກັບ 61,039 ຕື້ກີບ ເທົ່າກັບ 64.14% ຂອງແຜນການ, ໃນ 5 ປີຜ່ານມາ ການຜະລິດແຮ່ທາດລວມ ປະຕິບັດໄດ້ 169,488 ຕື້ກີບ, ເທົ່າກັບ 202.06% ຂອງແຜນການ 5 ປີ (ແຜນການ 5 ປີ: 56,111 ຕື້ກີບ), ການຈຳໜ່າຍແຮ່ທາດທັງພາຍໃນ ແລະ ຕ່າງປະເທດ ປະຕິບັດໄດ້ 13,370 ລ້ານໂດລາ, ເທົ່າກັບ 160.39% ຂອງແຜນການ 5 ປີ (ແຜນການ 5 ປີ: 8,336 ລ້ານໂດລາ). ເຖິງຢ່າງໃດກໍຕາມ ມີ 1 ຕົວຊີ້ບອກບໍ່ບັນລຸຕາມແຜນ, ນັ້ນແມ່ນການສຳຫຼວດສ້າງຂໍ້ມູນພື້ນຖານທໍລະນີສາດ ແລະ ແຮ່ທາດ ມາດຕາສ່ວນ 1/200,000 ໃນເຂດທີ່ບໍ່ໄດ້ປະຕິບັດ ຮອດປີ 2025 ຄາດວ່າປະຕິບັດໄດ້ 7,469 ກິໂລຕາແມັດ, ເທົ່າກັບ 10% ຂອງແຜນການ 5 ປີ (ແຜນການ 5 ປີ: 74,696 ກິໂລຕາແມັດ).

- **ຂະແໜງບໍລິການ:** ໄດ້ສືບຕໍ່ເອົາໃຈໃສ່ພັດທະນາຂະແໜງການນີ້ຢ່າງມີຈຸດສຸມ ແລະ ມີສ່ວນຮ່ວມຂອງພາກສ່ວນເສດຖະກິດ ແລະ ສັງຄົມ ເຮັດໃຫ້ຂະແໜງການນີ້ຂະຫຍາຍຕົວ **ສະເລ່ຍ 4.5%, ກວມເອົາ 36.6% ຂອງ GDP (ແຜນການ 5 ປີ: 6% ແລະ ກວມເອົາ 41.3% ຂອງ GDP)**, ໃນນີ້: ມູນຄ່າຈໍລະຈອນສິນຄ້າ ປະຕິບັດໄດ້ 307,355.57 ຕື້ກີບ, ເທົ່າກັບ 72.45% ຂອງແຜນການ 5 ປີ (ແຜນການ 5 ປີ: 424,247.50 ຕື້ກີບ). ດ້ານທ່ອງທ່ຽວສາມາດດຶງດູດນັກທ່ອງທ່ຽວສາກົນ ໄດ້ຈຳນວນ 5,828.744 ເທື່ອຄົນ, ເທົ່າກັບ 39% ຂອງແຜນການ 5 ປີ (ແຜນການ 5 ປີ: 15 ລ້ານເທື່ອຄົນ); ສ້າງລາຍຮັບໄດ້ ຈຳນວນ 265,554.220 ໂດລາສະຫະລັດ, ເທົ່າກັບ ......% ຂອງແຜນການ 5 ປີ (ແຜນການ 5 ປີ: 3,813 ລ້ານໂດລາສະຫະລັດ); ດ້ານການຂົນສົ່ງ ໄດ້ສືບຕໍ່ພັດທະນາຢ່າງຕັ້ງໜ້າ ແລະ ມີຈຸດສຸມ ທັງການຂົນສົ່ງທາງບົກ, ທາງອາກາດ, ທາງນ້ຳ ແລະ ທາງລາງ. ອັນພິເສດແມ່ນພາຍຫຼັງເປີດນຳໃຊ້ເສັ້ນທາງລົດໄຟລາວ-ຈີນ ໄດ້ເຮັດໃຫ້ການຂົນສົ່ງສິນຄ້າ ແລະ ບໍລິການ ໄດ້ຂະຫຍາຍຕົວດີຂຶ້ນເປັນກ້າວໆ ສະເພາະການຂົນສົ່ງສິນຄ້າທາງລາງກວມເອົາ 30.14% ຂອງການຂົນສົ່ງສິນຄ້າລວມທັງໝົດ, ເຊິ່ງປະລິມານການຂົນສົ່ງໂດຍສານ ສາມາດບັນລຸໄດ້ 484,464.70 ພັນເທື່ອຄົນ, ຂະຫຍາຍຕົວສະເລ່ຍ 6.07% ຕໍ່ປີ ແລະ ປະລິມານການຂົນສົ່ງສິນຄ້າ ສາມາດບັນລຸໄດ້ 58,230.30 ພັນໂຕນ, ຂະຫຍາຍຕົວສະເລ່ຍ 18.60% ຕໍ່ປີ. ດ້ານໂທລະຄົມມະນາຄົມ ແລະ ການສື່ສານ ໄດ້ພະຍາຍາມຫັນເປັນທັນສະໄໝ ແລະ ມີບາດກ້າວຫັນປ່ຽນທີ່ຕັ້ງໜ້າ, ອັນພົ້ນເດັ່ນ ພື້ນຖານໂຄງລ່າງດ້ານໂທລະຄົມມະນາຄົມ ໄດ້ຮັບການເອົາໃຈໃສ່ພັດທະນາທີ່ມີລັກສະນະບຸກທະລຸຂຶ້ນ ເຊິ່ງມາຮອດປັດຈຸບັນມີສະຖານີຮັບ-ສົ່ງສັນຍານໂທລະສັບມືຖື ຈຳນວນ 8,904 ສະຖານີ ເຮັດໃຫ້ທົ່ວປະເທດມີສັນຍານມືຖື ແຍກຕາມລະບົບ 3G ຄອບຄຸມ 86% (ແຜນການ 5ປີ: ກວມ 100%), 4G ຄອບຄຸມ 77% (ແຜນການ 5ປີ: ໃຫ້ໄດ້ 90%) ແລະ ລະບົບ 5G ເລີ່ມເປີດໃຫ້ບໍລິການ ໃນປີ 2024 ບາງເຂດຕົວເມືອງໃຫຍ່ ໃນ 5 ແຂວງ ຄື: ນະຄອນຫຼວງວຽງຈັນ, ແຂວງຫຼວງພະບາງ, ແຂວງບໍ່ແກ້ວ, ແຂວງສະຫວັນນະເຂດ ແລະ ແຂວງຈຳປາສັກ (ແຜນການ 5 ປີ: ຄອບຄຸມໃຫ້ໄດ້ ຕົວເມືອງໃຫຍ່ໃນ 18 ແຂວງທົ່ວປະເທດ).

- **ພາສີ-ອາກອນຜະລິດຕະພັນ: ຂະຫຍາຍຕົວ ສະເລ່ຍ 3.8%, ກວມເອົາ 11.5% (ແຜນການ 5 ປີ: 5.8% ແລະ ກວມເອົາ 11.7% ຂອງ GDP).**

❖ **ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ທີ່ຕິດພັນກັບວຽກຈຸດສຸມການສົ່ງເສີມການຜະລິດ-ການບໍລິການ ເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ ມີຜົນໄດ້ຮັບດັ່ງນີ້:**

1) ຂະແໜງກະສິກຳ ແລະ ປ່າໄມ້: ສຸມໃສ່ການສົ່ງເສີມ ແລະ ຂະຫຍາຍການຜະລິດສິນຄ້າກະສິກຳຢູ່ໃນແຕ່ລະທ້ອງຖິ່ນທີ່ມີທ່າແຮງ ໂດຍສະເພາະການຜະລິດສະບຽງອາຫານໃຫ້ພຽງພໍໃນການສະໜອງຊົມໃຊ້ພາຍໃນ ເປັນຕົ້ນ: ເຂົ້າ, ພືດຜັກ, ຊີ້ນ, ປາ ແລະ ໄຂ່; ພ້ອມທັງກຳນົດລາຍການສິນຄ້າເພື່ອຜະລິດທົດແທນການນຳເຂົ້າ ປະເພດພືດ ແລະ ຜັກ ລວມທັງແນວພັນພືດ ແລະ ສັດ.

- ໄດ້ຊຸກຍູ້ຜູ້ປະກອບການພາຍໃນ ຂະຫຍາຍການຜະລິດປຸ໋ຍ, ຝຸ່ນ ແລະ ທົ່ວອາຫານສັດ ເພື່ອສະໜອງຕະຫຼາດພາຍໃນໃຫ້ຫຼາຍຂຶ້ນ ຢູ່ພາຍໃນປະເທດມີໂຮງງານທົ່ວອາຫານທັງໝົດ 11 ແຫ່ງ, ມີກຳລັງການຜະລິດ 924,400 ໂຕນຕໍ່ປີ, ມາຮອດປັດຈຸບັນສາມາດຜະລິດ ແລະ ສະໜອງທົ່ວອາຫານສັດ ໄດ້ 340,408 ໂຕນ ເພີ່ມຂຶ້ນ 37.75%

DRAFT

ທຽບກ່ອນວາລະແຫ່ງຊາດ (ປີ 2020) ກວມເອົາ 61% ຂອງຄວາມຕ້ອງການພາຍໃນ (ຄວາມຕ້ອງການ: 560,000 ໂຕນ ຕໍ່ປີ); ຜະລິດຝຸ່ນ (ອິງຄະທາດ/ຊີວະພາບ) ໄດ້ 1,300,000 ໂຕນ, ເພີ່ມຂຶ້ນປະມານ 300% ທຽບກ່ອນວາລະແຫ່ງຊາດ, ກວມເອົາ 65% ຂອງຄວາມຕ້ອງການພາຍໃນ (ຄວາມຕ້ອງການທັງໝົດ: 2 ລ້ານໂຕນ).

- ໄດ້ສຳເລັດການເຈລະຈາດ້ານສຸຂະອະນາໄມ ແລະ ສຸຂະອະນາໄມພືດ (SPS) ເພື່ອເປີດຕະຫຼາດ ເພີ່ມຂຶ້ນ 25 ລາຍການ ໃນໄລຍະປະຕິບັດວາລະແຫ່ງຊາດ (ທັງໝົດ ມີ 64 ລາຍການ) ແລະ ຊຸກຍູ້ ແລະ ປັບປຸງຖານການຜະລິດກະສິກຳ ແລະ ກຸ່ມການຜະລິດເພື່ອສົ່ງອອກຈຳນວນໜຶ່ງ.

ສະນັ້ນ, ຈຶ່ງເຮັດໃຫ້ການສົ່ງອອກຜະລິດຕະພັນກະສິກຳ ແລະ ປ່າໄມ້ (ໃນນີ້ ລວມທັງການສົ່ງອອກໄມ້, ຜະລິດຕະພັນໄມ້, ຢາງພາລາ ແລະ ເຄື່ອງປ່າຂອງດົງ) ສາມາດບັນລຸໄດ້ປະມານ 5.77 ຕື້ໂດລາສະຫະລັດ ໃນໄລຍະ 2021-2024 ເພີ່ມຂຶ້ນສະເລ່ຍຕໍ່ປີ ປະມານ 575 ລ້ານໂດລາສະຫະລັດ ທຽບໃສ່ກ່ອນໄລຍະວາລະແຫ່ງຊາດ. ໃນນັ້ນ, ການສົ່ງອອກມັນຕົ້ນ ບັນລຸປະມານ 1 ຕື້ໂດລາ ຫຼືສະເລ່ຍ ປະມານ 336.25 ລ້ານໂດລາຕໍ່ປີ ລື່ນມູນຄ່າການສົ່ງອອກກ່ອນວາລະແຫ່ງຊາດ ປະມານ 205%; ຢາງພາລາ ບັນລຸໄດ້ 312.94 ລ້ານໂດລາຕໍ່ປີ ລື່ນປີ 2020 ປະມານ 58.8%; ໝາກກ້ວຍ ສົ່ງອອກປະມານ 247 ລ້ານໂດລາສະຫະລັດຕໍ່ປີ ລື່ນການສົ່ງອອກ ໄລຍະກ່ອນວາລະແຫ່ງຊາດ ປະມານ 28.7%. ພ້ອມນີ້, ການສົ່ງອອກຜະລິດຕະພັນປຸງແຕ່ງກະສິກຳ-ປ່າໄມ້ ກໍມີທ່າແຮງຂະຫຍາຍຕົວ ເຊິ່ງບັນລຸໄດ້ ປະມານ 1,064.95 ລ້ານໂດລາສະຫະລັດ ໃນໄລຍະ 2021-23 ເພີ່ມຂຶ້ນ 41.62% ແລະ ກວມເອົາ 26.26% ຂອງມູນຄ່າການສົ່ງອອກຜະລິດຕະພັນກະສິກຳທັງໝົດ.

2) ຂະແໜງອຸດສາຫະກຳປຸງແຕ່ງ: ໄດ້ຊຸກຍູ້ ແລະ ສ້າງເງື່ອນໄຂໃຫ້ຜູ້ປະກອບການພາຍໃນ ຂະຫຍາຍການຜະລິດສິນຄ້າອຸດສາຫະກຳປຸງແຕ່ງ ເພື່ອທົດແທນການນຳເຂົ້າ ຈຳນວນໜຶ່ງ ເຊິ່ງມີຄວາມຄືບໜ້າດັ່ງນີ້:

(1) ການຜະລິດຊີມັງ: ໃນໄລຍະປະຕິບັດວາລະແຫ່ງຊາດ (2021-2023) ສາມາດຜະລິດຕົວຈິງ ສະເລ່ຍ 5,299,157 ໂຕນ/ປີ ທຽບໃສ່ ປີ 2020 ເພີ່ມຂຶ້ນ ປະມານ 21.48% ຕໍ່ປີ ສາມາດຕອບສະໜອງຕະຫຼາດພາຍໃນໂດຍພື້ນຖານ.

(2) ເຫຼັກເສັ້ນ ແລະ ເຫຼັກຮູບປະພັນ: ສາມາດຜະລິດໄດ້ ສະເລ່ຍປະມານ 368,450 ຕໍ່ປີ ເພີ່ມຂຶ້ນ 39.3% ທຽບໃສ່ກ່ອນວາລະແຫ່ງຊາດ ໃນປີ 2020 ບັນລຸໄດ້ 264,527 ໂຕນ ເຊິ່ງສາມາດຕອບສະໜອງການຊົມໃຊ້ພາຍໃນປະມານ 71.7%.

(3) ທໍ່ຢາງ: ສາມາດຜະລິດທໍ່ຢາງໄດ້ ປະມານ 10,327 ໂຕນຕໍ່ປີ ທຽບໃສ່ປີ 2020 (8,135 ໂຕນ) ເພີ່ມຂຶ້ນ 26,9% ຕໍ່ປີ ເຊິ່ງສາມາດຕອບສະໜອງການຊົມໃຊ້ພາຍໃນໄດ້ 36.6%.

(4) ນໍ້າສີ: ໃນໄລຍະ ປີ 2021-2023 ສາມາດຜະລິດໄດ້ສະເລ່ຍ ປະມານ 19,000 ໂຕນຕໍ່ປີ, ເພີ່ມຂຶ້ນ 11.65% ຕໍ່ປີ ກວມເອົາ 61.35% ຂອງຕະຫຼາດພາຍໃນ.

3) ຂະແໜງພະລັງງານ ແລະ ບໍ່ແຮ່: ໄດ້ອະນຸຍາດເຊັນສັນຍາໂຄງການພັດທະນາບໍ່ແຮ່ໃນຮູບແບບທົດລອງທັງໝົດ 93 ບໍລິສັດ ເຊິ່ງສາມາດສົ່ງອອກແຮ່ທາດໃນໂຄງການທົດລອງ ໄດ້ປະມານ 155 ລ້ານໂດລາສະຫະລັດ ເທົ່າກັບ 2.7% ຂອງການສົ່ງອອກແຮ່ທາດທັງໝົດ (2021-2023); ໄດ້ມອບພັນທະງົບປະມານລັດທັງໝົດ 204.52 ລ້ານໂດລາສະຫະລັດ ແລະ 962.21 ຕື້ກີບ.

4) ຂະແໜງການບໍລິການທ່ອງທ່ຽວ: ໄດ້ສຸມໃສ່ປັບປຸງສະຖານທີ່, ກິດຈະກຳ, ໂຄງລ່າງພື້ນຖານ, ສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວ ແລະ ຊຸກຍູ້ພາກທຸລະກິດພັດທະນາຂະແໜງການທ່ອງທ່ຽວ ຢູ່ໃນແຕ່ລະແຂວງທີ່ມີທ່າແຮງ, ປັບປຸງການບໍລິການທ່ອງທ່ຽວຢ່າງຮອບດ້ານ ພາຍຫຼັງເປີດປະເທດຫຼັງຈາກການລະບາດ-19 ໃນກາງປີ 2022, ມາຮອດປັດຈຸບັນ ຈຳນວນນັກທ່ອງທ່ຽວຕ່າງປະເທດເຂົ້າມາປະເທດ ມີປະມານ (2022-2024: 8,832,826 ເທື່ອຄົນ ຍັງບໍລວມໂຕເລກປີ 2025) ເທື່ອຄົນ ຫຼື ເທົ່າກັບ 58.8% ຂອງແຜນການ 5 ປີ (ແຜນການ 5 ປີ: 15 ລ້ານເທື່ອຄົນ), ສ້າງລາຍຮັບໄດ້ ຈຳນວນ 2,643,898,762 ໂດລາສະຫະລັດ, ເທົ່າກັບ 69% ຂອງແຜນການ 5 ປີ (ແຜນການ 5 ປີ: 3,813 ລ້ານໂດລາສະຫະລັດ). ໄດ້ສຳຫຼວດ, ຈັດສັນກຳນົດເຂດ, ອອກໃບຢັ້ງຢືນ ແລະ ປັກຫຼັກໝາຍຂອບເຂດທ່ອງທ່ຽວໄດ້ 22 ແຫ່ງ ຫຼື ເທົ່າກັບ **73.33%** ຂອງແຜນການ 5 ປີ (ແຜນການ 5 ປີ: 30 ແຫ່ງ), ຄາດຄະເນຮອດປີ 2025 ຈະສາມາດປະຕິບັດໄດ້ຕື່ມອີກ 2 ແຫ່ງ.

ສັງລວມແລ້ວ, ເຖິງວ່າຈະມີຄວາມຫຍຸ້ງຍາກດ້ານຕ່າງໆ ແຕ່ດ້ວຍຄວາມພະຍາຍາມຂອງພັກ ແລະ ລັດຖະບານໃນການປະຕິບັດມາດຕະການຕ່າງໆ ເພື່ອຊຸກຍູ້ການຜະລິດ ແລະ ການບໍລິການ ໃຫ້ສືບຕໍ່ຂະຫຍາຍຕົວ ເປັນຕົ້ນ: ການ

ເປີດປະເທດຄືນໃໝ່ ພາຍຫຼັງການລະບາດຂອງພະຍາດໂຄວິດ-19, ການຊຸກຍູ້ການຜະລິດພາຍໃນເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ, ການຈັດຕັ້ງປະຕິບັດໂຄງການທົດລອງແຮ່ທາດ ລວມທັງໂຄງການຂະໜາດໃຫຍ່ຈຳນວນໜຶ່ງ ແລະ ການຊຸກຍູ້ການທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ, ການສະໜອງສິນເຊື່ອເພື່ອຟື້ນຟູເສດຖະກິດ ແລະ ອື່ນໆ ຈຶ່ງໄດ້ເຮັດໃຫ້ເສດຖະກິດສາມາດສືບຕໍ່ ຂະຫຍາຍຕົວຕາມແຜນການ 5 ປີ ກຳນົດໄວ້ ຄື: ລວມຍອດຜະລິດຕະພັນພາຍໃນ (GDP) ຂະຫຍາຍຕົວ 4.24% (ແຜນການ: 4% ຂຶ້ນໄປ), ເຖິງແມ່ນວ່າໃນປີ 2021 ອັດຕາການເຕີບໂຕແມ່ນບໍ່ສາມາດບັນລຸຕາມຄາດໝາຍຂອງແຜນການປີ ຍ້ອນໄດ້ຮັບຜົນກະທົບໜັກໜ່ວງຈາກການແຜ່ລະບາດພະຍາດໂຄວິດ-19 ໂດຍສະເພາະມາດຕະການສະກັດກັ້ນ ແລະ ປ້ອງກັນຢ່າງເຂັ້ມງວດທັງຢູ່ພາຍໃນປະເທດ ແລະ ຂອງບັນດາປະເທດຕ່າງໆ ເຊິ່ງໄດ້ເຮັດໃຫ້ພາກທຸລະກິດບໍ່ສາມາດດຳເນີນການເຄື່ອນໄຫວໄດ້ຢ່າງປົກກະຕິ; ນອກຈາກນີ້, ຍັງເຫັນວ່າການເຕີບໂຕຍັງບໍ່ທັນມີຄຸນນະພາບເທົ່າທີ່ຄວນ ເນື່ອງຈາກຂະແໜງທີ່ຊຸກຍູ້ການເຕີບໂຕແມ່ນມາຈາກຂະແໜງທີ່ນຳໃຊ້ຊັບພະຍາກອນທຳມະຊາດ ເປັນຕົ້ນ: ຂະແໜງໄຟຟ້າ, ຂະແໜງບໍ່ແຮ່ ແລະ ຂະແໜງກໍ່ສ້າງ ແມ່ນການລົງທຶນຂອງຕ່າງປະເທດເປັນສ່ວນໃຫຍ່ ແຕ່ຂະແໜງດັ່ງກ່າວ ບໍ່ສະໜອງໂອກາດການສ້າງວຽກເຮັດງານທຳໃຫ້ແຮງງານພາຍໃນຫຼາຍເທົ່າທີ່ຄວນ ແລະ ເປັນໜີ້ສິນຕ່າງປະເທດ ເຊິ່ງມີບາງກິດຈະການແມ່ນໄດ້ສົ່ງຜົນກະທົບຕໍ່ສະພາບແວດລ້ອມທາງທຳມະຊາດ ແລະ ສັງຄົມ; ການຜະລິດສິນຄ້າຍັງບໍ່ມີຄວາມຫຼາກຫຼາຍ ແລະ ຄຸນນະພາບຍັງຕ່ຳ ສ່ວນຫຼາຍການສົ່ງອອກແມ່ນເປັນວັດຖຸດິບ ແລະ ເຄິ່ງສຳເລັດຮູບ ທີ່ສ້າງມູນຄ່າເພີ່ມບໍ່ສູງ; ເຖິງແມ່ນວ່າເສດຖະກິດຍັງສືບຕໍ່ຂະຫຍາຍຕົວ ແຕ່ລາຍຮັບຕົວຈິງຂອງປະຊາຊົນແມ່ນມີທ່າອ່ຽງຫຼຸດລົງ ເນື່ອງຈາກການອ່ອນຄ່າຂອງເງິນກີບ ບວກກັບ ລາຄາສິນຄ້າເພີ່ມສູງຂຶ້ນ ເຊິ່ງສົ່ງຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນຫຼາຍພໍສົມຄວນ.

### *1.2 ວຽກງານສ້າງເສດຖະກິດມະຫາພາກມີຄວາມເຂັ້ມແຂງ ແລະ ໝັ້ນທ່ຽງ*

**1) ດ້ານການເງິນ ມີທັງໝົດ 3 ຕົວຊີ້ບອກ:**

- ດ້ານລາຍຮັບງົບປະມານ: ລັດຖະບານໄດ້ກຳນົດເອົາບັນຫາການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ເປັນວາລະແຫ່ງຊາດ ເພື່ອໃຫ້ຂະແໜງການ ແລະ ທ້ອງຖິ່ນ ຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ, ພ້ອມນີ້ ກໍໄດ້ສ້າງຂອບນະໂຍບາຍການເງິນ ແນ່ໃສ່ປັບໂຄງສ້າງງົບປະມານແຫ່ງລັດ ໂດຍເອົາຄາດໝາຍລາຍຮັບພາຍໃນເປັນບ່ອນອີງໃນການສ້າງແຜນລາຍຈ່າຍ ເພື່ອຫຼຸດຜ່ອນການຂາດດຸນງົບປະມານແຫ່ງລັດ ແລະ ມີສ່ວນສະສົມເພື່ອຊຳລະໜີ້ສິນຕ່າງປະເທດ; ໄດ້ສຸມໃສ່ຂຸດຄົ້ນທຸກແຫຼ່ງລາຍຮັບດ້ວຍມາດຕະການຕ່າງໆ ຈາກການຂະຫຍາຍຖານອາກອນມູນຄ່າເພີ່ມ, ອາກອນກຳໄລ, ລວມທັງການສ້າງ ແລະ ຈັດຕັ້ງປະຕິບັດນິຕິກຳຕ່າງໆ ເພື່ອເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫຼຂອງລາຍຮັບງົບປະມານແຫ່ງລັດ ໄປພ້ອມກັບການປັບປຸງກົງຈັກ ແລະ ພັດທະນາເຄື່ອງມືເກັບລາຍຮັບຕາມທິດທັນສະໄໝ; ໄດ້ສຸມໃສ່ຂຸດຄົ້ນລາຍຮັບທີ່ບົ່ມຊ້ອນຕ່າງໆຕາມນະໂຍບາຍໃນວາລະແຫ່ງຊາດ ເຊັ່ນ: ລາຍຮັບຈາກແຮ່ທົດລອງ, ການດຳເນີນທຸລະກິດດິຈິຕອນ, ການນຳເຂົ້າລົດບໍ່ຖືກຕ້ອງ, ການເຮັດທົດລອງຈາກການປູກປໍແກ້ວ ແລະ ອື່ນໆ. ຜ່ານການຈັດຕັ້ງປະຕິບັດການເກັບລາຍຮັບງົບປະມານມີທ່າອ່ຽງເພີ່ມຂຶ້ນໃນແຕ່ລະປີ ຄື: ປີ 2021 ປະຕິບັດໄດ້ 28,905.03 ຕື້ກີບ, ເທົ່າກັບ 104.62% ຂອງແຜນການປີ; ປີ 2022 ປະຕິບັດໄດ້ 32,540.50 ຕື້ກີບ, ເທົ່າກັບ 103% ຂອງແຜນການປີ; ປີ 2023 ປະຕິບັດໄດ້ 50,806.13 ຕື້ກີບ, ເທົ່າກັບ 132.14% ຂອງແຜນການປີ; ປີ 2024 ປະຕິບັດໄດ້ 62,051.10 ຕື້ກີບ, ເທົ່າກັບ 121.55% ຂອງແຜນການປີ ແລະ ລາຍຮັບປີ 2025 ຄາດວ່າຈະບັນລຸໄດ້ 77,607 ຕື້ກີບ ເທົ່າກັບ 114% ຂອງແຜນການປີ. **ໄລຍະ 5 ປີ (2021-2025) ສາມາດເກັບລາຍຮັບທັງໝົດໄດ້ 251,910.8 ຕື້ກີບ, ເທົ່າກັບ 140% ຂອງແຜນການ 5 ປີ ຫຼື ເທົ່າກັບ 18.65% ຂອງ GDP (ແຜນການ 5 ປີ: ໃຫ້ໄດ້ 179,500 ຕື້ກີບ ຫຼື ເທົ່າກັບ 17% ຂອງ GDP).**
- ດ້ານລາຍຈ່າຍງົບປະມານ: ໄດ້ປັບປຸງໂຄງສ້າງລາຍຈ່າຍງົບປະມານແຫ່ງລັດ ດ້ວຍການກຳນົດແຜນລາຍຈ່າຍແລ້ວ ຈຶ່ງແຈ້ງໃຫ້ບັນດາຫົວໜ່ວຍງົບປະມານແຫ່ງລັດນຳໄປຈັດສັນໃຫ້ແຕ່ລະພາກສ່ວນລະອຽດ; ໄດ້ສຸມໃສ່ຄຸ້ມຄອງລາຍຈ່າຍປົກກະຕິ ບົນຈິດໃຈປະຢັດ ແລະ ຕ້ານການຟຸມເຟືອຍ ຕາມຄຳສັ່ງເລກທີ 205/ນຍ ໂດຍຈັດລຽງບູລິມະສິດປະເພດລາຍຈ່າຍ ເພື່ອຮັບປະກັນການເບີກຈ່າຍທັນຕາມກຳນົດເວລາ, ຄຸ້ມຄອງການປະຕິບັດລາຍຈ່າຍທີ່ຮັດກຸມຂຶ້ນຕື່ມ ໂດຍສະເພາະໄດ້ຫຼຸດຜ່ອນລາຍຈ່າຍບໍລິຫານທີ່ບໍ່ຈຳເປັນ ເພື່ອໃຫ້ລາຍຮັບພາຍໃນກຸ້ມລາຍຈ່າຍພາຍໃນ. ໃນປີ 2021 ລາຍຈ່າຍງົບປະມານປະຕິບັດ 29,507.44 ຕື້ກີບ, ເທົ່າກັບ 93.42% ຂອງແຜນການປີ; ປີ 2022 ປະຕິບັດໄດ້ 32,280.86 ຕື້ກີບ, ເທົ່າກັບ 91.16% ຂອງແຜນການປີ; ປີ 2023 ປະຕິບັດໄດ້ 44,152.04 ຕື້ກີບ, ເທົ່າກັບ 98.20% ຂອງແຜນການປີ; ປີ 2024 ປະຕິບັດໄດ້ 55,874.54 ຕື້ກີບ, ເທົ່າກັບ 90.06% ຂອງແຜນການປີ ແລະ ແຜນລາຍຈ່າຍປີ 2025 ເທົ່າກັບ

DRAFT

71,850 ຕື້ກີບ. **ໄລຍະ 5 ປີ (2021-2025) ຄາດວ່າສາມາດປະຕິບັດລາຍຈ່າຍໄດ້ທັງໝົດ ຈຳນວນ 233,515.02 ຕື້ກີບ ເທົ່າກັບ 123% ຂອງແຜນການ 5 ປີ ຫຼື ເທົ່າກັບ 17.29% ຂອງ GDP (ແຜນການ 5 ປີ: 190,000 ຕື້ກີບ ຫຼື ເທົ່າກັບ 18% ຂອງ GDP).**

- ດຸນງົບປະມານແຫ່ງລັດ: ການຂາດດຸນງົບປະມານມີທ່າອ່ຽງຫຼຸດລົງ ແລະ ໃນບາງປີສາມາດເກີນດຸນ ຄື: ປີ 2021 ຂາດດຸນຢູ່ໃນລະດັບ 602,41 ຕື້ກີບ, ເທົ່າກັບ 0,33% ຂອງ GDP; ປີ 2022 ເກີນດຸນຢູ່ໃນລະດັບ 259.64 ຕື້ກີບ, ເທົ່າກັບ 0.12% ຂອງ GDP; ປີ 2023 ເກີນດຸນຢູ່ໃນລະດັບ 6,645.10 ຕື້ກີບ, ເທົ່າກັບ 2.51% ຂອງ GDP; ປີ 2024 ເກີນດຸນຢູ່ໃນລະດັບ 6,326 ຕື້ກີບ, ເທົ່າກັບ 1.9% ຂອງ GDP ແລະ ແຜນປີ 2025 ເກີນດຸນ 5,757 ຕື້ກີບ, ເທົ່າກັບ 1.6% ຂອງ GDP. **ໃນ 5 ປີ ດຸນງົບປະມານທັງໝົດ ຈະຢູ່ໃນລະດັບ 18,385.75 ຕື້ກີບ, ເທົ່າກັບ 1.4% ຂອງ GDP (ແຜນການ 5 ປີ: ຂາດດຸນຢູ່ໃນລະດັບ 1% ຂອງ GDP ຫຼື ສູງສຸດບໍ່ໃຫ້ເກີນ 2% ຂອງ GDP).**
- ການແກ້ໄຂໜີ້ສິນ: ໄດ້ມີຄວາມພະຍາຍາມແກ້ໄຂໜີ້ສິນສາທາລະນະ ດ້ວຍການເຈລະຈາເລື່ອນຊຳລະຕົ້ນທຶນ ແລະ ດອກເບ້ຍ ເງິນກູ້ຢືມຕ່າງປະເທດ ກັບບັນດາເຈົ້າໜີ້ສອງຝ່າຍ ຈຳນວນໜຶ່ງ ອອກໄປ ໄປພ້ອມກັບລະດົມແຫຼ່ງທຶນຈາກຫຼາຍແຫຼ່ງ ເພື່ອມາຊຳລະໃຫ້ທັນກຳນົດເວລາ. ໜີ້ສິນສາທາລະນະຫຼຸດລົງ ຈາກ 112% ຂອງ **GDP** ໃນປີ **2022** ມາເປັນ **94%** ຂອງ **GDP** ໃນປີ **2024.**

ໃນໄລຍະປີ 2021-2024 ສາມາດແກ້ໄຂໜີ້ການລົງທຶນຂອງລັດໄດ້ທັງໝົດ 19,871.81 ຕື້ກີບ ໃນນີ້, ທຶນໃນແຜນປົກກະຕິ 1,871.81 ຕື້ກີບ ແລະ ທຶນຕາມແຜນແກ້ໄຂໜີ້ສິນຕາມນະໂຍບາຍ 18,000 ຕື້ກີບ (ລວມມີ: ພັນທະບັດ+ອ່ວຍໜີ້ 3 ແຈ ປີ 2020-2021: 10,000 ຕື້ກີບ ແລະ ອ່ວຍໜີ້ກັບທະນາຄານ ປີ 2023: 8,000 ຕື້ກີບ.

**ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ທີ່ຕິດພັນກັບວຽກຈຸດສຸມການສ້າງຄວາມເຂັ້ມແຂງດ້ານການເກັບລາຍຮັບງົບປະມານ ແລະ ວຽກຈຸດສຸມການສົ່ງເສີມການປະຢັດ, ຕ້ານການຟູມເຟືອຍ ແລະ ການແກ້ໄຂໜີ້ສິນ ມີຜົນໄດ້ຮັບດັ່ງນີ້:**

1) ວຽກຈຸດສຸມສ້າງຄວາມເຂັ້ມແຂງດ້ານການເກັບລາຍຮັບງົບປະມານ ແມ່ນໄດ້ຕັ້ງໜ້າປະຕິບັດຄຳສັ່ງເລກທີ 18/ນຍ ວ່າດ້ວຍ ການເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫລຂອງລາຍຮັບງົບປະມານ ເຊິ່ງໄດ້ສ້າງເງື່ອນໄຂໃນການເກັບກຳຖານລາຍຮັບໃໝ່ຈຳນວນໜຶ່ງ ແລະ ຫັນເປັນທັນສະໄໝໃນການເກັບລາຍຮັບ ເພື່ອອັດການຮົ່ວໄຫຼ ແລະ ເພີ່ມລາຍຮັບງົບປະມານ ເປັນຕົ້ນ: ການປັບປຸງລະບົບການແຈ້ງພາສີ, ການຄຸ້ມຄອງການເກັບພັນທະຈາກດ້ານສາກົນ, ການແກ້ໄຂລົດນຳເຂົ້າບໍ່ຖືກຕ້ອງ, ການມອບພັນທະຈາກໂຄງການທົດລອງ, ການທົດລອງມອບຫົວໜ່ວຍວິສາຫະກິດໃຫ້ທ້ອງຖິ່ນເກັບລາຍຮັບ, ການຂະຫຍາຍຖານອາກອນ ແລະ ເຊື່ອມຂໍ້ມູນດ້ານລາຍຮັບຜ່ານລະບົບຄຸ້ມຄອງທັນສະໄໝ ແລະ ອື່ນໆ ເຊິ່ງສ້າງເງື່ອນໄຂໃຫ້ມີຜົນສຳເລັດດັ່ງນີ້:

- ປີ 2021 ສາມາດເກັບລາຍຮັບທັງໝົດ ປະມານ 27.178 ຕື້ກີບ ເທົ່າກັບ 14.13% ຂອງ GDP;
- ປີ 2022 ບັນລຸໄດ້ ປະມານ 32.486 ຕື້ກີບ ເທົ່າກັບ 15.4% ຂອງ GDP;
- ປີ 2023 ບັນລຸໄດ້ ປະມານ 48.762 ຕື້ກີບ ເທົ່າກັບ 18.5% ຂອງ GDP.

2) ວຽກຈຸດສຸມການສົ່ງເສີມການປະຢັດ, ຕ້ານການຟູມເຟືອຍ ແລະ ການແກ້ໄຂໜີ້ສິນ. ອັນພົ້ນເດັ່ນ ໄດ້ສຸມໃສ່ການປະຕິບັດນິຕິກຳດ້ານການປະຢັດລາຍຈ່າຍ ໂດຍສະເພາະ ດຳລັດເລກທີ 205/ລບ ແລະ ດຳລັດເລກ 599/ລບ ເຊິ່ງໄດ້ເຮັດໃຫ້ລາຍຈ່າຍງົບປະມານ ມີຄວາມຮັດກຸມຂຶ້ນໃນແຕ່ລະປີ ໂດຍສະເພາະ ລາຍຈ່າຍດ້ານບໍລິຫານ (ໃນປີ 2021 ສາມາດຫຼຸດລາຍຈ່າຍໄດ້ 2.076 ຕື້ກີບ, ປີ 2022 ຫຼຸດປະມານ 3,131 ຕື້ກີບ ແລະ ປີ 2023 ປະຢັດໄດ້ ປະມານ 806.93 ຕື້ກີບ), ເຊິ່ງໄດ້ເຮັດໃຫ້ການຂາດດຸນງົບປະມານ ຢູ່ໃນລະດັບ ຕໍ່າກວ່າ 3% ທີ່ກຳນົດໄວ້ ແລະ ໃນປີ 2023 ສາມາດເກີນດຸນງົບປະມານ.

– ການປະຕິບັດດຳລັດວ່າດ້ວຍລົດຂອງລັດສະບັບເລກທີ 599/ນຍ, ສາມາດເກັບກຳຂໍ້ມູນລົດລັດ ເປັນຈຳນວນ 37,427 ຄັນ (ລົດໃຫ່ຍ 11,175 ຄັນ). ໃນນັ້ນ, ລົດຢູ່ໃນບັນດາກະຊວງ ແລະ ອົງການຂັ້ນສູນກາງ ມີຈຳນວນ 8,959 ຄັນ. ພະນັກງານບຳນານເອົາໄປນຳໃຊ້ ລົດຈັກ 1,007 ຄັນ, ລົດໃຫຍ່ 2,204 ຄັນ. ສຳເລັດການຕິດແຜ່ນການໝາຍ ແລະ QR Code ເປັນຈຳນວນ 22,196 ຄັນ, ໃນນີ້ ມີລົດໃຫຍ່ 9,240 ຄັນ, ລົດຈັກ 12,956 ຄັນ ເທົ່າກັບ 64.9% ຂອງລົດທີ່ຈະຕ້ອງຕິດແຜ່ນກາໝາຍ ແລະ ອອກບັດທັງໝົດ ໃນນີ້ ລົດໃຫຍ່ແມ່ນປະຕິບັດໄດ້ 82.6%, ລົດຈັກ 56.2 %.



DRAFT

ສັງລວມແລ້ວ, ຜ່ານການຈັດຕັ້ງປະຕິບັດໃນໄລຍະຜ່ານມາ ເຫັນວ່າ ປະເທດເຮົາ ໄດ້ຮັບຜົນກະທົບຈາກ ການລະບາດຂອງພະຍາດໂຄວິດ-19 ນັບແຕ່ ຕົ້ນປີ 2020 ແລະ ຂໍ້ຄັດແຍ້ງຂອງບັນດາປະເທດມະຫາອຳນາດ ທີ່ສົ່ງຜົນກະທົບທັງທາງກົງ ແລະ ທາງອ້ອມ ຕໍ່ການຈັດຕັ້ງປະຕິບັດແຜນງົບປະມານ, ເປັນຕົ້ນ: ສະພາບໄພເງິນເຟີ້, ການເໜັ່ງຕີງຂອງ ລາຄານ້ຳມັນເຊື້ອໄຟ, ການຜັນຜ່ອນຂອງອັດຕາແລກປ່ຽນ ແລະ ບັນຫາອື່ນໆ. ແຕ່ເຖິງຢ່າງໃດກໍ່ຕາມ ພັກ ແລະ ລັດຖະບານ ກໍ່ໄດ້ຊີ້ນຳການຈັດຕັ້ງປະຕິບັດວາລະແຫ່ງຊາດ ກໍ່ຄືມາດຕະການຕ່າງໆເພື່ອແກ້ໄຂຄວາມຫຍຸ້ງຍາກທາງເສດຖະກິດ-ການເງິນໂດຍສະເພາະ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 18/ນຍ ວ່າດ້ວຍການເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫຼຂອງລາຍຮັບງົບປະມານແຫ່ງລັດ ເຮັດໃຫ້ພວກເຮົາສາມາດປະຕິບັດລາຍຮັບໄດ້ເກີນແຜນ 3 ປີ ລຽນຕິດ (2021-2023) ແລະ ຄາດວ່າປີ 2024 ຈະສາມາດປະຕິບັດໄດ້ຕາມແຜນການ ຫຼື ລື່ນແຜນການຕື່ມອີກ. ສຳລັບດ້ານລາຍຈ່າຍ ແມ່ນສາມາດຕອບສະໜອງ ການເພີ່ມເງິນເດືອນ ແລະ ເງິນອຸດໜູນ ເພື່ອແກ້ໄຂຊີວິດການເປັນຢູ່ຂອງ ພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ ແລະ ບຳນານ ເປັນແຕ່ລະໄລຍະ, ພ້ອມທັງ ສາມາດຮັບປະກັນລາຍຈ່າຍບູລິມະສິດຂອງລັດຖະບານ ໃຫ້ສາມາດດຳເນີນການເຄື່ອນໄຫວ ເປັນປົກກະຕິ.

**2) ດ້ານເງິນຕາ ມີທັງໝົດ 7 ຕົວຊີ້ບອກ:** ໄດ້ດຳເນີນນະໂຍບາຍເງິນຕາຈາກທິດຜ່ອນຄາຍມາເປັນທິດຮັດກຸມນັບແຕ່ກາງປີ 2022 ເປັນຕົ້ນມາ ຜ່ານເຄື່ອງມືນະໂຍບາຍເງິນຕາ ເປັນຕົ້ນ ໄດ້ປັບເພີ່ມອັດຕາດອກເບ້ຍພື້ນຖານ ທຫລ, ປັບເພີ່ມອັດຕາສ່ວນເງິນແຮຝາກບັງຄັບສະກຸນເງິນກີບ ແລະ ເງິນຕາຕ່າງປະເທດ, ອອກ ແລະ ຈຳໜ່າຍພັນທະບັດຂອງ ທຫລ ໄລຍະສັ້ນໃຫ້ແກ່ມອນຊົນ ແນໃສ່ຄວບຄຸມປະລິມານເງິນ M2; ນອກຈາກນັ້ນ, ເພື່ອຊຸກຍູ້ຕະຫຼາດເປີດໃຫ້ມີການເຄື່ອນໄຫວແຂງແຮງ ໄດ້ອອກ ແລະ ຈຳໜ່າຍພັນທະບັດ ທຫລ, ອອກຜະລິດຕະພັນເງິນຝາກປະຈຳໄລຍະ 7 ວັນ, 3 ເດືອນ, 6 ເດືອນ; ພ້ອມດຽວກັນນັ້ນ, ໄດ້ປະກອບສ່ວນແກ້ໄຂຄວາມຫຍຸ້ງຍາກດ້ານງົບປະມານໃຫ້ແກ່ລັດຖະບານກໍຄືກະຊວງການເງິນ ໂດຍຈັດຕັ້ງປະຕິບັດການປະມູນພັນທະບັດຄັງເງິນຢູ່ ທຫລ, ໄດ້ປະກອບສ່ວນປະຕິບັດການແກ້ໄຂບັນຫາໜີ້ໂຄງການລົງທຶນຂອງລັດ ດ້ວຍຮູບການອ່າຍໜີ້ 3 ແຈ ຈຳນວນໜຶ່ງ. ນອກຈາກນັ້ນ, ໄດ້ດຳເນີນນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດ ພາຍໃຕ້ການຄຸ້ມຄອງຂອງລັດໃນທິດທາງທີ່ມີຄວາມຍືດຍຸ່ນຫຼາຍກວ່າເກົ່າ ແລະ ໄດ້ດັດສົມເງິນຕາຕ່າງປະເທດໃຫ້ແກ່ການນຳເຂົ້າສິນຄ້າຍຸດທະສາດ, ໄດ້ປັບປຸງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ, ຢຸດຕິການຕໍ່ອະນຸຍາດ ແລະ ລົບລ້າງການດຳເນີນທຸລະກິດຮ້ານແລກປ່ຽນເງິນຕາທັງໝົດໃນຕົ້ນປີ 2023, ພັດທະນາລະບົບບໍລິຫານກະແສເງິນຕາຕ່າງປະເທດເຂົ້າ-ອອກປະເທດ (CMS) ແລະ ໄດ້ສ້າງຕັ້ງຕະຫຼາດແລກປ່ຽນເງິນຕາຕ່າງປະເທດແບບເອເລັກໂຕຣນິກ. ຜ່ານການຈັດຕັ້ງປະຕິບັດມາດຕະການທີ່ກ່າວມານັ້ນ ໃນໄລຍະ 2021-2025 ຄາດວ່າປະລິມານເງິນ M2 ຈະຂະຫຍາຍຕົວສະເລ່ຍລະດັບ 25.57% ຕໍ່ປີ (ແຜນການ 5 ປີ: ບໍ່ເກີນ 20% ຕໍ່ປີ), ອັດຕາເງິນເຟີ້ ສະເລ່ຍເພີ່ມຂຶ້ນຢູ່ໃນລະດັບ 17.97% (ແຜນການ 5 ປີ: ສະເລ່ຍບໍ່ເກີນ 6%), ໄລຍະ 5 ປີ ອັດຕາແລກປ່ຽນເງິນກີບທຽບໃສ່ເງິນໂດລາ ຄາດວ່າຈະເໜັງຕີງເກີນຂອບແຜນການກຳນົດໄວ້ ສະເລ່ຍຢູ່ໃນລະດັບ 15.16% (ແຜນການ 5 ປີ: ເໜັງຕີງໃນຂອບ ±5%), ໃນທ້າຍປີ 2025 ຄັງສຳຮອງເງິນຕາຕ່າງປະເທດ ຄາດວ່າຈະສາມາດກຸ້ມການນາເຂົ້າບັນລຸໄດ້ຕາມແຜນ ຢູ່ໃນລະດັບ 5.28 ເດືອນ (ຕົວເລກເບື້ອງຕົ້ນ) (ແຜນການ 5 ປີ: ໃຫ້ໄດ້ຢ່າງໜ້ອຍ 3 ເດືອນ), ການລະດົມເງິນຝາກທະນາຄານທຸລະກິດ ທຽບກັບ GDP ເພີ່ມຈາກ 64.51% ມາເປັນ 96.58% (ຕົວເລກເບື້ອງຕົ້ນ) (ແຜນການ 5 ປີ: 60% ຂອງ GDP ໃນທ້າຍປີ 2025), ສິນເຊື່ອຂອງລະບົບທະນາຄານ ທຽບກັບ GDP ເພີ່ມຈາກ 60.47% ມາເປັນ 61.35% (ຕົວເລກເບື້ອງຕົ້ນ) (ແຜນການ 5 ປີ: 49% ຂອງ GDP ໃນທ້າຍປີ 2025), ຄວບຄຸມອັດຕາສ່ວນໜີ້ບໍ່ເກີດດອກອອກຜົນ (NPLs) ຂອງທົ່ວລະບົບທະນາຄານ 5 ປີ ສະເລ່ຍຢູ່ໃນລະດັບ 1.41% (ຕົວເລກເບື້ອງຕົ້ນ) (ແຜນການ 5 ປີ: ສະເລ່ຍຢູ່ໃນລະດັບບໍ່ເກີນ 3% ຂອງຍອດສິນເຊື່ອທັງໝົດ).

**ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ທີ່ຕິດພັນກັບວຽກຈຸດສຸມການສ້າງສະຖຽລະພາບດ້ານເງິນຕາ ປະກອບມີ 8 ຕົວຊີ້ບອກ ມີຜົນໄດ້ຮັບຄື:** ຮອດທ້າຍປີ 2024 ສາມາດຮັກສາລະດັບຄັງສຳຮອງເງິນຕາຕ່າງປະເທດ ໃຫ້ສາມາດກຸ້ມການນຳເຂົ້າສະເລ່ຍ 5.12 ເດືອນ (ຄາດໝາຍບໍ່ໃຫ້ຫຼຸດ 3 ເດືອນ); ສາມາດຄວບຄຸມອັດຕາສ່ວນໜີ້ NPLs ຢູ່ໃນລະດັບ 1.36% (ຄາດໝາຍບໍ່ເກີນ 3%); ສາມາດຮັກສາອັດຕາສ່ວນຜົນຕອບແທນຕໍ່ທຶນ (ROE) ຢູ່ທີ່ລະດັບ 17.60% (ແຜນການຫຼາຍກວ່າ 6.4% ໃນປີ 2023) ແລະ ສາມາດຮັກສາອັດຕາສ່ວນຜົນຕອບແທນຕໍ່ຊັບສິນ (ROA) ຢູ່ທີ່ລະດັບ 1.40% (ແຜນການຫຼາຍກວ່າ 0.28% ໃນປີ 2023); ການຮັກສາລະດັບຄວາມພຽງພໍຂອງທຶນ (CAR) ຢູ່ໃນລະດັບ 7.95%

(ແຜນການຫຼາຍກວ່າ 8% ໃນປີ 2023); ສ່ວນຕ່າງລະຫວ່າງອັດຕາແລກປ່ຽນຂອງທະນາຄານ ແລະ ຕະຫຼາດ ຢູ່ໃນລະດັບ 0.14% ສໍາລັບເງິນກີບທຽບໂດລາ (ແຜນການຕໍ່າກວ່າ 2% ໃນປີ 2023); ອັດຕາສ່ວນສິນເຊື່ອໃຫ້ຂະແໜງກະສິກໍາ ແລະ ຫັດຖະກໍາ ຢູ່ໃນລະດັບ 4.95% (ແຜນການບໍ່ຫຼຸດ 10% ໃນປີ 2023); ໃນໄລຍະປີ 2021-2024 ຖານະການຊໍາລະປົກກະຕິກັບຕ່າງປະເທດ ເກີນດຸນໃນລະດັບ 908.78 ລ້ານໂດລາສະຫະລັດ, ສະເພາະໃນທ້າຍປີ 2024 ກວມ 3.53% ຂອງ GDP (ແຜນປີ 2023 ເກີນດຸນ ໃນລະດັບ 2% ຂອງ GDP).

**3) ການຄ້າກັບຕ່າງປະເທດ,** ໄດ້ສືບຕໍ່ເອົາໃຈໃສ່ປະຕິບັດນະໂຍບາຍການຄ້າກັບຕ່າງປະເທດຢ່າງຕັ້ງໜ້າ, ໃນນີ້: ມູນຄ່າການສົ່ງອອກສິນຄ້າໄປຕ່າງປະເທດມີທ່າອ່ຽງເພີ່ມຂຶ້ນໃນແຕ່ລະປີ ເຊິ່ງ 5 ປີ ຄາດວ່າປະຕິບັດໄດ້ 33,788.53 ລ້ານໂດລາ, ເທົ່າກັບ 88.79% ຂອງແຜນການ 5 ປີ (ແຜນການ 5 ປີ: 38,053.50 ລ້ານໂດລາ) ແລະ ມູນຄ່າການນໍາເຂົ້າປະຕິບັດໄດ້ 28,021.13 ລ້ານໂດລາ, ເທົ່າກັບ 85.10% ຂອງແຜນການ 5 ປີ (ແຜນການ 5 ປີ: 32,927.30 ລ້ານໂດລາ), ດຸນການຄ້າ ສາມາດເກີນດຸນໃນແຕ່ລະປີ ຄື: ໃນປີ 2021 ເກີນດຸນ 1,739.67 ລ້ານໂດລາ, ປີ 2022 ເກີນດຸນ 1,389.95 ລ້ານໂດລາ, ປີ 2023 ເກີນດຸນ 1,099.91 ລ້ານໂດລາ, ປີ 2024 ເກີນດຸນ 1,537.87 ລ້ານໂດລາ ແລະ ປີ 2025 ຄາດວ່າຈະເກີນດຸນ 1,558.14 ລ້ານໂດລາ. ໃນ 5 ປີ ຄາດວ່າຈະເກີນດຸນການຄ້າ 7,325.54 ລ້ານໂດລາ, ແຕ່ການນໍາເງິນຕາເຂົ້າມາປະເທດບໍ່ສົມຄູ່ກັບມູນຄ່າ ຂອງການສົ່ງອອກ.

### *1.3 ວຽກງານຍົກສູງປະສິດທິພາບການລົງທຶນໃຫ້ມີຄຸນນະພາບ ແລະ ມີປະສິດທິຜົນສູງ*

ໄດ້ຕັ້ງໜ້າຍົກສູງການລົງທຶນໃຫ້ມີປະສິດທິຜົນສູງຂຶ້ນ ດ້ວຍການປັບປຸງກົນໄກ, ກົດໝາຍ ແລະ ລະບຽບການໃນການຄຸ້ມຄອງການລົງທຶນຂອງລັດ, ປັບປຸງກົດໝາຍສົ່ງເສີມການລົງທຶນ ແລະ ປັບປຸງກົນໄກ ແລະ ຂັ້ນຕອນການອະນຸຍາດການລົງທຶນ ແລະ ການດໍາເນີນທຸລະກິດ, ໄປຄຽງຄູ່ກັບການເອົາໃຈໃສ່ໃນການຕິດຕາມກວດກາໂຄງການໃຫ້ໄປຕາມສັນຍາ, ໃນ 5 ປີ ສາມາດປະຕິບັດໄດ້ 342,406 ຕື້ກີບ ເທົ່າກັບ 167% ຂອງແຜນການ 5 ປີ (ແຜນການ 5 ປີ 204,599 ຕື້ກີບ), ໃນນີ້ ການລົງທຶນຈາກງົບປະມານພາຍໃນ ປະຕິບັດໄດ້ 22,080 ຕື້ກີບ ເທົ່າກັບ 96% ຂອງແຜນການ 5 ປີ (ແຜນການ 5 ປີ 22,950 ຕື້ກີບ), ພ້ອມນີ້ ໄດ້ແກ້ໄຂໜີ້ສິນການລົງທຶນຂອງລັດ ຈາກງົບປະມານປະຈໍາປີ ແລະ ນະໂຍບາຍສະເພາະ ເຊັ່ນ: (1) ຈາກງົບປະມານປະຈໍາປີ ໃນໄລຍະປີ 2021-2024 ສາມາດແກ້ໄຂໜີ້ການລົງທຶນຂອງລັດໄດ້ທັງໝົດ 19,871.81 ຕື້ກີບ ໃນນີ້, ທຶນໃນແຜນປົກກະຕິ 1,871.81 ຕື້ກີບ, (2) ບ້ວງອອ່າຍໜີ້ 3 ແຈພັນທະບັດ ຈໍານວນ 10,000 ຕື້ກີບ ແລະ ແກ້ໄຂໜີ້ບ້ວງພັນທະບັດ 8,000 ຕື້ກີບ. ນອກຈາກນີ້ ຍັງໄດ້ຄົ້ນຄວ້ານະໂຍບາຍການແກ້ໄຂໜີ້ສິນໂຄງການລົງທຶນຂອງລັດ ດ້ວຍຮູບແບບຕ່າງໆ ເປັນຕົ້ນ ນະໂຍບາຍຫັນໜີ້ເປັນທຶນ; ການລົງທຶນຈາກ ODA 5 ປີ ປະຕິບັດໄດ້ 54,493 ຕື້ກີບ ເທົ່າກັບ 146% ຂອງແຜນການ 5ປີ (ແຜນການ 5 ປີ 37,344 ຕື້ກີບ) ແລະ ການລົງທຶນຈາກເອກະຊົນພາຍໃນ ແລະ ການລົງທຶນໂດຍກົງຈາກຕ່າງປະເທດ ສາມາດປະຕິບັດໄດ້ 266,494 ຕື້ກີບ ເທົ່າກັບ 266% ຂອງແຜນການ 5 ປີ (ແຜນການ 5 ປີ 100,000 ຕື້ກີບ) ເຫັນວ່າມີທ່າອ່ຽງເພີ່ມຂຶ້ນ, ແຕ່ການນໍາເງິນເຂົ້າຕົວຈິງຜ່ານລະບົບທະນາຄານແມ່ນໜ້ອຍຫຼາຍ ປະມານ .....% ຂອງມູນຄ່າທຶນນໍາເຂົ້າຕົວຈິງທັງໝົດ.

### *1.4 ວຽກງານພັດທະນາຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ຈນວ) ໄປສູ່ຄຸນນະພາບໃໝ່ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ*

ໄດ້ສຸມໃສ່ຈັດຕັ້ງປະຕິບັດບັນດາວຽກຈຸດສຸມທີ່ສໍາຄັນ ເພື່ອຊຸກຍູ້ສົ່ງເສີມ ແລະ ພັດທະນາ ຈນກ ໃຫ້ມີຄວາມເຂັ້ມແຂງ ໂດຍຜ່ານ 7 ນະໂຍບາຍ ໂດຍສ້າງເງື່ອນໄຂໃຫ້ວິສາຫະກິດ ຈນກ ສາມາດເຂົ້າຫາແຫຼ່ງທຶນໃຫ້ຫຼາຍຂຶ້ນ ເປັນຕົ້ນນະໂຍບາຍສິນເຊື່ອ ເພື່ອກະຕຸ້ນເສດຖະກິດ, ນະໂຍບາຍກະຈາຍສິນເຊື່ອສູ່ທ້ອງຖິ່ນ ແນໃສ່ເຮັດໃຫ້ການຜະລິດມີຄວາມເຂັ້ມແຂງ ແລະ ຫຼຸດຜ່ອນການນໍາເຂົ້າສິນຄ້າຈາກຕ່າງປະເທດ ແລະ ນະໂຍບາຍສິນເຊື່ອອື່ນໆ; ຊຸກຍູ້ ແລະ ສົ່ງເສີມຜູ້ປະກອບການໃໝ່, ສົ່ງເສີມການເພີ່ມຜະລິດຕະພາບ, ການນໍາໃຊ້ເຕັກໂນໂລຊີ-ນະວັດຕະກໍາເພື່ອຍົກລະດັບຄຸນນະພາບ ແລະ ມາດຕະຖານຜະລິດຕະພັນ ແລະການບໍລິການ, ສົ່ງເສີມການເຂົ້າເຖິງການບໍລິການໃຫ້ຄໍາປຶກສາພັດທະນາທຸລະກິດ, ການເຂົ້າເຖິງ ແລະ ການຂະຫຍາຍຕະຫຼາດ, ສ້າງສະພາບແວດລ້ອມທີ່ເອື້ອອໍານວຍໃຫ້ແກ່ການສ້າງ-ດໍາເນີນທຸລະກິດ, ການຖືບັນຊີໃຫ້ສອດຄ່ອງຕາມລະບຽບການກໍານົດ.

### *1.5 ວຽກງານພັດທະນາວິສາຫະກິດລັດ ແລະ ເສດຖະກິດຮ່ວມໝູ່ຂອງປະຊາຊົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ ເພື່ອສ້າງພື້ນຖານອັນໜັກແໜ້ນໃຫ້ແກ່ການຜະລິດ ແລະ ການບໍລິການສັງຄົມ ທັງປະກອບສ່ວນສ້າງລາຍຮັບເຂົ້າງົບປະມານລັດໃຫ້ສົມທົບກັບການລົງທຶນ*

#### 1) ວຽກງານພັດທະນາວິສາຫະກິດລັດ:

ວິສະຫະກິດລັດລົງທຶນ ແລະ ເສດຖະກິດລວມໝູ່ຂອງປະຊາຊົນ ເປັນພາກສ່ວນເສດຖະກິດທີ່ສຳຄັນຂອງລະບົບເສດຖະກິດແຫ່ງຊາດ, ຕະຫຼອດໄລຍະຜ່ານມາ ພັກ-ລັດ ໄດ້ຖືການປະຕິຮູບລັດວະສະຫະກິດເປັນບັນຫາສາ ຄັນໂດຍສະເພາະແມ່ນໄລຍະປັບປຸງ ແມ່ນຖືສຳຄັນເປັນພິເສດໃນການປະຕິຮູບລັດວິສະຫະກິດ ເພື່ອໃຫ້ເຂັ້ມແຂງ ສາມາດປະກອບສ່ວນເຂົ້າໃນແຜນລາຍຮັບງົບປະມານ, ປັບປຸງວຽກງານທີ່ເປັນຍຸດທະສາດຂອງພັກ ແລະ ລັດຖະ ບານ ກ້າວສູ່ການເປັນເຈົ້ານຳໜ້າພາທາງໃນລະບົບເສດຖະກິດແຫ່ງຊາດໃນຕໍ່ໜ້າ.

- ປະຈຸບັນມີວິສາຫະກິດລັດລົງທຶນ ໃນຂອບເຂດທົ່ວປະເທດທັງໝົດ 171 ຫົວໜ່ວຍ, ໃນນີ້: ຂັ້ນສູນກາງຄຸ້ມຄອງມີທັງໝົດ 93 ຫົວໜ່ວຍ ແລະ ຂັ້ນທ້ອງຖິ່ນຄຸ້ມຄອງມີທັງໝົດ 78 ຫົວໜ່ວຍ. ນັບແຕ່ປີ 2021 ເປັນຕົ້ນມາ ລັດຖະບານໄດ້ສຸມໃສ່ປະຕິຮູບຈຳນວນ 32 ຫົວໜ່ວຍ ຕາມມະຕິ 10/ລບ, ລົງວັນທີ 15 ຕຸລາ 2021, ໃນນີ້, ສາມາດຈັດຕັ້ງປະຕິບັດສຳເລັດ 10 ຫົວໜ່ວຍ (ຍຸບ 2 ຫົວໜ່ວຍ, ຂາຍຮຸ້ນ 8 ຫົວໜ່ວຍ) ແລະ ສືບຕໍ່ປະຕິຮູບຈຳນວນ 22 ຫົວໜ່ວຍ ທີ່ຍັງເຫຼືອ ໂດຍສະເພາະໄດ້ສຸມໃສ່ 4 ຫົວໜ່ວຍທີ່ເປັນຍຸດທະສາດຄື: ລັດວິສາຫະກິດໄຟຟ້າລາວ, ລັດວິສາຫະກິດນ້ຳມັນເຊື້ອໄຟລາວ ແລະ ລັດວິສາຫະກິດ ການບິນລາວ ໃນນີ້ໄດ້ສຳເລັດການປະຕິຮູບທະນາຄານນະໂຍບາຍ ໂດຍການປ່ຽນຊື່ມາເປັນທະນາຄານພັດທະນາຊົນນະບົດສ່ວນ 3 ຫົວໜ່ວຍ ກໍມີຄວາມຄືບໜ້າໃນການປະຕິຮູບຕາມລຳດັບ.
- ສຳເລັດການໄປຖອດຖອນບົດຮຽນ ຈາກ ສສ ຫວຽດນາມ ແລະ ໄດ້ສຳເລັດການຮ່ວມເຮັດວຽກນຳຄະນະຊ່ຽວຊານຫວຽດນາມທີ່ມາເຮັດວຽກນຳ 132 ເຊິ່ງການຖອດຖອນໃນຄັ້ງນີ້ສາມາດນຳບົດຮຽນທີ່ເປັນປະໂຫຍດໃຫ້ແກ່ຄະນະປະຕິຮູບລັດວິສະຫະກິດ.
- ມາຮອດປັດຈຸບັນ ຕາມການປະຕິບັດມະຕິກົມການເມືອງສູນກາງພັກຄັ້ງທີ 8 ສະໄໝ XI ໄດ້ຕົກລົງເອົາວຽກປະຕິຮູບລັດວິສະຫະກິດ ຂຶ້ນກັບຫ້ອງວ່າການສູນກາງພັກ ແລະ ກົມການເມືອງກໍໄດ້ແຕ່ງຕັ້ງຄະນະປະຕິຮູບລັດວິສະຫະກິດຂັ້ນສູນກາງ. ໄດ້ສຳເລັດການສ້າງຄະນະປະຕິຮູບຂອງບັນດາກະຊວງ, ອົງການທຽບເທົ່າ ແລະ ທ້ອງຖິ່ນທົ່ວປະເທດໄດ້ ຈຳນວນ...... ໂດຍແມ່ນທ່ານລັດຖະມົນຕີ ຫຼື ຮອງລັດຖະມົນຕີເປັນຫົວໜ້າຄະນະປະຕິຮູບຂອງກະຊວງ ແລະ ອົງການ ແລະ ໂດຍຖືເອົາຫ້ອງການກະຊວງເປັນຈຸດປະສານໃນວຽກດັ່ງກ່າວ, ສຳລັບທ້ອງຖິ່ນ ແມ່ນທ່ານຮອງເຈົ້າແຂວງເປັນຫົວໜ້າຄະນະປະຕິຮູບ ໂດຍຖືເອົາຫ້ອງວ່າການປົກຄອງແຂວງເປັນຈຸດປະສານງານວຽກດັ່ງກ່າວ.

#### 2) ວຽກງານພັດທະນາສະຫະກອນ:

ໄດ້ຊຸກຍູ້ສ້າງສະຫະກອນການຜະລິດ ເຊິ່ງໃນ 5ປີ ຜ່ານມາ ສາມາດສ້າງໄດ້ 18 ຫົວໜ່ວຍ ເທົ່າກັບ 100% ຂອງແຜນການ (ແຜນການ 5 ປີ ໃຫ້ໄດ້ 18 ສະຫະກອນ). ມາຮອດປັດຈຸບັນມີສະຫະກອນການຜະລິດ ທັງໝົດ 36 ສະຫະກອນ, ໄດ້ຂະຫຍາຍເຄືອຂ່າຍກຸ່ມການຜະລິດຂອງຊາວກະສິກອນ ປະຕິບັດໄດ້ ..... ກຸ່ມການຜະລິດ, ເທົ່າກັບ .......%ຂອງແຜນການ (ແຜນການ 5 ປີ ໃຫ້ໄດ້ 24 ກຸ່ມການຜະລິດ), ມາຮອດປັດຈຸບັນມີກຸ່ມການຜະລິດຂອງຊຸມຊົນທັງໝົດ 4.193 ກຸ່ມການຜະລິດ.

DRAFT

## 2. ເປົ້າໝາຍທີ ສອງ: ການພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບ ສາມາດຕອບສະໜອງຄວາມຕ້ອງການຂອງການພັດທະນາ, ມີຄວາມສາມາດຄົ້ນຄວ້າ ແລະ ນຳໃຊ້ວິທະຍາສາດ-ເຕັກໂນໂລຊີ ເພື່ອຍົກສູງປະສິດທິພາບ ແລະ ສ້າງມູນຄ່າເພີ່ມການຜະລິດ ແລະ ການບໍລິການ

### *2.1 ວຽກງານປັບປຸງຄຸນນະພາບການສຶກສາໃນທຸກລະດັບໃຫ້ສູງຂຶ້ນ ແລະ ມີຄວາມພ້ອມໃນການເຊື່ອມໂຍງກັບພາກພື້ນ ແລະ ສາກົນ*

ນັບແຕ່ປີ 2020 ເປັນຕົ້ນມາ ສປປ ລາວ ແມ່ນໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19 ເຮັດໃຫ້ເສດຖະກິດ ແລະ ການເງິນຂອງປະເທດເຮົາພົບຄວາມຫຍຸ້ງຍາກ ແລະ ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າມີຄວາມຝືດເຄືອງ ເຊິ່ງມີຜົນກະທົບດ້ານລົບ ທັງທາງກົງ ແລະ ທາງອ້ອມຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກໍຄື ແຜນພັດທະນາຂະແໜງການສຶກສາ ແລະ ກິລາ; ຈາກສະພາບດັ່ງກ່າວບວກກັບການສະໜອງຕົວເລກລັດຖະກອນຄູໃໝ່ທີ່ມີຈຳກັດ ໄດ້ສົ່ງຜົນກະທົບຕໍ່ການເຂົ້າຮຽນ ແລະ ການປະລະການຮຽນຂອງນັກຮຽນໃນທຸກລະດັບ. ເຖິງແນວໃດກໍຕາມ, ຂະແໜງສຶກສາທິການ ແລະ ກິລາ ກໍຍັງໄດ້ສືບຕໍ່ເອົາໃສ່ວຽກງານຂອງຕົນຕາມທ່າແຮງ ແລະ ຊັບພະຍາກອນທີ່ມີຈຳກັດ ເຂົ້າໃສ່ບັນດາແຜນງານບູລິມະສິດຂອງຕົນ ຈຶ່ງເຮັດໃຫ້ສາມາດບັນລຸໄດ້ບາງຜົນສຳເລັດດັ່ງນີ້:

- **ວຽກງານການສຶກສາກ່ອນໄວຮຽນ:** ການຂະຫຍາຍຕາໜ່າງການສຶກສາກ່ອນໄວຮຽນ ແມ່ນໄດ້ເນັ້ນໃສ່ການຂະຫຍາຍການເຂົ້າຮຽນຂອງເດັກ 5 ປີ ໃນຮູບແບບຕ່າງໆ ເພື່ອກຽມຄວາມພ້ອມກ່ອນເຂົ້າຮຽນຊັ້ນປະຖົມ ພ້ອມທັງໄດ້ສົ່ງເສີມໃຫ້ພາກສ່ວນເອກະຊົນ ມີສ່ວນຮ່ວມໃນການພັດທະນາການສຶກສາກ່ອນໄວຮຽນ. ນອກນັ້ນ ໄດ້ສືບຕໍ່ພັດທະນາ ແລະ ປັບປຸງຫຼັກສູດ, ພັດທະນາ ແລະ ສະໜອງປຶ້ມນິທານປະກອບລາຍການໂທລະພາບ ແລະ ຜ່ານ ລະບົບການຮຽນອອນລາຍ "ຄັງປັນຍາລາວ", ໄດ້ສະໜອງອຸປະກອນຮັບໃຊ້ການຮຽນການສອນ, ສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມ ແລະ ສະໜອງອາຫານທ່ຽງໃນໂຮງຮຽນ ໃຫ້ແກ່ນັກຮຽນຈາກຄອບຄົວທຸກຍາກ; ໄດ້ຍົກລະດັບຜູ້ດູແລເດັກ ແລະ ຄູສອນ, ດຳເນີນການປະເມີນການປະຕິບັດໜ້າທີ່ຂອງຜູ້ອຳນວຍການໂຮງຮຽນ ແນໃສ່ປັບປຸງການບໍລິຫານ ແລະ ຄຸ້ມຄອງໂຮງຮຽນ ແລະ ສິ່ງທີ່ພົ້ນເດັ່ນ ດຳລັດວ່າດ້ວຍການສຶກສາກ່ອນໄວຮຽນໄດ້ຖືກຮັບຮອງຈາກລັດຖະບານ. ຜ່ານການປະຕິບັດດັ່ງກ່າວ ໄດ້ເຮັດໃຫ້ອັດຕາການເຂົ້າຮຽນໃນຊັ້ນການສຶກສາກ່ອນໄວຮຽນມີທ່າອ່ຽງທີ່ດີຂຶ້ນ ໂດຍສະເພາະ ອັດຕາເຂົ້າຮຽນຂອງເດັກ 5 ປີ ເພີ່ມຂຶ້ນຈາກ 82.7% ໃນສົກຮຽນ 2019-2020 ມາເປັນ 84.7% ໃນສົກຮຽນ 2024-2025, ຈຳນວນນັກຮຽນໃນຊັ້ນການສຶກສາກ່ອນໄວຮຽນ ໄດ້ເພີ່ມຂຶ້ນ ຈາກ 245,849 ຄົນ ມາເປັນ 250,113 ຄົນ ແລະ ສັດສ່ວນນັກຮຽນເອກະຊົນແມ່ນເພີ່ມຈາກ 18.75% ມາເປັນ 28.74%.
- **ວຽກງານການສຶກສາຊັ້ນປະຖົມສຶກສາ:** ຊັ້ນປະຖົມສຶກສາຍັງເປັນຂະແໜງການຍ່ອຍທີ່ສຳຄັນ ໃນການສະໜອງທັກສະການອ່ານ, ການຂຽນພາສາລາວ ແລະ ທັກສະດ້ານຄະນິດສາດພື້ນຖານ. ກະຊວງສຶກສາທິການ ແລະ ກິລາ ໄດ້ເອົາໃຈໃສ່ເປັນພິເສດໃນການພັດທະນາ ແລະ ປັບປຸງຫຼັກສູດການຮຽນ-ການສອນຄືນໃໝ່, ໄດ້ພິມປຶ້ມແບບຮຽນ ແລະ ຄູ່ມືຄູ, ພ້ອມທັງສະໜອງອຸປະກອນຮັບໃຊ້ການຮຽນການສອນໃຫ້ໂຮງຮຽນປະຖົມໃນທົ່ວປະເທດ ພ້ອມທັງໄດ້ຝຶກອົບຮົມຄູສອນໃນການນຳໃຊ້ຫຼັກສູດສະບັບປັບປຸງໃໝ່ດັ່ງກ່າວ. ນອກຈາກນັ້ນ, ກະຊວງສຶກສາທິການ ແລະ ກິລາ ຍັງໄດ້ສົມທົບກັບ ອົງການປົກຄອງຂັ້ນທ້ອງຖິ່ນແຕ່ລະຂັ້ນ ຍາດແຍ່ງທຶນຈາກທັງພາຍໃນ ແລະ ຕ່າງປະເທດ ເພື່ອມາປຸກສ້າງ ແລະ ສ້ອມແປງໂຮງຮຽນ, ສະໜອງສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມ, ສະໜອງອາຫານທ່ຽງໃນໂຮງຮຽນ ແລະ ທັງສະໜອງເບ້ຍລ້ຽງໃຫ້ແກ່ເດັກນັກຮຽນຈາກຄອບຄົວທຸກຍາກ. ຄຽງຄູ່ກັບນັ້ນ, ໄດ້ໃຫ້ຄວາມສຳຄັນພິເສດ ໃນການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ລວມທັງວຽກງານນິເທດການສຶກສາ ເພື່ອປັບປຸງຄຸນນະພາບຂອງການຮຽນ-ການສອນໃນຊັ້ນປະຖົມສຶກສາ. ໃນໄລຍະຂອງການລະບາດຂອງພະຍາດໂຄວິດ-19, ຄູ ແລະ ນັກຮຽນກໍ່ໄດ້ນຳໃຊ້ ລະບົບການຮຽນອອນລາຍ "ຄັງປັນຍາລາວ'' ທີ່ໄດ້ຖືກພັດທະນາຂຶ້ນໃນຮູບແບບດີຈີຕອນ ເພື່ອໃຫ້ຄູ ແລະ ນັກຮຽນສາມາດສືບຕໍ່ການຮຽນການສອນໄດ້. ຜົນຂອງການຈັດຕັ້ງປະຕິບັດວຽກງານບູລິມະສິດດັ່ງກ່າວນັ້ນ ເຮັດໃຫ້ອັດຕານັກຮຽນເຂົ້າ ໃໝ່ ປ.1 ທຽບໃສ່ເດັກ 6 ປີ ເພີ່ມຂຶ້ນຈາກ 98.5% ໃນສົກຮຽນ 2019-2020 ເປັນ 99.3% ໃນສົກຮຽນ 2024-2025 ແລະ ອັດຕາປະລະການຮຽນຂອງນັກຮຽນ ປ.1 ຫຼຸດລົງໃນສົກຮຽນ 2019-2020 ຈາກ 6.4% ມາເປັນ 5.9% ໃນສົກປີ 2024-2025.



DRAFT

- **ວຽກງານການສຶກສາຊັ້ນມັດທະຍົມສຶກສາ (ລວມທັງມັດທະຍົມຕອນຕົ້ນ ແລະ ຕອນປາຍ):** ໄດ້ມີການປັບປຸງ ແລະ ກໍ່ສ້າງພື້ນຖານໂຄງລ່າງຂະແໜງການມັດທະຍົມສຶກສາໃນຂອບເຂດທົ່ວປະເທດ ແລະ ໄດ້ສະໜອງເບ້ຍລ້ຽງໃຫ້ນັກຮຽນທີ່ທຸກຍາກ ແລະ ດ້ອຍໂອກາດໂດຍການນໍາໃຊ້ງົບປະມານພາຍໃນ ແລະ ການຊ່ວຍເຫຼືອຂອງຄູ່ຮ່ວມພັດທະນາ. ໄດ້ມີການສ້າງ ແລະ ປັບປຸງບັນດານິຕິກໍາຕ່າງໆ ທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງການຮຽນການສອນຊັ້ນມັດທະຍົມສຶກສາ; ເອົາໃຈໃສ່ຍົກສູງຄຸນນະພາບການສຶກສາ ດ້ວຍການປັບປຸງຫຼັກສູດ, ຄູ່ມືຄູ, ສະໜອງສື່ການຮຽນການສອນຕ່າງໆ ແລະ ຝຶກອົບຮົມຄູໃນການນໍາໃຊ້ຫຼັກສູດ ລວມທັງຝຶກອົບຮົມຄູປະຈໍາການໃນຫົວຂໍ້ຕ່າງໆ ລວມທັງ ການປະເມີນຜົນການຮຽນໃນຫ້ອງຮຽນ. ເພື່ອສະໜອງການສຶກສາ ຫຼັງການສຶກສາຂັ້ນພື້ນຖານທີ່ມີຄຸນນະພາບ ແລະ ສະໜອງແຮງງານເຂົ້າສູ່ຕະຫຼາດ, ໄດ້ຈັດຕັ້ງການຮຽນການສອນວິຊາຊີບ ໃນໂຮງຮຽນມັດທະຍົມສົມບູນສາມັນກິນນອນຊົນເຜົ່າ ແລະ ໂຮງຮຽນມັດທະຍົມຕອນປາຍ ທີ່ມີເງື່ອນໄຂໃນທົ່ວປະເທດ. ແຕ່ຍ້ອນຜົນກະທົບຈາກສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ ແລະ ປະກົດການຫຍໍ້ທໍ້ອື່ນໆໃນສັງຄົມເຮັດໃຫ້ນັກຮຽນ, ລວມທັງຄູສອນ ຕ້ອງອອກໂຮງຮຽນໄປຊອກວຽກເຮັດງານທໍາທັງພາຍໃນ ແລະ ຕ່າງປະເທດ ເພື່ອຫາລ້ຽງຄອບຄົວ. ສະນັ້ນ, ໃນໄລຍະຫ້າປີຜ່ານມາ ຈຶ່ງເຮັດໃຫ້ອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕົ້ນ ຫຼຸດຈາກ 83.3% ເປັນ 72.5% ແລະ ອັດຕາປະລະ ເພີ່ມຂຶ້ນຈາກ 10.3% ເປັນ 12.4%; ອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນປາຍຫຼຸດລົງຈາກ 54.6% ເປັນ 38.4%, ແລະ ອັດຕາປະລະ ກໍ່ເພີ່ມຂຶ້ນຈາກ 8.8%% ເປັນ 13.5%.

- **ວຽກງານການສຶກສານອກໂຮງຮຽນ:** ເຖິງວ່າໄດ້ປະກາດລຶບລ້າງຄວາມບໍ່ຮູ້ໜັງສືໃນທົ່ວປະເທດໃນທົດສະວັດທີ່ຜ່ານມາແລ້ວ, ແຕ່ວຽກງານການຈັດຕັ້ງການຮຽນການສອນລຶບລ້າງຄວາມບໍ່ຮູ້ໜັງສື ແລະ ບໍາລຸງຍົກລະດັບຊັ້ນປະຖົມ ແລະ ຊັ້ນມັດທະຍົມສຶກສາ ກໍ່ຍັງເປັນວຽກທີ່ສໍາຄັນທີ່ຈະຕ້ອງສືບຕໍ່ຈັດຕັ້ງປະຕິບັດ ໃນຂອບເຂດທົ່ວປະເທດ ເພື່ອຮັບມືກັບຈໍານວນນັກຮຽນທີ່ປະລະການຮຽນໃນສາຍສາມັນສຶກສາໃນແຕ່ລະປີ. ໃນໄລຍະຫ້າປີຜ່ານມາ ກະຊວງສຶກສາທິການ ແລະ ກິລາ ໄດ້ສໍາເລັດການປະກາດຈົບຊັ້ນມັດທະຍົມຕອນຕົ້ນບໍາລຸງໃນທົ່ວປະເທດ. ນອກນັ້ນ, ຍັງໄດ້ຮັບຮອງເອົາ ດໍາລັດວ່າດ້ວຍການຮຽນຮູ້ຕະຫຼອດຊີວິດ ແລະ ສໍາເລັດແຜນປະຕິບັດງານແຫ່ງຊາດໃນການຮຽນຮູ້ຕະຫຼອດຊີວິດ, ສໍາເລັດການພັດທະນາຫຼັກສູດ ແລະ ສື່ການຮຽນການສອນໃນຊັ້ນມັດທະຍົມ. ພິເສດແມ່ນໄດ້ພັດທະນາຂອບວຸດທິການສຶກສາທີ່ສາມາດເຊື່ອມຕໍ່ກັນລະຫວ່າງການສຶກສາໃນ ແລະ ນອກໂຮງຮຽນ ເຊິ່ງໄດ້ເຮັດໃຫ້ປະຊາກອນໜຸ່ມ, ຜູ້ປະລະການຮຽນໃຫ້ໄດ້ບໍາລຸງຜ່ານການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບ ແຕ່ສົກປີ 2020-2021 ຫາ ສົກປີ 2024-2025 ໄດ້ປະມານ 176,720 ຄົນ ເທົ່າກັບ 118% ຂອງແຜນການ (ແຜນການ 5 ປີ: ໃຫ້ໄດ້ 150,000 ຄົນ).

- **ວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ:** ໄດ້ປັບປຸງການເຂົ້າເຖິງອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ໂດຍການປັບປຸງໂຄງລ່າງພື້ນຖານ, ສະໜອງອຸປະກອນເຕັກນິກ, ສະໜອງເບ້ຍລ້ຽງ ແລະ ສົ່ງເສີມການຮ່ວມມືກັບບັນດາສະຖານປະກອບການໃນການສ້າງສີມືແຮງງານໃຫ້ມີຄຸນນະພາບ ແລະ ມີຄວາມສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ ພ້ອມທັງຂະຫຍາຍສະຖານອາຊີວະສຶກສາ. ອັນພົ້ນເດັ່ນ ໄດ້ສໍາເລັດການສ້າງຕັ້ງວິທະຍາໄລເຕັກນິກວິຊາຊີບການລົດໄຟລາວ. ໄດ້ແນະແນວວິຊາຊີບໃຫ້ແກ່ນັກຮຽນຊັ້ນມັດທະຍົມສຶກສາຢ່າງກວ້າງຂວາງ, ໄດ້ມີການຫັນປ່ຽນໂດຍນໍາໃຊ້ດິຈິຕອນເຂົ້າໃນການຮຽນການສອນ; ໄດ້ສ້າງ, ທົບທວນ, ປັບປຸງ ແລະ ພັດທະນາ ຫຼັກສູດການຮຽນການສອນ ທັງໄລຍະສັ້ນ ແລະ ໄລຍະຍາວ, ໂດຍເນັ້ນໃສ່ການພັດທະນາຫຼັກສູດການຝຶກອົບຮົມແບບເນັ້ນໃສ່ສະມັດຖະພາບ ແລະ ນໍາໃຊ້ຮູບແບບການຮຽນການສອນແບບຄວບຄູ່ໃນຫຼາກຫຼາຍສາຂາ. ພ້ອມດຽວກັນນີ້, ຍັງໄດ້ສໍາເລັດການພັດທະນາດໍາລັດວ່າດ້ວຍກອງທຶນອາຊີວະສຶກສາ ແລະ ຄູ່ມືນໍາໃຊ້ກອງທຶນ ອັນເຮັດໃຫ້ ອັດຕາສ່ວນນັກຮຽນທີ່ຮຽນຈົບຊັ້ນມັດທະຍົມຕອນຕົ້ນໄດ້ເຂົ້າຮຽນຕໍ່ໃນສາຍອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ເພີ່ມຈາກ 3.8% ໃນສົກຮຽນ 2019-2020 ເປັນ 5.7% ໃນສົກຮຽນ 2024-2025, ມີນັກຮຽນສະໝັກເຂົ້າຮຽນສາຍອາຊີວະສຶກສາ ໃນໄລຍະສົກຮຽນ 2020-2021 ຫາ 2024-25 ມີປະມານ 47,000 ຄົນ ໃນຂະນະທີ່ຜູ້ທີ່ຈົບຈາກສະຖານອາຊີວະສຶກສາທັງພາກລັດ ແລະ ເອກະຊົນ ມີຈໍານວນທັງໝົດກວ່າ 45,000 ຄົນ ໃນໄລຍະ2020-2021 ຫາ 2023-2024.

- **ວຽກງານການສຶກສາຊັ້ນສູງ:** ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບບັນດາສະຖາບັນການສຶກສາຊັ້ນສູງ ໄດ້ສືບຕໍ່ເອົາໃຈໃສ່ປັບປຸງ ແລະ ພັດທະນາຄຸນນະພາບການຮຽນ-ການສອນໃນບັນດາມະຫາວິທະຍາໄລຕ່າງໆ, ໄດ້ສ້າງ ແລະ ປັບປຸງຫຼັກສູດການຮຽນການສອນ ເພື່ອໃຫ້ແທດເໝາະກັບການຫັນປ່ຽນການສຶກສາໃນໄລຍະໃໝ່ ແລະ ສອດຄ່ອງກັບຄວາມຕ້ອງການຂອງຜູ້ຮຽນຫຼາຍຂຶ້ນ; ນອກນັ້ນ ຍັງໄດ້ສຸມໃສ່ພັດທະນາກົນໄກການຄຸ້ມຄອງບໍລິຫານ, ການບໍລິການທີ່ດີ ແລະ ສ້າງມະຫາວິທະຍາໄລໃຫ້ທັນສະໄໝ ໂດຍຫັນລະບົບດິຈິຕອນເຂົ້າໃນການສຶກສາຊັ້ນສູງ. ໃນ

DRAFT

ໄລຍະ 2020-2021 ເຖິງ 2024-2025, ໄດ້ຮັບນັກສຶກສາເຂົ້າຮຽນໃໝ່ໃນບັນດາສະຖາບັນການສຶກສາຊັ້ນສູງຕ່າງໆ ທັງພາກລັດ ແລະ ເອກະຊົນ ຈຳນວນຫຼາຍກວ່າ 60 ພັນຄົນ ໂດຍສະເພາະໃນສາຍວິທະຍາສາດ, ເຕັກໂນໂລຊີ, ວິສະວະກຳ ແລະ ຄະນິດສາດ ເຊິ່ງບັນລຸໄດ້ກວ່າ 16,000 ຄົນ; ໄດ້ສຳເລັດການຄົ້ນຄວ້າວິທະຍາສາດ ຈຳນວນຫຼາຍກວ່າ 500 ຫົວຂໍ້. ນອກຈາກການສະໜອງການສຶກສາພາຍໃນປະເທດແລ້ວ ແຕ່ໄລຍະແຕ່ປີ 2021 ຫາ ປີ 2024 ໄດ້ບໍລິການນັກຮຽນ-ນັກສຶກສາ ໄປສຶກສາຢູ່ຕ່າງປະເທດ ໄດ້ຫຼາຍກວ່າ 14,800 ຄົນ ໃນ 36 ປະເທດທົ່ວໂລກ.

- **ວຽກງານກິລາ-ກາຍຍະກຳ:** ເປັນຂະແໜງການຍ່ອຍໜຶ່ງ ເຮັດໜ້າທີ່ໃນການສົ່ງເສີມການອອກກຳລັງກາຍຂອງທົ່ວປວງຊົນລາວ ລວມທັງເຮັດໜ້າທີ່ສົ່ງເສີມກິລາອາຊີບ. ໃນໄລຍະຜ່ານມາໄດ້ຈັດຕັ້ງຂະບວນການອອກກຳລັງກາຍໃນວັນສຳຄັນຕ່າງໆ ໂດຍໄດ້ສົມທົບກັບສະຫະພັນກິລາແຫ່ງຊາດ, ສະຫະພັນກິລາຄົນພິການ ແລະ ສະຫະພັນກິລານັກຮຽນສາມັນ ຈັດການແຂ່ງຂັນກິລາລະດັບນາໆຊາດ, ແຂ່ງຂັນກິລາປະຈຳປີ, ຊີງຂັນຜູ້ນຳພັກ-ລັດ ແລະ ສະຫຼອງວັນສຳຄັນຕ່າງໆຂອງຊາດ. ໃນໄລຍະ 2021-2024, ໄດ້ຍົກລະດັບຜູ້ບໍລິຫານ, ຄູຝຶກ ແລະ ກຳມະການຕັດສິນ ທັງຢູ່ພາຍໃນ ແລະ ຕ່າງປະເທດ ໄດ້ທັງໝົດ 3000 ກວ່າຄົນ; ໄດ້ສ້າງ ແລະ ພັດທະນານັກກິລາພອນສະຫວັນ ແລະ ນັກກິລາທີມຊາດ 1,138 ຄົນ ແລະ ສປປ ລາວ ສາມາດຍາດໄດ້ 8 ຫຼຽນຄຳໃນກິລາຊີເກມ ແລະ ອາຊຽນເກມ. ໃນທົ່ວປະເທດ, ສະຫະພັນກິລາແຫ່ງຊາດ 10 ສະຫະພັນ ມີລະບົບການບໍລິຫານ ທີ່ໄດ້ມາດຕະຖານ ແລະ ສະໂມສອນກິລາໃນລະດັບຕ່າງໆ ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວຕາມມາດຕະຖານທີ່ໄດ້ກຳນົດໄວ້ໃນລະບຽບການ.

ຜ່ານການຈັດຕັ້ງປະຕິບັດວຽກງານຈຸດສຸມຕົວຈິງ ເພື່ອສະໜັບສະໜູນບັນດາຄາດໝາຍໃນຂະແໜງການສຶກສາ ແລະ ກິລາ, ອີງຕາມມະຕິສະພາ ເລກທີ 20/ສພຊ, ມາຮອດສົກປີ 2024-2025 ໃນຈຳນວນທັງໝົດ 15 ຄາດໝາຍ ເຫັນວ່າ ມີ 8 ຕົວຊີ້ບອກທີ່ບັນລຸໄດ້, 3 ຕົວຊີ້ບອກທີ່ມີຄວາມຄືບໜ້າ ແຕ່ບໍ່ສາມາດບັນລຸໄດ້ຄາດໝາຍ ແລະ 4 ຕົວຊີ້ບອກທີ່ມີລັກສະນະຖົດຖອຍ, ລາຍລະອຽດຂອງການຈັດຕັ້ງປະຕິບັດດັ່ງນີ້:

- **ມີ 8 ຕົວຊີ້ບອກ ທີ່ມີຄວາມຄືບໜ້າດີ ແລະ ສາມາດບັນລຸຄາດໝາຍ ຄື:**
  1) ອັດຕາເຂົ້າຮຽນຂອງເດັກ 5 ປີ ສະເລ່ຍທົ່ວປະເທດ ເພີ່ມຂຶ້ນຈາກ 82.7% ໃນສົກຮຽນ 2019-2020 ມາເປັນ 84.7% ໃນສົກຮຽນ 2024-2025 (ຄາດໝາຍປັບປຸງ ແຜນການ 5 ປີ: 83%);
  2) ອັດຕານັກຮຽນເຂົ້າໃໝ່ ປ.1 ທຽບໃສ່ເດັກ 6 ປີ ເພີ່ມຂຶ້ນຈາກ 98.5% ໃນສົກຮຽນ 2019-2020 ເປັນ 99.3% ໃນສົກຮຽນ 2024-2025 (ແຜນການ 5 ປີ: 98%).
  3) ດັດຊະນີຄວາມສະເໝີພາບຍິງ-ຊາຍອັດຕາເລື່ອນຊັ້ນ ປ.5 ຂຶ້ນ ມ.1 ຢູ່ໃນລະດັບ 0,99 (ແຜນການ 5 ປີ: ຢູ່ໃນລະຫວ່າງ: 0,97-1,03).
  4) ປະຊາກອນໜຸ່ມ, ຜູ້ປະລະການຮຽນໃຫ້ໄດ້ບຳລຸງຜ່ານການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບ ລວມ 5 ປີ ບັນລຸໄດ້ 176,720 ຄົນ (ແຜນການ 5ປີ: ໃຫ້ໄດ້ 150,000 ຄົນ).
  5) ຄູຊັ້ນປະຖົມ ແລະ ມັດທະຍົມສຶກສາໃຫ້ໄດ້ຮັບການຝຶກອົບຮົມແຕ່ລະປີ ປະຕິບັດໄດ້ສະເລ່ຍສູງກວ່າ 20% ຂອງຈຳນວນຄູທັງໝົດ (ແຜນການ 5 ປີ: ສະເລ່ຍຕໍ່ປີ 10% ທຽບໃສ່ຈຳນວນຄູສອນທັງໝົດ).
  6) ອັດຕາສ່ວນນັກຮຽນທີ່ຮຽນຈົບຊັ້ນມັດທະຍົມຕອນຕົ້ນໄດ້ເຂົ້າຮຽນຕໍ່ໃນສາຍອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ບັນລຸໄດ້ 5.7% ໃນສົກຮຽນ 2024-2025 (ແຜນການ 5 ປີ: ໃຫ້ໄດ້ 5%).
  7) ສົ່ງເສີມໃຫ້ນັກສຶກສາທີ່ສະໝັກເຂົ້າຮຽນລະດັບມະຫາວິທະຍາໄລ ໄດ້ເຂົ້າຮຽນໃນສາຍວິທະຍາສາດທຳມະຊາດ, ເຕັກໂນໂລຊີ, ວິສະວະກຳ ແລະ ຄະນິດສາດ ບັນລຸໄດ້ 16,365 ຄົນ (ແຜນການ 5ປີ: ໃຫ້ໄດ້ 12,500 ຄົນ)
  8) ສົ່ງເສີມມວນຊົນທຸກເພດ ທຸກໄວ ເຂົ້າຮ່ວມການຫັດກາຍຍະບໍລິຫານ, ການອອກກຳລັງກາຍ ແລະ ການຫຼິ້ນກິລາກາຍຍະກຳ ຂອງພົນລະເມືອງລາວ ບັນລຸໄດ້ 50% (ແຜນ 5 ປີ: 50%).
- **ມີ 3 ຕົວຊີ້ບອກ ທີ່ມີຄວາມຄືບໜ້າ ແຕ່ບໍ່ສາມາດບັນລຸຄາດໝາຍໄດ້ ຄື:**
  1) ອັດຕາປະລະ ຂັ້ນ ປ1 ຫຼຸດລົງຈາກ 6% ໃນສົກຮຽນ 2023-2024 ເປັນ 5.9% ໃນສົກຮຽນ 2024-2025 (ຄາດໝາຍ 4%);
  2) ອັດຕາຈົບຊັ້ນປະຖົມສຶກສາ ເພີ່ມຂຶ້ນຈາກ 92.6% ໃນສົກຮຽນ 2019-2020 ມາເປັນ 93.3% ໃນສົກຮຽນ 2024-2025 (ແຜນການ 5 ປີ: 95%);

3) ອັດຕາເລື່ອນຊັ້ນ ປ.5 ຂຶ້ນ ມ.1 ເພີ່ມຈາກ 85.1% ໃນສົກຮຽນ 2019-2020 ເປັນ 85.6% ໃນສົກຮຽນ2024-2025 (ແຜນການ 5ປີ: 90%);

- **ມີ 4 ຄາດໝາຍທີ່ບໍ່ບັນລຸຄາດໝາຍ ແລະ ມີລັກສະນະຖົດຖອຍ ຄື:**

1) ອັດຕາເຂົ້າຮຽນໃໝ່ລວມ ປ.5 ຫຼຸດລົງຈາກ 100.4% ໃນສົກຮຽນ 2019-2020 ມາເປັນ 95.5% ໃນສົກຮຽນ 2024-2025 (ແຜນການ 5ປີ: 99%);
2) ອັດຕາປະລະການຮຽນຂອງນັກຮຽນຊັ້ນປະຖົມ ເພີ່ມຂຶ້ນຈາກ 4.3% ໃນສົກຮຽນ 2019-2020 ເປັນ 4.6% ໃນສົກຮຽນ 2024-2025 (ແຜນການ 5 ປີ: 2%);
3) ອັດຕາປະລະການຮຽນຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນ ເພີ່ມຂຶ້ນຈາກ 10.3% ໃນສົກຮຽນ 2019-2020 ເປັນ 12.4% ໃນສົກຮຽນ 2024-2025 (ແຜນການ 5 ປີ: 8%).
4) ອັດຕາເຂົ້າຮຽນໃໝ່ລວມ ຂັ້ນ ມ.4 ຫຼຸດລົງຈາກ 71.6% ໃນສົກຮຽນ 2019-2020 ມາເປັນ 61.4% ໃນສົກຮຽນ 2024-2025 (ແຜນການ 5ປີ: 74%).

- **ສິ່ງທ້າທາຍ:**

ຂະແໜງການສຶກສາແມ່ນຂະແໜງການໜຶ່ງ ທີ່ໄດ້ຮັບຜົນກະທົບໂດຍກົງຈາກການລະບາດຂອງພະຍາດໂຄວິດ-19 ບວກກັບສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ເຮັດໃຫ້ ການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ 9 ພົບກັບສິ່ງທ້າທາຍ ແລະ ຄວາມຫຍຸ້ງຍາກຫຼາຍປະການ ເປັນຕົ້ນ ແມ່ນສະພາບ ອັດຕາການເຂົ້າຮຽນຫຼຸດລົງ ແລະ ຜູ້ສົນໃຈເຂົ້າຮຽນໃນຊັ້ນການສຶກສາຕ່າງໆຫຼຸດລົງ, ອັດຕາການປະລະເພີ່ມຂຶ້ນໂດຍສະເພາະແມ່ນໃນຊັ້ນມັດທະຍົມສຶກສາ, ທັດສະນະຄະຕິທີ່ດີຕໍ່ການສຶກສາຂອງປະຊາຊົນ ເວົ້າລວມ ແມ່ນມີທ່າອ່ຽງຫຼຸດລົງ, ລວມໄປຮອດຜົນການຮຽນຂອງນັກຮຽນທີ່ຕໍ່າກວ່າມາດຕະຖານຂອງຫຼັກສູດທີ່ໄດ້ກຳນົດໄວ້ ເຊິ່ງສາມາດສັງລວມຕີລາຄາສາເຫດຕົ້ນຕໍ ໄດ້ດັ່ງນີ້:

1) ຄວາມຫຍຸ້ງຍາກທາງດ້ານເສດຖະກິດ ເຮັດໃຫ້ນັກຮຽນປະລະການຮຽນ ແລະ ຄູສອນກໍປະລະໜ້າທີ່ ເພື່ອໄປຊອກວຽກເຮັດງານທຳທັງພາຍໃນ ແລະ ຕ່າງປະເທດ ເພື່ອຫາລ້ຽງຄອບຄົວ;
2) ຄວາມຫຍຸ້ງຍາກດ້ານພູມສັນຖານ: ມີບາງເຂດ ໂຮງຮຽນຢູ່ໄກບ້ານ ເສັ້ນທາງຄົມມະນາຄົມຫຍຸ້ງຍາກ ເຮັດໃຫ້ການໄປຮຽນມີຄວາມຫຍຸ້ງຍາກ, ໂຮງຮຽນມັດທະຍົມບໍ່ມີຫໍພັກພຽງພໍ, ການດຳລົງຖິ່ນຖານກະແຈກກະຈາຍ, ນັກຮຽນຍ້າຍຖິ່ນຖານຕາມພໍ່ແມ່ຜູ້ປົກຄອງເພື່ອເຮັດການຜະລິດ;
3) ຕົວເລກລັດຖະກອນຄູ ບໍ່ພຽງພໍກັບຄວາມຕ້ອງການໃນການຂະຫຍາຍການສະໜອງການສຶກສາ ເຮັດໃຫ້ມີຫຼາຍໂຮງຮຽນປະຖົມຫຼາຍແຫ່ງໄດ້ປິດລົງ ຫຼື ມີການສິດສອນຄວບຫຼາຍຫ້ອງ ອັນມີຜົນກະທົບຕໍ່ຜົນການຮຽນຂອງນັກຮຽນ;
4) ງົບປະມານທີ່ໄດ້ຮັບການຈັດສັນໃຫ້ຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ ເພື່ອມາຮັບໃຊ້ການປັບປຸງຄຸນນະພາບການສຶກສາ, ວິທະຍາສາດ ແລະ ກິລາ ມີຈຳກັດ; ເຮັດໃຫ້ພື້ນຖານໂຄງລ່າງ, ສິ່ງອຳນວຍຄວາມສະດວກ ແລະ ອຸປະກອນຮັບໃຊ້ການຮຽນ-ການສອນຕ່າງໆ ໃນທຸກຊັ້ນທຸກສາຍຍັງບໍ່ທັນພຽງພໍ;
5) ຂີດຄວາມສາມາດຂອງຄູສອນ ແລະ ຜູ້ອຳນວຍການໂຮງຮຽນ ຈຳນວນໜຶ່ງ ຍັງບໍ່ທັນເລິກເຊິ່ງເທົ່າທີ່ຄວນ, ການຝຶກອົບຮົມໃຫ້ແກ່ຄູ ຍັງບໍ່ທັນພຽງພໍ ໂດຍສະເພາະ ເພື່ອນຳເອົາໄປປະຕິບັດຕົວຈິງ ໃນການສິດສອນນັກຮຽນ;
6) ການມີສ່ວນຮ່ວມຂອງສັງຄົມ, ຊຸມຊົນ, ພໍ່ແມ່ຜູ້ປົກຄອງ, ລວມທັງຜູ້ປະກອບການ ແລະ ຂະແໜງການທີ່ກ່ຽວຂ້ອງຍັງບໍ່ທັນເຂັ້ມແຂງ, ກວ້າງຂວາງ;
7) ແຜນການກໍ່ສ້າງຊັບພະຍາກອນມະນຸດ ແລະ ແຜນຄວາມຕ້ອງການນຳໃຊ້ຂອງຕະຫຼາດແຮງງານ ບໍ່ທັນສອດຄ່ອງກັນ ເຮັດໃຫ້ນັກຮຽນທີ່ຮຽນຈົບອອກມາ ບໍ່ມີທັກສະທີ່ຕ້ອງການ ແລະ ຄຸນນະພາບ ສອດຄ່ອງຕາມຄວາມຕ້ອງການຕົວຈິງ.

### *2.2 ວຽກງານປັບປຸງການບໍລິການດ້ານສາທາລະນະສຸກ ແລະ ໂພຊະນາການຢ່າງທົ່ວເຖິງ ແລະ ມີຄຸນນະພາບສູງຂຶ້ນ.*

ໄດ້ເລັ່ງໃສ່ປັບປຸງຄຸນນະພາບການບໍລິການສາທາລະນະສຸກ ຕາມນະໂຍບາຍ 5 ດີ 1 ພໍໃຈ ໃນສະຖານທີ່ບໍລິການສາທາລະນະສຸກຂອບເຂດທົ່ວປະເທດ, ສຸມໃສ່ການກໍ່ສ້າງ-ປັບປຸງພື້ນຖານໂຄງລ່າງ, ປະກອບບຸກຄະລາກອນ

DRAFT

ແລະ ອຸປະກອນການແພດທີ່ທັນສະໄໝ ທັງຢູ່ ຂັ້ນສູນກາງ ແລະ ທ້ອງຖິ່ນ, ໄດ້ຍົກລະດັບການບໍລິການປິ່ນປົວສະເພາະທາງທີ່ທັນສະໄໝຂອງໂຮງໝໍຂັ້ນສູນກາງ ເປັນຕົ້ນ: ໂຮງໝໍມະໂຫສົດສາມາດຜ່າຕັດຫົວໃຈ, ໂຮງໝໍມິດຕະພາບ ສາມາດບໍລິການຜ່າຕັດສະໝອງ ແລະ ກະດູກ, ໂຮງໝໍແຂວງ 17 ແຫ່ງ ສາມາດໃຫ້ການບໍລິການຜ່າຕັດໃຫຍ່ໄດ້ ແລະ ໂຮງໝໍເມືອງ 35 ແຫ່ງ ສາມາດຜ່າຕັດຊ່ວຍເກີດລູກ ແລະ ແກ້ໄຂກໍລະນີສຸກເສີນຕ່າງໆໄດ້; ການຫັນປ່ຽນວິຖີຊີວິດຂອງປະຊາຊົນຕາມຫຼັກການອະນາໄມສາມສະອາດ ດ້ວຍການໂຄສະນາໃຫ້ສຸຂະສຶກສາຂໍ້ມູນດ້ານສາທາລະນະສຸກ, ການສ້າງບ້ານສາທາລະນະສຸກແບບຢ່າງ ແລະ ການປະຕິບັດວຽກງານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່, ວຽກງານໂພຊະນາການໃຫ້ແກ່ເດັກນ້ອຍໃນໂຮງຮຽນ ແລະ ເຂດຊົນນະບົດຕາມແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການ ທີ່ຕິດພັນກັບຫຼາຍຂະແໜງການ, ສົ່ງເສີມການຊົມໃຊ້ນໍ້າສະອາດ, ວິດຖ່າຍ ແລະ ການປະກາດຢຸດຕິການຖ່າຍຊະຊາຍ ເຊິ່ງມາຮອດປະຈຸບັນສາມາດ ປະກາດການຢຸດຕິຖ່າຍຊະຊາຍໄດ້ 10 ແຂວງ, 129 ເມືອງ, 8,511 ບ້ານ; ເອົາໃຈໃສ່ສ້າງຄວາມເຂັ້ມແຂງລະບົບເຝົ້າລະວັງພະຍາດ ທີ່ປະຈຸບັນໄດ້ມີເຄືອຂ່າຍໃນຂອບເຂດທົ່ວປະເທດ ເພື່ອກຽມຄວາມພ້ອມຮັບມືທຸກເຫດການສຸກເສີນສາທາລະນະສຸກ ແລະ ການລະບາດຂອງພະຍາດທີ່ອາດເກີດຂຶ້ນ ເຊິ່ງຜ່ານມາ ສາມາດຄວບຄຸມການລະບາດຂອງພະຍາດໂຄວິດ-19 ແລະ ປະຈຸບັນກໍາລັງສຸມໃສ່ການຄວບຄຸມໄຂ້ຍຸງລາຍ ເຊິ່ງມີການລະບາດໃນທຸກປີ. ຜົນສໍາເລັດທີ່ພົ້ນເດັ່ນອີກດ້ານໜຶ່ງແມ່ນ ອົງການອະນາໄມໂລກໄດ້ຮັບຮອງ ການປະກາດລົບລ້າງພະຍາດຂາຊ້າງໃນ ສປປ ລາວ ປີ 2023 ແລະ ປະຈຸບັນ, ພວມສຸມໃສ່ຈັດຕັ້ງປະຕິບັດແຜນການລົບລ້າງພະຍາດມາລາເຣຍຊະນິດ **Plasmodium Falciparum** ໃນປີ 2025 ແລະ ລົບລ້າງທຸກຊະນິດໃນປີ 2030, ການລົບລ້າງພະຍາດ ວັນນະໂລກ, ພະຍາດເອດ ແລະ ພະຍາດວໍ້ ໃນປີ 2030. ວຽກງານການຜະລິດຢາ ແລະ ຜະລິດຕະພັນການແພດ ໄດ້ການຕິດຕາມກວດກາຄຸນນະພາບອາຫານ, ຢາ ແລະ ຜະລິດຕະພັນການແພດ ທີ່ຜະລິດ, ນໍາເຂົ້າ, ຈໍລະຈອນຈໍາໜ່າຍ ຢູ່ທ້ອງຕະຫຼາດ ດ້ວຍຄວາມຮັບຜິດຊອບສູງ, ໄດ້ສົ່ງເສີມການຜະລິດພາຍໃນໃຫ້ເຂັ້ມແຂງ ເຮັດໃຫ້ການຜະລິດອາຫານ, ຢາ ແລະ ຜະລິດຕະພັນການແພດ ສາມາດບັນລຸຕາມຕາດຕະຖານການຜະລິດທີ່ດີ (**GMP**) ສາມາດຕອບສະໜອງຄວາມຕ້ອງການພາຍໃນ ແລະ ສົ່ງອອກຈໍານວນໜຶ່ງ, ໂຮງງານຜະລິດຢາ ຂອງລັດ ແລະ ເອກະສານຊົນ ສາມາດສະໜອງຢາຈໍາເປັນພື້ນຖານພາຍໃນປະເທດ ໄດ້ປະມານ **60%** ຂອງຄວາມຕ້ອງການ ຢູ່ບັນດາໂຮງໝໍຂອງລັດໃນທົ່ວປະເທດ ແລະ ສາມາດສົ່ງອອກຈໍານວນໜຶ່ງ. ພ້ອມນີ້, ກໍໄດ້ສົ່ງເສີມການນໍາໃຊ້ຢາພື້ນເມືອງ ສົມທົບກັບຢາຫຼວງ ໃນການຮັກສາສຸຂະພາບ, ສຸມໃສ່ພັດທະນາຊັບພະຍາກອນມະນຸດ ດ້ານການຢາພື້ນເມືອງ ໂດຍສ້າງຕັ້ງພາກວິຊາການຢາພື້ນເມືອງ ຂອງຄະນະເພສັຊສາດ, ມະຫາວິທະຍາໄລວິທະຍາສາດສຸຂະພາບ. ອີງຕາມ ມະຕິ ສະບັບເລກທີ 05/ກມສພ, ວ່າດ້ວຍການສ້າງເສດຖະກິດ ເອກະລາດ ແລະ ເປັນ ເຈົ້າຕົນເອງ, ຂະແໜງສາທາລະນະສຸກໄດ້ດໍາເນີນການທົດລອງຫັນໂຮງໝໍເປັນເຈົ້າຕົນເອງ ຢູ່ 3 ໂຮງໝໍສູນກາງ ຄື: ໂຮງໝໍມະໂຫສົດ, ມິດຕະພາບ ແລະ ເຊດຖາທິລາດ ແລະ ກໍາລັງກະກຽມການຫັນໂຮງໝໍໃຫ້ມີຄວາມທັນສະໄໝຂອງ 2 ໂຮງໝໍສູນກາງ ຄື: ໂຮງໝໍມະໂຫສົດ ແລະ ໂຮງໝໍມິດຕະພາບ. ເອົາໃຈໃສ່ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດກອງທຶນປະກັນສຸຂະພາບແຫ່ງຊາດ ໄດ້ເຮັດໃຫ້ປະຊາຊົນບັນດາເຜົ່າໄດ້ເຂົ້າເຖິງການບໍລິການປິ່ນປົວທີ່ຈໍາເປັນກວມ 94.**5%**, ໄດ້ອອກແຈ້ງການເລກທີ 824/ສທ, ອອກບັດປະກັນສຸຂະພາບສໍາລັບຄອບຄົວຜູ້ທຸກຍາກໃນຂອບເຂດທົ່ວປະເທດ, ພັດທະນາລະບົບທົດແທນເງິນທັນສະໄໝ (**E-Claim**). ນອກຈາກນີ້, ກໍ່ໄດ້ສຸມໃສ່ສ້າງ ແລະ ປັບປຸງບັນດາກົດໝາຍ-ນິຕິກໍາລຸ່ມກົດໝາຍຕ່າງໆເພື່ອການຄຸ້ມຄອງວຽກງານສາທາລະນະສຸກ ເຊິ່ງປະຈຸບັນ ມີກົດໝາຍທັງໝົດ 11 ສະບັບ. ໃນຈໍານວນ 11 ຕົວຊີ້ບອກມີ 6 ຕົວຊີ້ບອກມີຄວາມຄືບໜ້າດີ ແລະ ຄາດວ່າຈະບັນລຸຄາດ ໝາຍ ແລະ ມີ 5 ຕົວຊີ້ບອກມີຄວາມສ່ຽງຈະບໍ່ບັນລຸຄາດໝາຍ, ເຊິ່ງມີລາຍລະອຽດດັ່ງນີ້:

- **ມີ 6 ຕົວຊີ້ບອກມີຄວາມຄືບໜ້າດີ ແລະ ຄາດວ່າຈະບັນລຸຄາດໝາຍ ມີຄື:**

1) ອັດຕາການຕາຍຂອງເດັກນ້ອຍລຸ່ມ 1 ປີ: ຕົວເລກລາຍງານຈາກລະບົບຂໍ້ມູນດ້ານສຸຂະພາບ DHIS 2 ເຫັນວ່າຈໍານວນເດັກນ້ອຍລຸ່ມ 1 ປີ ທີ່ເສຍຊີວິດ ໃນປີ 2021 ມີ 2,027 ຄົນ, ເທົ່າກັບ 12.8/1,000 ຄົນຕໍ່ເດັກເກີດມີຊີວິດ; ໃນປີ 2022 ມີ 2,022 ຄົນ, ເທົ່າກັບ 13/1,000 ຄົນຕໍ່ເດັກເກີດມີຊີວິດ, ໃນປີ 2023 ແມ່ນ 11.8/1,000 ຄົນຕໍ່ເດັກເກີດມີຊີວິດ, ປີ 2024 ຍັງເຫຼືອ 9.07/1,000 ຄົນຕໍ່ເດັກເກີດມີຊີວິດ ແລະ ຄາດຄະເນປະຕິບັດໝົດປີ 2025 ຍັງເຫຼືອ 7.2/1,000 ຄົນຕໍ່ເດັກເກີດມີຊີວິດ ເຫັນວ່າຈະສາມາດບັນລຸຄາດໝາຍໄດ້ (ແຜນການ 5ປີ:20/1,000 ຄົນ).
2) ອັດຕາການຕາຍຂອງເດັກນ້ອຍລຸ່ມ 5 ປີ: ຕົວເລກລາຍງານຈາກລະບົບຂໍ້ມູນດ້ານສຸຂະພາບ DHIS 2 ມີຈໍານວນເດັກນ້ອຍລຸ່ມ 5 ປີ ທີ່ເສຍຊີວິດ ໃນປີ 2021 ມີ 2,253 ຄົນ, ເທົ່າກັບ 14.3/1,000 ຄົນຕໍ່ເດັກເກີດມີ

DRAFT

ຊີວິດ; ໃນປີ 2022 ມີ 2,312 ຄົນ, ເທົ່າກັບ 14.8/1,000 ຄົນຕໍ່ເດັກເກີດມີຊີວິດ, ໃນປີ 2023 ແມ່ນ 13.4/1,000 ຄົນ ຕໍ່ເດັກເກີດມີຊີວິດ, ໃນປີ 2024 ຍັງເຫຼືອ 10.46/1,000 ຄົນ ຕໍ່ເດັກເກີດມີຊີວິດ ແລະ ຄາດຄະເນປະຕິບັດໝົດປີ 2025 ຍັງເຫຼືອ 8.3/1,000 ຄົນຕໍ່ເດັກເກີດມີຊີວິດ ເຫັນວ່າມີທ່າອ່ຽງຈະສາມາດບັນລຸຄາດໝາຍໄດ້ (ແຜນການ 5 ປີ: 30/1,000 ຄົນ).

3) ອັດຕາສ່ວນການຕາຍຂອງແມ່: ຕົວເລກລາຍງານຈາກລະບົບຂໍ້ມູນ DHIS 2 ຈຳນວນແມ່ທີ່ເສຍຊີວິດ ໃນປີ 2021 ມີ 96 ຄົນ, ເທົ່າກັບ 60.8/100,000 ຄົນຕໍ່ເດັກເກີດມີຊີວິດ; ປີ 2022 ມີ 100 ຄົນ, ເທົ່າກັບ 64.1/100,000 ຄົນຕໍ່ເດັກເກີດມີຊີວິດ, ໃນປີ 2023 ແມ່ນ 42.2/100,000 ຄົນຕໍ່ເດັກເກີດມີຊີວິດ, ໃນປີ 2024 ຍັງເຫຼືອປະມານ 42.82/100,000 ຄົນຕໍ່ເດັກເກີດມີຊີວິດ ແລະ ຄາດຄະເນປະຕິບັດໝົດປີ 2025 ຍັງເຫຼືອ 35.73/1,000 ຄົນຕໍ່ເດັກເກີດມີຊີວິດ ຄາດວ່າຈະສາມາດບັນລຸຄາດໝາຍໄດ້ (ແຜນການ 5ປີ: 110/100,000 ຄົນ).

4) ອັດຕາການຊົມໃຊ້ວິດຖ່າຍຄອບຄົວ: ໃນປີ 2021 ສາມາດປະຕິບັດໄດ້ 81.05% ຂອງຄອບຄົວທັງໝົດ; ປີ 2022 ແມ່ນ 83.2%, ໃນປີ 2023 ແມ່ນ 84.6%, ປີ 2024 ແມ່ນ 97.8% ແລະ ຄາດຄະເນປະຕິບັດໝົດປີ 2025 ໄດ້ 85.76% ຂອງຄອບຄົວທັງໝົດ ເຫັນວ່າຈະສາມາດບັນລຸຄາດໝາຍໄດ້ (ແຜນການ 5ປີ: 85%).

5) ອັດຕາການປົກຄຸມປະກັນສຸຂະພາບ: ໃນປີ 2021 ສາມາດປະຕິບັດໄດ້ 94% ຂອງປະຊາກອນເປົ້າໝາຍ, ປີ 2024 ເພີ່ມເປັນ 94.5% ແລະ ຄາດຄະເນປະຕິບັດໝົດປີ 2025 ໄດ້ 94.67% ເຫັນວ່າຈະສາມາດບັນລຸຄາດໝາຍໄດ້ (ແຜນການ 5ປີ: 94.5%).

6) ອັດຕາການປະກາດ ແລະ ຮັບຮອງເປັນບ້ານສາທາລະນະສຸກແບບຢ່າງ: ໃນປີ 2021 ສາມາດປະຕິບັດໄດ້ 83% ຂອງຈຳນວນບ້ານທັງໝົດໃນທົ່ວປະເທດ; ປີ 2022 ປະຕິບັດໄດ້ 86.87%, ໃນປີ 2023 ປະຕິບັດໄດ້ 89.4%, ປີ 2024 ແມ່ນ 94.50% ແລະ ຄາດຄະເນປະຕິບັດໝົດປີ 2025 ໄດ້ 94% ຂອງຈຳນວນບ້ານທັງໝົດ, ເຫັນວ່າຈະສາມາດບັນລຸຄາດໝາຍໄດ້ (ແຜນການ 5ປີ: 85%).

- **ມີ 5 ຕົວຊີ້ບອກມີຄວາມສ່ຽງຈະບໍ່ບັນລຸຄາດໝາຍ ມີຄື:**

1) ອັດຕາການເກີດລູກມີແພດຊ່ວຍ: ໃນປີ 2021 ສາມາດປະຕິບັດໄດ້ 79.1% ຂອງປະຊາກອນເປົ້າໝາຍ; ປີ 2022 ແມ່ນ 80.6%, ໃນປີ 2023 ແມ່ນ 85.1% ຂອງປະຊາກອນເປົ້າໝາຍ, ໃນປີ 2024 ປະຕິບັດໄດ້ 82.34% ຂອງປະຊາກອນເປົ້າໝາຍ ແລະ ຄາດຄະເນປະຕິບັດໝົດປີ 2025 ໃຫ້ໄດ້ 78.3% ຂອງປະຊາກອນເປົ້າໝາຍ, ແຕ່ເຫັນວ່າຍັງມີຄວາມສ່ຽງທີ່ຈະບໍ່ສາມາດບັນລຸຄາດໝາຍໄດ້ (ແຜນການ 5ປີ: ໃຫ້ໄດ້ 85%).

2) ອັດຕາການໃຫ້ວັກຊີນກັນພະຍາດ: ໃນປີ 2021 ສາມາດປະຕິບັດໄດ້ 86.6% ຂອງປະຊາກອນເປົ້າໝາຍ; ປີ 2022 ແມ່ນ 92%, ໃນປີ 2023 ແມ່ນ 96.2%, ໃນປີ 2024 ແມ່ນ 89.42% ແລະ ຄາດຄະເນປະຕິບັດ ໝົດປີ 2025 ໄດ້ 86.20% ຂອງປະຊາກອນເປົ້າໝາຍ ແຕ່ເຫັນວ່າຍັງມີຄວາມສ່ຽງທີ່ຈະບໍ່ສາມາດບັນລຸຄາດໝາຍໄດ້ (ແຜນການ 5ປີ: 95%).

3) ອັດຕາສ່ວນເດັກນ້ອຍລຸ່ມ 5 ປີ ທີ່ມີນ້ຳໜັກຕ່ຳກວ່າມາດຕະຖານ: ອີງຕາມຜົນການສຳຫຼວດດັດຊະນີໝາຍສັງຄົມລາວ (LSIS) ໃນປີ 2023 ແມ່ນຍັງເຫຼືອ 24.3%, ປີ 2024 ຄາດວ່າຈະຍັງເຫຼືອ 24.3% ແລະ ຄາດຄະເນປະຕິບັດໝົດປີ 2025 ຍັງເຫຼືອ 22.6% ຂອງປະຊາກອນກຸ່ມເປົ້າໝາຍ, ແຕ່ເຫັນວ່າມີຄວາມສ່ຽງທີ່ຈະບໍ່ສາມາດບັນລຸຄາດໝາຍ ຈາກຜົນກະທົບຂອງສະພາບເສດຖະກິດ-ການເງິນ, ໄພພິບັດທີ່ອາດເກີດຂຶ້ນ ແລະ ອື່ນໆ (ແຜນການ 5ປີ: 15%).

4) ອັດຕາສ່ວນເດັກນ້ອຍລຸ່ມ 5 ປີ ທີ່ມີລວງສູງຕ່ຳກວ່າມາດຕະຖານ (ຂາດສານອາຫານຊຳເຮື້ອ): ອີງຕາມຜົນການສຳຫຼວດດັດຊະນີໝາຍສັງຄົມລາວ (LSIS) ໃນປີ 2023 ແມ່ນ 32.8%, ໃນປີ 2024 ຄາດວ່າຍັງເຫຼືອ 32.8% ແລະ ແລະ ຄາດຄະເນປະຕິບັດໝົດປີ 2025 ໃຫ້ຍັງເຫຼືອ 32.2% ຂອງປະຊາກອນກຸ່ມເປົ້າໝາຍ, ແຕ່ເຫັນວ່າມີຄວາມສ່ຽງທີ່ຈະບໍ່ສາມາດບັນລຸຄາດໝາຍ ຈາກຜົນກະທົບຂອງສະພາບເສດຖະກິດ-ການເງິນ, ໄພພິບັດທີ່ອາດເກີດຂຶ້ນ ແລະ ອື່ນໆ (ແຜນການ 5ປີ: 27%).

DRAFT

5) ອັດຕາການຊົມໃຊ້ນ້ຳສະອາດ: ໃນປີ 2021 ສາມາດປະຕິບັດໄດ້ 90.1% ຂອງປະຊາກອນທັງໝົດ; ປີ 2022 ແມ່ນ 92.1%, ໃນປີ 2023 ແມ່ນ 93.3%, ປີ 2024 ໄດ້ 94.41% ແລະ ຄາດຄະເນປະຕິບັດໝົດປີ 2025 ໄດ້ 94.3% ຂອງປະຊາກອນທັງໝົດ ເຫັນວ່າມີຄວາມສ່ຽງບໍ່ສາມາດບັນລຸຄາດໝາຍໄດ້ (ແຜນການ 5ປີ: 95%).

- **ສິ່ງທ້າທາຍ:** ການຈັດຕັ້ງປະຕິບັດວຽກງານຂອງຂະແໜງສາທາລະນະສຸກ ຍັງມີຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍດ້ານທີ່ຈະຕ້ອງໄດ້ ເອົາໃຈໃສ່ ຄືດັ່ງລຸ່ມນີ້:

1) ເຖິງແມ່ນວ່າຕາໜ່າງສາທາລະນະສຸກໄດ້ມີການປັບປຸງພື້ນຖານໂຄງລ່າງຈຳນວນໜຶ່ງທັງຢູ່ສູນກາງ ແລະ ທ້ອງຖິ່ນກໍ່ຕາມ ແຕ່ໂຮງໝໍເມືອງ ແລະ ສຸກສາລາຫຼາຍແຫ່ງແມ່ນເກົ່າແກ່ເປເພ ແລະ ບໍ່ໄດ້ມາດຕະຖານ, ຍັງຂາດ ອຸປະກອນ ການແພດທີ່ຈຳເປັນພື້ນຖານ ເຮັດໃຫ້ການບໍລິການສຸຂະພາບບໍ່ໄດ້ດີເທົ່າທີ່ຄວນ.
2) ພະນັກງານແພດໝໍຢູ່ບັນດາໂຮງໝໍຕ່າງໆ ໂດຍສະເພາະສຸກສາລາ ຍັງບໍ່ພຽງພໍທັງດ້ານປະລິມານ ແລະ ຄຸນນະພາບ, ຍັງມີຫາງສຽງຈົມວ່າຂອງສັງຄົມ ຍ້ອນລະບົບການບໍລິການບໍ່ສະດວກ, ເປັນທີ່ໄວ້ວາງໃຈ, ທ່າທີຮັບໃຊ້ຂອງແພດໝໍບໍ່ທັນດີເທົ່າທີ່ຄວນ.
3) ການຈັດຕັ້ງປະຕິບັດວຽກງານປະກັນສຸຂະພາບ ຍັງບໍ່ໂລ່ງລ່ຽນເທົ່າທີ່ຄວນ, ງົບປະມານຍັງບໍ່ພຽງກັບຄວາມຕ້ອງການ (ມີໜີ້ຄ້າງຈ່າຍສະສົມຜ່ານມາ, ເງິນເບ້ຍປະກັນຍັງບໍ່ພຽງພໍ); ການຄຸ້ມຄອງງົບປະມານກອງທຶນຍັງບໍ່ທັນເປັນຮູບແບບກອງທຶນ, ການປະກອບເອກະສານເພື່ອໂອນເງິນໃຫ້ບັນດາໂຮງໝໍຍັງຊັກຊ້າ, ບໍ່ທັນກັບສະພາບການຕົວຈິງ, ຍັງບໍ່ບໍ່ສາມາດຂະຫຍາຍ ກປຊ (ການປົກຄຸມປະກັນສຸຂະພາບທົ່ວປວງຊົນ) ຢູ່ນະຄອນຫຼວງວຽງຈັນ ແລະ ຍັງບໍ່ສາມາດໂຮມ 02 ອົງການຈັດຕັ້ງ (ຫກປຊ ແລະ ອປຊ) ເຂົ້າເປັນອົງການຄຸ້ມຄອງດຽວກັນໄດ້ເທື່ອ.
4) ຜົນກະທົບຈາກອັດຕາເງິນເຟີ້ ເຮັດໃຫ້ສະຖານທີ່ບໍລິການສາທາລະນະສຸກ ໃນແຕ່ລະຂັ້ນ ບໍ່ມີງົບປະມານພຽງພໍໃນການຊຳລະສ້າງສາງ, ໃນການຈັດຊື້ຢາ ແລະ ອຸປະກອນການແພດ ແລະ ບໍ່ສາມາດຈັດຕັ້ງປະຕິບັດຕາມສັນຍາຈັດຊື້ກັບຜູ້ສະໜອງ ເຮັດໃຫ້ຫຼາຍໂຮງໝໍມີຄວາມສ່ຽງຕໍ່ຄຸນນະພາບຂອງການບໍລິການ.
5) ໄດ້ຮັບຜົນກະທົບ ແລະ ການລະບາດຂອງພະຍາດໂຄວິດ-19 ທີ່ແກ່ຍາວ ແລະ ການລະບາດຂອງບາງພະຍາດຢູ່ບາງທ້ອງຖິ່ນ, ໂຄງລ່າງພື້ນຖານສາທາລະນະສຸກຢູ່ຫຼາຍແຂວງ ແລະ ເມືອງ ໄດ້ຖືກຜົນກະທົບຈາກນ້ຳຖ້ວມ ສ້າງຄວາມຫຍຸ້ງຍາກໃນການປະຕິບັດຄາດໝາຍຂອງຂະແໜງສາທາລະນະສຸກ.
6) ການຄຸ້ມຄອງໂຮງໝໍ ແລະ ຫ້ອງກວດພະຍາດເອກະຊົນບໍ່ທັນໄດ້ດີເທົ່າທີ່ຄວນ, ມີປະກົດການຫຍໍ້ທໍ້ເກີດຂຶ້ນຫຼາຍຢ່າງ ໂດຍສະເພາະແມ່ນຈັນຍາບັນ ແລະ ລາຄາຄ່າບໍລິການ, ເລີ່ມມີປະກົດການດ້ານລົບໃນການຄຸ້ມຄອງພະນັກງານຜູ້ທີ່ມີຄວາມຮູ້, ຄວາມສຳນານງານດ້ານວິຊາການຈາກພາກລັດ ສູ່ໂຮງໝໍເອກະຊົນ.
7) ດ້ານໂພຊະນາການ, ສະຖິຕິໃນເດືອນກັນຍາ ປີ 2022 ເຫັນວ່າ 14% ຂອງຄົວເຮືອນແມ່ນຂາດແຄນສະບຽງອາຫານໃນລະດັບປານກາງ ຫຼື ຮ້າຍແຮງ, ສຳລັບຢູ່ໃນເຂດຊົນນະບົດແມ່ນຫຼາຍກວ່າ 17% ແລະ 20% ຂອງຄົວເຮືອນແມ່ນເພດຍິງທີ່ເປັນຫົວໜ້າຄົວເຮືອນ, ປະມານ 25% ຂອງຄົວເຮືອນແມ່ນບໍ່ສາມາດສະໜອງຄວາມຕ້ອງການດ້ານອາຫານ ແລະ ໂພຊະນາການ ເນື່ອງຈາກລາຍໄດ້ຫຼຸດລົງ, 15% ຂອງຄົວເຮືອນມີອາຫານພຽງພໍ, 12% ຂອງຄົວເຮືອນສາມາດບໍລິໂພກອາຫານຕາມເສັ້ນມາດຖານ ແລະ 3% ການບໍລິໂພກອາຫານທີ່ບໍ່ຄົບໂພຊະນາການ.

### *2.3 ວຽກງານພັດທະນາກຳລັງແຮງງານໃຫ້ມີສີມື, ຄວາມສຳນານງານ ແລະ ມີລະບຽບວິໄນສູງຂຶ້ນ ທັງມີຄວາມຫຼາກຫຼາຍວິຊາຊີບ, ມີວຽກເຮັດງານທຳທີ່ໝັ້ນຄົງ, ມີລາຍໄດ້ສູງຂຶ້ນ*

ໄດ້ເອົາໃຈໃສ່ສົ່ງເສີມພາກລັດ ແລະເອກະຊົນ ພັດທະນາສີມືແຮງງານໃຫ້ຜູ້ບໍ່ມີວິຊາຊີບ, ຜູ້ຕ້ອງການປ່ຽນອາຊີບ, ຜູ້ວ່າງງານ ແລະ ຜູ້ທີ່ຈະເຂົ້າສູ່ຕຳແໜ່ງງານໃໝ່ ໃນລະດັບຕ່າງໆຕາມມາດຕະຖານສີມືແຮງງານແຫ່ງຊາດ ຈຳນວນ 37 ສາຂາອາຊີບຢູ່ບັນດາສະຖາບັນ, ສູນພັດທະນາສີມືແຮງງານ ແລະ ຝຶກເຄື່ອນທີ່ຕາມສາຂາອາຊີບຕ່າງໆ; ຊຸກຍູ້ສົ່ງເສີມບັນດາຫົວໜ່ວຍແຮງງານພັດທະນາສີມືແຮງງານຕາມສາຂາອາຊີບຕ່າງໆ; ສ້າງ ແລະ ປັບປຸງຫຼັກສູດພັດທະນາສີມືແຮງ

ງານ ໄດ້ 20 ຫຼັກສູດ, ໃນນີ້: ສ້າງຫຼັກສູດໃໝ່ 5 ຫຼັກສູດ ແລະ ປັບປຸງຫຼັກສູດທີ່ມີແລ້ວໃຫ້ສອດຄ່ອງ ແລະ ສາມາດຕອບສະໜອງແຮງງານຕາມຕະຫຼາດແຮງງານ 15 ຫຼັກສູດ; ສຳເລັດປັບປຸງພັດທະນາສີມືແຮງງານຢູ່ນະຄອນຫລວງວຽງຈັນ ແລະ ກຳລັງປັບປຸງຍົກລະດັບສູນພັດທະນາສີມືແຮງງານແຂວງອຸດົມໄຊ ເປັນສູນພັດທະນາສີມືແຮງງານພາກເໜືອ. ພ້ອມນັ້ນ, ຍັງໄດ້ປັບປຸງ ແລະ ຂະຫຍາຍຕາໜ່າງຈຸດບໍລິການຈັດຫາງານຂັ້ນແຂວງ ໄດ້ 4 ແຂວງ ແລະ ຂັ້ນເມືອງ ໄດ້ 41 ເມືອງ ພາຍໃນ 6 ແຂວງ, ເທົ່າກັບ 113.88% ຂອງແຜນການ (ແຜນການ 5ປີ: 36 ເມືອງ) ຊຶ່ງມາຮອດປັດຈຸບັນ ມີຈຸດບໍລິການຈັດຫາງານຢູ່ທັງໝົດ 18 ແຂວງ ແລະ ຫ້ອງການ ຮສສ ເມືອງ ຈຳນວນ 41 ເມືອງ. ນອກຈາກນັ້ນ, ຍັງມີວິສາຫະກິດບໍລິການຈັດຫາງານທັງພາຍໃນ ແລະ ຕ່າງປະເທດ ຈຳນວນ 48 ບໍລິສັດ ທີ່ເຮັດໜ້າທີ່ບໍລິການຈັດຫາງານແບບຊຶ່ງໜ້າ ແລະ ອອນລາຍ ແລະ ໄດ້ປັບປຸງກົນໄກການບໍລິການຈັດຫາງານໄປສູ່ທັນສະໄໝເທື່ອລະກ້າວ ໂດຍໄດ້ອອກແຈ້ງການເຖິງບັນດາຫົວໜ່ວຍແຮງງານ, ຫົວໜ່ວຍການບໍລິການ, ໂຄງການລົງທຶນພາຍໃນ ແລະ ຕ່າງປະເທດ ແລະ ເຂດເສດຖະກິດພິເສດ ກ່ຽວກັບການຂຶ້ນທະບຽນແຮງງານລາວ ແລະ ແຮງງານຕ່າງປະເທດ; ພັດທະນາລະບົບໂປຣແກມ, ສະໜອງອຸປະກອນ ແລະ ສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນຢູ່ຕາມຈຸດບໍລິການຈັດຫາງານໃນຂັ້ນແຂວງ ແລະ ເມືອງ ໃຫ້ສາມາດນຳໃຊ້ການເຊື່ອມຕໍ່ (Link) ເຂົ້າສູ່ລະບົບໂປຣແກມທີ່ສາມາດເຊື່ອມເຂົ້າກັນໃນຂອບເຂດທົ່ວປະເທດເຊື່ອມຕໍ່ກັບລະບົບຖານຂໍ້ມູນ-ຂ່າວສານຕະຫຼາດແຮງງານ LMIS (Labour Market Information System) ເຊິ່ງເປັນລະບົບທີ່ເກັບກຳຄັງແຮງງານ ແລະ ຕຳແໜ່ງງານວ່າງ; ເປີດໃຫ້ມີການສະໝັກງານ, ສຳພາດ, ຄັດເລືອກ ແລະ ບັນຈຸໃສ່ຕຳແໜ່ງວ່າງທາງອອນລາຍ ຊຶ່ງລະບົບຂໍ້ມູນ-ຂ່າວສານຕະຫຼາດແຮງງານຍັງໄດ້ກາຍເປັນຈຸດເຊື່ອມຕໍ່ລະຫວ່າງຖານຂໍ້ມູນແຮງງານລາວ, ແຮງງານຕ່າງປະເທດ ແລະ ເງິນເດືອນພື້ນຖານຂອງແຮງງານເຂົ້າກັບລະບົບ TaxRis ຂອງກະຊວງການເງິນ, ຊຶ່ງເປັນພື້ນຖານໃນການວາງນະໂຍບາຍໃນການດຸ່ນດ່ຽງແຮງງານ ແຕ່ລະໄລຍະ. ພ້ອມນັ້ນ, ຍັງໄດ້ປະສານສົມທົບກັບຫົວໜ່ວຍແຮງງານ, ອົງການປົກຄອງທ້ອງຖິ່ນ ແລະ ຄູ່ຮ່ວມພັດທະນາ ຈັດງານຕະຫຼາດນັດແຮງງານ, ຊຶ່ງສາມາດເກັບກຳຂໍ້ມູນຄວາມຕ້ອງການແຮງງານ ໄດ້ 140,766 ຕຳແໜ່ງ.

ຜ່ານການຈັດຕັ້ງປະຕິບັດວຽກງານຈຸດສຸມຂອງຂະແໜງແຮງງານ ແລະ ສະຫວັດດີການສັງຄົມ ເຫັນວ່າບັນດາຄາດໝາຍທີ່ໄດ້ກຳນົດໄວ້ ແມ່ນມີຄວາມຄືບໜ້າດີສົມຄວນ, ຊຶ່ງມີລາຍລະອຽດດັ່ງນີ້:

1. ພັດທະນາສີມືແຮງງານ ແລະ ຝຶກເຄື່ອນທີ່ຕາມສາຂາອາຊີບຕ່າງໆ ໄດ້ທັງໝົດ 15,379 ຄົນ, ຍິງ 6,263 ຄົນ, ລື່ນແຜນການ 5 ປີ 2.53 % (ແຜນການ 5ປີ: 15,000 ຄົນ), ໃນນີ້: ຝຶກຕາມມາດຕະຖານສີມືແຮງງານແຫ່ງຊາດ ຢູ່ໃນສະຖານພັດທະນາສີມືແຮງງານ **11,729 ຄົນ, ຍິງ 4,535 ຄົນ**, ລື່ນແຜນການ 5 ປີ 17.29 % (ແຜນການ: 10,000 ຄົນ), ໃນນີ້: ຂະແໜງກະສິກຳ 994 ຄົນ, ຍິງ 457 ຄົນ, ອຸດສາຫະກຳ 7,776 ຄົນ, ຍິງ 2,389 ຄົນ ແລະ ບໍລິການ 2,959 ຄົນ, ຍິງ 1,689 ຄົນ; ແລະ ຝຶກເຄື່ອນທີ່ ຕາມສາຂາອາຊີບຕ່າງໆ 3,410 ຄົນ, ຍິງ 1,596 ຄົນ, ເທົ່າກັບ 68.20% ຂອງແຜນການ 5 ປີ (ແຜນການ: 5,000 ຄົນ),ໃນນີ້ ຂະແໜງກະສິກຳ 1,522 ຄົນ, ຍິງ 554 ຄົນ, ອຸດສາຫະກຳ 1,128 ຄົນ, ຍິງ 506 ຄົນ ແລະ ບໍລິການ 760 ຄົນ, ຍິງ 536 ຄົນ;

3. ຊຸກຍູ້ສິ່ງເສີມບັນດາຫົວໜ່ວຍແຮງງານພັດທະນາສີມືແຮງງານຕາມສາຂາອາຊີບຕ່າງໆ ໄດ້ທັງໝົດ 159,837 ຄົນ, ຍິງ 75,468 ຄົນ (ແຜນການ 5 ປີ: 25,000 ຄົນ), ໃນນີ້: ຂະແໜງກະສິກຳ 34,134 ຄົນ, ຍິງ 15,248 ຄົນ, ອຸດສາຫະກຳ 54,923 ຄົນ, ຍິງ 18,096 ຄົນ ແລະ ບໍລິການ 70,780 ຄົນ, ຍິງ 42,124 ຄົນ.
4. ເຮັດການທົດສອບມາດຕະຖານສີມືແຮງງານຕາມມາດຕະຖານສີມືແຮງງານແຫ່ງຊາດ ແລະ ສາຂາອາຊີບຕ່າງໆ ໄດ້ທັງໝົດ 4,568 ຄົນ, ຍິງ 1,744 ຄົນ, ລື່ນແຜນການ 23.46% (ແຜນການ5 ປີ: 3,700 ຄົນ), ໃນນີ້ ຂະແໜງກະສິກຳ 233 ຄົນ, ຍິງ 129 ຄົນ, ອຸດສາຫະກຳ 3,339 ຄົນ, ຍິງ 1,060 ຄົນ ແລະ ບໍລິການ 996 ຄົນ, ຍິງ 555 ຄົນ.
5. ພັດທະນາມາດຕະຖານສີມືແຮງງານຂອງຫົວໜ່ວຍແຮງງານ ເປັນມາດຕະຖານສີມືແຮງງານແຫ່ງຊາດ ໄດ້ຈຳນວນ 15 ສາຂາອາຊີບ, ລື່ນແຜນການ 50% (ແຜນການ 5ປີ: ໃຫ້ໄດ້ 10 ສາຂາອາຊີບ).

DRAFT

6. ສົ່ງເສີມການຈັດຫາວຽກເຮັດງານທຳເຂົ້າສູ່ຕະຫຼາດແຮງງານພາຍໃນ ແລະ ຕ່າງປະເທດ ໄດ້ທັງ 464,514 ຄົນ, ຍິງ 237,276 ຄົນ, ລື່ນແຜນການ 5 ປີ 18.43% (ແຜນການ 5 ປີ: 392,197 ຄົນ), ໃນນີ້: ໄດ້ຈັດຫາວຽກເຮັດງານທຳພາຍໃນ ໄດ້ 122,429 ຄົນ, ຍິງ 50, 592 ຄົນ, ເທົ່າກັບ 64.28% ຂອງຄວາມຕ້ອງການແຮງງານພາຍໃນ ທັງໝົດ (190,451 ຕຳແໜ່ງ), ໃນນີ້: ກະສິກຳ 14,237 ຄົນ, ຍິງ 5,917 ຄົນ; ອຸດສາຫະກຳ 70,834 ຄົນ, ຍິງ 29,720 ຄົນ ແລະ ບໍລິການ 37,358 ຄົນ, ຍິງ 14,955 ແລະ ຈັດສົ່ງແຮງງານໄປເຮັດວຽກຢູ່ຕ່າງປະເທດ ໄດ້ 342,085 ຄົນ, ຍິງ 186,684 ຄົນ, ໃນນີ້: ກະສິກຳ 49,065 ຄົນ, ຍິງ 21,358 ຄົນ, ອຸດສາຫະກຳ 99,646 ຄົນ, ຍິງ 51,837 ຄົນ ແລະ ບໍລິການ 193,374 ຄົນ , ຍິງ 113,489 ຄົນ.
7. ໂຄງປະກອບກຳລັງແຮງງານແມ່ນໄດ້ອີງໃສ່ຜົນສຳຫລວດກຳລັງແຮງງານ ປີ 2022 ຊີ້ໃຫ້ເຫັນວ່າ: ພົນລະເມືອງໃນເກນອອກແຮງງານທີ່ມີອາຍຸແຕ່ 15 ປີຂຶ້ນໄປ ມີປະມານ 5.3 ລ້ານຄົນ, ເປັນກຳລັງແຮງງານ ມີປະມານ 2.5 ລ້ານຄົນ, ເທົ່າກັບ 47.1% ຂອງພົນລະເມືອງໃນເກນອອກແຮງງານທີ່ມີອາຍຸ 15 ປີຂຶ້ນໄປ; ໃນນີ້: ຜູ້ມີວຽກເຮັດງານທຳ 2,47 ລ້ານຄົນ, ເທົ່າກັບ 97.6%. ໂຄງປະກອບກຳລັງແຮງງານທີ່ມີວຽກເຮັດງານທຳດັ່ງກ່າວ ໄດ້ແຍກຕາມໂຄງປະກອບເສດຖະກິດ ຄື: ຂະແໜງກະສິກຳ ກວມ 1,4 ລ້ານຄົນ, ເທົ່າກັບ 56.8%; ອຸດສາຫະກຳ ກວມ 252,4 ພັນຄົນ, ເທົ່າກັບ 10.2% ແລະ ບໍລິການ ກວມ 814,3 ພັນຄົນ, ເທົ່າກັບ 32.9% ແລະ ຜູ້ວ່າງງານປະມານ 61,2 ພັນຄົນ ເຮັດໃຫ້ອັດຕາວ່າງງານຢູ່ໃນລະດັບປະມານ 2.4% (ແຜນການ 5ປີ: 15% ໃນປີ 2025).
8. ໂຄສະນາເຜີຍແຜ່ ແລະ ກວດກາການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍແຮງງານໃນຫົວໜ່ວຍແຮງງານ ໄດ້ 9,551 ແຫ່ງ ເທົ່າກັບ 76.40% ຂອງແຜນການ (ແຜນການ 5ປີ: 12,500 ຄັ້ງ), ຊຶ່ງມີຜູ້ອອກແຮງງານທັງໝົດ 301,429 ຄົນ, ຍິງ 120,213 ຄົນ; ຊຸກຍູ້ຫົວໜ່ວຍແຮງງານໄດ້ມາດຕະຖານແຫ່ງຊາດແຫ່ງຊາດ 63 ແຫ່ງ, ເທົ່າກັບ 63% ຂອງແຜນການ (ແຜນການ 5 ປີ 100 ແຫ່ງ), ຫົວໜ່ວຍແຮງງານ ມີການນຳໃຊ້ກົດລະບຽບພາຍໃນ ໄດ້ 1,744 ແຫ່ງ, ລື່ນແຜນການ 5 ປີ 248.80% (ແຜນການ 5ປີ: 500 ແຫ່ງ); ຊຸກຍູ້ຫົວໜ່ວຍແຮງງານໃຫ້ມີສັນຍາແຮງງານ ໄດ້ 815 ແຫ່ງ, ລື່ນແຜນການ 63% ຂອງແຜນການ (ແຜນການ 5ປີ: 500 ແຫ່ງ); ຫົວໜ່ວຍແຮງງານມີໜ່ວຍງານປອດໄພ ແລະ ສຸຂະພາບແຮງງານ ໃນສະຖານທີ່ເຮັດວຽກ 99 ແຫ່ງ ເທົ່າກັບ 99% ຂອງແຜນການ 5 ປີ (ແຜນການ: 100 ແຫ່ງ).
9. ໃຫ້ຄຳປຶກສາດ້ານນິຕິກຳ ແລະ ລະບຽບການກ່ຽວກັບແຮງງານ ແກ່ຜູ້ອອກແຮງງານ ແລະ ໃຊ້ແຮງງານ 5,658 ຄັ້ງ ລື່ນແຜນການ 5 ປີ 13.16% (ແຜນການ: 5,000 ຄັ້ງ); ໄດ້ຮັບຄຳຮ້ອງໄກ່ເກ່ຍ ຂໍ້ຂັດແຍ່ງດ້ານແຮງງານທັງໝົດ 414 ກໍລະນີ, ໃນນີ້ ສາມາດໄກ່ເກຍສຳເລັດ 311ກໍລະນີ ເທົ່າກັບ 75.12% ຂອງຈຳນວນ ຂໍ້ຂັດແຍ່ງ, ກຳລັງພິຈາລະນາ 20ກໍລະນີ ແລະ ໄດ້ສົ່ງສານປະຊາຊົນ ສືບຕໍ່ພິຈາລະນາ 83 ກໍລະນີ, ຊຶ່ງສາມາດ ນຳເອົາຜົນປະໂຫຍດມາໃຫ້ຜູ້ອອກແຮງງານທັງໝົດ 5,240 ຄົນ,ຍິງ 1,196 ຄົນ ເປັນເງິນ 59,474.54 ລ້ານກີບ, 38,000 ບາດ ແລະ 14,859 ໂດລາສະຫະລັດ;
10. ສົມທົບກັບຄະນະກຳມະການແຮງງານແຫ່ງຊາດ ຄົ້ນຄວ້າ ປັບປຸງຄ່າຄອງຊີບຂອງຜູ້ອອກແຮງງານ ເຊິ່ງເຮັດໃຫ້ຜູ້ອອກແຮງງານ ໄດ້ຄ່າແຮງງານຂັ້ນຕໍ່າ 1,600,000 ກີບ ບວກກັບອຸດໜູນຄ່າຄອງຊີບ 900,000 ກີບ ລວມເປັນ 2,500,000 ກີບ ໃນປີ **2024** ໂດຍບໍ່ລວມ ຄ່າສະຫວັດດີການດ້ານອື່ນໆ; ປັບປຸງລະບົບຖານຂໍ້ມູນການຂຶ້ນທະບຽນແຮງງານຕ່າງປະເທດ ທີ່ເຂົ້າມາເຮັດວຽກຢູ່ ສປປ ລາວ ແລະ ເປີດນຳໃຊ້ ນັບແຕ່ ວັນທີ 01 ກໍລະກົດ - 30 ສິງຫາ 2024 ສາມາດຕິດຕາມ ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ ໃນຂອບເຂດທົ່ວປະເທດເຂົ້າງົບ ປະມານ ໄດ້ທັງໝົດ 14,252,500,000 ກີບ, ໃນນີ້: ຄ່າທຳນຽມ 13,750,875,000 ກີບ ແລະ ຄ່າບໍລິການ 698,400,000 ກີບ ໂດຍແຍກ ຂັ້ນກະຊວງ ມອບຄ່າທຳນຽມ 5,406,000,000 ກີບ, ຄ່າບໍລິການ 272,650,000 ກີບ ແລະ ບັນດາພະແນກ ຮສສ ແຂວງມອບຄ່າທຳນຽມ 8,344,875,000 ກີບ, ຄ່າບໍລິການ 425,750,0000 ກີບ.

DRAFT

- **ສິ່ງທ້າທາຍ:** (1) ) ແຫຼ່ງຂໍ້ມູນໂຄງປະກອບກຳລັງແຮງງານຕາມຂະແໜງການເສດຖະກິດ ແລະ ຂໍ້ມູນຂ່າວສານຕະຫຼາດແຮງງານ ຍັງບໍ່ມີຄວາມຊັດເຈນ; ການດັດສົມລະຫວ່າງການສະໜອງ ແລະ ຄວາມຕ້ອງການໃນການພັດທະນາສີມືແຮງງານ ເຂົ້າສູ່ຕະຫລາດແຮງງານພາຍໃນ ຍັງບໍ່ທັນກົມກຽວກັນ ແລະ ບໍ່ທັນມີການຮັບຮູ້ສີມືແຮງງານເຊິ່ງກັນ ແລະ ກັນ ລະຫວ່າງພາກສ່ວນພັດທະນາສີມືແຮງງານ ແລະ ຫົວໜ່ວຍແຮງງານ; ພື້ນຖານໂຄງລ່າງ, ເຄື່ອງຈັກ, ອຸປະກອນການພັດທະນາສີມືແຮງງານ ແລະ ມາດຕະຖານສີມືແຮງງານລະດັບຕ່າງໆ ຍັງມີຄວາມຈຳກັດ ແລະ ບໍ່ທັນຕອບສະໜອງກັບຄວາມຕ້ອງການຂອງຕະຫຼາດແຮງງານ. (2) ການສົ່ງເສີມການຈັດຫາງານ ແລະ ການເຂົ້າເຖິງການບໍລິການຈັດຫາງານ ໃນລະບົບຍັງບໍ່ທັນ ເຂັ້ມແຂງ; ແຮງງານເຮັດວຽກເພື່ອການຊົມໃຊ້ໃນຄົວເຮືອນທີ່ບໍ່ມີລາຍຮັບ ຫຼື ຜົນກຳໄລຍັງມີຫຼາຍ ແລະ ຜະລິດຕະພາບແຮງງານຍັງບໍ່ສູງ; (3).ຜູ້ຢູ່ໃນເກນອອກແຮງງານບໍ່ມີຄວາມສົນໃຈ ເຂົ້າຝຶກວິຊາຊີບ ຫຼື ພັດທະນາສີມືແຮງງານ ຢູ່ສະຖານພັດທະນາສີມືແຮງງານ, ແຕ່ ພັດຄວາມສົນໃຈໄປອອກແຮງງານ ຢູ່ຕ່າງປະເທດ ເພີ່ມຂຶ້ນ ແລະ ເປັນຂະບວນກ້ວາງຂວາງ; ສະພາບແວດລ້ອມ ລວມທັງສະຫວັດດີການ ອື່ນໆ ໃນສະຖານ ທີ່ເຮັດວຽກ ຂອງບາງຫົວໜ່ວຍແຮງງານພາຍໃນ ຈຳນວນໜຶ່ງ ຍັງບໍ່ທັນສ້າງແຮງຈູງໃຈ ຜູ້ອອກແຮງງານ ບວກກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ອັດຕາເງິນເຟີ້ ແລະ ຄ່າຄອງຊີບສູງ ເຮັດໃຫ້ຄ່າແຮງງານ ບໍ່ກຸ້ມກັບລາຍຈ່າຍໃນການດຳລົງຊີວິດປະຈຳວັນຂອງຜູ້ອອກແຮງງານ ຈຶ່ງເກີດມີການຫຼັ່ງໄຫຼຂອງແຮງງານໄປເຮັດວຽກ ຢູ່ປະເທດໃກ້ຄຽງ ແບບຖືກຕ້ອງ ແລະ ບໍ່ຖືກຕ້ອງ ອັນກໍ່ໃຫ້ເກີດແຮງງານບໍ່ເຂົ້າສູ່ຕຳແໜ່ງງານ ຢູ່ພາຍໃນ. (3). ເຖິງແມ່ນວ່າ ລັດຖະບານໄດ້ມີຄວາມພະຍາຍາມຫຼຸດຜ່ອນຄ່າຄອງຊີບທີ່ເພີ່ມຂຶ້ນ ສຳລັບກຸ່ມແຮງງານທີ່ມີຄວາມບອບບາງ ໂດຍການເພີ່ມເງິນເດືອນຂັ້ນຕໍ່າຂອງ ສປປ ລາວ ຈາກ 1.1 ກີບ ຂຶ້ນເປັນ 1.2 ລ້ານກີບ ໃນປີ 2022, ເປັນ 1.6 ລ້ານກີບ ໃນປີ 2023 ແລະ ເພີ່ມຄ່າຄອງຊີບ ລວມເປັນ 2.5 ລ້ານກີບ ໃນປີ 2024. ຢ່າງໃດກໍ່ຕາມ, ຖ້າສົມທຽບກັບຄ່າແຮງງານຂັ້ນຕໍ່າໃນປະເທດໃກ້ຄຽງ ແມ່ນຕໍ່າກວ່າເກືອບ 3 ເທົ່າຕົວ ແລະ ອັດຕາສ່ວນຄວາມແຕກຕ່າງ ທີ່ເພີ່ມຂຶ້ນໄວເນື່ອງຈາກເງິນກີບອ່ອນຄ່າ. ສະນັ້ນ , ຈຶ່ງເຮັດໃຫ້ແຮງງານເຄື່ອນຍ້າຍໄປເຮັດວຽກຢູ່ປະເທດໃກ້ຄຽງນັບມື້ນັບເພີ່ມຂຶ້ນ ໂດຍສະເພາະນັບແຕ່ການເປີດດ່ານຊາຍແດນປະເທດຄືນໃໝ່.

### *2.4 ວຽກງານສົ່ງເສີມການຄົ້ນຄ້ວາ ແລະ ນຳໃຊ້ຜົນການຄົ້ນຄ້ວາວິທະຍາສາດ, ເຕັກໂນໂລຊີ, ເຕັກນິກວິຊາການ, ນະວັດຕະກຳໃໝ່ ແລະ ພູມປັນຍາ ເຂົ້າໃນການຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ*

ໄດ້ສຸມໃສ່ການສົ່ງເສີມການຄົ້ນຄວ້າວິທະຍາສາດ ແລະ ນະວັດຕະກຳ ດ້ວຍການປັບປຸງຄຸນນະພາບຜົນການຄົ້ນຄວ້າວິທະຍາສາດ, ນະວັດຕະກຳ ແລະບໍລິການ ໃຫ້ມີປະສິດທິພາບ ແລະປະສິດທິຜົນຂຶ້ນກວ່າເກົ່າ, ອັນພົ້ນເດັ່ນ ໄດ້ຮັບເອົາຫົວຂໍ້ຄົ້ນຄ້ວາວິທະສາສາດ ໃນປີ 2023 ຈຳນວນ 194 ຫົວຂໍ້, ໃນປີ 2024 ຄາດວ່າຈະຮັບຮອງເອົາ 60 ຫົວຂໍ້ ແລະ ແຜນປີ 2025 ໃຫ້ໄດ້ 40 ຫົວຂໍ້, ອອກໃບຢັ້ງຢືນຄວາມປອດໄພຈາກການນຳໃຊ້ເຄື່ອງກຳເນີດລັງສີໃຫ້ແກ່ໂຮງໝໍທັງພາກລັດ ແລະ ເອກະຊົນ ຈຳນວນ 75 ລາຍການ ແລະ ອື່ນໆ.

ໃນ 5 ປີ ຜ່ານມາ ລັດຖະບານ ໄດ້ລົງທຶນໃສ່ການຄົ້ນຄ້ວາ ແລະ ພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ກວມເອົາ ......% ຂອງງົບປະມານການລົງທຶນໃນແຕ່ລະປີ.

## 3. ເປົ້າໝາຍທີສາມ: ຊີວິດການເປັນຢູ່ຂອງປະຊາຊົນທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນໄດ້ຮັບການຍົກລະດັບໃຫ້ດີຂຶ້ນເທື່ອລະກ້າວ

### *3.1 ວຽກງານພັດທະນາຊົນນະບົດ ແລະ ເຂດຫ່າງໄກສອກຫຼີກທີ່ຍັງຫຍຸ້ງຍາກ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ, ການປັບປຸງຄຸນຄ່າດ້ານວັດທະນະທຳ ແລະ ວຽກງານສື່ມວນຊົນໄດ້ຮັບການປັບປຸງດີຂຶ້ນ*

**1. ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ**

ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໄດ້ສຸມໃສ່ຈັດຕັ້ງປະຕິບັດ ຄຳສັ່ງຂອງກົມການເມືອງສູນກາງພັກ ເລກທີ 097/ກມສພ, ລົງວັນທີ 18 ກຸມພາ 2020 ວ່າດ້ວຍການເພີ່ມທະວີການນຳພາ-ຊີ້ນຳ ຕໍ່ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ໂດຍການລົງຊຸກຍູ້ ແລະ ຕິດຕາມການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຕິດພັນກັບວຽກງານສ້າງແຜນພັດທະນາຈຸດສຸມພັດທະນາ



DRAFT

ຊົນນະບົດໃໝ່ ໄລຍະ 2021-2025, ເຊິ່ງໃນທົ່ວປະເທດໄດ້ກຳນົດເອົາຈຸດສຸມພັດທະນາຊົນນະບົດໃໝ່ ເພື່ອສ້າງໃຫ້ເປັນຕົວແບບພັດທະນາ ມີທັງໝົດ 20 ຈຸດສຸມ ນອນໃນ 17 ແຂວງ, ນະຄອນຫຼວງວຽງຈັນ ກວມເອົາ 20 ເມືອງ 109 ບ້ານ ແລະ ຈຸດສຸມຈັດສັນພູມລຳເນົາ ແລະ ອາຊີບ ມີທັງໝົດ 25 ຈຸດ ນອນໃນ 17 ແຂວງ ກວມເອົາ 20 ເມືອງ 158 ບ້ານ ລວມທັງໝົດ 45 ຈຸດສຸມ.

ຜ່ານການຈັດຕັ້ງປະຕິບັດຕົວຈິງເຫັນວ່າ ບັນດາພື້ນຖານໂຄງລ່າງຊົນນະບົດ ຢູ່ແຕ່ລະຈຸດສຸມ ໄດ້ຮັບການປັບປຸງໄປພ້ອມກັບການສົ່ງເສີມການຜະລິດກະສິກຳ ຕາມທ່າແຮງຂອງແຕ່ລະທ້ອງຖິ່ນ ລວມທັງການສົ່ງເສີມການເຂົ້າຫາແຫຼ່ງທຶນ ເພື່ອເຮັດການຜະລິດ.

ໃນໄລຍະ 5 ປີຜ່ານມາ ການຈັດຕັ້ງປະຕິບັດບັນດາຕົວເລກຄາດໝາຍພົ້ນທຸກ ແລະ ຄາດໝາຍການພັດທະນາຊົນນະບົດແມ່ນມີຄວາມຄືບໜ້າດີພໍສົມຄວນ ຊຶ່ງໄດ້ເຮັດໃຫ້ປະຊາຊົນຢູ່ເຂດຊົນນະບົດ, ເຂດຫ່າງໄກສອກຫຼີກ ແລະ ເຂດພື້ນຖານການປະຕິວັດເກົ່າ ສືບຕໍ່ພັດທະນາທີ່ດີຂຶ້ນ, ລະດັບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໄດ້ຮັບການປັບປຸງຍົກລະດັບດີຂຶ້ນເທື່ອລະກ້າວ; ຜ່ານການເກັບກຳຂໍ້ມູນຕາມມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ ທີ່ກຳນົດໄວ້ໃນດຳລັດ ເລກທີ 348/ລບ, ສາມາດຈັດຕັ້ງປະຕິບັດບັນດາຄາດໝາຍຕົ້ນຕໍໄດ້ດັ່ງນີ້:

- ສ້າງຄອບຄົວພົ້ນທຸກໄດ້ 181,506 ຄອບຄົວ ເທົ່າກັບ 88.81% ຂອງແຜນການ (ແຜນການ 5ປີ: ໃຫ້ໄດ້ເພີ່ມ 204.360).
- ສ້າງບ້ານພົ້ນທຸກໄດ້ 1,937 ບ້ານ ເທົ່າກັບ 62.40% ຂອງແຜນການ; (ແຜນການ 5ປີ: ໃຫ້ໄດ້ 3,104 ບ້ານ).
- ສ້າງເມືອງພົ້ນທຸກໄດ້ 48 ເມືອງ ເທົ່າກັບ 69.57% ຂອງແຜນການ (ແຜນການ 5ປີ: ໃຫ້ໄດ້ 69 ເມືອງ).
- ສ້າງຄອບຄົວພັດທະນາໄດ້ 175,411 ຄອບຄົວ ເທົ່າກັບ 71.38% ຂອງແຜນການ (ແຜນການ 5ປີ: ໃຫ້ໄດ້ 245,754).
- ສ້າງບ້ານພັດທະນາໄດ້ 2,210 ບ້ານ ເທົ່າກັບ 50% ຂອງແຜນການ (ແຜນການ 5ປີ: ໃຫ້ໄດ້ 4,420 ບ້ານ).
- ສ້າງບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ ໄດ້ 25 ຈຸດ ເທົ່າກັບ 250% ຂອງແຜນການ (ແຜນການ 5ປີ: ໃຫ້ໄດ້ 10 ບ້ານ).
- ສ້າງເມືອງເຂັ້ມແຂງຮອບດ້ານ ໄດ້ 12 ເມືອງ ເທົ່າກັບ 71.38% ຂອງແຜນການ (ແຜນການ 5ປີ: ໃຫ້ໄດ້ 5 ເມືອງ).
- ຈັດສັນພູມລຳເນົາ ແລະ ອາຊີບໝັ້ນຄົງໃຫ້ປະຊາຊົນໄດ້ 4 ຈຸດສຸມ ເທົ່າກັບ 16% ຂອງແຜນການ (ແຜນການ 5 ປີ: ໃຫ້ໄດ້ 25 ຈຸດສຸມ).
- ສ້າງຈຸດສຸມພັດທະນາຊົນນະບົດໃໝ່ທີ່ເປັນຕົວແບບພັດທະນາໄດ້ໂດຍພື້ນຖານ 3 ຈຸດສຸມ ເທົ່າກັບ 15% ຂອງແຜນການ (ແຜນການ 5ປີ: ໃຫ້ໄດ້ 20 ຈຸດສຸມ).
- ສ້າງເມືອງເຂັ້ມແຂງຮອບດ້ານ ໄດ້ 1 ເມືອງ, ເທົ່າກັບ 20% ຂອງແຜນການ (ແຜນການ 5ປີ: ໃຫ້ໄດ້ 5 ເມືອງ).

- **ສິ່ງທ້າທາຍ:** ອັດຕາຄອບຄົວທຸກຍາກ, ບ້ານທຸກຍາກ ແລະ ເມືອງທຸກຍາກ ແມ່ນມີຄວາມສ່ຽງຈະບໍ່ບັນລຸຕາມຄາດໝາຍທີ່ວາງໄວ້; ການສົ່ງເສີມການຜະລິດ ແລະ ການພັດທະນາໂຄງລ່າງພື້ນຖານ ຍັງບໍ່ສາມາດອຳນວຍໃຫ້ແກ່ການຜະລິດ, ການໄປມາຫາສູ່ ກໍຄືການເຂົ້າເຖິງການບໍລິການຂອງລັດ.

**2. ວຽກງານຖະແຫຼງຂ່າວ ແລະ ວັດທະນະທຳ**

ວຽກງານຖະແຫຼງຂ່າວ ແລະ ວັດທະນະທຳ ໄດ້ຮັບການພັດທະນາພໍສົມຄວນ, ອັນພົ້ນເດັ່ນ ໄດ້ເຜີຍແຜ່ໂຄສະນາ ແນວທາງນະໂຍບາຍຂອງພັກ-ລັດ ຜ່ານສື່ຕ່າງໆ ໂດຍສະເພາະ ວາລະແຫ່ງຊາດ ວ່າດ້ວຍແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ. ໄດ້ສຳເລັດການຂະຫຍາຍວິທະຍຸກະຈາຍສຽງຂັ້ນເມືອງ ແລະ ປະກອບອຸປະກອນເຕັກນິກຄົບຊຸດ ຈຳນວນ 4 ແຫ່ງ ຄື: ເມືອງນາກາຍ ແລະ ເມືອງມາຫາໄຊ ແຂວງຄຳມ່ວນ; ເມືອງຕະໂອ້ຍ ແຂວງສາລະວັນ ແລະ ເມືອງຊ່ອນ ແຂວງຫົວພັນ ເທົ່າກັບ 11,11% ຂອງແຜນການ (ແຜນການ 5ປີ: 36 ຈຸດ); ຂະຫຍາຍລະບົບໂທລະໂຄ່ງຢູ່ຂັ້ນບ້ານ ໄດ້ 1,751 ຊຸດ/ບ້ານ, ເທົ່າກັບ 62,53% ຂອງແຜນການ (ແຜນການ 5ປີ: 2,800 ບ້ານ); ຂະຫຍາຍລະບົບເຕັກນິກໃຫ້ທັນສະໄໝ ຈາກລະບົບອານາລ໋ອກໄປສູ່ລະບົບດີຈິຕອນ ໄດ້ 1 ແຫ່ງ, ເທົ່າກັບ 4.5% ຂອງແຜນການ (ແຜນການ 5 ປີ: 22 ຈຸດ); ສ້າງຄອບຄົວວັດທະນະທຳ ໄດ້ 87,851 ຄອບຄົວ ເທົ່າກັບ 67% ຂອງແຜນການ (ແຜນການ 5 ປີ: 130,000 ຄອບຄົວ); ສ້າງບ້ານວັດທະນະທຳ 715 ບ້ານ ເທົ່າກັບ 95,3% ຂອງແຜນການ (ແຜນການ 5 ປີ: 750 ບ້ານ); ອັນພົ້ນເດັ່ນ ທັດຖະກຳ

DRAFT

ພູມປັນຍາການຕໍ່າລາຍນາກຂອງຊຸມຊົນເຊື້ອຊາດລາວ ໄດ້ຖືກຮັບຮອງເຂົ້າເປັນມໍລະດົກວັດທະນະທຳ ທີ່ບໍ່ເປັນວັດຖຸຂອງມວນມະນຸດ ຈາກ ອຸຍແນັສໂກ (UNESCO) ໃນປີ 2023 ແລະ ຟ້ອນລຳວົງລາວ ໃນປີ 2024 ແລະ ໃນປີ 2025 ອຸທິຍານແຫ່ງຊາດ ຫີນໜາມໜໍ່ ແຂວງ ຄຳມ່ວນ ໄດ້ຖືກຮັບຮອງເປັນມໍຣະດົກໂລກທາງທຳມະຊາດ ຮ່ວມຊາຍແດນກັບອຸທິຍານ ຟອງຫຍາແກບັງ, ສສ ຫວຽດນາມ; ສຳຫຼວດແຫຼ່ງບູຮານວິທະຍາ ໄດ້ 87 ແຫ່ງ, ເທົ່າກັບ 248% ຂອງແຜນການ (ແຜນການ 5 ປີ: ໃຫ້ໄດ້ 35 ແຫ່ງ) ແລະ ຂຸດຄົ້ນທາງບູຮານວິທະຍາ ໄດ້ 5 ແຫ່ງ, ເທົ່າກັບ 100% ຂອງແຜນການ (ແຜນການ 5 ປີ: ໃຫ້ໄດ້ 5 ແຫ່ງ); ຂຶ້ນທະບຽນບັນຊີວັດຖຸບູຮານ ແລະ ພຣະພຸດທະຮູບໃຫ້ທັນກັບການພົບເຫັນ ແລະ ລາຍງານໄດ້ 5 ແຫ່ງ, ເທົ່າກັບ 100 % ຂອງແຜນການ (ແຜນການ 5 ປີ: 5 ແຫ່ງ); ຂຶ້ນບັນຊີສະກຸນຊ່າງສິນໄດ້ 5 ແຫ່ງ, ເທົ່າກັບ 100% ຂອງແຜນການ (ແຜນການ 5ປີ: 5 ແຫ່ງ); ຂຶ້ນບັນຊີມໍລະດົກວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ຈາກລະດັບທ້ອງຖິ່ນໃຫ້ເປັນລະດັບຊາດ ໄດ້ 28 ແຫ່ງ, ເທົ່າກັບ 140% ຂອງແຜນການ (ແຜນການ 5ປີ: 20 ແຫ່ງ).

- ສິ່ງທ້າທາຍ: ການຍົກລະດັບຄວາມຮູ້ທາງດ້ານວິຊາການດ້ານສື່ມວນຊົນຍັງບໍ່ທົ່ວເຖິງ; ການກຳນົດແຜນການລົງຊຸກຍູ້, ຕິດຕາມກວດກາ, ປະເມີນຜົນ, ປັບປຸງ ແລະ ແກ້ໄຂດ້ວຍມາດຕະການຕ່າງໆ ເພື່ອຍົກຄຸນນະພາບ ວຽກງານຖະແຫຼງຂ່າວ-ສື່ມວນຊົນ ຍັງບໍ່ທັນເປັນລະບົບຕໍ່ເນື່ອງ; ການພັດທະນາໂຄງລ່າງພື້ນຖານ, ອຸປະກອນເຕັກນິກ ແລະ ພາຫະນະສື່ມວນຊົນຍັງບໍ່ສົມຄູ່ກັບຄວາມຮຽກຮ້ອງຕ້ອງການຂອງວຽກງານ; ການລົງທຶນຂອງພາກລັດ ແລະ ພາກເອກະຊົນ ທັງພາຍໃນ ແລະ ຕ່າງປະເທດໃນຂະແໜງສື່ມວນຊົນຍັງມີຈຳນວນໜ້ອຍ; ການປະດິດຄິດແຕ່ງບົດປະພັນວັນນະຄະດີ, ບົດເພງ-ຂັບລຳ, ບົດລະຄອນ-ຮູບເງົາ ແລະ ລາຍການສະແດງຕ່າງໆຈຳນວນໜຶ່ງຍັງບໍ່ທັນສອດຄ່ອງກັບແນວທາງນະໂຍບາຍ; ຮູບການ ແລະ ເນື້ອໃນຍັງບໍ່ມີຄວາມອຸດົມສົມບູນ, ບໍ່ມີຄວາມຫຼາກຫຼາຍ ແລະ ບໍ່ທັນຕອບສະ ໜອງກັບຄວາມຮຽກຮ້ອງຕ້ອງການຂອງສັງຄົມ ແລະ ການຕິດຕາມກວດກາ ແລະ ປະເມີນຜົນດ້ວຍມາດຕະການຕ່າງໆເພື່ອປັບປຸງ, ແກ້ໄຂ ແລະ ຍົກລະດັບວຽກງານວັດທະນະທຳ ຍັງເຮັດບໍ່ທັນໄດ້ດີ.

### *3.2 ວຽກງານປັບປຸງ ແລະ ສະໜອງໂຄງລ່າງພື້ນຖານການບໍລິການດ້ານສາທາລະນຸປະໂພກໃຫ້ປະຊາຊົນຢ່າງທົ່ວເຖິງ*

ເພື່ອຫຼຸດຜ່ອນຄວາມແຕກໂຕນລະຫວ່າງຕົວເມືອງ ແລະ ຊົນນະບົດ, ດ້ານລາຍໄດ້ຂອງປະຊາຊົນ, ດ້ານການເຂົ້າເຖິງໂຄງລ່າງພື້ນຖານ ແລະ ການບໍລິການຕ່າງໆທີ່ຈຳເປັນ, ລັດຖະບານ ໄດ້ສຸມໃສ່ພັດທະນາ ແລະ ປັບປຸງບັນດາພື້ນຖານໂຄງລ່າງໃນບ່ອນທີ່ຈຳເປັນ ແລະ ຍັງຂາດເຂີນ ເປັນຕົ້ນ: ເສັ້ນທາງຊົນນະບົດ, ການເຂົ້າເຖິງການຊົມໃຊ້ໄຟຟ້າສູ່ຊົນນະບົດເຂດຫ່າງໄກສອກຫຼີກດ້ວຍຫຼາຍຮູບແບບ, ສະໜອງລະບົບນ້ຳປະປາຊຸມຊົນ, ຂະຫຍາຍຕາຂ່າຍໂທລະຄົມມະນາຄົມ, ໂຮງຮຽນ ແລະ ໂຮງໝໍນ້ອຍ ແລະ ອື່ນໆ, ມາຮອດປັດຈຸບັນ ອັດຕາການຊົມໃຊ້ໄຟຟ້າຂອງຄົວເຮືອນປະຕິບັດໄດ້ 95.57% ຂອງຄົວເຮືອນທົ່ວປະເທດ (ແຜນການ 5ປີ: ໃຫ້ໄດ້ 98% ຂອງຄົວເຮືອນທົ່ວປະເທດ), ໄດ້ສະໜອງແສງສະຫວ່າງໄຟຟ້າໃຫ້ປະຊາຊົນ ດ້ວຍລະບົບໄຟຟ້າແສງຕາເວັນ ແລະ ໂຄງການເຂື່ອນໄຟຟ້ານ້ຳຕົກຂະໜາດນ້ອຍ ຢູ່ 3 ແຂວງ (ຜົ້ງສາລີ, ຫົວພັນ ແລະ ເຊກອງ); ມາຮອດປັດຈຸບັນໃນທົ່ວປະເທດມີບ້ານທີ່ໄດ້ຊົມໃຊ້ໄຟຟ້າ ຈຳນວນ 7,366 ບ້ານ ແລະ ບ້ານທີ່ຍັງບໍ່ໄດ້ຊົມໃຊ້ໄຟຟ້າ ຈຳນວນ 1,146 ບ້ານ. ການຂະຫຍາຍລະບົບນ້ຳປະປາ ສາມາດໃຫ້ບໍລິການກວມເອົາ 117 ຕົວເມືອງ 1,480 ບ້ານ, ກວມເອົາ 77.56% ທຽບໃສ່ປະຊາກອນໃນຕົວເມືອງ (ຄາດໝາຍໃນປີ 2025: ໃຫ້ໄດ້ 85%).

### *3.3 ວຽກງານສົ່ງເສີມໃຫ້ແມ່ຍິງ ແລະ ເດັກໄດ້ເຂົ້າເຖິງການພັດທະນາ, ມີຄວາມສະເໝີພາບຍິງ-ຊາຍ ແລະ ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດຢ່າງເຕັມສ່ວນຈາກການພັດທະນາເສດຖະກິດ-ສັງຄົມ*

1) **ການສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ**

- ການສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ ມີແຜນດຳເນີນງານແຫ່ງຊາດເພື່ອຄວາມສະເໝີພາບຍິງ-ຊາຍ 5 ປີ ຄັ້ງທີ IV (2021-2025) ແລະ ແຜນດຳເນີນງານແຫ່ງຊາດເພື່ອປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ 5 ປີ ຄັ້ງທີ II (2021-2025) ແລະ ແຜນພັດທະນາແມ່ຍິງແຫ່ງຊາດ 5 ປີ ຄັ້ງທີ VIII (2021-2025) ຈັດຕັ້ງການເຜີຍແຜ່ແຜນດຳເນີນງານແຫ່ງຊາດເພື່ອຄວາມສະເໝີພາບຍິງ-ຊາຍ 5 ປີ ຄັ້ງທີ IV (2021-2025) ແລະ ແຜນດຳເນີນງານແຫ່ງຊາດເພື່ອປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ 5 ປີ ຄັ້ງທີ II (2021-2025)

DRAFT

ໃຫ້ ຄກມດ ກະຊວງ, ອົງການ, ແຂວງ ແລະ ບັນດາຄູ່ຮ່ວມພັດທະນາທັງໝົດ 28 ຄັ້ງ ມີຜູ້ເຂົ້າຮ່ວມທັງໝົດ 2,258 ຄົນ, ຍິງ 1,478 ຄົນ ເທົ່າກັບ 65.45%, ຊາຍ 780 ຄົນ ເທົ່າກັບ 34.55%; ໃນນີ້ບັນດາຂະແໜງການຈຳນວນໜຶ່ງ ໄດ້ມີແຜນດຳເນີນງານຄວາມສະເໝີພາບຍິງ-ຊາຍ ແລະ ຄວາມຮຸນແຮງຕໍ່ແມ່ຍິງ ໃນຂັ້ນສູນກາງ ມີ 20 ຂະແໜງການ, ຂັ້ນແຂວງ 18 ແລະ ບາງກະຊວງ ອົງການ ໄດ້ເຊື່ອມເຂົ້າໃນແຜນການເຄື່ອນໄຫວ ຂອງຂະແໜງການຕົນ.

- ເພື່ອໃຫ້ບັນລຸແຜນດຳເນີນງານແຫ່ງຊາດດັ່ງກ່າວ ໄດ້ມີການສ້າງຄວາມເຂັ້ມແຂງໃນການເຊື່ອມບົດບາດຍິງ-ຊາຍ ເຂົ້າໃນບັນດາແຜນພັດທະນາ, ແຜນງານ, ໂຄງການ, ກິດຈະກຳ ລວມທັງການຈັດສັນງົບປະມານທີ່ເອົາໃຈໃສ່ບົດບາດຍິງ-ຊາຍ ໃຫ້ບັນດາກະຊວງ-ອົງການ ໄດ້ 20 ຄັ້ງ ມີ 17 ກະຊວງ, 2 ອົງການທຽບເທົ່າ ແລະ 9 ອົງການອ້ອມຂ້າງສູນກາງ ແລະ 17 ແຂວງ ເຂົ້າຮ່ວມທັງໝົດ 2,204 ເທື່ອຄົນ, ຍິງ 1,609 ເທື່ອຄົນ ແລະ ຊາຍ 595 ເທື່ອຄົນ; ພ້ອມນັ້ນ, ກໍໄດ້ມີການປັບປຸງສາລະບານ ບັນຊີ-ງົບປະມານ COA ເລີ່ມແຕ່ປີ 2025 ສາລະບານງົບປະມານຈະສ່ອງແສງໃຫ້ເຫັນວຽກງົບປະມານທີ່ເອົາໃຈໃສ່ບົດບາດຍິງ-ຊາຍ.

- ປະຕິບັດພັນທະຂອງລັດຖະບານ ສປປ ລາວ ໃນການຈັດຕັ້ງປະຕິບັດສົນທິສັນຍາສາກົນ ທີ່ຕິດພັນກັບສິດທິແມ່ຍິງ ແລະ ສິດທິເດັກ ດ້ວຍການຜັນຂະຫຍາຍບັນດາຂໍ້ສະເໜີແນະເຂົ້າໃນແຜນນະໂຍບາຍແຫ່ງຊາດ ແລະ ຂະແໜງການ ແລະ ສຳເລັດ ບົດລາຍງານແຫ່ງຊາດ ປະຈຳໄລຍະທີ 10 ກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງຢູ່ ສປປ ລາວ ແລະ ສຳເລັດຮ່າງບົດລາຍງານແຫ່ງຊາດ ປະຈຳໄລຍະທີ 7 ໃນການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍສິດທິເດັກ ແລະ ສອງອະນຸສັນຍາເພີ່ມເຕີມ ແລະ ຖະແຫຼງການ ແລະ ແຜນປະຕິບັດງານປັກກິ່ງ + 30.

- ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ພະນັກງານ-ລັດຖະກອນ ໄດ້ບັນຈຸເຂົ້າໃນຕຳແໜ່ງນຳພາ-ຄຸ້ມຄອງ ໂດຍຜ່ານແຜນກຳນົດພະນັກງານນຳພາ-ຄຸ້ມຄອງຮັບປະກັນໂຄງປະກອບເພດຍິງ, ປັດຈຸບັນການສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງຂັ້ນສູນກາງຄຸ້ມຄອງ ສຳເລັດ 36 ກະຊວງ-ອົງການ, 18 ແຂວງ-ນະຄອນຫຼວງ.

- ປູກຈິດສຳນຶກກ່ຽວກັບຄວາມສະເໝີພາບຍິງ-ຊາຍ ໃຫ້ບັນດານັກການເມືອງ, ສະມາຊິກສະພາ, ຜູ້ນຳຂອງແຕ່ ລະພາກສ່ວນ, ນັກກົດໝາຍ ແລະ ພະນັກງານ-ລັດຖະກອນ ເພື່ອສົ່ງເສີມຄວາມເຂົ້າໃຈກ່ຽວກັບຄວາມສຳຄັນໃນການເຊື່ອມ ວຽກງານການສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະ ການປ້ອງກັນ ແລະ ລົບລ້າງຄວາມຮຸນແຮງຕໍ່ແມ່ຍິງເຂົ້າ ໃນການສ້າງກົດໝາຍ, ມາດຕະການພິເສດຊົ່ວຄາວ, ແຜນງານ ແລະ ໂຄງການ ທີ່ຕິດພັນກັບສິດທິແມ່ຍິງ ແລະ ຄວາມສະເໝີພາບຍິງ-ຊາຍ ດ້ວຍການໂຄສະນາເຜີຍແຜ່ ຈັດສຳມະນາ ນິຕິກຳພາຍໃນ ແລະ ນິຕິກຳສາກົນ ທີ່ຕິດພັນກັບວຽກງານດັ່ງກ່າວ ທັງໝົດຈຳນວນຈຳນວນ 98 ຄັ້ງ, ມີຜູ້ເຂົ້າຮ່ວມທັງໝົດ 11,682 ເທື່ອຄົນ, ຍິງ 9,720 ເທື່ອຄົນ, ຊາຍ 1,962 ເທື່ອຄົນ.

- ສົ່ງເສີມແມ່ຍິງຊາວກະສິກອນ ໄດ້ຮັບການຝຶກອົບຮົມວິຊາຊີບ, ເຕັກນິກວິຊາການເປັນຕົ້ນ : ການຜະລິດກະສິກຳ, ປູກຝັງ, ລ້ຽງສັດ, ຫັດຖະກຳ, ການບໍລິການເງິນ, ດຳເນີນທຸລະກິດ ສົ່ງຜົນໃຫ້ຊາວກະສິກອນໄດ້ເຂົ້າເຖິງຊັບພະຍາກອນເສດຖະກິດ, ທີ່ດິນປູກຝັງ-ລ້ຽງສັດທັງໝົດ 23 ເມືອງ, 211 ບ້ານ, 15.550 ຄອບຄົວ ມີທັງໝົດ 311,100 ຄົນ, ຍິງ 166,100 ຄົນ ເທົ່າກັບ 53.66%, ຊາຍ 145,000 ຄົນ ເທົ່າກັບ 46.44%, ແມ່ຍິງທີ່ເປັນຫົວໜ້າຄອບຄົວ 1,405 ຄອບຄົວ ເທົ່າກັບ 0.45%. ສົ່ງເສີມໃຫ້ຊາວກະສິກອນດຳເນີນທຸລະກິດຂະໜາດນ້ອຍ ແລະຂະໜາດກາງ ເປັນຕົ້ນການປູກຝັງ, ລ້ຽງສັດ ແລະ ການຜະລິດກະສິກຳແບບປະສົມປະສານໃນ 121 ເມືອງ, 1,217 ບ້ານ, 3,082 ກຸ່ມ, 26,846 ຄອບຄົວ ມີສະມາຊິກທັງໝົດ 36,190 ຄົນ ເປັນຍິງ 18,256 ເທົ່າກັບ 51% ເປັນຊາຍ 17,934 ຄົນ ເທົ່າກັບ 49%. ພ້ອມທັງຄົ້ນຄວ້າສ້າງນະໂຍບາຍໃນການເຂົ້າເຖິງແຫຼ່ງທຶນ ແລະ ການດຳເນີນທຸລະກິດຂອງ ແມ່ຍິງ ເພື່ອປະກອບທຸລະກິດເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຜ່ານລະບົບທະນາຄານ ເພື່ອໃຫ້ເຂົາເຈົ້າດຳເນີນທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງໃນແຕ່ລະຂະແໜງການ ທັງໝົດ 46,108 ຄົນ ມູນຄ່າປ່ອຍກູ້ທັງໝົດ 28,178,002.07 ກີບ (ຂໍ້ມູນປີ 2022-6/2023).

- ສ້າງຄວາມເຂັ້ມແຂງໃຫ້ກົນໄກການໃຫ້ບໍລິການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ໂດຍມີການຮັບຮອງເອົາຫຼັກການ **"ບໍ່ມີປະຕູໃດທີ່ຜິດ ຫຼື ປະຕູທຳອິດເປັນປະຕູທີ່ຖືກຕ້ອງ"** ຜ່ານການສ້າງ ແລະ ປະຕິບັດ ມາດຕະຖານການດຳເນີນງານການຊ່ວຍເຫຼືອອັນຈຳເປັນໃຫ້ກັບແມ່ຍິງ ແລະ ເດັກຍິງທີ່ຖືກເຄາະຮ້າຍ

ຈາກຄວາມຮຸນແຮງຄື: ການຊ່ວຍເຫຼືອທາງດ້ານສຸຂະພາບ, ການຊ່ວຍເຫຼືອທາງດ້ານຂະບວນການຍຸຕິທຳ ແລະ ການປະສານງານ, ການຄຸ້ມຄອງການປະສານງານ ແລະ ການສົ່ງຕໍ່; ພ້ອມນັ້ນ ກໍໄດ້ມີການຝຶກອົບຮົມ ໃຫ້ກັບພະນັກງານທີ່ໃຫ້ບໍລິການຊ່ວຍເຫຼືອໃນວຽກງານດັ່ງກ່າວ ໃນຂັ້ນສູນກາງ, 6 ແຂວງ ແລະ 10 ເມືອງ ລວມທັງໝົດ 700 ເທື່ອຄົນ, ຍິງ 630 ເທື່ອຄົນ, ຊາຍ 70 ເທື່ອຄົນ ແລະ ແຕ່ງຕັ້ງຄະນະປະສານງານ ແລະ ສົ່ງຕໍ່ ໃນ 6 ແຂວງ ແລະ 6 ເມືອງ; ຂະຫຍາຍການສ້າງສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ໄດ້ 5 ສູນ ຄື: ແຂວງສະຫວັນນະເຂດ, ບໍ່ແກ້ວ, ອັດຕະປື, ຈຳປາສັກ ແລະ ບໍລິຄຳໄຊ; ປັບປຸງສະຖານທີ່ບໍລິການຊ່ວຍເຫຼືອຜູ້ຖືກເຄາະຮ້າຍໃຫ້ກັບໂຮງໝໍສູນກາງ 2 ແຫ່ງ ຄື: ໂຮງໝໍມະໂຫສົດ ແລະ ໂຮງໝໍແມ່ ແລະ ເດັກ ແລະ ສ້າງຈຸດບໍລິການປະຕູດຽວ (ການບໍລິການສຸຂະພາບ) ແຫ່ງທຳອິດຂອງລາວທີ່ໂຮງໝໍມະໂຫສົດ ແລະ ມີເບີສາຍດ່ວນ 1527 ໂດຍໄດ້ຂົນຂວາຍແຫຼ່ງທຶນຈາກສາກົນ. ຈາກການສ້າງມາດຕະຖານດຳເນີນງານ ແລະ ການແຕ່ງຕັ້ງຄະນະດັ່ງກ່າວ ເຮັດໃຫ້ການປະສານງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍມີຄວາມຄ່ອງຕົວ ແລະ ວ່ອງໄວ, ຜູ້ຖືກເຄາະຮ້າຍໄດ້ເຂົ້າເຖິງການຊ່ວຍເຫຼືອດ້ານຕ່າງໆໄດ້ຢ່າງທັນການ ແລະ ຖືກກັບຄວາມຕ້ອງການຂອງເຂົາເຈົ້າ. ສ້າງຂະບວນການເຄື່ອນໄຫວ 16 ວັນ (25 ພະຈິກ - 10 ທັນວາ) ເພື່ອຍຸຕິຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງໃນທຸກໆປີນັບແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນ; ພ້ອມນັ້ນ ກໍໄດ້ມີການຈັດພິມກົດໝາຍ, ສ້າງ ແລະ ພິມແຜ່ນພັບ ໂປດສເຕີ ກ່ຽວກັບບັນຫາ ແລະ ຜົນກະທົບໃນການໃຊ້ຄວາມຮຸນແຮງ ໂດຍສະເພາະການເຂົ້າເຖິງການຊ່ວຍເຫຼືອ ແລະ ສິດ ແລະ ຜົນປະໂຫຍດທີ່ຜູ້ຖືກເຄາະຮ້າຍຄວນໄດ້ຮັບ ແລະ ເຜີຍແຜ່ຂໍ້ມູນຂ່າວສານ ຜ່ານສື່ອອນລາຍຕ່າງໆ.

- ສ້າງ ແລະ ປັບປຸງຄູ່ມືຝຶກອົບຮົມວຽກງານການໃຫ້ຄຳປຶກສາ, ການປົກປ້ອງ ແລະ ຊ່ວຍເຫຼືອຜູ້ເຄາະຮ້າຍ, ການໂຄສະນາເຜີຍແຜ່ກົດໝາຍ ແລະ ສົນທິສັນຍາສາກົນທີ່ພົວພັນເຖິງສິດຜົນປະໂຫຍດອັນຊອບທຳຂອງແມ່ຍິງ ແລະ ເດັກນ້ອຍ ; ສ້າງຄູ່ມືການປົກປ້ອງ, ຊ່ວຍເຫຼືອ ແລະ ສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໃນ ສປປ ລາວ. ດຳເນີນການຝຶກອົບຮົມໃຫ້ອົງການປົກຄອງບ້ານ ແລະ ເພດຊາຍ ຈຳນວນ 27 ບ້ານ ໃນການ ການປ້ອງກັນຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງບົນພື້ນຖານຄຸນລັກສະນະທາງເພດຕໍ່ແມ່ຍິງ ໂດຍສະເພາະກົດໝາຍທີ່ກ່ຽວຂ້ອງ ແລະ ບັນຫາຂອງການໃຊ້ຄວາມຮຸນແຮງນັບຕັ້ງແຕ່ນິຍາມ, ການຊ່ວຍເຫຼືອ ແລະ ການລົງໂທດຕໍ່ຜູ້ກະທຳຜິດໃນແຂວງ ບໍ່ແກ້ວ, ຈຳປາສັກ, ອັດຕະປື ແລະ ບໍລິຄຳໄຊ

### 2) ການສົ່ງເສີມ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ

- ສຳເລັດການປັບປຸງ ກົດໝາຍ ວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ (ປີ 2023), ມີແຜນດຳເນີນງານແຫ່ງຊາດ ເດັກ 5 ປີ ຄັ້ງທີ II (2021-2025), ແຜນດຳເນີນງານແຫ່ງຊາດສຳລັບການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບປົກປ້ອງເດັກ (2021-2025) ແລະ ແຜນດຳເນີນງານແຫ່ງຊາດເພື່ອລຶບລ້າງການໃຊ້ແຮງງານເດັກ ແລະ ສົ່ງເສີມວຽກທີ່ມີຄຸນຄ່າສຳລັບໄວໜຸ່ມຂອງ ສປປ ລາວ

- ສົ່ງເສີມການພັດທະນາເດັກ ແລະ ໄວໜຸ່ມ ດ້ວຍການສ້າງ ແລະ ພັດທະນາຄູ່ມືແຫ່ງຊາດ ຈຳນວນ 5 ສະບັບ ຄື: ຄູ່ມື ແຫ່ງຊາດການມີສ່ວນຮ່ວມຂອງເດັກ ແລະ ໄວໜຸ່ມ ຂອງ ສປປ ລາວ; ຄູ່ມືພັດທະນາທັກສະຊີວິດ ສຳລັບເດັກ ແລະ ໄວໜຸ່ມ ໃນ ສປປ ລາວ; ຄູ່ມືຝຶກອົບຮົມກ່ຽວກັບການປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ເດັກ; ຄູ່ມືແຫ່ງຊາດເພື່ອປ້ອງກັນ ແລະ ແກ້ໄຂຄວາມຮຸນແຮງຕໍ່ເດັກໃນໂຮງຮຽນຊັ້ນມັດທະຍົມສຶກສາ ແລະ ຄູ່ມືແຫ່ງຊາດສຳລັບຄູຝຶກການກະກຽມຄວາມພ້ອມທາງດ້ານອາຊີບໃຫ້ເດັກ ແລະ ໄວໜຸ່ມໃນ ສປປ ລາວ ແລະ ໄດ້ເຊື່ອມໂຍງ 5 ຄູ່ມື ເຂົ້າໃນ 5 ສະຖາບັນ ຄື: ວິທະຍາຄານຕຳຫຼວດປະຊາຊົນ, ວິທະຍາຄານສັນຕິບານ, ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມວຽກງານໄອຍະການ, ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມສຳລັບຜູ້ພິພາກສາ ແລະ ສະຖາບັນຍຸຕິທຳແຫ່ງຊາດ.

- ສຸມໃສ່ເລັ່ງລັດລຶບລ້າງການແຕ່ງງານຂອງເດັກ ແລະ ຮັບປະກັນອະນາຄົດທີ່ສົດໃສກວ່າຂອງເດັກຍິງ ແລະ ແມ່ຍິງທຸກຄົນ ໂດຍການສ້າງຄວາມເຂັ້ມແຂງການປົກຄອງ, ການລົງທຶນໃນການສຶກສາ ແລະ ການສ້າງຄວາມເຂັ້ມແຂງ ແລະລະດົມຊຸມຊົນເພື່ອແກ້ໄຂບັນດາສິ່ງທ້າທາຍທີ່ເປັນມາດຕະຖານ ແລະ ການປະຕິບັດທີ່ເປັນອັນຕະລາຍໂດຍໄດ້ດຳເນີນການສຶກສາບົດສຶກສາຄົ້ນຄວ້າລະດັບຊາດ ກ່ຽວກັບ ການແຕ່ງດອງຂອງໄວໜຸ່ມ ແລະ ການຖືພາກ່ອນໄວອັນຄວນ ເພື່ອສ້າງເປັນນະໂຍບາຍ ແລະ ແຜນງານໃນການແກ້ໄຂບັນຫາດັ່ງກ່າວ;ປັບປຸງນະໂຍບາຍຂະຫຍາຍສຸຂະພາບຈະເລີນພັນ ປີ 2019 ແລະ ນຳເຂົ້າຫຼັກສູດການຮຽນ-ການສອນຂອງໂຮງຮຽນສ້າງແພດ, ການປັບປຸງການເຂົ້າເຖິງການບໍລິການສຸຂະພາບຈະເລີນພັນ ລວມທັງການຄຸມກຳເນີດ ແລະ ການສົ່ງເສີມວິຖີຊີວິດທີ່ປອດໄພ; ຝຶກອົບຮົມການຮຽນ-ການສອນ, ການໃຫ້ຄວາມຮູ້

ກ່ຽວກັບ ເພດສຶກສາ ແລະ ທັກສະຊີວິດໃຫ້ຄູໃນໂຮງຮຽນມັດທະຍົມ. ພ້ອມທັງໂຄສະນາເຜີຍແຜ່ໃຫ້ແກ່ນັກຮຽນ, ພໍ່ແມ່, ປະຊາຊົນ ແລະ ສັງຄົມຮັບຮູ້ກ່ຽວກັບ ກົດໝາຍວ່າດ້ວຍທະບຽນຄອບຄົວ ລວມທັງມາດຕະການລົງໂທດຕໍ່ຜູ້ລະເມີດ ທີ່ໄດ້ກຳນົດໄວ້ຕາມປະມວນກົດໝາຍອາຍາ ແລະ ສ້າງຄູ່ມືຮັກລູກໃຫ້ໃສ່ໃຈ, ດຳເນີນການຝຶກອົບຮົມທັກສະຊີວິດໃຫ້ກັບນັກຮຽນຢູ່ໃນໂຮງຮຽນ ແລະ ດຳເນີນການຝຶກອົບຮົມການກຽມຄວາມພ້ອມທາງດ້ານອາຊີບໃຫ້ກັບເດັກ ແລະ ໄວໜຸ່ມລາວ.

- ປົກປ້ອງ ແລະ ຊ່ວຍເຫຼືອເດັກທີ່ແຕ່ງດອງກ່ອນໄວ ເພື່ອໃຫ້ສາມາດຳລົງຊີວິດ ແລະ ສ້າງລາຍຮັບໃຫ້ເຂົາເຈົ້າ ໂດຍຈັດຝຶກອົບຮົມເຕັກນິກ ແລະ ວິທີການລ້ຽງສັດ ໃຫ້ແມ່ອາຍຸຍັງນ້ອຍ ແລະ ເດັກຍິງອອກໂຮງຮຽນກ່ອນໄວ, ອົບຮົມວິທີປຸງແຕ່ງອາຫານ ແລະ ອາຫານຫວານ; ສະໜອງທຶນເພື່ອຝຶກອົບຮົມຕັດຫຍິບ ໄລຍະສັ້ນ 03 ເດືອນ ພ້ອມທັງສະໜອງອຸປະກອນການຮຽນຄົບຊຸດ; ສະໜອງທຶນຂະໜາດນ້ອຍ ໃນການລ້ຽງສັດ, ປຸງແຕ່ງອາຫານ, ຂາຍເຄື່ອງຍ່ອຍ ແລະ ຕັດຫຍິບ; ຝຶກອົບຮົມການຄຸ້ມຄອງການເງິນຂັ້ນພື້ນຖານ ໃຫ້ຄູ່ຜົວ-ເມຍ ແມ່ອາຍຸຍັງນ້ອຍ ແລະ ເດັກຍິງອອກໂຮງຮຽນກ່ອນໄວ ໄດ້ທັງໝົດ 655 ຄົນ, ຍິງ 448 ຄົນ ແລະ ຊາຍ 207 ຄົນ.

- ໂຄສະນາເຜີຍແຜ່ ເຊື່ອມຊຶມ ແນວທາງນະໂຍບາຍຂອງພັກ, ມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ, ຄຳສັ່ງແນະນຳ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 05 ປີ ຄັ້ງທີ IX, 2 ວາລະແຫ່ງຊາດ, ມູນເຊື້ອປະຫວັດສຳຄັນຂອງພັກ, ຂອງຊາດ, ແນວຄິດໄກສອນພົມວິຫານຕໍ່ວຽກງານແມ່ຍິງ, ມູນເຊື້ອຂອງແມ່ຍິງລາວ ແລະ ນິຕິກຳຕ່າງໆ ທີ່ຕິດພັນກັບການພັດທະນາແມ່ຍິງ, ການປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງແມ່ຍິງ ແລະ ເດັກນ້ອຍ, ການສົ່ງເສີມຄວາມກ້າວໜ້າ, ການສົ່ງເສີມຄວາມສະເໝີພາບຍິງ-ຊາຍ, ຄຳຂວັນ ແລະ ຂໍ້ແຂ່ງຂັນ 3 ດີ ຂອງສະຫະພັນແມ່ຍິງລາວ, ຈັດງານໂຮມຊຸມນຸມ ວັນສ້າງຕັ້ງສະຫະພັນແມ່ຍິງລາວ 20 ກໍລະກົດ, ວັນແມ່ຍິງສາກົນ 8 ມີນາ ແລະ ວັນສຳຄັນອື່ນໆ ລວມ 62.596 ຄັ້ງ, ມີຜູ້ເຂົ້າຮ່ວມ 6,119,241 ເທື່ອຄົນ, ຍິງ 4,431,950 ເທື່ອຄົນ, ຊາຍ 1,687,291 ເທື່ອຄົນ. ກວມ 72,13% ຂອງແມ່ຍິງເກນອາຍຸ 15 ປີ ຂຶ້ນໄປ;

- ປັບປຸງສື່ ຂອງສະຫະພັນແມ່ຍິງລາວ ໃຫ້ເປັນກະບອກສຽງອັນແຫຼມຄົມ ມີ ຄຸນນະພາບ, ທັນສະໄໝ ແລະ ເຊື່ອມໂຍງກັບສາກົນ ເພື່ອສະໜອງຂໍ້ມູນຂ່າວສານໃຫ້ຜູ້ຊົມໃຊ້, ທັງເປັນການຕອບໂຕ້ຖ້ອຍທຳນອງທີ່ບິດເບືອນຂອງກຸ່ມຄົນບໍ່ດີ, ຊຸກຍູ້ສົ່ງເສີມໃຫ້ສະມາຊິກສະຫະພັນຍິງ, ແມ່ຍິງລາວບັນດາເຜົ່າ ເຂົ້າເຖິງຂໍ້ມູນຂ່າວສານ ທີ່ມີປະໂຫຍດຕໍ່ການພັດທະນາ-ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງແມ່ຍິງ-ເດັກ ແລະ ຄອບຄົວ. ໄດ້ຜະລິດ, ໂຄສະນາຜ່ານສື່ ຂອງສະຫະ ພັນແມ່ຍິງ ແລະ ສື່ອື່ນໆ ເຊັ່ນ: ໜັງສືພິມແມ່ຍິງລາວ, ວາລະສານສາວລາວ, ຜະລິດລາຍການວິທະຍຸ,ຮອບຮູ້ຄູ່ແມ່ຍິງ, ຜະລິດລາຍການໂທລະພາບແມ່ຍິງລາວ, ສ້າງຟີມມູນເຊື້ອ, ຟີມສາລະຄະດີ ແລະ ໂຄສະນາເຜີຍແຜ່ຜ່ານສື່ ເຟສບຸກກະບອກສຽງ, ເພສ (Page); ເວັບໄຊ, ເຊິ່ງມີຜູ້ເຂົ້າເຖິງຂໍ້ມູນຂ່າວສານຜ່ານສື່ ອອນລາຍ 6.584.689 ເທື່ອຄົນ;

- ສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດຕັ້ງໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ແລະ ພາກສ່ວນທີ່ກ່ຽວຂ້ອງ ທີ່ເຮັດໜ້າທີ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງແມ່ຍິງ-ເດັກ ຂັ້ນສູນກາງ ແລະ ທ້ອງຖິ່ນ ເປັນຕົ້ນ: ການໃຫ້ຄຳປຶກສາ, ການກຳນົດຕົວ, ການປົກປ້ອງ, ຊ່ວຍເຫຼືອ ແລະ ສົ່ງຕໍ່ຜູ້ຖືກເຄາະຮ້າຍ; ເຕັກນິກການເປັນຄູຝຶກ, ການໂຄສະນາເຜີຍແຜ່ກົດໝາຍ, ການຕ້ານການຄ້າມະນຸດ, ການປ້ອງກັນ ແລະ ຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, ຄວາມຮູ້ພື້ນຖານດ້ານຈິດຕະສັງຄົມ, ການແຕ່ງດອງກ່ອນໄວອັນຄວນ ຈຳນວນ 89 ຄັ້ງ ມີຜູ້ເຂົ້າຮ່ວມທັງໝົດ 3.457 ຄົນ, ຍິງ 2.340 ຄົນ, ຊາຍ 1.117 ຄົນ.

- ເຜີຍແຜ່ຄູ່ມືແຫ່ງຊາດກ່ຽວກັບການປ້ອງກັນ ແລະ ແກ້ໄຂຄວາມຮຸນແຮງຕໍ່ເດັກໃນໂຮງຮຽນມັດທະຍົມສຶກສາ ແລະ ແນະນຳການສ້າງຕັ້ງຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນໂຮງຮຽນ ໃນ 8 ແຂວງມີ: ນະຄອນຫຼວງວຽງຈັນ, ໄຊຍະບູລີ, ຫົວພັນ, ຊຽງຂວາງ, ເຊກອງ, ຄຳມ່ວນ, ຫຼວງພະບາງ ແລະ ຜົ້ງສາລີ.

- ຂະຫຍາຍຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກ ຂັ້ນເມືອງ ໄດ້ 23 ເມືອງ, ເທົ່າກັບ 65.71% ຂອງແຜນການ (ແຜນການ 5 ປີ: 35 ເມືອງ) ແລະ ຂັ້ນບ້ານ ໄດ້ 684 ບ້ານ, ລື່ນແຜນການ 36.80% (ແຜນການ 5ປີ: 500 ຄົນ) ; ພ້ອມທັງ, ຈັດຝຶກອົບຮົມວຽກປົກປ້ອງ ແລະ ຊ່ວຍເຫຼືອເດັກ ໃຫ້ 1,554 ຄົນ ; ສົມທົບທຶນໃນການເບິ່ງແຍງລ້ຽງດູເດັກນ້ອຍບ້ານເດັກເອັສໂອເອັສລາວ ຈຳນວນ 929 ຄົນ, ຍິງ 419 ຄົນ, ໃນມູນຄ່າ 1,630 ລ້ານກວ່າກີບ ; ໃຫ້ການ

DRAFT

ຊ່ວຍເຫຼືອເດັກນ້ອຍ ແລະ ແມ່ຍິງທີ່ຕ້ອງການປົກປ້ອງພິເສດ, ມີຄວາມສ່ຽງ ແລະ ຕົກເປັນເຫຍື່ອການຄ້າມະນຸດ ເດັກເລ່ລ່ອນດ້ອຍໂອກາດ ແລະ ຜູ້ໄດ້ຮັບຜົນກະທົບຈາກພະຍາດໂຄວິດ-19 ຈຳນວນ 10,918 ຄົນ, ຍິງ 4,014 ຄົນ, ເປັນເງິນ 6,516 ລ້ານກວ່າກີບ.

- ຂະຫຍາຍ ແລະ ປັບປຸງຕາໜ່າງໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ເພື່ອຮັບປະກັນການເຂົ້າເຖິງການປົກປ້ອງ ແລະ ຊ່ວຍເຫຼືອແມ່ຍິງ ແລະ ເດັກ ທີ່ຖືກເຄາະຮ້າຍຈາກຄວາມຮຸນແຮງໃນຮູບແບບຕ່າງໆ ສູນ ໄດ້ 8 ສູນຄື: ແຂວງ ສະຫວັນນະເຂດ, ຈຳປາສັກ, ບໍ່ແກ້ວ, ອັດຕະປື, ບໍລິຄຳໄຊ, ຊຽງຂວາງ ແລະ ຫຼວງນໍ້າທາ ແລະ ນະຄອນຫລວງ. ພ້ອມທັງສະໜອງອຸປະກອນໃຫ້ແກ່ສູນດັ່ງກ່າວ.

ຜ່ານການຈັດຕັ້ງປະຕິບັດວຽກງານຈຸດສຸມບູລິມະສິດໃນສົ່ງເສີມໃຫ້ແມ່ຍິງ ແລະ ເດັກ ໄດ້ເຂົ້າເຖິງການພັດທະນາ, ມີຄວາມສະເໝີພາບຍິງ-ຊາຍ ໄດ້ມີໝາກຜົນສຳເລັດຫຼາຍດ້ານດັ່ງນີ້:

- ຄ່າດັດສະນີຄວາມບໍ່ສະເໝີພາບຍິງ-ຊາຍ ໃນປີ 2023-2024 ເພີ່ມຂຶ້ນເປັນ 0,467 ຈາກ 0,459 ໃນປີ 2019-2020 (ເພີ່ມຂຶ້ນ 0.008, ຕາມແຜນການໃນປີ 2025 ໃຫ້ຫຼຸດລົງຮອດ 0.430 );

- ຄ່າດັດສະນີການພັດທະນາຄວາມສະເໝີພາບຍິງ-ຊາຍ ໃນປີ 2023-2024 ຫຼຸດລົງ ເປັນ 0,919 ຈາກ 0,927 ໃນປີ 2019-2020 (ຫຼຸດລົງ 0.008 ຕາມແຜນການຮອດປີ 2025 ໃຫ້ເພີ່ມຂຶ້ນເປັນ 0.984);

- ຄ່າດັດຊະນີການພັດທະນາແມ່ຍິງ ເພີ່ມຂຶ້ນຈາກ 0,589 ໃນປີ 2019 ເປັນ 0,593 ໃນປີ 2024 (ແຜນການ: ໃຫ້ເພີ່ມຂຶ້ນ 0,675 ໃນປີ 2025).

- ແມ່ຍິງຖືກເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ກວມເອົາ 28,35% ຂອງສະມາຊິກສະພາທັງໝົດ (ແຜນການ 5ປີ: ໃຫ້ກວມເອົາ 30%), ໃນນັ້ນ: ແມ່ຍິງທີ່ເປັນສະມາຊິກສະພາແຫ່ງຊາດ ກວມເອົາ 21.95% ແລະ ແມ່ຍິງທີ່ໄດ້ເປັນສະມາຊິກສະພາປະຊາຊົນຂັ້ນແຂວງ ກວມເອົາ 30.48%.

- ພະນັກງານເພດຍິງໄດ້ຮັບການບັນຈຸສັບຊ້ອນເຂົ້າໃນຕຳແໜ່ງນຳພາຄຸ້ມຄອງ: ຢູ່ຂັ້ນສູນກາງ : (ຕຳແໜ່ງລັດຖະ ມົນຕີ, ຮອງລັດຖະມົນຕີ ແລະ ທຽບເທົ່າ, ຫົວໜ້າກົມ ແລະ ຮອງກົມ) ຍິງ 159 ຄົນ (ຈາກທັງໝົດ 787 ຄົນ) ເທົ່າກັບ 20.20% (ຫຼຸດຄາດໝາຍ 8.8%) ; ຂັ້ນແຂວງ **:** (ເຈົ້າແຂວງ, ຮອງເຈົ້າແຂວງ, ຫົວໜ້າ ແລະ ຮອງຫົວໜ້າພະແນກການອ້ອມຂ້າງແຂວງ) ຍິງ 384 ຄົນ (ຈາກທັງໝົດ 2,153 ຄົນ) ເທົ່າກັບ 17.84% (ຫຼຸດຄາດ ໝາຍ 2.16%) ; ຂັ້ນເມືອງ : (ເຈົ້າເມືອງ ແລະ ຮອງເຈົ້າເມືອງ, ຫົວໜ້າ ແລະ ຮອງຫົວໜ້າຫ້ອງການອ້ອມຂ້າງເມືອງ) ຍິງ 1,920 ຄົນ (ຈາກທັງໝົດ 9,421 ຄົນ) ເທົ່າກັບ 20.38% (ລື່ນຄາດໝາຍ 0.38%); ຂັ້ນບ້ານ : (ນາຍບ້ານ ແລະ ຮອງນາຍບ້ານ), ຍິງ 3,907 ຄົນ (ຈາກທັງໝົດ 32,515 ຄົນ) (ຫຼຸດຄາດໝາຍ 5.98%).

- ພະນັກງານສະຫະພັນແມ່ຍິງ ໄດ້ຮັບການຍົກລະດັບຄວາມຮູ້ຄວາມສາມາດກ່ຽວກັບວຽກງານໃຫ້ຄຳປຶກສາແກ່ແມ່ຍິງ ແລະ ເດັກນ້ອຍ ທັງໝົດ 1,549 ຄົນ, ລື່ນແຜນການ 54.90% (ແຜນການ: 1,000 ຄົນ ຮອດປີ 2025).

- ໃຫ້ການຊ່ວຍເຫຼືອທາງດ້ານສັງຄົມ ເຊັ່ນ: ບໍລິການໃຫ້ຄຳປຶກສາ ດ້ານກົດໝາຍ, ດ້ານສຸຂະພາບ ແລະ ດ້ານຈິດໃຈ ໂດຍບໍ່ເສຍຄ່າ (ແບບເຊິ່ງໜ້າ ແລະ ໂທລະສັບສາຍດ່ວນ 1362 ຕະຫຼອດ 24 ຊົ່ວໂມງ) ແກ່ຜູ້ມີບັນຫາທີ່ມາຂໍຄຳປຶກສາ ແລະ ຜູ້ຖືກເຄາະຮ້າຍທີ່ພັກເຊົາຢູ່ສູນ ມີຈຳນວນທັງໝົດ 1,383 ຄົນ, ຍິງ 872 ຄົນ, ອາຍຸຕໍ່າກວ່າ 18 ປີ ມີ 33 ຄົນ (ຍິງ 32 ຄົນ), ລວມມີ 1,370 ເລື່ອງ, ຈຳນວນຄັ້ງໃຫ້ຄຳປຶກສາ 7,349 ຄັ້ງ ; ໃຫ້ການຊ່ວຍເຫຼືອທາງດ້ານການປິ່ນປົວສຸຂະພາບ ແລະ ຂະບວນການຍຸຕິທຳ ໄດ້ທັງໝົດ 166 ຄົນ; ເຂົ້າຮ່ວມຟັງຄຳຕັດສິນຄະດີເດັກຂອງສານປະຊາຊົນຂັ້ນແຂວງ ທີ່ພົວພັນເຖິງແມ່ຍິງ ແລະ ເດັກ ຈຳນວນ 68 ຄັ້ງ. (ຈາກຕົວຊີ້ບອກຂອງແຜນ 5 ປີ: ແມ່ຍິງທີ່ລອດຈາກຄວາມຮຸນແຮງສາມາດເຂົ້າເຖິງການບໍລິການດ້ານກົດໝາຍ, ສຸຂະພາບ,ສັງຄົມ ເພີ່ມຂຶ້ນຈາກ 2 % ເປັນ 20 % ແຕ່ບໍ່ສາມາດລາຍງານເປັນເປີເຊັນໄດ້ເນື່ອງຈາກວ່າ ທັນດຳເນີນການສຳຫຼວດ, ການສຳຫຼວດ ຄັ້ງທີ II ຄາດວ່າຈະເລີ່ມປີ 2026)

- ອັດຕາສ່ວນແມ່ຍິງທີ່ຖືກຄວາມຮຸນແຮງໃນຊ່ວງຊີວິດ ຫຼຸດຈາກ 15% ເປັນ 6% (ບໍ່ສາມາດລາຍງານໄດ້ເນື່ອງຈາກວ່າບໍ່ທັນດຳເນີນການສຳຫຼວດ, ການສຳຫຼວດ ຄັ້ງທີ II ຄາດວ່າຈະເລີ່ມປີ 2026)



DRAFT

- ຂະຫຍາຍສະມາຊິກສະຫະພັນແມ່ຍິງ ປະຈຸບັນມີສະມາຊິກເພີ່ມຂຶ້ນທັງໝົດ 18,46% ຂອງແມ່ຍິງໃນເກນອາຍຸ 15 ປີຂຶ້ນໄປ ແລະ ຂະຫຍາຍການຈັດຕັ້ງສະຫະພັນແມ່ຍິງໃນຂົງເຂດທຸລະກິດເອກະຊົນຂັ້ນສູນກາງ, ແຂວງ, ນະຄອນຫຼວງ, ຮາກຖານອ້ອມຂ້າງເມືອງ ແລະ ບ້ານ ເພີ່ມຂຶ້ນ 77,24%.

- ເປີເຊັນເດັກທີ່ຂາດເຂີນໃນຫຼາຍມິຕິ ໂດຍອີງໃສ່ນິຍາມແຫ່ງຊາດກ່ຽວກັບຄວາມຂາດເຂີນໃຫ້ເຫຼືອ 30% ໃນແຕ່ລະແຂວງ (ບໍ່ສາມາດລາຍງານໄດ້ເນື່ອງຈາກວ່າການສຳຫຼວດ LSISIII ຍັງບໍ່ທັນເຜີຍແຜ່ ແລະ ບໍ່ທັນໄດ້ວິເຄາະວິໄຈ MODA)

- ຫຼຸດຜ່ອນການໃຊ້ຄວາມຮຸນແຮງຕໍ່ເດັກ : ທາງດ້ານຮ່າງກາຍ : ເດັກຍິງ ຫຼຸດຈາກ 15% ມາເປັນ 10% ແລະ ເດັກຊາຍ ຫຼຸດຈາກ 16.9% ມາເປັນ 10%. ທາງດ້ານຈິດໃຈ : ເດັກຍິງ ຫຼຸດລົງຈາກ 24.2% ມາເປັນ 20% ແລະ ເດັກຊາຍຫຼຸດຈາກ 17.7% ມາເປັນ 12%. ທາງເພດ : ເດັກຍິງຫຼຸດລົງຈາກ 7.3% ມາເປັນ 4% ແລະ ເດັກຊາຍຫຼຸດລົງຈາກ 12% ມາເປັນ 8% (ບໍ່ສາມາດລາຍງານໄດ້ເນື່ອງຈາກວ່າບໍ່ທັນດຳເນີນການສຳຫຼວດ ຄັ້ງທີ II).

- **ສິ່ງທ້າທາຍ:**

– ຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ວິກິດການ 4F ໄດ້ສົ່ງຜົນກະທົບຕໍ່ແມ່ຍິງ ແລະ ເດັກຍິງ ໂດຍສະເພາະຄວາມຮຸນແຮງໃນຄອບຄົວ ແລະ ການຂູດຮີດ ແລະ ລ່ວງລະເມີດທາງເພດເພີ່ມຂຶ້ນ ; ໃນຊ່ວງໄລຍະຜ່ານມາ ເຂດອາຊີຕາເວັນອອກສ່ຽງໃຕ້ແມ່ນມີການເພີ່ມຂຶ້ນຂອງການຄ້າມະນຸດ ເປັນຕົ້ນ: ການຫຼອກຫຼວງທາງອິນເຕີເນັດ, ຊຶ່ງ ສປປ ລາວ ກໍໄດ້ຮັບຜົນກະທົບດ້ານການເພີ່ມຂຶ້ນຂອງການຄ້າມະນຸດໃນພາກພື້ນເຊັ່ນກັນ. ສະນັ້ນ, ມັນຮຽກຮ້ອງຄວນເພີ່ມມາດຕະການສະກັດກັ້ນ ແລະ ຕໍ່ຕ້ານການຄ້າມະນຸດຢ່າງຮອບດ້ານ.

– ລະບົບການຕິດຕາມ, ການເກັບກຳຂໍ້ມູນ ແລະ ການປະເມີນຜົນວິເຄາະວິໄຈຂໍ້ມູນ ຍັງບໍ່ທັນເຂັ້ມແຂງ, ບຸກຄະລາກອນທີ່ຮັບຜິດຊອບວຽກຄວາມສະເໝີພາບຍິງ-ຊາຍ ລວມທັງບຸກຄະລາກອນທີ່ເຮັດໜ້າທີ່ໃນການຕິດຕາມການເກັບກຳຂໍ້ມູນການລາຍງານ ຍັງບໍ່ທັນມີຄວາມເຂົ້າໃຈໃນການນຳໃຊ້ສະຖິຕິບົດບາດຍິງ-ຊາຍເຂົ້າໃນວຽກງານຂອງຕົນ, ຖານຂໍ້ມູນຂອງແຕ່ລະຂະແໜງການ ລວມທັງໃບເກັບກຳຂໍ້ມູນຍັງບໍ່ທັນນຳໃຊ້ສະຖິຕິບົດບາດຍິງ-ຊາຍ ຈຶ່ງເຮັດໃຫ້ການຕີລາຄາ ຫຼື ການລາຍງານໃນວຽກງານນີ້ ບໍ່ທັນໄດ້ຂໍ້ມູນຄົບຖ້ວນ ບໍ່ສາມາດລາຍງານຕໍ່ລັດຖະບານ ແລະ ສາກົນໄດ້ຕາມແຜນການ.

– ແຕ່ລະຂະແໜງການ ແລະ ທ້ອງຖິ່ນ ຍັງຈຳກັດໃນຄວາມເຂົ້າໃຈຕໍ່ກັບການສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະ ການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກໂດຍສະເພາະ ຍັງຈຳກັດໃນການສ້າງຄວາມເຂັ້ມແຂງ, ການປູກຈິດສຳນຶກ, ການບໍ່ໃຫ້ມີການຈຳແນກ, ການຮັບປະກັນຄວາມສະເໝີພາບຍິງ ແລະ ສິດ ແລະ ຜົນປະໂຫຍດຂອງເດັກ ລວມທັງການນຳໃຊ້ສະຖິຕິບົດບາດຍິງ-ຊາຍ ຈຶ່ງເຮັດໃຫ້ວຽກງານດັ່ງກ່າວຍັງບໍ່ບັນລຸຜົນເທົ່າທີ່ຄວນ ແລະ ເຮັດໃຫ້ປະຊາຊົນບັນດາເຜົ່າ ລວມທັງເດັກ ຍັງຈຳກັດໃນການຮັບຮູ້ ສິດ ແລະ ຜົນປະໂຫຍດຂອງຕົນເອງທີ່ຄວນຈະໄດ້ຮັບ.

– ບັນຫາການຈຳແນກ, ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ຍັງແຜ່ລາມ ແລະ ຂະຫຍາຍຕົວ ; ໃນນັ້ນ, ຜູ້ທີ່ຖືກຄວາມຮຸນແຮງຍັງບໍ່ກ້າຂໍຄວາມຊ່ວຍເຫຼືອ ຍ້ອນບາງກົດປະເພນີຍັງຄອບງຳຢູ່, ຜູ້ທີ່ໃຫ້ການຊ່ວຍເຫຼືອກໍຍັງບໍ່ທັນເຂົ້າໃຈເລິກເຊິ່ງ ໂດຍສະເພາະການຊ່ວຍເຫຼືອທີ່ອີງໃສ່ຜູ້ຖືກເຄາະຮ້າຍເປັນໃຈກາງ ແລະ ບົນນິຕິກຳກົດໝາຍທີ່ມີ ເຮັດໃຫ້ຜູ້ຖືກເຄາະຮ້າຍບໍ່ໄດ້ຮັບການຊ່ວຍເຫຼືອຢ່າງທັນການ ແລະ ແທດເໝາະກັບສະພາບ..

### *3.4 ວຽກງານສົ່ງເສີມ ແລະ ພັດທະນາຊັບພະຍາກອນໜຸ່ມໃຫ້ມີຄຸນນະພາບ ແລະ ມີວຽກເຮັດງານທຳຫຼາຍຂຶ້ນ*

- ໄດ້ສົ່ງເສີມໃຫ້ຫຼາຍພາກສ່ວນ ມີສ່ວນຮ່ວມໃນການພັດທະນາຄົນຮຸ່ນໜຸ່ມໃຫ້ມີຄວາມແຂງແຮງທາງດ້ານຮ່າງ ກາຍ, ຈິດໃຈ ແລະ ມັນສະໝອງ, ມີຄວາມຮູ້ ຄວາມສາມາດ, ມີວິຊາຊີບ ມີວຽກເຮັດງານທຳທີ່ດີ ແລະ ກາຍເປັນຜູ້ສືບທອດທີ່ດີໃນອານາຄົດ, ໄດ້ສຸມໃສ່ການຝຶກວິຊາຊີບ ແລະ ສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນໃນໄວອອກແຮງງານໃຫ້ຫຼາຍຂຶ້ນ ໂດຍສະເພາະໄວໜຸ່ມທີ່ຢູ່ເຂດຫ່າງໄກສອກຫຼີກ, ຜູ້ທຸກຍາກ ແລະ ດ້ອຍໂອກາດ ໃຫ້ສາມາດພັດທະນາຊີວິດການເປັນຢູ່ໃຫ້ດີຂຶ້ນ. ພ້ອມດຽວກັນນີ້, ວຽກງານທີ່ສຳຄັນຕົ້ນຕໍແມ່ນສຸມໃສ່ການສົ່ງເສີມ ແລະ ຍົກສູງວຽກງານຊາວ ໜຸ່ມດ້ານການໃຫ້ຄຳປຶກສາແກ່ຊາວໜຸ່ມ-ເຍົາວະຊົນຜູ້ທີ່ມີຄວາມຜິດຫວັງ, ເສຍໃຈ, ຫາທາງອອກໃນຊີວິດ ແລະ

DRAFT

ບັນຫາອື່ນໆ ເພື່ອເຮັດໃຫ້ວຽກງານພັດທະນາຊັບພະຍາກອນໜຸ່ມໄດ້ຮັບໝາກຜົນຫຼາຍຍິ່ງຂຶ້ນ ໂດຍເນັ້ນໜັກໃສ່ການໂຄສະນາ, ເຊິ່ງມີຜົນສຳເລັດດັ່ງນີ້:

- ສຳເລັດການລົງຜັນຂະຫຍາຍຍຸດທະສາດການພັດທະນາຊາວໜຸ່ມ-ເຍົາວະຊົນລາວ ປີ 2021-2030 ໃນ 17 ແຂວງ ໂດຍການມີສ່ວນຮ່ວມຂອງໄວໜຸ່ມໃນການສັງລວມບັນຫາໃນ 5 ຂົງເຂດບູລິມະສິດ, ວິທີແກ້ໄຂ ແລະ ຂໍ້ສະເໜີເພື່ອເໜີໃນກອງປະຊຸມຄະນະຊີ້ນຳລະດັບແຂວງ ໃນຂັ້ນແຂວງ ຂອງຕົນ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 1,190 ຄົນ ແລະ ຕິດພັນກັບວຽກງານດັ່ງກ່າວກໍ່ຍັງໄດ້ນຳເອົາກົດໝາຍຊາວໜຸ່ມ ລົງໄປເຜີຍແຜ່ໃຫ້ຄະນະຊາວໜຸ່ມ 17 ແຂວງ ມີຜູ້ເຂົ້າຮ່ວມທັງໝົດ 1,700 ຄົນ.
- ກິດຈະກຳສົ່ງເສີມພອນສະຫວັນຂອງຊາວໜຸ່ມ-ເຍົາວະຊົນ: ໄດ້ຈັດງານຕັ້ງຄ້າຍຊາວໜຸ່ມ-ເຍົາວະຊົນ, ການແຂ່ງຂັນສ້າງຄິບວິດີໂອສັ້ນ, ການແຂ່ງຂັນລະຄອນເວທີ, ການແຂ່ງຂັນໂຕ້ວາທີ ໃນຫົວຂໍ້ ສິ່ງແວດລ້ອມ, ການຖືພາ ແລະ ການແຕ່ງດອງແຕ່ອາຍຸຍັງນ້ອຍ, ການແຂ່ງຂັນເວົ້າເພື່ອຊາດ, ການແຂ່ງຂັນສິ່ງປະດິດຈາກສິ່ງເສດເຫຼືອ ໄດ້ຈຳນວນ 3,516 ຄັ້ງ ມີຊາວໜຸ່ມ-ເຍົາວະຊົນເຂົ້າຮ່ວມແຂ່ງຂັນຈຳນວນ 171,789 ຄົນ, ຍິງ 85,230 ຄົນ.
- ກິດຈະກຳໂຄສະນາປູກຈິດສຳນຶກແກ່ຊາວໜຸ່ມໜຸ່ມເຍົາວະຊົນ ໃຫ້ຮູ້ຜົນຮ້າຍ, ພະຍາດຕິດຕໍ່ທາງເພດສຳພັນ, ການປ້ອງກັນພະຍາດໂລກເອດ, ການໃຊ້ຄວາມຮຸນແຮງບົນພື້ນຖານທາງເພດ, ຂອງການນຳໃຊ້ສານເສບຕິດ, ການຂັບຂີ່ປອດໄພ, ການແຕ່ງດອງຂອງເດັກ ແລະ ການຖືພາກ່ອນໄວອັນຄວນ, ສາຍດ່ວນໃຫ້ຄຳປຶກສາ MHPSS ຂອງ ສຊປລ 1554, ແອັບນ້ອຍຢາກຮູ້ ແລະ ແຄມເປນ ຂ້ອຍ, ຮ່າງກາຍຂອງຂ້ອຍ, ໂລກຂອງຂ້ອຍ ແລະອານາຄົດຂອງຂ້ອຍຢູ່ໂຮງຮຽນ ແລະ ຊຸມຊົນ ແລະ ການເຂົ້າຮ່ວມຂະບວນການໃນວັນສຳຄັນຂອງຊາດ, ຂອງພັກ ແລະ ຂອງຊາວໜຸ່ມ ໄດ້ທັງໝົດ 143,792 ຄັ້ງ ມີຜູ້ເຂົ້າຮ່ວມ 6,197,212 ເທື່ອຄົນ, ຍິງ 2,497,418 ເທື່ອຄົນ.
- ອຳນາດປົກຄອງທ້ອງຖິ່ນ, ຜູ້ໃຫ້ບໍລິການ, ຜູ້ຕາງໜ້າ ສຊປລ, ສູນກາງສະຫະພັນແມ່ຍິງລາວ ແລະ ຊາວ ໜຸ່ມອາສາສະໝັກອ້ອມຂ້າງບັນດາສະຖານີໃຫຍ່ຂອງເສັ້ນທາງ ລົດໄຟລາວ-ຈີນ ຈຳນວນ 100 ກວ່າຄົນ ທີ່ໄດ້ຈັດຂຶ້ນທີ່ແຂວງວຽງຈັນ ແລະ ແຂວງຫຼວງພະບາງ ມີຄວາມຮັບຮູ້ ແລະ ເຂົ້າໃຈ ໃນການປ້ອງກັນ ແລະ ຕ້ານໂລກເອດສ໌, ຄວາມຮຸນແຮງບົນພື້ນຖານທາງເພດ (Gender-Based Violence, GBV) ແລະ ແຄມເປນ ຂ້ອຍ, ຮ່າງກາຍຂອງຂ້ອຍ, ໂລກຂອງຂ້ອຍ ແລະ ອານາຄົດຂອງຂ້ອຍ.
- ສ້າງຕົວແບບປະຕິບັດການທົດລອງທາງດ້ານການສື່ສານປ່ຽນແປງດ້ານສັງຄົມ ແລະ ພຶດຕິກຳ (SBCC) ໂດຍນຳໃຊ້ວິດີໂອເມຈູ ທີ່ ແຂວງ ຫຼວງພະບາງ, ຫຼວງນ້ຳທາ, ບໍ່ແກ້ວ, ຜົ້ງສາລີ ແລະ ແຂວງ ຊຽງຂວາງ ມີຜູ້ເຂົ້າຮ່ວມ 180 ຄົນ ແລະ ສາມາດສ້າງໄດ້ລະຄອນສັ້ນຈຳນວນ 6 ເລື່ອງ ທີ່ສະທ້ອນເຖິງບັນຫາຊີວິດໄວໜຸ່ມ.
- ກອງປະຊຸມສ້າງຄວາມເຂົ້າໃຈໃນຂັ້ນແຂວງ ກ່ຽວກັບ ຄວາມສຳຄັນຂອງການໃຫ້ບໍລິການສາຍດ່ວນ ແລະ ການຂະຫຍາຍເຄືອຂ່າຍການໃຫ້ຄຳປຶກສາ ປະຈຸບັນ ມີຜູ້ໃຫ້ບໍລິການໃຫ້ຄຳປຶກສາບັນຫາໄວໜຸ່ມ ຈຳນວນ 58 ສາຍ ໃນ 10 ແຂວງ ແລະ ເບີສາຍດ່ວນ 1554 ເຊິ່ງມີຜູ້ໂທມາຂໍຄຳປຶກສານັບແຕ່ປີ 2020 ຫາ ເດືອນ ສິງຫາ 2024 ຈຳນວນ 12,991 ຄົນ ເປັນຍິງ 7,738 ຄົນ ທຽບໃສ່ຄາດໝາຍທີ່ວາງໄວ້ເຫັນວ່າບໍ່ສາມາດບັນລຸ.
- ການພັດທະນາຊັບພະຍາກອນໜຸ່ມໃຫ້ມີຄຸນນະພາບ ແລະ ມີວຽກເຮັດງານທຳຫຼາຍຂຶ້ນ ໂດຍການສຸມໃສ່ລິເລີ່ມໃຫ້ຊາວໜຸ່ມຮູ້ຈັກການດຳເນີນທຸລະກິດ ໂດຍເໜັ້ນໜັກ ນຳໃຊ້ເທັກໂນໂລຢີ ແລະ ນະວັດຕະນະກຳ ສ້າງ ທຸລະກິດສະຕາດອັບ (Strat up) ໂດຍໃຫ້ມີຕຳແໜ່ງງານ ແລະ ທຸລະກິດແບບໃໝ່ເກີດຂຶ້ນໃນສັງຄົມ ເຊິ່ງໄດ້ຈັດການແຂ່ງຂັນຜູ້ປະກອບການທຸລະກິດໂຄງການ ໄດ້ 3 ຄັ້ງ ມີ 20 ທີມເຂົ້າຮ່ວມແຂ່ງຂັນ ແລະ ເລືອກໄດ້ 6 ທີມທີ່ຊະນະ ແລະ ໄດ້ຮັບລາງວັນ, ຕິດພັນກັບວຽກງານດັ່ງກ່າວຍັງໄດ້ສ້າງຫ້ອງໄອທີໃຫ້ແກ່ ຄຊປລ ແຂວງ ຫຼວງພະບາງ, ຫຼວງນ້ຳທາ, ບໍ່ແກ້ວ, ຄຳມ່ວນ, ສະຫວັນນະເຂດ ແລະ ຈຳປາສັກ.
- ໄດ້ຈັດຝຶກອົບຮົມວິຊາຊີບດ້ານການປູກຝັ່ງ, ລ້ຽງສັດ, ຕັດຫຍິບ, ເສີມສວຍ, ຊ່າງຈອດເຊື່ອມ, ສ້ອມແປງລົດຈັກ, ຊ່າງໄຟ, ເຮັດສະບູ, ຢາສະຜົມ ໃຫ້ແກ່ຊາວໜຸ່ມຜູ້ທຸກຍາກດ້ອຍໂອກາດ ໄດ້ຈຳນວນ 1,786 ຄົນ ຍິງ 881 ຄົນ.
- ໄດ້ປ່ອຍທຶນກູ້ຢືມໂດຍບໍ່ມີດອກເບ້ຍໃຫ້ແກ່ຊາວໜຸ່ມທີ່ຮຽນຈົບວິຊາຊີບ ເພື່ອໃຫ້ເຂົາເຈົ້າສາມາດດຳເນີນທຸລະກິດເປັນຂອງຕົນເອງ ໄດ້ 28 ຄົນ ເປັນຈຳນວນເງິນ 290,000,000 ກີບ ແລະ ມອບເງິນຊ່ວຍເລືອລ້າໃຫ້ແກ່ຊາວໜຸ່

DRAFT

ມຜູ້ທີ່ທຸກຍາກ, ດ້ອຍໂອກາດ ພາຍຫຼັງທີ່ຮຽນຈົບວິຊາຊີບເພື່ອໄປລົງທຶນເຮັດທຸລະກິດເປັນຂອງຕົນເອງ ຈໍານວນ 228 ຄົນ ເປັນຈໍານວນເງິນ 1,119,800,215 ກີບ.

- **ສິ່ງທ້າທາຍ:**

- ການແຜ່ລະບາດຂອງພະຍາດໂຄວິດ-19 ສົ່ງຜົນໃຫ້ໄວໜຸ່ມເສຍໂອກາດດ້ານເສດຖະກິດ ແລະ ດ້ານວຽກເຮັດງານທໍາ, ເຖິງວ່າພວກເຮົາຈະມີຄວາມພະຍາຍາມໃນການສຸມໃສ່ການຝຶກວິຊາຊີບ ແລະ ສ້າງວຽກເຮັດງານທໍາໃຫ້ແກ່ປະຊາຊົນໃນໄວອອກແຮງງານໃຫ້ຫຼາຍຂຶ້ນ ໂດຍສະເພາະໄວໜຸ່ມທີ່ຢູ່ເຂດຫ່າງໄກສອກຫຼີກ ຜູ້ທຸກຍາກ ແລະ ດ້ອຍໂອກາດ ໃຫ້ສາມາດພັດທະນາຊີວິດການເປັນຢູ່ໃຫ້ດີຂຶ້ນ;
- ເຖິງວ່າພວກເຮົາໄດ້ມີມະຕິ, ຄໍາສັ່ງ, ກົດໝາຍ, ນິຕິກໍາຕ່າງໆ ຮັບໃຊ້ໃຫ້ແກ່ການເຄື່ອນໄຫວວຽກງານຊາວໜຸ່ມ-ເຍົາວະຊົນ ແຕ່ເຫັນວ່າການນໍາເອົາເນື້ອໃນໄປເຊື່ອມຊຶມຍັງບໍ່ທັນສອດຄ່ອງກັບກຸ່ມເປົ້າໝາຍ. ເນື່ອງຈາກຄວາມຮູ້, ຄວາມສາມາດ, ບຸກຄະລາກອນ, ງົບປະມານ, ເຄື່ອງມື, ອຸປະກອນຮັບໃຊ້ວຽກງານປູກຈິດສໍານຶກ ຍັງຈໍາກັດ;
- ແບບແຜນການນໍາພາ ແລະ ວິທີເຮັດວຽກຂອງ ຄຊປປລ ຈໍານວນໜຶ່ງ ຍັງບໍ່ທັນແຂງແຮງ, ຄະນະພັກ, ອໍານາດການປົກຄອງຂັ້ນຮາກຖານບ້ານ ສ່ວນຫຼາຍຍັງບໍ່ທັນເຂົ້າໃຈ ແລະ ໃຫ້ຄວາມສໍາຄັນ ຕໍ່ວຽກງານຊາວໜຸ່ມເທົ່າທີ່ຄວນ; ຄວາມເຂົ້າໃຈຂອງພາກສ່ວນກ່ຽວຂ້ອງໃນການຜັນຂະຫຍາຍຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ ແມ່ນຍັງຈໍາກັດ ເຖິງວ່າຈະຈັດກອງປະຊຸມ ແລະ ຜັນຂະຫຍາຍໃນຂອບເຂດທົ່ວປະເທດແລ້ວກໍ່ຕາມ ແຕ່ຫຼາຍພາກສ່ວນຍັງບໍ່ເຂົ້າໃຈໃນການຈັດຕັ້ງປະຕິບັດ ແລະ ການກໍານົດແຜນຈັດຕັ້ງປະຕິບັດໃນຂັ້ນຂອງຕົນ.

### *3.5 ວຽກງານສົ່ງເສີມປະຊາຊົນ ແລະ ຜູ້ອອກແຮງງານພາກວິສາຫະກິດ, ຜູ້ປະກອບອາຊີບພາກອິດສະຫຼະ ເຂົ້າເຖິງການບໍລິການປົກປ້ອງສັງຄົມທີ່ມີປະສິດທິຜົນດີຂຶ້ນ*

ໃນໄລຍະຜ່ານມາ ລັດຖະບານໄດ້ມີຄວາມພະຍາຍາມສຸມໃສ່ການພັດທະນາລະບົບປະກັນສັງຄົມ ໃຫ້ມີຄວາມເຂັ້ມແຂງ ແລະ ມີປະສິດທິພາບ ໂດຍສະເພາະການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ຮອດປີ 2025 ເພື່ອຂະຫຍາຍການປົກຄຸມປະກັນສັງຄົມ ສໍາລັບຜູ້ອອກແຮງງານໃຫ້ກວມເອົາກຸ່ມເປົ້າໝາຍຕ່າງໆຢ່າງກວ້າງຂວາງ ແລະ ສາມາດເຂົ້າເຖິງການບໍລິການປະກັນສັງຄົມດ້ວຍຫຼາຍຮູບການ. ຜ່ານການຈັດຕັ້ງປະຕິບັດບັນດາວຽກຈຸດສຸມ ແມ່ນເຮັດໃຫ້ສາມາດຂະຫຍາຍການບໍລິການປະກັນສັງຄົມໃຫ້ຄອບຄຸມຫຼາຍຂຶ້ນກວ່າເກົ່າ ແລະ ຫຼາຍຄາດໝາຍມີຄວາມຄືບໜ້າດີ ດັ່ງນີ້:

- ໂຄສະນາປະຊາສໍາພັນ ກົດໝາຍວ່າດ້ວຍປະກັນສັງຄົມ ໃຫ້ແກ່ອົງການຈັດຕັ້ງລັດ, ພາກວິສາຫະກິດ ແລະ ເປົ້າໝາຍແບບສະໝັກໃຈ 3,138 ຄັ້ງ ເທົ່າກັບ 78.45% ຂອງແຜນການ 5 ປີ (ແຜນການ: 4,000 ຄັ້ງ) ມີຜູ້ເຂົ້າຮ່ວມທັງໝົດ 120,302 ຄົນ, ຍິງ 60,664ຄົນ;
- ຂະຫຍາຍການຄຸ້ມຄອງຫົວໜ່ວຍວິສາຫະກິດທີ່ໄດ້ຮັບການຄຸ້ມຄອງຈາກປະກັນສັງຄົມເພີ່ມໃໝ່ ໄດ້ຈໍານວນ 2,448 ຫົວໜ່ວຍ, ລື່ນແຜນການ 19.84% (ແຜນການ 5 ປີ: ໃຫ້ໄດ້ 1,250 ຫົວໜ່ວຍ).
- ຂະຫຍາຍການຂຶ້ນທະບຽນຜູ້ປະກັນຕົນໃໝ່ ແລະ ຈ່າຍເງິນສົມທົບ ໄດ້ຈໍານວນ 215,024 ຄົນ, ຍິງ 103,133 ຄົນ, ລື່ນແຜນການ 36.52% (ແຜນການ 5ປີ: ໃຫ້ໄດ້ 157.500 ຄົນ), ໃນນີ້ : ພາກລັດ 9,535 ຄົນ, ຍິງ 4,343 ຄົນ, ລື່ນແຜນການ 27.13% (ແຜນການ 5ປີ: 7.500 ຄົນ); ພາກວິສາຫະກິດ 179,343 ຄົນ, ຍິງ 82,443 ຄົນ, ລື່ນແຜນການ 32.84% (ແຜນການ 5ປີ: 135.000 ຄົນ) ແລະ ຜູ້ສະໝັກໃຈ 26,146 ຄົນ, ຍິງ 16,527 ຄົນ ລື່ນແຜນການ 74.30 % (ແຜນການ 5ປີ: 15,000 ຄົນ).
- ຄຸ້ມຄອງລາຍຮັບ-ລາຍຈ່າຍການຄຸ້ມຄອງບໍລິຫານ ແລະ ອຸດໜູນປະກັນສັງຄົມປະເພດຕ່າງໆ ຕາມກົດໝາຍວ່າດ້ວຍປະກັນສັງຄົມ ຊຶ່ງສາມາດເກັບເງິນສົມທົບ ໄດ້ຈໍານວນ 8,200.48 ຕື້ກີບ, ເທົ່າກັບ 77.14 % ຂອງແຜນການ (ແຜນການ 5ປີ: 10,630 ຕື້ກີບ) ໃນນີ້: ພາກລັດ 5,345.91 ຕື້ກີບ, ເທົ່າກັບ 67.65% ຂອງແຜນການ (ແຜນການ 5 ປີ: 7,902 ຕື້ກີບ); ພາກວິສາຫະກິດ ແລະ ຜູ້ສະໝັກໃຈ 2,854.56 ຕື້ກີບ, ລື່ນແຜນການ 5 ປີ 4.63% (ແຜນການ 5 ປີ: 2,728 ຕື້ກີບ). ສໍາລັບດ້ານລາຍຈ່າຍ ກໍໄດ້ເອົາໃຈໃສ່ ປະຕິບັດ ລາຍຈ່າຍການອຸດໜູນ ແລະ ການບໍລິຫານໃຫ້ແກ່ຜູ້ປະກັນຕົນ ແລະ ຜູ້ເກີດສິດ ເປັນເງິນທັງໝົດ 6,705.86 ຕື້ກີບ, ເທົ່າກັບ 70.87% ຂອງແຜນການ (ແຜນການ 5ປີ:

9,461 ຕື້ກີບ) ໃນນີ້: ພາກລັດ  5,362,31 ຕື້ກີບ, ເທົ່າກັບ 67.95% ຂອງແຜນການ (ແຜນການ 5 ປີ: 7,891 ຕື້ກີບ); ພາກວິສາຫະກິດ ແລະ ຜູ້ສະໝັກໃຈ 1,232.54 ຕື້ກີບ, ເທົ່າກັບ 78.55%ຂອງແຜນການ (ແຜນການ 5 ປີ: 1,569 ຕື້ກີບ).

- ພິຈາລະນາ, ຄິດໄລ່ ແລະ ສືບຕໍ່ຈ່າຍອຸດໜູນປະກັນສັງຄົມປະເພດຕ່າງໆທັງໝົດ  698,216 ເທື່ອຄົນ ລື່ນແຜນ 45.08% ຂອງແຜນການ (ແຜນການ 5ປີ: 481,633 ຄົນ), ຍິງ 369,761 ຄົນ, ໃນນີ້ ພາກລັດ  486,944 ເທື່ອຄົນ ລື່ນແຜນການ 145.53% ຂອງແຜນການ (ແຜນການ 5ປີ: 198,321 ຄົນ) ຍິງ 222,045 ຄົນ, ພາກວິສາຫະກິດ ແລະ ຜູ້ສະໝັກໃຈ 211,272 ເທື່ອຄົນ ເທົ່າກັບ 74.57% ຂອງແຜນການ (ແຜນການ 5 ປີ: 283,312 ຄົນ) ຍິງ 136,023 ຄົນ.

ນອກຈາກນວຽກປົກກະຕິແລ້ວ, ໃນຊ່ວງການແຜ່ລະບາດຂອງເຊື້ອພະຍາດ ໂຄວິດ-19 ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ ຍັງໄດ້ຮັບທຶນຊ່ວຍເຫຼືອຈາກລັດຖະບານເຢຍລະມັນ ໂດຍຜ່ານອົງການແຮງງານສາກົນ ປະຕິບັດອຸດໜູນໄລຍະສັ້ນ ໃຫ້ແກ່ຜູ້ປະກັນຕົນໃນໂຮງງານຕັດຫຍິບທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງເຊື້ອພະຍາດ ດັ່ງກ່າວ ຢູ່ໃນ 47 ໂຮງງານເປົ້າໝາຍ ມີຜູ້ອອກແຮງງານຈຳນວນ 20,698 ຄົນ ເປັນເງິນ 18.62 ຕື້ກວ່າກີບ. ສຳລັບກອງທຶນປະກັນສັງຄົມ ກໍໄດ້ປະຕິບັດອຸດໜູນວ່າງງານຍ້ອນໂຄວິດ-19 ໄດ້ 72,641 ເທື່ອຄົນ, ຍິງ 49,732 ເທື່ອຄົນ ເປັນເງິນ 67.92 ຕື້ກວ່າກີບ ມີຈຳນວນ 1,107 ບໍລິສັດ (ປະຕິບັດແຕ່ເດືອນ ມີນາ 2020 ຮອດ ເດືອນ ກໍລະກົດ ປີ 2022) ແລະ ອຸດໜູນປ່ອຍການຍ້ອນໂຄວິດ-19 ຈຳນວນ 22,628 ເທື່ອຄົນ, ຍິງ 11,779 ເທື່ອຄົນ ເປັນເງິນ 20.89 ຕື້ກວ່າກີບ (ການໃຫ້ນະໂຍບາຍເລີ່ມແຕ່ເດືອນ ພະຈິກ 2021 ຮອດເດືອນ ທັນວາ 2022).

- ເອົາໃຈໃສ່ຄົ້ນຄວ້າຈັດຕັ້ງປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດປະຕິວັດຊາດປະຊາທິປະໄຕ ໃນ **5** ເປົ້າໝາຍບູລິມະສິດ ໄດ້ຈຳນວນ 5,824 ທ່ານ, ຍິງ 380 ທ່ານ, ເທົ່າກັບ 36.40 % ເປັນເງິນທັງໝົດ 126.**76** ຕື້ກວ່າກີບ ເທົ່າກັບ **36.40 %** ຂອງແຜນການ **5** ປີ (16,000 ທ່ານ), ໃນນີ້: ເງິນປ່ຽນແທນໂກຕ້າລົດ 207  ທ່ານ, ຍິງ **12** ທ່ານ, ເປັນເງິນ 14.19 ຕື້ກີບ, ອຸດໜູນເທື່ອດຽວຜູ້ເສຍສະຫຼະຊີວິດ **2**,809 ທ່ານ, ເປັນຍິງ 89 ທ່ານ ເປັນເງິນ 60.12 ຕື້ກີບ ແລະ ອຸດໜູນເທື່ອດຽວຜູ້ຍັງມີຊີວິດ **2**,787 ທ່ານ, ຍິງ 256 ເປັນເງິນ 52.12 ຕື້ກີບ.

– ຄົ້ນຄວ້າ ແລະ ອະນຸມັດນະໂຍບາຍອຸດໜູນເສຍອົງຄະຍ້ອນການສູ້ຮົບ ແລະ ຮັບໃຊ້ສູ້ຮົບໃນພາລະກິດປະຕິວັດຊາດປະຊາທິປະໄຕໄດ້ຈຳນວນ 738 ທ່ານ ເປັນຍິງ 138 ທ່ານ, ເທົ່າກັບ 77.68% ຂອງແຜນການ (ແຜນການ 5ປີ: 950 ທ່ານ).

– ສ້າງນັກຈິດຕະສັງຄົມສົງເຄາະສະເພາະດ້ານ ຕາມອາລະແຫ່ງຊາດ 399 ຄົນ ລື່ນ 106% ຂອງແຜນການ (ແຜນການ: 194 ຄົນ); ຂະຫຍາຍຕາໜ່າງປົກປ້ອງ ແລະ ຊ່ວຍເຫຼືອເດັກ ຂັ້ນເມືອງ ແລະ ບ້ານ ໄດ້ 1,339 ແຫ່ງ, ໃນນີ້ ຂັ້ນເມືອງ 27 ເມືອງ ແລະ ຂັ້ນບ້ານ 1,372 ບ້ານ; ຂະຫຍາຍຄະນກຳມະການປົກປ້ອງສິດ ແລະ ຜົນປະໂຫຍດເດັກ ຂັ້ນເມືອງ ແລະ ບ້ານ ໄດ້ 1,840 ແຫ່ງ, ໃນນີ້ ຂັ້ນ ເມືອງ 40 ເມືອງ ລື່ນແຜນການ 5 ປີ 14.28% (ແຜນມການ 5 ປີ: 35 ເມືອງ) ແລະ ຂັ້ນບ້ານ 1,803 ບ້ານ (ແຜນການ: 500 ບ້ານ); ຈັດຝຶກອົບຮົມວຽກການປົກປ້ອງ ແລະ ໃຫ້ການຊ່ວຍເຫຼືອຂັ້ນພື້ນຖານໃຫ້ແກ່ເດັກ ໃຫ້ຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກ ຂັ້ນຕ່າງໆ 1,811 ຄົນ, ຍິງ 637 ຄົນ (ແຜນການ 5 ປີ: 500 ຄົນ).

– ສົມທົບທຶນໃນການເບິ່ງແຍງລ້ຽງດູເດັກນ້ອຍບ້ານເດັກເອັສໂອເອັສລາວ ໄດ້ຈຳນວນ 929 ເທື່ອຄົນ, ເປັນຍິງ 419 ເທື່ອຄົນ, ມີມູນຄ່າ 1,630 ລ້ານກວ່າກີບ.

– ໃຫ້ການຊ່ວຍເດັກ-ໄວໜຸ່ມ ດ້ອຍໂອກາດ ແລະ ຜູ້ມີຄວາມສ່ຽງຈາກການຄ້າມະນຸດ ໄດ້ຮັບການຝຶກອົບຮົມ ແລະ ປະກອບວຽກເຮັດງານທຳ ໃນຊຸມຊົນ 5,645 ຄົນ, ຍິງ 3,638 ຄົນ; ທົດລອງປະຕິບັດນະໂຍບາຍອຸດໜູນເງິນສົດ ໄລຍະ 3 ປີ (2021-2023) ຕໍ່ແມ່ຍິງຖືພາ ແລະ ເດັກນ້ອຍນັບແຕ່ມື້ເກີດ ຮອດອາຍຸ 1,000 ວັນ ຢູ່ ເມືອງສະໜາມໄຊ, ເມືອງພູວົງ ແຂວງອັດຕະປື ແລະ ເມືອງນອງ ແຂວງສະຫວັນນະເຂດ ຈຳນວນ 5,259 ຄົນ ເປັນເງິນທັງໝົດ 7,766.01 ລ້ານກວ່າກີບ ແລະ ສົມທົບທຶນຊ່ວຍເຫຼືອເບິ່ງແຍງເດັກກຳພ້າ ຢູ່ບ້ານເດັກ ເອັສໂອເອັສ ລາວ 3,760 ເທື່ອຄົນ, ຍິງ 1,917 ເທື່ອຄົນ ເປັນເງິນ 1,158 ລ້ານກວ່າກີບ.

DRAFT

– ໃຫ້ການຊ່ວຍເຫຼືອເຂົ້າກິນແກ່ຜູ້ປະສົບໄພພິບັດຢູ່ເມືອງສະໜາມໄຊ, ແຂວງອັດຕະປື ປະຕິບັດໄດ້ 33,681 ໂຕນ, ເປັນເງິນ 31,320 ລ້ານກີບ, ມີຜູ້ໄດ້ຮັບຜົນປະໂຫຍດ 4,678 ຄອບຄົວ; ຜູ້ປະສົບໄພພິບັດ, ຜູ້ທຸກຍາກ ແລະ ຜູ້ດ້ອຍໂອກາດໃນຂອບເຂດທົ່ວປະເທດ ປະຕິບັດໄດ້ 40,421.89 ໂຕນ, ເປັນເງິນ 36,321.72 ລ້ານກີບ, ມີຜູ້ໄດ້ຮັບຜົນໂຫຍດ 322,160 ຄົນ, ເປັນຍິງ 181,497 ຄົນ; ສະໜອງເຄື່ອງອຸປະໂພກ-ບໍລິໂພກປະເພດຕ່າງໆໃຫ້ແກ່ຜູ້ດ້ອຍໂອກາດໃນສັງຄົມ ໄດ້ຈຳນວນ 77,911 ຄົນ, ມີມູນຄ່າ 5,600 ລ້ານກີບ; ສົມທົບວັດຖຸອຸປະກອນເພື່ອປຸກສ້າງເຮືອນຢູ່ໃຫ້ແກ່ຜູ້ທີ່ໄດ້ຮັບກະທົບຈາກໄພພິບັດຕ່າງໆ ໄດ້ຈຳນວນ 2,928 ຄອບຄົວ, ເປັນເງິນ 1,316.02 ລ້ານກີບ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ເພື່ອຫຼຸດຜ່ອນຄວາມທຸກຍາກໃນເຂດຫ່າງໄກສອກຫຼີກ ແລະ ຊົນນະບົດ ໄດ້ຈຳນວນ 195 ຄອບຄົວ, ເປັນເງິນ 500 ລ້ານກີບ.

– ໄດ້ສຳເລັດການປັບປຸງສາງເກັບມ້ຽນເຄື່ອງອຸປະໂພກ-ບໍລິໂພກ ໄດ້ຈຳນວນ 2 ແຫ່ງ ຄື: ນະຄອນຫຼວງວຽງຈັນ 1 ແຫ່ງ ແລະ ແຂວງຈຳປາສັກ 1 ແຫ່ງ; ກຳລັງກໍ່ສ້າງຢູ່ແຂວງອຸດົມໄຊ 1 ແຫ່ງ.

- **ສິ່ງທ້າທາຍ:** (1) ຕາໜ່າງການປົກປ້ອງທາງສັງຄົມຍັງມີຄວາມຈຳກັດ ແລະ ຂາດທຶນຮອນທີ່ພຽງພໍ, ງົບປະມານຂອງວຽກງານປະກັນສຸຂະພາບແມ່ນຫຼຸດລົງ ເຖິງວ່າຈະມີການຂຶ້ນທະບຽນເຂົ້າລະບົບປະກັນສັງຄົມເພີ່ມຂຶ້ນ. ພາກລັດຍັງບໍ່ສາມາດຮັບປະກັນໃນການສະໜອງທຶນຢ່າງຍືນຍົງ ເຂົ້າໃສ່ວຽກງານປະກັນສັງຄົມ ຍ້ອນຄວາມຈຳກັດຂອງງົບປະມານ; (2) ເງື່ອນໄຂດ້ານຄ່າແຮງງານ, ສະຫວັດດີການແຮງງານ ແລະ ສະພາບແວດລ້ອມໃນສະຖານທີ່ເຮັດວຽກຍັງບໍ່ທັນໄດ້ຮັບການປັບປຸງໃຫ້ດີຂຶ້ນເທົ່າທີ່ຄວນ, ບໍ່ທັນສ້າງແຮງດຶງດູດເອົາກຳລັງແຮງງານເຂົ້າໃນບາງຂະແໜງການເສດຖະກິດ ແລະ ບໍ່ເປັນແຮງຈູງໃຈໃຫ້ກຳລັງແຮງງານພັດທະນາຕົນເອງ ທັງດ້ານສີມື ແລະ ທັດສະນະຄະຕິໃນການເຮັດວຽກ; ການສົ່ງເສີມສາຍພົວພັນແຮງງານຍັງບໍ່ທັນເຂັ້ມແຂງເທົ່າທີ່ຄວນ, ການປະຕິບັດມາດຕະຖານຫົວໜ່ວຍແຮງງານ ແລະ ລະບຽບການນຳໃຊ້ແຮງງານຍັງບໍ່ທັນກວ້າງຂວາງ, ການປົກປ້ອງສິດຜົນປະໂຫຍດຂອງແຮງງານເດັກຍັງມີຊ່ອງຫວ່າງ; ການຄຸ້ມຄອງແຮງງານລາວທີ່ເຮັດວຽກຢູ່ຕ່າງປະເທດ ແລະ ແຮງງານຕ່າງປະເທດທີ່ເຮັດວຽກຢູ່ລາວ ໂດຍສະເພາະແມ່ນແຮງງານຕ່າງປະເທດທີ່ເຂົ້າມາເຮັດວຽກແບບບໍ່ຖືກຕ້ອງຕາມກົດໝາຍ ໄດ້ຮັບການຄຸ້ມຄອງບໍ່ທັນເປັນລະບົບ ແລະ ການແກ້ໄຂບໍ່ທັນເຮັດໄດ້ດີເທົ່າທີ່ຄວນ ຊຶ່ງໄດ້ສົ່ງຜົນກະທົບຕໍ່ການມີວຽກເຮັດງານທຳຂອງແຮງງານລາວ ແລະ ມີກໍລະນີບໍ່ປະຕິບັດພັນທະຕໍ່ລັດ; (3) ການຂະຫຍາຍອັດຕາການປົກຄຸມເຂົ້າປະກັນສັງຄົມຕາມລະບົບຫົວໜ່ວຍແຮງງານ ຍັງບໍ່ບັນລຸຕາມຄາດໝາຍທີ່ວາງໄວ້, ສັງຄົມຍັງບໍ່ທັນຮັບຮູ້ ແລະ ເຂົ້າໃຈຕໍ່ລະບົບປະກັນສັງຄົມຢ່າງເລິກເຊິ່ງ ແລະ ກວ້າງຂວາງ; ກອງທຶນປະກັນສັງຄົມພາກລັດຍັງບໍ່ສາມາດເປັນກອງທຶນທີ່ກຸ້ມຕົນເອງ ນອກຈາກລາຍຮັບຈາກເງິນສົມທົບຕາມກົດໝາຍ 8% ແລະ 8.5% ແລ້ວ, ໃນແຕ່ລະປີລັດຖະບານຍັງໄດ້ແບກຫາບ ໃນການສະໜອງງົບປະມານໃຫ້ພຽງພໍກັບລາຍຈ່າຍອຸດໜູນປະກັນສັງຄົມຕາມຄວາມຈຳເປັນຕົວຈິງ ເນື່ອງຈາກຈຳນວນຜູ້ຮັບການອຸດໜູນປະກັນສັງຄົມໃນແຕ່ລະປີມີທ່າອ່ຽງເພີ່ມຂຶ້ນ. ໃນຂະນະດຽວກັນ, ຜູ້ຈ່າຍເງິນສົມທົບໂດຍສະເພາະພະນັກງານ-ລັດຖະກອນມີທ່າອ່ຽງຫຼຸດລົງ ຈຶ່ງເຮັດໃຫ້ລາຍຮັບເງິນສົມທົບຕາມພັນທະທີ່ໄດ້ກຳນົດໃນກົດໝາຍ ຍັງບໍ່ພຽງພໍກັບລາຍຈ່າຍການອຸດໜູນປະກັນສັງຄົມໃນແຕ່ລະປີ; ຂອດປະສານງານໃນການຄຸ້ມຄອງອຸດໜູນປະກັນສຸຂະພາບຈາກອົງການປະກັນສັງຄົມໂອນໃຫ້ຫ້ອງການປະກັນສຸຂະພາບແຫ່ງຊາດຍັງບໍ່ເປັນເອກະພາບ ແລະ ການສະໜອງບໍລິການປິ່ນປົວສຸຂະພາບ ຍັງບໍ່ເປັນທີ່ເພິ່ງພໍໃຈຂອງຜູ້ປະກັນຕົນ ແລະ ຜູ້ເກີດສິດ; (4) ການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານໃນພາລະກິດການປະຕິວັດຊາດປະຊາທິປະໄຕ ຍັງບໍ່ທັນບັນລຸໄດ້ຕາມຄາດໝາຍທີ່ກຳນົດໄວ້,ຂໍ້ມູນບາງກຸ່ມເປົ້າໝາຍຍັງບໍ່ຊັດເຈນ, ການສະໜອງງົບປະມານຍັງບໍ່ພຽງພໍກັບຄວາມຕ້ອງການ; ການພັດທະນາການຊ່ວຍເຫຼືອເດັກ, ຜູ້ພິການ ແລະ ຜູ້ອາຍຸສູງ ຍັງບໍ່ທັນເປັນລະບົບ; ການຄຸ້ມຄອງວຽກສັງຄົມສົງເຄາະ ແລະ ໄພພິບັດຕ່າງໆ ຍັງບໍ່ທັນເຂັ້ມແຂງ ແລະ ການສະໜອງການຊ່ວຍເຫຼືອສຸກເສີນໃຫ້ຜູ້ປະສົບໄພພິບັດຕ່າງໆ, ຜູ້ດ້ອຍໂອກາດ ແລະ ຜູ້ທຸກຍາກ ຍັງຊັກຊ້າ.

### *3.6 ວຽກງານເກັບກູ້ລະເບີດບໍ່ທັນແຕກ ແລະ ຊີວິດຂອງປະຊາຊົນມີຄວາມປອດໄພຈາກລະເບີດບໍ່ທັນແຕກເພີ່ມຂຶ້ນເທື່ອລະກ້າວ*

– ດຳເນີນການກວດກູ້ລະເບີດບໍ່ທັນແຕກອອກຈາກເນື້ອທີ່ທຳການຜະລິດ ແລະ ເຂດຊຸມຊົນ, ເຂດຈຸດສຸມທຸລະກິດ 17,317 ເຮັກຕາ (ສະເພາະ ໂຄງການເກັບລະເບີດແຫ່ງຊາດ) ເທົ່າກັບ 34.63% ຂອງແຜນການ 5 ປີ (ມະຕິສະພາແຫ່ງຊາດ: 50,000 ເຮັກຕາ) ຫຼື ເທົ່າກັບ 108% ຂອງແຜນການໂຄງການເກັບກູ້ລະເບີດແຫ່ງຊາດ (ແຜນການ: 50,000 ເຮັກຕາ);

DRAFT

– ຈັດຕັ້ງການສຳຫຼວດບໍ່ແມ່ນວິຊາການ ເພື່ອຊອກຫາຈຸດຫຼັກຖານລະເບີດບໍ່ທັນແຕກ 751 ບ້ານ ເທົ່າກັບ 27.05% ຂອງແຜນການ 5 ປີ (ແຜນການ: 2,776 ບ້ານ) ແລະ ສຳຫຼວດແບບວິຊາການ ເພື່ອກຳນົດພື້ນທີ່ ລະເບີດບໍ່ທັນແຕກຕົກຄ້າງ 63,668 ເຮັກຕາ ເທົ່າກັບ 25.47% ຂອງແຜນການ 5 ປີ (ແຜນການ: 250,000 ເຮັກຕາ);

– ອຸປະຕິເຫດລະເບີດບໍ່ທັນແຕກຕົກຄ້າງໄດ້ເກີດຂຶ້ນ ຈຳນວນ 66 ຄັ້ງ ເຮັດໃຫ້ມີຜູ້ໄດ້ຮັບເຄາະຮ້າຍຈາກອຸປະຕິເຫດດັ່ງກ່າວຈຳນວນ 103 ຄົນ, ໃນນີ້: ບາດເຈັບ 81 ຄົນ ແລະ ເສຍຊີວິດ 22 ຄົນ, ເທົ່າກັບ 55% ຂອງແຜນການ (ແຜນການ 5ປີ: ຜູ້ເຄາະຮ້າຍໃຫ້ຕ່ຳກວ່າ 40 ຄົນ/ປີ ຫຼື ຕ່ຳກວ່າ 200 ຄົນ ໃນ 5 ປີ).

– ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດມາດຕະການຕ່າງໆ ເພື່ອຫຼຸດຜ່ອນຈຳນວນຜູ້ໄດ້ຮັບເຄາະຮ້າຍລະເບີດບໍ່ທັນແຕກ ໂດຍໂຄສະນາພິນຮ້າຍ ແລະ ທີ່ມາຂອງລະເບີດບໍ່ທັນແຕກ ຕາມກຸ່ມເປົ້າໝາຍ ບ້ານ ແລະ ໂຮງຮຽນສາມັນສຶກສາ ໄດ້ 2,876 ເທື່ອບ້ານ, ເທົ່າກັບ 95.86% ຂອງແຜນການ 5 ປີ (ແຜນການ: 3,000 ເທື່ອບ້ານ) ແລະ ໂຮງຮຽນສາມັນສຶກສາ 9,740 ເທື່ອແຫ່ງ ໂດຍມີຜູ້ເຂົ້າຮ່ວມຮັບຟັງ ທັງໝົດ 1,622,185 ເທື່ອຄົນ, ຍິງ 808,862 ເທື່ອຄົນ, ໃນນີ້: ຢູ່ຕາມບ້ານ 871,437 ເທື່ອຄົນ, ຍິງ 444,307 ຄົນ ແລະ ຢູ່ໂຮງຮຽນ ມີນັກຮຽນ ແລະ ພະນັກງານຄູ ເຂົ້າຮ່ວມ 750,748 ເທື່ອຄົນ, ຍິງ 364,555 ເທື່ອຄົນ. ເຖິງຢ່າງໃດກໍ່ຕາມ, ຍັງເກີດມີອຸປະຕິເຫດລະເບີດ ບໍ່ທັນແຕກຕົກຄ້າງ 85 ຄັ້ງ ເຮັດໃຫ້ມີຜູ້ໄດ້ຮັບເຄາະຮ້າຍ 128 ຄົນ ຫຼື ປະມານ 25 ຄົນ/ປີ (ແຜນການ:ໃຫ້ຕ່ຳກວ່າ 40 ຄົນ/ປີ), ໃນນີ້: ບາດເຈັບ 102 ຄົນ ແລະ ເສຍຊີວິດ 26 ຄົນ;

– ໃຫ້ການຊ່ວຍເຫຼືອຜູ້ປະສົບອຸປະຕິເຫດ ເພື່ອພັດທະນາຊີວິດການເປັນຢູ່ຂອງຜູ້ຖືກເຄາະຮ້າຍຈາກອຸປະຕິເຫດລະເບີດບໍ່ທັນແຕກຕົກຄ້າງ ຈຳນວນ 322 ຄົນ ເທົ່າກັບ 5.60% ຂອງແຜນການ 5 ປີ (ແຜນການ: 5,750 ຄົນ) ໃນນີ້: ປິ່ນປົວດ້ານການແພດ 142 ຄົນ, ຟື້ນຟູສຸຂະພາບຈິດ 47 ຄົນ, ຟື້ນຟູໜ້າທີ່ການ 59 ຄົນ ແລະ ປຸກສ້າງທີ່ຢູ່ອາໄສ 74 ຄົນ.

• **ສິ່ງທ້າທາຍ:** ການຄຸ້ມຄອງບໍລິຫານວຽກເກັບກູ້ລະເບີດບໍ່ທັນແຕກທີ່ຕົກຄ້າງ ຍັງບໍ່ທັນຄ່ອງຕົວ ແລະ ການລະດົມແຫຼ່ງທຶນ ຍັງບໍ່ທັນພຽງພໍກັບຄວາມຕ້ອງການຂອງວຽກຕົວຈິງ.

## 4. ເປົ້າໝາຍທີ 4: ການປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມສົມດຸນ ແລະ ຫຼຸດຜ່ອນຄວາມສ່ຽງຈາກໄພພິບັດຕ່າງໆ

### *4.1 ວຽກງານຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ໃຫ້ມີຄວາມຍືນຍົງ*

ໄດ້ສຸມໃສ່ຈັດຕັ້ງປະຕິບັດວຽກງານນີ້ຢ່າງຕັ້ງໜ້າ ໂດຍເອົາໃຈໃສ່ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຕົ້ນ: ທີ່ດິນ, ປ່າໄມ້, ຊັບພະຍາກອນນ້ຳ ແລະ ຊີວະນາໆພັນ ຕາມທິດທີ່ມີຄວາມສົມດຸນ ແລະ ຍືນຍົງ, ເຊິ່ງໃນໄລຍະ 5 ປີ ສາມາດປະຕິບັດໄດ້ ດັ່ງນີ້:

– ສືບຕໍ່ສ້າງ ແລະ ພັດທະນາຍຸດທະສາດການຄຸ້ມຄອງດິນ 8 ປະເພດທີ່ດິນຕາມແຜນແມ່ບົດທີ່ດິນແຫ່ງຊາດໄດ້ກຳນົດ.
– ການຂຶ້ນທະບຽນອອກໃບຕາດິນໃນຂອບເຂດທົ່ວປະເທດ ປະຕິບັດໄດ້ 692,200 ຕອນ (ແຕ່ປີ 2021 ຮອດເດືອນ6/2025), ເທົ່າກັບ 43.26% ຂອງແຜນການ (ແຜນການ 5 ປີ: ຈຳນວນ 1.6 ລ້ານຕອນ).
– ສຳເລັດແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານຂັ້ນແຂວງໄດ້ 5 ແຂວງ ມາຮອດປັດຈຸບັນສຳເລັດທັງໝົດໃນ 17 ແຂວງ ແລະ ນະຄອນຫຼວງວຽງຈັນ, ເທົ່າກັບ 100% ຂອງແຜນການ 5ປີ (ແຜນການ 5 ປີ: ຈຳນວນ 5 ແຂວງ). ພ້ອມດຽວກັນນີ້, ກໍໄດ້ຈັດຕັ້ງເຜີຍແຜ່ ແລະ ຊຸກຍູ້ຜັນຂະຫຍາຍການນຳໃຊ້ແຜນຈັດສັນດັ່ງກ່າວ ເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ແລະ ນະຄອນຫຼວງວຽງຈັນ.
– ສຳເລັດການສະເໜີລັດຖະບານອອກດຳລັດສ້າງຕັ້ງອຸທິຍານແຫ່ງຊາດ ຈຳນວນ 4 ແຫ່ງ ຄື: ໃນປີ 2021 ຈຳນວນ 2 ແຫ່ງ ແລະ ໃນປີ 2022 ຈຳນວນ 1 ແຫ່ງ, ເທົ່າກັບ 80% ຂອງແຜນການ 5 ປີ (ແຜນການ 5 ປີ: ໃຫ້ໄດ້ 5 ແຫ່ງ).

DRAFT

- ການປູກໄມ້ ປະຕິບັດໄດ້ 176,000 ເຮັກຕາ, ເທົ່າກັບ 88% ຂອງແຜນການ 5 ປີ (ແຜນການ 5 ປີ: 200,000 ເຮັກຕາ) ແລະ ການຟື້ນຟູປ່າໄມ້ ປະຕິບັດໄດ້ 443,000 ເຮັກຕາ, ເທົ່າກັບ 25% ຂອງແຜນການ 5 ປີ (ແຜນການ 5 ປີ: 1,800,000 ເຮັກຕາ).
- ກໍ່ສ້າງ ແລະ ຕິດຕັ້ງສະຖານີວັດແທກຄຸນນະພາບອາກາດ ສາມາດປະຕິບັດໄດ້ 5 ສະຖານີ, ເທົ່າກັບ 55.56% ຂອງແຜນການ (ແຜນການ 5ປີ: ຢ່າງໜ້ອຍ ໃຫ້ໄດ້ 9 ແຫ່ງໃນຂອບເຂດທົ່ວປະເທດ) ເຊັ່ນ: ແຂວງອຸດົມໄຊ, ຫຼວງນ້ຳທາ, ບໍ່ແກ້ວ, ສະຫວັນນະເຂດ ແລະ ຄຳມ່ວນ.
- ສຳເລັດການສ້າງແຜນຄຸ້ມຄອງອ່າງຮັບນ້ຳຂະໜາດໃຫຍ່ ໄດ້ຈຳນວນ 14 ອ່າງຮັບນ້ຳຄື: ນ້ຳອູ, ນ້ຳທາ, ນ້ຳຄານ, ນ້ຳງື່ມ, ນ້ຳເທີນ-ນ້ຳກະດິງ, ເຊບັ້ງໄຟ, ເຊບັ້ງຫຽງ, ນ້ຳຊຳ, ນ້ຳເຊືອງ, ນ້ຳງຽບ, ເຊໂດນ, ເຊກອງ, ນ້ຳມ້າ ແລະ ນ້ຳເບີນ, ເທົ່າກັບ 100% ຂອງແຜນການ (ແຜນການ 5ປີ: ຈຳນວນ 14 ອ່າງ).

ນອກຈາກນັ້ນ, ໄດ້ສຸມໃສ່ຈັດຕັ້ງບັນດາໜ້າວຽກຈຸດສຸມທີ່ເປັນແຜນງານບູລິມະສິດ ເຊິ່ງມີຜົນສຳເລັດຫຼາຍດ້ານດັ່ງນີ້:

+ ການຄຸ້ມຄອງ ແລະ ນຳໃຊ້ທີ່ດິນ: ໄດ້ດຳເນີນວຽກງານການຄຸ້ມຄອງທີ່ດິນທັນເປັນທັນສະໄໝ ໂດຍໄດ້ສ້າງຍຸດທະສາດການທັນເປັນທັນສະໄໝ, ປະເມີນສະພາບລະບົບຄຸ້ມຄອງຖານຂໍ້ມູນທີ່ດິນ ແລະ ຄາດຄະເນແຜນການລົງທຶນການປັບປຸງທັນເປັນທັນສະໄໝ; ປັບປຸງ ແລະ ສ້າງລະບົບໂຄງລ່າງພື້ນຖານຂອງ ICT ເພື່ອຄຸ້ມຄອງຂໍ້ມູນທີ່ດິນ ແລະ ໄດ້ຮ່ວມມືກັບບໍລິສັດເອກະຊົນ ແລະ ພາກສ່ວນກ່ຽວຂ້ອງ ເພື່ອສືບຕໍ່ພັດທະນາ ແລະ ຄຸ້ມຄອງລະບົບທະບຽນທີ່ດິນ Lao Land Reg ແລະ ເຊື່ອມຕໍ່ຂໍ້ມູນທີ່ດິນ ເພື່ອເກັບຄ່າທຳນຽມ ແລະ ຄ່າບໍລິການໃນການຄຸ້ມຄອງນຳໃຊ້ທີ່ດິນ ແລະ ລາຍຮັບຈາກທີ່ດິນອື່ນໆ ຊຶ່ງໄດ້ເຮັດການທົດລອງຢູ່ເມືອງໄຊທານີ, ນະຄອນຫຼວງວຽງຈັນ (ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ). ນອກນັ້ນ, ໄດ້ດຳເນີນການສະຫຼຸບຕີລາຄາການເຊົ່າ ແລະ ສຳປະທານທີ່ດິນໃນທົ່ວປະເທດ ໂດຍໄດ້ກວດກາ ແລະ ປະເມີນຄືນການຈັດຕັ້ງປະຕິບັດຜົນການກວດກາ ຈຳນວນ 438 ໂຄງການເຊົ່າ ແລະ ສຳປະທານທີ່ດິນ; ຊຶ່ງມາຮອດປັດຈຸບັນ ສາມາດອອກຂໍ້ຕົກລົງ/ແຈ້ງຍົກເລີກໂຄງການ ໄດ້ທັງໝົດ 101 ໂຄງການ, ເທົ່າກັບ 23% ຂອງໂຄງການເປົ້າໝາຍຍົກເລີກ. ພ້ອມນັ້ນ ກໍໄດ້ສະເໜີປັບປຸງ ດຳລັດວ່າດ້ວຍການເອົາດິນຂອງລັດ ໃຫ້ເຊົ່າ ແລະ ສຳປະທານ ແລະ ໄດ້ຊຸກຍູ້ໃຫ້ບັນດາກະຊວງ ຂຶ້ນບັນຊີດິນລັດ ເຊິ່ງຮອດປັດຈຸບັນສຳເລັດໄດ້ 11 ກະຊວງ ເປັນຈຳນວນຕອນດິນ 17,207 ຕອນ. ໄດ້ສືບຕໍ່ຈັດຕັ້ງຜັນຂະຫຍາຍແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ເຊື່ອມສານເຂົ້າໃນແຜນພັດທະນາໃນຂັ້ນຕ່າງໆ ມາຮອດປັດຈຸບັດໄດ້ສ້າງແຜນຈັດສັນທີ່ດິນຂັ້ນເມືອງ ໄດ້ 56 ເມືອງ, ເທົ່າກັບ 37.84% ຂອງຈຳນວນເມືອງທົ່ວປະເທດ ແລະ ຂັ້ນບ້ານ ໄດ້ 3,200 ບ້ານ, ເທົ່າກັບ 36% ຂອງຈຳນວນບ້ານທົ່ວປະເທດ; ໄດ້ສ້າງຍຸດທະສາດການຄຸ້ມຄອງ ແລະ ພັດທະນາດິນກະສິກຳ, ກຳນົດ-ສ້າງແຜນທີ່ປະເພດການນຳໃຊ້ດິນກະສິກຳ ໄດ້ 17 ແຂວງ ແລະ 1 ນະຄອນຫຼວງ.

+ ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນປ່າໄມ້ ແລະ ຊີວະນາໆພັນ: ໄດ້ປັບປຸງຍຸດທະຍາດ ແລະ ແຜນດຳເນີນງານແຫ່ງຊາດດ້ານຊີວະນາໆພັນ (NBSAP), ປ່າສະຫງວນ ພູຊຽງທອງ ແລະ ປ່າສະຫງວນ ນ້ຳປຸຍ ໄດ້ຖືກຮັບຮອງເຂົ້າເປັນ ສວນອຸທິຍານອາຊຽນ (ASEAN Heritage Parks); ໄດ້ຊຸກຍູ້ ແລະ ສະໜັບສະໜູນພາກສ່ວນທີ່ກ່ຽວຂ້ອງໃນການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນປ່າໄມ້ໃຫ້ມີຄວາມຍືນຍົງ ໂດຍໄດ້ສະໜອງທຶນ ຈຳນວນ 18.5 ລ້ານໂດລາສະຫະລັດ ພາຍໃຕ້ໂຄງການສິ່ງແວດລ້ອມ ແລະ ສັງຄົມ (ໄລຍະ 2) ເພື່ອປົກປັກຮັກສາປ່າສະຫງວນແຫ່ງຊາດ ແລະ ປ່າປ້ອງກັນແບບມີສ່ວນຮ່ວມຂອງມວນຊົນ ຊຶ່ງສາມາດປະຕິບັດໄດ້ ຈຳນວນ 12 ແຫ່ງ ຄື: ນ້ຳແອັດ-ພູເລີຍ, ນ້ຳຊຳ, ພູສະບົດ, ພູຈ້ອງ, ຕາດກວາງຊີ, ພູມິດ-ພູຊັນ, ນ້ຳມ່ວນ, ພູຈອມວອຍ, ນາກາຍ-ນ້ຳເທີນ, ນ້ຳອິນພູຫີນເຫຼັກໄຟ, ພູເຂົາຄວາຍ ແລະ ດົງນາຕາດ. ນອກນັ້ນ, ຍັງໄດ້ສະໜັບສະໜູນການພັດທະນາ ແລະ ອະນຸລັກສວນພຶກສາສາດເປັນຕົ້ນ: ການສ້າງຄວາມພ້ອມເພື່ອຮັບຮອງ ແລະ ປະກາດເອົາປ່າສະຫງວນ ນ້ຳແອັດ-ພູເລີຍ ແລະ ນາກາຍ-ນ້ຳເທີນ ເປັນສວນອຸທິຍານແຫ່ງຊາດ. ໄດ້ສຳເລັດການສະເໜີລັດຖະບານອອກດຳລັດສ້າງຕັ້ງອຸທິຍານແຫ່ງຊາດ ຈຳນວນ 4 ແຫ່ງ ຄື: ໃນປີ 2021 ສຳເລັດຈຳນວນ 2 ແຫ່ງ (ອຸທິຍານແຫ່ງຊາດດົງຫົວສາວ ແລະ ອຸທິຍານແຫ່ງຊາດເຊປຽນ); ໃນປີ 2022 ສຳເລັດຈຳນວນ 1 ແຫ່ງ (ອຸທິຍານແຫ່ງຊາດພູເຂົາຄວາຍ), ເທົ່າກັບ 80% ຂອງແຜນການ 5ປີ (ແຜນການ 5ປີ: ຈຳນວນ 5 ແຫ່ງ); ຍົກລະດັບປ່າສະຫງວນຂອງແຂວງຂຶ້ນເປັນປ່າສະຫງວນແຫ່ງຊາດ ໄດ້ຈຳນວນ 2 ແຫ່ງ ເທົ່າກັບ

DRAFT

40% ຂອງແຜນການ 5ປີ (ແຜນການ 5ປີ: ໃຫ້ໄດ້ 5 ແຫ່ງ). ການປູກປ່າ: ປັດຈຸບັນສາມາດປູກໄມ້ ໄດ້ຈຳນວນ 176,000 ເຮັກຕາ, ເທົ່າກັບ 88% ຂອງແຜນການ 5 ປີ (ແຜນການ 5 ປີ: 200,000 ເຮັກຕາ) ແລະ ການຟື້ນຟູປ່າ ຊຸດໂຊມແບບທຳມະຊາດ ແລະ ປູກເສີມກ້ອງປ່າ ປະຕິບັດໄດ້ 443,000 ເຮັກຕາ, ເທົ່າກັບ 25% ຂອງແຜນການ 5 ປີ (ແຜນການ 5 ປີ: 1,800,000 ເຮັກຕາ). ຊຶ່ງເຫັນວ່າການສົ່ງເສີມການປູກປ່າ ແລະ ການຟື້ນຟູປ່າ ຍັງບໍ່ສາມາດຈັດຕັ້ງປະຕິບັດຕາມແຜນການໄດ້ດີເທົ່າທີ່ຄວນ, ພ້ອມທັງຍັງມີການບຸກລຸກ-ຈັບຈອງທີ່ດິນປ່າໄມ້ ເພື່ອທຳການຜະລິດ ແລະ ການລົງທຶນຕ່າງໆ ບວກກັບ ຍັງເກີດມີສະພາບໄຟໄໝ້ລາມປ່າໃນຫຼາຍພື້ນທີ່ໃນໄລຍະຜ່ານມາ ຊຶ່ງມີຄວາມສ່ຽງຕໍ່ການບັນລຸຄາດໝາຍເນື້ອທີ່ປ່າປົກຫຸ້ມ ບໍ່ໃຫ້ຫຼຸດ 70% ຂອງເນື້ອທີ່ທົ່ວປະເທດ ໃນປີ 2025.

+ ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນນ້ຳ: ໄດ້ຊຸກຍູ້ສົ່ງເສີມກົນໄກປະສານງານໃນການຄຸ້ມຄອງ, ຈັດສັນ ແລະ ນຳໃຊ້ນ້ຳແບບມີສ່ວນຮ່ວມ ຂອງຫຼາຍຂະແໜງການ ແລະ ທ້ອງຖິ່ນ ເຊິ່ງໄດ້ສຳເລັດການສ້າງແຜນຄຸ້ມຄອງອ່າງຮັບນ້ຳຂະໜາດໃຫຍ່ ຈຳນວນ 14 ອ່າງຮັບນ້ຳ ເທົ່າກັບ 100 % ຂອງແຜນການ 5 ປີ; ສຳເລັດການສ້າງແຜນການຄຸ້ມຄອງອ່າງຮັບນ້ຳຂະໜາດກາງ ຈຳນວນ 16 ອ່າງຄື: ອ່າງຮັບນ້ຳ ນ້ຳຊັນ, ນ້ຳຫີນບູນ, ນ້ຳພູນ, ນ້ຳງື່ມ, ນ້ຳຣຸ່ງ, ນ້ຳປຸຍ, ນ້ຳເຫືອງ, ນ້ຳໂມ້, ນ້ຳເຊບັ້ງນວນ, ນ້ຳມະ, ນ້ຳແບງ, ນ້ຳງາມ, ນ້ຳຟ້າ, ນ້ຳເມິກ-ນ້ຳລ່ຳ, ນ້ຳມີ້ ແລະ ນ້ຳສັງ ເທົ່າກັບ 84.21% ຂອງແຜນອ່າງຮັບນ້ຳຂະໜາດກາງ (ອ່າງຮັບນ້ຳຂະໜາດກາງ: 19 ອ່າງ); ໄດ້ສ້າງ ແລະ ປັບປຸງນິຕິກຳທີ່ສຳຄັນຈຳນວນໜຶ່ງ ເພື່ອເປັນພື້ນຖານໃຫ້ແກ່ການຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳ ແນໃສ່ຮັບປະກັນໃຫ້ນ້ຳມີຄຸນນະພາບດີ ແລະ ມີປະລິມານພຽງພໍ ເພື່ອຕອບສະໜອງໃຫ້ແກ່ການບໍລິໂພກ, ອຸປະໂພກ ແລະ ການພັດທະນາແບບຍືນຍົງ. ພ້ອມນີ້, ສຳເລັດການສ້າງວິໄສທັດ ຮອດປີ 2040 ແລະ ຍຸດທະສາດວ່າດ້ວຍການຄຸ້ມຄອງ, ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ຮອດປີ 2030; ສ້າງກົນໄກການຫຼຸດຜ່ອນການປ່ອຍມົນລະພິດລົງສູ່ແຫຼ່ງນ້ຳ ໂດຍໄດ້ມີການອອກອະນຸຍາດການປ່ອຍນ້ຳເປື້ອນໃຫ້ບັນດາໂຄງການລົງທຶນ ແລະ ຜູ້ປະກອບການ ຈຳນວນ 9 ໂຮງງານ; ຢັ້ງຢືນການກຳນົດປະລິມານນ້ຳໄຫຼຕໍ່າສຸດ ເພື່ອສິ່ງແວດລ້ອມໃຫ້ແກ່ໂຄງການເຂື່ອນໄຟຟ້າພະລັງງານນ້ຳ ຈຳນວນ 16 ໂຄງການ; ສ້າງແຜນຄຸ້ມຄອງນ້ຳໃຕ້ດິນຂັ້ນແຂວງ ໄດ້ 9 ແຂວງ ຄື: ແຂວງສະຫວັນນະເຂດ, ເຊກອງ, ວຽງຈັນ, ນະຄອນຫຼວງວຽງຈັນ, ຈຳປາສັກ, ສາລະວັນ, ຫົວພັນ, ຊຽງຂວາງ ແລະ ຫຼວງພະບາງ; ສຳຫຼວດດິນທາມ ໄດ້ 5 ແຂວງ ຄື: ແຂວງວຽງຈັນ, ໄຊສົມບູນ, ຈຳປາສັກ, ຊຽງຂວາງ ແລະ ນະຄອນຫຼວງວຽງຈັນ ແລະ ການປັກຫຼັກເຂດດິນທາມ ໄດ້ 2 ເຂດ ຄື: ບຶງບະພັດ ແລະ ບຶງປະແປ ຢູ່ເມືອງປະທຸມພອນ, ແຂວງຈຳປາສັກ ແລະ ໄດ້ດຳເນີນການເກັບກຳຂໍ້ມູນຄຸນນະພາບນ້ຳປະຕິບັດໄດ້ທັງໝົດ 202 ຈຸດ ໃນສາຍນ້ຳຕ່າງໆທົ່ວປະເທດ.

+ ການຄຸ້ມຄອງສິ່ງແວດລ້ອມ ແລະ ຄວບຄຸມມົນລະພິດ: ໄດ້ສ້າງ ແລະ ປັບປຸງບັນດານິຕິກຳກ່ຽວກັບການຄຸ້ມຄອງສິ່ງແວດລ້ອມ ເປັນຕົ້ນ: ສຳເລັດການປັບປຸງກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ເຊິ່ງຖືກຮັບຮອງໃນກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງວັນທີ 18 ມິຖຸນາ 2024; ພ້ອມນັ້ນ, ກໍໄດ້ປັບປຸງລະບົບຕິດຕາມ ແລະ ຄວບຄຸມມົນລະພິດ ໂດຍໄດ້ກໍ່ສ້າງ ແລະ ຕິດຕັ້ງສະຖານີວັດແທກຄຸນນະພາບອາກາດໃໝ່ ຈຳນວນ 5 ສະຖານີ, ເທົ່າ 55.56% ຂອງແຜນການ 5ປີ; ໄດ້ສຳຫຼວດແຫຼ່ງກຳນົດມົນລະພິດຢູ່ແຂວງທີ່ມີໂຮງຈັກໂຮງງານ ແລະ ມີໂຄງການລົງທຶນຈຳນວນຫຼາຍ ພ້ອມທັງໄດ້ລາຍງານສະພາບຄຸນນະພາບອາກາດ (ຝຸ່ນລະອອງ PM 2.5, PM 10, $NO_X$, $SO_X$) ໃຫ້ແກ່ສັງຄົມຮັບຊາບຢ່າງເປັນປົກກະຕິ; ໄດ້ສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ເພື່ອດຳເນີນມາດຕະການຫຼຸດຜ່ອນ, ສະກັດກັ້ນໄຟປ່າ ແລະ ແກ້ໄຂບັນຫາໝອກຄວັນ ຈາກການຈູດປ່າ-ເຮັດໄຮ່ ໂດຍໄດ້ສ້າງກົນໄກການລາຍງານສະພາບການເກີດໄຟໄໝ້ປ່າໃນພື້ນທີ່ຕ່າງໆ; ສ້າງແຜນດຳເນີນງານ ແລະ ແນວທາງການແກ້ໄຂມົນລະພິດໝອກຄວັນ ພ້ອມທັງສ້າງແຜນຈັດສັນທີ່ດິນຂັ້ນບ້ານ ໃນເຂດ 3 ປະເພດປ່າ ເພື່ອກຳນົດເຂດນຳໃຊ້ ແລະ ເຂດປ້ອງກັນການບຸກລຸກປ່າ. ນອກຈາກນັ້ນ, ຍັງໄດ້ສ້າງຄວາມເຂັ້ມແຂງໃນການຕິດຕາມກວດກາສິ່ງແວດລ້ອມ ໂດຍໄດ້ສ້າງ ແລະ ເຜີຍແຜ່ນິຕິກຳ, ບົດແນະນຳ ແລະ ຄູ່ມືວິຊາການ ທີ່ຕິດພັນກັບວຽກງານກວດກາຕິດຕາມການຄຸ້ມຄອງສິ່ງແວດລ້ອມ-ສັງຄົມ ຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ ເຊັ່ນ: ຄູ່ມືແນະນຳກ່ຽວກັບການສ້າງແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ໂຄງການພັດທະນາບໍ່ແຮ່ ໃນໄລຍະທົດລອງ, ຂໍ້ຕົກລົງວ່າດ້ວຍການອະນຸມັດໃຫ້ນຳໃຊ້ແບບຟອມ ບົດບັນທຶກວ່າດ້ວຍການຈັດຕັ້ງປະຕິບັດມາດຕະການປ້ອງກັນ, ຫຼຸດຜ່ອນ

DRAFT

ແລະ ແກ້ໄຂຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໃນໂຄງການຂຸດຄົ້ນແຮ່ເຫຼັກ/ຫີນອ່ອນ (ມາໂບ້) ໃນໄລຍະເຮັດທົດລອງ; ສ້າງລະບົບຖານຂໍ້ມູນຕິດຕາມໂຄງການລົງທຶນ ແລະ ເຊື່ອມຕໍ່ຂໍ້ມູນກັບພາກສ່ວນທີ່ກ່ຽວຂ້ອງ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ສາມາດລາຍງານສະພາບການຄຸ້ມຄອງສິ່ງແວດລ້ອມໄດ້ຢ່າງເປັນປົກກະຕິ. ສຳເລັດການຄົ້ນຄວ້າ ແລະ ພິຈາລະນາອະນຸມັດອອກໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ທັງໝົດຈຳນວນ 356 ໂຄງການ (ໃນນີ້ຮັບຮອງເອົາບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ (EIA) ຈຳນວນ 163 ໂຄງການ). ພ້ອມນັ້ນ, ກໍໄດ້ຈັດຕັ້ງປະຕິບັດວຽກງານການສ້າງຈິດສຳນຶກ ແລະ ສົ່ງເສີມຄຸນນະພາບສິ່ງແວດລ້ອມ ໂດຍການເຊື່ອມສານເຂົ້າໃນລະບົບການສຶກສາ ໂດຍຜ່ານການໂຄສະນາວຽກງານສິ່ງແວດລ້ອມ ໃນສື່ຕ່າງໆ ໃຫ້ສັງຄົມໄດ້ຮັບຊາບ, ໄດ້ຈັດພິມຄູ່ມືການເປັນຄູຝຶກດ້ານການສ້າງຈິດສຳນຶກກ່ຽວກັບສິ່ງແວດລ້ອມ, ໄດ້ຝຶກອົບຮົມກ່ຽວກັບການນຳໃຊ້ປຶ້ມແບບຮຽນ ແລະ ຄູ່ມືຂີ້ເຫຍື້ອ ສຳລັບຊັ້ນປະຖົມສຶກສາ ປີທີ 1-5 ແລະ ລົງຊຸກຍູ້ ແລະ ສ້າງຄວາມເຂັ້ມແຂງ ຈັດການຝຶກອົບຮົມໃຫ້ແກ່ກຸ່ມບ້ານເປົ້າໝາຍກ່ຽວກັບການຈັດຕັ້ງປະຕິບັດວຽກງານ ຂຽວ ສະອາດ ງາມຕາ.

- ສິ່ງທ້າທາຍ: ການຈັດຕັ້ງປະຕິບັດວຽກງານໃນຂົງເຂດທີ່ດິນ ຍັງມີຫຼາຍໜ້າວຽກບໍ່ສາມາດປະຕິບັດໄດ້ຕາມແຜນການທີ່ກຳນົດໄວ້ ແລະ ມີຄວາມທ້າທາຍ ໂດຍສະເພາະຄາດໝາຍການຂຶ້ນທະບຽນອອກໃບຕາດິນ ໃຫ້ໄດ້ 1.6 ລ້ານຕອນ ພາຍໃນປີ 2025 ແມ່ນມີຄວາມຊັກຊ້າ ແລະ ມີທ່າອ່ຽງຈະບໍ່ສາມາດບັນລຸຕາມຄາດໝາຍ ເນື່ອງຈາກການມອບວຽກຂຶ້ນທະບຽນອອກໃບຕາດິນ ຈາກ ພະແນກ ຊສ ແຂວງ/ນະຄອນຫຼວງວຽງຈັນ ໃຫ້ ຫ້ອງການ ຊສ ເມືອງມີຄວາມຊັກຊ້າ ແລະ ການຂຶ້ນທະບຽນອອກໃບຕາດິນສວນຫຼາຍທີ່ຍັງເຫຼືອເປັນທີ່ດິນກະສິກຳ ມີເນື້ອທີ່ກວ້າງ ແລະ ມີຈຳນວນຕອນດິນຫຼາຍກວ່າ 680,000 ຕອນ ຢູ່ໃນເຂດປ່າໄມ້ ເຊິ່ງຕ້ອງໄດ້ກວດກາ ແລະ ຈັດສັນກ່ອນ ຈຶ່ງສາມາດຂຶ້ນທະບຽນອອກໃບຕາດິນ ແລະ ອອກໃບຢັ້ງຢືນການນຳໃຊ້ທີ່ດິນໄດ້. ພ້ອມນັ້ນ, ທີ່ດິນຈຳນວນຫຼາຍແມ່ນຍັງຢູ່ໃນເຂດສະຫງວນທາງບົກ ແລະ ທາງນ້ຳ ເຊິ່ງບໍ່ສາມາດອອກໃບຕາດິນໄດ້; ການກວດກາ ແລະ ດຳເນີນມາດຕະການຄຸ້ມຄອງທີ່ດິນ ທີ່ໃຫ້ເຊົ່າ ແລະ ສຳປະທານດິນລັດ ຍັງບໍ່ທັນປະຕິບັດໄດ້ຢ່າງເຂັ້ມງວດເຮັດໃຫ້ການຈັບຈອງ ແລະ ເຊົ່າສຳປະທານທີ່ດິນ ຍັງຂາດການພັດທະນາຢ່າງເຕັມສ່ວນ ເຊິ່ງສົ່ງຜົນກະທົບຕໍ່ການພັດທະນາເສດທະກິດ-ສັງຄົມ; ລະບົບນິເວດຍັງສືບຕໍ່ໄດ້ຮັບຄວາມສ່ຽງຈາກການຂະຫຍາຍຕົວຂອງຂະແໜງກະສິກຳ, ການນຳໃຊ້ຢາຂ້າແມງໄມ້ແບບບໍ່ຍືນຍົງ, ການພັດທະນາໂຄງລ່າງພື້ນຖານຂະໜາດໃຫຍ່, ກິດຈະກຳຂຸດຄົ້ນບໍ່ແຮ່ ແລະ ການທຳລາຍສິ່ງແວດລ້ອມແບບຜິດກົດໝາຍ ເຊັ່ນ: ການຕັດໄມ້ທຳລາຍປ່າຊະຊາຍ, ການສູນເສຍຊີວະນາໆພັນ, ການຄ້າຂາຍສັດປ່າ ແລະ ອື່ນໆ. ສິ່ງທ້າທາຍເຫຼົ່ານີ້, ໄດ້ເຮັດໃຫ້ການສ້າງຄວາມເຂັ້ມແຂງໃຫ້ແກ່ການວາງແຜນພັດທະນາທີ່ຍືນຍົງ, ການສ້າງຄວາມທົນທານຕໍ່ສະພາບການປ່ຽນແປງດິນຟ້າອາກາດ ແລະ ການປະຕິບັດລະບຽບຄຸ້ມຄອງສິ່ງແວດລ້ອມຂອງພາກລັດ ຈັດຕັ້ງປະຕິບັດບໍ່ມີປະສິດທິຜົນເທົ່າທີ່ຄວນ; ເຖິງແມ່ນວ່າລັດຖະບານໄດ້ມີການນຳໃຊ້ບາງມາດຕະການ ແລະ ລະບຽບການທີ່ຈຳເປັນ ເພື່ອໃຫ້ສ້າງຄວາມເຂົ້າໃຈ ແລະ ແກ້ໄຂຜົນກະທົບໃນການຈັດຕັ້ງປະຕິບັດບາງໂຄງການຂະໜາດໃຫຍ່, ສະກັດກັ້ນການຕັດໄມ້ທຳລາຍປ່າ ແລະ ການຄຸ້ມຄອງປ່າໄມ້ແບບຍືນຍົງ ແຕ່ການກວດກາຕິດຕາມການຈັດຕັ້ງປະຕິບັດ ຍັງບໍ່ທັນເຂັ້ມງວດເທົ່າທີ່ຄວນ ແລະ ອາດຈະສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການດຳລົງຊີວິດຂອງປະຊາຊົນ; ລະບຽບການສຳລັບການຄຸ້ມຄອງສິ່ງເສດເຫຼືອທີ່ມີປະສິດທິພາບ ຍັງມີຄວາມຈຳກັດ, ການຄຸ້ມຄອງສິ່ງເສດເຫຼືອ ຍັງບໍ່ທັນມີລະບົບການຈັດເກັບທີ່ດີ ແລະ ບໍ່ທັນມີກົນໄກຮັບຮອງທີ່ພຽງພໍ ໂດຍສະເພາະສິ່ງເສດເຫຼືອອັນຕະລາຍ ແລະ ມີການປົນເປື້ອນສານເຄມີ, ຍັງມີສະພາບຖິ້ມ ແລະ ຈູດຂີ້ເຫຍື້ອຊະຊາຍ.

### *4.2 ວຽກງານການເຕີບໂຕສີຂຽວ ແລະ ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ, ກວ້າງຂວາງ ແລະ ເຂົ້າສູ່ລວງເລິກ*

ໄດ້ພະຍາຍາມຊຸກຍູ້ ແລະ ສົ່ງເສີມວຽກງານເຕີບໂຕສີຂຽວ, ເຊິ່ງໃນໄລຍະ 5 ປີຜ່ານມີຜົນສຳເລັດດັ່ງນີ້:

1. ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ:

– ສຳເລັດ ການສ້າງຄາດໝາຍສູ່ຊີນ ການຫຼຸດຜ່ອນການປ່ອຍ ແລະ ການດູດຊັບທາດອາຍເຮືອນແກ້ວໃຫ້ເປັນສູນໃນປີ 2050 (Net Zero Emssion by 2050) ເພື່ອໃຫ້ບັນລຸຄາດໝາຍດັ່ງກ່າວ ຈຶ່ງໄດ້ສ້າງຍຸດທະສາດ ການພັດທະນາ ການປ່ອຍທາດອາຍເຮືອນແກ້ວຕ່ຳ (Long-Term Low Emission Development Strategy, LT-LEDS) ເພື່ອເປັນທິດທາງການພັດທະນາໃນໄລຍະກາງ ຮອດປີ 2030 ແລະ ໄລຍະຍາວ ຮອດປີ 2050 ສຳລັບ ການ

DRAFT

ຫັນປ່ຽນການພັດທະນາໄປສູ່ເສດຖະກິດທີ່ປ່ອຍທາດອາຍເຮືອນແກ້ວຕ່ຳ ເຊິ່ງຈະນຳສະເໜີລັດຖະບານພິຈາລະນາຮັບຮອງ ໃນປີ 2025.

– ຄົ້ນຄວ້າດັດຊະນີການເຕີບໂຕສີຂຽວແຫ່ງຊາດ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ ແລະ ວັດແທກຄວາມຄືບໜ້າໃນການບັນລຸບັນດາຄາດໝາຍຂອງຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ຮອດປີ 2030. ພ້ອມທັງສົ່ງເສີມການນຳໃຊ້ຫຼັກການເສດຖະກິດໝູນວຽນເຂົ້າໃນການຄຸ້ມຄອງສິ່ງເສດເຫຼືອ ເຊິ່ງໄດ້ຮັບຮອງແຜນດຳເນີນງານແຫ່ງຊາດວ່າດ້ວຍການຄຸ້ມຄອງສິ່ງເສດເຫຼືອ ປລາສະຕິກ (NPAP) ຮອດປີ 2030 ລົງວັນທີ 5 ສິງຫາ 2024; ສຳເລັດແຜນດຳເນີນງານການຜະລິດ ແລະ ການບໍລິໂພກແບບຍືນຍົງ 2023-2025 (SCP Road Map), ສຳເລັດບົດແນະນຳການຈັດຊື້-ຈັດຈ້າງສີຂາວຂອງພາກລັດ (Green Public Procurement) ເຊິ່ງ ເຄື່ອງອຸປະກອນທີ່ກຳນົດເບື້ອງຕົ້ນ ມີທໍ່ນ້ຳ PVC, ດອກໄຟ LED ແລະ ເຈ້ຍ A4 ພ້ອມທັງຈັດຕັ້ງປະຕິບັດໂຄງການຈັດຕັ້ງປະຕິບັດວຽກງານ ການຜະລິດ ແລະ ການບໍລິໂພກແບບຍືນຍົງ ຢູ່ 2 ແຂວງເປົ້າໝາຍ (ນະຄອນຫຼວງວຽງຈັນ ແລະ ແຂວງຫຼວງພະບາງ).

– ສຳເລັດການປະເມີນ ລະດັບການປ່ອຍທາດອາຍເຮືອນແກ້ວ, ຜົນກະທົບຈາກການປ່ອຍທາດອາຍເຮືອນແກ້ວ ແລະ ມາດຕະການເພື່ອຫຼຸດຜ່ອນທາດອາຍເຮືອນແກ້ວ ເພື່ອເປັນຂໍ້ມູນປະກອບເຂົ້າໃນການສ້າງຍຸດທະສາດການພັດທະນາ ທີ່ປ່ອຍທາດອາຍເຮືອນແກ້ວຕ່ຳ (LT-LEDS). ນອກຈາກນີ້, ຍັງໄດ້ປະເມີນການສຶກສາຄວາມເປັນໄປໄດ້ ຈຳນວນ 6 ໂຄງການ, ທຽບໃສ່ແຜນການ 5 ປີ ສາມາດປະຕິບັດໄດ້ 28% ຂອງຈຳນວນສິນເຊື່ອກາກບອນ ແລະ 44% ຂອງມູນຄ່າຕາມຄາດໝາຍທີ່ກຳນົດໄວ້.

– ຮ່ວມມື ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນ: ຂະແໜງ ກະສິກຳ ແລະ ປ່າໄມ້, ຂະແໜງພະລັງງານ, ຂະແໜງໂຍທາທິການ ແລະ ຂົນສົ່ງ, ການຄຸ້ມຄອງສິ່ງເສດເຫຼືອ ແລະພາກສ່ວນຕ່າງໆທີ່ກ່ຽວຂ້ອງ ເພື່ອກຳນົດລະບຽບການ ແລະ ນະໂຍບາຍໃນການຄຸ້ມຄອງສິນເຊື່ອກາກບອນ ໂດຍສະເພາະ ໄດ້ສ້າງດຳລັດ ວ່າດ້ວຍສິນເຊື່ອກາກບອນ ເພື່ອແນ່ໃສ່ຄຸ້ມຄອງ ແລະ ສົ່ງເສີມການຊື້ຂາຍ ສິນເຊື່ອກາກບອນ ໃຫ້ມີຄວາມສອດຄ່ອງກັບສະພາບປະຈຸບັນພາຍໃນປະເທດ ແລະ ສະໜັບສະໜູນຕໍ່ເປົ້າໝາຍ ຂອງແຜນງານ NDC.

– ສຳເລັດການສ້າງຄູ່ມືແນະນຳ ກ່ຽວກັບ ການຄຸ້ມຄອງ ແລະ ກຳຈັດຂີ້ເຫຍື້ອອັນຕະລາຍຈາກຊຸມຊົນ ສະບັບເລກທີ 0012/ກຊສ, ລົງວັນທີ 4 ມັງກອນ 2022; ສຳເລັດການສ້າງຄູ່ມືແນະນຳ ກ່ຽວກັບ ການຄຸ້ມຄອງ ແລະ ກຳຈັດຂີ້ເຫຍື້ອອັນຕະລາຍຈາກຄົວເຮືອນ ແລະ ສະຖານທີ່ປະກອບການ ສະບັບເລກທີ 1164/ກຊສ, ລົງວັນທີ 29 ມີນາ 2022; ສຳເລັດ ການສ້າງແຜນດຳເນີນງານ ວ່າດ້ວຍການຄຸ້ມຄອງສິ່ງເສດເຫຼືອປລາສະຕິກຂອງ ສປປ ລາວ (NPAP) ຮອດປີ 2030 ລົງວັນທີ 5 ສິງຫາ 2024;

– ໄດ້ສ້າງຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງໝໍ້ໄຟລົດໄຟຟ້າທີ່ເຊື່ອມຄຸນນະພາບ ຕາມມະຕິຂອງລັດຖະບານວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ນະໂຍບາຍການນຳໃຊ້ລົດໄຟຟ້າຢູ່ໃນ ສປປ ລາວ ສະບັບເລກທີ 08/ລບ, ລົງວັນທີ 4 ຕຸລາ 2021;

– ໄດ້ດຳເນີນການເກັບກຳຂໍ້ມູນຄຸນນະພາບນ້ຳ ປະຕິບັດໄດ້ທັງໝົດ 202 ຈຸດ ໃນສາຍນ້ຳຕ່າງໆທົ່ວປະເທດ.

2. ຂະແໜງປ່າໄມ້:

– ສຳເລັດການສ້າງຍຸດທະສາດຫຼຸດຜ່ອນທາດອາຍເຮືອນແກ້ວຈາກການທຳລາຍປ່າໄມ້, ລະດັບການປ່ອຍທາດອາຍເຮືອນ ແກ້ວທຽບຖານ (REL) ແລະ ລະບົບການຕິດຕາມ, ລາຍງານ ແລະ ພິສູດຢັ້ງຢືນ (MRV), ມາດຕະການປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ (Safeguard) ແລະ ນະໂຍບາຍການແບ່ງປັນຜົນປະໂຫຍດ; ສ້າງເງື່ອນໄຂການເຂົ້າເຖິງກອງທຶນກາກບອນໃນມູນຄ່າສັນຍາ 42 ລ້ານໂດລາສະຫະລັດ, ປະຕິບັດໄດ້ 44.21% (ແຜນການ 5ປີ: ບໍ່ໃຫ້ຫຼຸດ 95 ລ້ານໂດລາສະຫະລັດ).

– ຄົ້ນຄວ້າ ແລະ ສ້າງແຜນງານຄຸ້ມຄອງຕະຫຼາດສິນເຊື່ອກາກບອນ ພາຍໃຕ້ກອງທຶນການຮ່ວມມືກາກບອນຈາກປ່າໄມ້ (Carbon Forestry Partnership Facility) ເຊິ່ງຄາດວ່າຈະມີກາກບອນ ປະມານ 8 ລ້ານໂຕນ.

3. ຂະແໜງອຸດສະຫະກຳ ແລະ ການຄ້າ:

– ຈັດຕັ້ງປະຕິບັດໂຄງການອຸດສະຫະກຳສີຂຽວ, ສ້າງນະໂຍບາຍອຸດສະຫະກຳສີຂຽວ ແລະ ສ້າງກົນໄກການເຂົ້າເຖິງການເງິນ ເພື່ອຍົກລະດັບເຕັກໂນໂລຢີໃຫ້ມີປະສິດທິພາບດີຂຶ້ນກວ່າເກົ່າ.

4. ຂະແໜງໂຍທາທິການ ແລະ ຂົນສົ່ງ:

– ໄດ້ສົ່ງເສີມຢ່າງກວ້າງຂວາງກ່ຽວກັບພາຫະນະທີ່ແລ່ນດ້ວຍໄຟຟ້າ ເຊິ່ງເຫັນວ່າມີການຂະຫຍາຍຕົວຢ່າງຕັ້ງໜ້າ, ເຊິ່ງໃນປັດຈຸບັນ ມີລົດໄຟຟ້າ ຈຳນວນ 3,975 ຄັນ, ໃນນີ້ ລົດໄຟຟ້າທີ່ເປັນລົດໃຫຍ່ ມີ 2,202 ຄັນ ແລະ ລົດຈັກໄຟຟ້າ ມີ 1,773 ຄັນ (ຄາດວ່າຮອດປີ 2025 ຈະມີລົດໄຟຟ້າປະມານ 20,000 ຄັນ). ພ້ອມນີ້, ສຳເລັດການຕິດຕັ້ງສະຖານີສາກລົດໄຟຟ້າສາທາລະນະ ຈຳນວນ 103 ຈຸດ ໃນຂອບເຂດທົ່ວປະເທດ ແລະ ມີ 18 ບໍລິສັດ ທີ່ເປັນຕົວແທນຈຳໜ່າຍລົດນ້ຳມັນຫັນມາສົນໃຈ ແລະ ນຳເຂົ້າລົດໄຟຟ້າ ເພື່ອມາຈຳໜ່າຍພາຍໃນປະເທດ, ນອກນັ້ນ ພາກເອກະຊົນຈຳນວນໜຶ່ງ ໄດ້ຫັນມານຳໃຊ້ລົດຂົນສົ່ງໄຟຟ້າຂະໜາດນ້ອຍ ແຕ່ 2 ໂຕນລົງມາ.

– ກຳລັງດຳເນີນສຶກສາເພື່ອກໍ່ສ້າງສະຖານີສາກລົດໄຟຟ້າ ສຳລັບພາກຂົນສົ່ງຂີ້ເຫຍື້ອໃນເຂດເທດສະບານນະຄອນຫຼວງວຽງຈັນ ແລະ ແຂວງຄຳມ່ວນ, ພ້ອມນີ້ ໄດ້ມີການສຶກສາຄວາມເປັນໄປໄດ້ໂຄງການລົດເມ ແລະ ໄດ້ມີການສະເໜີໃຫ້ນຳໃຊ້ລົດເມທີ່ແລ່ນດ້ວຍໄຟຟ້າ, ສຳເລັດສຶກສາຄວາມເປັນໄປໄດ້ລະບົບປ່ຽນຖ່າຍແບັດເຕີລີລົດສຳລັບລົດ ປະເພດ 2 ລໍ້. ເຊິ່ງມາຮອດປັດຈຸບັນມີ 23 ຈຸດສາກໃນຂອບເຂດທົ່ວປະເທດ, ເທົ່າກັບ 23% ຂອງແຜນການ (ຄາດໝາຍ: ສ້າງສະຖານີສາກລົດໄຟຟ້າ/ປໍ້ານໍ້າມັນຊີວະພາບ ໃຫ້ໄດ້ຫຼາຍກວ່າ 100 ສະຖານີໃນທົ່ວປະເທດ).

– ໄດ້ສົ່ງເສີມການສ້າງຕົວເມືອງສີຂຽວ ແລະ ສະອາດ ດ້ວຍຮູບການຮ່ວມມືກັບຄູ່ຮ່ວມພັດທະນາໃນການສ້າງຍຸດທະສາດສຸຂາພິບານຕົວເມືອງແຫ່ງຊາດ, ຍຸດທະສາດການຄຸ້ມຄອງນ້ຳເສຍ, ສ້າງລະບົບບຳບັດນ້ຳເສຍ ແລະ ອື່ນໆ ຄຽງຄູ່ກັບການລະດົມການມີສ່ວນຮ່ວມຂອງພາກເອກະຊົນໃຫ້ນັບມື້ນັບຫຼາຍຂຶ້ນ.

– ໄດ້ຈັດຕັ້ງປະຕິບັດໂຄງການທົດລອງການລີໄຊໂຄສິ່ງເສດເຫຼືອຈາກໂຮງຮຽນເຊິ່ງ ສາມາດປະຕິບັດໄດ້ຫຼາຍແຫ່ງພໍສົມຄວນ ແລະ ສາມາດເກັບສິ່ງເສດເຫຼືອລີໄຊໂຄໄດ້ ຈຳນວນ 26 ໂຕນ ສ້າງມູນຄ່າໄດ້......ລ້ານກີບ ແລະ ໄດ້ບຳບັດເປັນສິ່ງເສດເຫຼືອຊີວະພາບ ເພື່ອຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວຈາກສິ່ງເສດເຫຼືອ.

– ສຳລັບວຽກງານ ກໍ່ສ້າງ ແລະ ປັບປຸງສະໜາມຂີ້ເຫຍື້ອໃຫ້ໄດ້ມາດຕະຖານ ໃນຂອບເຂດທົ່ວປະເທດ ແມ່ນບໍ່ສາມາດຈັດຕັ້ງປະຕິບັດໄດ້ ເນື່ອງຈາກໜ້າວຽກດັ່ງກ່າວ ໄດ້ສະເໜີຂໍທຶນຊ່ວຍເຫຼືອຈາກ ທະນາຄານໂລກ ຜ່ານໂຄງການ PWMP ເຊິ່ງໂຄງການດັ່ງກ່າວຈະໄດ້ຮັບອະນຸມັດໃນປີ 2025 ແລະ ສະເໜີໄປຈັດຕັ້ງປະຕິບັດວຽກດັ່ງ ກ່າວໃນແຜນ X ( 2026-20230).

5. ຂະແໜງພະລັງງານ ແລະ ບໍ່ແຮ່:

– ໄດ້ຈັດການປະມູນພະລັງງານຕາເວັນຄັ້ງທຳອິດ ໃນປີ 2022 ເພື່ອສົ່ງເສີມການຜະລິດພະລັງງານສະອາດ.

– ໃນໄລຍະຈັດຕັ້ງປະຕິບັດວາລະແຫ່ງຊາດ ໄດ້ມີມະຕິຮັບຮອງ ແລະ ປະກາດໃຊ້ນະໂຍບາຍການນຳໃຊ້ລົດໄຟຟ້າ; ສຳເລັດຂໍ້ຕົກລົງ ວ່າດ້ວຍ ກິດຈະການສາກລົດໄຟຟ້າ ເພື່ອບໍລິການ ແລະ ອອກຂໍ້ກຳນົດມາດຕະຖານການຕິດຕັ້ງໄຟຟ້າ ສຳລັບສະຖານີສາກ-ທີ່ຢູ່ອາໄສ.

– ໂຄງກາກຂຸດຄົ້ນແຮ່ທາດ ໄລຍະທົດລອງ ແມ່ນບໍ່ໄດ້ມີການສຳຫຼວດປະລິມານສະສົມແຮ່ທາດ, ບໍ່ມີຂໍ້ມູນລະອຽດ ເນື່ອງຈາກວ່າ ໂຄງການທົດລອງ ບໍ່ໄດ້ເຮັດບົດສຶກສາຄວາມເປັນໄປໄດ້ ທາງດ້ານເສດຖະກິດ-ເຕັກນິກ. ເຈົ້າຂອງໂຄງການ ມີແຕ່ເຊັນສັນຍາສຳປະທານກັບລັດຖະບານແລ້ວ ແມ່ນສາມາດເຂົ້າຂຸດຄົ້ນແຮ່ທາດໄດ້ເລີຍ. ເຖິງແມ່ນວ່າ ໃນສັນຍາໄດ້ກຳນົດຈະແຈ້ງຕໍ່ກັບພັນທະທາງສິ່ງແວດລ້ອມທີ່ເຈົ້າຂອງໂຄງການ ຕ້ອງໄດ້ປະຕິບັດພັນທະດັ່ງກ່າວ ຈຶ່ງເກີດໃຫ້ມີຜົນກະທົບທາງດ້ານສິ່ງແວດລ້ອມ.

– ສຳເລັດການສ້າງ ແລະ ປະກາດໃຊ້ຄູ່ມືແນະນຳ ກ່ຽວກັບ ການສ້າງແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ໂຄງການພັດທະນາບໍ່ແຮ່ ໃນໄລຍະທົດລອງ ສະບັບເລກທີ 4969/ກຊສ, ລົງວັນທີ 16 ກັນຍາ 2021 ແລະ ຈາກນັ້ນໄດ້ປັບປຸງມາເປັນຂໍ້ຕົກລົງຂອງລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມສະບັບເລກທີ 5995/ກຊສ, ລົງວັນທີ 23 ພະຈິກ 2022 ວ່າດ້ວຍ ການອະນຸມັດໃຫ້ນຳໃຊ້ແບບຟອມ ບົດບັນທຶກວ່າດ້ວຍການຈັດຕັ້ງປະຕິບັດມາດຕະການປ້ອງກັນ, ຫຼຸດຜ່ອນ ແລະ ແກ້ໄຂ ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໃນໂຄງການຂຸດຄົ້ນແຮ່ເຫຼັກ/ຫີນອ່ອນ (ມາໂບ້) ໃນໄລຍະເຮັດທົດລອງ;

6. ຂະແໜງວັດທະນະທຳ ແລະ ທ່ອງທ່ຽວ:

DRAFT

– ເພີ່ມທະວີຄວາມສາມາດຂອງ SMEs ໃຫ້ມີສ່ວນຮ່ວມໃນການສົ່ງເສີມການທ່ອງທ່ຽວແບບຍືນຍົງ ເປັນຕົ້ນ: ໄດ້ຮ່ວມມືກັບຫົວໜ່ວຍທຸລະກິດໃນຂົງເຂດທ່ອງທ່ຽວໃນການໄຈ້ແຍກ ແລະ ເກັບສິ່ງເສດເຫຼືອໃຫ້ຖືກວິທີກວ່າເກົ່າ ຄຽງຄູ່ກັບ ການເພີ່ມທະວີຄວາມສາມາດເກາະກ່າຍຕ້ອງໂສ້ການຜະລິດ ແລະ ການບໍລິການ.

– ໄດ້ສ້າງແຜນປະຕິບັດງານຕົວເມືອງສີຂຽວ ສໍາລັບນະຄອນຫຼວງວຽງຈັນ ແລະ ນະຄອນປາກເຊ.

7. ຂະແໜງການເງິນ ແລະ ການວາງແຜນ:

– ສໍາເລັດການສ້າງຍຸດທະສາດການເງິນ ເພື່ອສະໜັບສະໜູນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ໂດຍໄດ້ກໍານົດເອົາວຽກງານການເງິນສີຂຽວ ແລະ ຍືນຍົງ ເປັນໜຶ່ງໃນວຽກບູລິມະສິດ ເຊິ່ງໄດ້ກໍານົດມາດຕະການຈັດຕັ້ງປະຕິບັດລະອຽດ ເພື່ອຮັບປະກັນແຫຼ່ງທຶນການບັນລຸວຽກງານເຕີບໂຕສີຂຽວ ທີ່ເປັນວຽກຈຸດສຸມບູລິມະສິດຂອງ ເປົ້າໝາຍໃຫຍ່ທີ 1 ແລະ ທີ 4 ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX.

– ສໍາເລັດການປະເມີນລະດັບການປ່ອຍທາດອາຍເຮືອນແກ້ວໃນປັດຈຸບັນ ແລະ ຄາດຄະເນການປ່ອຍໃນອານາຄົດ ເພື່ອເປັນຂໍ້ມູນພື້ນຖານໃນການສ້າງຍຸດທະສາດໄລຍະຍາວ ວ່າດ້ວຍ ການພັດທະນາທີ່ປ່ອຍທາດອາຍເຮືອນແກ້ວຕໍ່າ ຂອງສປປ ລາວ (LT-LEDS).

– ສົ່ງເສີມເສດຖະກິດໝູນວຽນ ເພື່ອຫຼຸດຜ່ອນສິ່ງເສດເຫຼືອ ແລະ ມົນລະພິດທີ່ຕິດພັນກັບທຸກຂະແໜງການ ໂດຍສະເພາະຂະແໜງການທີ່ສາມາດເລີ່ມຕົ້ນຈັດຕັ້ງປະຕິບັດໄດ້ໄວ ເປັນຕົ້ນ: ການທ່ອງທ່ຽວທີ່ເປັນມິດກັບທໍາມະຊາດ, ສົ່ງເສີມການລ້ຽງໄຄໃນອ່າງເກັບນໍ້າຂອງເຂື່ອນໄຟຟ້າ ເພື່ອຜະລິດນໍ້າມັນຊີວະພາບ, ນໍ້າມັນປາ, ປຸ໋ຍ ແລະ ອື່ນໆ; ກໍ່ສ້າງ ແລະ ປັບປຸງໂຄງລ່າງພື້ນຖານສະໜາມຂີ້ເຫຍື້ອທີ່ໄດ້ມາດຕະຖານ ໃນຂອບເຂດທົ່ວປະເທດ (ໃນນີ້: ຢ່າງໜ້ອຍໃຫ້ໄດ້ ຈໍານວນ 5 ຈຸດໃນຕົວເມືອງໃຫຍ່). ປັດຈຸບັນໄດ້ມີແຜນປັບປຸງ ແລະ ກໍ່ສ້າງສະໜາມຂີ້ເຫຍື້ອຄືນ ໃໝ່ຢູ່ນະຄອນຫຼວງວຽງຈັນ 1 ຈຸດ ແລະ ສ້າງສະຖານີຄ່ຽນຖ່າຍ 2 ຈຸດ ຄາດວ່າຈະຖືກຮັບຮອງ ແລະ ເລີ່ມຈັດຕັ້ງປະຕິບັດໃນປີ 2024.

– ໄດ້ມີການສຶກສາຄົ້ນຄວ້າ ກ່ຽວກັບ ພັນທະບັດສີຂຽວ, ການລົງທຶນສີຂຽວ ທີ່ຕິດພັນກັບ Taxonomy ເພື່ອປັບປຸງຂະບວນການຕິດຕາມການລົງທຶນສີຂຽວ ແລະ ຄວາມສາມາດໃນການອອກພັນທະບັດສີຂຽວ, ໄດ້ຕົກລົງໃຫ້ກອງທຶນປົກປັກຮັກສາສິ່ງແວດລ້ອມ ໃຫ້ເປັນຄູ່ຮ່ວມງານທາງການກັບກອງທຶນປ່ຽນແປງດິນຟ້າອາກາດສາກົນ (GCF) ແລະ ກໍາລັງຄົ້ນຄວ້າໃນການສະໜັບສະໜູນໃຫ້ ທະນາຄານແຫ່ງ ສປປ ລາວ ເປັນອີກໜຶ່ງຄູ່ຮ່ວມງານຂອງ GCF.

4.2.2 ວຽກງານການແກ້ໄຂບັນຫາຕໍ່ກັບການປ່ຽນແປງດິນຟ້າອາກາດ

+ ສໍາເລັດການສ້າງແຜນງານແຫ່ງຊາດການປະກອບສ່ວນການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ (NDC) ສະບັບທີ 2 ແລະ ໄດ້ສໍາເລັດແຜນຈັດຕັ້ງປະຕິບັດແຜນງານດັ່ງກ່າວ ແລະ ສ້າງສ້າງດໍາລັດ ວ່າດ້ວຍ ສິນເຊື່ອກາກບອນ ແລະ ແຜນງານແຫ່ງຊາດ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ (NAP).

+ ຊຸກຍູ້, ສົ່ງເສີມ ການຈັດຕັ້ງປະຕິບັດກົນໄກຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ເປັນຕົ້ນ: ກົນໄກການພັດທະນາສະອາດ (CDM), ກົນໄກການຫຼຸດຜ່ອນທາດອາຍເຮືອນແກ້ວ ຈາກການທໍາລາຍປ່າໄມ້ ແລະ ເຮັດໃຫ້ປ່າເຊື່ອມໂຊມ (REDD+) ເພື່ອປະກອບສ່ວນເຂົ້າໃນການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວຂອງສາກົນ.

+ ສໍາເລັດການປັບປຸງ ຍຸດທະສາດແຫ່ງຊາດ ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ຮອດປີ 2030, ພ້ອມທັງເຊື່ອມສານວຽກງານດັ່ງກ່າວ ເຂົ້າໃນຍຸດທະສາດ ແລະ ແຜນງານຂອງຂະແໜງການ ເປັນຕົ້ນ:

1) ຂົງເຂດກະສິກໍາ ແລະ ປ່າໄມ້: ໄດ້ຄົ້ນຄວ້າ ແລະ ພັດທະນາແນວພັນພືດ (ລວມທັງ ເຂົ້າ ແລະ ພືດຜັກ) ທີ່ມີຄວາມທົນທານຕໍ່ໄພນໍ້າຖ້ວມ ແລະ ແຫ້ງແລ້ງ, ນໍາໃຊ້ເຕັກນິກການຜະລິດກະສິກໍາທີ່ທັນສະໄໝ ເຊັ່ນ: ການນໍາໃຊ້ເຮືອນຮົ່ມເຂົ້າໃນການເພາະປູກ, ການເກັບກັກນໍ້າ ແລະ ນໍາໃຊ້ນໍ້າແບບມີປະສິດທິພາບ, ເສີມສ້າງຄວາມເຂັ້ມແຂງລະບົບການບໍລິການຂໍ້ມູນອຸຕຸກະເສດ, ຍົກລະດັບຕ່ອງໂສ້ມູນຄ່າດ້ານກະສິກໍາ ແລະ ຄວາມທົນທານໃຫ້ແກ່ພື້ນຖານໂຄງລ່າງດ້ານກະສິກໍາ;

DRAFT

2) ຂົງເຂດໂຍທາທິການ ແລະ ຂົນສົ່ງ: ໄດ້ເຊື່ອມສານການເສີມສ້າງຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດເຂົ້າໃນ ຮ່າງແຜນຍຸດທະສາດການພັດທະນາຕົວເມືອງ ຮອດປີ 2030 ພ້ອມທັງພັດທະນາຄູ່ມືແນະນຳການພັດທະນາຕົວເມືອງແບບຍືນຍົງດ້ານສິ່ງແວດລ້ອມ. ໃນປະຈຸບັນໄດ້ມີການລົງທຶນເຂົ້າໃນຫຼາຍໂຄງການເພື່ອຫຼຸດຜ່ອນມົນລະພິດ ແລະ ການປ່ອຍທາດອາຍເຮືອນແກ້ວ ເປັນຕົ້ນ: ໂຄງການນຳໃຊ້ລົດໄຟ ລາວ-ຈີນ ແລະ ລົດເມໄຟຟ້າສາທາລະນະ, ການປະກາດໃຊ້ນະໂຍບາຍການນຳໃຊ້ລົດໄຟຟ້າ ແລະ ອື່ນໆ;

3) ຂົງເຂດພະລັງງານ: ໄດ້ມີການປະເມີນຄວາມບອບບາງ ແລະ ສ້າງແຜນດຳເນີນງານດ້ານຄວາມທົນທານ, ສ້າງຄູ່ມືແນະນຳກ່ຽວກັບຄວາມປອດໄພຂອງເຂື່ອນ ແລະ ແຜນດຳເນີນງານກ່ຽວກັບສະຖານະການສຸກເສີນ ເຊິ່ງເປັນການສ້າງຄວາມທົນທານ ແລະ ປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ;

4) ຂົງເຂດສາທາລະນະສຸກ: ໄດ້ສ້າງ ແລະ ຮັບຮອງເອົາຍຸດທະສາດດ້ານການປັບຕົວຂອງຂະແໜງການສາທາລະນະສຸກຕໍ່ການປ່ຽນແປງດິນຟ້າອາກາດ ປີ 2018-2025 ແລະ ແຜນການຈັດຕັ້ງປະຕິບັດປີ 2018-2020, ສ້າງຄູຝຶກໃນຫົວຂໍ້ການປ່ຽນແປງດິນຟ້າອາກາດ ແລະ ຜົນກະທົບຕໍ່ສຸຂະພາບເພື່ອຝຶກອົບຮົມໃຫ້ແກ່ພະນັກງານຂອງຂະແໜງການສາທາລະນະສຸກ ໃນ 7 ແຂວງ, ສ້າງເຄື່ອງມືສື່ສານ ເພື່ອເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ ແລະ ຜົນກະທົບຕໍ່ສຸຂະພາບໃຫ້ແກ່ມວນຊົນໄດ້ຮັບຮູ້ ແລະ ເຂົ້າໃຈຂຶ້ນຕື່ມ;

5) ຂົງເຂດການສຶກສາ: ໄດ້ຮັບຮອງເອົາຍຸດທະສາດແຫ່ງຊາດດ້ານການສຶກສາ ແລະ ສ້າງຈິດສຳນຶກດ້ານສິ່ງແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດ (2018 - 2025) ແລະ ວິໄສທັດຮອດປີ 2030. ຄະນະວິທະຍາສາດສິ່ງແວດລ້ອມ, ມະຫາວິທະຍາໄລແຫ່ງຊາດ ໄດ້ມີການສິດສອນວິຊາການປ່ຽນແປງດິນຟ້າອາກາດ ແລະ ວິຊາອື່ນໆ ທີ່ກ່ຽວຂ້ອງກັບການປ່ຽນແປງດິນຟ້າອາກາດ.

\+ ສຳເລັດການປະເມີນ ແລະ ສ້າງແຜນທີ່ຄວາມສ່ຽງ ແລະ ຄວາມບອບບາງຈາກການປ່ຽນແປງດິນຟ້າອາກາດ (ໃນລະດັບຕົ້ນ) ໃນ 148 ເມືອງ ຂອງ 17 ແຂວງ ແລະ ນະຄອນຫຼວງວຽງຈັນ ແລະ ໄດ້ສ້າງຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ໂດຍນຳໃຊ້ທ່າແຮງທຳມະຊາດ ແລະ ລະບົບນິເວດ ເພື່ອຊ່ວຍຫຼຸດຜ່ອນໄພນ້ຳຖ້ວມໃນຕົວເມືອງ ໃນ 7 ຕົວເມືອງ ຂອງ 6 ແຂວງ ທີ່ມີຄວາມສ່ຽງຕໍ່ການປ່ຽນແປງດິນຟ້າອາກາດ.

\+ ຈັດຕັ້ງປະຕິບັດວຽກງານ ສ້າງຄວາມເຂັ້ມແຂງ, ໂຄສະນາເຜີຍແຜ່ ແລະ ສ້າງຈິດສຳນຶກ ໃຫ້ຂະແໜງການທີ່ກ່ຽວຂ້ອງ ໃນຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອຍົກລະດັບ ການຈັດຕັ້ງປະຕິບັດ ວຽກງານ ການປ່ຽນແປງດິນຟ້າອາກາດໄດ້ 6 ຄັ້ງ; ສ້າງປຶ້ມຄູ່ມື ການຄຸ້ມຄອງການປ່ຽນແປງດິນຟ້າອາດ ຢູ່ ສປປ ລາວ (ສຳລັບລະດັບຜູ້ຕັດສິນບັນຫາ) ແລະ ສ້າງປຶ້ມປະມວນຄຳສັບເຕັກນິກວິຊາການ ກ່ຽວກັບ ວຽກງານການປ່ຽນແປງດິນຟ້າອາກາດ ແລະ ແຈກຢາຍໃຫ້ຂະແໜງການທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ.

\+ສິ່ງທ້າທາຍ: ວຽກງານການຄຸ້ມຄອງການປ່ຽນແປງດິນຟ້າອາກາດ ໄດ້ມີການກຳນົດຄາດໝາຍທີ່ສູງ ໂດຍສະເພາະຄາດໝາຍການປ່ອຍທາດອາຍເຮືອນແກ້ວ ແລະ ເພີ່ມການດູດຊັບທາດອາຍເຮືອນແກ້ວໃຫ້ເປັນສູນ ໃນປີ 2050 (Net Zero Emission Plan 2050) ແຕ່ການພັດທະນາຂອງຂະແໜງການຕ່າງໆ ຍັງມີຫຼາຍດ້ານບໍ່ທັນສະໜັບສະໜູນໃຫ້ແກ່ການຈັດຕັ້ງປະຕິບັດຄາດໝາຍດັ່ງກ່າວ; ການສົ່ງເສີມການຊື້-ຂາຍກາກບອນຈາກປ່າໄມ້ ຍັງເປັນສິ່ງທ້າທາຍ ເນື່ອງມາຈາກສະພາບການທຳລາຍປ່າໄມ້ ແລະ ໄຟໄໝ້ປ່າໃນເຂດປ່າສະຫງວນຫຼາຍແຫ່ງທີ່ເກີດຂຶ້ນໃນແຕ່ລະປີ; ການເຂົ້າເຖິງແຫຼ່ງກອງທຶນສີຂຽວ ຍັງຈຳກັດ.

### *4.3 ວຽກງານເພີ່ມທະວີການປ້ອງກັນ, ການຄວບຄຸມ ແລະ ການຟື້ນຟູຫຼັງໄພພິບັດຕ່າງໆ*

ສປປ ລາວ ເປັນໜຶ່ງໃນບັນດາປະເທດກຳລັງພັດທະນາທີ່ມີຄວາມບອບບາງຕໍ່ການປ່ຽນແປງດິນຟ້າອາກາດ, ປະຊາຊົນຍັງປະເຊີນໜ້າກັບຄວາມສ່ຽງທີ່ເກີດຈາກການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດຕ່າງໆ ໂດຍສະເພາະໃນກຸ່ມຄົນທຸກຍາກ ແລະ ດ້ອຍໂອກາດ. ໃນແຕ່ລະປີຄາດວ່າຈະມີປະຊາກອນທີ່ມີຄວາມສ່ຽງໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມ ເພີ່ມຂຶ້ນຫຼາຍກວ່າ 80,000 ຄົນ ພາຍໃນປີ 2030; ການປ່ຽນແປງຂອງອຸນຫະພູມຢ່າງໄວວາ, ປະລິມານນ້ຳຝົນ, ໄພແຫ້ງແລ້ງ, ໄພນ້ຳຖ້ວມ ແລະ ດິນເຊາະເຈື່ອນ ເຊິ່ງໄດ້ສ້າງຄວາມເສຍຫາຍອັນຫຼວງຫຼາຍໃຫ້ແກ່ຜົນຜະລິດກະສິກຳ ແລະ ການປ່ຽນແປງຂອງດິນຟ້າອາກາດ ອາດສົ່ງຜົນຕໍ່ການລະບາດພະຍາດລະດູການ ໂດຍສະເພາະພະຍາດໄຂ້ເລືອດອອກເພີ່ມຂຶ້ນ.

DRAFT

ລັດຖະບານໄດ້ເພີ່ມທະວີການປ້ອງກັນ, ການຮັບມື ແລະ ການຟື້ນຟູຫຼັງໄພພິບັດ ໂດຍໄດ້ເຊື່ອມສານຍຸດທະສາດໄພພິບັດແຫ່ງຊາດເຂົ້າກັບແຜນງານຂອງຂະແໜງການ ເພື່ອສ້າງຄວາມເຂັ້ມແຂງ ແລະ ສ້າງຄວາມທົນທານໃນການຮັບມືກັບໄພພິບັດຕ່າງໆທີ່ເກີດຂຶ້ນ. ໂດຍສະເພາະສຸມໃສ່ການປັບປຸງລະບົບຂໍ້ມູນຂ່າວສານ ແລະ ການແຈ້ງເຕືອນລ່ວງໜ້າ ໃຫ້ມີຄວາມຊັດເຈນ ແລະ ທັນກັບສະພາບການ ເພື່ອຫຼຸດຜ່ອນຜົນກະທົບດ້ານຕ່າງໆ ແລະ ສາມາດເຝົ້າລະວັງ ແລະ ເຕືອນໄພໄດ້ຢ່າງທັນການ. ຜ່ານການປະຕິບັດວຽກຈຸດສຸມບູລິມະສິດດັ່ງກ່າວ ເຮັດໃຫ້ການຈັດຕັ້ງປະຕິບັດບັນດາຄາດໝາຍການຫຼຸດຜ່ອນຄວາມສ່ຽງໄພພິບັດ ມີຄວາມຄືບໜ້າ ແລະ ມີທ່າອ່ຽງຈະບັນລຸຕາມແຜນການທີ່ກຳນົດໄວ້ ດັ່ງນີ້:

- ສ້າງ ແລະ ຍົກລະດັບຕາໜ່າງສະຖານີອຸຕຸນິຍົມ ແລະ ອຸທົກກະສາດໃນຂອບເຂດທົ່ວປະເທດ ໂດຍໄດ້ປັບປຸງລະບົບທັນເປັນສະຖານີອັດຕະໂນມັດທີ່ທັນສະໄໝ ເຊິ່ງໄດ້ສຳເລັດສ້າງສະຖານີອຸຕຸນິຍົມໃໝ່ ຈຳນວນ 47 ສະຖານີ (ໃນນີ້, ກໍ່ສ້າງໃໝ່ 41 ສະຖານີ ແລະ ປັບປຸງ 6 ສະຖານີ), ເທົ່າກັບ 104% ຂອງແຜນການ 5ປີ (ແຜນການ 5ປີ: ໃຫ້ໄດ້ 45 ແຫ່ງ) ແລະ ສະຖານີອຸທົກກະສາດໃໝ່ ສຳເລັດ 77 ສະຖານີ (ໃນນີ້, ກໍ່ສ້າງໃໝ່ 74 ສະຖານີ ແລະ ປັບປຸງ 3 ສະຖານີ), ເທົ່າກັບ 308% ຂອງແຜນການ 5ປີ (ແຜນການ 5ປີ: ໃຫ້ໄດ້ 25 ແຫ່ງ). ນອກນີ້, ໄດ້ສຳເລັດການສ້າງ ແລະ ຕິດຕັ້ງ ພ້ອມທັງມອບ-ຮັບສະຖານີດາວທຽມຕິດຕາມເສັ້ນທາງເດີນຂອງພະຍຸ ຈຳນວນ 1 ສະຖານີ ທີ່ນະຄອນຫຼວງວຽງຈັນ; ສຳເລັດການສ້າງສູນຂໍ້ມູນຂ່າວສານແຜ່ນດິນໄຫວແຫ່ງຊາດ 1 ແຫ່ງ ຄຽງຄູ່ກັບການສ້າງ ແລະ ປັບປຸງສະຖານີວັດແທກແຜ່ນດິນໄຫວ ຈຳນວນ 22 ສະຖານີ (ໃນນີ້, ກໍ່ສ້າງໃໝ່ 19 ສະຖານີ ແລະ ປັບປຸງ 3 ສະຖານີ); ແລະ ສຳເລັດການສ້າງສະຖານີອຸຕຸກະເສດ ຈຳນວນ 15 ສະຖານີ ພ້ອມທັງສ້າງລະບົບພະຍາກອນອຸຕຸກະເສດແບບທັນສະໄໝ ດ້ວຍ Application ໂດຍສະເພາະແມ່ນລະບົບ LaCsa ເຊິ່ງປັດຈຸບັນແມ່ນສາມາດລາຍງານຂໍ້ມູນຂ່າວສານສະພາບອຸຕຸກະເສດໄດ້ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ.
- ໄດ້ປັບປຸງລະບົບຂໍ້ມູນ-ຂ່າວສານດ້ານອຸຕຸນິຍົມ, ອຸທົກກະສາດ, ແຜ່ນດິນໄຫວ ແລະ ການແຈ້ງເຕືອນລ່ວງໜ້າ ໃຫ້ມີຄວາມຖືກຕ້ອງ, ຊັດເຈນ ແລະ ທັນກັບສະພາບການ ເຊິ່ງໄດ້ຂະຫຍາຍຕາໜ່າງສະຖານີອຸຕຸນິຍົມ ແລະ ອຸທົກກະສາດ ຄວບຄຸມໃນຂອບເຂດທົ່ວປະເທດ ໄດ້ທັງໝົດ 180 ສະຖານີ ເຊິ່ງ ປະຈຸບັນສະຖານີອຸຕຸນິຍົມ ມີທັງໝົດ 63 ສະຖານີ ແລະ ສະຖານີອຸທົກກະສາດ 117 ສະຖານີ ໃນຂອບເຂດທົ່ວປະເທດ ໂດຍໄດ້ປັບປຸງເພື່ອຍົກລະດັບເປັນສະຖານີແບບທັນສະໄໝທັງໝົດ;
- ໄດ້ສຳເລັດສ້າງແຜນແມ່ບົດແຫ່ງຊາດວ່າດ້ວຍລະບົບພະຍາກອນ ແລະ ແຈ້ງເຕືອນໄພນ້ຳຖ້ວມລ່ວງໜ້າ; ສຳເລັດສ້າງແຜນດຳເນີນງານແຈ້ງເຕືອນໄພລ່ວງໜ້າສຳລັບທຸກຄົນແຕ່ປີ 2024-2027; ສຳເລັດການສ້າງສະຖານີດາວທຽມຕິດຕາມເສັ້ນທາງເດີນຂອງພາຍຸ ຈຳນວນ 1 ສະຖານີ ແລະ ສະຖານີແຜ່ນດິນໄຫວ 4 ສະຖານີ;
- ໄດ້ພັດທະນາແບບຈຳລອງ ແລະ ແຜນທີ່ສ່ຽງໄພນ້ຳຖ້ວມ ຢູ່ອ່າງຮັບນ້ຳຕ່າງໆ ຈຳນວນ 8 ອ່າງ ຄື: ສຳເລັດປັບປຸງແບບຈຳລອງນ້ຳງື່ມ, ເຊບັ້ງໄຟ, ເຊບັ້ງຫຽງ, ເຊໂດນ, ສຳເລັດສ້າງແບບຈຳລອງນ້ຳຖ້ວມສູອ່າງນ້ຳ ນ້ຳກໍ ເມືອງໄຊ, ແຂວງອຸດົມໄຊ; ສຳເລັດແບບຈຳລອງນ້ຳນ້ຳຖ້ວມນ້ຳຮຸ່ງ, ແຂວງໄຊຍະບູລີ, ນ້ຳຄານ ແລະ ນ້ຳອູ. ພ້ອມນັ້ນ, ກໍສັງລວມຂໍ້ມູນທີ່ນຳໃຊ້ໃນການສ້າງແບບຈຳລອງເຊັ່ນ: ປະລິມານການໄຫຼຂອງນ້ຳ, ລະດັບນ້ຳ, ຂໍ້ມູນພູມສາດ ແລະ ໜ້າຕັດແມ່ນ້ຳ, ການປ່ອຍນ້ຳ, ລະດັບນ້ຳໜ້າເຂື່ອນ ແລະ ຫຼັງເຂື່ອນ ເພື່ອເປັນຂໍ້ມູນຮັບໃຊ້ເຂົ້າໃນການສ້າງແບບຈຳລອງນ້ຳຕ່າງໆ;
- ສ້າງກອງທຶນຄຸ້ມຄອງໄພພິບັດຂັ້ນສູນກາງ ສຳເລັດ 1 ແຫ່ງ (ແຜນການ 5ປີ: 1 ແຫ່ງ); ຊຸກຍູ້ສ້າງກອງທຶນຄຸ້ມຄອງໄພພິບັດຂັ້ນແຂວງ-ນະຄອນຫຼວງວຽງຈັນ ໄດ້ 14 ແຫ່ງ ເທົ່າກັບ 76.47% ຂອງແຜນການ (ແຜນການ 5ປີ: 18 ແຫ່ງ) ແລະ ຂັ້ນເມືອງ ໄດ້ 87 ແຫ່ງ, ລື່ນແຜນການ 5 ປີ 55.35% (ແຜນການ 5 ປີ: 56 ແຫ່ງ).
- ຊຸກຍູ້ ແລະ ປັບປຸງຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນແຂວງ ໄດ້ 18 ແຂວງ/ນະຄອນຫຼວງວຽງຈັນ ສຳເລັດຕາມແຜນການ (ແຜນການ 5ປີ: ໃຫ້ສຳເລັດ 17 ແຂວງ ແລະ 1 ນະຄອນຫຼວງ); ຂັ້ນເມືອງ ໄດ້ 177 ເມືອງ ແລະ ຂັ້ນບ້ານ ໄດ້ 2,139 ບ້ານ ພ້ອມທັງສ້າງຄວາມເຂັ້ມແຂງໃຫ້ຄະນະກຳມະການດັ່ງກ່າວ ໄດ້ 2,681 ເທື່ອຄົນ, ເປັນຍິງ 525 ເທື່ອຄົນ; ສ້າງຍຸດທະສາດຫຼຸດຜ່ອນຄວາມສ່ຽງໄພພິບັດຂັ້ນສູນກາງ ໄດ້ 1 ສະບັບ ແລະ ແຜນກຽມພ້ອມຕອບ ໂຕ້ໄພພິບັດ ໄດ້ 1 ສະບັບ.

DRAFT

- ຊຸກຍູ້ສ້າງຍຸດທະສາດຫຼຸດຜ່ອນຄວາມສ່ຽງໄພພິບັດຂັ້ນແຂວງ ໄດ້ 6 ແຂວງ ແລະ ແຜນກຽມພ້ອມ ແລະ ຕອບໂຕ້ໄພພິບັດ ໄດ້ 15 ແຂວງ, 93 ເມືອງ ແລະ 49 ບ້ານ (ແຜນການ 5ປີ: ໃຫ້ໄດ້ 10 ແຂວງ, 20 ເມືອງ ແລະ 80 ບ້ານ).

- ຈັດຝຶກຊ້ອມການຕອບໂຕ້ຊ່ວຍເຫຼືອໄພພິບັດສຸກເສີນລະດັບຊາດ ໄດ້ 1 ຄັ້ງ ເທົ່າກັບ 50% ຂອງແຜນການ (ແຜນການ 5 ປີ: ລະດັບຊາດ 2 ຄັ້ງ).

- ສ້າງທີມງານປະເມີນ ແລະ ຊ່ວຍເຫຼືອສຸກເສີນຂັ້ນສູນກາງ ໄດ້ 22 ຄົນ ແລະ ຂັ້ນແຂວງ ໄດ້ 75 ຄົນ (ແຜນການ 5ປີ: ຂັ້ນສູນກາງ 30 ຄົນ, ຂັ້ນແຂວງ 100 ຄົນ ແລະ ຂັ້ນເມືອງ 300 ຄົນ); ໄດ້ປະເມີນຄວາມເສຍຫາຍ ແລະ ຄວາມຕ້ອງການຟື້ນໄລຍະສັ້ນ ແລະ ໄລຍະຍາວ ຈາກຜົນກະທົບໄພພິບັດທໍາມະຊາດຕ່າງໆຢູ່ 16 ແຂວງ, 65 ເມືອງ ແລະ 1,339 ບ້ານ, ເຊິ່ງມີຄວາມຕ້ອງການງົບປະມານທັງໝົດ 552 ຕື້ກວ່າກີບ.

## 5. ເປົ້າໝາຍທີ 5: ການສ້າງໂຄງລ່າງພື້ນຖານທີ່ມີຄວາມເຂັ້ມແຂງ, ນໍາໃຊ້ທ່າແຮງ, ກາລະໂອກາດທີ່ຕັ້ງ, ເຂົ້າຮ່ວມຂະບວນການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນຢ່າງເປັນເຈົ້າການ

### *5.1 ວຽກງານພັດທະນາໂຄງລ່າງພື້ນຖານທີ່ສາມາດເຊື່ອມໂຍງ-ເຊື່ອມຈອດພາຍໃນ, ພາກພື້ນ ແລະ ສາກົນ ເພື່ອເອື້ອອໍານວຍໃຫ້ແກ່ການຜະລິດ, ການບໍລິການ, ການຄ້າ ແລະ ການລົງທຶນ*

#### *5.1.1 ການເຊື່ອມຈອດທາງບົກ, ທາງນໍ້າ, ທາງອາກາດ ແລະ ທາງລາງ*

- ໃນໄລຍະ 5 ປີຜ່ານມາ, ໄດ້ສຸມໃສ່ກໍ່ສ້າງ-ຍົກລະດັບ-ຟື້ນຟູ ແລະ ບູລະນະສ້ອມແປງໂຄງລ່າງພື້ນຖານຄົມມະນາຄົມຂົນສົ່ງ ຂອງ ສປປ ລາວ ທີ່ເປັນຕາໜ່າງນອນໃນບັນດາແລວເສດຖະກິດ ຕາມຄວາມສາມາດຂອງງົບປະມານ ແລະ ມີສ່ວນຮ່ວມຂອງທຸກພາກສ່ວນໃນສັງຄົມ ເປັນຕົ້ນ: ໄດ້ສໍາເລັດການກໍ່ສ້າງເສັ້ນທາງລົດໄຟລາວ-ຈີນ ແລະ ເປີດການນໍາໃຊ້ຢ່າງເປັນທາງການ ໃນວັນທີ 02 ທັນວາ 2021 ແລະ ໄດ້ປະກອບສິ່ງອໍານວຍຄວາມສະດວກຕ່າງໆຢູ່ບັນດາສະຖານີທີ່ໃຫ້ບໍລິການ 11 ສະຖານີ, ປັດຈຸບັນ ສາມາດເປີດໃຫ້ບໍລິການຂົນສົ່ງລະຫວ່າງປະເທດ ນະຄອນຫຼວງວຽງຈັນ-ຄຸນມິງ (ສປ ຈີນ) ໃນວັນທີ 13 ເມສາ 2023; ສໍາເລັດໂຄງການກໍ່ສ້າງທາງລົດໄຟ ລາວ-ໄທ ໄລຍະ 2 (ຕອນທີ 2 ທ່ານາແລ້ງ-ຄໍາສະຫວາດ) ຄວາມຍາວ 7,05 ກມ, ໄດ້ມອບ-ຮັບ ແລະ ເປີດບໍລິການຢ່າງເປັນທາງການ ໃນວັນທີ 20 ກໍລະກົດ 2024 ແລະ ເປີດບໍລິການແລ່ນລົດໄຟລະຫວ່າງປະເທດ ແຕ່ນະຄອນຫຼວງວຽງຈັນ-ບາງກອກ (ປະເທດໄທ), ພ້ອມດຽວກັນນີ້, ສໍາເລັດການກໍ່ສ້າງຈຸດຄ່ຽນຖ່າຍລາງສູ່ລາງ ລົດໄຟລາວ-ຈີນ ແລະ ລົດໄຟລາວ-ໄທ ຢູ່ທ່ານາແລ້ງ.

- ພັດທະນາທ່າບົກ 9 ແຫ່ງ, ໃນນີ້: ສາມາດເປີດນໍາໃຊ້ແລ້ວ 4 ແຫ່ງ (2025) ຄື: ທ່າບົກສະຫວັນນະເຂດ, ທ່າບົກຈໍາປາສັກ ແລະ ທ່າບົກທ່ານາແລ້ງ ນະຄອນຫຼວງວຽງຈັນ (ຄາດຄະເນທ້າຍປີ 2025 ຈະສໍາເລັດໂຄງການກໍ່ສ້າງທ່າບົກທ່າແຂກ, ແຂວງຄໍາມ່ວນ ປັດຈຸບັນມີຄວາມຄືບໜ້າ 65%); ໄດ້ປັບປຸງການດໍາເນີນວຽກງານໂລຊິດສະຕິກ ຂອງ ສປປ ລາວ ໃຫ້ສະດວກວ່ອງໄວ ຄາດໝາຍແມ່ນເພື່ອໃຫ້ດັດສະນີການດໍາເນີນວຽກງານໂລຊິດສະຕິກຂອງ ສປປ ລາວ ເພີ່ມຂຶ້ນ ຕາມການປະເມີນຂອງທະນາຄານໂລກ ໂດຍເອົາໃຈໃສ່ສ້າງເງື່ອນໄຂ ແລະ ນະໂຍບາຍຕ່າງໆ ເພື່ອຊຸກຍູ້ສົ່ງເສີມຜູ້ປະກອບການຂົນສົ່ງພາຍໃນໃຫ້ເຂັ້ມແຂງ ເຮັດໃຫ້ລາຄາຂົນສົ່ງຖືກລົງ ແລະ ສາມາດແຂ່ງຂັນກັບສາກົນໄດ້ ໂດຍສະເພາະໄດ້ສ້າງ ແລະ ປັບປຸງນິຕິກໍາຕ່າງໆ ເປັນຕົ້ນ: ສໍາເລັດໂຄງສ້າງການຄິດໄລ່ລາຄາຫົວໜ່ວຍຂົນສົ່ງໂດຍສານປະຈໍາທາງ ແລະ ສິນຄ້າທາງບົກ ສະບັບເລກທີ 1387/ຫສນຍ; ສໍາເລັດການອອກດໍາລັດວ່າດ້ວຍທ່າບົກ (ສະບັບປັບປຸງ) ສະບັບເລກທີ 298/ລບ ເຊິ່ງເຫັນວ່າ ດັດສະນີການດໍາເນີນວຽກງານໂລຊິດສະຕິກຂອງ ສປປ ລາວ ຫຼຸດລົງຈາກ 2.7 (ອັນດັບທີ 87, ໃນປີ 2018) ມາເປັນ 2.4 (ອັນດັບທີ 115, ໃນປີ 2022).

- ສໍາເລັດການຟື້ນຟູເສັ້ນທາງສາຍຫຼັກ ທີ່ເປັນເສັ້ນທາງຫຼວງອະນຸພາກພື້ນ ແລະ ເສັ້ນທາງຫຼວງອາຊຽນ ເຊິ່ງໄດ້ຮັບການຕົກລົງ ແລະ ອະນຸມັດແຫຼ່ງທຶນຈາກບັນດາຄູ່ຮ່ວມພັດທະນາ, ໃນໄລຍະ 5 ປີຜ່ານມາ (ຮອດເດືອນມິຖຸນາ 2025) ສາມາດຍົກລະດັບເສັ້ນທາງໄດ້ 443.89 ກມ ເທົ່າກັບ 80.70% ຂອງແຜນການ 5ປີ (ແຜນການ 5ປີ: ໃຫ້ໄດ້ 550 ກມ) ເປັນຕົ້ນ: ❶ ທາງເລກທີ 13 ເໜືອ (ສີເກີດ-ໂພນໂຮງ, ຍາວ 64 ກມ); ❷ ທາງເລກທີ 13 ໃຕ້ (ຊ່ວງນະຄອນຫຼວງວຽງຈັນ [ກມ21]-ທ່າແຂກ [ກມ346], ຍາວ 325 ກມ; ❸ ທາງເລກທີ 13 ໃຕ້ ກມ21-ກມ71 ແລະ ທາງເລກ 13 ເໜືອ (ສີໄຄ-ສີເກີດ); ❹ ສໍາເລັດຟື້ນຟູທາງຫຼວງແຫ່ງຊາດ ເລກ 9 ຊ່ວງແຕ່ສະຫວັນນະເຂດ-ເຊໂນ-

DRAFT

ດົງເຫງັນ ລວງຍາວ 79.9 ກມ; ❺ ສຳເລັດໂຄງການກໍ່ສ້າງທາງເລກ 11 ແຕ່ສິ້ນຂົວນ້ຳສັງ ເມືອງສັງທອງ ນະຄອນຫຼວງວຽງຈັນ ຫາ ບ້ານຄົກເຂົ້າດໍ, ເມືອງຊະນະຄາມ, ແຂວງວຽງຈັນ ລວງຍາວທັງໝົດ 76.90 ກມ ແລະ ເປີດນຳໃຊ້ເສັ້ນທາງດັ່ງກ່າວຢ່າງເປັນທາງການໃນວັນທີ 20 ກຸມພາ 2024.

- ໄດ້ເລີ່ມຈັດຕັ້ງປະຕິບັດໂຄງການປັບປຸງຍົກລະດັບ ❶ ເສັ້ນທາງເລກ 2E (ເມືອງໄຊ-ເມືອງຂວາ ລວງຍາວ 100 ກມ) ແລະ ❷ ເສັ້ນທາງເລກ 2W (ເມືອງໄຊ-ປາກແບ່ງ ລວງຍາວ 136 ກມ) ພາຍໃຕ້ໂຄງການພັດທະນາຕາມແລວທາງເສດຖະກິດອາຊີຕາເວັນອອກສ່ຽງໃຕ້ ເພື່ອການເຊື່ອມຈອດ-ເຊື່ອມໂຍງ (Southeast Asia Regional Econamic Corridor and Connectivity Project-SEARECC), ❸ ທາງເລກ 12 (ທ່າແຂກ-ນາເພົ້າ ຊາຍແດນລາວ-ຫວຽດນາມ) ລວງຍາວ 146 ກມ; ❹ ທາງເລກ 13 ໃຕ້ ແຕ່ ກມ 21 - ກມ 71, ລວງຍາວ 50 ກມ.

- ໄດ້ເອົາໃຈໃສ່ຕິດຕາມ ແລະ ຊຸກຍູ້ໂຄງການກໍ່ສ້າງທາງດ່ວນທີ່ເປັນບູລິມະສິດ ແລະ ມີເງື່ອນໄຂຄົບຖ້ວນເປັນຕົ້ນ: ທາງດ່ວນ ແຕ່ນະຄອນຫຼວງວຽງຈັນຫາ ບໍ່ເຕັນ (ຊ່ວງທີ່ 2 ແຕ່ວັງວຽງຫາຫຼວງພະບາງ ລວງຍາວ 136.90 ກມ; ຊ່ວງທີ 3 ຫຼວງພະບາງຫາອຸດົມໄຊ ລວງຍາວ 116.58 ກມ ແລະ ຊ່ວງທີ 4 ອຸດົມໄຊຫາບໍ່ເຕັນ ລວງຍາວ 83.08 ກມ); ທາງດ່ວນ ແຕ່ບໍ່ເຕັນ, ແຂວງຫຼວງນ້ຳທາ ຫາ ຫ້ວຍຊາຍ, ແຂວງບໍ່ແກ້ວ ລວງຍາວ 176.29 ກມ; ທາງດ່ວນ ແລວທາງຕັດໃໝ່ແຕ່ນະຄອນຫຼວງວຽງຈັນ-ແຂວງໄຊສົມບູນ-ແຂວງຊຽງຂວາງ-ແຂວງຫົວພັນ ຫາຊາຍແດນລາວ-ຫວຽດນາມ (ດ່ານສາກົນນ້ຳໂສຍ) ຊາຍແດນລາວ-ຫວຽດນາມ ລວງຍາວ 400 ກມ.

- ສຳເລັດການກໍ່ສ້າງໂຄງການຂົວຂ້າມນ້ຳຂອງ 2 ແຫ່ງ ເຊັ່ນ: ຂົວມິດຕະພາບລາວ-ໄທ ແຫ່ງທີ V (ປາກຊັນ-ບຶງການ) ແລະ ໂຄງການກໍ່ສ້າງຂົວຂ້າມນ້ຳຂອງກ້ອນຕື້ນ-ຫ້ວຍແກ້ວ, ແຂວງບໍ່ແກ້ວ.

- ໄດ້ສຸມໃສ່ກໍ່ສ້າງ ແລະ ຕິດຕັ້ງສະຖານີຊັ່ງນ້ຳໜັກ ແລະ ອຸປະກອນຊັ່ງຊັ່ງນ້ຳໜັກ ເພື່ອຄຸ້ມຄອງນ້ຳໜັກລົດບັນທຸກ ຕາມເສັ້ນທາງເຊື່ອມຈອດກັບບັນດາປະເທດໃນພາກພື້ນໃຫ້ມີປະສິດທິພາບສູງຂຶ້ນ ເຊິ່ງໄດ້ສຳເລັດການກໍ່ສ້າງສະຖານີຕິດຊັ່ງນ້ຳໜັກທັນສະໄໝ ຈຳນວນ 1 ແຫ່ງ ຢູ່ບ້ານນາຫຼວງ ເສັ້ນທາງ R3 ແຂວງບໍ່ແກ້ວ ແລະ ປັບປຸງ-ສ້ອມແປງສະຖານີຕິດຊັ່ງນ້ຳໜັກ ສຳເລັດຈຳນວນ 17 ແຫ່ງ. ຄຽງຄູ່ກັນນັ້ນ, ກໍໄດ້ປັບປຸງກົນໄກ ແລະ ນິຕິກຳຄຸ້ມຄອງນ້ຳໜັກລົດບັນທຸກໃຫ້ດີຂຶ້ນ ເປັນຕົ້ນ: ສຳເລັດການອອກຂໍ້ຕົກລົງວ່າດ້ວຍການອະນຸຍາດນ້ຳໜັກລວມສູງສຸດຂອງລົດບັນທຸກ, ສຳເລັດການສ້າງພາລະບົດບາດຂອງໜ່ວຍງານສະຖານີຕິດຊັ່ງນ້ຳໜັກລົດບັນທຸກ ແລະ ອອກແຈ້ງການການຈັດຕັ້ງປະຕິບັດວຽກງານຄຸ້ມຄອງນ້ຳໜັກລົດບັນທຸກ ແລະ ມາດຕະການຕໍ່ຜູ້ລະເມີດ.

- ໄດ້ເອົາໃຈໃສ່ວຽກງານການກໍ່ສ້າງປ້ອງກັນຕາຝັ່ງຕາມແຄມແມ່ນ້ຳຂອງ ແລະ ນ້ຳເຫືອງ ທີ່ເປັນຊາຍແດນລະຫວ່າງປະເທດ ແລະ ນ້ຳສາຂາ ທີ່ຕິດພັນກັບການປົກປັກຮັກສາເຂດນ້ຳແດນດິນ ແລະ ອະທິປະໄຕຂອງຊາດເປັນຕົ້ນ: ສຳເລັດການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນ ຈຳນວນ 5 ໂຄງການ ລວງຍາວທັງໝົດ 3.38 ກມ ເຊັ່ນ: ❶ ໂຄງການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນເທດສະບານເມືອງປາກລາຍ, ແຂວງໄຊຍະບູລີ; ❷ ໂຄງການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນບ້ານກ້ອນຄຳ, ເມືອງໝື່ນ, ແຂວງວຽງຈັນ (ຊ່ວງ 2); ❸ ໂຄງການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນນ້ຳເຫືອງບ້ານເໝືອງໝໍ້, ເມືອງແກ່ນທ້າວ, ແຂວງໄຊຍະບູລີ; ❹ ໂຄງການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນບ້ານດອນປາແດກ, ເມືອງໜອງບົກ, ແຂວງຄຳມ່ວນ ແລະ ❺ ໂຄງການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນບ້ານຈອມແກ້ວ, ເມືອງແກ່ນທ້າວ, ແຂວງໄຊຍະບູລີ ❸ ທາງເລກ 12 (ທ່າແຂກ-ນາເພົ້າ ຊາຍແດນລາວ-ຫວຽດນາມ) ລວງຍາວ 146 ກມ; ❹ ທາງເລກ 13 ໃຕ້ ແຕ່ ກມ 21 - ກມ 71, ລວງຍາວ 50 ກມ (ຊ່ວງ 3) ແລະ ສຳເລັດໂຄງການພັດທະນາແຄມຂອງ ແຂວງຈຳປາສັກ (ໄລຍະ 1). ອັນພົ້ນເດັ່ນອີກແມ່ນໄດ້ເປີດການນຳໃຊ້ທ່າເຮືອແຫ່ງທີ 3 ຫວຸ້ງອ່າງ ໃນວັນທີ 28 ເມສາ 2025.

- ໄດ້ກໍ່ສ້າງ, ປັບປຸງ, ຟື້ນຟູ ແລະ ບຳລຸງຮັກສາບັນດາສະໜາມບິນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆດ້ານການບິນ ເປັນຕົ້ນ: ສຳເລັດກໍ່ສ້າງສະໜາມບິນໜອງຄ້າງ, ແຂວງຫົວພັນ ເຊິ່ງເປີດໃຫ້ບໍລິການໃນປີ 2023 ແລະ ສຳເລັດການກໍ່ສ້າງສະໜາມບິນຕົ້ນເຜິ້ງ, ແຂວງບໍ່ແກ້ວ ເຊິ່ງເປີດໃຫ້ບໍລິການໃນປີ 2024.

**5.1.2 ການເຊື່ອມຈອດໂທລະຄົມມະນາຄົມ ແລະ ການສື່ສານ**

- ລັດຖະບານໄດ້ອອກດຳລັດວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ວິໄສທັດການພັດທະນາເສດຖະກິດດິຈິຕອນ ໄລຍະ 20 ປີ (2021-2040), ຍຸດທະສາດການພັດທະນາເສດຖະກິດດິຈິຕອນ ໄລຍະ 10 ປີ (2021-2030)

DRAFT

ແລະ ແຜນພັດທະນາເສດຖະກິດດິຈິຕອນ ໄລຍະ 5 ປີ (2021-2025) ສະບັບເລກທີ 367/ນຍ, ລົງວັນທີ 12 ທັນວາ 2022; ແລະ ໄດ້ສຳເລັດສ້າງບັນດານິຕິກຳ ເພື່ອຮອງຮັບການກ້າວເຂົ້າສູ່ເສດຖະກິດດິຈິຕອນ.

- ສຳເລັດການສ້າງ ແລະ ຂະຫຍາຍລະບົບເຄືອຂ່າຍພາຍໃນພາກລັດ ເຊື່ອມໂຍງບັນດາອົງການຈັດຕັ້ງລັດ ທັງສູນກາງ ແລະ ທ້ອງຖິ່ນ ໄດ້ຈຳນວນ 36 ພາກສ່ວນ, ເທົ່າກັບ 53% ຂອງແຜນການ 5ປີ (ແຜນການ 5ປີ: ໃຫ້ໄດ້ 68 ພາກສ່ວນ); ໃນນີ້, ສູນກາງ ຈຳນວນ 19 ພາກສ່ວນ ແລະ ທ້ອງຖິ່ນ 17 ພາກສ່ວນ; ແລະ ສາມາດເຊື່ອມໂຍງເຂົ້າຫາລະບົບລັດຖະບານດິຈິຕອນ ເປັນຕົ້ນ: ລະບົບກອງປະຊຸມທາງໄກ, ລະບົບສູນຂໍ້ມູນພາກລັດ ແລະ ລະບົບຫ້ອງການທັນສະໄໝ ໄດ້ຢ່າງສະດວກ, ວ່ອງໄວ ແລະ ປອດໄພ.

- ສຳເລັດການພັດທະນາ, ປັບປຸງ ແລະ ຂະຫຍາຍການນຳໃຊ້ ລະບົບຫ້ອງການທັນສະໄໝ (e-office) ປະຕິບັດໄດ້ 28 ຫ້ອງການ (ຢູ່ສູນກາງ), ເທົ່າກັບ 60% ຂອງແຜນການ 5ປີ (ແຜນການ 5ປີ: ໃຫ້ໄດ້ 45 ຫ້ອງການ). ນອກນີ້, ຍັງໄດ້ສຳເລັດຕິດຕັ້ງ-ທົດລອງນຳໃຊ້ ຢູ່ທ້ອງຖິ່ນ ຈຳນວນ 17 ຫ້ອງວ່າການແຂວງ.

- ສຳເລັດການສົ່ງເສີມພາກລັດ ແລະ ເອກະຊົນ ຫັນມານຳໃຊ້ດາວທຽມລາວ ໄດ້ທັງໝົດ 16 ພາກສ່ວນ, ເທົ່າກັບ 80% ຂອງແຜນການ 5ປີ (ແຜນການ 5ປີ: 18 ພາກສ່ວນ); ສຳເລັດຕິດຕັ້ງສະຖານີລະບົບສື່ສານ VSAT ຮັບໃຊ້ວຽກງານພາກລັດ ໄດ້ທັງໝົດ 204 ສະຖານີ ໃນຂອບເຂດທົ່ວປະເທດ.

- ປັດຈຸບັນ, ມີສະຖານີຮັບ-ສົ່ງສັນຍານໂທລະສັບມືຖື 8,904 ສະຖານີ (ໃນໄລຍະ 2021-2025 ໄດ້ 555 ສະຖານີ) ຄອບຄຸມໄດ້ 18 ແຂວງ ໃນ 148 ເມືອງ ແລະ 8,245 ບ້ານ ເຮັດໃຫ້ທົ່ວປະເທດມີສັນຍານມືຖື ແຍກຕາມລະບົບ 2G ຄອບຄຸມ 97%, ລະບົບ 3G ຄອບຄຸມ 86% (ແຜນການ 5ປີ: ໃຫ້ໄດ້ 100%), 4G ຄອບຄຸມ 77% (ແຜນການ 5ປີ: ໃຫ້ໄດ້ 90%) ແລະ ລະບົບ 5G ໄດ້ເປີດນຳໃຊ້ແລ້ວໃນບາງຕົວເມືອງ ໃນ 5 ຕົວເມືອງໃຫຍ່ ຄື: ນະຄອນຫຼວງວຽງຈັນ, ແຂວງຫຼວງພະບາງ, ບໍ່ແກ້ວ, ສະຫວັນນະເຂດ ແລະ ຈຳປາສັກ (ແຜນການ 5ປີ: ຄອບຄຸມໃຫ້ໄດ້ຕົວເມືອງໃຫຍ່ ໃນ 18 ແຂວງທົ່ວປະເທດ).

- ຂະຫຍາຍເຄືອຂ່າຍສາຍສົ່ງໂທລະຄົມມະນາຄົມ ສາຍໃຍແກ້ວ (Optic Fiber) ເຂົ້າເຖິງບັນດາແຂວງ, ເທດສະບານເມືອງ ໄດ້ 4,253 ກິໂລແມັດ, ເທົ່າກັບ 43% ຂອງແຜນການ 5ປີ (ແຜນການ 5ປີ: 9,890 ກິໂລແມັດ) ລວມຄວາມຍາວທັງໝົດ 97,153 ກິໂລແມັດ. ປັດຈຸບັນ ສປປ ລາວ ມີຈຸດເຊື່ອມຕໍ່ຊາຍແດນ ສາຍສົ່ງໂທລະຄົມ ແລະ ອິນເຕີເນັດ ຈຳນວນ 18 ຈຸດ ເພື່ອຫັນປະເທດລາວ ໃຫ້ກາຍເປັນປະເທດທາງຜ່ານດ້ານໂທລະຄົມມະນາຄົມ.

- ສຳເລັດການພັດທະນາ ແອັບພລິເຄຊັນ ແບບລວມສູນດິຈິຕອນ ເປັນຕົ້ນແມ່ນ M-Money ແລະ U-Money ເປັນລະບົບຊຳລະເງິນຜ່ານລະບົບມືຖື ແລະ ອິນເຕີເນັດ ສາມາດເປີດບໍລິການນຳໃຊ້ທົ່ວສັງຄົມ.

**ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ທີ່ຕິດພັນກັບ ໂຄງການທົດລອງທຸລະກຳຊັບສິນດິຈິຕອນ ມີຜົນໄດ້ຮັບດັ່ງນີ້:** ລັດຖະບານໄດ້ມອບໃຫ້ ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນໃຈກາງໃນການປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການເຮັດໂຄງການທົດລອງທຸລະກຳຊັບສິນດິຈິຕອນ ຂອງ ສປປ ລາວ, ເຊິ່ງລາຍຮັບຈາກໂຄງການທົດລອງດັ່ງກ່າວ ມາຈາກ 3 ແຫຼ່ງ ຄື: 1) ຄ່າລິຂະສິດອອກໃບອະນຸຍາດ (ການຂຸດຄົ້ນ ແລະ ສູນຊື້-ຂາຍ), 2) ອາກອນມອບເໝົາ (ການຂຸດຄົ້ນ ແລະ ສູນຊື້-ຂາຍ) ແລະ 3) ຄ່ານຳໃຊ້ພະລັງງານໄຟຟ້າ. ມາຮອດປັດຈຸບັນ ບໍລິສັດທີ່ໄດ້ຮັບອະນຸຍາດຈາກລັດຖະບານ ໃຫ້ເຮັດການທົດລອງທຸລະກຳຊັບສິນດິຈິຕອນ ມີທັງໝົດ 17 ບໍລິສັດ; ໃນນັ້ນ, ຂຸດຄົ້ນຊັບສິນດິຈິຕອນ ຈຳນວນ 15 ບໍລິສັດ (ໃນນີ້: ມີ 7 ບໍລິສັດທີ່ສຳເລັດການກໍ່ສ້າງພື້ນຖານໂຄງລ່າງ ແລະ ຂຸດຄົ້ນຕົວຈິງ) ແລະ ເຮັດສູນຊື້-ຂາຍເງິນຄຣິບໂຕຣ ຈຳນວນ 2 ບໍລິສັດ (ໃນນີ້, ມີ 1 ບໍລິສັດທີ່ເປີດໃຫ້ບໍລິການໃນປັດຈຸບັນ). ປັດຈຸບັນ ລາຍຮັບທີ່ໄດ້ຈາກການເຮັດທົດລອງດັ່ງກ່າວ ມີທັງໝົດ 691,085,230 ໂດລາສະຫະລັດ ແລະ 5,882,400,000 ກີບ. ໃນນັ້ນ, ເປັນລາຍຮັບຄ່າລິຂະສິດການອະນຸຍາດຂຸດຄົ້ນ ມີ 11 ສັນຍາ ເປັນຈຳນວນເງິນ 5,000,000 ໂດລາສະຫະລັດ ແລະ 5,718,000,000 ກີບ ແລະ ການອອກອະນຸຍາດສູນຊື້-ຂາຍ ມີ 2 ບໍລິສັດ ເປັນຈຳນວນເງິນ 2,000,000 ໂດລາສະຫະລັດ; ລາຍຮັບຈາກອາກອນມອບເໝົາທຸລະກິດຂຸດຄົ້ນ ເປັນຈຳນວນເງິນ 61,200,000 ໂດລາສະຫະລັດ ແລະ ຈາກສູນຊື້-ຂາຍ ເປັນຈຳນວນເງິນ

164,400,000 ກີບ; ລາຍຮັບຈາກຄ່າຊົມໃຊ້ພະລັງງານໄຟຟ້າ ນັບແຕ່ເລີ່ມໂຄງການທ້າຍປີ 2021 ຫາ ເດືອນສິງຫາ 2025 ເປັນຈຳນວນເງິນ 622,884,230 ໂດລາສະຫະລັດ.

### *5.2 ວຽກງານພົວພັນຮ່ວມມື, ການເຊື່ອມໂຍງການຄ້າ ແລະ ການລົງທຶນ ກັບພາກພື້ນ ແລະ ສາກົນ ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ແລະ ກວ້າງຂວາງຂຶ້ນກວ່າເກົ່າ*

ດ້ານການພົວພັນຮ່ວມມືກັບສາກົນ ແລະ ພາກພື້ນ, ເຖິງວ່າຈະຢູ່ໃນສະພາບການໃດກໍຕາມ ລວມທັງ ການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ສະພາບການຂອງໂລກ, ພາກພື້ນມີການຜັນແປຢ່າງສັບສົນ, ການນຳແຕ່ລະຂັ້ນ ແລະ ຂະແໜງການອົງການຕ່າງໆລ້ວນແຕ່ໄດ້ເຄື່ອນໄຫວວຽກງານການຮ່ວມມືກັບຕ່າງປະເທດໃນຂອບສອງຝ່າຍ ແລະ ຫຼາຍຝ່າຍ ຢ່າງຕັ້ງໜ້າດ້ວຍທຸກວິທີການ, ອັນພົ້ນເດັ່ນ ການນຳຂັ້ນສູງມີການພົວພັນແລກປ່ຽນຢ້ຽມຢາມກັບບັນດາປະເທດເພື່ອນມິດ ລວມທັງເພື່ອນມິດຍຸດທະສາດ, ການເຂົ້າຮ່ວມກອງປະຊຸມລະດັບສາກົນ ແລະ ພາກພື້ນຢ່າງເປັນປົກກະຕິ, ເຊິ່ງເພື່ອນມິດສາກົນກໍຄືເພື່ອນມິດຍຸດທະສາດໄດ້ສືບຕໍ່ໃຫ້ການສະໜັບສະໜູນຊ່ວຍເຫຼືອຕໍ່ ສປປ ລາວ ເຮົາຕາມມູນເຊື້ອ ແລະ ໄດ້ນຳຜົນປະໂຫຍດສູ່ປະເທດເຮົາຫຼາຍສົມຄວນ.

### *5.3 ວຽກງານການພັດທະນາເຂດແຄ້ວນ ແລະ ທ້ອງຖິ່ນໃຫ້ມີຄວາມເຂັ້ມແຂງ ແລະ ສອດຄ່ອງກັບທ່າແຮງບົ່ມຊ້ອນ*

**1) ພາກເໜືອ:** ໄດ້ສົ່ງເສີມໃຫ້ປະຊາຊົນ ແລະ ຫົວໜ່ວຍທຸລະກິດ ຜະລິດກະສິກຳສິນຄ້າຕາມທ່າແຮງຂອງທ້ອງຖິ່ນ ເພື່ອຕອບສິນຄ້າໃຫ້ກັບປະເທດໃກ້ຄຽງທີ່ໄດ້ມີການເຈລະຈາເຕັກນິກເປີດຕະຫຼາດແລ້ວ, ໂດຍໄດ້ສຸມໃສ່ການຜະລິດມັນຕົ້ນ, ອ້ອຍ, ສາລີແຂງ, ໝາກກ້ວຍ ແລະ ໝາກໂມ ແລະ ອື່ນໆ, ໄດ້ສົ່ງເສີມການລ້ຽງສັດໃຫຍ່ ເປັນຕົ້ນ ງົວ, ຄວາຍ, ໝູ; ຂະແໜງການຜະລິດອຸດສາຫະກຳປຸງແຕ່ງ ກໍມີການຂະຫຍາຍຕົວດີ ເປັນຕົ້ນ: ອຸດສາຫະກຳປຸງແຕ່ງອາຫານ ແລະ ເຄື່ອງດື່ມ ທີ່ຕິດພັນກັບຜະລິດຕະພັນກະສິກຳ, ການປຸງແຕ່ງແຮ່ທາດທີ່ບໍ່ແມ່ນໂລຫະ, ການຜະລິດຢາງ ແລະ ຜະລິດຕະພັນປລາສຕິກ ແລະ ອື່ນໆ. ໄດ້ຊຸກຍູ້ການກໍ່ສ້າງເຂື່ອນໄຟຟ້ານ້ຳຂອງຫຼວງພະບາງ, ເຂື່ອນໄຟຟ້ານ້ຳຂອງປາກແບ່ງ ແລະ ນ້ຳຂອງປາກລາຍ, ໄດ້ສຳເລັດການກໍ່ສ້າງໂຮງງານຜະລິດຊີມັງຫຼັງໃໝ່ຢູ່ແຂວງຫຼວງພະບາງ. ຂະແໜງຂົນສົ່ງ ແລະ ການທ່ອງທ່ຽວ ໄດ້ມີການຂະຫຍາຍຕົວດີພໍສົມຄວນ ເນື່ອງຈາກການເປີດບໍລິການເສັ້ນທາງລົດໄຟລາວ-ຈີນໄດ້ຊຸກຍູ້ຂົນສົ່ງ ແລະ ການທ່ອງທ່ຽວມີຄວາມຄຶກຄື້ນ ແລະ ຂະຫຍາຍຕົວໃນທ່າກ້າວກະໂດດຢ່າງໄວວາ. ໄດ້ສືບຕໍ່ປັບປຸງ ແລະ ຍົກລະດັບບັນດາເສັ້ນທາງຫຼວງແຫ່ງຊາດ, ເສັ້ນທາງຫຼວງຂອງແຂວງ ແລະ ຂອງເມືອງ ເພື່ອໃຫ້ສາມາດເຊື່ອມຕໍ່ກັບສະຖານີລົດໄຟ ແລະ ໃຫ້ເຂົ້າເຖິງເຂດການຜະລິດໄດ້, ໄດ້ປັບປຸງ ແລະ ຍົກລະດັບສະໜາມບິນຫ້ວຍຊາຍ, ສະໜາມບິນໜອງຄ້າງ ແລະ ກໍ່ສ້າງປ້ອງກັນຕາຝັ່ງເຈື່ອນ ແລະ ພັດທະນາຕົວເມືອງຕາມແລວອະນຸພາກພື້ນແມ່ນ້ຳຂອງ ໄລຍະ 2 ແລະ ອື່ນໆ.

**2) ພາກກາງ:** ການພັດທະນາເສດຖະກິດ-ສັງຄົມຂອງພາກກາງ ໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ພໍສົມຄວນ ໂດຍສະເພາະ ອຸດສາຫະກຳການຜະລິດສິ້ນສ່ວນພາຫະນະ ແລະ ເຄື່ອງເອເລັກໂຕຣນິກ ແລະ ອຸດສາຫະກຳປຸງແຕ່ງອື່ນໆທີ່ເປັນຕ່ອງໂສ້ຂອງພາກພື້ນ ແລະ ສາກົນ, ພາຍຫຼັງ ສປປ ລາວ ໄດ້ເປີດປະເທດເສດຖະກິດກໍຄ່ອຍຟື້ນຕົວດີພໍສົມຄວນ ໂດຍສະເພາະຂະແໜງທ່ອງທ່ຽວ; ສຳລັບຂະແໜງກະສິກຳ ໄດ້ສືບຕໍ່ຂະຫຍາຍຕົວດີ ໂດຍສະເພາະການຜະລິດພືດສະບຽງອາຫານ ພົ້ນເດັ່ນແມ່ນການປູກເຂົ້າ, ສາລີຫວານ, ເຜືອກມັນ, ພືດຜັກ, ໝາກໄມ້, ການ ຜະລິດກະສິກຳເປັນສິນຄ້າ ທີ່ພົ້ນເດັ່ນການປູກມັນຕົ້ນ, ຢາສູບ, ຝ້າຍ, ອ້ອຍ, ໝາກໂມ ແລະ ພືດຕະກຸນຖົ່ວ, ໃນນີ້ ການສົ່ງອອກສິນຄ້າກະສິກຳພົ້ນເດັ່ນແມ່ນເຂົ້າຈ້າວຫອມສະຫວັນ ພັນທ່າເຊໂນ ໄປ ສປ ຈີນ ແລະ ຢູໂຣບ. ຂະແໜງອຸດສາຫະກຳປຸງແຕ່ງ ມີໂຮງງານ ທັງໝົດ 5,553 ແຫ່ງ, ເຊິ່ງສ່ວນໃຫຍ່ການຜະລິດສິນຄ້າເພື່ອສົ່ງອອກໄປຕ່າງປະເທດ ເປັນຕົ້ນ: ການຜະລິດເຄື່ອງເອເລັກໂຕຣນິກ, ສິ້ນສ່ວນອາໄຫຼ່ພາຫະນະ, ຜະລິດຕະພັນກ່ຽວກັບຮູບພາບ , ເຈ້ຍ ແລະ ຜະລິດຕະພັນເຈ້ຍ, ການຜະລິດໂລຫະຂັ້ນພື້ນຖານ, ອຸປະກອນໄຟຟ້າ ແລະ ອື່ນໆ. ໄດ້ສຳເລັດ ແລະ ເປີດການນຳໃຊ້ທ່າບົກ 2 ແຫ່ງ ຄື: ທ່າບົກທ່ານາແລ້ງ, ນະຄອນຫຼວງວຽງຈັນ ແລະ ທ່າບົກສະຫວັນນະເຂດ, ແຂວງສະຫວັນນະເຂດ. ນອກຈາກນັ້ນ, ຍັງໄດ້ສຸມໃສ່ກໍ່ສ້າງ ແລະ ປັບປຸງທາງ 13 ໃຕ້, ບັນດາທາງຫຼວງຂອງແຂວງ ແລະ ຂອງເມືອງ, ກໍ່ສ້າງປ້ອງກັນຕະຝັ່ງເຈື່ອນພັດທະນາແຄມຂອງ ໄລຍະ 2 ແຕ່ ຫຼັກ 3 ເມືອງສີນາກ ຫາ ບ້ານຫາດດອກແກ້ວ, ເມືອງຫາດຊາຍຟອງ, ນະຄອນຫຼວງວຽງຈັນ, ພັດທະນາເສັ້ນທາງແຕ່ເມືອງໄຊຈຳພອນ-ຊາຍແດນແຫ່ງທຸຍ ສສ.ຫວຽດນາມ, ກໍ່ສ້າງເສັ້ນທາງເທດສະບານເມືອງປາກຊັນ (ເບີ 1, 2, 3, 4), ກໍ່ສ້າງທາງປູຢາງ 2 ຊັ້ນເສັ້ນທາງຫຼວງແຫ່ງຊາດ 1G ຫາຊາຍແດນ , ແຂວງສາລະວັນ,ພັດທະນາດ່ານສາກົນນາເພົ້າ-ຈໍ່ຫຼໍ ແຂວງຄຳມ່ວນ.

DRAFT

**3) ພາກໃຕ້:** ການພັດທະນາເສດຖະກິດ-ສັງຄົມ ໂດຍລວມໄດ້ສືບຕໍ່ຂະຫຍາຍຕົວດີ, ໃນນີ້ ຂະແໜງກະສິກຳ , ຜະລິດສະບຽງອາຫານທີ່ພົ້ນເດັ່ນ: ການປູກເຂົ້າ, ສາລີຫວານ, ເຜືອກມັນ, ພືດຜັກຕ່າງໆ, ໝາກໄມ້, ການຜະລິດກະສິກຳເປັນສິນຄ້າ ທີ່ພົ້ນເດັ່ນ ແມ່ນກາເຟ, ມັນຕົ້ນ, ອ້ອຍ, ໝາກກ້ວຍ, ໝາກໂມ, ຢາງພາລາ, ສາລີແຂງ, ຊາຕົ້ມນໍ້າ, ໝາກນ່ອດ, ໝາກເຜັດ, ການລ້ຽງສັດແມ່ນສົ່ງເສີມລ້ຽງແບບເປັນຟາມ ທີ່ພົ້ນເດັ່ນແມ່ນການລ້ຽງໝູ, ງົວແບບເປັນຟາມ, ຊຶ່ງສາມາດສະໜອງຊີ້ນ, ໄຂ່ ແລະ ປາ ຕໍ່ການບໍລິໂພກຂອງປະຊາຊົນໄດ້ດີພໍສົມຄວນ. ອຸດສາຫະກຳປຸງແຕ່ງໄດ້ມີການຂະຫຍາຍຕົວດີພໍສົມຄວນ ໂດຍສະເພາະ ການປຸງແຕ່ງຜະລິດຕະພັນກະສິກຳ (ກາເຟເມັດ, ຢາງພາລາກ້ອນ, ມັນຕົ້ນອົບແຫ້ງ, ນໍ້າໝາກໄມ້ ແລະ ອື່ນໆ), ບັນດາເຂດເສດຖະກິດພິເສດ ແລະ ເຂດອຸດສາຫະກຳຫຼາຍແຫ່ງແມ່ນໄດ້ຮັບການພັດທະນາດ້ານພື້ນຖານໂຄງລ່າງຢ່າງຕໍ່ເນື່ອງ ເຊັ່ນ: ເຂດອຸດສາຫະກຳປາກເຊ-ຍີ່ປຸ່ນ, ເຂດເສດຖະກິດໃໝ່ສີພັນດອນ, ເຂດເສດຖະກິດວັງເຕົ່າ-ໂພນທອງ, ເຂດອຸດສາຫະກຳຫຼັກ 16 ເມືອງບາຈຽງ, ເຂດອຸດສາຫະກຳຫຼັກ 30 ເມືອງຊະນະສົມບູນ ແລະ ເຂດສາມຫຼ່ຽມພັດທະນາແຂວງອັດຕະປື ເພື່ອຮອງຮັບການລົງທຶນຂອງເອກະຊົນທັງພາຍໃນ ແລະ ຕ່າງປະເທດ, ມາຮອດປັດຈຸບັນໃນເຂດພາກໃຕ້ມີໂຮງງານອຸດສາຫະກຳປຸງແຕ່ງ ທັງໝົດ 1,558 ແຫ່ງ. ໄດ້ເອົາໃຈໃສ່ສົ່ງເສີມການຄ້າ-ຂາຍຕາມຊາຍແດນຢູ່ດ່ານສາກົນ ແລະ ດ່ານປະເພນີຕ່າງໆ; ໄດ້ສຸມໃສ່ປັບປຸງ ແລະ ກໍ່ສ້າງພື້ນຖານໂຄງລ່າງທີ່ສຳຄັນຈຳນວນໜຶ່ງ ເປັນຕົ້ນ: ໂຄງການສົມທົບທຶນພັດທະນາແຄມຂອງແຂວງຈຳປາສັກ ທຶນຂອງ ສສ.ເກົາຫຼີໃຕ້ (ເງິນກູ້ດອກເບ້ຍຕໍ່າ); ໂຄງການກໍ່ສ້າງທາງປູຢາງສາມຂາ-ບ້ານຫຽງ-ຊ່ອງຕາອູ່, ເມືອງສຸຂຸມາ; ໂຄງການກໍ່ສ້າງດ່ານສາກົນວັງເຕົ່າ, ເມືອງໂພນທອງ (ຊາຍແດນລາວ-ໄທ); ໂຄງການກໍ່ສ້າງທາງປູຢາງ 2 ຊັ້ນ ເສັ້ນທາງເລກທີ 26905 (S3 ຫຼັກໝາຍ) ແຕ່ແຍກທາງ 15 (ດ່ານລະໄລ) ຫາຊາຍແດນລາວ-ຫວຽດນາມ, ແຂວງເຊກອງ, ຄວາມຍາວ 22,55 ກມ; ໂຄງການກໍ່ສ້າງເສັ້ນທາງຫຼວງແຫ່ງຊາດ ເລກທີ 16B ເຊກອງ-ດາກຈຶງ ແລະ ແຕ່ດາກຈຶງ ຫາ ຊາຍແດນຫວຽດນາມ; ໂຄງການກໍ່ສ້າງຂົວເບຕົງ 7 ແຫ່ງ ເສັ້ນທາງເຊກອງ-ເມືອງກະລຶມໃໝ່; ໂຄງການກໍ່ສ້າງເສັ້ນທາງປູຢາງ 2 ຊັ້ນ ເລກທີ 18[a] ບ້ານປີນດົງ ຫາ ຂົວຫ້ວຍອຸກ, ເມືອງສະໜາມໄຊ ຈາກການຊົດເຊີຍເຂື່ອນເຊປຽນ-ເຊນໍ້ານ້ອຍ; ໂຄງການກໍ່ສ້າງເສັ້ນທາງຍຸດທະສາດລຽບຊາຍແດນລາວ-ຫວຽດນາມ-ກຳປູເຈຍ ຟໍ 1 ຫາ ຟໍ 6/6; ໂຄງການຟື້ນຟູ ແລະ ສ້ອມແປງເສັ້ນທາງ 18B ເປັນເສັ້ນທາງຫຼວງແຫ່ງຊາດ (ດ່ານສາກົນພູເກືອ-ເບີອີ) ເພື່ອການສັນຈອນສະດວກສະບາຍ, ຮັບປະກັນການຂົນສົ່ງ ແລະ ຈໍລະຈອນສິນຄ້າ.

+ ສິ່ງທ້າທາຍ: ການພັດທະນາເຂດແຄວ້ນຍັງເຫັນວ່າການສະໜອງໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກໃຫ້ສົມຄູ່ກັບການກາຍເປັນຕົວເມືອງ ຍັງມີຂໍ້ຈຳກັດ; ຕົວຢ່າງໃນບັນດາຕົວເມືອງໃຫຍ່ຂອງແຂວງ ເຊັ່ນ: ນະຄອນຫຼວງວຽງຈັນ ຍັງບໍ່ສາມາດສະໜອງໂຄງລ່າງພື້ນຖານໃຫ້ພຽງພໍກັບການເພີ່ມຂຶ້ນຂອງພາຫະນະສ່ວນບຸກຄົນ ແລະ ການຂົນສົ່ງສາທາລະນະຍັງບໍ່ທັນຂະຫຍາຍໃຫ້ບໍລິການໄດ້ຄອບຄຸມໃນທຸກພື້ນທີ່ໃນຕົວເມືອງ. ນອກຈາກນີ້, ການຂະຫຍາຍຕາໜ່າງການສະໜອງນໍ້າປະປາ ແລະ ລະບົບສຸຂະອະນາໄມທີ່ເພີ່ມຂຶ້ນຢ່າງໄວວາ ແຕ່ການຈັດການນໍ້າເສຍ ຍັງບໍ່ເປັນລະບົບຄົບຊຸດເທົ່າທີ່ຄວນ; ແຜນພັດທະນາຂອງທ້ອງຖິ່ນ ຍັງບໍ່ທັນມີແຜນລະອຽດໃນການພັດທະນາເທົ່າທີ່ຄວນ ລວມທັງແຜນການພັດທະນາຮ່ວມກັນລະຫວ່າງແຂວງກັບແຂວງ. ຊຶ່ງການວາງແຜນພັດທະນາທ້ອງຖິ່ນ ໂດຍອີງໃສ່ສະພາບການຂອງເຂດໃນພາກເໜືອ, ພາກກາງ ແລະ ພາກໃຕ້ ຈະຊ່ວຍປະກອບສ່ວນຢ່າງຫຼວງຫຼາຍໃຫ້ແກ່ການພັດທະນາແບບມີສ່ວນຮ່ວມ ແລະ ຍືນຍົງຂອງ ສປປ ລາວ. ການພັດທະນາທ້ອງຖິ່ນນີ້ ຈະຕ້ອງໄດ້ສົ່ງເສີມ ແລະ ຮອງຮັບການຈັດສັນການພັດທະນາຕົວເມືອງຢ່າງເປັນລະບົບໃນອານາຄົດ.

### *5.4 ວຽກງານພັດທະນາຕົວເມືອງ ແລະ ເຂດເສດຖະກິດພິເສດ ໃຫ້ກາຍເປັນຖານການຜະລິດ, ການລົງທຶນ, ການຄ້າ ແລະ ການທ່ອງທ່ຽວ ເພື່ອເຊື່ອມໂຍງກັບພາກພື້ນ ແລະ ສາກົນ*

- **ວຽກງານພັດທະນາຕົວເມືອງ** ໄດ້ສຸມໃສ່ພັດທະນາຕົວເມືອງໃຫ້ມີຄວາມສວຍງາມ, ສະອາດ ແລະ ໜ້າຢູ່ ໂດຍໄດ້ເລັ່ງໃສ່ປັບປຸງພື້ນຖານໂຄງລ່າງຕ່າງໆ ໃຫ້ມີຄວາມສະດວກ ເປັນຕົ້ນ:

1) ການຈັດຕັ້ງປະຕິບັດໂຄງການພັດທະນາຕົວເມືອງໃຫ້ສຳເລັດຢູ່ 3 ນະຄອນ, ຕົວເມືອງຕາມແລວອະນຸພາກພື້ນແມ່ນໍ້າຂອງ GMS ໃຫ້ສຳເລັດຢ່າງໜ້ອຍ 4 ຕົວເມືອງ ເພື່ອປັບປຸງທາງດ້ານໂຄງລ່າງພື້ນຖານ ແລະ ສິ່ງແວດລ້ອມຕົວເມືອງ: ການພັດທະນາຕົວເມືອງ ແລະ ປັບປຸງສິ່ງແວດລ້ອມຢູ່ 3 ນະຄອນ: ສຳເລັດການປັບປຸງສິ່ງແວດລ້ອມນະຄອນປາກເຊ, ແຂວງຈຳປາສັກ ແລະ ສຳເລັດການພັດທະນາຕົວເມືອງນະຄອນໄກສອນພົມວິຫານ, ແຂວງສະຫວັນນະເຂດ ທີ່ນອນໃນໂຄງການພັດທະນາຕົວເມືອງຕາມແລວທາງເສດຖະກິດ ຕາເວັນອອກ-ຕາເວັນຕົກ

DRAFT

ອະນຸພາກພື້ນແມ່ນ້ຳຂອງ (GMS1). ພ້ອມດຽວກັນນີ້, ກຳລັງກະກຽມໂຄງການພັດທະນາຕົວເມືອງ ແລະ ປັບປຸງສິ່ງແວດລ້ອມນະຄອນຫຼວງພະບາງ, ແຂວງຫຼວງພະບາງ ປັດຈຸບັນແມ່ນສຳເລັດການສຶກສາເສດຖະກິດ-ເຕັກນິກເບື້ອງຕົ້ນ (Pre-FS). ການພັດທະນາຕົວເມືອງຕາມແລວອະນຸພາກພື້ນແມ່ນ້ຳຂອງ: ສຳເລັດໂຄງການ GMS1 ທີ່ນະຄອນໄກສອນພົມວິຫານ, ແຂວງສະຫວັນນະເຂດ; ໂຄງການ GMS2 ທີ່ເມືອງຫ້ວຍຊາຍ, ແຂວງບໍ່ແກ້ວ ແລະ ເມືອງນ້ຳທາ, ແຂວງຫຼວງນ້ຳທາ ແລະ ກຳລັງຈັດຕັ້ງປະຕິບັດໂຄງການ GMS4 ທີ່ເມືອງປາກຊັນ, ແຂວງບໍລິຄຳໄຊ ມີຄວາມຄືບໜ້າ 77.40% ແລະ ເມືອງທ່າແຂກ, ແຂວງຄຳມ່ວນ ມີຄວາມຄືບໜ້າ 70.70% (ຄາດຄະເນສຳເລັດ ໃນປີ 2026).

2) ນະຄອນຫຼວງວຽງຈັນ, 3 ນະຄອນ ແລະ ຢ່າງໜ້ອຍ 4 ຕົວເມືອງຕາມແລວອະນຸພາກພື້ນແມ່ນ້ຳຂອງມີສະໜາມກຳຈັດຂີ້ເຫຍື້ອທີ່ໄດ້ມາດຕະຖານຖືກຫຼັກອະນາໄມ: ປັດຈຸບັນກຳລັງຢູ່ໃນຂັ້ນຕອນກະກຽມໂຄງການ ແລະ ເຈລະຈາເງິນກູ້ຢືມດອກເບ້ຍຜ່ອນຜັນ; (2) ນະຄອນຫຼວງພະບາງ, ແຂວງຫຼວງພະບາງ ມີ 1 ແຫ່ງ (ສະໜາມຂີ້ເຫຍື້ອຫຼັກ 8) ເປັນສະໜາມຂີ້ເຫຍື້ອເປີດມີແຜນຈະປັບປຸງໃຫ້ເປັນສະໜາມຂີ້ເຫຍື້ອຖືກສຸຂະອະນາໄມຄືກັບສະໜາມຂີ້ເຫຍື້ອປິດ ໄດ້ສຳເລັດການສຶກສາຄວາມເປັນໄປໄດ້ ແລະ ກຳລັງອອກແບບລະອຽດ ເຊິ່ງມີແຜນຈະເລີ່ມການກໍ່ສ້າງ ໃນປີ 2026; (3) ນະຄອນໄກສອນພົມວິຫານ, ແຂວງສະຫວັນນະເຂດ ມີ 1 ແຫ່ງ ແລະ (4) ນະຄອນປາກເຊ, ແຂວງຈຳປາສັກ ມີ 1 ແຫ່ງ ເປັນສະໜາມຂີ້ເຫຍື້ອທີ່ຖືກສຸຂະອະນາໄມ ແລະ ໄດ້ປັບປຸງສຳເລັດໃນເດືອນທັນວາ ປີ 2021. ນອກຈາກນັ້ນ, ພາຍໃຕ້ໂຄງການ GMS ໄດ້ມີການປັບປຸງສະໜາມຂີ້ເຫຍື້ອຢູ່ບັນດາຕົວເມືອງໃຫ້ໄດ້ມາດຕະຖານ ເຊັ່ນ: ສຳເລັດການກໍ່ສ້າງສະໜາມຂີ້ເຫຍື້ອເມືອງຫ້ວຍຊາຍ, ແຂວງບໍ່ແກ້ວ ແລະ ເມືອງນ້ຳທາ, ແຂວງຫຼວງນ້ຳທາ; ສຳເລັດກໍ່ສ້າງສະໜາມຂີ້ເຫຍື້ອເມືອງປາກຊັນ, ແຂວງບໍລິຄຳໄຊ ແລະ ມອບຮັບໃນປີ 2024 ແລະ ກຳລັງຈັດຕັ້ງປະຕິບັດ ກໍ່ສ້າງສະໜາມຂີ້ເຫຍື້ອເມືອງທ່າແຂກ, ແຂວງຄຳມ່ວນ ມີຄວາມຄືບໜ້າ 99.42%.

3) ນະຄອນຫຼວງວຽງຈັນ, 3 ນະຄອນ ແລະ ຢ່າງໜ້ອຍ 4 ຕົວເມືອງຕາມແລວອະນຸພາກພື້ນແມ່ນ້ຳຂອງມີລະບົບການບຳບັດນ້ຳເປື້ອນທີ່ເໝາະສົມ: : ສຳເລັດການສ້າງຄວາມອາດສາມາດຄຸ້ມຄອງນ້ຳເປື້ອນ ແລະ ຂີ້ເຫຍື້ອ ສຳລັບປັບປຸງສິ່ງແວດລ້ອມຕົວເມືອງ ຢູ່ນະຄອນຫຼວງວຽງຈັນ ແລະ ນະຄອນປາກເຊ, ແຂວງຈຳປາສັກ (KOICA & GGGI); ກຳລັງຈັດຕັ້ງປະຕິບັດໂຄງການບຳບັດນ້ຳເປື້ອນ (ນ້ຳປະປາ ແລະ ນ້ຳເປື້ອນ) ນະຄອນຫຼວງວຽງຈັນ ມີຄວາມຄືບໜ້າ 30% ແລະ ລະບົບບຳບັດນ້ຳເປື້ອນແບບບໍ່ລວມສູນ ນະຄອນໄກສອນພົມວິຫານ, ແຂວງສະຫວັນນະເຂດ.

4) ສ້າງຕົວເມືອງນ້ອຍອັດສະລິຍະ Smart City ຕົ້ນແບບ ຢ່າງໜ້ອຍ 1 ເມືອງ: ສຸມໃສ່ຊຸກຍູ້ສົ່ງເສີມບັນດານະຄອນ ທີ່ເປັນຕົວເມືອງສະມາຊິກໃນໂຄງການທົດລອງຂອງເຄືອຂ່າຍຕົວເມືອງທັນສະໄໝອາຊຽນ ASEAN Smart City Network ຄື: ນະຄອນຫຼວງວຽງຈັນ ແລະ ນະຄອນຫຼວງພະບາງ; ຕົວເມືອງທັນສະໄໝອາຊຽນ-ອິດສະຕຣາລີ ຄື: ນະຄອນໄກສອນພົມວິຫານ; ຊຸກຍູ້ສົ່ງເສີມບັນດາໂຄງການພັດທະນາຕົວເມືອງທັນສະໄໝ ທີ່ລັດຖະບານໄດ້ອະນຸມັດໃຫ້ພາກເອກະຊົນສຶກສາລົງທຶນ ລວມເຖິງບັນດາໂຄງການຊ່ວຍເຫຼືອຂອງຕ່າງປະເທດເຂົ້າໃສ່ການສ້າງໂຄງລ່າງພື້ນຖານ ຕົວເມືອງທັນສະໄໝ.

- **ການພັດທະນາເຂດເສດຖະກິດພິເສດ:** ມາຮອດປັດຈຸບັນ ມີເຂດເສດຖະກິດພິເສດທັງໝົດ 21 ເຂດ ຢູ່ໃນ 7 ແຂວງ ລວມທັງນະຄອນຫຼວງວຽງຈັນ ໂດຍໄດ້ນຳໃຊ້ເນື້ອທີ່ດິນເຂົ້າໃນການພັດທະນາ ປະມານ 14 ພັນກວ່າເຮັກຕາ, ເຊິ່ງຜ່ານການຈັດຕັ້ງປະຕິບັດໃນໄລຍະ 4 ປີຜ່ານມາ (2021-2024) ເຫັນວ່າແຕ່ລະເຂດເສດຖະກິດລ້ວນແຕ່ໄດ້ຮັບການ ພັດທະນາດີພໍສົມຄວນ, ອັນພົ້ນເດັ່ນແມ່ນສາມາດດຶງດູດການລົງທຶນເຂົ້າໃນເຂດເສດຖະກິດພິເສດໄດ້ທັງໝົດ 599 ບໍລິສັດ, ເທົ່າກັບ 84.48% ຂອງແຜນການ (ແຜນການ 709 ບໍລິສັດ), ໃນນີ້: ມີທຶນຈົດທະບຽນ 9 ຕື້ກວ່າໂດລາສະຫະລັດ ແລະ ທຶນທັງໝົດ 26 ຕື້ກວ່າໂດລາສະຫະລັດ. ເຂດທີ່ບໍລິສັດເຂົ້າມາລົງທຶນຫຼາຍກວ່າໝູ່ແມ່ນເຂດສາມຫຼ່ຽມຄຳ, ເຂດບໍ່ເຕັນແດນງາມ, ເຂດກວມລວມໄຊເຊດຖາ, ເຂດບຶງທາດຫຼວງ ແລະ ເຂດອື່ນໆຕາມລຳດັບ. ສາມາດເກັບລາຍຮັບເຂົ້າງົບປະມານລັດ ໄດ້ທັງໝົດ 768 ຕື້ກວ່າກີບ ປະຕິບັດໄດ້ລື່ນແຜນການປະມານ 63% (ແຜນການ 1,217 ຕື້ກີບ), ລາຍຮັບທີ່ເກັບໄດ້ສ່ວນຫຼາຍແມ່ນມາຈາກຄ່າສຳປະທານທີ່ດິນ, ອາກອນມອບເໝົາກາຊີໂນ, ຄ່າທຳນຽມ-ຄ່າບໍລິການ, ອາກອນມູນຄ່າເພີ່ມ, ອາກອນເງິນເດືອນ, ອາກອນຊົມໃຊ້, ອາກອນກຳໄລ, ອາກອນອື່ນໆຕາມລຳດັບ. ເຂດທີ່ເກັບລາຍຮັບໄດ້ຫຼາຍກວ່າໝູ່ແມ່ນເຂດສາມຫຼ່ຽມຄຳ, ກວມລວມໄຊເຊດຖາ, ເຂດສະຫວັນ-ເຊໂນ ແລະ ເຂດອື່ນໆຕາມລຳດັບ; ມູນຄ່າການສົ່ງອອກສິນຄ້າໃນເຂດເສດຖະກິດພິເສດມີທັງໝົດ 1 ຕື້ກວ່າໂດລາສະຫະລັດ ເທົ່າ

DRAFT

ກັບ 38% ຂອງແຜນການ (ແຜນການ 2,626 ລ້ານໂດລາສະຫະລັດ), ເຂດທີ່ສົ່ງອອກຫລາຍກວ່າໝູ່ແມ່ນເຂດສະຫວັນ-ເຊໂນ, ເຂດການຄ້າວຽງຈັນ-ໂນນທອງ, ເຂດກອມລອມໄຊເຊດຖາ, ແລະ ເຂດປາກເຊ-ຍີ່ປຸ່ນ. ພ້ອມນີ້ການນຳເຂົ້າສິນຄ້າເພື່ອມາເປັນວັດຖຸດິບ ແລະ ອຸປະກອນມາຮັບໃຊ້ການຜະລິດ ແລະ ການກໍ່ສ້າງພື້ນຖານໂຄງລ່າງ ມີມູນຄ່າທັງໝົດ 9,903,072,182 ໂດລາສະຫະລັດ, ລື່ນແຜນການທີ່ວາງໄວ້ຫຼາຍກວ່າ 4 ເທົ່າຕົວ (ແຜນການ 2,349 ລ້ານໂດລາສະຫະລັດ), ໃນນີ້: ເຂດທີ່ນຳເຂົ້າຫຼາຍກວ່າໝູ່ແມ່ນເຂດການຄ້າວຽງຈັນ-ໂນນທອງ, ເຂດເຂດກອມລອມໄຊເຊດຖາ, ສະຫວັນ-ເຊໂນ, ແລະ ເຂດປາກເຊ-ຍີ່ປຸ່ນ. ປັດຈຸບັນ ການພັດທະນາເສດຖະກິດພິເສດແຕ່ລະບ່ອນສາມາດສ້າງວຽກເຮັດງານທຳ ໄດ້ທັງໝົດ 84,540 ຄົນ, ໃນນີ້: ເປັນແຮງງານລາວ 38,544 ຄົນ ແລະ ຕ່າງປະເທດ 45,996 ຄົນ, ເຂດທີ່ມີແຮງງານລາວຫຼາຍກວ່າໝູ່ແມ່ນເຂດສາມຫຼ່ຽມຄຳ 18,513 ຄົນ, ຮອງລົງມາແມ່ນເຂດນິຄົມອຸດສາຫະກຳ ແລະ ການຄ້າ ວຽງຈັນ-ໂນນທອງ 5,889 ຄົນ ແລະ ເຂດກອມລອມໄຊເຊດຖາ 5,626 ຄົນ (ສະເພາະການສ້າງແຮງງານໃໝ່ໃນໄລຍະ 4 ປີຜ່ານມາ 2021-2024 ແມ່ນ 21,680 ຄົນ, ເປັນແຮງງານລາວ 14,538 ຄົນ).

### 6. ເປົ້າໝາຍທີ 6: ການຄຸ້ມຄອງ-ບໍລິຫານລັດມີປະສິດທິພາບ, ສັງຄົມມີຄວາມສະເໝີພາບ, ຍຸຕິທຳ ແລະ ໄດ້ຮັບການປົກປ້ອງຕາມທິດການປົກຄອງດ້ວຍກົດໝາຍທີ່ສັກສິດ ແລະ ເຂັ້ມງວດ

#### *6.1 ວຽກງານຍົກສູງປະສິດທິພາບການປົກຄອງ-ການຄຸ້ມຄອງບໍລິຫານລັດໃຫ້ມີຄວາມກະທັດຮັດ, ວ່ອງໄວ ແລະ ເຂັ້ມງວດຕາມກົດໝາຍ ແລະ ວຽກງານ 3 ສ້າງໃຫ້ເຂົ້າສູ່ລວງເລິກ ແລະ ປະຕິບັດຕົວຈິງຢ່າງມີປະສິດທິຜົນ*

- ສຳເລັດ ການປັບປຸງໂຄງປະກອບກົງຈັກຂອງລັດຖະບານ ໂດຍໂຮມສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ກັບ ສະຖາບັນວິທະຍາສາດສັງຄົມແຫ່ງຊາດເຂົ້າກັນ ເປັນສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ ຕາມດຳລັດ ສະບັບເລກທີ 559/ນຍ, ລົງວັນທີ 07 ກັນຍາ 2021; ສັບຊ້ອນ ແລະ ໂອນວຽກຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ໃນເມື່ອກ່ອນໄປຂຶ້ນກັບ **5** ກະຊວງ ທີ່ກ່ຽວຂ້ອງ ແລະ ປ່ຽນຊື່ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນ ກະຊວງເຕັກໂນໂລຊີ ແລະ ການສື່ສານ; ສັບຊ້ອນອົງການກວດກາລັດຖະບານໃຫ້ເປັນກົງຈັກເອກະລາດ ຂຶ້ນກັບປະທານປະເທດໂດຍກົງ ເຮັດໃຫ້ກົງຈັກຂອງລັດຖະບານ ຊຸດທີ IX ຫລຸດລົງ 03 ພາກສ່ວນ ທຽບໃສ່ລັດຖະບານ ຊຸດທີ VIII; ນອກຈາກນີ້, ກໍໄດ້ສືບຕໍ່ປັບປຸງກົງຈັກຂອງລັດຖະບານ ຊຸດທີ **IX** ຕື່ມ ໂດຍການໂຮມກະຊວງແຜນການ ແລະ ການລົງທຶນ ເຂົ້າກັບ ກະຊວງການເງິນ, ໂຮມກະຊວງພະລັງງານ ແລະ ບໍ່ແຮ່ ເຂົ້າກັບກະຊວງອຸດສາຫະກຳ ແລະ ການຄ້າ, ໂຮມກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເຂົ້າກັບ ກະຊວງກະສິກຳ ແລະ ປ່າໄມ້, ໂຮມກະຊວງພາຍໃນ ເຂົ້າກັບຄະນະຈັດຕັ້ງສູນກາງພັກ ແລະ ສຳນັກງານນາຍົກລັດຖະມົນຕີ ຕາມມະຕິເລກທີ 05/ສພຊ, ລົງວັນທີ 20 ມີນາ 2025, ເຮັດໃຫ້ຈຳນວນກະຊວງ/ອົງການລັດທຽບເທົ່າກະຊວງ ຫລຸດລົງຈາກ 19 ພາກສ່ວນ ຍັງເຫລືອ 15 ພາກສ່ວນ; ອອກດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ 17 ກະຊວງ-ອົງການລັດທຽບເທົ່າກະຊວງ ແລະ ຫລຸດຜ່ອນກົງຈັກຂັ້ນກົມ ໄດ້ 43 ກົມ ແລະ ຫຼຸດພະແນກຢູ່ກະຊວງ-ອົງການຕ່າງໆ ລົງ 179 ຫົວໜ່ວຍ ຈາກ 2,842 ຫົວໜ່ວຍ ເຫລືອ 2,663 ຫົວໜ່ວຍ, ຫລຸດຜ່ອນກົງຈັກຂັ້ນແຂວງ ແລະ ຂັ້ນເມືອງ ລົງ 3,045 ຫົວໜ່ວຍ ຈາກ 23,312 ຫົວໜ່ວຍ ເຫລືອ 20,267 ຫົວໜ່ວຍ.

- ກົງຈັກຂັ້ນພະແນກ ຂັ້ນແຂວງ ສາມາດຫຼຸດລົງໄດ້ **13** ພະແນກ **(**ຈາກ **578** ມາເປັນ **563** ພະແນກ**)**; ກົງຈັກຂັ້ນຂະແໜງ ຂອງພະແນກຂັ້ນແຂວງ ສາມາດຫຼຸດໄດ້ **272** ຂະແໜງ **(**ຈາກ **3,659** ຂະແໜງ ມາເປັນ **3,387** ຂະແໜງ**)**; ໜ່ວຍງານ ຂອງພະແນກຂັ້ນແຂວງ ສາມາດຫຼຸດໄດ້ **397** ໜ່ວຍງານ **(**ຈາກ **421** ໜ່ວຍງານ ມາເປັນ **24** ໜ່ວຍງານ**)**; ຫ້ອງການ ຂັ້ນເມືອງ ສາມາດຫຼຸດໄດ້ **108** ຫ້ອງການ **(**ຈາກ **3547** ມາເປັນ **3437** ຫ້ອງການ**)**; ໜ່ວຍງານຂຶ້ນກັບຫ້ອງການຂັ້ນເມືອງ ສາມາດຫຼຸດໄດ້ **2,253** ໜ່ວຍງານ**(**ຈາກ **15,107** ໜ່ວຍງານ ມາເປັນ **12,854** ໜ່ວຍງານ**).**

- ສຳເລັດການຮັບຮອງເອົາຜົນການກຳນົດຕຳແໜ່ງງານ ຂອງພາກສ່ວນຕ່າງໆໄດ້ **909** ຫົວໜ່ວຍ (ຈາກທັງ ໝົດ 4,452 ຫົວໜ່ວຍ) ໃນນັ້ນ, ຂັ້ນສູນກາງມີທັງໝົດ 450 ຫົວໜ່ວຍ ຈັດຕັ້ງປະຕິບັດໄດ້ 24**1** ຫົວໜ່ວຍເທົ່າກັບ 53.56%**,** ຂັ້ນແຂວງມີທັງໝົດ 563 ຫົວໜ່ວຍ ຈັດຕັ້ງປະຕິບັດໄດ້ 160 ຫົວໜ່ວຍ ເທົ່າກັບ 28.42% ແລະ ຂັ້ນເມືອງມີທັງໝົດ ຈຳນວນ 3,439 ຫົວໜ່ວຍ ຈັດຕັ້ງປະຕິບັດໄດ້ 5,508 ຫົວໜ່ວຍ ເທົ່າກັບ 14.77%.

DRAFT

- ສຳເລັດ ການຄົ້ນຄວ້າ ແລະ ອອກນິຕິກຳ 02 ສະບັບຄື: ❶ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍ 3 ສ້າງ ສະບັບເລກທີ 02/ພນ, ລົງວັນທີ 16 ສິງຫາ 2024 ແລະ ❷ ຂໍ້ຕົກລົງ ວ່າດ້ວຍມາດຕະຖານ ແຂວງເປັນຫົວໜ່ວຍຍຸດທະສາດ, ເມືອງເປັນຫົວໜ່ວຍເຂັ້ມແຂງ, ບ້ານເປັນຫົວໜ່ວຍພັດທະນາ ຂອງຂະແໜງການພາຍໃນ ສະບັບເລກທີ 617/ພນ, ລົງວັນທີ 16 ສິງຫາ 2024; ປະເມີນ ການສ້າງແຂວງເປັນຫົວໜ່ວຍຍຸດທະສາດໄດ້ 3 ແຂວງ ທຽບໃສ່ແຜນການ ສາມາດປະຕິບັດໄດ້ 27% (ແຜນການ 5 ປີ, 11 ແຂວງ); ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານໄດ້ 3 ນະຄອນ, 16 ເມືອງ ປະຕິບັດໄດ້ 40% (ແຜນການ 5 ປີ, 48 ເມືອງ); ສ້າງບ້ານເປັນຫົວໜ່ວຍພັດທະນາ ໄດ້ 3,038 ບ້ານ ສາມາດປະຕິບັດໄດ້ 54% (ແຜນການ 5 ປີ, 5,575 ບ້ານ) ພ້ອມທັງໄດ້ອອກໃບຢັ້ງຢືນໃຫ້ບັນດາແຂວງ, ເມືອງ ແລະ ບ້ານ.

- ໄດ້ຄົ້ນຄວ້າ ແລະ ສະເໜີທ່ານ ນາຍົກລັດຖະມົນຕີ ພິຈາລະນາອະນຸມັດສ້າງຕັ້ງເທດສະບານທ່າແຂກ ແຂວງຄຳມ່ວນ ຕາມບົດລາຍງານເລກທີ 04/ພນ, ລົງວັນທີ 01 ກຸມພາ 2023, ພື້ນຖານ ລັດຖະບານ ແມ່ນເຫັນດີໃຫ້ສ້າງຕັ້ງເທດສະບານທ່າແຂກ ແຕ່ໃຫ້ສືບຕໍ່ຄົ້ນຄວ້າລະອຽດຕື່ມບາງດ້ານ ເປັນຕົ້ນແມ່ນ: ດ້ານກົງຈັກການຈັດຕັ້ງ, ຂອບເຂດ, ການເງິນຂອງເທດສະບານ. ປັດຈຸບັນ ພາກສ່ວນກ່ຽວຂ້ອງກຳລັງດຳເນີນການຄົ້ນຄວ້າ ຄາດວ່າຈະສຳເລັດພາຍໃນປີ 2025 (ແຜນການ 5 ປີ ແມ່ນ 8 ແຫ່ງ, ປະຕິບັດໄດ້ແຕ່ 1 ແຫ່ງ).

- ສຳເລັດການສ້າງນິຕິກຳສະບັບໃໝ່ເພື່ອເປັນບ່ອນອີງໃຫ້ແກ່ອົງການປົກຄອງບ້ານຈຳນວນ 2 ສະບັບ ຄື: ຄຳແນະນຳ ກ່ຽວກັບການຄຸ້ມຄອງຄ່າທຳນຽມ ແລະ ຄ່າບໍລິການເອກະສານຂອງ ອົງການປົກຄອງບ້ານ; ຂໍ້ຕົກລົງ ກ່ຽວກັບການຄຸ້ມຄອງນຳໃຊ້ເຄື່ອງແບບຂອງນາຍບ້ານ ແລະ ຮອງນາຍບ້ານ; ສຳເລັດການປັບປຸງນິຕິກຳ ທີ່ເປັນບ່ອນອີງພື້ນຖານໃຫ້ແກ່ອົງການປົກຄອງຂັ້ນບ້ານໄດ້ ຈຳນວນ 05 ສະບັບຄື: ຄຳແນະນຳ ກ່ຽວກັບການສ້າງກົດລະບຽບບ້ານ, ຄຳແນະນຳ ກ່ຽວກັບການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ແລະ ປ່ຽນຊື່ບ້ານ, ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການປົກຄອງບ້ານ, ຂໍ້ຕົກລົງວ່າດ້ວຍມາດຕະຖານອົງການປົກຄອງບ້ານເຂັ້ມແຂງໜັກແໜ້ນ ແລະ ຂໍ້ຕົກລົງປະກອບສ່ວນຂອງປະຊາຊົນໃນການພັດທະນາ.

- **ວຽກງານຈົດທະບຽນ ແລະ ສະຖິຕິພົນລະເມືອງ:** ສຳເລັດການຜັນຂະຫຍາຍ ຍຸດທະສາດວຽກງານການຈົດທະບຽນແລະສະຖິຕິພົນລະເມືອງດ້ວຍການພັດທະນາລະບົບຖານຂໍ້ມູນຄຸ້ມຄອງພົນລະເມືອງເອເລັກໂຕຼນິກ 7 ປະເພດຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍທະບຽນຄອບຄົວພ້ອມທັງຝຶກອົບຮົມ ແລະ ເປີດການນຳໃຊ້ໃນ 148 ເມືອງ 18 ແຂວງທົ່ວປະເທດພ້ອມທັງເປີດຂະບວນການຈົດທະບຽນການເກີດຢູ່ 18 ແຂວງທົ່ວປະເທດ, ໄດ້ຈົດທະບຽນຕ່າງໆ ເຂົ້າລະບົບເອເລັກໂຕຼນິກ ຈຳນວນ 2,061,703 ຄົນ ແລະ ອອກໃບຢັ້ງຢືນການເກີດ 1,302,392 ຄົນ (17.06%); ການເສຍຊີວິດ 33,078 ຄົນ ໆລໆ. ໄດ້ຫັນຈາກລະບົບເຈ້ຍເຂົ້າສູ່ລະບົບເອເລັກໂຕຼນິກ; ພ້ອມທັງເຊື່ອມຕໍ່ກັບຖານຂໍ້ມູນຂອງ 07 ຂະແໜງການທີ່ກ່ຽວຂ້ອງ. ສຳເລັດການສ້າງຮ່າງດຳລັດວ່າດ້ວຍການໃຫ້ສັນຊາດລາວ ແກ່ບຸກຄົນພິເສດໂດຍພື້ນ ຖານແລ້ວ ນຳສະເໜີລັດຖະບານແລະເອົາເຂົ້າຜ່ານກົມການເມືອງພິຈາລະນາຕົກລົງເອົາເຂົ້າກັບດຳລັດວ່າດ້ວຍພົນລະເມືອງກິດຕິມະສັກ ແລະ ສຳເລັດການຄົ້ນຄ້ວາຄຳແນະນຳການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທະບຽນຄອບຄົວ , ໄດ້ສະໜອງງົບປະມານໂຄງການ ຈົດທະບຽນ ແລະ ສະຖິຕິພົນລະເມືອງໃຫ້ ທ້ອງຖິ່ນ ເພື່ອຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານຈົດທະບຽນ ແລະ ສະຖິຕິພົນລະເມືອງຢູ່ 18 ແຂວງ ແລະ 148 ເມືອງ.

- **ວຽກງານຄຸ້ມຄອງລັດຖະກອນ:** ສຳເລັດການອະນຸມັດການຮັບບັນຈຸລັດຖະກອນໃໝ່ປີ 2021-2024 ຈຳນວນ 4,550 ຄົນ (ສະເລ່ຍ 1,125 ຄົນຕໍ່ປີ) ໃຫ້ບັນດາກະຊວງ-ອົງການຂັ້ນສູນກາງ ແລະ ທ້ອງຖິ່ນ; ໄດ້ອະນຸມັດພະນັກງານ-ລັດຖະກອນ ເຂົ້າຮັບອຸດໜູນປະເພດຕ່າງໆ (ອອກທຸກຮູບແບບ) ແຕ່ປີ 2021-2024 ຈຳນວນ 11,581 ຄົນ (ສະເລ່ຍ 2,895 ຄົນຕໍ່ປີ). ເກັບກຳສະຖິຕິພະນັກງານ-ລັດຖະກອນ ປະຈຳປີ 2024 ໃນທົ່ວປະເທດມີຈຳນວນ 172,341 ຄົນ(ຍິງ 83,366 ຄົນ) ເທົ່າກັບ 2.28% ຂອງຈຳນວນພົນລະເມືອງທັງໝົດ 7,489,151 ຄົນ (ປີ 2021 ກວມເອົາ 2.4%) ຫຼຸດລົງຈາກປີຜ່ານມາ ຈຳນວນ 0.06%.

**ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ທີ່ຕິດພັນກັບວຽກຈຸດສຸມຍົກສູງປະສິດທິພາບການຄຸ້ມຄອງລັດດ້ວຍກົດໝາຍ ມີຜົນໄດ້ຮັບຄື:** ໄດ້ສ້າງແລະຮັບຮອງນິຕິກຳຕິດພັນກັບວາລະແຫ່ງຊາດດ້ານເສດຖະກິດ-ການເງິນ ໄດ້ 11 ສະບັບ; ໄດ້ປັບປຸງກົງຈັກການຈັດຕັ້ງລັດຕາມທິດກະທັດຮັດ ແລະ ມີປະສິດທິຜົນ ເຊິ່ງສາມາດ ຮັບຮອງເອົາຜົນການກຳນົດຕຳແໜ່ງງານ ຂອງພາກສ່ວນຕ່າງໆໄດ້ 834 ຫົວໜ່ວຍ ໃນນັ້ນ, ຂັ້ນສູນກາງ ມີ 201 ຫົວໜ່ວຍເທົ່າກັບ 44.56% (450 ຫົວໜ່ວຍ ຂັ້ນສູນ

ກາງ), ຂັ້ນແຂວງ ມີ 162 ຫົວໜ່ວຍ ເທົ່າກັບ 28.77% (563 ຫົວໜ່ວຍ ຂັ້ນແຂວງ) ແລະ ຂັ້ນເມືອງ ມີ 471 ຫົວໜ່ວຍ ເທົ່າກັບ 13.69% (ໃນຈຳນວນ 3,439 ຫົວໜ່ວຍຂັ້ນເມືອງ) ສາມາດຫຼຸດຈຳນວນລັດຖະກອນລົງ ເປັນຈຳນວນ 6,480 ຄົນ (ສະເລ່ຍ 2.160 ຄົນຕໍ່ປີ) ເມື່ອທຽບຈຳນວນພະນັກງານ-ລັດຖະກອນກັບຈຳນວນປະຊາກອນທົ່ວປະເທດ ແມ່ນ ຫລຸດລົງຈາກຈຳນວນ 2.48% ໃນປີ 2021 ມາເປັນຈຳນວນ 2.28% ໃນປີ 2023 (ຄາດໝາຍແມ່ນ 1.8%); ສຳເລັດ ການຄົ້ນຄວ້າປັບປຸງມູນຄ່າດັດສະນີເງິນເດືອນພື້ນຖານຈາກ ຈຳນວນ7,200 ກີບ ເປັນ 7,350 ກີບ ໃນປີ 2022 ແລະ ເພີ່ມອຸດ ໜູນຄ່າຄອງຊີບໃຫ້ພະນັກງານ-ລັດຖະກອນ ຈຳນວນ 150,000 ກີບ/ເດືອນ/ຄົນ ໃນຕົ້ນປີ 2023 ແລະ ເພີ່ມເງິນເດືອນ ຂັ້ນຕ່ຳເປັນ 1,700,000 ກີບ/ຄົນ/ເດືອນ; ພ້ອມທັງໄດ້ຊຸກຍູ້ການຫັນຫົວ

ໜ່ວຍວິຊາການທີ່ມີລາຍຮັບໄປສູ່ກຸ້ມຕົນເອງດ້ານງົບປະມານ ຈຳນວນ 5 ພາກສ່ວນ (ມຊ ດົງໂດກ, ວິທະຍາໄລ ປາກປາສັກ, ໂຮງໝໍເສດຖາ, ໂຮງໝໍມະໂຫສົດ ແລະ ໂຮງໝໍ 150 ຕຽງ) ແລະ ໄດ້ສຳເລັດການເກັບກຳຂໍ້ມູນ ຫົວໜ່ວຍວິຊາ ການທີ່ສາມາດມີລາຍຮັບດ້ານວິຊາການໃນໄລຍະຕໍ່ໜ້າ. ສຳເລັດການຄົ້ນຄວ້າສ້າງຮ່າງດຳລັດວ່າດ້ວຍການຫັນຫົວໜ່ວຍ ບໍລິຫານວິຊາການເປັນເຈົ້າຕົນເອງ ແລະ ຮ່າງດຳລັດວ່າດ້ວຍພາລະກອນ. ສຳເລັດການນຳສະເໜີລັດຖະບານ ຮັບຮອງເອົາດຳ ລັດວ່າດ້ວຍນະໂຍບາຍຕໍ່ພະນັກງານ-ລັດຖະກອນ ທີ່ປະຕິບັດວຽກງານຢູ່ເຂດຫ່າງໄກສອກຫລີກທຸລະກັນດານ (ສະບັບ ປັບປຸງ) ເລກທີ 292/ລບ, ລົງວັນທີ 5 ເມສາ 2021. ພ້ອມນີ້, ກໍ່ໄດ້ດຳເນີນການປະເມີນ ປີ 2022 ສຳເລັດ ຈຳນວນ 12 ແຂວງ, ລວມຈຳນວນລັດຖະກອນທັງໝົດ 5,265 ຄົນ, ງົບປະມານທີ່ໃຊ້ຈ່າຍໃຫ້ລັດຖະກອນຕໍ່ເດືອນ ເຂດລະດັບ I ມີ 369,134,406 ກີບ, ລະດັບ II ມີ 1,113,050,823 ກີບ ແລະ ລັດຖະກອນລະດັບ III ມີ 1,086,119,213 ກີບ, ລວມ ທັງໝົດຈຳນວນເງິນທີ່ໄດ້ຈ່າຍ ມີ 2,566,304,442 ກີບ.

ໄດ້ຂະຫຍາຍການບໍລິການນຳໃຊ້ລະບົບເຕັກນິກສູນຂໍ້ມູນ (DATA CENTER) ໃຫ້ສາມາດຮອງຮັບ ຄວາມຕ້ອງການໃນການຫັນເປັນດີຈິຕອນ; ສຳເລັດການສະໜອງລະບົບໂຄງລ່າງພື້ນຖານສູນຂໍ້ມູນ, ເປັນຕົ້ນ ລະບົບຄຣາວ, ລະບົບເຄືອຂ່າຍ (ສະໜອງຂໍ້ມູນຕົວເລກ) ເພື່ອຮັບປະກັນການເຮັດວຽກຂອງລະບົບ ແລະ ຮອງຮັບການ ຕິດຕັ້ງລະບົບການບໍລິຫານລັດດ້ວຍເອເລັກໂຕຣນິກ.

### *6.2 ວຽກງານປັບປຸງກົນໄກ, ລະບຽບການປະສານງານລະຫວ່າງພາກລັດດ້ວຍກັນໃຫ້ມີຄວາມເປັນເອກະພາບ ແລະ ວ່ອງໄວຂຶ້ນ*

- ສຳເລັດການສ້າງຍຸດທະສາດແຫ່ງຊາດ ວ່າດ້ວຍການບໍລິການຂອງລັດຜ່ານກົນໄກປະຕູດຽວຮອດປີ 2030 ຕາມດຳລັດ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 302/ນຍ, ລົງວັນທີ 01 ພະຈິກ 2023; ສຳເລັດການຊຸກຍູ້ ແລະ ສ້າງຄວາມເຂັ້ມແຂງວຽກງານບໍລິການຜ່ານປະຕູດຽວ ແລະ ຈັດຝຶກອົບຮົມ ວຽກງານບໍລິການຜ່ານປະຕູດຽວໃຫ້ແຂວງເປົ້າໝາຍຈຳນວນ 12 ແຂວງ. ສຳເລັດການສ້າງຕັ້ງສູນບໍລິການຜ່ານປະຕູດຽວ ຢູ່ຂັ້ນເມືອງ ຈຳນວນ 14 ສູນ ຕາມເປົ້າໝາຍທີ່ຕັ້ງໄວ້ ຖ້າທຽບໃສ່ວາລະແຫ່ງຊາດ (ຄາດໝາຍແຕ່ປີ 2021-2023 ໃຫ້ ສູນບໍລິການຜ່ານປະຕູດຽວເພີ່ມຂຶ້ນ 09 ແຫ່ງ, ສະເລ່ຍ 03 ແຫ່ງຕໍ່ປີ) ເຫັນວ່າໄດ້ລື່ນຄາດໝາຍ 05 ແຫ່ງ. ປະຈຸບັນມີສູນ ບໍລິການຜ່ານປະຕູດຽວທັງໝົດ 75 ແຫ່ງ (ຂັ້ນແຂວງ 14 ແຫ່ງ, ຂັ້ນເມືອງ 61 ແຫ່ງ) ຊຶ່ງອີງໃສ່ ແຜນການ 05 ປີ ແຕ່ປີ 2021-2025 ແມ່ນລື່ນຄາດໝາຍ 17 ແຫ່ງ (ຈາກເປົ້າໝາຍທີ່ຕັ້ງໄວ້ 2021-2025 ແມ່ນ 58 ແຫ່ງ).
- ສືບຕໍ່ປັບປຸງກົນໄກການຄຸ້ມຄອງການລົງທຶນຂອງພາຍໃນ ແລະ ຕ່າງປະເທດ ໃຫ້ສອດຄ່ອງກວ່າເກົ່າ ໂດຍໄດ້ ລົບລ້າງຄະນະຄຸ້ມຄອງການລົງທຶນຂອງພາຍໃນ ແລະ ຕ່າງປະເທດຂັ້ນສູນກາງ ແລະ ທ້ອງຖິ່ນ ທັງປັບປຸງບາງເນື້ອໃນ ໃນດຳລັດ 02/ນຍ ແລະ ດຳລັດ 03/ນຍ ໃນການສ້າງເງື່ອນໄຂໃຫ້ແກ່ການລົງທຶນຂອງພາກສ່ວນຕ່າງໆໃຫ້ມີຄວາມ ສະດວກວ່ອງໄວຂຶ້ນກວ່າເກົ່າ.

### *6.3 ວຽກງານຮັບປະກັນໃຫ້ມີສະຖຽນລະພາບທາງດ້ານການເມືອງ, ມີຄວາມສະຫງົບ ແລະ ມີຄວາມເປັນລະບຽບ ຮຽບຮ້ອຍໃນສັງຄົມ, ສັງຄົມມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ*

ໄດ້ເອົາໃຈໃສ່ ສ້າງ, ປັບປຸງກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ໃຫ້ເປັນລະບົບຄົບຊຸດ, ໃນນີ້ ໄດ້ສ້າງ ແລະ ປັບປຸງກົດໝາຍ ຈຳນວນ 50 ສະບັບ (ສ້າງໃໝ່ ຈຳນວນ 16 ສະບັບ ແລະ ປັບປຸງ ຈຳນວນ 34 ສະບັບ), ກົດໝາຍທີ່ຕິດ ພັນກັບ 2 ວາລະແຫ່ງຊາດ ມີທັງໝົດ 17 ສະບັບ, ໃນນັ້ນ 11 ສະບັບ ຕິດພັນກັບການແກ້ໄຂຄວາມຫຍຸ້ງຍາກດ້ານ ເສດຖະກິດ-ການເງິນ ໂດຍສະເພາະນິຕິກຳທີ່ຕິດພັນກັບຄຳສັ່ງເລກທີ 18/ນຍ. ລັດຖະບານ ໄດ້ຄົ້ນຄ້ວາຍຸດທະສາດການ

ພັດທະນາໃນຫຼາຍຂົງເຂດ ແລະ ນໍາສະເໜີສະພາແຫ່ງຊາດຮັບຮອງ ເປັນຕົ້ນ: ຍຸດທະສາດພັດທະນາແຮ່ທາດ 10 ປີ (2021-2025) ແລະ ວິໄສທັດຮອດປີ 2035; ຍຸດທະສາດການຄຸ້ມຄອງນໍ້າ ແລະ ຊັບພະຍາກອນນໍ້າແຫ່ງຊາດ ຮອດປີ 2030; ຍຸດທະສາດການພັດທະນາເສດຖະກິດດິຈິຕອນ 10 ປີ (2021-2030) ແລະ ວິໄສທັດການພັດທະນາເສດຖະກິດດິຈິຕອນແຫ່ງຊາດ 20 ປີ (2021-2040); ແລະ ສໍາເລັດສ້າງແຜນແມ່ບົດສົ່ງເສີມ ແລະ ພັດທະນາທຸລະກິດລິເລີ່ມ (Start Up) ໄລຍະກ້າວເຂົ້າສູ່ເສດຖະກິດດິຈິຕອນ. ນອກຈາກນີ້, ໄດ້ຮ່ວມກັນກັບຄູ່ຮ່ວມພັດທະນາຄົ້ນຄວ້າຍຸດທະສາດຈໍານວນໜຶ່ງ ເພື່ອຮອງຮັບໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX (2021-2025).

ໄດ້ສໍາເລັດການປັບປຸງກົດໝາຍວ່າດ້ວຍການປະຕິບັດຄໍາຕັດສິນຂອງສານ ແລະ ສ້າງນິຕິກໍາກ່ຽວກັບການປະຕິບັດຄໍາຕັດສິນຂອງສານ, ປັບປຸງກົງຈັກການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກຂອງອົງການປະຕິບັດໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການປະຕິບັດຄໍາຕັດສິນຂອງສານ (ສະບັບປັບປຸງ 2021) ແລະ ອອກຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມ, ກອງ ແລະ ຫ້ອງປະຕິບັດຄໍາຕັດສິນຂອງສານ, ໃນນັ້ນ ໄດ້ສໍາເລັດການສ້າງຕັ້ງກອງປະຕິບັດຄໍາຕັດສິນຂອງສານຢູ່ ນະຄອນຫຼວງວຽງຈັນ ແລະ 4 ແຂວງ ແລະ ຫ້ອງປະຕິບັດຄໍາຕັດສິນຂອງສານ ຢູ່ 11 ເມືອງ ໂດຍເຮັດແບບທົດລອງຕາມການຕົກລົງຂອງລັດຖະບານ. ອົງການປະຕິບັດຄໍາຕັດສິນຂອງສານແຕ່ລະຂັ້ນ ໄດ້ເອົາໃຈໃສ່ປະຕິບັດໜ້າທີ່ຂອງຕົນ ເຊິ່ງໄລຍະ 5 ປີຜ່ານມາ ມີຄໍາຕັດສິນຂອງສານ ທັງໝົດ 64,013 ເລື່ອງ, ສາມາດນໍາມາຈັດຕັ້ງປະຕິບັດ ໄດ້ 54,411 ເລື່ອງ ເທົ່າກັບ 85% ຂອງແຜນການ (ແຜນການ 5 ປີ ໃຫ້ໄດ້ 85%), ປະຕິບັດສໍາເລັດ ແລະ ປິດສໍານວນຄະດີໄດ້ 7,464 ເລື່ອງ ເທົ່າກັບ 13.71% ຂອງຄໍາຕັດສິນທີ່ນໍາມາຈັດຕັ້ງປະຕິບັດ (ແຜນການ 5 ປີ ໃຫ້ໄດ້ 20%).

## 7. ການຈັດຕັ້ງປະຕິບັດເງື່ອນໄຂການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ LDC.

\+ **ການປະເມີນ LDC ປີ 2021**: ອີງຕາມຜົນການປະເມີນປີ 2021 ຄັ້ງທີ 2 (ຄັ້ງທີ 1 ແມ່ນປີ 2018 ບັນລຸ 2 ໃນ 3 ເງື່ອນໄຂຂອງ LDC) ຂອງອົງການ CDP ເຫັນວ່າ ສປປ ລາວ ສາມາດບັນລຸ 3 ເງື່ອນໄຂຂອງການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ຄື:

1) ຄ່າດັດຊະນີ GNI: ແມ່ນຄ່າວັດແທກຊີວິດການເປັນຢູ່ຂອງປະຊາຊົນລາວມີການປ່ຽນແປງທີ່ດີຂຶ້ນ ເຊິ່ງໃນປີ 2021 ສາມາດປະຕິບັດໄດ້ 2,479 ໂດລາສະຫະລັດ ເຫັນວ່າລື່ນຄາດໝາຍ 5 ປີ ທີ່ກໍານົດໄວ້ 1,222 ໂດລາສະຫະລັດ ແລະ ສູງກວ່າ ການປະເມີນ GNI ໃນປີ 2018 ທີ່ ສປປ ລາວ ປະຕິບັດໄດ້ 1,996 ໂດລາສະຫະລັດ.

2) ຄ່າດັດຊະນີ HAI: ຄ່າວັດແທກຄວາມສາມາດໃນການສ້າງຊັບພະຍາກອນມະນຸດທີ່ຈະເປັນກໍາລັງໃນການພັດທະ ນາປະເທດ ເຊິ່ງລວມມີໂພຊະນາການ, ອັດຕາການເກີດ, ອັດຕາການຕາຍ, ອັດຕາການຮູ້ໜັງສື ແລະ ອັດຕາການເຂົ້າຮຽນຊັ້ນມັດທະຍົມ; ການປະເມີນໃນປີ 2021 ເຫັນວ່າຫຼຸດລົງໜ້ອຍໜຶ່ງ ໂດຍຫຼຸດລົງຈາກລະດັບ 72.8 ໃນປີ 2018 ມາເປັນ 72.7 ໃນປີ 2021 ແຕ່ຍັງຢູ່ໃນລະດັບເກີນຄາດໝາຍ 5ປີ ທີ່ວາງໄວ້ຕ້ອງຢູ່ໃນລະດັບ 66.

3) ຄ່າດັດຊະນີ EVI: ຄ່າວັດແທກສະແດງເຖິງຄວາມບອບບາງຈາກຜົນກະທົບພາຍນອກ ແລະ ຄວາມສາມາດໃນການຮັບມືບັນດາຜົນກະທົບຕ່າງໆ ໃນການປະເມີນປີ 2018 ສປປ ລາວ ແມ່ນບໍ່ສາມາດບັນລຸເງື່ອນໄຂດັ່ງກ່າວ ດ້ວຍບາງເງື່ອນໄຂຂອງ EVI ບໍ່ສາມາດຄວບຄຸມໄດ້ ເປັນຕົ້ນ ປັດໃຈດ້ານທີ່ຕັ້ງພູມສັນຖານ, ຄວາມຫຼາກຫຼາຍ ແລະ ຄວາມມີສະຖຽນລະພາບຂອງການສົ່ງອອກ ແລະ ທາງດ້ານກະສິກໍາ. ເຊິ່ງໃນການປະເມີນ ປີ 2021 ເຫັນວ່າ ບັນຫາຕ່າງໆແມ່ນມີການປັບປຸງທີ່ດີຂຶ້ນ ໂດຍສະເພາະ ບັນດາພື້ນຖານໂຄງລ່າງກັບປະເທດຄູ່ຄ້າ, ບັນດາອົງປະ ກອບທາງດ້ານເສດຖະກິດທີ່ຕິດພັນກັບນະໂຍບາຍ, ຄວາມບໍ່ສະຖຽນລະພາບທາງດ້ານການສົ່ງອອກ ແລະ ດ້ານກະສິກໍາ ໄດ້ຮັບການປັບປຸງໃຫ້ມີປະສິດທິພາບທີ່ດີຂຶ້ນ ເຮັດໃຫ້ ຄ່າດັດຊະນີ EVI ຂອງ ສປປ ລາວ ມີທ່າອ່ຽງດີຂຶ້ນຫຼາຍສົມຄວນ ຈາກລະດັບ 33.7 ໃນປີ 2018 ຫຼຸດລົງມາເປັນ 27 ໃນປີ 2021 ເຫັນວ່າບັນລຸຄາດໝາຍ 5 ປີ ກໍານົດໄວ້ໃນລະດັບ 32.

\+ **ການປະເມີນ LDC ຄັ້ງທີ 3 ໃນປີ 2024:** ສປປ ລາວ ຍັງສາມາດສືບຕໍ່ບັນລຸໄດ້ 3 ເງື່ອນໄຂຂອງການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາອີງຕາມສະພາບເງື່ອນໄຂຂອງການພັດທະນາຍັງເຫັນວ່າ ໃນປີ 2023 ການເຕີບໂຕເສດຖະກິດ ຂອງ ສປປ ລາວ ຍັງສືບຕໍ່ຂະຫຍາຍຕົວຕໍ່ເນື່ອງ, ຄ່າວັດແທກ 3 ດັດຊະນີ ຍັງເຫັນວ່າຕົວເລກມາດຖານ ແລະ ດັດຊະນີຍ່ອຍທີ່ນອນໃນ 3 ຄ່າວັດແທກດັດຊະນີ ຍັງຢູ່ໃນລະດັບເກີນຄ່າມາດຕະຖານທີ່ດີ

ເຮັດໃຫ້ພວກເຮົາຍັງຮັກສາການບັນລຸໃນ 3 ເງື່ອນໄຂ ຄື: GNI ໃນປີ 2024 ບັນລຸໄດ້ 2,503 ໂດລາສະຫະລັດຕໍ່ຫົວຄົນ (ຄ່າມາດຖານກໍານົດໄວ້ ແມ່ນ 1,306 ໂດລາສະຫະລັດ), HAI ບັນລຸໄດ້ 74.8 (ຄ່າມາດຖານກໍານົດໄວ້ ໃຫ້ຫຼາຍກວ່າ 66)ແລະ EVI ປະຕິບັດໄດ້ 29.8 (ຄ່າມາດຖານກໍານົດໄວ້ ຕໍ່າກວ່າ 32) ຂອງການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ. ເຖິງແມ່ນວ່າສະພາບເສດຖະກິດຈະສົ່ງຜົນກະທົບຕໍ່ລາຍໄດ້ຕໍ່ຫົວຄົນ ແລະ ການພັດທະນາທາງດ້ານສັງຄົມ ກໍ່ຕາມ.

+ **ການກະກຽມຍຸດທະສາດການຂ້າມຜ່ານ STS**: ໄດ້ລິເລີ່ມຄົ້ນຄວ້າຮ່າງແຜນຍຸດທະສາດການຂ້າມຜ່ານອອກຈາກສະ ຖານະພາບປະເທດດ້ອຍພັດທະນາຢ່າງໂລ່ງລ່ຽນ ຂອງ ສປປ ລາວ ໃນທ້າຍປີ 2021. ປັດຈຸບັນ, ໄດ້ສໍາເລັດ ແລະ ຖືກຮັບຮອງຈາກລັດຖະບານແລ້ວ.

## 8. ເປົ້າໝາຍການພັດທະນາແບບຍືນຍົງ (SDGs):

ແມ່ນໜຶ່ງໃນວຽກງານບູລິມະສິດ ທີ່ ສປປ ລາວ ໄດ້ມີພັນທະຕໍ່ສາກົນ ເພື່ອບັນລຸຄາດໝາຍ ປພຍ ຮ່ວມກັນ, ພາຍຫຼັງໄດ້ມີການຮັບຮອງເອົາເປົ້າໝາຍດັ່ງກ່າວ, ສປປ ລາວ ແມ່ນໄດ້ເຊື່ອມສານວຽກງານດັ່ງກ່າວເຂົ້າໃນແຜນການ 5 ປີ ຄັ້ງທີ VIII (2016-2020) ແລະ ສືບຕໍ່ເຊື່ອມສານໃນແຜນການ 5 ປີ ຄັ້ງທີ IX (2021-2025), ທັງໄດ້ເຊື່ອມສານຕົວຊີ້ບອກ SDGs ເຂົ້າໃນຂອບການຕິດຕາມ ແລະ ປະເມີນຜົນແຜນການ 5 ປີ ຄັ້ງທີ IX ທັງໝົດ 46 ຕົວຊີ້ບອກ, ໄດ້ສົມທົບກັບຂະແໜງການ ແລະ ທ້ອງຖິ່ນ ລວມທັງບັນດາຄູ່ຮ່ວມພັດທະນາ ສຸມທຶນຮອນເຂົ້າໃສ່ຂະແໜງການທີ່ຮີບດ່ວນ ແລະ ເປັນບູລິມະສິດ ຫຼື ເປົ້າໝາຍທີ່ມີຄວາມສ່ຽງບໍ່ບັນລຸ ເປັນຕົ້ນ ວຽກງານການສະໜອງທຶນການບໍລິການສາທາລະນະສຸກ ເຫັນວ່າຍັງມີຄວາມທ້າທາຍ. ໃນໄລຍະທີ່ຜ່ານມາ ສປປ ລາວ ໄດ້ເຮັດບົດລາຍງານແຫ່ງຊາດແບບສະ ໝັກໃຈ ສະບັບທີ 2 (ໃນປີ 2021) ເພື່ອລາຍງານອົງການສະຫະປະຊາຊົນ ເຫັນວ່າ ການຈັດຕັ້ງປະຕິບັດວຽກງານແມ່ນມີຄວາມຄືບໜ້າບາງດ້ານ ແລະ ບາງວຽກງານມີສິ່ງທ້າທາຍທີ່ເປັນອຸປະສັກໃນການຈັດຕັ້ງປະຕິບັດ ປພຍ ຢູ່ພາຍໃນປະເທດ ກໍຄື ແຕ່ລະຂະແໜງການຕ່າງໆ ແຕ່ສູນກາງຮອດທ້ອງຖິ່ນ ເຊັ່ນ: ໄດ້ມີຫຼາຍໜ້າວຽກທີ່ຕິດພັນກັບ ປພຍ ປະສົບຄວາມຫຍຸ້ງຍາກ, ຫຼາຍກິດຈະກໍາໄດ້ຖືກເລື່ອນການຈັດຕັ້ງປະຕິບັດອອກໄປ ແລະ ມີຄວາມຊັກຊ້າ ໂດຍສະເພາະໃນຊ່ວງໄລຍະທີ່ມີການແຜ່ລະບາດຂອງພະຍາດໂຄວິດ-19, ບົນພື້ນຖານນັ້ນ ອົງການ ສປຊ ໄດ້ຕີລາຄາ ແລະ ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ປພຍ ຂອງ ສປປ ລາວ ແມ່ນຖືກຈັດອັນດັບ 111 (ປີ 2022) ຈາກ 163 ປະເທດ (ດ້ວຍຄະແນນ 63.4/100) ແລະ ໄດ້ຕີລາຄາ ສປປ ລາວ **ມີ 3 ເປົ້າໝາຍ** ມີທ່າອ່ຽງທີ່ດີສາມາດບັນລຸໄດ້ ມີ **ປພຍ 6**: ມີນໍ້າສະອາດ ແລະ ສຸຂະອະນາໄມ; **ປພຍ 8**: ມີວຽກເຮັດງານທໍາທີ່ດີ ແລະ ເສດຖະກິດມີການຂະຫຍາຍຕົວ ແລະ **ປພຍ 12**: ສົ່ງເສີມການບໍລິໂພກ-ບໍລິໂພກ ແລະ ການຜະລິດຢ່າງມີຄວາມຮັບຜິດຊອບ. **ສ່ວນ ປພຍ ອື່ນໆ** ຄື: **ປພຍ 3**: ຮັບປະກັນການມີສຸຂະພາບທີ່ດີແມ່ນໄດ້ສຸມໃສ່ການປັບປຸງການບໍລິການສາທາລະນະສຸກ, ວຽກງານແມ່ ແລະ ເດັກ, ວຽກງານໂພຊະນາການ ເຫັນວ່າຫຼາຍຕົວຊີ້ບອກແມ່ນມີຄວາມຄືບໜ້າດີ ແລະ ມີທ່າອ່ຽງຈະບັນລຸຕາມແຜນການທີ່ວາງໄວ້ ສະແດງອອກອັດຕາສ່ວນການຕາຍຂອງແມ່ ຂອງ ສປປ ລາວ ເປັນ 1 ໃນ 10 ປະເທດອາຊຽນ ທີ່ມີອັດຕາຫຼຸດລົງໄວທີ່ສຸດ; **ປພຍ 4**: ຮັບປະກັນການສຶກສາໃຫ້ມີຄຸນນະພາບ, ເທົ່າທຽມ ແລະ ທົ່ວເຖິງ ໄດ້ສຸມໃສ່ພັດທະນາການສຶກສາໃນທຸກຂັ້ນ ເປັນຕົ້ນ ການສຶກສາກ່ອນໄວຮຽນ, ສາມັນສຶກສາ ແລະ ສ້າງຄູ ແລະ ໄດ້ມີການສໍາເລັດການສ້າງ ແລະ ປັບປຸງສໍານວນຂໍ້ມູນສະຖິຕິຂອງຂະແໜງສຶກສາ ໃນຈໍານວນ 34 ຕົວຊີ້ບອກ ເຫັນວ່າ ບາງຕົວຊີ້ບອກແມ່ນສາມາດບັນລຸຕາມຄາດໝາຍ ເຊັ່ນ: ອັດຕາການຈົບຊັ້ນປະຖົມ ບັນລຸຄາດໝາຍ 93.1%; **ປພຍ 5**: ຄວາມສະເໝີພາບຍິງ-ຊາຍ ໄດ້ສຸມໃສ່ຈັດຕັ້ງປະຕິບັດແຜນດໍາເນີນງານແຫ່ງຊາດ ເພື່ອຄວາມສະເໝີພາບຍິງ-ຊາຍ, ແມ່ ແລະ ເດັກ, ປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ຕໍ່ເດັກ ຊຶ່ງເຫັນວ່າມີຜົນສໍາເລັດທີ່ພົ້ນເດັ່ນ; **ປພຍ 7**: ການຮັບປະກັນການເຂົ້າເຖິງພະລັງງານທີ່ທັນສະໄໝ ເຫັນວ່າມີທ່າກ້າວຂະຫຍາຍຕົວດີສົມຄວນ ໂດຍສະເພາະການຂະຫຍາຍລະບົບຕາຂ່າຍໄຟຟ້າໃນເຂດຫ່າງໄກສອກຫຼີກຫຼາຍຂຶ້ນ ແລະ ການເພີ່ມອັດຕາການຊົມໃຊ້ໄຟຟ້າ ສະແດງອອກສາມາດບັນລຸການເຂົ້າເຖິງພະລັງງານໄຟຟ້າຂອງຄົວເຮືອນ 95.23% (ໃນປີ 2022). ໃນທາງກົງກັນຂ້າມມີ 1 ເປົ້າໝາຍ ຄື **ປພຍ 15**: ການອະນຸລັກ ແລະ ນໍາໃຊ້ສິ່ງມີຊີວິດເທິງໜ້າດິນແບບຍືນຍົງ ມີທ່າອ່ຽງທີ່ຖົດຖອຍລົງ. ນອກຈາກນີ້, ມີບາງຕົວຊີ້ບອກ ໃນບາງເປົ້າໝາຍ ເຫັນວ່າການຈັດຕັ້ງປະຕິບັດມີຄວາມຄືບໜ້າຊ້າ ແລະ ມີຄວາມສ່ຽງຄາດວ່າຈະບໍ່ບັນລຸ ເຊັ່ນ: **ປພຍ 1**: ລຶບລ້າງຄວາມທຸກຍາກທຸກຮູບແບບໃນທົ່ວໂລກ ແມ່ນ ຕົວຊີ້ບອກ ອັດຕາຄວາມທຸກຍາກ, ຕົວຊີ້ບອກການເພີ່ມອັດຕາສ່ວນປະຊາກອນຖືກປົກຄຸມດ້ວຍລະບົບປະກັນສັງຄົມ; **ປພຍ 2**: ລຶບລ້າງຄວາມອຶດຫິວ, ຄໍ້າປະກັນສະບຽງອາຫານ ແລະ ປັບປຸງໂພຊະນະການ ແມ່ນ

ຕົວຊີ້ບອກອັດຕາສ່ວນເດັກນ້ອຍທີ່ມີນ້ຳໜັກ ແລະ ລວງສູງ ບໍ່ໄດ້ມາດຖານ; **ປພຍ 4**: ດ້ານການສຶກສາ ແມ່ນ ຕົວຊີ້ບອກອັດຕາການອອກໂຮງຮຽນ ແລະ ການປະລະການຮຽນ ແມ່ນມີເກນຫຼຸດຄາດໝາຍທີ່ຕັ້ງໄວ້ ແລະ **1 ເປົ້າໝາຍ** ຄື **ປພຍ 18**: ວ່າດ້ວຍການເກັບກູ້ລະເບີດບໍ່ທັນແຕກທີ່ຕົກຄ້າງ ເຫັນວ່າມີຄວາມສ່ຽງບໍ່ສາມາດບັນລຸໄດ້ຕາມຄາດ ໝາຍ ເນື່ອງຈາກງົບປະມານທີ່ສຸມທຶນຮອນໃສ່ວຽກງານດັ່ງກ່າວ ມີຈຳກັດ ແລະ ການຊ່ວຍເຫຼືອຈາກສາກົນກໍມີທ່າອ່ຽງຫຼຸດລົງຫຼາຍ. ປັດຈຸບັນ, ກຳລັງກະກຽມການທົບທວນກາງສະໄໝໃນການຈັດຕັ້ງປະຕິບັດ ປພຍ ຮອດປີ 2030 ແລະ ບົດລາຍງານແບບສະໝັກໃຈ ສະບັບທີ 3 ຂອງ ສປປ ລາວ ໃນປີ 2024.

## 3. ຕີລາຄາລວມ

ໃນໄລຍະ 5 ປີຜ່ານມາ ເຖິງວ່າສະພາບການຂອງໂລກ, ພາກພື້ນ ສືບຕໍ່ຜັນແປຢ່າງສັບສົນ, ຢູ່ພາຍໃນປະເທດມີທັງກາລະໂອກາດ ແລະ ສິ່ງທ້າທາຍຫຼາຍດ້ານ, ແຕ່ດ້ວຍຄວາມພະຍາຍາມ, ບຸກບືນຂອງທຸກພາກສ່ວນທຸກຂັ້ນໃນການຈັດຕັ້ງລະບົບການເມືອງປະຊາທິປະໄຕ ປະຊາຊົນ ຈຶ່ງໄດ້ເຮັດໃຫ້ທຸກຄາດໝາຍ ແລະ ທຸກຕົວຊີ້ບອກຂອງແຜນການ 5 ປີ ຄັ້ງທີ IX ລ້ວນແຕ່ໄດ້ຮັບການຈັດຕັ້ງປະຕິບັດ, ເຊິ່ງໝາກຜົນໄດ້ຮັບຕົ້ນຕໍມີດັ່ງນີ້:

### 3.1 ຕີລາຄາຜົນສຳເລັດທີ່ພົ້ນເດັ່ນ

1) ປະເທດຊາດສືບຕໍ່ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ບົນຈິດໃຈເສີມຂະຫຍາຍມູນເຊື້ອແຫ່ງຄວາມສາມັກຄີອັນປຶກແຜ່ນ, ເອື້ອເຟື້ອເພື່ອແຜ່ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ຂອງປະຊາຊົນບັນດາເຜົ່າ ໂດຍພາຍໃຕ້ການນຳພາຂອງພັກ, ເຊິ່ງແກນກາງແມ່ນກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ.

2) ພື້ນຖານການຜະລິດ ແລະ ການບໍລິການ ສືບຕໍ່ໄດ້ຮັບການພັດທະນາ ແລະ ເກີດມີໜໍ່ແໜງໃໝ່ ຈຳນວນໜຶ່ງ ເປັນຕົ້ນ: ການຜະລິດພືດ-ສັດລ້ຽງ ເພື່ອເປັນສະບຽງອາຫານ ແລະ ເປັນສິນຄ້າສົ່ງອອກ ເຮັດໃຫ້ເສດຖະກິດໄດ້ຄ່ອຍໆ ຟື້ນຕົວ ແລະ ສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ; ການຄຸ້ມຄອງລາຍຮັບ, ລາຍຈ່າຍ ແລະ ເງິນຕາໄດ້ຮັບການປັບປຸງໃຫ້ດີຂຶ້ນເປັນກ້າວໆ, ສິ່ງສຳຄັນແມ່ນເສດຖະກິດຂອງປະເທດບໍ່ຕົກເຂົ້າສູ່ວິກິດການ.

3) ໂຄງລ່າງພື້ນຖານທີ່ສຳຄັນຮັບໃຊ້ໃຫ້ແກ່ການຜະລິດ, ທຸລະກິດ ແລະ ການເຊື່ອມໂຍງ-ເຊື່ອມຈອດກັບພາກພື້ນ ແລະ ສາກົນ ໄດ້ຮັບການພັດທະນາ ແລະ ຍົກລະດັບ ໂດຍການມີສ່ວນຮ່ວມຂອງທຸກພາກສ່ວນເສດຖະກິດ ເປັນຕົ້ນ: ສຳເລັດການກໍ່ສ້າງເສັ້ນທາງລົດໄຟລາວ-ຈີນ, ທາງດ່ວນວຽງຈັນ-ວັງວຽງ, ທ່າບົກ-ລະບົບໂລຈິດສຕິກ ແລະ ເສັ້ນທາງຫຼວງແຫ່ງຊາດ ຢູ່ບາງຊ່ວງທີ່ຈຳເປັນ.

4) ເຖິງວ່າຄວາມສາມາດສະໜອງທຶນ ແລະ ງົບປະມານມີອັນຈຳກັດ ແຕ່ດ້ວຍການປະກອບສ່ວນຂອງທຸກພາກສ່ວນເສດຖະກິດ ລວມທັງຂອງສັງຄົມໄດ້ເຮັດໃຫ້ຂົງເຂດວັດທະນະທຳ-ສັງຄົມ ໄດ້ສືບຕໍ່ພັດທະນາ ແລະ ມີຫຼາຍດ້ານມີຄວາມຄືບໜ້າດີຂຶ້ນກວ່າເກົ່າ; ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຕາມດຳລັດ 348/ນຍ ຂອງທ້ອງຖິ່ນຕ່າງໆ ສືບຕໍ່ໄດ້ຮັບການເອົາໃຈໃສ່ຕາມເງື່ອນໄຂ ແລະ ຄວາມສາມາດທາງດ້ານງົບປະມານ ແລະ ມີຜົນສຳເລັດດີຢູ່ຫຼາຍບໍລິເວນ.

5) ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໄດ້ຮັບການປັບປຸງ ແລະ ສ້າງຂຶ້ນຫຼາຍສະບັບ ອັນໄດ້ເປັນເຄື່ອງມືທີ່ສຳຄັນໃຫ້ແກ່ການເຄື່ອນໄຫວຂອງການຈັດຕັ້ງລະບົບການເມືອງປະຊາທິປະໄຕ; ການປັບປຸງກົງຈັກການຈັດຕັ້ງ, ການບໍລິການ-ການລົງທຶນຂອງທຸກພາກສ່ວນເສດຖະກິດ ຕິດພັນກັບການຄຸ້ມຄອງລັດ-ສັງຄົມດ້ວຍກົດໝາຍ ນັບມື້ໄດ້ຮັບການປັບປຸງ ແລະ ມີການຫັນປ່ຽນທີ່ຕັ້ງໜ້າຂຶ້ນ.

6) ການພົວພັນຮ່ວມມືກັບຕ່າງປະເທດຕາມທິດທີ່ກຳນົດໄວ້ໃນ ມະຕິ XI ຂອງພັກ ສືບຕໍ່ດຳເນີນເປັນປົກກະຕິດ້ວຍຮູບການ ແລະ ວິທີການທີ່ສອດຄ່ອງກັບການຜັນແປຂອງສະພາບການໃນແຕ່ລະໄລຍະ ແລະ ນຳຜົນປະໂຫຍດມາໃຫ້ປະເທດຊາດໃນທຸກສະຖານະການ.

### 3.2 ສາເຫດທີ່ພາໃຫ້ມີຈຸດດີ, ຜົນງານ

1) ຍ້ອນມີການນຳພາ-ຊີ້ນຳຂອງສູນກາງພັກ ທີ່ແທດຕົວຈິງ, ທັນການ ເຊິ່ງໂດຍກົງ ແລະ ເປັນປະຈຳ ແມ່ນກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ນຳໂດຍສະຫາຍເລຂາທິການໃຫຍ່ ທອງລຸນ ສີສຸລິດ ເປັນຜູ້ນຳໜ້

DRAFT

ໆ; ມີການຕິດຕາມ, ກວດກາຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ນະຄອນຫຼວງວຽງຈັນ ຢ່າງໃກ້ຊິດ, ປົກກະຕິ ແລະ ເຂັ້ມງວດ.

2) ການບໍລິຫານຂອງລັດຖະບານ ກໍຄືອົງການປົກຄອງທ້ອງຖິ່ນນັບມື້ໄດ້ຮັບການປັບປຸງຕາມທິດ ມີການຫັນປ່ຽນຢ່າງເລິກເຊິ່ງ, ຮອບດ້ານ ແລະ ຫຼາຍດ້ານໄດ້ມີການຫັນປ່ຽນທີ່ຕັ້ງໜ້າຂຶ້ນ; ທົ່ວພັກ, ທົ່ວປວງຊົນລາວບັນດາເຜົ່າ ລວມທັງພາກສ່ວນເສດຖະກິດຕ່າງໆໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດຢ່າງເປັນປົກກະຕິ.

3) ມີການຕິດຕາມ,ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX (2021-2025) ຂອງສະພາແຫ່ງຊາດ ກໍຄືສະພາປະຊາຊົນຂັ້ນແຂວງ ຢ່າງເປັນປົກກະຕິ, ການມີສ່ວນຮ່ວມຂອງທຸກພາກສ່ວນຂອງສັງຄົມ.

4) ມີການຮ່ວມມື ແລະ ໃຫ້ການຊ່ວຍເຫຼືອຈາກປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ, ຄູ່ຮ່ວມພັດທະນາໃນກອບສອງຝ່າຍ ແລະ ຫຼາຍຝ່າຍ ທັງໃນສະພາບປົກກະຕິ ແລະ ໃນສະພາບປະເຊີນໜ້າກັບ ການລະບາດພະຍາດໂຄວິດ-19 ກໍຄືການເກີດມີໄພພິບັດທາງທຳມະຊາດຕ່າງໆ; ພິເສດປະເທດເພື່ອນມິດຍຸດທະສາດໄດ້ໃຫ້ການຊ່ວຍເຫຼືອສະໜັບສະໜູນຢ່າງສະເໝີຕົ້ນສະເໝີປາຍດ້ວຍຄວາມຈິງໃຈ.

### 3.3 ຈຸດອ່ອນ, ຂໍ້ຄົງຄ້າງ

1) ລວມຍອດຜະລິດຕະພັນພາຍໃນ (GDP) ແມ່ນເພີ່ມຂຶ້ນ, ແຕ່ການເຕີບໂຕຍັງບໍ່ທັນຮັບປະກັນຄວາມ ໝັ້ນທ່ຽງ; ໄດ້ມີຄວາມພະຍາຍາມປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ແຕ່ວຽກຈຸດສຸມຫຼາຍດ້ານມີຄວາມຄືບໜ້າຊ້າ, ໃນນີ້ລວມທັງການຂະຫຍາຍຖານລາຍຮັບຄຽງຄູ່ກັນກັບການເກັບລາຍຮັບຍັງບໍ່ທັນສົມຄູ່ກັບທ່າແຮງຕົວຈິງ. ການຄຸ້ມຄອງລາຍຈ່າຍງົບປະມານ ເຖິງແມ່ນວ່າໄດ້ມີການປັບປຸງກົງຈັກ ແລະ ຫຼຸດຜ່ອນການອະນຸມັດຈຳນວນລັດຖະກອນລົງໃນແຕ່ລະປີ, ແຕ່ຖ້າທຽບໃສ່ບັນດາປະເທດອາຊຽນລາຍຈ່າຍໃນກົງຈັກ ຂອງປະເທດເຮົາແມ່ນຍັງສູງ; ສິ່ງທີ່ໜ້າເປັນຫ່ວງແມ່ນສະພາບອັດຕາເງິນເຟີ້, ອັດຕາແລກປ່ຽນ, ຄ່າຄອງຊີບ ມີການເໜັງຕີງແຮງທີ່ບໍ່ເປັນທ່າດີໃຫ້ແກ່ຄາດໝາຍຫຼາຍດ້ານທີ່ວາງໄວ້ ໂດຍສະເພາະ ໄດ້ສົ່ງຜົນກະທົບຕໍ່ຄາດໝາຍຕົ້ນຕໍຂອງແຜນການ 5 ປີ ຄັ້ງທີ IX ລວມທັງການປະຕິບັດຄາດໝາຍ LDC ແລະ SDG; ການຈັດຕັ້ງປະຕິບັດໂຄງການລົງທຶນຂອງພາກເອກະຊົນຈຳນວນໜຶ່ງຍັງບໍ່ທັນສາມາດຄຸ້ມຄອງໃຫ້ໄປຕາມບົດວິພາກເສດຖະກິດ-ເຕັກນິກ, ບາງໂຄງການໄດ້ສົ່ງຜົນຕໍ່ສະພາບແວດລ້ອມ ແລະກະທົບຕໍ່ການເປັນຢູ່ຂອງປະຊາຊົນ; ການລົງທຶນຂອງລັດຈຳນວນໜຶ່ງຍັງບໍ່ທັນສາມາດປະຕິບັດກົດໝາຍ ແລະ ລະບຽບການເຂັ້ມງວດ ເປັນຕົ້ນ ການປະຕິບັດມາດຕາ 19 ຂອງກົດໝາຍການລົງທຶນຂອງລັດ; ການລົງທຶນຂອງລັດໃນຂົງເຂດສັງຄົມຍັງບໍ່ທັນໄດ້ຕາມຄາດໝາຍ; ການປະຕິບັດຕາມຜົນການກວດສອບ-ກວດກາໃນແຕ່ລະປີມີຄວາມຄືບໜ້າຊ້າ.

2) ການຜະລິດສິນຄ້າ ແລະ ການບໍລິການ ເພື່ອທົດແທນການນຳເຂົ້າຍັງບໍ່ທັນແຂງແຮງ, ການສົ່ງອອກສ່ວນໃຫຍ່ແມ່ນວັດຖຸດິບ ແລະ ຄຸນນະພາບຍັງຕໍ່າ, ຍັງບໍ່ທັນບຸກຕະຫຼາດສົ່ງອອກໄດ້ຕາມທີ່ໄດ້ຕົກລົງປະເພດສິນຄ້ານຳປະເທດໃກ້ຄຽງໄດ້; ການພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຍັງບໍ່ທັນແຂງແຮງ ເຮັດໃຫ້ວິສາຫະກິດດັ່ງກ່າວບໍ່ສາມາດແຂ່ງຂັນກັບພາຍນອກ; ລັດວິສະຫະກິດຍັງບໍ່ທັນເຂັ້ມແຂງ, ການດຳເນີນທຸລະກິດ ກໍຍັງບໍ່ທັນມີປະສິດທິຜົນ, ບໍ່ມີຜົນກາໄລ, ສ້າງໜີ້ສິນ ເຮັດໃຫ້ລັດຖະບານຕ້ອງແບກຫາບພາລະ; ນອກນີ້, ການເຄື່ອນໄຫວທຸລະກິດຈຳນວນໜຶ່ງແລະ ການຄ້າ ໂດຍສະເພາະ ການຄ້າຊາຍແດນທີ່ບໍ່ເປັນທາງການຍັງແຜ່ຫຼາຍ ເຮັດໃຫ້ຫຍຸ້ງຍາກໃນການປະຕິບັດລາຍຮັບງົບປະມານ ແລະ ການຄຸ້ມຄອງເງິນຕາຕ່າງປະເທດ.

3) ການຂຸດຄົ້ນ ແລະ ນຳໃຊ້ທ່າແຮງທາງດ້ານຊັບພະຍາກອນທຳມະຊາດ ມີລັກສະນະຟ້າວຟັ່ງ ແລະ ບໍ່ປະຕິບັດຕາມຫຼັກວິທະຍາສາດ ຈຶ່ງເຮັດໃຫ້ການປະຕິບັດໂຄງການຂຸດຄົ້ນແຮ່ທາດຈຳນວນໜຶ່ງມີປະສິດທິຜົນຕ່ຳ, ບໍ່ສາມາດນຳລາຍໄດ້ມາໃຫ້ລັດຖະບານພໍເທົ່າໃດ, ເຊັ່ນດຽວກັບໂຄງການໃນຂະແໜງການຕ່າງໆ ມີຜົນກະທົບຕໍ່ສະພາບແວດລ້ອມທາງທຳມະຊາດ ແລະສັງຄົມ ໃນລະດັບຕ່າງກັນ. ໃນເວລາດຽວກັນນັ້ນ, ການຄຸ້ມຄອງອົງການບໍລິການລັດແຕ່ລະຂັ້ນພັດຍັງບໍ່ທັນແຂງແຮງ ແລະ ເຂັ້ມງວດຕາມກົດໝາຍ, ທັງບໍ່ທັນຮັບປະກັນ 3 ຫຼັກການ (ເດັດຂາດ, ໂປ່ງໃສ, ເປັນມືອາຊີບ).

4) ການພັດທະນາຂົງເຂດສັງຄົມ ແລະ ການແກ້ໄຂຄວາມທຸກຍາກ, ເຖິງວ່າໄດ້ມີຄວາມພະຍາຍາມ ແຕ່ຕົວຊີ້ບອກຈຳນວນໜຶ່ງຍັງບໍ່ທັນຮັບປະກັນທັງທາງດ້ານປະລິມານ ແລະ ຄຸນນະພາບ ແລະ ຍັງບໍ່ບັນລຸຄາດໝາຍທີ່ສະພາແຫ່ງຊາດຮັບຮອງ, ໃນນີ້ ລວມທັງວຽກງານການສຶກສາ, ສາທາລະນະສຸກ, ແຮງງານ ແລະສະຫວັດດີການສັງຄົມ, ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ.

DRAFT

5) ລະບອບ, ລະບຽບ ແລະ ກົນໄກການຄຸ້ມຄອງ ໃນການບໍລິຫານງານລັດ, ຕິດພັນກັບການປະຕິບັດກົນໄກການປະສານສົມທົບກັນລະຫວ່າງລັດຖະບານກັບຄະນະປະຈຳສະພາແຫ່ງຊາດ ເຖິງວ່າໄດ້ພະຍາຍາມປັບປຸງ, ແຕ່ບາງໄລຍະບໍ່ທັນສາມາດຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການຂອງວຽກງານໃນເງື່ອນໄຂໃໝ່; ກົດໝາຍທີ່ວາງອອກໃນບາງມາດຕາຍັງບໍ່ທັນສອດຄ່ອງກັບສະພາບການໃໝ່ ທັງມີອັນຂັດກັນ, ໂຄງການຈຳນວນໜຶ່ງມີການຂໍອະນຸຍາດຍົກເວັ້ນການເກັບພາສີອາກອນຕ່າງໆ ເຊິ່ງເປັນການເສຍລາຍຮັບງົບປະມານ, ການທັນເປັນທັນສະໄໝຍັງຊັກຊ້າ ແລະ ບໍ່ສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງວຽກງານ; ການແບ່ງຂັ້ນຄຸ້ມຄອງ ຕາມທິດ 3 ສ້າງ ລວມທັງລະບອບການສ່ອງແສງສະພາບການຕ່າງໆຂອງຂະແໜງການ ແລະ ທ້ອງຖິ່ນ ບາງໄລຍະບໍ່ຖອງທັນກັບກຳນົດເວລາທີ່ໄດ້ກຳນົດໄວ້; ການຈັດວາງພະນັກງານລັດຖະກອນຈຳນວນໜຶ່ງຍັງບໍ່ຖືກກັບວິຊາສະເພາະທີ່ໄດ້ຮຽນມາ.

6) ການແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມຕິດພັນກັບການແກ້ໄຂຢາເສບຕິດ, ເຖິງວ່າໄດ້ມີຄວາມພະຍາຍາມ, ແຕ່ປະກົດການຫຍໍ້ທໍ້ດັ່ງກ່າວ ເປັນຕົ້ນ ຢາເສບຕິດ, ປະກົດການຂີ້ລັກງັດແງະ, ການຄ້າຂາຍເຖື່ອນ ແລະ ອື່ນໆຍັງເກີດຂຶ້ນໃນທຸກທ້ອງຖິ່ນໃນລະດັບແຕກຕ່າງກັນ ອັນໄດ້ສ້າງຄວາມຫຍຸ້ງຍາກໃຫ້ແກ່ສັງຄົມກໍຄືການດຳລົງຊີວິດຂອງປະຊາຊົນ.

7) ການພົວພັນຮ່ວມມືກັບຕ່າງປະເທດ ເຖິງວ່າໄດ້ມີຄວາມພະຍາຍາມແຕ່ບັນຫາທີ່ຈະຕ້ອງສືບຕໍ່ເອົາໃຈໃສ່ແມ່ນຄວາມເປັນເຈົ້າການໃນດ້ານທີ່ໄດ້ຕົກລົງກັບສາກົນ ແລະ ປະເທດເພື່ອນມິດຕ່າງໆ ຂອງພວກເຮົາຍັງບໍ່ທັນສູງ ແລະ ມີຫຼາຍກໍລະນີແມ່ນດຳເນີນມີລັກສະນະຫຼົບໄປຫຼົບມາ ແລະ ແກ່ຍາວ.

**3.4 ສາເຫດທີ່ພາໃຫ້ມີຈຸດອ່ອນ, ຂໍ້ຄົງຄ້າງ**

1) ການນຳພາ-ຊີ້ນຳຜັນຂະຫຍາຍແຜນການ 5 ປີ ຄັ້ງທີ IX ຕິດພັນກັບການປະຕິບັດມະຕິ XI ຂອງພັກ, ສອງວາລະແຫ່ງຊາດ ໃຫ້ເປັນອັນລະອຽດປູ່ຂະແໜງການ, ອົງການ ແລະ ທ້ອງຖິ່ນ ຈຳນວນໜຶ່ງ ຍັງບໍ່ທັນດຳເນີນຢ່າງຈິງຈັງ, ການເຜີຍແຜ່, ເຊື່ອມຊຶມໃຫ້ທຸກພາກສ່ວນລວມທັງປະຊາຊົນບັນດາເຜົ່າຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງ ແລະ ທົ່ວເຖິງ ແຜນພັດທະນາເສດຖະກິດ-ສັງຄົມໄລຍະ 5 ປີ ກໍ່ຄືບັນດາວາລະແຫ່ງຊາດ ຈຶ່ງເຮັດໃຫ້ຄວາມຮັບຮູ້ເຂົ້າໃຈຂອງພະນັກງານ, ນັກຮົບ ແລະ ປະຊາຊົນບັນດາເຜົ່າຈຳນວນໜຶ່ງ ຕໍ່ແນວທາງນະໂຍບາຍຂອງພັກ-ລັດ ແລະ ນິຕິກຳທີ່ກ່ຽວຂ້ອງຂອງລັດຖະບານທີ່ພົວພັນເຖິງການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ກໍຄືການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ຢາເສບຕິດ ຍັງບໍ່ທັນເລິກເຊິ່ງ ແລະ ເອກະພາບກັນສູງເທົ່າທີ່ຄວນ.

2) ກົດໝາຍ, ລະບຽບການທີ່ວາງອອກໃນຜ່ານມາມີບາງມາດຕາໃນບາງກົດໝາຍບໍ່ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງວຽກງານໃນສະພາບການໃໝ່. ສຳລັບອັນທີ່ຖືກຕ້ອງ, ສອດຄ່ອງແລ້ວ, ແຕ່ການຈັດຕັ້ງປະຕິບັດຕົວຈິງຂອງການຈັດຕັ້ງ ແລະ ບຸກຄົນຈຳນວນໜຶ່ງຍັງບໍ່ທັນເຂັ້ມງວດ ໂດຍສະເພາະແມ່ນການນຳໃຊ້ ຊັບພະຍາກອນທຳມະຊາດຍັງຊະຊາຍ ບໍ່ເຂັ້ມງວດໃນການຄຸ້ມຄອງ ລວມທັງການປະຕິບັດວິໄນແຜນການ, ການເງິນ ແລະ ອື່ນໆ.

3) ການປະສານສົມທົບລະຫວ່າງຂະແໜງການດ້ວຍກັນ ແລະ ຂະແໜງການກັບທ້ອງຖິ່ນ ໃນວຽກງານຈຳນວນໜຶ່ງ ຍັງບໍ່ທັນກົມກຽວກັນດີ ທັງມີກົນໄກຫຼາຍຂັ້ນ-ຂອດຊໍ້າຊ້ອນກັນຈຶ່ງເຮັດໃຫ້ການປະຕິບັດມະຕິ, ແຜນການຕ່າງໆທີ່ພັກ-ລັດກໍຄື ຂອງຄະນະພັກ-ອົງການປົກຄອງທຸກຂັ້ນວາງອອກໃນບາງໄລຍະ, ບາງກໍລະນີບໍ່ທັນເອກະພາບກັນສູງ ແລະ ມີປະສິດທິຜົນຕໍ່າ.

4) ການພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະແມ່ນຂາດຂໍ້ມູນທີ່ຊັດເຈນ ໂດຍສະເພາະແມ່ນຂໍ້ມູນໃນການນຳໃຊ້ທີ່ດິນປະເພດຕ່າງໆ ຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດຕົວຈິງພົບຄວາມຫຍຸ້ງຍາກ ແລະ ມີຄວາມຊັກຊ້າ, ໃນນີ້ລວມທັງການດຶງດູດການລົງທຶນຈາກພາຍໃນ ແລະ ຕ່າງປະເທດ; ການທັນເປັນທັນສະໄໝໃນທຸກຂົງເຂດວຽກງານຂອງທຸກຂັ້ນ ແລະ ຂະແໜງບໍ່ທັນຈັດຕັ້ງປະຕິບັດຢ່າງຈິງຈັງເທື່ອ.

5) ການຕອບສະໜອງດ້ານງົບປະມານກໍ່ຄືທຶນຮອນທີ່ຈຳເປັນເພື່ອຮັບໃຊ້ໃຫ້ແກ່ການປະຕິບັດໜ້າທີ່ການ ເມືອງຂອງພາກສ່ວນຕ່າງໆໃນທຸກຂັ້ນ ກໍ່ຄືການພັດທະນາໃນທຸກຂົງເຂດວຽກງານບໍ່ທັນພຽງພໍກັບຄວາມຕ້ອງ ການຕົວຈິງ.

6) ພື້ນຖານການຜະລິດບໍ່ທັນແຂງແຮງ ແລະ ຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນໄດ້ສະສົມມາຫຼາຍປີບວກກັບພື້ນຖານເສດຖະກິດແຫ່ງຊາດຍັງອ່ອນນ້ອຍ, ໃນເວລາດຽວກັນພັດໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19, ການຜັນຜວນທາງເສດຖະກິດ ແລະ ການເມືອງຂອງພາກພື້ນ ແລະ ສາກົນ ໄດ້ສົ່ງຜົນກະທົບຕໍ່ການພັດທະນາເສດຖະກິດ-ສັງຄົມ ແລະ ການແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ.

DRAFT

### 3.5 ບົດຮຽນຖອດຖອນໄດ້

1) ການຮັບປະກັນສະຖຽນລະພາບທາງດ້ານການເມືອງ, ຄວາມເປັນລະບຽບຮຽບຮ້ອຍທາງສັງຄົມຕິດພັນກັບ ການຮັກສາຄວາມໝັ້ນທ່ຽງຂອງເສດຖະກິດມະຫາພາກ ບົນພື້ນຖານການເສີມຂະຫຍາຍມູນເຊື້ອຄວາມສາມັກຄີອັນເປັນປຶກແຜ່ນຂອງປະຊາຊົນບັນດາເຜົ່າ ພາຍໃຕ້ການນຳພາຂອງພັກ ແມ່ນເງື່ອນໄຂພື້ນຖານ ແລະ ສຳຄັນ ສຳລັບຜົນສຳເລັດການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;

2) ການພັດທະນາເສດຖະກິດ-ສັງຄົມ ທີ່ມີຂໍ້ມູນສະຖິຕິທີ່ຖືກຕ້ອງ, ຊັດເຈນ, ສອດຄ່ອງກັບ ທ່າແຮງບົ່ມຊ້ອນ, ມີການປະສານງານກັນທີ່ກົມກຽວ ແລະ ເອກະພາບກັນແຕ່ຫົວທີ ຂອງພາກລັດ, ມີການຈັດຕັ້ງກຸ່ມການຜະລິດທີ່ເຂັ້ມແຂງ ແມ່ນເປັນກຳລັງແຮງສຳຄັນເຮັດໃຫ້ການພັດທະນາເສດຖະກິດ-ສັງຄົມ ມີການຂະຫຍາຍຕົວຕໍ່ເນື່ອງ, ມີຄວາມໝັ້ນທ່ຽງ ແລະ ຍືນຍົງ;

3) ການພັດທະນາຊັບພະຍາກອນມະນຸດ ໃຫ້ມີຄວາມຮູ້, ຄວາມສາມາດ, ມີຄຸນສົມບັດສິນທຳປະຕິວັດ ແມ່ນກຸນແຈທີ່ສຳຄັນ ຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຕ່ລະໄລຍະ;

4) ການສ້າງ ແລະ ປັບປຸງກົດໝາຍລະບຽບການໃຫ້ທັນການ, ຮັດກຸມ, ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ຂອງການພັດທະນາແຕ່ລະໄລຍະ, ໜ້າທີ່ການເມືອງ ຂອງແຕ່ລະພາກສ່ວນ ໃນເງື່ອນໄຂເຊື່ອມໂຍງ, ເຊື່ອມຈອດກັບພາຍນອກ ທັງມີການຄຸ້ມຄອງບໍລິຫານລັດຕາມລະບຽບກົດໝາຍຢ່າງເຂັ້ມງວດ, ໂປ່ງໃສ ປະຕິບັດຕາມທິດ **“ເຮັດແທ້ທຳຈິງ ແລະ ບຸກທະລຸ ”**ແມ່ນປັດໄຈສຳຄັນເພື່ອບັນລຸຄວາມຍຸຕິທຳໃນສັງຄົມ ແລະ ທັງເປັນການເຮັດໃຫ້ຂະບວນການຍຸຕິທຳມີປະສິດທິພາບ, ປະສິດທິຜົນໃນການບໍລິຫານຂອງລັດ;

5) ການຮັບປະກັນຄວາມສອດຄ່ອງກົມກຽວລະຫວ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກັບບັນດາຍຸດທະສາດເພື່ອຮອງຮັບໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ, ວິໄສທັດຮອດປີ 2030, ເປົ້າໝາຍການພັດທະນາແບບຍືນຍົງ ແມ່ນໃຈກາງ ແລະ ເປັນຫຼັກການຂອງການພັດທະນາແບບຕໍ່ເນື່ອງ;ການສົມທົບແໜ້ນລະຫວ່າງການປະຕິບັດຍຸດທະສາດຍາວນານກັບການແກ້ໄຂບັນຫາຮີບດ່ວນສະເພາະໜ້າຢ່າງກົມກຽວກັນ ດ້ວຍມາດຕະການທີ່ເປັນລະບົບ, ຄົບຊຸດ, ມີການຕິດຕາມ, ກວດກາ ແລະ ການປະເມີນຜົນຂອງການຈັດຕັ້ງປະຕິບັດບັນດາທິດທາງ, ຄາດໝາຍສູ້ຊົນ ແຕ່ລະຂົງເຂດລວມທັງ ມີລະບົບລາຍງານຢ່າງເປັນປົກກະຕິ ແລະ ທັນການ ແມ່ນມາດຕະການທີ່ຈຳເປັນ ແລະ ສຳຄັນ ທີ່ເຮັດໃຫ້ຄາດໝາຍທີ່ກຳນົດອອກໄດ້ຮັບການຈັດຕັ້ງປະຕິບັດຄ່ອງຕົວ.

DRAFT

# ພາກທີ 2:
# ແຜນພັດທະນາ
# ເສດຖະກິດ-ສັງຄົມແຫ່ງຊາດ 5 ປີ
# ຄັ້ງທີ X (2026-2030)

DRAFT

## I. ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2026-2035) ແລະ ວິໄສທັດຮອດ ປີ 2055 ຂອງ ສປປ ລາວ

### 1. ຄໍາຂວັນ ຂອງຍຸດທະສາດການພັດທະນາເສດຖະກິດ-ສັງຄົມ 10 ປີ (2026-2035) ແລະ ວິໄສທັດຮອດປີ 2055

"ຍົກສູງຈິດໃຈພັດທະນາຢ່າງແຮງກ້າ, ຮັບປະກັນສະເຖຍລະພາບດ້ານເສດຖະກິດມະຫາພາກ, ສ້າງພື້ນຖານເສດຖະກິດເອກະລາດເປັນເຈົ້າຕົນເອງ, ສູ້ຊົນຮອດປີ 2035 ກາຍເປັນປະເທດທີ່ມີລາຍຮັບປານກາງສູງ ແລະ ຮອດປີ 2055 ຄົບຮອບ 100 ປີ ວັນສ້າງຕັ້ງພັກປະຊາຊົນ ປະຕິວັດລາວ **ພັດທະນາປະເທດໃຫ້ມີລາຍຮັບສູງຂຶ້ນ, ຍືນຍົງ ແລະ ຍັບເຂົ້າໃກ້ປະເທດທີ່ມີລາຍຮັບສູງ**".

### 2. ວິໄສທັດຂອງການພັດທະນາເສດຖະກິດ-ສັງຄົມ ຮອດປີ 2055

ສູ້ຊົນຮອດປີ 2055, ຄົບຮອບ 100 ປີ ວັນສ້າງຕັ້ງ ພັກປະຊາຊົນ ປະຕິວັດລາວ **ພັດທະນາປະເທດໃຫ້ມີລາຍຮັບສູງຂຶ້ນ, ຍືນຍົງ ແລະ ຍັບເຂົ້າໃກ້ປະເທດທີ່ມີລາຍຮັບສູງ**"; ປະຊາຊົນມີຊີວິດການເປັນຢູ່ທີ່ມີສີວິໄລ ແລະ ມີຄວາມຜາສຸກ. ເສດຖະກິດຂະຫຍາຍຕົວຢ່າງກ້າວກະໂດດ, ຍືນຍົງ, ເປັນເຈົ້າຕົນເອງ ແລະ ມີການເຊື່ອມໂຍງເຊື່ອມຈອດກັບພາກພື້ນ ແລະ ສາກົນຢ່າງມີປະສິດທິຜົນ; ເສດຖະກິດດີຈີຕອນ, ເສດຖະກິດສີຂຽວ, ເສດຖະກິດໝູນວຽນໄດ້ພັດທະນາຢ່າງແຂງແຮງ. ມີໂຄງສ້າງເສດຖະກິດທີ່ທັນສະໄໝ; ກາຍເປັນສູນກາງພະລັງງານສີຂຽວຂອງອາຊີຕາເວັນອອກສ່ຽງໃຕ້; ເປັນຈຸດໝາຍຂອງການທ່ອງທ່ຽວດ້ານມໍລະດົກໂລກ,ວັດທະນະທໍາ, ນິເວດວິທະຍາ ແລະ ກາຍເປັນຈຸດພັກຜ່ອນຮັກສາສຸຂະພາບທີ່ດຶງດູດໃຈສູງໃນອາຊີ; ຜະລິດຕະພັນກະສິກໍາມີການແຂ່ງຂັນສູງຢູ່ພາກພື້ນ. ມີລະບົບພື້ນຖານໂຄງລ່າງທີ່ສອດຄ່ອງ, ທັນສະໄໝ, ເຊື່ອມຕໍ່ບັນດາສູນເສດຖະກິດ, ເຂດຕົວເມືອງ, ເຂດແຄ້ວນ ແລະ ທ້ອງຖິ່ນຢ່າງມີປະສິດທິຜົນ. ເຂດຕົວເມືອງພັດທະນາຢ່າງທັນສະໄໝ, ສີຂຽວ, ສະອາດ ແລະ ມີເອກະລັກສະເພາະ, ກາຍເປັນສູນກາງວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກໍາ ແລະ ກໍາລັງແຮງຊຸກຍູ້ການພັດທະນາຂອງພາກພື້ນ; ອັດຕາການເປັນຕົວເມືອງບັນລຸ ຫຼາຍກວ່າ 50%. ຊົນນະບົດພັດທະນາຕາມທິດສີຂຽວ, ຕິດພັນກັບກະສິກໍາລະບົບນິເວດ, ຍືນຍົງ ແລະ ມີມູນຄ່າສູງ. ສິ່ງແວດລ້ອມທໍາມະຊາດໄດ້ຮັບການປົກປັກຮັກສາ, ປັບຕົວເຂົ້າກັບການປ່ຽນແປງຂອງດິນຟ້າອາກາດຢ່າງມີປະສິດທິຜົນ, ສູ້ຊົນບັນລຸຄາດໝາຍການປ່ອຍທາດອາຍເຮືອນແກ້ວ ໃຫ້ເປັນສູນ "0".

### 3. ວິໄສທັດການພັດທະນາເສດຖະກິດ ຮອດປີ 2035

ຮອດປີ 2035, ສູ້ຊົນໃຫ້ ສປປ ລາວ ກາຍເປັນປະເທດທີ່ມີລາຍຮັບປານກາງສູງ; ຮັກສາສະເຖຍລະພາບເສດຖະກິດມະຫາພາກ ແລະ ຮັບປະກັນຄວາມດຸນດ່ຽງທີ່ສໍາຄັນຂອງເສດຖະກິດ; ຍົກສູງຄຸນນະພາບອົງການຕ່າງໆ-ລະບອບລະບຽບ ແລະ ຄວາມອາດສາມາດຂອງການບໍລິຫານລັດ. ຫັນປ່ຽນພື້ນຖານຮູບແບບການເຕີບໂຕເສດຖະກິດ, ຍູ້ແຮງວິທະຍາສາດເຕັກໂນໂລຊີ, ການຫັນເປັນດີຈີຕອນ, ການຫັນເປັນສີຂຽວ ແລະ ພັດທະນາຊັບພະຍາກອນມະນຸດທີ່ມີສີມື; ພື້ນຖານເສດຖະກິດເປັນເຈົ້າຕົນເອງໄດ້ຮັບການຍົກລະດັບ, ໄປຄຽງຄູ່ກັບ ການຍົກສູງປະສິດທິຜົນໃນການເຊື່ອມໂຍງກັບພາກພື້ນ ແລະ ສາກົນ. ປຸກລະດົມຈິດໃຈຮັກຊາດ ແລະ ພັດທະນາ, ສ້າງສັງຄົມປະຊາທິປະໄຕ, ສີວິໄລ ແລະ ມີຄວາມຜາສຸກ; ປັບປຸງຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນຢ່າງຮອບດ້ານ. ຊັບພະຍາກອນທໍາມະຊາດໄດ້ຮັບການຄຸ້ມຄອງ ແລະ ຂຸດຄົ້ນຢ່າງມີປະສິດທິຜົນ ແລະ ຍືນຍົງ; ສະພາບແວດລ້ອມທໍາມະຊາດໄດ້ຮັບການປົກປັກຮັກສາ ແລະ ປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ. ຮັກສາສະຖຽນລະພາບທາງດ້ານການເມືອງ ແລະ ສັງຄົມມີຄວາມສະຫງົບ. ຖານະ ແລະ ຄວາມເຊື່ອຖືຂອງປະເທດຊາດໃນເວທີສາກົນໄດ້ຮັບການຍົກສູງຂຶ້ນ.

### 4. ທັດສະນະຂອງການພັດທະນາຮອດ ປີ 2035

(1). ເລັ່ງການປະຕິຮູບດ້ານອົງການ ແລະ ລະບຽບການຂອງລັດ ໂດຍສຸມໃສ່ການສ້າງລະບົບເສດຖະກິດຕະຫຼາດຕາມທິດສັງຄົມນິຍົມທີ່ສອດຄ່ອງ, ກົມກຽວ, ທັນສະໄໝ ແລະ ເຊື່ອມໂຍງກັບສາກົນ. ສືບຕໍ່ສ້າງ ແລະ ປັບປຸງລະບົບນິຕິກໍາ-ລະບຽບການທີ່ເປັນເອກະພາບ, ໂປ່ງໃສ, ມີປະສິດທິຜົນ ແລະ ໄດ້ມາດຕະຖານສາກົນ. ເນັ້ນໃສ່ສິດຕາມ

ກົດໝາຍ ແລະ ຜົນປະໂຫຍດຂອງປະຊາຊົນເປັນໃຈກາງ, ສາມາດບັນລຸເງື່ອນໄຂຂອງການພັດທະນາທີ່ໄວ, ສີຂຽວ ແລະ ຍືນຍົງ. ເພີ່ມທະວີການສ້າງຄວາມອາດສາມາດໃນດ້ານການບັງຄັບໃຊ້ນິຕິກຳທີ່ເຂັ້ມງວດ ແລະ ການຈັດຕັ້ງປະຕິບັດກົນໄກ ແລະ ນະໂຍບາຍຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ. ເພີ່ມປະສິດທິພາບ ແລະ ປະສິດທິຜົນຂອງການຄຸ້ມຄອງຂອງລັດໃນການສົ່ງເສີມການພັດທະນາ, ຍົກສູງຜົນປະໂຫຍດສູງສຸດຂອງຊາດ ແລະ ກົມກ່ຽວລະຫວ່າງຜົນປະໂຫຍດຂອງ ລັດ - ວິສາຫະກິດ - ຊຸມຊົນໃນຂະບວນການພັດທະນາເສດຖະກິດ-ສັງຄົມ.

(2). ການພັດທະນາເສດຖະກິດ-ສັງຄົມທີ່ກ້າວກະໂດດ ແລະ ຍືນຍົງ ຄວນເນັ້ນໃສ່ການສ້າງສະເຖຍລະພາບດ້ານເສດຖະກິດມະຫາພາກ, ການຫັນປ່ຽນໂຄງປະກອບເສດຖະກິດຕາມທິດຄຸນນະພາບ, ສ້າງຮູບແບບການຂະຫຍາຍຕົວເສດຖະກິດແບບໃໝ່ທີ່ມີປະສິດທິຜົນ ແລະ ສົ່ງເສີມການນຳໃຊ້ວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກຳ ແລະ ການຫັນປ່ຽນດ້ານດີຈີຕອນ ແລະ ຫັນປ່ຽນໄປສູ່ຮູບແບບສີຂຽວ. ສ້າງພື້ນຖານເສດຖະກິດເອກະລາດ, ເປັນເຈົ້າຕົນເອງ ໄປຄຽງຄູ່ກັບຄວາມເປັນເຈົ້າການໃນການເຊື່ອມໂຍງເຂົ້າກັບສາກົນຢ່າງຕັ້ງໜ້າ, ຍົກສູງຄວາມສາມາດໃນການປັບຕົວ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ພື້ນຖານເສດຖະກິດ, ຮັບປະກັນຄວາມໝັ້ນຄົງດ້ານການເງິນແຫ່ງຊາດ. ສຸມໃສ່ຊຸກຍູ້ ແລະ ຍົກສູງປະສິດທິຜົນການພັດທະນາບັນດາຂະແໜງການ, ຂົງເຂດ ທີ່ເປັນທ່າແຮງ: ພະລັງງານ, ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ, ກະສິກຳ ແລະ ປຸງແຕ່ງສິນຄ້າກະສິກຳ, ການທ່ອງທ່ຽວ, ໂລຈິສຕິກ, ອຸດສະຫະກຳຊ່ວຍໜູນ ແລະ ບັນດາຂະແໜງອຸດສະຫະກຳປຸງແຕ່ງ ທີ່ ສປປ ລາວ ມີທ່າແຮງ ແລະ ມີຄວາມອາດສາມາດບົ່ມຊ້ອນ. ສ້າງຄວາມອາດສາມາດດ້ານການຜະລິດແຫ່ງຊາດ, ເພີ່ມທະວີຄວາມອາດສາມາດດ້ານການແຂ່ງຂັນຂອງພາກວິສາຫະກິດພາຍໃນປະເທດ.

(3). ເສີມຂະຫຍາຍຄຸນຄ່າທາງດ້ານວັດທະນະທຳ ແລະ ປັດໃຈຂອງຄົນ ໃນການພັດທະນາເສດຖະກິດ-ສັງຄົມ; ການລົງທຶນໃສ່ການພັດທະນາຄົນແມ່ນການລົງທຶນໃຫ້ແກ່ການພັດທະນາແບບຍືນຍົງ. ປຸກລະດົມຈິດໃຈຮັກຊາດ ແລະ ພັດທະນາ, ຈິດໃຈເພິ່ງຕົນເອງກຸ້ມຕົນເອງ, ບຸກບືນຂຶ້ນສູ່ການສ້າງຄວາມຮັ່ງມີ ຂອງປະຊາຊົນ ແລະ ວິສາຫະກິດ. ພັດທະນາໄອແຫຼ່ງກຳລັງຄົນທີ່ມີຄວາມສາມາດ ແລະ ສ້າງເງື່ອນໄຂເສີມຂະຫຍາຍຄວາມສາມາດບົ່ມຊ້ອນ ຢ່າງສູງສຸດຂອງແຕ່ລະບຸກຄົນເຂົ້າໃນພາລະກິດພັດທະນາລວມຂອງປະເທດຊາດ. ສ້າງສັງຄົມປະຊາທິປະໄຕ, ສີວິໄລ ແລະ ມີຄວາມຜາສຸກ; ຍົກສູງຊີວິດການເປັນຢູ່ດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນຢ່າງບໍ່ຢຸດຢັ້ງ.

(4). ສົ່ງເສີມການພັດທະນາເສດຖະກິດ-ສັງຄົມ ໃຫ້ຕິດພັນກັບການປົກປັກຮັກສາສິ່ງແວດລ້ອມ, ການປ້ອງກັນ-ຕ້ານໄພທຳມະຊາດ, ການປັບຕົວເຂົ້າກັບການປ່ຽນແປງສະພາບດິນຟ້າອາກາດ. ຄຸ້ມຄອງ, ຂຸດຄົ້ນ ແລະ ນຳໃຊ້ຊັບພະຍາກອນທຳມະຊາດຢ່າງມີປະສິດທິຜົນ ໂດຍສະເພາະຊັບພະຍາກອນປ່າໄມ້ ແລະ ແຮ່ທາດຕ່າງໆ. ຮັບປະກັນດ້ານການຄ້ຳປະກັນສະບຽງອາຫານ ແລະ ຄວາມໝັ້ນຄົງຂອງແຫຼ່ງນ້ຳ; ການອະນຸລັກທຳມະຊາດ ແລະ ຍົກສູງຄຸນນະພາບຊີວະນາໆພັນ.

(5). ສົ່ງເສີມການພັດທະນາຢ່າງມີຈຸດສຸມ ແລະ ເປັນຍຸດທະສາດ ໂດຍສຸມໃສ່ການພັດທະນາບັນດາເຂດແຄ້ວນທີ່ມີກຳລັງແຮງ, ແລວທາງເສດຖະກິດບູລິມະສິດໃຫ້ກາຍເປັນເຂດເສດຖະກິດທີ່ເປັນທ່າແຮງ ເພື່ອແຜ່ກະຈ່າຍ ແລະ ນຳພາບັນດາເຂດເສດຖະກິດທົ່ວປະເທດ ສາມາດພັດທະນາໄປພ້ອມໆກັນ. ພ້ອມກັນນັ້ນ, ເອົາໃຈໃສ່ເລັ່ງການພັດທະນາເຂດທີ່ຫຍຸ້ງຍາກ ແລະ ຫ່າງໄກຊອກຫຼີກ ເພື່ອຫຼຸດຜ່ອນຊ່ອງວ່າງຂອງການພັດທະນາລະຫວ່າງຕົວເມືອງ ແລະ ຊົນນະບົດລົງເທື່ອລະກ້າວ. ເພີ່ມທະວີການເຊື່ອມຈອດລະຫວ່າງເຂດແຄ້ວນຕ່າງໆ ເພື່ອສ້າງເງື່ອນໄຂໃນການຂຸດຄົ້ນຄວາມສາມາດບົ່ມຊ້ອນ ແລະ ທ່າແຮງສູງສຸດຂອງແຕ່ລະເຂດແຄວ້ນ, ແຕ່ລະທ້ອງຖິ່ນ. ຊຸກຍູ້ການຮ່ວມມືພັດທະນາກັບບັນດາປະເທດຕ່າງໆ ຜ່ານແລວທາງເສດຖະກິດໃນພາກພື້ນ.

DRAFT

DRAFT

5. ຄາດໝາຍຕົ້ນຕໍຮອດປີ 2035

- ລວມຍອດຜະລິດຕະພັນພາຍໃນ (GDP) ຂະຫຍາຍຕົວສະເລ່ຍບັນລຸ 5-6% ຕໍ່ປີ ໄລຍະ 2026-2030, 6-7% ຕໍ່ປີ ໄລຍະ 2031-2035;
- ລາຍຮັບງົບປະມານ ໃຫ້ບັນລຸຕໍ່າສຸດບໍ່ໃຫ້ຫຼຸດ 21 - 22 ຂອງ GDP ໃນໄລຍະ 2026 -2030 ແລະ 23 – 24% ຂອງ GDP ໃນໄລຍະ 2031 – 2035
- ການຂາດດຸນງົບປະມານ ປະມານ 1-2% ຂອງ GDP ໄລຍະ 2026-2030 ແລະ ບໍ່ເກີນ 3% ຂອງ GDP ໄລຍະ 2031-2035;
- ເຮັດໃຫ້ອັດຕາເງິນເຟີ້ຫຼຸດລົງມາຢູ່ໃນລະດັບ 5-6% ໃນປີ 2030 ແລະ ຫຼຸດລົງມາຢູ່ໃນລະດັບ 4-5% ໃນປີ 2035;
- ຫຼຸດຜ່ອນໜີ້ສິນສາທາລະນະໃຫ້ເຫຼືອປະມານ 65% ຂອງ GDP ແລະ 50-60% ຂອງ GDP ໃນປີ 2035;
- ການລົງທຶນທົ່ວສັງຄົມ ໃຫ້ໄດ້ 25-27% ຂອງ GDP ໃນປີ 2030 ແລະ ລື່ນກາຍ 30% ຂອງ GDP ໃນປີ 2035.

## II. ຄວາມສຳຄັນຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030)

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ແມ່ນເປັນແຜນ 5 ປີ ສະບັບສຸດທ້າຍ ທີ່ມີບົດບາດສຳຄັນຢ່າງຍິ່ງ ໃນການສືບຕໍ່ຈັດຕັ້ງປະຕິບັດ ວິໄສທັດການພັດທະນາຂອງລັດຖະບານ ຮອດປີ 2030 ເພື່ອສ້າງບາດລ້ຽວໃໝ່ໃນການພັດທະນາ ສປປ ລາວໃຫ້ກາຍເປັນປະເທດກຳລັງພັດທະນາທີ່ມີລາຍຮັບປານກາງສູງຕາມທິດເສດຖະກິດ-ສັງຄົມ ພູມປັນຍາ, ສີຂຽວ ແລະ ຍືນຍົງ, ລາຍໄດ້ແຫ່ງຊາດສະເລ່ຍຕໍ່ຫົວຄົນ ເພີ່ມຂຶ້ນຫຼາຍກວ່າ 4 ເທົ່າ ທຽບໃສ່ປີ 2015, ມີອຸດສາຫະກຳເສົາຄ້ຳ ແລະ ໂຄງລ່າງພື້ນຖານເສດຖະກິດທີ່ເຂັ້ມແຂງ ສຳລັບການຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ເສດຖະກິດຕະຫຼາດຕາມທິດສັງຄົມນິຍົມ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນລະບົບຫຼາຍຂຶ້ນ; ສັງຄົມມີຄວາມສະຫງົບສຸກ, ຍຸຕິທຳ, ມີປະຊາທິປະໄຕ ແລະ ສີວິໄລ; ປະຊາຊົນບັນດາເຜົ່າມີຄວາມສາມັກຄີເປັນປຶກແຜ່ນ; ຄວາມແຕກໂຕນກັນທາງດ້ານການພັດທະນາລະຫວ່າງຕົວເມືອງ ແລະຊົນນະບົດ, ຊັ້ນຄົນຕ່າງໆໃນສັງຄົມຖືກຫຍັບໃກ້ເຂົ້າກັນ; ຄຸນນະພາບຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການຍົກລະດັບສູງຂຶ້ນ; ຊັບພະຍາກອນມະນຸດໄດ້ຮັບການພັດທະນາມີຄຸນນະພາບດີຂຶ້ນ; ປະຊາຊົນສາມາດເຂົ້າເຖິງການບໍລິການທີ່ມີຄຸນນະພາບຢ່າງທົ່ວເຖິງ; ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ໄດ້ຮັບການປັບປຸງມີຄຸນນະພາບດີຂຶ້ນ, ເປັນທີ່ຍອມຮັບຂອງສັງຄົມ ແລະ ໄດ້ມາດຕະຖານສາກົນ; ສິດທິຂອງພົນລະເມືອງມີການຮັບປະກັນດ້ວຍການຄຸ້ມຄອງຂອງລັດຕາມກົດໝາຍທີ່ສັກສິດ, ລະບອບການປົກຄອງຕາມທິດ 3 ສ້າງມີຄວາມເຂັ້ມແຂງ; ສິ່ງແວດລ້ອມທຳມະຊາດໄດ້ຮັບການປົກປັກຮັກສາ ແລະ ນຳໃຊ້ຢ່າງມີປະສິດທິພາບ, ມີເຫດຜົນ ແລະ ຍືນຍົງ; ລະບົບການເມືອງປະຊາທິປະໄຕ ປະຊາຊົນ ໄດ້ຮັບການປັບປຸງຕາມທິດໜັກແໜ້ນ ແລະ ເຂັ້ມແຂງ; ເສດຖະກິດ-ສັງຄົມສາມາດເຊື່ອມໂຍງ ແລະ ເຊື່ອມຈອດກັບພາກພື້ນ ແລະ ສາກົນຢ່າງກ້ວາງຂວາງ ແລະ ເລິກເຊິ່ງ. ແຜນການ 5 ປີ ຄັ້ງທີ X ຍັງເປັນແຜນສືບຕໍ່ສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່ ຢ່າງຕັ້ງໜ້າ ແລະ ໜັກແໜ້ນ ເພື່ອຍົກສູງສະຕິຊາດ, ເສີມຂະຫຍາຍສະຕິປັນຍາ, ກຳລັງແຮງ ແລະ ຄວາມສາມາດແຂ່ງຂັນຂອງຄົນໃນຊາດ ເພື່ອສືບຕໍ່ຂຸດຄົ້ນທ່າແຮງບົ່ມຊ້ອນດ້ານຕ່າງໆ ແລະ ນຳໃຊ້ເຂົ້າໃນການປົກປັກຮັກສາປະເທດຊາດ ແລະ ການພັດທະນາທີ່ຍືນຍົງ, ເປັນແຜນສືບຕໍ່ຈັດຕັ້ງປະຕິບັດ ເປົ້າໝາຍການຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ, ເປົ້າໝາຍການເຕີບໂຕສີຂຽວ, ເປົ້າໝາຍການພັດທະນາແບບຍືນຍົງ ແລະ ຍັງເປັນແຜນຜັນຂະຫຍາຍ ມະຕິ ກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ ປະຊາຊົນ ປະຕິວັດລາວ ແລະ ຍຸດທະສາດການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄລຍະ 10 ປີ (2026-2030) ແລະ ວິໄສທັດ ຮອດປີ 2055 ເພື່ອພັດທະນາປະເທດຊາດ ຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ, ເຮັດໃຫ້ເສດຖະກິດຂະຫຍາຍຕົວຢ່າງມີຄຸນນະພາບ, ໝັ້ນທ່ຽງ, ໜັກແໜ້ນ ຕາມທິດສີຂຽວ ແລະ ຍືນຍົງ.

## III. ການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່

ສປປ ລາວ ໄດ້ດໍາເນີນແນວທາງນະໂຍບາຍການພັດທະນາ “ການສ້າງເສດຖະກິດ ເອກະລາດ, ເປັນເຈົ້າຕົນເອງ , ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ໃຫ້ມີຄວາມໜັກແໜ້ນ” ເລີ່ມແຕ່ໄລຍະຈັດຕັ້ງປະຕິບັດແນວທາງການປ່ຽນແປງໃໝ່ໄປຕາມກົນໄກເສດຖະກິດຕະຫຼາດທີ່ມີການຄຸ້ມຄອງຂອງລັດ ບົນພື້ນຖານການຂຸດຄົ້ນ, ນໍາໃຊ້ກາລະໂອກາດ ແລະ ກໍາລັງແຮງສັງລວມ ເພື່ອສ້າງບາດກ້າວບຸກທະລຸໃນການພັດທະນາ ຢ່າງເປັນເຈົ້າການ ແລະ ມີຄວາມຮັບຜິດຊອບສູງ, ຮັບປະກັນໃຫ້ມີການເຕີບໂຕຂອງເສດຖະກິດ ດ້ວຍຈັງຫວະທີ່ໝັ້ນທ່ຽງ ແລະ ຕໍ່ເນື່ອງ, ສືບຕໍ່ສ້າງຖານການຜະລິດ ແລະ ການບໍລິການ ໃຫ້ມີຄວາມໜັກແໜ້ນ ແລະ ເຂັ້ມແຂງ ແລະ ຮັບປະກັນໃຫ້ການພັດທະນາມີຄວາມຍືນຍົງ. ອີງໃສ່ຜົນການປະເມີນການຈັດຕັ້ງປະຕິບັດຕົວຈິງ ໃນໄລຍະຜ່ານມາ, ເຫັນວ່າຄວາມເປັນເຈົ້າຕົນເອງດ້ານເສດຖະກິດ ເມື່ອທຽບກັບເງື່ອນໄຂ, ຈຸດພິເສດ, ຄວາມສາມາດ ແລະ ທ່າແຮງບົ່ມຊ້ອນທີ່ມີຢູ່ ຂອງປະເທດ ຍັງບໍ່ທັນຕັ້ງໜ້າ ແລະ ໜັກແໜ້ນເທົ່າທີ່ຄວນ, ໂດຍລວມຍັງເພິ່ງພາ ແລະ ເອື່ອຍອີງໃສ່ການກູ້ຢືມ, ການຊ່ວຍເຫຼືອລ້າ ແລະ ການຂຸດຄົ້ນຊັບພະຍາກອນທໍາມະຊາດ ທີ່ສົ່ງອອກວັດຖຸດິບເປັນຕົ້ນຕໍ, ຍັງຂາດການປຸງແຕ່ງ, ການຄຸ້ມຄອງທີ່ດີ ແລະ ຍັງບໍ່ໄປຕາມທິດສີຂຽວ ແລະ ຍືນຍົງເທົ່າທີ່ຄວນ, ເຮັດໃຫ້ປະເຊີນກັບບັນຫາການຂາດດຸນໃນຫຼາຍດ້ານ ເຊັ່ນ: ດ້ານການຄ້າ, ພະລັງງານ, ງົບປະມານ, ເງິນຕາ ແລະ ແຮງງານ; ນອກນັ້ນ ຍັງບໍ່ເປັນເຈົ້າການໃນການຄົ້ນຄິດປະດິດສ້າງດ້ານການຜະລິດ ແລະ ຊົມໃຊ້ສິນຄ້າພາຍໃນ, ຄົນຈໍານວນບໍ່ໜ້ອຍ ລວມທັງພະນັກງານ, ສະມາຊິກພັກ ມີຄ່ານິຍົມຊົມໃຊ້ສິນຄ້າຈາກຕ່າງປະເທດເປັນຕົ້ນຕໍ ເຮັດໃຫ້ການກະຕຸ້ນຖານການຜະລິດ ແລະ ກໍາລັງການຜະລິດ ບໍ່ເຂັ້ມແຂງ, ເສດຖະກິດມີຄວາມບອບບາງ ແລະ ຖືກກະທົບຈາກບັນຫາຕ່າງໆທີ່ເກີດຂຶ້ນຢູ່ພາຍໃນ ແລະ ຈາກພາຍນອກໄດ້ງ່າຍ, ເຊິ່ງສິ່ງຜົນສະທ້ອນໃຫ້ເກີດມີຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ເງິນຕາ ທີ່ສະສົມຢ່າງຕໍ່ເນື່ອງ ມາຮອດປະຈຸບັນ ເຊັ່ນ: ບັນຫາໜີ້ສິນ, ເງິນເຟີ້, ອັດຕາແລກປ່ຽນເງິນຕາຕ່າງປະເທດຜັນຜວນ, ລາຄາສິນຄ້າ ແລະ ຄ່າຄອງຊີບຖີບຕົວສູງຂຶ້ນ ກະທົບຕໍ່ການພັດທະນາ, ສ້າງຄວາມຫຍຸ້ງຍາກ ຕໍ່ຊີວິດການເປັນຢູ່ ຂອງປະຊາຊົນ, ພະນັກງານ, ລັດຖະກອນ, ທະຫານ, ຕໍາຫຼວດ. ສາເຫດຕົ້ນຕໍທີ່ພາໃຫ້ເກີດສະພາບດັ່ງກ່າວ ແມ່ນຍ້ອນການຄຸ້ມຄອງມະຫາພາກ ຍັງບໍ່ທັນເຂັ້ມແຂງ, ການປະຕິບັດລະບຽບວິໄນແຜນການ-ການເງິນ ຍັງບໍ່ເຂັ້ມງວດ, ການຄຸ້ມຄອງລັດ ແລະ ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍຍັງບໍ່ທັນມີປະສິດທິພາບສູງ, ຂາດຈຸດສຸມການພັດທະນາ, ການສ້າງຖານການຜະລິດ ແລະ ການບໍລິການ ທີ່ເປັນຕົວຂັບເຄື່ອນເສດຖະກິດຍັງຊັກຊ້າ ບໍ່ສາມາດ ນໍາໃຊ້ກາລະໂອກາດທີ່ມີ ແລະ ສະພາບແວດລ້ອມທີ່ເອື້ອອໍານວຍໄດ້ຢ່າງເຕັມທີ່. ດ້ວຍເຫດຜົນດັ່ງກ່າວ ຈຶ່ງມີຄວາມຈໍາເປັນຕ້ອງໄດ້ປັບປຸງບາງນະໂຍບາຍ, ຍົກລະດັບຄວາມສາມາດດ້ານການບໍລິຫານຈັດການ, ຟື້ນຟູ ແລະ ພັດທະນາເສດຖະກິດໃຫ້ມີຄວາມໜັກແໜ້ນ ແລະ ເຂັ້ມແຂງ. ສະນັ້ນ, ກົມການເມືອງສູນກາງພັກໄດ້ອອກ ມະຕິ ເລກທີ 04/ກມສພ, ສະບັບລົງວັນທີ 11 ເມສາ 2024 ວ່າດ້ວຍ ການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່ ເພື່ອສ້າງເງື່ອນໄຂທີ່ຈໍາພື້ນຖານໃນການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການພັດທະນາເສດຖະກິດ-ສັງຄົມ ທັງໃນໄລຍະສັ້ນ ແລະ ໄລຍະຍາວ ໃຫ້ນັບມື້ເປັນຮູບປະທໍາຍິ່ງຂຶ້ນ. ດັ່ງນັ້ນ, ຈຶ່ງມີຄວາມສໍາຄັນ ແລະ ຈໍາເປັນຢ່າງພາວະວິໄສການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ໄລຍະໃໝ່:

1. ສຸມໃສ່ການສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ໂດຍເລີ່ມຈາກການຍົກສູງສະຕິຊາດ, ເສີມຂະຫຍາຍສະຕິປັນຍາ, ກໍາລັງແຮງສັງລວມ ແລະ ຄວາມສາມາດແຂ່ງຂັນ ຂອງຄົນໃນຊາດ ເພື່ອຂຸດຄົ້ນທ່າແຮງບົ່ມຊ້ອນດ້ານຊັບພະຍາກອນມະນຸດ, ຊັບພະຍາກອນທໍາມະຊາດ, ທີ່ຕັ້ງພູມສັນຖານ, ວັດທະນະທໍາ-ສັງຄົມ ທີ່ມີການວາງແຜນຢ່າງມີວິທະຍາສາດ, ມີຍຸດທະສາດ ແລະ ຄໍານຶງເຖິງປະສິດທິພາບ, ປະສິດທິຜົນ ແລະ ການນໍາໃຊ້ຄວາມສາມາດບົ່ມຊ້ອນຂອງຊັບພະຍາກອນທີ່ມີຢ່າງປະຢັດ ແລະ ຄຸ້ມຄ່າ ເພື່ອຕອບສະໜອງໃຫ້ແກ່ການພັດທະນາທີ່ຍືນຍົງ, ສ້າງຄວາມຢູ່ດີກິນດີ ໃຫ້ປະຊາຊົນ, ເຮັດໃຫ້ປະເທດຊາດມີສະຖຽນລະພາບທາງດ້ານການເມືອງ ແລະ ມີຄວາມໝັ້ນຄົງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ.
2. ສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ ໂດຍການເລີ່ມຈາກຕໍ່າຫາສູງ, ຈາກນ້ອຍຫາໃຫຍ່ ບົນພື້ນຖານການບຸກທະລຸດ້ານຈິນຕະນາການ, ສ້າງຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງທຸກພາກສ່ວນໃນສັງຄົມ ຕໍ່ການສ້າງຄວາມເປັນເຈົ້າເອງໃນການພັດທະນາຢ່າງເລິກເຊິ່ງ ເພື່ອຂຸດຄົ້ນ ແລະ ນໍາໃຊ້ທ່າແຮງບົ່ມຊ້ອນຂອງປະເທດ ແລະ ສັງຄົມລາວ ໃນສິ່ງທີ່ເຮົາສາມາດເຮັດໄດ້; ຮູ້ວາງແຜນໃນການຂຸດຄົ້ນ, ຄຸ້ມຄອງ ແລະ ນໍາໃຊ້ຊັບພະຍາກອນທໍາມະຊາດທີ່ມີຢ່າງຈໍາກັດ ໃຫ້ອອກມາເປັນທຶນຮອນດ້ວຍຄວາມຮັບຜິດຊອບ ແລະ ມີປະສິດທິຜົນ, ສ້າງ

DRAFT

ໃຫ້ຄົນລາວເປັນເຈົ້າຫຼາຍຂຶ້ນ ໃນການສ້າງຮັ່ງຄູນມີຢ່າງເປັນລະບົບ; ຮູ້ປະຍຸກໃຊ້ ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ເພື່ອຍົກລະດັບປະສິດທິພາບ-ປະສິດທິຜົນຂອງການຜະລິດ, ການສ້າງມູນຄ່າເພີ່ມ ຜະລິດຕະພັນ ແລະ ການບໍລິການ ໃຫ້ສູງຂຶ້ນ; ທຸກພາກສ່ວນຂອງສັງຄົມຮູ້ສະສົມ ຢ່າງເປັນເຈົ້າການ ແລະ ນຳ ໃຊ້ທຶນຢ່າງປະຢັດ, ຮູ້ຕໍ່ຍອດ ແລະ ສ້າງມູນຄ່າເພີ່ມຂຶ້ນໃໝ່ຢ່າງບໍ່ຢຸດຢັ້ງ. ພ້ອມກັນນີ້, ກໍຕ້ອງຮູ້ຜະລິດ ແລະ ຊອກຕະຫຼາດ ເພື່ອສ້າງລາຍຮັບໃຫ້ສົມຄູ່ກັບທ່າແຮງທີ່ມີ ທັງຮູ້ໃຊ້ຈ່າຍຢ່າງຄຸ້ມຄ່າ ແລະ ເກີດດອກອອກຜົນ.

3. ສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ໃນເງື່ອນໄຂເຊື່ອມໂຍງກັບພາກພື້ນ ແລະ ສາກົນ ດ້ວຍການສືບຕໍ່ພັດທະນາພື້ນຖານການຜະລິດ ແລະ ການບໍລິການໃຫ້ມີຄວາມຫຼາກຫຼາຍ ແລະ ເຂັ້ມແຂງ, ມີສິນຄ້າອຸປະໂພກ-ບໍລິໂພກ ທີ່ພຽງພໍ ແລະ ສາມາດຕອບສະໜອງຢູ່ພາຍໃນປະເທດ ໂດຍບໍ່ເພິ່ງພາຈາກພາຍນອກດ້ານດຽວ ແລະ ກ້າວໄປສູ່ການຜະລິດເພື່ອສົ່ງອອກ ຢ່າງເປັນຕ່ອງໂສ້ໃນລະບົບການຜະລິດ ຂອງພາກພື້ນ ແລະ ສາກົນ, ສ້າງມູນຄ່າເພີ່ມໃຫ້ຜະລິດຕະພັນການສົ່ງອອກສິນຄ້າ, ດ້ວຍປຸງແຕ່ງຊັບພະຍາກອນທີ່ເປັນທ່າແຮງຂອງປະເທດ ໂດຍນຳໃຊ້ເຕັກນິກ-ເຕັກໂນໂລຊີ ແລະ ນະວັດຕະກຳທີ່ທັນສະໄໝ; ສືບຕໍ່ປັບປຸງລະບົບການເງິນ-ເງິນຕາ ໃຫ້ເຂັ້ມແຂງ ແລະ ເປັນເຈົ້າການເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ; ສ້າງແຫຼ່ງລາຍຮັບ ໃຫ້ເຕີບໃຫຍ່, ໜັກແໜ້ນ ແລະ ຍືນຍົງຈາກບ່ອນທີ່ມີຄວາມສາມາດຂຸດຄົ້ນໄດ້ ແລະ ເກັບລາຍຮັບໄດ້ຕາມກົດໝາຍ ແລະ ລະບຽບການ. ພ້ອມກັນນັ້ນ, ກໍ່ເອົາໃຈໃສ່ວາງແຜນໃຊ້ຈ່າຍງົບປະມານຢ່າງເຄັ່ງຄັດ, ມີປະສິດທິຜົນ, ເກີດດອກອອກຜົນ, ສ້າງສິ່ງຕອບແທນທີ່ຄຸ້ມຄ່າກວ່າເກົ່າ ແລະ ເຮັດໃຫ້ການພັດທະນາມີຄຸນນະພາບສູງຂຶ້ນກວ່າເກົ່າ ຕາມທິດສີຂຽວ ແລະ ຍືນຍົງ.

# IV. ຄາດຄະເນສະພາບແວດລ້ອມທີ່ເອື້ອອຳນວຍ ແລະ ສິ່ງທ້າທາຍ

## 1. ກາລະໂອກາດ ແລະ ສິ່ງທ້າທາຍຂອງພາກພື້ນ, ສາກົນ ແລະ ພາຍໃນ

ສັນຕິພາບ, ການຮ່ວມມືພັດທະນາ, ການປົກປັກຮັກສາສິ່ງແວດລ້ອມ ຍັງເປັນທ່າອ່ຽງໃຫຍ່ ຂອງໂລກ, ແຕ່ຍັງຈະປະເຊີນໜ້າກັບສິ່ງທ້າທາຍໃໝ່ຫຼາຍຢ່າງ; ບັນດາປະເທດໃຫຍ່ ແລະ ບັນດາສູນກາງອຳນາດ ຍັງຈະສືບຕໍ່ປັບປ່ຽນຍຸດທະສາດການແຂ່ງຂັນ, ທັງຮ່ວມມື, ປະນີປະນອມ, ແຕ່ການແຂ່ງຂັນຈະນັບມື້ເພີ່ມຂຶ້ນ; ການຫັນເປັນໂລກາພິວັດ ແລະ ການເຊື່ອມໂຍງເສດຖະກິດຍັງຄົງມີຄວາມຄືບໜ້າດີ, ເຖິງວ່າຈະມີຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍ; ຄວາມຂັດແຍ່ງທາງດ້ານການເມືອງພູມມີລັດຖະສາດ, ສົງຄາມການຄ້າ, ທ່າອ່ຽງການປັບປຸງຕ່ອງໂສ້ການຜະລິດ ແລະ ການສະໜອງທົ່ວໂລກ, ບັນຫາເສດຖະກິດ-ການເງິນຢູ່ພາກພື້ນ ແລະ ສາກົນ, ການປ່ຽນແປງໂຄງສ້າງປະຊາກອນໄປສູ່ສັງຄົມຜູ້ສູງອາຍຸ, ສະພາວະໂລກຮ້ອນຈາກການປ່ຽນແປງສະພາບອາກາດ, ຄວາມກ້າວໜ້າຂອງເຕັກໂນໂລຊີ ແລະ ອື່ນໆ. ບົນພື້ນຖານດັ່ງກ່າວ ຈະນຳມາທັງກາລະໂອກາດ ແລະ ສິ່ງທ້າທາຍຕໍ່ການຂັບເຄື່ອນການພັດທະນາຂອງ ສປປ ລາວ ໃນໄລຍະຕໍ່ໜ້າ.

## 2. ທ່າແຮງບົ່ມຊ້ອນ

ສປປ ລາວ ມີທ່າແຮງບົ່ມຊ້ອນຫຼາຍດ້ານ ເປັນຕົ້ນ ແຫຼ່ງຊັບພະຍາກອນທຳມະຊາດທີ່ຫຼາກຫຼາຍ ແລະ ອຸດົມສົມບູນ ໂດຍສະເພາະແມ່ນ ຊັບພະຍາກອນທີ່ດິນ, ປ່າໄມ້, ແຮ່ທາດ ແລະ ແຫຼ່ງນ້ຳ ຖ້າສົມທຽບກັບປະເທດຕ່າງໆ ອ້ອມຂ້າງ, ເຊິ່ງທ່າແຮງ ແລະເງື່ອນໄຂດັ່ງກ່າວ ຈະສ້າງໂອກາດໃຫ້ປະເທດເຮົາພັດທະນາການບໍລິການທ່ອງທ່ຽວແບບທຳມະຊາດ, ພັດທະນາຂະແໜງພະລັງງານ ລວມທັງ ພະລັງງານນ້ຳ, ລົມ, ແສງຕາເວັນ ແລະ ຂຸດຄົ້ນລາຍຮັບຈາກການພັດທະນາແຮ່ທາດ ເພື່ອສະສົມທຶນຮອນສະໜັບສະໜູນການພັດທະນາເສດຖະກິດ-ສັງຄົມ ແລະ ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ໃນຕໍ່ໜ້າ.

ສປປ ລາວ ຍັງມີປະຫວັດສາດ ແລະ ຄວາມຫຼາກຫຼາຍທາງດ້ານວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມທີ່ເປັນເອກະລັກ ໃນແຕ່ລະຊົນເຜົ່າ ແລະ ແຕ່ລະເຂດຂອງປະເທດ, ເຊິ່ງເປັນທ່າແຮງດ້ານການທ່ອງທ່ຽວປະຫວັດສາດ ແລະ ວັດທະນະທຳ, ປະຊາຊົນບັນດາຊົນເຜົ່າມີອັດຖະຍະໃສດີ, ນອບນ້ອມຖ່ອມຕົນ ມີຈິດໃຈໂອບເອື້ອຍອາລີ ເຊິ່ງເປັນເອກະລັກສະເພາະທີ່ດີ ໃນການດຶງດູດນັກທ່ອງທ່ຽວຕ່າງປະເທດ ແລະ ການຮ່ວມມືດ້ານຕ່າງໆ ໃນຂົງເຂດພາກພື້ນລຸ່ມແມ່ນ້ຳຂອງ.

DRAFT

ສປປ ລາວ ຍັງມີທີ່ຕັ້ງຍຸດທະສາດຢູ່ໃຈກາງຂອງອະນຸພາກພື້ນລຸ່ມແມ່ນ້ຳຂອງທີ່ມີຊາຍແດນຕິດຈອດກັບບັນດາປະເທດເພື່ອນບ້ານທີ່ມີລະດັບການພັດທະນາ ແລະ ຂະໜາດເສດຖະກິດສູງສົມຄວນ ໂດຍສະເພາະ ສປ ຈີນ ແລະ ບັນດາປະເທດອາຊຽນ ເຊິ່ງສ້າງເງື່ອນໄຂໃນການເຂົ້າເຖິງຕະຫຼາດພາກພື້ນທີ່ມີກຳລັງຊື້ສູງ, ມີການພັດທະນາໂຄງລ່າງພື້ນຖານເຊື່ອມໂຍງເຊື່ອມຈອດ ເປັນຕົ້ນ ເສັ້ນທາງລົດໄຟ ລາວ-ຈີນ, ເສັ້ນທາງຫຼວງແຫ່ງຊາດ, ທ່າບົກ ແລະ ລະບົບການຂົນສົ່ງຜູ້ໂດຍສານ ແລະ ສິນຄ້າ ເຊິ່ງໄດ້ສ້າງເງື່ອນໄຂຊຸກຍູ້ຂະແໜງບໍລິການທ່ອງທ່ຽວ, ຂົນສົ່ງ ແລະ ໂລຈິສຕິກ ໃຫ້ມີການຂະຫຍາຍຕົວຫຼາຍຂຶ້ນ, ສາມາດອຳນວຍຄວາມສະດວກໃຫ້ແກ່ການຜະລິດ ແລະ ສົ່ງອອກຂອງບັນດາເຂດອຸດສາຫະກຳທີ່ເປັນຕ່ອງໂສ້ການຜະລິດຂອງພາກພື້ນໄດ້ຫຼາຍຂຶ້ນ.

ສະນັ້ນ, ອີງໃສ່ທ່າແຮງ ແລະ ຄວາມອາດສາມາດບົ່ມຊ້ອນດັ່ງກ່າວ ໄດ້ຄົ້ນຄ້ວາກຳນົດອອກເປັນຂະແໜງການເສດຖະກິດປາຍແຫຼມ ແລະ ຂະແໜງການສະໜັບສະໜູນຕົ້ນຕໍ ດັ່ງນີ້:

ຂະແໜງເສດຖະກິດປາຍແຫຼມ ໝາຍເຖິງການເສີມຂະຫຍາຍບັນດາທ່າແຮງ ແລະ ຄວາມອາດສາມາດບົ່ມຊ້ອນຂອງປະເທດ ໃຫ້ກາຍເປັນຂະແໜງເສດຖະກິດປາຍແຫຼມທີ່ມີຄວາມໄດ້ປຽບແບບທຽບຖານໃນດ້ານຕ່າງໆ ສົມທຽບກັບຂະແໜງການອື່ນໆ, ເປັນຂະແໜງການນຳໜ້າໃນການຊຸກຍູ້ການຂະຫຍາຍຕົວຂອງເສດຖະກິດແຫ່ງຊາດ ທີ່ຮັບປະກັນຄວາມໝັ້ນທ່ຽງ ແລະ ຕໍ່ເນື່ອງ, ສາມາດສ້າງລາຍຮັບແຫ່ງຊາດທີ່ເຂັ້ມແຂງ, ສ້າງວຽກເຮັດງານທຳໃຫ້ແກ່ສັງຄົມຢ່າງກວ້າງຂວາງ ແລະ ສ້າງການຫັນປ່ຽນໂຄງປະກອບເສດຖະກິດຕາມທິດຄຸນນະພາບ ແລະ ໜັກແໜ້ນ:

**1) ຂະແໜງພະລັງງານໄຟຟ້າ** ເປັນຂະແໜງການໜຶ່ງທີ່ມີທ່າແຮງບົ່ມຊ້ອນ ເນື່ອງຈາກ ສປປ ລາວ ມີທ່າແຮງ ດ້ານຊັບພະຍາກອນແຫຼ່ງນ້ຳ, ແສງຕາເວັນ ແລະ ລົມ ທີ່ສາມາດຜະລິດພະລັງງານໄຟຟ້າທຸກປະເພດ ເພື່ອຊົມໃຊ້ພາຍໃນ ແລະ ສົ່ງອອກ. ໃນໄລຍະຜ່ານມາ, ລັດຖະບານໄດ້ເປີດກວ້າງການຮ່ວມມື ແລະ ດຶງດູດການລົງທຶນຕ່າງປະເທດເຂົ້າໃນໂຄງການພັດທະນາພະລັງງານໄຟຟ້າ ເປັນຈຳນວນຫຼວງຫຼາຍ ເຊິ່ງໃນປັດຈຸບັນ ມີແຫຼ່ງຜະລິດທີ່ມີກຳລັງຕິດຕັ້ງ 1 MV ຂຶ້ນໄປ ທັງໝົດ 90 ແຫ່ງ (ໃນນັ້ນ ພະລັງງານນ້ຳ 77 ແຫ່ງ) ແລະ ມີຄວາມອາດສາມາດຂະຫຍາຍໄດ້ຕື່ມອີກຢູ່ຫຼາຍບ່ອນ. ຖ້າຂະແໜງການດັ່ງກ່າວໄດ້ຮັບການຄຸ້ມຄອງແລະປະຕິຮູບຢ່າງສອດຄ່ອງແລ້ວກໍ່ຈະສ້າງຜົນຕອບແທນດ້ານທຶນຮອນໃນລະດັບໜຶ່ງ ເຊິ່ງຫຼາຍໂຄງການພະລັງງານຮ່ວມທຶນກັບຕ່າງປະເທດຈະກ້າວໄປສູ່ໄລຍະການປັນຜົນຕອບແທນ. ນອກຈາກນັ້ນ, ຂະແໜງພະລັງງານຈະກາຍເປັນຂະແໜງການສະໜັບສະໜູນເສດຖະກິດທີ່ສຳຄັນໃນການສະໜອງພະລັງງານເຂົ້າສູ່ຖານການຜະລິດອຸດສາຫະກຳ ທີ່ຈະຂະຫຍາຍຕົວໃນອານາຄົດ.

**2) ຂະແໜງການຜະລິດກະສິກຳ ແລະ ປຸງແຕ່ງຜະລິດຕະພັນກະສິກຳເພື່ອສົ່ງອອກ** ແມ່ນຂະແໜງເສດຖະກິດທີ່ສຳຄັນໜຶ່ງ ແລະ ເປັນພື້ນຖານໃນການພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະ ການສ້າງລາຍຮັບ ແລະ ແກ້ໄຂຄວາມທຸກຍາກໃຫ້ແກ່ປະຊາຊົນບັນດາເຜົ່າທີ່ອາໄສການຜະລິດກະສິກຳ ທີ່ກວມອັດຕາສ່ວນສູງສົມຄວນ ເນື່ອງຈາກສະພາບເນື້ອທີ່ການຜະລິດ, ພູມມີອາກາດມີຄວາມເໝາະສົມແກ່ການຜະລິດກະສິກຳ-ປ່າໄມ້. ພ້ອມກັນນັ້ນ, ທ່າອ່ຽງດ້ານຄວາມຕ້ອງການຂອງຕະຫຼາດຜະລິດຕະພັນກະສິກຳ ໂດຍສະເພາະ ພືດ ແລະ ສັດລ້ຽງທີ່ມີລາຄາສູງໃນປະເທດເພື່ອນບ້ານ ເປັນຕົ້ນ ສປ ຈີນ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ເລີ່ມມີໜໍ່ແໜງການລົງທຶນໃນຂະແໜງດັ່ງກ່າວນີ້ ໂດຍສະເພາະ ການຜະລິດຮູບແບບເປັນຟາມ. ພ້ອມດຽວກັນ, ການສົ່ງເສີມຂະແໜງດັ່ງກ່າວ ຍັງເປັນການຊຸກຍູ້ການຜະລິດເພື່ອຄ້ຳປະກັນສະບຽງອາຫານ ເຊິ່ງແມ່ນແຜນງານບູລິມະສິດຂອງລັດຖະບານທີ່ໄດ້ສຸມການລົງທຶນຢ່າງມະຫາ ສານໃນໄລຍະຜ່ານມາ. ນອກຈາກນັ້ນ, ການຂະຫຍາຍຕົວຂອງຂະແໜງການຜະລິດດັ່ງກ່າວ ຈະເປັນປັດໄຈຂັບເຄື່ອນບັນດາວິສາຫະກິດຂະໜາດນ້ອຍ-ກາງພາຍໃນທີ່ມີທ່າແຮງແລ້ວໃຫ້ເຂົ້າຮ່ວມໃນຂະແໜງປຸງແຕ່ງສິນຄ້າກະສິກຳໃຫ້ຫຼາຍຂຶ້ນ ໂດຍສະເພາະ ຂົງເຂດການຜະລິດ ແລະ ປຸງແຕ່ງສິນຄ້າກະສິກຳສະອາດ ທີ່ມີຕະຫຼາດສະເພາະ ແລະ ສາມາດສ້າງລາຍຮັບທີ່ສູງ. ຄົ້ນຄ້ວາຜະລິດແນວພັນໃໝ່ ພືດ ແລະ ສັດ ເພື່ອຕອບສະໜອງໃຫ້ສັງຄົມຢ່າງພຽງພໍ.

**3) ຂະແໜງຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ** ສາມາດເປັນໄດ້ທັງຂະແໜງນຳໜ້າໃນການສ້າງລາຍຮັບໃນໄລຍະຕົ້ນ ທີ່ໃຫ້ຜົນຕອບແທນໄວ ເຊິ່ງໃນໄລຍະສັ້ນ ອາດສາມາດຊ່ວຍແກ້ໄຂສະພາບຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໃນລະດັບໃດໜຶ່ງໄດ້ ໂດຍສະເພາະ ໃນສະພາບທີ່ຕ້ອງແກ້ໄຂໜີ້ສິນ ແລະ ມີທ່າແຮງໃນການພັດທະນາຂະແໜງປຸງແຕ່ງແຮ່ທາດເພື່ອທົດແທນການນຳເຂົ້າ ເພື່ອຮອງຮັບຂະບວນການຫັນເປັນອຸດສາຫະກຳ ແລະທັນສະໄໝ, ແຕ່ຈະບໍ່ແມ່ນຂະແໜງການເສດຖະກິດປາຍແຫຼມທີ່ສາມາດສ້າງວຽກເຮັດງານທຳ, ສ້າງແຫຼ່ງລາຍຮັບທີ່ຍືນຍົງ ແລະ ຍາວນານໄດ້. ເຖິງຢ່າງໃດກໍ່ຕາມ, ຂະແໜງດັ່ງກ່າວເປັນຂະແໜງການສະໜັບສະໜູນທີ່ສຳຄັນໃນການພັດທະນາອຸດສາຫະກຳປຸງແຕ່ງແຮ່ທາດເພື່ອທົດແທນການນຳເຂົ້າ ແລະ ສົ່ງອອກ ໃນຕໍ່ໜ້າ. ສະນັ້ນ, ການຂຸດຄົ້ນແຮ່ທາດຕໍ່ໜ້າ

DRAFT

ຕ້ອງມີຂໍ້ມູນທີ່ລະອຽດຊັດເຈນ ເປັນຕົ້ນ: ຂາດຂໍ້ມູນດ້ານທໍລະນີສາດທີ່ລະອຽດ, ຂອບເຂດເນື້ອທີ່ຂອງໂຄງການ, ປະລິມານການສະສົມແຮ່, ກົນໄກຄຸ້ມຄອງທີ່ເຂັ້ມແຂງ, ມີບຸກຄະລາກອນ, ສິ່ງອໍານວຍຄວາມສະດວກ ແລະ ມີເຄື່ອງມືອຸປະກອນໃນການຕິດຕາມ-ກວດກາຈາກຂອດການຂຸດຄົ້ນ, ຈໍາໜ່າຍ ແລະ ຈັດເກັບລາຍຮັບຢ່າງເປັນລະບົບຄົບຊຸດ. ໂຄງການຂຸດຄົ້ນແຮ່ທາດ ຕ້ອງຮັບປະກັນດ້ານສິ່ງແວດລ້ອມ, ທໍາມະຊາດ ແລະ ສັງຄົມ. ພ້ອມນັ້ນ, ກໍ່ຕ້ອງມີການປຸງແຕ່ງເຄິ່ງສໍາເລັດຮູບ ແລະ ສໍາເລັດຮູບ ເພື່ອສ້າງມູນຄ່າເພີ່ມ ແລະ ສ້າງລາຍຮັບໃຫ້ສູງຂຶ້ນ.

**4) ຂະແໜງບໍລິການທ່ອງທ່ຽວ** ເປັນຂະແໜງການບູລິມະສິດໜຶ່ງ ທີ່ສາມາດສົ່ງເສີມການຜະລິດພາຍໃນ ທັງເປັນຂະແໜງການສົ່ງອອກກັບທີ່ ແລະກະຈາຍລາຍຮັບໃຫ່ແກ່ສັງຄົມ ເນື່ອງຈາກປະເທດເຮົາມີທ່າແຮງໄດ້ປຽບດ້ານທີ່ຕັ້ງພູມສັນຖານຂອງປະເທດ, ພື້ນຖານໂຄງລ່າງເຊື່ອມຈອດອະນຸພາກພື້ນ, ຄວາມອຸດົມສົມບູນຂອງຊັບພະຍາກອນທາງທໍາມະຊາດ, ປະຫວັດສາດ ແລະ ວັດທະນະທໍາ. ນອກຈາກນັ້ນ, ຂະແໜງບໍລິການທ່ອງທ່ຽວ ຍັງແມ່ນຂະແໜງ ເສດຖະກິດສໍາຄັນທີ່ຈະຊ່ວຍກະຕຸ້ນສ້າງຕ່ອງໂສ້ເສດຖະກິດໃຫ້ຂັບເຄື່ອນໄປພ້ອມໆກັນ ເປັນຕົ້ນ ຂະແໜງການຜະລິດສິນຄ້າກະສິກໍາ ແລະ ປຸງແຕ່ງກະສິກໍາ-ຫັດຖະກໍາ, ຂະແໜງການຂົນສົ່ງ, ຂະແໜງການເງິນ-ການທະນາຄານ ແລະ ການບໍລິການອື່ນໆ, ເຊິ່ງຈະສາມາດສ້າງວຽກເຮັດງານທໍາໃຫ້ປະຊາຊົນ ໃນຫຼາຍສາຂາອາຊີບ ໃນຕ່ອງໂສ້ການບໍລິການທ່ອງທ່ຽວ. ໂດຍລວມແລ້ວ ສປປ ລາວ ມີທ່າແຮງໃນການພັດທະນາອຸດສາຫະກໍາທ່ອງທ່ຽວທີ່ເນັ້ນໃສ່ຕະຫຼາດສະເພາະທີ່ຈະສ້າງລາຍຮັບສູງຂຶ້ນ ອີງໃສ່ທໍາມະຊາດທີ່ບໍ່ທັນຖືກທໍາລາຍ, ອາກາດທີ່ດີ, ອາຫານທີ່ມີຄຸນນະພາບ ແລະ ເຊື່ອມຈອດລາຍການບໍລິການທ່ອງທ່ຽວຫຼືສະຖານທີ່ທ່ອງທ່ຽວທີ່ມີຊື່ສຽງ ແລະ ເປັນຕະຫຼາດໃຫ່ຍໃນຂົງເຂດພາກພື້ນ.

**5) ຂະແໜງອຸດສາຫະກໍາປຸງແຕ່ງທີ່ເປັນຕ່ອງໂສ້ຖານການຜະລິດພາກພື້ນ(ຕິດພັນກັບທ່າແຮງດ້ານຊັບພະຍາກອນ, ດ້ານທີ່ຕັ້ງ ແລະ ການເຊື່ອມຈອດ)**: ການພັດທະນາໂຄງລ່າງພື້ນຖານເຊື່ອມຈອດກັບປະເທດເພື່ອນບ້ານ ໂດຍສະເພາະ ເສັ້ນທາງລົດໄຟຄວາມໄວສູງ, ເສັ້ນທາງດ່ວນ ແລະ ໂຄງລ່າງເຊື່ອມຈອດອື່ນໆ ຈະເປັນເງື່ອນໄຂທີ່ສໍາຄັນສໍາລັບ ສປປ ລາວ ກາຍເປັນຖານການຜະລິດອຸດສາຫະກໍາປຸງແຕ່ງຂອງພາກພື້ນ ໂດຍການດຶງດູດຖານການຜະລິດອຸດສາຫະກໍາປຸງແຕ່ງ ທີ່ເນັ້ນໃສ່ການຜະລິດວັດຖຸ-ອຸປະກອນ ແລະ ຊິ້ນສ່ວນ ປະກອບເຂົ້າໃນຂະບວນການຜະລິດສິນຄ້າອຸດສາຫະກໍາທີ່ມີມູນຄ່າສູງ ຢູ່ໃນປະເທດເພື່ອນບ້ານເຂົ້າມາສູ່ປະເທດເຮົາ ໂດຍສຸມໃສ່ເຂດການຜະລິດໃນນິຄົມອຸດສາຫະກໍາ, ເຂດເສດຖະ ກິດພິເສດ, ເຂດການຄ້າຊາຍແດນ ແລະ ເຂດຕົວເມືອງທັນສະໄໝ ທີ່ກໍາລັງເລັ່ງຊຸກຍູ້ໃນປັດຈຸບັນ, ນອກນັ້ນ ອາດສຸມໃສ່ບັນດາທ່າແຮງທາງດ້ານຊັບພະຍາກອນທໍາມະຊາດທີ່ລາວມີທ່າແຮງໄດ້ປຽບ ເຊັ່ນ: ການປຸງແຕ່ງແຮ່ທາດໃນແຮ່ທີ່ລາວມີທ່າໄດ້ປຽບທັງດ້ານຄຸນນະພາບ ແລະ ປະລິມານ ເປັນຕົ້ນ ການປຸງແຕ່ງເກືອກາລີ, ປຸງແຕ່ງສາຍໄຟຟ້າ ແລະ ອື່ນໆ. ຖ້າຂະແໜງດັ່ງກ່າວ ໄດ້ຮັບການພັດທະນາດີຂຶ້ນ ຈະກາຍເປັນທ່າແຮງສໍາຄັນໃນການຊຸກຍູ້ການສ້າງມູນຄ່າເພີ່ມ ແລະ ສ້າງການຫັນປ່ຽນໂຄງປະກອບເສດຖະກິດ ແລະ ສ້າງການຈ້າງງານທີ່ໝັ້ນຄົງ, ພ້ອມທັງເປັນການຊຸກຍູ້ການເຂົ້າຮ່ວມ ແລະ ສ້າງຄວາມເຂັ້ມແຂງຂອງຫົວໜ່ວຍທຸລະກິດຂະໜາດນ້ອຍ ແລະ ກາງ (SME) ພາຍໃນເພື່ອພັດທະນາໃຫ້ກາຍເປັນອຸດສາຫະກໍາຂະໜາດໃຫ່ຍ ແລະ ນໍາໜ້າຂອງປະເທດໃນອານາຄົດ.

**6) ຂະແໜງບໍລິການຂົນສົ່ງ ແລະ ໂລຈິສຕິກ (ຕິດພັນກັບທ່າແຮງດ້ານທີ່ຕັ້ງເພື່ອເຊື່ອມໂຍງເຊື່ອມຈອດກັບພາກພື້ນ ແລະ ສາກົນ)** ແມ່ນຂະແໜງທີ່ສໍາຄັນໃນການຫັນປະເທດທີ່ບໍ່ມີທາງອອກສູ່ທະເລ ກາຍມາເປັນປະເທດເຊື່ອມໂຍງ-ເຊື່ອມຈອດກັບພາກພື້ນ ແລະ ສາກົນ. ໃນປັດຈຸ ບັນ, ສປປ ລາວ ໄດ້ພັດທະນາໂຄງລ່າງພື້ນຖານທີ່ສໍາຄັນ ໂດຍສະເພາະ ໂຄງການກໍ່ສ້າງເສັ້ນທາງລົດໄຟ ແລະ ເສັ້ນທາງດ່ວນໃຫ້ກາຍເປັນແລວທາງເສດຖະກິດ ແລະ ເຊື່ອມຈອດເຂົ້າສູ່ຕະຫຼາດສິນຄ້າ ແລະ ບໍລິການໃນອານຸພາກພື້ນ. ການບໍລິການຂົນສົ່ງສິນຄ້າ ແລະ ຜູ້ໂດຍສານຜ່ານລົດໄຟລາວ-ຈີນ ເຊິ່ງເລີ່ມແຕ່ມື້ເປີດໃຫ້ບໍລິການຮອດເດືອນກັນຍາ 2023 ມີທ່າອ່ຽງຂະຫຍາຍຕົວຢ່າງໄວ ເຊິ່ງມີຈໍານວນຜູ້ໂດຍສານມີ ປະມານ 3,269,000 ເທື່ອຄົນ (ສະເລ່ຍ 4,902 ຄົນເທື່ອຕໍ່ວັນ), ໃນນັ້ນ ຜູ້ໂດຍສານລະຫວ່າງປະເທດມີຈໍານວນ 66,359 ເທື່ອຄົນ ແລະ ການຂົນສົ່ງສິນຄ້າ ບັນລຸໄດ້ 5,530,000 ໂຕນ ສະເລ່ຍ 8,165 ໂຕນ/ວັນ; ປະເພດສິນຄ້າຕົ້ນຕໍ ແມ່ນແຮ່ເຫຼັກ, ຢາງພາລາ, ແປ້ງມັນຕົ້ນ, ປຸ໋ຍເຄມີ ແລະ ອື່ນໆ. ພ້ອມນັ້ນ, ໄດ້ເປີດນໍາໃຊ້ການບໍລິການທ່າບົກຢູ່ໃນແຂວງທີ່ມີຈຸດດ່ານຊາຍແດນສາກົນທີ່ສໍາຄັນ ເຊັ່ນ: ນະຄອນຫຼວງວຽງຈັນ, ຄໍາມ່ວນ, ສະຫວັນນະເຂດ ແລະ ຈໍາປາສັກ ແລະ ກໍາລັງສຸມໃສ່ພັດທະນາທ່າບົກໃນເຂດອື່ນໆຕື່ມອີກ. ສິ່ງອໍານວຍຄວາມສະດວກທີ່ກ່າວມານີ້ກໍາລັງເປັນໜໍ່ແໜງໃນການສ້າງລາຍຮັບ ໃຫ້ແກ່ປະເທດຂອງພວກເຮົາຈາກການບໍລິການຂົນສົ່ງ ແລະ ໂລຈິສຕິກຜ່ານປະເທດ, ພ້ອມທັງດຶງດູດນັກທ່ອງທ່ຽວເຂົ້າມາທ່ຽວຊົມປະເທດເຮົາ ໂດຍສະເພາະ ເຂດພາກເໜືອຂອງລາວ.

DRAFT

**7) ຂະແໜງເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານຮັບໃຊ້ເສດຖະກິດດິຈິຕອນ:** ເປັນຂະແໜງເສດຖະກິດທີ່ມີຄວາມສໍາຄັນ ແລະເປັນທ່າອ່ຽງລວມຂອງໂລກໃນການສົ່ງເສີມການພັດທະນາອຸດສາຫະກໍາຍຸກ 4.0 ແລະ ສ້າງມູນຄ່າເພີ່ມສູງໃຫ້ແກ່ເສດຖະກິດໃນຫຼາຍປະເທດ. ຂະແໜງດັ່ງກ່າວ ກໍາລັງກາຍເປັນຂະແໜງການສະໜັບສະໜູນທີ່ສໍາຄັນຕໍ່ການຂະຫຍາຍຕົວຂອງຂະແໜງການເສດຖະກິດປາຍແຫຼມທີ່ໄດ້ສະເໜີຂຶ້ນ, ພ້ອມທັງສາມາດສ້າງລາຍຮັບໃຫ້ແກ່ເສດຖະກິດ ແລະ ງົບປະມານລັດ. ເຖິງວ່າປະເທດເຮົາ ຍັງພັດທະນາໃນໄລຍະເລີ່ມຕົ້ນ, ແຕ່ລັດຖະບານກໍໄດ້ເອົາໃຈໃສ່ຊຸກຍູ້ ແລະ ພັດທະນາຂະແໜງເສດຖະກິດດິຈິຕອນໃຫ້ມີການຂະຫຍາຍຕົວ ເປັນຕົ້ນ: ທຸລະກິດສະຕາດອັບ (Start-up), ທຸລະກິດການຄ້າອີເລັກໂຕຼນິກ (E-commerce), ທົດລອງທຸລະກໍາຊັບສິນດິຈິຕອນ (ເຊັ່ນ: ເງິນບິດຄອຍ-ເງິນຄຼິບໂຕ), ແອັບພລິເຄຊັນຕ່າງໆ ແລະ ລະບົບຫ້ອງການທັນສະໄໝ ໄດ້ຮັບການພັດທະນາໃຫ້ຫຼາຍຂຶ້ນ. ໃນຕໍ່ໜ້າ, ຈະໄດ້ສືບຕໍ່ພັດທະນາໂຄງລ່າງພື້ນຖານດ້ານດິຈິຕອນ ໃຫ້ແຂງແຮງເພື່ອສະໜັບສະໜູນການພັດທະນາຂະແໜງເສດຖະກິດປາຍແຫຼມ ໂດຍສະເພາະ ການະລິດກະສິກໍາສະອາດ, ການບໍລິການທ່ອງທ່ຽວ, ການບໍລິການຂົນສົ່ງ ແລະ ໂລຈິສຕິກ, ການພັດທະນາພະລັງງານສະອາດ ແລະ ອື່ນໆ ຜ່ານຊ່ອງທາງອັບພລິເຄຊັນຕ່າງໆ ແລະ ການນໍາໃຊ້ຂໍ້ມູນຂະໜາດໃຫຍ່ໃຫ້ກວ້າງຂວາງ ແລະ ມີໝາກຜົນສູງ.

## V. ທິດທາງລວມ, ເປົ້າໝາຍ, ຄາດໝາຍ ແລະ ແຜນວຽກຈຸດສຸມ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030)

ອີງໃສ່ສະພາບແວດລ້ອມພາກພື້ນ ແລະ ສາກົນ, ທ່າແຮງບົ່ມຊ້ອນ ແລະ ສະພາບເງື່ອນໄຂ, ຄວາມທ້າທາຍ ແລະ ຈຸດອ່ອນຄົງຄ້າງ ຂອງການພັດທະນາເສດຖະກິດ-ສັງຄົມ ໃນໄລຍະຜ່ານມາ, ສືບຕໍ່ວິໄສທັດການພັດທະນາ ຮອດປີ 2030, ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2026-2035) ແລະ ວິໄສທັດ ຮອດປີ 2055. ສະນັ້ນ, ການພັດທະນາເສດຖະກິດ-ສັງຄົມໃນໄລຍະ 2026-2030 ຕ້ອງເລັ່ງປັບປຸງດ້ານໂຄງສ້າງເສດຖະກິດໃຫ້ມີຖານການຜະລິດ ແລະ ການບໍລິການທີ່ເຂັ້ມແຂງ, ຮັບປະກັນໃຫ້ເສດຖະກິດມະຫາພາກມີສະຖຽນລະພາບ, ສືບຕໍ່ພັດທະນາຊັບພະຍາກອນມະນຸດໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ ໄປຄຽງຄູ່ກັບການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ; ສ້າງສັງຄົມທີ່ໜ້າຢູ່ ແລະ ມີລະບົບສະຫວັດດີການສັງຄົມທີ່ດີ, ສືບຕໍ່ນໍາໃຊ້ກະລະໂອກາດ ແລະ ທ່າແຮງຕ່າງໆຕາມຂົງເຂດ ແລະ ຂະແໜງການຢ່າງມີປະສິດທິຜົນ, ຍົກລະດັບຂີດຄວາມສາມາດໃນການຮັບມືກັບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ, ລວມທັງຄວາມສ່ຽງຕ່າງໆທີ່ຈະເກີດຂຶ້ນ; ສືບຕໍ່ປັບປຸງການຄຸ້ມຄອງບໍລິຫານລັດໃຫ້ມີປະສິດທິພາບ ແລະ ທັນສະໄໝ ດ້ວຍການປັບປຸງບັນດານະໂຍບາຍ, ກົດໝາຍ, ນິຕິກໍາ ແລະ ລະບຽບການຕ່າງໆທີ່ເອື້ອອໍານວຍໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ໃຫ້ໄດ້ຮັບໝາກຜົນຢ່າງແທ້ຈິງ.

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X(2026-2030) ເປັນແຜນສືບຕໍ່ 4 ບຸກທະລຸ ໃຫ້ແຂງແຮງ, ເລິກເຊິ່ງ ແລະ ເປັນຮູບປະທໍາຕົວຈິງ ຄື: 1) ບຸກທະລຸດ້ານຈິນຕະນາການ, 2) ບຸກລະທຸດ້ານການພັດທະນາຊັບພະຍາກອນມະນຸດ, 3) ບຸກທະລຸລະບົບກົນໄກ, ລະບອບ, ລະບຽບການບໍລິຫານ ແລະ 4) ບຸກທະລຸດ້ານການແກ້ໄຂຄວາມທຸກຍາກຂອງປະຊາຊົນ ດ້ວຍການຂຸດຄົ້ນແຫຼ່ງທຶນຕ່າງໆ ແລະ ດ້ວຍນະໂຍບາຍສົ່ງເສີມພິເສດ, ສ້າງພື້ນຖານໂຄງລ່າງທາງດ້ານເສດຖະກິດ-ສັງຄົມຢ່າງມີຈຸດສຸມ, ໂດຍຕ້ອງສຸມໃສ່ມາດຕະການເລັ່ງດ່ວນ 3 ດ້ານ ດັ່ງນີ້:

1) ປັບປຸງກົດໝາຍ, ກົນໄກ ແລະ ລະບຽບການ, ຍົກສູງຄວາມສາມາດໃນການຄຸ້ມຄອງ ແລະ ບໍລິຫານລັດໃຫ້ມີປະສິດທິພາບ ຕິດພັນກັບການຫັນເປັນດີຈີຕ໋ອນ, ການແບ່ງຂັ້ນ, ແບ່ງສິດ ແລະ ສ້າງສະພາບແວດລ້ອມໃຫ້ແກ່ການລົງທຶນ ແລະ ການດໍາເນີນທຸລະກິດ ໃຫ້ມີຄວາມສະດວກ, ວ່ອງໄວ ແລະ ໂປ່ງໃສ;
2) ຍົກສູງຈິດໃຈພັດທະນາ ຢ່າງແຮງກ້າ; ຊຸກຍູ້ຈິດໃຈເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ໃຫ້ກາຍເປັນປະຊາຊົນ ແລະ ທຸລະກິດທີ່ຮັ່ງມີ ຕິດພັນກັບການຍົກສູງຄຸນນະພາບຊັບພະຍາກອນມະນຸດ. ຊຸກຍູ້ການສ້າງພື້ນຖານເສດຖະກິດເອກະລາດ ເປັນເຈົ້າຕົນເອງ ເພື່ອຕອບສະໜອງຄວາມຕ້ອງການພັດທະນາ ແລະ ການເຊື່ອມໂຍງກັບສາກົນ;
3) ຫັນປ່ຽນວຽກງານຄຸ້ມຄອງຮອບດ້ານ ເພື່ອປັບປຸງປະສິດທິພາບການຂຸດຄົ້ນ ແລະ ນໍາໃຊ້ຊັບພະຍາກອນ ໂດຍສະເພາະໃນຂົງເຂດແຮ່ທາດ, ພະລັງງານ ແລະ ທີ່ດິນ; ເພີ່ມທະວີຄວາມໂປ່ງໃສ, ສະກັດກັ້ນ ແລະ ຕ້ານການສໍ້

DRAFT

ລາດບັງຫຼວງ ແລະ ການສູນເສຍ, ຍົກສູງແຫຼ່ງລາຍຮັບງົບປະມານແຫ່ງລັດ ເພື່ອສ້າງແຫຼ່ງກຳລັງແຮງເພື່ອຊຸກຍູ້ການພັດທະນາເສດຖະກິດ-ສັງຄົມຢ່າງວ່ອງໄວ ແລະ ຍືນຍົງ.

**ສະນັ້ນ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X(2026-2030) ຈຶ່ງໄດ້ການົດທິດທາງ, ເປົ້າໝາຍ, ຄາດໝາຍ ແລະ ແຜນວຽກຈຸດສຸມ ດັ່ງນີ້:**

## 1. ທິດທາງລວມ

1) ແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໃຫ້ເປັນຮູບປະທຳຫຼາຍຂຶ້ນ, ບໍ່ສ້າງໜີ້ສິນໜັກໜ່ວງ; ດຳເນີນການຄຸ້ມຄອງ-ບໍລິຫານເສດຖະກິດ ໄປຕາມກົດໝາຍ, ລະບຽບຫຼັກການ ແລະ ສອດຄ່ອງກັບກົນໄກຕະຫຼາດ ທີ່ມີການການດັດສົມ ແລະ ຄຸ້ມຄອງຂອງລັດ, ພັດທະນາເສດຖະກິດໃຫ້ເຂັ້ມແຂງເປັນເຈົ້າຕົນເອງນັບມື້ພົ້ນເດັ່ນ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ ດ້ວຍຄຸນນະພາບສູງ;

2) ສຸມໃສ່ກໍ່ສ້າງ ແລະ ພັດທະນາຊັບພະຍາກອນມະນຸດ, ຖັນແຖວນັກຮຽນຮູ້-ປັນຍາຊົນ ໃຫ້ສາມາດຕອບສະໜອງໃຫ້ແກ່ການສ້າງສາປະເທດໃນເງື່ອນໄຂໃໝ່, ສາມາດປະກອບສ່ວນເຂົ້າໃນການຄົ້ນຄ້ວາ, ພັດທະນາວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ຫຼື ການປະດິດສ້າງໃໝ່ ໃຫ້ແກ່ປະເທດຊາດ ນັບມື້ນັບຫຼາຍ ແລະ ໂດດເດັ່ນຂຶ້ນ; ວັດຖະນະທຳທີ່ເປັນເອກະລັກ ແລະ ດີງາມຂອງຊາດ ໄດ້ຮັບການເສີມຂະຫຍາຍ;

3) ຍົກສູງຄຸນນະພາບຊີວິດຂອງປະຊາຊົນໃຫ້ດີຂຶ້ນ, ພັດທະນາປະເທດຊາດໃຫ້ຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ຢ່າງໂລ່ງລຽນ, ມີຄຸນນະພາບ ແລະ ຍືນຍົງ;

4) ເອົາໃຈໃສ່ພັດທະນາເສດຖະກິດ, ສັງຄົມ ແລະ ການປົກປັກຮັກສາສິ່ງແວດລ້ອມ ຢ່າງສົມສ່ວນ ຕາມທິດສີຂຽວ ແລະ ຍືນຍົງ;

5) ເຄື່ອນໄຫວວຽກງານການຕ່າງປະເທດຢ່າງເປັນເຈົ້າການ ແລະ ຫ້າວຫັນ, ໄດ້ຮັບຄວາມເຊື່ອໝັ້ນ, ໄດ້ຮັບການສະໜັບສະໜູນ ແລະ ຊ່ວຍເຫຼືອຈາກເພື່ອນມິດສາກົນ, ມີບົດບາດພົ້ນເດັ່ນສູງຂຶ້ນ ໃນເວທີພາກພື້ນ ແລະ ສາກົນ;

6) ຍົກສູງປະສິດທິພາບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ຕາມທິດສ້າງລັດທີ່ປົກຄອງດ້ວຍກົດໝາຍ;

7) ຮັບປະກັນສະຖຽນລະພາບການເມືອງ ຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ, ມີຄວາມສາມັກຄີເປັນປຶກແຜ່ນ ແລະ ປັບປຸງຮາກຖານການເມືອງໃຫ້ມີຄວາມເຂັ້ມແຂງ ແລະ ໜັກແໜ້ນ.

## 2. ເປົ້າໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030)

1) ສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ດ້ວຍການນຳໃຊ້ທຸກທ່າແຮງບົ່ມຊ້ອນເພື່ອເຮັດໃຫ້ເສດຖະກິດມີສະຖຽນລະພາບ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄວາມເຂັ້ມແຂງ, ໝັ້ນທ່ຽງ ແລະ ຍືນຍົງ;
2) ພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບສູງຂຶ້ນ ແລະ ຮູ້ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ;
3) ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ, ການພັດທະນາສັງຄົມໃຫ້ມີການຂະຫຍາຍຕົວ ແລະ ມີຄຸນນະພາບສູງຂຶ້ນ;
4) ປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໃຫ້ມີຄວາມຍືນຍົງ ແລະ ສາມາດກຽມພ້ອມຮັບມືກັບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດຕ່າງໆ;
5) ການເຊື່ອມໂຍງ-ເຊື່ອມຈອດກັບພາກພື້ນ ແລະ ສາກົນຢ່າງກວ້າງຂວາງ ແລະ ມີປະສິດທິຜົນ.
6) ການຄຸ້ມຄອງ ແລະ ບໍລິຫານລັດໃຫ້ມີປະສິດທິພາບ, ການເມືອງມີສະຖຽນລະພາບ, ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ຍຸຕິທຳ ແລະ ສີວິໄລ.

## 3. ແຜນວຽກຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030)

### 3.1 ເປົ້າໝາຍທີ 1: ສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ດ້ວຍການນຳໃຊ້ທ່າແຮງເພື່ອເຮັດໃຫ້ເສດຖະກິດມີສະຖຽນລະພາບ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ

ສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ດ້ວຍການສຸມໃສ່ສ້າງຖານການຜະລິດ ແລະ ການບໍລິການ ໃຫ້ຂະຫຍາຍຕົວ ແລະ ຫຼາກຫຼາຍ ແນໃສ່ແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ຊຸກຍູ້ການຂະຫຍາຍຕົວຂອງເສດຖະກິດໃຫ້ເຂັ້ມແຂງ ແລະ ມີຄຸນນະພາບສູງຂຶ້ນ ດ້ວຍການນຳໃຊ້ທ່າແຮງບົ່ມຊ້ອນຂອງປະເທດ ຢ່າງເປັນເຈົ້າ

DRAFT

ການ ແລະ ຄວາມຮັບຜິດຊອບສູງ; ປັບປຸງການຄຸ້ມຄອງການເງິນພາກລັດ ໃຫ້ມີຄວາມທັນສະໄໝ ໂປ່ງໃສ ຍຸຕິທຳ ເພີ່ມທະວີການລະດົມລາຍຮັບພາຍໃນ, ຄຸ້ມຄອງ, ຈັດສັນ ແລະ ນຳໃຊ້ແຫຼ່ງທຶນຢ່າງມີປະສິດທິຜົນ ແລະ ຊຸກຍູ້ການພັດທະນາເສດຖະກິດ-ສັງຄົມຢ່າງຕັ້ງໜ້າ; ຮັກສາສະຖຽນລະພາບເງິນຕາແຫ່ງຊາດ ໃຫ້ມີຄວາມໝັ້ນທ່ຽງ; ປະຕິຮູບລັດວິສາຫະກິດໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ, ສ້າງຕັ້ງລັດວິສາຫະກິດໃນຂະແໜງທີ່ເປັນປາຍແຫຼມ ແລະ ຂະແໜງບໍລິການສາທາລະນະ; ປັບປຸງບັນຍາກາດການລົງທຶນໃຫ້ດີຂຶ້ນ ເພື່ອສົ່ງເສີມເອກະຊົນພາຍໃນ ໂດຍສະເພາະຈຸນລະວິສາຫະກິດ, ວິສະຫະກິດຂະໜາດນ້ອຍ ແລະ ກາງ, ການລົງທຶນໂດຍກົງຈາກຕ່າງປະເທດ, ພາກສ່ວນເສດຖະກິດຫຸ້ນສ່ວນ, ຮ່ວມທຶນກັບຕ່າງປະເທດ ແລະ ພາກສ່ວນເສດຖະກິດຮ່ວມມືຂອງປະຊາຊົນ ຢ່າງແຂງແຮງ ເພື່ອໃຫ້ເປັນພື້ນຖານຂອງເສດຖະກິດແຫ່ງຊາດ ຢ່າງເຂັ້ມແຂງ ເພື່ອຍົກສູງກຳລັງແຮງ ແລະ ຄວາມສາມາດແຂ່ງຂັນຂອງຄົນໃນຊາດ, ມີບົດບາດໃນການກາຍເປັນຫົວຈັກຂັບເຄື່ອນການພັດທະນາເສດຖະກິດ ແລະ ການສ້າງວຽກເຮັດງານທຳຫຼາຍຂຶ້ນ, ຫຼຸດຜ່ອນການເອື່ອຍອີງ ແລະ ຄວາມສ່ຽງຈາກວິກິດການພາຍນອກ; ສືບຕໍ່ໝູນໃຊ້ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ລວມທັງການນຳໃຊ້ເຕັກໂນໂລຊີດີຈີຕອນ, ປັນຍາປະດິດ (AI) ເຂົ້າໃນການຜະລິດ, ການບໍລິການ ແລະ ຄຸ້ມຄອງບໍລິຫານລັດຢ່າງມີການເລືອກເຟັ້ນ, ມີປະສິດທິພາບ ແລະ ປະສິດທິຜົນສູງ.

**+ ຄາດໝາຍ ຂອງລະດັບເປົ້າໝາຍ**

- ສູ້ຊົນເຮັດໃຫ້ລວມຍອດຜະລິດຕະພັນພາຍໃນ (GDP) ຂະຫຍາຍຕົວ ສະເລ່ຍ ໃນລະດັບ 5.5% ຂຶ້ນໄປ ຕໍ່ປີ, ໃນນີ້:
  - ຂະແໜງກະສິກຳ ຂະຫຍາຍຕົວ ສະເລ່ຍໃນລະດັບ 4.6%, ກວມເອົາ 21.10% ຂອງ GDP;
  - ຂະແໜງອຸດສາຫະກຳ ຂະຫຍາຍຕົວ ສະເລ່ຍໃນລະດັບ 5.2%, ກວມເອົາ 31.20% ຂອງ GDP;
  - ຂະແໜງບໍລິການ ຂະຫຍາຍຕົວ ສະເລ່ຍໃນລະດັບ 6.5%, ກວມເອົາ 37.3 % ຂອງ GDP;
  - ພາສີ-ອາກອນ ຂະຫຍາຍຕົວ ສະເລ່ຍໃນລະດັບ 4.1%, ກວມເອົາ 10.40% ຂອງ GDP.
- ລວມຍອດຜະລິດຕະພັນພາຍໃນ(GDP) ຕໍ່ຫົວຄົນ ໃຫ້ໄດ້ 3,055 ໂດລາສະຫະລັດ ໃນປີ 2030.
- ລວມຍອດລາຍໄດ້ແຫ່ງຊາດ(GNI) ຕໍ່ຫົວຄົນ ໃຫ້ໄດ້ 2,869 ໂດລາສະຫະລັດ ໃນປີ 2030.
- ຄາດໝາຍທີ່ຕິດພັນກັບການຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ (LDCs):
  - ລາຍໄດ້ແຫ່ງຊາດ (GNI) ຕໍ່ຫົວຄົນ ໃຫ້ບັນລຸສູງກວ່າຄ່າມາດຕະຖານ 1,306 ໂດລາສະຫະລັດ ໃນປີ 2030 (ຜົນການປະເມີນປີ 2024 = 2,503 ໂດລາສະຫະລັດ);
  - ດັດສະນີຄວາມບອບບາງທາງດ້ານເສດຖະກິດ (EVI) ໃຫ້ຕໍ່າກວ່າຄ່າມາດຕະຖານ 32 (ຜົນການປະເມີນປີ 2024 = 29.8);

### ***3.1.1ແຜນວຽກຈຸດສຸມທີ 1: ນຳໃຊ້ທ່າແຮງ ເພື່ອຍູ້ແຮງເສດຖະກິດໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄວາມເຂັ້ມແຂງ ແລະ ມີຄຸນນະພາບສູງຂຶ້ນ***

ສົ່ງເສີມ, ພັດທະນາ ແລະ ຂະຫຍາຍທ່າແຮງບົ່ມຊ້ອນຂອງປະເທດ, ເຂດແຄ້ວນ ແລະ ທ້ອງຖິ່ນ ເພື່ອສ້າງການຜະລິດ ແລະ ການບໍລິການ ທີ່ເປັນປາຍແຫຼມ ຕາມທິດສີຂຽວ ແລະ ຍືນຍົງ ເພື່ອຕອບສະໜອງຄວາມຕ້ອງການຊົມໃຊ້ພາຍໃນ ແລະ ເປັນສິນຄ້າເພື່ອສົ່ງອອກຕ່າງປະເທດໃຫ້ຫຼາຍຂຶ້ນສົມຄູ່ກັບທ່າແຮງບົ່ມຊ້ອນ; ຫັນປ່ຽນຮູບແບບການເຕີບໂຕຈາກອາໄສການຂຸດຄົ້ນຊັບພະຍາກອນທີ່ບໍ່ມີການປຸງແຕ່ງ (ຊັບພະຍາກອນດິບ) ແລະ ຂຶ້ນກັບການລົງທຶນຈາກຕ່າງປະເທດ ມາເປັນການສ້າງພື້ນຖານເສດຖະກິດເອກະລາດ ເປັນເຈົ້າຕົນເອງບົນພື້ນຖານກຳລັງແຮງພາຍໃນ, ຄວາມຮູ້ ແລະ ຕ່ອງໂສ້ມູນຄ່າເພີ່ມພາຍໃນ; ເສີມຂະຫຍາຍທ່າແຮງໄດ້ປຽບທາງດ້ານທຶນຮອນ, ເຕັກໂນໂລຊີ ແລະ ການບໍລິຫານການລົງທຶນຕ່າງປະເທດຢ່າງມີປະສິດທິພາບ; ປັບປຸງໂຄງປະກອບເສດຖະກິດແຫ່ງຊາດ ໃຫ້ໄປຕາມທິດສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ຖືເອົາກະສິກຳ ຕິດແໜ້ນກັບອຸດສາຫະກຳປຸງແຕ່ງ ແລະ ການບໍລິການ ໂດຍພັດທະນາໄປຕາມທິດເສດຖະກິດພູມປັນຍາ, ຫັນເປັນອຸດສາຫະກຳ ແລະ ທັນສະໄໝ (ຫັນເປັນດີຈີຕອນ) ເພື່ອສ້າງຄວາມຫຼາກ ແລະ ສ້າງມູນຄ່າເພີ່ມຂອງການຜະລິດສິນຄ້າ ແລະ ການບໍລິການ, ເຮັດໃຫ້ສັດສ່ວນໂຄງປະກອບດ້ານອຸດສາຫະກຳ ເພີ່ມຂຶ້ນໃນແຕ່ລະປີ, ສືບຕໍ່ຍູ້ແຮງການຄ້າຢູ່ປະເທດເຮົາໃຫ້ເຂົ້າສູ່ລະບົບ ແລະ ກາຍເປັນຕອ່ງໂສ້ຕົ້ນຕໍ ຂອງລະບົບເສດຖະກິດເພື່ອກະຕຸ້ນການເຕີບໂຕທາງດ້ານເສດຖະກິດໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ, ເຂັ້ມແຂງ ແລະ ມີຄຸນນະພາບ ແລະ ເປັນ

DRAFT

ຖານລາຍຮັບງົບປະມານແຫ່ງລັດ ທີ່ໝັ້ນຄົງ ແລະ ຍືນຍົງ, ໂດຍສຸມໃສ່ປະຕິບັດຄາດໝາຍ ແລະ ວຽກງານຈຸດສຸມຂອງ ຂະແໜງ ເສດຖະກິດທີ່ມີທ່າແຮງ ດັ່ງນີ້:

**1. ຄາດໝາຍລະດັບແຜນວຽກຈຸດສຸມ**

1) ຄາດໝາຍດ້ານການຜະລິດກະສິກຳ ແລະ ການປຸງແຕ່ງຜະລິດຕະພັນກະສິກຳ

- ຄາດໝາຍການຜະລິດກະສິກຳເພື່ອຄ້ຳປະກັນດ້ານສະບຽງອາຫານ ແລະ ໂພຊະນາການ:
  - + ສູ້ຊົນຜະລິດເຂົ້າເປືອກ ໃຫ້ໄດ້ 4 ລ້ານໂຕນ/ປີ (ຄ້ຳປະກັນສະບຽງອາຫານ 2.5 ລ້ານໂຕນ/ປີ) ສົ່ງອອກ ເຂົ້າສານໄປ ສປ ຈີນໃຫ້ໄດ້ 150,000 ໂຕນ ຮອດປີ 2030.
  - + ສູ້ຊົນປູກພືດເປັນສິນຄ້າ ແລະ ສະໜອງໃຫ້ແກ່ໂຮງງານອຸດສາຫະກຳປຸງແຕ່ງສະເລ່ຍຕໍ່ປີ ໃຫ້ໄດ້ 2,6 ລ້ານໂຕນ/ປີ, ໃນນີ້ ສາລີຫວານ: 200,000 ໂຕນ/ປີ (ເນື້ອທີ່ປູກ 34,450 ເຮັກຕາ), ພືດຜັກ: 1.7 ລ້ານໂຕນ/ປີ (ເນື້ອທີ່ປູກ 200,000 ເຮັກຕາ), ເຜືອກມັນ: 170,000 ໂຕນ/ປີ (ເນື້ອທີ່ປູກ 18,000 ເຮັກຕາ), ໝາກໄມ້: 530,000 ໂຕນ/ປີ (ເນື້ອທີ່ປູກ 52,000 ເຮັກຕາ).
  - + ສະໜອງຊີ້ນ, ໄຂ່ ແລະ ປາ ໃຫ້ໄດ້ສະເລ່ຍ 716,430 ໂຕນ/ປີ, ໃນນັ້ນ: ຊີ້ນ ໃຫ້ໄດ້ 387,200 ໂຕນ/ ປີ; ໄຂ່ ໃຫ້ໄດ້ 47,100 ໂຕນ/ປີ; ປາ ແລະ ສັດນ້ຳ ໃຫ້ໄດ້ 291,130 ໂຕນ/ປີ (ໃນນີ້: ຜົນຜະລິດຈາກ ການປາລ້ຽງ ປະມານ 70% ຂອງຜົນຜະລິດທັງໝົດ).
  - + ສູ້ຊົນຊຸກຍູ້ການຜະລິດ ແລະ ສະໜອງອາຫານສັດ ໃຫ້ບັນລຸ 75% ຂອງຄວາມຕ້ອງການພາຍໃນ, ໃນນີ້: ການຜະລິດອາຫານ ປາ ໃຫ້ກຸ້ມ 20% ຂອງຄວາມຕ້ອງການ; ສູ້ຊົນສະໜອງລູກປາ ໃຫ້ໄດ້ 80% ຂອງຄວາມຕ້ອງການ.
  - + ສູ້ຊົນຜະລິດແມ່ພັນງົວພັນດີ ໃຫ້ໄດ້ ຢ່າງໜ້ອຍ 62,500 ແມ່ ; ສ້າງສູນຜະລິດນ້ຳເຊື້ອ ໃຫ້ໄດ້ຢ່າງ ໜ້ອຍ 1 ແຫ່ງ, ຜະລິດນ້ຳເຊື້ອ ໃຫ້ໄດ້ 150,000 ຫຼອດຕໍ່ປີ.
  - + ສູ້ຊົນຂະຫຍາຍແມ່ພັນໝູ ໃຫ້ໄດ້ 35,000 ແມ່ ເພື່ອສະໜອງໝູຊີ້ນ ໃຫ້ໄດ້ 84,000 ໂຕ/ປີ.
  - + ສູ້ຊົນສ້າງຟາມແບ້ພໍ່-ແມ່ພັນດີ ໃຫ້ໄດ້ 5,000 ແມ່ ເພື່ອຜະລິດລູກໃຫ້ໄດ້ 20,000 ໂຕ/ປີ.
  - + ສູ້ຊົນ ລ້ຽງແມ່ພັນໄກ່ໄຂ່ ໃຫ້ໄດ້ 30,000 ແມ່ ເພື່ອຜະລິດລູກເປັນການຫຼຸດຜ່ອນການນຳເຂົ້າໄກ່ສາວ 2,7 ລ້ານໂຕ/ປີ ແລະ ສູ້ຊົນສ້າງຟາມ ລ້ຽງໄກ່ແມ່ພັນຊີ້ນ ໃຫ້ໄດ້ 10,000 ແມ່ ເພື່ອຜະລິດໄກ່ພັນຊີ້ນ ໃຫ້ໄດ້ 1,050,000 ໂຕ/ປີ ຫຼື ຕອບສະໜອງຊີ້ນໄກ່ 100,800 ໂຕນຕໍ່ປີ.
  - + ສູ້ຊົນສົ່ງເສີມການລ້ຽງປາ ແລະ ສັດນ້ຳ ເພື່ອສະໜອງຜົນຜະລິດໃຫ້ໄດ້ 70% ຂອງຜົນຜະລິດປາ ແລະ ສັດນ້ຳທັງໝົດ.
- ຄາດໝາຍການຜະລິດກະສິກຳເພື່ອເປັນສິນຄ້າເພື່ອຊົມໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ
  - + ມູນຄ່າສົ່ງອອກສິນຄ້າ ກະສິກຳ ແລະ ປ່າໄມ້ ໃຫ້ໄດ້ 9.5 ຕື້ໂດລາສະຫະລັດ ຫຼື ສະເລ່ຍ 1,900 ລ້ານ ໂດລາສະຫະລັດຕໍ່ປີ (ລວມທັງການສົ່ງອອກຜະລິດຕະພັນກະສິກຳ ແລະ ປ່າໄມ້), ໃນນີ້: ການສົ່ງອອກ ຜະລິດຕະພັນປຸງແຕ່ງ ໃຫ້ໄດ້ 950 ລ້ານໂດລາສະຫະລັດຕໍ່ປີ ຫຼື ກວມເອົາ 50% ຂອງມູນຄ່າການສົ່ງ ອອກທັງໝົດ. ເຊິ່ງລວມມີ: ສົ່ງອອກພືດ 1,200 ລ້ານໂດລາສະຫະລັດຕໍ່ປີ, ສັດ 200 ລ້ານໂດລາ ສະຫະລັດຕໍ່ປີ; ຢາງພາລາ, ເຄື່ອງປ່າຂອງດົງ, ຖ່ານຂາວ ແລະ ລາຍຮັບຈາກສິນເຊື່ອກາກບອນປ່າໄມ້ 500 ລ້ານໂດລາສະຫະລັດຕໍ່ປີ.
  - + ສູ້ຊົນການປູກພືດເປັນສິນຄ້າ ໃຫ້ໄດ້ 10.4 ລ້ານໂຕນ/ປີ, ໃນນີ້: ກາເຟ ໃຫ້ໄດ້ 207,000 ໂຕນ/ປີ; ສາລີອາຫານສັດ ໃຫ້ໄດ້ 750,000 ໂຕນ/ປີ, ມັນຕົ້ນ ໃຫ້ໄດ້ 6.7 ລ້ານໂຕນ/ປີ, ອ້ອຍ ໃຫ້ໄດ້ 1.6 ລ້ານໂຕນ/ປີ, ກ້ວຍ ໃຫ້ໄດ້ 800,000 ໂຕນ/ປີ, ຊາຕົ້ມນ້ຳ ໃຫ້ໄດ້ 20,000 ໂຕນ/ປີ; ໝາກໂມ ໃຫ້ໄດ້ 180,000 ໂຕນ/ປີ ແລະ ຖົ່ວລຽນ ໃຫ້ໄດ້ 11,600 ໂຕນຕໍ່ປີ.
  - + ສົ່ງເສີມການລ້ຽງງົວອອກໄປ ສປ ຈີນ ຮອດປີ 2030 ໃຫ້ສາມາດສົ່ງງົວ ໃຫ້ໄດ້ ຫຼາຍກວ່າ 250,000 ໂຕ ຫຼື ສະເລ່ຍ 50,000 ໂຕ/ປີ.
- ຄາດໝາຍການເຈລະຈາເຕັກນິກ ແລະ ສົ່ງອອກ:

DRAFT

+ ສູ້ຊົນເຈລະຈາ ແລະ ສົ່ງອອກ ຜະລິດຕະພັນກະສິກຳ ເປັນຕົ້ນ: ປາສະຫວາຍ, ນ້ຳເຜີ້ງ, ຊີ້ນງົວແຊ່ແຂງ ແລະ ຜະລິດຕະພັນຊີ້ນ ໄປ ສປ ຈີນ.
+ ສູ້ຊົນເຈລະຈາ ແລະ ສົ່ງອອກ ໝູ ໄປ ສສ ຫວຽດນາມ.

- ຄາດໝາຍດ້ານສົ່ງເສີມການປຸງແຕ່ງກະສິກຳ ແລະ ປ່າໄມ້:
  + ສູ້ຊົນໃຫ້ມູນຄ່າການສົ່ງອອກຜະລິດຕະພັນປຸງແຕ່ງກະສິກຳ ແລະ ປ່າໄມ້ ໃຫ້ໄດ້ 950 ລ້ານໂດລາສະຫະລັດ ຕໍ່ປີ ຫຼື ເທົ່າກັບ 50% ຂອງມູນຄ່າການສົ່ງອອກກະສິກຳ ແລະ ປ່າໄມ້, ໃນນັ້ນ:
    - ສົ່ງອອກຜະລິດຕະພັນພືດ 360 ລ້ານໂດລາສະຫະລັດ/ປີ, ເທົ່າກັບ 30% ຂອງມູນຄ່າລວມການສົ່ງອອກດ້ານປູກຝັງ;
    - ສົ່ງອອກຜະລິດຕະພັນສັດ 120 ລ້ານໂດລາສະຫະລັດ/ປີ, ເທົ່າກັບ 60% ຂອງມູນຄ່າລວມສົ່ງອອກດ້ານການລ້ຽງສັດ ແລະ ສັດນ້ຳ;
    - ສົ່ງອອກຜະລິດຕະພັນໄມ້ 470 ລ້ານໂດລາສະຫະລັດ/ປີ, ເທົ່າກັບ 84% ຂອງມູນຄ່າສົ່ງອອກດ້ານປ່າໄມ້, ໃນນັ້ນ: ຢາງພາລາແຜ່ນ 294,8 ລ້ານໂດລາສະຫະລັດ, ເຍື່ອເຈ້ຍ 95 ລ້ານໂດລາສະຫະລັດ ແລະ ຜະລິດຕະພັນໄມ້: ໄມ້ແປຮູບ, ເຄິ່ງສຳເລັດຮູບ ແລະ ສຳເລັດຮູບ ແລະ ໄມ້ເຟີນີເຈີ 22,94 ລ້ານໂດລາສະຫະລັດ.

2) ຄາດໝາຍດ້ານການຜະລິດອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ
+ ສູ້ຊົນເຮັດໃຫ້ມູນຄ່າອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃຫ້ໄດ້ 148,707 ຕື້ກີບ.
+ ສູ້ຊົນເຮັດໃຫ້ມູນຄ່າການຈໍລະຈອນສິນຄ້າ (ຂາຍຍົກ-ຂາຍຍ່ອຍ ແລະ ບໍລິການ) ໃຫ້ໄດ້ ..... ຕື້ກີບ.
+ ສ້າງຕັ້ງໂຮງງານອາລູມີນາ ໃຫ້ໄດ້ 1 ແຫ່ງ.
+ ສ້າງຕັ້ງໂຮງງານຜະລິດປຸ໋ຍ ໃຫ້ໄດ້ 3 ແຫ່ງ.

3) ຄາດໝາຍດ້ານການບໍລິການຂົນສົ່ງ
+ ສູ້ຊົນເຮັດໃຫ້ບໍລິມາດຂົນສົ່ງໂດຍສານ ໃຫ້ໄດ້..........ລ້ານເທື່ອຄົນ, ການຂົນສົ່ງສິນຄ້າໃຫ້ໄດ້ ....... ລ້ານໂຕນ.

4) ຄາດໝາຍດ້ານການບໍລິການທ່ອງທ່ຽວ
+ ສູ້ຊົນໃຫ້ມີນັກທ່ອງທ່ຽວເດີນທາງທ່ອງທ່ຽວພາຍໃນປະເທດໄລຍະ 5 ປີ ໄດ້ຫຼາຍກວ່າ 21 ລ້ານເທື່ອຄົນ, ໄລຍະພັກເຊົາສະເລ່ຍ 3 ວັນ, ສ້າງລາຍຮັບໃຫ້ໄດ້ຫຼາຍກວ່າ 5.448 ຕື້ໂດລາສະຫະລັດ; ສູ້ຊົນດຶງດູດເອົານັກທ່ອງທ່ຽວສາກົນໃຫ້ໄດ້ຫຼາຍກວ່າ 22 ລ້ານເທື່ອຄົນ ໄລຍະພັກເຊົາສະເລ່ຍ 10 ວັນ ແລະ ສ້າງລາຍຮັບໃຫ້ໄດ້ຫຼາຍກວ່າ 8.015 ຕື້ໂດລາສະຫະລັດ.

5) ຄາດໝາຍດ້ານການຜະລິດພະລັງງານໄຟຟ້າ.
+ ສູ້ຊົນຜະລິດກະແສໄຟຟ້າ ໃຫ້ໄດ້ 327,317 ລ້ານກິໂລວັດໂມງ, ຄິດເປັນມູນຄ່າ 314,221 ຕື້ກີບ. ໃນນີ້: ສົ່ງອອກຕ່າງປະເທດ 283,028 ລ້ານກິໂລວັດໂມງ, ຄິດເປັນມູນຄ່າ 271,706 ຕື້ກີບ ແລະ ຈຳໜ່າຍພາຍໃນ 54,968 ລ້ານກິໂລວັດໂມງ, ຄິດເປັນມູນຄ່າ 52,769 ຕື້ກີບ.

6) ຄາດໝາຍດ້ານການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ
+ ສູ້ຊົນເຮັດໃຫ້ມູນຄ່າຜະລິດແຮ່ທາດ ໃຫ້ໄດ້ 216,827 ຕື້ກີບ, ໃນນີ້: ການຈຳໜ່າຍແຮ່ທາດ ພາຍໃນໃຫ້ໄດ້ 3,971 ລ້ານໂດລາສະຫະລັດ ແລະ ສົ່ງອອກແຮ່ທາດໄປຕ່າງປະເທດ 13,705 ລ້ານໂດລາສະຫະລັດ.
+ ສູ້ຊົນສ້າງລາຍຮັບຈາກການເກັບພັນທະທາງດ້ານການເງິນໃຫ້ລັດຖະບານ ໃຫ້ໄດ້ 7.5 ຕື້ກີບ ແລະ 1,500 ລ້ານໂດລາສະຫະລັດ.

**2. ວຽກງານຈຸດສຸມ**

**1) ຂະແໜງພະລັງງານໄຟຟ້າ ແລະ ນ້ຳມັນເຊື້ອໄຟ**

- ຂະແໜງພະລັງງານໄຟຟ້າ ແລະ ນໍ້າມັນເຊື້ອໄຟ ແມ່ນຂະແໜງທີ່ສໍາຄັນເພື່ອຄໍ້າປະກັນຄວາມໝັ້ນຄົງຂອງຊາດ, ສໍາຄັນຈໍາເປັນທີ່ສຸດໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຂອງຊາດ. ໃນ 5 ປີ ຕໍ່ໜ້າ ຕ້ອງສຸມໃສ່ແກ້ໄຂບັນຫາໜີ້ສິນຖຸ້ມເຄືອ, ການບໍລິຫານ-ຜະລິດທຸລະກິດ ຂາດປະສິດທິພາບ ເພື່ອສ້າງຄວາມໝັ້ນຄົງ, ຄວາມປອດໄພ ແລະ ຍືນຍົງໃນຂະແໜງພະລັງງານ; ປະຢັດພະລັງງານຢ່າງເປັນຮູບປະທໍານໍາໃຊ້ຕາມຈັງຫວະການຂະຫຍາຍຕົວຂອງເສດຖະກິດ, ສ້າງລະບົບຄວາມໝັ້ນຄົງ, ຄວາມປອດໄພ ແລະ ຄວາມຍືນຍົງຂອງຂະແໜງພະລັງງານເປັນປະກົດຜົນເປັນຈິງ ເປັນຕົ້ນເຂື່ອນໄຟຟ້າ, ລະບົບສາຍສົ່ງໄຟຟ້າແຫ່ງຊາດ, ພະລັງງານສະອາດ ແລະ ພະລັງງານທາງເລືອກ ໃຫ້ເປັນລະບົບດຽວ, ຮັບປະກັນການສະໜອງໄຟຟ້າພາຍໃນໃຫ້ພຽງພໍຕະຫຼອດປີເປັນຕົ້ນຕໍ ແລະ ເຫຼືອເພື່ອການສົ່ງອອກ, ຫຼຸດຜ່ອນ ແລະ ກ້າວໄປເຖິງການບໍ່ຊື້ໄຟຟ້າດ້ວຍລາຄາແພງຈາກຕ່າງປະເທດ, ເປັນເຈົ້າການໃນການຫັນເປັນອຸດສາຫະກໍາ ແລະ ທັນສະໄໝໃນຂະແໜງໄຟຟ້າ ໃຫ້ໄດ້ມາດຕະຖານພາກພື້ນ ແລະ ສາກົນ.

ການພັດທະນາພະລັງງານໄຟຟ້ານໍ້າຕົກ ເປັນທ່າແຮງຕົ້ນຕໍ ໃນການຜະລິດພະລັງງານໄຟຟ້າ ເຊິ່ງເປັນພະລັງງານທີ່ສະອາດ ແລະ ມີຕົ້ນທຶນ ທີ່ສາມາດແຂ່ງຂັນກັບແຫຼ່ງຜະລິດໄຟຟ້າອື່ນໆໄດ້ ຕິດພັນກັບການພັດທະນາພື້ນຖານໂຄງລ່າງ, ຈັດສັນອາຊີບຄົງທີ່ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນຜູ້ທີ່ຖືກຜົນກະທົບໃຫ້ດີຂຶ້ນ. ການພັດທະນາໄຟຟ້ານໍ້າຕົກແບບມີອ່າງເກັບນໍ້າ, ການບໍລິຫານຈັດການນໍ້າເພື່ອຄວາມປອດໄພຂອງເຂື່ອນ, ເພື່ອຮັບປະກັນໃຫ້ແກ່ການຜະລິດໄຟຟ້າໃນລະດູແລ້ງ, ສາມາດຕ້ານແລ້ງ, ຕ້ານຖ້ວມ, ແລະ ນໍາໃຊ້ນໍ້າເຂົ້າໃນຂະແໜງການອື່ນໆ ຢ່າງມີປະສິດທິຜົນ, ສໍາລັບບັນດາໂຄງການຕາມລໍາແມ່ນໍ້າຂອງຕ້ອງປະຕິບັດຕາມສົນທິສັນຍາແມ່ນໍ້າຂອງ 1995. ການພັດທະນາພະລັງງານໄຟຟ້າ ແມ່ນສືບຕໍ່ສຸມໃສ່ພັດທະນາໂຄງການພະລັງງານໄຟຟ້າທີ່ກໍາລັງດໍາເນີນການກໍ່ສ້າງໃຫ້ໄດ້ມາດຕະຖານ, ມີຄວາມປອດໄພ ແລະ ສຶກສາສໍາຫຼວດຄວາມເປັນໄປໄດ້ ໃຫ້ດໍາເນີນໄປຕາມແຜນທີ່ກໍານົດໄວ້ ໂດຍສົ່ງເສີມພັດທະນາໂຄງການພະລັງງານສະອາດ ແລະ ພະລັງງານທາງເລືອກຕາມທິດສີຂຽວ ແລະ ຍືນຍົງ ເປັນຕົ້ນແມ່ນໄຟຟ້ານໍ້າຕົກ, ໄຟຟ້າຈາກແສງຕາເວັນ, ໄຟຟ້າຈາກລົມ, ໄຟຟ້າຊີວະມວນ, ໄຟຟ້າຈາກພະລັງງານນິວເຄຼຍ ແລະ ອື່ນໆ ບົນພື້ນຖານຕົ້ນທຶນການຜະລິດຕໍ່າ. ສໍາຄັນເພື່ອຮັບປະກັນການຜະລິດລະດູແລ້ງຈະຕ້ອງໄດ້ມີພະລັງງານໄຟຟ້າຄວາມຮ້ອນ ຢ່າງໜ້ອຍ 3 ແຫ່ງໃນຂອບເຂດທົ່ວປະເທດ, ກະຕຸ້ນໃຫ້ມີການຊົມໃຊ້ໄຟຟ້າພາຍໃນປະເທດເພື່ອຫຼຸດຜ່ອນການສົ່ງອອກໄຟຟ້າອອກຕ່າງປະເທດ.

- ດ້ານນໍ້າມັນເຊື້ອໄຟ, ສຸມໃສ່ສ້າງຄັງແຮສໍາຮອງນໍ້າມັນເຊື້ອໄຟ ເພື່ອຮັບປະກັນການສະໜອງດ້ານນໍ້າມັນເຊື້ອໄຟໃຫ້ພຽງພໍກັບຄວາມຕ້ອງການພາຍໃນປະເທດ ແລະ ຮັບປະກັນບໍ່ໃຫ້ມີການຂາດແຄນນໍ້າມັນເຊື້ອໄຟຄືໄລຍະຜ່ານມາ, ສ້າງນິຕິກໍາ, ລະບຽບການ ແລະ ກົນໄກ ໃນການຊື້, ນໍາເຂົ້ານໍ້າມັນເຊື້ອໄຟ ຢ່າງເປັນລະບົບ, ໄດ້ລາຄາສົມເຫດສົມຜົນ ແລະ ມາຈາກຫຼາຍແຫຼ່ງ, ພ້ອມທັງໃຫ້ມີການກະຈ່າຍນໍ້າມັນເຊື້ອໄຟ ຢ່າງເປັນລະບົບ ແລະ ພຽງພໍ, ຄົ້ນຄ້ວາດັດສ້າງລາຄານໍ້າມັນເຊື້ອໄຟໃຫ້ສອດຄ່ອງຕົວຈິງ.

**2) ຂະແໜງກະສິກໍາ ແລະ ປຸງແຕ່ງກະສິກໍາ**

ພັດທະນາຂະແໜງກະສິກໍາ ແລະ ປຸງແຕ່ງຜະລິດຕະພັນກະສິກໍາ ໃຫ້ເປັນທັນສະໄໝ, ນໍາໃຊ້ວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກໍາ ທີ່ເປັນມິດກັບສິ່ງແວດລ້ອມ ເຂົ້າໃນການສົ່ງເສີມການຜະລິດກະສິກໍາ ໃຫ້ສອດຄ່ອງກັບສະພາບດິນຟ້າອາກາດຢູ່ແຕ່ລະທ້ອງຖິ່ນ ແນ່ໃສ່ຜະລິດ ແລະ ຕອບສະໜອງແຫຼ່ງວັດຖຸດິບທີ່ມີຄຸນນະພາບ ແລະ ພຽງພໍເພື່ອຮັບໃຊ້ການປຸງແຕ່ງກໍ່ຄືສ້າງໃຫ້ມີຜະລິດຕະພັນກະສິກໍາສົດ, ສະອາດ, ປອດສານພິດ ເພື່ອສົ່ງອອກຮັບໃຊ້ການທ່ອງທ່ຽວ ແລະ ຊົມໃຊ້ພາຍໃນ, ທົດແທນການນໍາເຂົ້າ ແລະ ເປັນສິນຄ້າສົ່ງອອກ, ໂດຍໃຫ້ເລັ່ງໃສ່ວຽກງານຈຸດສຸມດັ່ງນີ້:

**(1) ດ້ານການຜະລິດກະສິກໍາ ເພື່ອຜະລິດເປັນສິນຄ້າຊົມໃຊ້ພາຍໃນ ແລະ ສົ່ງອອກ:**

ສຸມໃສ່ຊຸກຍູ້ສົ່ງເສີມການປູກພືດ ແລະ ລ້ຽງສັດ ທີ່ເປັນທ່າແຮງ ເພື່ອເປັນສິນຄ້າຊົມໃຊ້ພາຍໃນ ແລະ ສົ່ງອອກໃຫ້ໄດ້ຕາມມາດຕະຖານ ກະສິກໍາສະອາດ (GAP ແລະ AO) ໂດຍສະເພາະ ພືດ ແລະ ສັດ ທີ່ໄດ້ມີການເຈລະຈາເປີດຕະຫຼາດ ເພື່ອສົ່ງອອກຕ່າງປະເທດ ກັບ ສປ ຈີນ, ຫວຽດນາມ, ໄທ ໂດຍສຸມໃສ່ໃນເຂດທີ່ມີທ່າແຮງ ດັ່ງນີ້:

**- ກາເຟ :** ສຸມໃສ່ສົ່ງເສີມປູກຢູ່ເຂດພູພຽງບໍລິເວນ, ແຂວງຜົ້ງສາລີ, ແຂວງ ຫລວງພະບາງ, ແຂວງຊຽງຂວາງ ແລະ ແຂວງຫົວພັນ, ຜົນຜະລິດສ່ວນໃຫຍ່ ແມ່ນສະໜອງໃຫ້ແກ່ ໂຮງງານປຸງແຕ່ງກາເຟສໍາເລັດຮູບ ເພື່ອສົ່ງອອກ ແລະ ຈໍາໜ່າຍພາຍໃນປະເທດ ຈໍານວນໜຶ່ງ, ເຊິ່ງຄາດຄະເນມີເນື້ອທີ່ປູກ 106,000 ເຮັກຕາ.

DRAFT

- **ສາລີອາຫານສັດ :** ສຸມໃສ່ສົ່ງເສີມປູກຢູ່ ແຂວງ ອຸດົມໄຊ, ຫລວງພະບາງ, ຫົວພັນ, ໄຊຍະບູລີ ແລະ ຊຽງຂວາງ, ເປົ້າໝາຍການຜະລິດ ແມ່ນເພື່ອປ້ອນໂຮງງານ ຫົວອາຫານສັດ ພາຍໃນປະເທດ ແລະ ຈຳນວນໜຶ່ງ ແມ່ນສົ່ງອອກ ສປ ຈີນ, ໄທ ແລະ ຫວຽດນາມ, ຄາດຄະເນເນື້ອທີ່ປູກ ປະມານ 157,000 ເຮັກຕາ.

- **ມັນຕົ້ນ :** ສຸມໃສ່ສົ່ງເສີມໃຫ້ປູກຢູ່ ແຂວງໄຊຍະບູລີ, ວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ສາລະວັນ, ເຊກອງ, ເປົ້າໝາຍການຜະລິດ ແມ່ນເພື່ອປ້ອນໂຮງງານຜະລິດແປ້ງມັນຕົ້ນ ແລະ ສົ່ງອອກຈຳນວນໜຶ່ງ ເປັນມັນຕົ້ນແຫ້ງ, ເຊິ່ງຄາດຄະເນເນື້ອທີ່ປູກມີທັງໝົດ 275,000 ເຮັກຕາ.

- **ອ້ອຍ :** ສຸມໃສ່ຊຸກຍູ້ສົ່ງເສີມປູກຢູ່ ແຂວງຜົ້ງສາລີ, ຫລວງນ້ຳທາ, ອຸດົມໄຊ, ສະຫວັນນະເຂດ, ຄຳມ່ວນ, ອັດຕະປື ຜົນຜະລິດສ່ວນໃຫຍ່ ແມ່ນ ສະໜອງໃຫ້ແກ່ ໂຮງງານຜະລິດນ້ຳຕານ, ຄາດຄະເນມີເນື້ອທີ່ປູກທັງໝົດ 33,000 ເຮັກຕາ.

- **ກ້ວຍ :** ສຸມໃສ່ສົ່ງເສີມໃຫ້ປູກຢູ່ ແຂວງ ບໍ່ແກ້ວ, ຫລວງນ້ຳທາ, ຫລວງພະບາງ, ໄຊຍະບູລີ, ອຸດົມໄຊ, ວຽງຈັນ, ສາລະວັນ, ເຊກອງ, ຜົນຜະລິດສ່ວນໃຫຍ່ເພື່ອສົ່ງອອກໄປຈີນ, ສ່ວນການຜະລິດກ້ວຍພື້ນບ້ານ ແມ່ນສະໜອງໃຫ້ແກ່ ການບໍລິໂພກພາຍໃນປະເທດ, ຄາດຄະເນເນື້ອທີ່ປູກທັງໝົດ 29,000 ເຮັກຕາ.

- **ຊາຕົ້ມນ້ຳ :** ສຸມໃສ່ສົ່ງເສີມໃຫ້ປູກຢູ່ ແຂວງຜົ້ງສາລີ, ຫຼວງພະບາງ, ຫົວພັນ ແຂວງ ຫຼວງນ້ຳທາ, ຜົນຜະລິດສ່ວນໃຫຍ່ເພື່ອສົ່ງອອກໄປຕ່າງປະເທດ ແລະ ສະໜອງພາຍໃນຈຳນວນໜຶ່ງ, ຄາດຄະເນມີເນື້ອທີ່ປູກທັງ ໝົດ 8,600 ເຮັກຕາ.

- **ໝາກໂມ :** ສຸມໃສ່ສົ່ງເສີມໃຫ້ປູກຢູ່ ແຂວງ ຫລວງນ້ຳທາ, ອຸດົມໄຊ, ບໍ່ແກ້ວ, ໄຊຍະບູລີ, ວຽງຈັນ, ຜົນຜະລິດສ່ວນໃຫຍ່ ແມ່ນສະໜອງການບໍລິໂພກພາຍໃນ ແລະ ສົ່ງອອກໄປປະເທດອ້ອມຂ້າງ, ຄາດຄະເນມີເນື້ອທີ່ປູກທັງໝົດ 9,600 ເຮັກຕາ.

- ສ້າງແຜນແມ່ບົດຜະລິດສິນຄ້າກະສິກຳເພື່ອສົ່ງອອກ, ແຜນການ ແລະ ໂຄງການຜະລິດສິນຄ້າກະສິກຳທີ່ມີສັນຍາ, ສິນຄ້າປາຍແຫຼມ ໃຫ້ສຳເລັດ ເພື່ອສ້າງເງື່ອນໄຂ ແລະ ສະພາບແວດລ້ອມໃຫ້ແກ່ການຜະລິດ.

- ສືບຕໍ່ເຈລະຈາເປີດຕະຫຼາດສິນຄ້າ ທີ່ປະເທດເຮົາມີທ່າແຮງ, ມີມູນເຊື້ອ, ມີຜົນຜະລິດຫຼາຍ ແລະ ໄດ້ກຳນົດເປັນສິນຄ້າປາຍແຫຼມແລ້ວ ເປັນຕົ້ນ ກາເຟ, ຢາງພະລາ, ໝາກມີ້, ອ້ອຍ ຖົ່ວດິນ ;

- ດຳເນີນການສຳຫຼວດ ແລະ ຈັດສັນເຂດການຜະລິດກະສິກຳສຳລັບການຜະລິດເປັນສິນຄ້າ ໂດຍເນັ້ນໃສ່ສິນຄ້າທີ່ພວກເຮົາມີທ່າແຮງ ໂດຍສຸມໃສ່ເຂດຕາມແລວທາງລົດໄຟລາວ-ຈີນ, ແລວທາງເສດຖະກິດຕາເວັນອອກ, ຕາເວັນຕົກ ແລະ ເຂດຊາຍແດນຕິດກັບປະເທດທີ່ມີກຳລັງຊື້ສູງ.

- ຄົ້ນຄ້ວາ, ຜະລິດ ແລະ ສະໜອງແນວພັນພືດ ແລະ ສັດ ໃຫ້ຊາວກະສິກອນ ແລະ ຜູ້ປະກອບການ ເຂົ້າໃນການຜະລິດສິນຄ້າ ;

- ປັບປຸງ, ພັດທະນາ ແລະ ຍົກລະດັບການຜະລິດເຂົ້າສູ່ມາດຕະຖານ ແລະ ຄວາມປອດໄພ ຕາມທິດກະສິກຳສະອາດ ແລະ ຮັບປະກັນການສະໜອງວັດຖຸດິບໃຫ້ແກ່ອຸດສາຫະກຳປຸງແຕ່ງຢ່າງພຽງພໍ.

- ພັດທະນາວຽກງານປ້ອງກັນພືດ ໃຫ້ມີຄວາມເຂັ້ມແຂງ ເພື່ອຮັບປະກັນການຜະລິດພືດ ແລະ ອຳນວຍຄວາມສະດວກດ້ານການຄ້າ ແລະ ສົ່ງອອກ ;

- ສ້າງເງື່ອນໄຂໃຫ້ຊາວກະສິກອນ ແລະ ຜູ້ປະກອບການ ເຂົ້າເຖິງແຫຼ່ງທຶນທີ່ມີຄວາມເປັນໄປໄດ້;

**(2) ການປຸງແຕ່ງກະສິກຳ ແລະ ປ່າໄມ້:**

- ຊຸກຍູ້ສົ່ງເສີມສ້າງ ແລະ ຂະຫຍາຍໂຮງງານອຸດສາຫະກຳປຸ່ງແຕ່ງຜະລິດຕະພັນກະສິກຳ ເພື່ອຊົມໃຊ້ພາຍໃນ, ທົດແທນການນຳເຂົ້າ ແລະ ສົ່ງອອກ ໂດຍສະເພາະ ໂຮງງານປຸງແຕ່ງຢາງພາລາ, ໂຮງງານຂ້າສັດທັນສະໄໝ, ໂຮງງານປຸງແຕ່ງປາ (ຢູ່ເວີນຄຳ, ນະຄອນຫຼວງວຽງຈັນ ແລະ ຢູ່ເຂດເສດຖະກິດໃໝ່ ສີທັນດອນ, ເມືອງໂຂງ ແຂວງຈຳປາສັກ), ໂຮງງານປຸງແຕ່ງກາເຟ, ໂຮງງານປຸງແຕ່ງມັນຕົ້ນ, ໂຮງງານປຸງແຕ່ງຜະລິດປຸ໋ຍຊີວະພາບ, ຫົວອາຫານສັດ ແລະ ອື່ນໆ, ພ້ອມນີ້ ກໍເລັ່ງພັດທະນາລະບົບຖານຂໍ້ມູນຄຸ້ມຄອງໂຮງງານປຸງແຕ່ງກະສິກຳ ແລະ ປ່າໄມ້ ດ້ວຍລະບົບທັນສະໄໝ; ສ້າງກົນໄກ ແລະ ຕ່ອງໂສ້ການຜະລິດເລີ່ມຈາກສະໜອງວັດຖຸດິບ-ການປຸງແຕ່ງ-ຕະຫຼາດ; ກຳນົດແບ່ງເຂດການຜະລິດວັດຖຸດິບທີ່ຊັດເຈນ ແລະ ຈັດຕັ້ງກຸ່ມ ແລະ ສະຫະກອນການຜະລິດວັດຖຸດິບ ຢ່າງເປັນລະບົບ ເພື່ອຮັບປະກັນການສະໜອງວັດຖຸດິບທີ່ພຽງພໍ; ພັດທະນາໂຄງລ່າງພື້ນຖານດ້ານການຄົ້ນຄວ້າ-ວິໄຈວິທະຍາສາດ ໂດຍສະເພາະ ຫ້ອງວິໄຈພືດ-ສັດ, ສູນກັກກັນພືດ-ສັດເພື່ອສົ່ງອອກ ທີ່ໄດ້ມາດຕະຖານຂອງພາກພື້ນ ແລະ ສາກົນ.ໂດຍສະເພາະ ໂຮງງານປຸງແຕ່ງຢາງພາລາ

DRAFT

, ໂຮງງານຂ້າສັດທັນສະໄໝ, ໂຮງງານປຸງແຕ່ງປາ (ຢູ່ເວີນຄຳ, ນະຄອນຫຼວງວຽງຈັນ ແລະ ຢູ່ເຂດເສດຖະກິດໃໝ່ ສີທັນດອນ, ເມືອງໂຂງ ແຂວງຈຳປາສັກ), ໂຮງງານປຸງແຕ່ງກາເຟ, ໂຮງງານປຸງແຕ່ງມັນຕົ້ນ, ໂຮງງານປຸງແຕ່ງຜະລິດປຸ໋ຍ ຊີວະພາບ, ຫົວອາຫານສັດ ແລະ ອື່ນໆ, ພ້ອມນີ້ ກໍເລັ່ງພັດທະນາລະບົບຖານຂໍ້ມູນຄຸ້ມຄອງໂຮງງານປຸງແຕ່ງກະສິກຳ ແລະ ປ່າໄມ້ ດ້ວຍລະບົບທັນສະໄໝ; ສ້າງກົນໄກ ແລະ ຕ່ອງໂສ້ການຜະລິດເລີ່ມຈາກສະໜອງວັດຖຸດິບ-ການປຸງແຕ່ງ-ຕະຫຼາດ; ກຳນົດແບ່ງເຂດການຜະລິດວັດຖຸດິບທີ່ຊັດເຈນ ແລະ ຈັດຕັ້ງກຸ່ມ ແລະ ສະຫະກອນການຜະລິດວັດຖຸດິບ ຢ່າງເປັນລະບົບ ເພື່ອຮັບປະກັນການສະໜອງວັດຖຸດິບທີ່ພຽງພໍ; ພັດທະນາໂຄງລ່າງພື້ນຖານດ້ານການຄົ້ນຄວ້າ-ວິໄຈວິທະຍາສາດ ໂດຍສະເພາະ ຫ້ອງວິໄຈພືດ-ສັດ, ສູນກັກກັນພືດ-ສັດເພື່ອສົ່ງອອກ ທີ່ໄດ້ມາດຕະຖານຂອງພາກພື້ນ ແລະ ສາກົນ.

- ສ້າງ ແລະ ປັບປຸງບັນດານິຕິກຳກ່ຽວກັບການຄຸ້ມຄອງໂຮງງານປຸງແຕ່ງກະສິກຳ ແລະ ປ່າໄມ້ ພ້ອມທັງເຜີຍແຜ່ ບັນດານິຕິກຳທີ່ກ່ຽວຂ້ອງ ໃຫ້ກັບບັນດາຂະແໜງການຢູ່ທ້ອງຖິ່ນ ໃຫ້ມີຄວາມເຂົ້າໃຈເປັນເອກະພາບໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ; ໂຄສະນາເຜີຍແຜ່ບັນດານິຕິກຳ, ຄຳແນະນຳ ໃຫ້ຜູ້ປະກອບການໄດ້ເຂົ້າເຖິງຂໍ້ມູນຂ່າວສານໄດ້ຢ່າງສະດວກ ແລະ ວ່ອງໄວ;

- ເອົາໃຈໃສ່ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຄຸ້ມຄອງ, ດັດສົມ ການເຊື່ອມໂຍງ ການຜະລິດ ຕິດພັນກັບການປຸງແຕ່ງ ຮັບປະກັນ ຜົນປະໂຫຍດຂອງລັດ, ຊາວກະສິກອນ ແລະ ຜູ້ປະກອບການ ;

- ພັດທະນາລະບົບຖານຂໍ້ມູນຄຸ້ມຄອງໂຮງງານປຸງແຕ່ງກະສິກຳ ແລະ ປ່າໄມ້ ດ້ວຍລະບົບທັນສະໄໝ ໃຫ້ສາມາດເກັບກຳຂໍ້ມູນ ສະຖິຕິໂຮງງານ, ຄວາມຕ້ອງການວັດຖຸດິບ, ຜະລິດຕະພັນ ຫຼື ຜົນຜະລິດ ເພື່ອປະເມີນຕີລາຄາ ດັດສົມ ບັນດາໂຮງງານໃຫ້ສອດຄ່ອງກັບຄວາມສາມາດຕົວຈິງ ໃນການສະໜອງວັດຖຸດິບສົ່ງເຂົ້າ ແລະ ສົ່ງອອກ ຢ່າງກົມກຽວ;

- ເລັ່ງປັບປຸງ ແລະ ພັດທະນາໂຄງລ່າງການຜະລິດ ແລະ ເຕັກນິກ ເພື່ອຫຼຸດຜ່ອນຕົ້ນທຶນ ແລະ ຫັນ ໄປສູ່ລະບົບທັນສະໄໝ ເຊັ່ນ : ໂຮງສີ, ໂຮງອົບ, ໂຮງຄັດເມັດ, ລານຕາກ, ສາງເປັນ, ສາງແຫ້ງ, ໂຮງງານຜະລິດຝຸ່ນ (ຝຸ່ນຊີວະພາບ, ອິງຄະທາດ ແລະ ຝຸ່ນເຄມີ), ໂຮງງານຜະລິດແປ້ງມັນຕົ້ນ, ໂຮງຂ້າສັດ, ໂຮງງານອາຫານສັດ ແລະ ອື່ນໆ;

- ສ້າງກົນໄກຕ່ອງໂສ້ການຜະລິດ ແລະ ສະໜອງວັດຖຸດິບ, ການປຸງແຕ່ງ ຕິດພັນກັບການຕະຫຼາດ ໂດຍສຸມໃສ່ກຳນົດແບ່ງເຂດການຜະລິດວັດຖຸດິບທີ່ຊັດເຈນ, ຊຸກຍູ້, ສົ່ງເສີມ ການຈັດຕັ້ງການຜະລິດວັດຖຸດິບແຕ່ລະປະເພດ ສ້າງເປັນກຸ່ມ, ສະຫະກອນ ຜະລິດວັດຖຸດິບ ຢ່າງເປັນລະບົບໃຫ້ຮັບປະກັນການສະໜອງວັດຖຸດິບ ເພື່ອສະເໜີດັດສົມ ຕາມຄວາມເໝາະສົມກັບທ່າແຮງ ສະໜອງວັດຖຸດິບ ແລະ ເຮັດໃຫ້ການຜະລິດມີຄວາມເຂັ້ມແຂງ ແລະ ມີປະສິດທິພາບໃນແຕ່ລະທ້ອງຖິ່ນ;

- ຊຸກຍູ້ ຕິດຕາມ ສົ່ງເສີມໃຫ້ ໂຮງງານປຸງແຕ່ງ ປະຕິບັດ ຕາມບົດວິພາກເສດຖະກິດເຕັກນິກ ຢ່າງເຂັ້ມງວດ;

- ຊຸກຍູ້, ສົ່ງເສີມ ໃຫ້ທຸກພາກສ່ວນເສດຖະກິດ ລົງທຶນພັດທະນາໂຄງລ່າງພື້ນຖານວິທະຍາສາດເຕັກໂນໂລຊີ, ໂຮງງານປຸງແຕ່ງພືດ, ຫ້ອງວິໄຈຄຸນນະພາບມາດຕະຖານສິນຄ້າພືດໃຫ້ເປັນລະບົບ ແລະ ສອດຄ່ອງຕາມມາດຕະຖານຂອງພາກພື້ນ ແລະ ສາກົນ;

- ຊຸກຍູ້, ສົ່ງເສີມ ໃຫ້ມີການນຳໃຊ້ສິ່ງເສດເຫຼືອຈາກການຜະລິດ ແລະ ການປຸງແຕ່ງພືດໃຫ້ເກີດປະໂຫຍດສູງສຸດ ດ້ວຍການເຮັດ ຝຸ່ນໝັກ, ຝຸ່ນບົ່ມ, ແກັສຊີວະພາບ ແລະ ພະລັງງານໝູນວຽນ ເຊິ່ງເປັນມິດກັບສິ່ງແວດລ້ອມ.

**(3) ດ້ານປ່າໄມ້:** ສືບຕໍ່ສົ່ງເສີມໂຄງການຊື້-ຂາຍກາກບອນຈາກປ່າໄມ້ ເພື່ອປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ, ການສ້າງລາຍຮັບ ແລະ ປັບປຸງຊີວິດການເປັນຢູ່ໃຫ້ແກ່ຊຸມຊົນ.

**3) ຂະແໜງຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ:**

ຂະແໜງຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ແມ່ນຂະແໜງທີ່ສ້າງທຶນຮອນຊຸກຍູ້ການພັດທະນາ ຈຶ່ງຕ້ອງສຸມໃສ່ການຄຸ້ມຄອງການເກັບລາຍຮັບຈາກໂຄງການທີ່ອະນຸມັດໃຫ້ຂຸດຄົ້ນແລ້ວ, ສຸມໃສ່ຊຸກຍູ້ການປຸງແຕ່ງແຮ່ທາດ ເພື່ອສ້າງມູນຄ່າເພີ່ມຢູ່ພາຍໃນກ່ອນການສົ່ງອອກ ແລະ ຍັງເປັນການຫຼຸດຜ່ອນການສົ່ງອອກແຮ່ດິບ. ຮັບປະກັນການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ຕາມທິດສີຂຽວ, ຍືນຍົງ ແລະ ສອດຄ່ອງ ຕາມລະບຽບການ ແລະ ມາດຕະຖານທາງດ້ານເຕັກນິກ ເພື່ອຫຼຸດຜ່ອນຜົນກະທົບທາງລົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ. ສືບຕໍ່ຊຸກຍູ້ ແລະ ສົ່ງເສີມການຂຸດຄົ້ນແຮ່ທາດຕ່າງໆຢ່າງເປັນປົກກະຕິ ແລະ ພິຈາລະນາອະນຸມັດການຂຸດຄົ້ນແຮ່ທາດໃໝ່ ທີ່ຕິດພັນກັບການຊຸກຍູ້ສົ່ງສົມການສ້າງ ແລະ ຂະຫຍາຍໂຮງງານປຸງແຕ່ງແຮ່ທາດຢ່າງມີຈຸດສຸມ. ສະນັ້ນ ໃນ 5 ປີ ຕໍ່ໜ້າ ສືບຕໍ່ຊຸກຍູ້ ແລະ ສົ່ງເສີມໃຫ້ມີການ

ຜະລິດ ແລະ ປຸງແຕ່ງແຮ່ທາດ ໃຫ້ເປັນສິນຄ້າ ເພື່ອເພີ່ມມູນຄ່າ ຕາມທິດການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ແລະ ບາງວຽກຈຸດສຸມ ດັ່ງນີ້:

– ຊຸກຍູ້, ສົ່ງເສີມການປຸ່ງແຕ່ງແຮ່ທາດປະເພດໂລຫະປະສົມຄຳ-ເງິນ, ໂລຫະຄຳ ແລະ ແຮ່ທອງແດງເປັນແຜ່ນ ຕິດພັນການດຳເນີນການຂອງທະນາຄານ ຄຳ ຕາມລະບຽບການທີ່ ທຫລ ວາງອອກ ໃນແຕ່ລະໄລຍະ.

– ຊຸກຍູ້, ສົ່ງເສີມ ແລະ ຍົກລະດັບໂຮງງານປຸງແຕ່ງແຮ່ທາດ ໃຫ້ສາມາດແຍກໂລຫະປະສົມ ອອກເປັນທາດດ່ຽວ ໃຫ້ສຳເລັດ ບໍ່ໃຫ້ເກີນ ປີ 2029.

– ສູ້ຊົນສົ່ງເສີມໃຫ້ສ້າງຕັ້ງໂຮງງານຫຼອມເຫຼັກ ຂະໜາດ 5 ແສນໂຕນ 1 ແຫ່ງ ພາຍໃນປີ 2026 ຢູ່ແຂວງຄຳມ່ວນ ເພື່ອຫຼຸດຜ່ອນການສົ່ງອອກແຮ່ເຫຼັກໄປຈຳໜ່າຍຢູ່ຕ່າງປະເທດ.

– ຊຸກຍູ້ສົ່ງເສີມໃຫ້ສ້າງຕັ້ງໂຮງງານຜະລິດອາລູມີນາ ຢ່າງໜ້ອຍ 1 ແຫ່ງ.

– ຊຸກຍູ້ ສົ່ງເສີມໃຫ້ສ້າງຕັ້ງໂຮງງານຜະລິດປຸ໋ຍ (ອຸດສາຫະກຳຕໍ່ເນື່ອງ) ໃຫ້ສຳເລັດ 3 ແຫ່ງ ຄື: ນະຄອນຫຼວງວຽງຈັນ 1 ແຫ່ງ ແລະ ແຂວງຄຳມ່ວນ 2 ແຫ່ງ, ໂດຍການສຸມໃສ່ການສຶກສາແຫຼ່ງວັດຖຸດິບ ທາດໄນໂຕຣເຈັນ (N), ທາດຟົດສະຟໍຣິດ (P) ຫຼື ອາດຈະນຳເຂົ້າ ຈາກປະເທດໃກ້ຄຽງ, ໂດຍມີນະໂຍບາຍພິເສດ ເພື່ອມາເປັນສ່ວນປະສົມໃຫ້ແກ່ການຜະລິດປຸຍສຳເລັດຮູບ (N, P, K) ຮັບໃຊ້ຂະແໜງກະສິກຳ ຢູ່ພາຍໃນ ແລະ ຕ່າງປະເທດ.

– ຊຸກຍູ້, ສົ່ງເສີມ ແລະ ຍົກລະດັບ ໂຮງງານປຸງແຕ່ງຫີນກາວ ແລະ ໂຮງງານຜະລິດແຜ່ນຍິບຊຳ ຢູ່ແຂວງສະຫວັນນະເຂດ ແລະ ນຳໃຊ້ຝຸ່ນຍິບຊຳທີ່ເກີດຈາກໂຮງງານໄຟຟ້າຫົງສາເພື່ອເຮັດເປັນແຜ່ນ.

– ຊຸກຍູ້200,000, ສົ່ງເສີມ ແລະ ຍົກລະດັບ ໂຮງງານປຸງແຕ່ງບັນດາແຮ່ທາດ ອື່ນໆ ຕາມໝວດແຮ່ທາດ.

– ຈັດສັນແຫຼ່ງທຶນ ເພື່ອຮັບໃຊ້ເຂົ້າໃນວຽກງານ ສຳຫຼວດສ້າງແຜນທີ່ ທໍລະນີສາດ-ແຮ່ທາດ ຕາມມາດຕາສ່ວນ 1: ແລະ ມາດຕາສ່ວນ 1:50,000 ໃນເຂດເປົ້າໝາຍໃຫ້ສຳເລັດ ເພື່ອເປັນຂໍ້ມູນໃນການປະເມີນທ່າແຮງດ້ານແຮ່ທາດ, ກຳນົດເຂດສະຫງວນ ແລະ ເຂດຫວງຫ້າມ ແລະ ອື່ນໆ.

– ກຳນົດເຂດຫວງຫ້າມ, ເຂດສະຫງວນແຮ່ທາດ, ເຂດຍຸດທະສາດສຳຄັນອື່ນໆຂອງຊາດ ແລະ ຈັດສັນປະເພດແຮ່ທາດທີ່ຫາຍາກ, ມີຄຸນຄ່າສູງ ພ້ອມທັງກຳນົດມາດຕະການປົກປັກຮັກສາເຂດດັ່ງກ່າວ ໂດຍບໍ່ອະນຸຍາດໃຫ້ຂຸດຄົ້ນຢ່າງເດັດຂາດ ເພື່ອສະຫງວນໄວ້ ໃຫ້ຍາວນານ ໃຫ້ຄົນລຸ້ນຕໍ່ໄປ.

– ຄົ້ນຄ້ວາ ປັບປຸງຄ່າຊັບພະຍາກອນແຮ່ທາດ, ຄ່າເຊົ່າ, ສຳປະທານທີ່ດິນ ໃນການດຳເນີນກິດຈະການແຮ່ທາດ ໃຫ້ສອດຄ່ອງກັບການຂະຫຍາຍຕົວເສດຖະກິດ ໃນແຕ່ລະໄລຍະ.

– ຄົ້ນຄ້ວາກຳນົດນະໂຍບາຍ ຊຸກຍູ້ສົ່ງເສີມການລົງທຶນ ໃຫ້ມີຄວາມຊັດເຈນ ເພື່ອດຶງດູດການລົງທຶນເຂົ້າໃສ່ການຜະລິດ, ປຸ່ງແຕ່ງເປັນຜະລິດຕະພັນແຮ່ທາດ ເປັນຕົ້ນ ເກືອໂປຕັສ, ຫີນກາວ, ແຮ່ເຫຼັກ, ແຮ່ກົ່ວ, ແຮ່ບົກຊິດ ແຮ່ຫາຍາກ ແລະ ອື່ນໆ ເພື່ອຊົມໃຊ້ພາຍໃນ ແລະ ສົ່ງອອກຂາຍຕ່າງປະເທດ ໃຫ້ເປັນຮູບປະທຳ, ຫຼຸດຜ່ອນ ແລະ ຢຸດຕິການສົ່ງອອກແຮ່ທາດດິບ ເທື່ອລະກ້າວ.

– ສ້າງຄວາມເຂັ້ມແຂງຮອບດ້ານ ໃຫ້ແກ່ລັດວິສາຫະກິດພັດທະນາແຮ່ທາດລາວ ສາມາດເປັນຕົວແທນ ໃຫ້ແກ່ລັດໃນການຖືຮຸ້ນ, ການດຳເນີນທຸລະກິດ ກ່ຽວກັບແຮ່ທາດ ເປັນຕົ້ນ: ການສ້າງ ແລະ ປັບປຸງນິຕິກຳ, ເຕັກນິກວິຊາການ, ເຄື່ອງມື, ຫ້ອງທົດລອງ ຫ້ອງວິໄຈ ແລະ ເງິນລົງທຶນເພື່ອດຳເນີນທຸລະກິດ ກ່ຽວກັບແຮ່ທາດຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ; ການຄັດເລືອກບໍລິສັດ ທີ່ຈະມາພັດທະນາໃນຂົງເຂດບໍ່ແຮ່ ຕ້ອງເປັນບໍລິສັດຂະໜາດໃຫຍ່, ມີມາດຕະຖານສາກົນ, ມີປະສົບການ, ມີຄວາມເປັນມືອາຊີບ ແລະ ມີຄວາມພ້ອມທາງດ້ານງົບປະມານ.

**4) ຂະແໜງບໍລິການທ່ອງທ່ຽວ**

ສືບຕໍ່ພັດທະນາການທ່ອງທ່ຽວທາງທຳມະຊາດ, ວັດທະນະທຳ, ປະຫວັດສາດ ແລະ ກະສິກຳ ໃຫ້ມີຄຸນນະພາບຕາມທິດສີຂຽວ ແລະ ຍືນຍົງ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ກາຍເປັນຈຸດໝາຍປາຍທາງການທ່ອງທ່ຽວທີ່ມີຄຸນນະພາບ ແລະ ມີຄວາມປອດໄພ ແລະ ສາມາດສ້າງລາຍຮັບເຂົ້າປະເທດໃຫ້ຫຼາຍຂຶ້ນ, ສຸມໃສ່ວຽກຈຸດສຸມດັ່ງນີ້:

- ສຸມໃສ່ພັດທະນາການທ່ອງທ່ຽວທ່າແຮງບົ່ມຊ້ອນຂອງຊາດ ແລະ ຂອງທ້ອງຖິ່ນ, ເຊື່ອມໂຍງທ່ອງທ່ຽວພາຍໃນກັບປະເທດໃກ້ຄ່ຽງ ແລະ ພາກພື້ນ ໃຫ້ເປັນຕ່ອງໂສ້ ແລະ ເປັນຈຸດໝາຍປາຍທາງອັນດຽວກັນ.

- ສຸມໃສ່ປັບປຸງ ແລະ ພັດທະນາໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບຕາມມາດຕະຖານຂອງພາກພື້ນ ແລະ ສາກົນ ໂດຍສະເພາະ ບັນດາເສັ້ນທາງເຂົ້າຫາແຫຼ່ງທ່ອງທ່ຽວ, ບັນດາປ້າຍບອກທາງ, ສູນຂໍ້ມູນຂ່າວສານການທ່ອງທ່ຽວ, ຫ້ອງວາງສະແດງຜະລິດຕະພັນທ້ອງຖິ່ນ,

DRAFT

ຫ້ອງນ້ຳສາທາລະນະ ແລະ ອື່ນໆ ໃຫ້ມີຄວາມສະອາດ ແລະ ປອດໄພ; ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ປັບປຸງສິ່ງອຳນວຍຄວາມສະດວກໃນການເດີນທາງທ່ອງທ່ຽວພາຍໃນປະເທດ; ກໍ່ສ້າງ ແລະ ພັດທະນາພື້ນຖານໂຄງລ່າງສະຖາບັນການທ່ອງທ່ຽວ/ສູນຝຶກອົບຮົມການທ່ອງທ່ຽວຢູ່ນະຄອນຫຼວງວຽງຈັນ.

- ສຳຫຼວດ ແລະ ພັດທະນາສະຖານທີ່ທ່ອງທ່ຽວ ແລະ ຜະລິດຕະພັນທ່ອງທ່ຽວໃຫ້ໄດ້ມາດຕະຖານ ຕາມແລວທາງລົດໄຟລາວ-ຈີນ, ແລວທາງລົດໄຟວຽງຈັນ-ທ່າເຮືອຫວຸງອາງ (ແລວເສດຖະກິດໃໝ່), ພັດທະນາວົງຈອນການທ່ອງທ່ຽວເຊື່ອມຕໍ່ພາຍໃນ ແລະ ເຊື່ອມຕໍ່ກັບປະເທດໃກ້ຄຽງ ແລະ ພາກພື້ນ ທີ່ເນັ້ນໃສ່ການທ່ອງທ່ຽວທຳມະຊາດ, ວັດທະນະທຳ, ປະຫວັດສາດ ແລະ ກະສິກຳ ຕິດພັນແບບອະນຸລັກປະຊາຊົນມີສ່ວນຮ່ວມ, ການຜະລິດ ແລະ ສະໜອງຜະລິດຕະພັນກະສິກຳທີ່ສະອາດ ແລະ ປອດສານພິດ.

- ສົ່ງເສີມໃຫ້ສະມາຄົມ/ກຸ່ມທຸລະກິດທ່ອງທ່ຽວ, ສະມາຄົມ/ກຸ່ມໂຮງແຮມ ແລະ ຮ້ານອາຫານ,ສະມາຄົມ/ກຸ່ມພະນັກງານນຳທ່ຽວໃຫ້ມີການປັບປຸງດ້ານການບໍລິການໃຫ້ໄດ້ມາດຕະຖານອາຊຽນ ແລະ ສາກົນ

- ປັບປຸງຄຸນນະພາບຂອງເຄືອຂ່າຍການທ່ອງທ່ຽວສີຂຽວ ໂດຍສະເພາະ ຂົງເຂດຈຸດສຸມ ; ສະຖານທີ່ທ່ອງທ່ຽວ, ທຸລະກິດທ່ອງທ່ຽວ ແລະ ກິດຈະກຳການທ່ອງທ່ຽວ; ການຫຼຸດຜ່ອນສິ່ງເສດເຫຼືອ ; ການນຳໃຊ້ພາຫະນະທີ່ເປັນມິດກັບສິ່ງແວດລ້ອມ ແລະ ການນຳໃຊ້ຊັບພະຍາກອນ ແລະ ພະລັງງານແບບປະຢັດ. ຊຸກຍູ້ການຜະລິດ ແລະ ນຳໃຊ້ຜະລິດຕະພັນການທ່ອງທ່ຽວແບບຍືນຍົງ ໂດຍປູກຈິດສຳນຶກໃຫ້ພາກທຸລະກິດໃນຂະແໜງການທ່ອງທ່ຽວກ່ຽວກັບການນຳໃຊ້ຜະລິດຕະພັນທີ່ເປັນມິດກັບສິ່ງແວດລ້ອມ.

- ສ້າງ ແລະ ປັບປຸງນິຕິກຳໃນຂະແໜງການທ່ອງທ່ຽວໃຫ້ສອດຄ່ອງທິດສີຂຽວ ແລະ ຍືນຍົງ ປະກອບມີ: ສ້າງນິຕິກຳ ແລະ ກຳນົດນະໂຍບາຍເພື່ອອຳນວຍຄວາມສະດວກໃນການພັດທະນາການທ່ອງທ່ຽວໃນເຂດທຳມະຊາດ ; ການຫຼຸດຜ່ອນມົນລະພິດ, ສິ່ງເສດເຫຼືອ, ນຳໃຊ້ຊັບພະຍາກອນ ແລະ ພະລັງງານແບບປະຢັດ ; ນຳໃຊ້ພາຫະນະທີ່ເປັນມິດກັບສິ່ງແວດລ້ອມໃນຂະແໜງການທ່ອງທ່ຽວ.

- ສຸມໃສ່ການໂຄສະນາຂໍ້ມູນການທ່ອງທ່ຽວຢ່າງກວ້າງຂວາງ ແລະ ເລິກເຊິ່ງດ້ານເນື້ອໃນ ແລະ ຫຼາຍຮູບແບບທັງຢູ່ພາຍໃນ ແລະ ຕ່າງປະເທດໂດຍຜ່ານສື່ຕ່າງໆ, ສຳຄັນແມ່ນການໂຄສະນາແຫຼ່ງທ່ອງທ່ຽວໃຫ້ເຂົ້າເຖິງກຸ່ມລູກຄ້າທີ່ເປັນເຄືອຂ່າຍໂຮງແຮມໃຫຍ່ຂອງຕ່າງປະເທດ, ເຂົ້າຮ່ວມງານເທດສະການ, ງານບຸນປະເພນີ, ການເຂົ້າຮ່ວມງານວາງສະແດງການທ່ອງທ່ຽວສາກົນ ແລະ ພາກພື້ນ, ຜະລິດສິ່ງພິມໂຄສະນາການທ່ອງທ່ຽວລາວເປັນຕົ້ນແມ່ນແຜ່ນພັບປຶ້ມແຫຼ່ງທ່ອງທ່ຽວອັນໂດດເດັ່ນຂອງລາວ, ແຜນທີ່ແຫຼ່ງທ່ອງທ່ຽວ, ປຶ້ມແນະນຳການທ່ອງທ່ຽວ, ສິ່ງພິມໂຄສະນາອື່ນພ້ອມທັງຜະລິດແຈກຢາຍສິ່ງພິມໂຄສະນາການທ່ອງທ່ຽວລາວໃຫ້ແກ່ບັນດາກະຊວງຕ່າງໆ ແລະ ວາງສະແດງການທ່ອງທ່ຽວສາກົນ, ກອງປະຊຸມ ແລະ ງານອື່ນໆ ໃນນັ້ນໃຫ້ມີປຶ້ມຄູ່ມືການທ່ອງທ່ຽວທີ່ມີຫຼາກຫຼາຍພາສາ ເພື່ອຮອງຮັບນັກທ່ອງທ່ຽວຈາກຫຼາຍປະເທດ.

- ສ້າງເມືອງວັງວຽງ, ເມືອງເຟືອງ ແລະ ສະຖານທີ່ສຳຄັນຕ່າງໆ ທີ່ໄດ້ຮັບຮອງຈາກສາກົນ ເພື່ອເປັນຈຸດການທ່ອງທ່ຽວທາງດ້ານທຳມະຊາດ, ການຜະຈົນໄພ ແລະ ການຄົ້ນຫາ ທີ່ລວມສູນກິດຈະກຳດ້ານພະຈົນໄພໃນສະຖານທີ່ດຽວ ທີ່ອ້ອມຮອບໄປດ້ວຍສະຖານທີ່ທີ່ມີພູຫີນປູນທີ່ສວຍງາມ ແລະ ມີທ່າແຮງສູງໃນການສ້າງບັນດາກິດຈະກຳການທ່ອງທ່ຽວ ໂດຍການມີສ່ວນຮ່ວມຈາກພາກລັດ, ທຸລະກິດ ແລະ ປະຊາຊົນທ້ອງຖິ່ນ ໃນການປັບປຸງຄຸນນະພາບສະຖານທີ່ທ່ອງທ່ຽວ ແລະ ບັນດາກິດຈະກຳທີ່ມີຢູ່ເພື່ອແນໃສ່ຕະຫຼາດນັກທ່ອງທ່ຽວທີ່ມີລາຍຮັບປານກາງທີ່ມີແນວໂນ້ມການຈັບຈ່າຍທີ່ສູງກວ່ານັກທ່ອງທ່ຽວທີ່ມາຈາກອາຊຽນ.

- ເອົາໃຈໃສ່ປັບປຸງສະພາບແວດລ້ອມທີ່ປິ່ນອ້ອມການທ່ອງທ່ຽວ ໃຫ້ມີຄວາມສະດວກ ແລະ ໄດ້ມາດຕະຖານ ເພື່ອສ້າງຄວາມເຊື່ອໝັ້ນໃຫ້ນັກທ່ອງທ່ຽວ ເປັນຕົ້ນ ການບໍລິການຂົນສົ່ງໂດຍສານ, ການບໍລິການຮັກສາສຸຂະພາບ ແລະ ອື່ນໆ.

**5) ຂະແໜງບໍລິການຂົນສົ່ງ ແລະ ໂລຈິສຕິກ (ຕິດພັນກັບທ່າແຮງດ້ານທີ່ຕັ້ງເພື່ອເຊື່ອມໂຍງ-ເຊື່ອມຈອດກັບພາກພື້ນ ແລະ ສາກົນ)**

ຂະແໜງບໍລິການຂົນສົ່ງ ແລະ ໂລຈິສຕິກ ເປັນຂະແໜງທີ່ເອື້ອອຳນວຍໃຫ້ແກ່ການລົງທຶນ, ການຄ້າ ແລະ ການທ່ອງທ່ຽວ ເພື່ອເຊື່ອມໂຍງ-ເຊື່ອມຈອດ ພາຍໃນ, ພາກພື້ນ ແລະ ສາກົນ, ເປັນຂະແໜງເສດຖະກິດທີ່ສຳຄັນໃນອະນາຄົດ, ໃນ 5 ປີ ຕໍ່ໜ້າ ຕ້ອງສຸມໃສ່ປັບປຸງ ແລະ ກໍ່ສ້າງບັນດາເສັ້ນທາງຄົມມະນາຄົມທາງບົກ, ທາງລ່າງ, ທາງນ້ຳ ແລະ ທາງອາກາດ ໃຫ້ມີຄຸນນະພາບ ແລະ ໄດ້ມາດຕະຖານຂອງພາກພື້ນ ແລະ ສາກົນ ເທື່ອລະກ້າວ, ໂດຍເລັ່ງໃສ່ກໍ່ສ້າງທາງ

DRAFT

ດ່ວນແຕ່ບໍ່ເຕັນ-ຫ້ວຍຊາຍ, ທາງດ່ວນວຽງຈັນ-ບໍ່ເຕັນ: ຊ່ວງທີ 2 ວັງວຽງ-ຫລວງພະບາງ, ຊ່ວງທີ 3 ຫລວງພະບາງ-ອຸດົມໄຊ ແລະ ຊ່ວງທີ 4 ອຸດົມໄຊ-ບໍ່ເຕັນ ; ໂຄງການທາງດ່ວນ ນະຄອນຫຼວງວຽງຈັນ-ຮ່າໂນ້ຍ (ມີ 2 ຊ່ວງ): ຊ່ວງທີ 1 ແຕ່ນະຄອນຫຼວງວຽງຈັນ ຫາ ເມືອງປາກຊັນ ແລະ ຊ່ວງທີ 2 ແຕ່ເມືອງປາກຊັນຫາ ຊາຍແດນ ລາວ-ຫວຽດນາມ, ເມືອງໄຊຈໍາພອນ, ແຂວງບໍລິຄໍາໄຊ ເພື່ອສ້າງໃຫ້ເປັນແລວເສດຖະກິດໃໝ່; ໂຄງການກໍ່ສ້າງທາງດ່ວນນະຄອນຫຼວງວຽງຈັນ-ປາກເຊ (ມີ 4 ຊ່ວງ) ຄື : ຊ່ວງທີ 1 ແຕ່ ປາກຊັນ-ແຍກທາງເລກ 12 (ແຂວງຄໍາມ່ວນ), ຊ່ວງທີ 2 ແຕ່ແຍກທາງເລກ 12 (ແຂວງຄໍາມ່ວນ) - ແຍກທາງເລກ 9 (ເມືອງອຸທຸມພອນ, ແຂວງສະຫວັນນະເຂດ, ຊ່ວງທີ 3 ແຕ່ແຍກທາງເລກ 9 (ເມືອງອຸທຸມພອນ, ແຂວງສະຫວັນນະເຂດ)-ແຍກທາງເລກ 15 (ນາປົ່ງ, ເມືອງຄົງເຊໂດນ, ແຂວງສາລະວັນ) ແລະ ຊ່ວງທີ 4 ແຕ່ແຍກທາງເລກ 15 (ນາປົ່ງ, ເມືອງຄົງເຊໂດນ, ແຂວງສາລະວັນ) - ນະຄອນປາກເຊ ; ສຸມໃສ່ສຶກສາສໍາຫຼວດ-ອອກແບບລະອຽດ ແລະ ກໍ່ສ້າງເສັ້ນທາງລົດໄຟ ວຽງຈັນ-ຫວຸ່ງອ່າງ ຊ່ວງແຕ່ເມືອງທ່າແຂກ-ນາເພົ້າ ແຂວງຄໍາມ່ວນ (ຊາຍແດນລາວ-ຫວຽດນາມ), ສຶກສາຄວາມເປັນໄປໄດ້ ແລະ ອອກແບບລະອຽດເສັ້ນທາງລົດໄຟ ຈາກນະຄອນຫຼວງວຽງຈັນ-ຈໍາປາສັກ (ນະຄອນຫຼວງວຽງຈັນ-ຄໍາມ່ວນ-ສະຫັວນນະເຂດ-ສາລະວັນ-ຈໍາປາສັກ) ເພື່ອເຊື່ອມຕໍ່ກັບເສັ້ນທາງລົດໄຟ ຣາຊະອານາຈັກກໍາປູເຈຍ, ສຶກສາຄວາມເປັນໄປໄດ້ ແລະ ອອກແບບລະອຽດຂົວຂ້າມແມ່ນໍ້າຂອງສະເພາະ ທາງລົດໄຟນະຄອນຫຼວງວຽງຈັນ-ໜອງຄາຍ ເພື່ອເຊື່ອມຈອດທາງລົດໄຟ ລາວ-ຈີນ ແລະ ໄທ-ຈີນ; ສືບຕໍ່ປັບປຸງ ແລະ ພັດທະນາລະບົບຂົນສົ່ງໂລຊິດສະຕິກ ໃຫ້ມີຄວາມສະດວກ, ວ່ອງໄວ ແລະ ທັນສະໄໝ ເພື່ອສ້າງໃຫ້ກາຍເປັນໃຈກາງຈຸດຢຸດພັກ, ກະຈາຍສິນຄ້າ ແລະ ການຂົນສົ່ງຜ່ານແດນ ລະຫວ່າງບັນດາປະເທດອາຊຽນ ແລະ ພາກພື້ນ ໂດຍສຸມໃສ່ ປັບປຸງລະບົບຂົນສົ່ງໂລຊິດສະຕິກ (Logistic) ຢູ່ທ່າບົກທີ່ກໍ່ສ້າງສໍາເລັດແລ້ວ 4 ແຫ່ງ ຄື: ທ່ານາແລ້ງ ນະຄອນຫຼວງວຽງຈັນ, ທ່າບົກສະຫັວນນະເຂດ, ທ່າບົກຄໍາມ່ວນ ແລະ ທ່າບົກຈໍາປາສັກ ໃຫ້ມີຄວາມທັນສະໄໝ ແລະ ປັບປຸງນິຕິກໍາຈໍານວນໜຶ່ງທີ່ກ່ຽວຂ້ອງກັບການອໍານວຍຄວາມສະດວກການຄ້າ ແລະ ການຂົນສົ່ງ, ສືບຕໍ່ສຸມໃສ່ພັດທະນາທ່າບົກຈຸດອື່ນໆທີ່ຍັງບໍ່ທັນສໍາເລັດ ເປັນຕົ້ນ ທ່າເຮືອຫວຸ່ງອາງ (ສສ ຫວຽດນາມ), ທ່າບົກນາເຕີຍ (ຫຼວງນໍ້າທາ), ທ່າບົກຫຼັກຊາວ (ບໍລິຄໍາໄຊ), ທ່າບົກຫ້ວຍຊາຍ (ບໍ່ແກ້ວ), ທ່າບົກຫຼວງພະບາງ (ຫຼວງພະບາງ) ແລະ ທ່າບົກເມືອງໄຊ (ອຸດົມໄຊ).

**6) ຂະແໜງອຸດສາຫະກໍາປຸງແຕ່ງທີ່ເປັນຕ່ອງໂສ້ຖານການຜະລິດພາກພື້ນ (ຕິດພັນກັບທ່າແຮງດ້ານຊັບພະຍາກອນ, ດ້ານທີ່ຕັ້ງ ແລະ ການເຊື່ອມຈອດ)**

ພັດທະນາ ແລະ ສົ່ງເສີມການລົງທຶນໃນຂະແໜງອຸດສາຫະກໍາປຸງແຕ່ງທີ່ເປັນຕ່ອງໂສ້ຄົບວົງຈອນ ເພື່ອສົ່ງອອກໄປຫາຜູ້ຊື້ໂດຍກົງຈາກພາກພື້ນ ແລະ ສາກົນ ເຂົ້າໃນເຂດເສດຖະກິດພິເສດ ແລະ ນິຄົມອຸດສາຫະກໍາທີ່ຕິດພັນປະເທດເພື່ອນບ້ານ, ໂດຍເລັ່ງໃສ່ຂະແໜງອຸດສາຫະກໍາປຸງແຕ່ງກະສິກໍາເພື່ອຊົມໃຊ້ພາຍໃນ ແລະສົ່ງອອກຕ່າງປະເທດ, ຂະແໜງອຸດສາຫະກໍາປຸງແຕ່ງຜະລິດຊິ້ນສ່ວນເຄື່ອງໃຊ້ໄຟຟ້າ, ອຸປກອນອີເລັກໂຕຣນິກ, ສິ້ນສ່ວນພາຫະນະ ແລະ ອຸດສາຫະກໍາປຸງແຕ່ງອື່ນໆທີ່ເປັນຂະບວນການຜະລິດເຊື່ອມໂຍງກັບຕ່ອງໂສ້ການຜະລິດພາກພື້ນ ແລະ ສາກົນ.

**7) ຂະແໜງເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານຮັບໃຊ້ເສດຖະກິດດິຈິຕອນ**

ຂະແໜງນີ້ມີຄວາມສໍາຄັນຫຼາຍ ເພື່ອເຮັດໃຫ້ເສດຖະກິດດິຈິຕອນ ມີການພັດທະນາ ແລະ ຂະຫຍາຍຕົວໄວຂຶ້ນ ແລະ ກາຍເປັນຂະແໜງສະໜັບສະໜູນການພັດທະນາຂະແໜງເສດຖະກິດປາຍແຫຼມ ແລະ ການຄຸ້ມຄອງບໍລິຫານລັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ສະນັ້ນ ໃນ 5 ປີ ຕໍ່ໜ້າ ສຸມໃສ່ພັດທະນາພື້ນຖານໂຄງລ່າງໂທລະຄົມມະນາຄົມ ແລະ ອິນເຕີເນັດຄວາມໄວສູງ ທີ່ເປັນໂຄງລ່າງພື້ນຖານເຕັກໂນໂລຊີດິຈິຕອນ ໂດຍສະເພາະ ການພັດທະນາສູນຂໍ້ມູນແຫ່ງຊາດ, ສູນຂໍ້ມູນມະຫາສານ, ສ້າງລະບົບສາຍສົ່ງໄຍແກ້ວນໍາແສງຄວາມໄວສູງ, ພັດທະນາລະບົບການສື່ສານອິນເຕີເນັດຄວາມໄວສູງແບບບໍ່ມີສາຍ 5G ໃຫ້ກວມທຸກຕົວເມືອງໃຫຍ່, ເຂດອຸດສາຫະກໍາ ແລະ ເຂດເສດຖະກິດພິເສດໃນທົ່ວປະເທດ; ສ້າງສູນກວດກາຄຸນນະພາບການບໍລິການໂທລະຄົມມະນາຄົມ ເພື່ອຮັບປະກັນໃຫ້ໄດ້ມາດຕະຖານສາກົນ ແລະ ເປັນພື້ນຖານອັນສໍາຄັນໃຫ້ແກ່ບັນດາຜະລິດຕະພັນດິຈິຕອນຕ່າງໆ ໄດ້ນໍາໃຊ້ຢ່າງສະດວກ, ວ່ອງໄວ ແລະ ປອດໄພ , ສ້າງສູນກວດກາຄຸນນະພາບອຸປະກອນດິຈິຕອນ ເພື່ອຮັບປະກັນໃຫ້ປະຊາຊົນ ນໍາໃຊ້ອຸປະກອນທີ່ມີຄຸນນະພາບ, ປອດໄພ ແລະ ເປັນມິດກັບສິ່ງແວດລ້ອມ; ພັດທະນາເຄືອຄ່າຍພາກລັດໃຫ້ກາຍເປັນເສັ້ນທາງໃນການຮັບສົ່ງຂໍ້ມູນລະຫວ່າງອົງການຕ່າງໆ ໃຫ້ມີຄວາມປອດໄພສູງ ແລະ ຮັບຮອງການສ້າງເສດຖະກິດດິຈິຕອນ, ພັດທະນາເຕັກໂນໂລຊີດິຈິຕອນ ແລະ ເຄືອຄ່າຍຄວາມໄວສູງ ສໍາລັບຂະແໜງສຶກສາ ແລະ ຂະແໜງສາທາລະນະສຸກ (ເຂົ້າເຖິງໂຮງຮຽນ, ໂຮງໝໍ ແລະ ສຸກສາລາ) ເພື່ອຮອງຮັບການສຶກສາທາງໄກ, ການປິ່ນປົວທາງໄກ ແລະ ອື່ນໆ; ສົ່ງເສີມການນໍາໃຊ້ດາວທຽມ; ສ້າງຖານລະບົບລັດຖະບານດິຈິຕອນ, ລະບົບຄຸ້ມຄອງທີ່ດິນດິຈິຕອນ, ລະບົບການຄ້າອີເລັກໂທນິກ ແລະ ອື່ນໆ.

DRAFT

### *3.1.2ແຜນວຽກຈຸດສຸມທີ 2: ເສດຖະກິດມະຫາພາກມີຄວາມເຂັ້ມແຂງ ແລະ ໝັ້ນທ່ຽງ*

ສ້າງງົບປະມານແຫ່ງລັດໃຫ້ເຕີບໃຫຍ່ຂະຫຍາຍຕົວ ແລະ ເຂັ້ມແຂງ ເພື່ອແນໃສ່ຮັບປະກັນໃຫ້ພື້ນຖານລະບົບການເງິນແຫ່ງຊາດ ໃຫ້ມີຄວາມໝັ້ນຄົງ, ຍືນຍົງ ແລະ ຮັກສາສະຖຽນລະພາບເສດຖະກິດມະຫາພາກ; ສ້າງຄວາມເປັນເຈົ້າຕົນເອງທາງດ້ານການເງິນໃນແຕ່ລະທ້ອງຖິ່ນໃຫ້ນັບມື້ເພີ່ມຂຶ້ນ; ປັບປຸງໂຄງສ້າງ ແລະ ກົນໄກການເກັບລາຍຮັບ ແລະ ການໃຊ້ຈ່າຍງົບປະມານແຫ່ງລັດຄືນໃໝ່ ໂດຍການກຳນົດຂອບເຂດອັດຕາສ່ວນ ແລະ ລາຍການໃຊ້ຈ່າຍບໍລິຫານຢ່າງຈະແຈ້ງ ເພື່ອຫຼຸດຜ່ອນລາຍຈ່າຍປົກກະຕິທີ່ບໍ່ຈຳເປັນ, ກຳທັນການຄຸ້ມຄອງການເງິນ ແລະ ງົບປະມານ ໃຫ້ມີວິໄນເຂັ້ມງວດ ແລະ ມີຄວາມທັນສະໄໝ; ເພີ່ມທະວີການບໍລິຫານ ແລະ ແກ້ໄຂໜີ້ສາທາລະນະໃຫ້ມີປະສິດທິຜົນສູງຂຶ້ນ ເພື່ອຮັບປະກັນຄວາມ ໝັ້ນຄົງ ແລະ ຄວາມຍືນຍົງຂອງລະບົບການເງິນແຫ່ງຊາດ, ຫຼຸດຜ່ອນການຂາດດຸນ, ສູ້ຊົນໃຫ້ງົບປະມານມີຄວາມສົມດຸນ, ກ້າວໄປສູ່ເກີນດຸນງົບປະມານ ແລະ ມີສ່ວນເຫຼືອເພື່ອສ້າງຄັງສະສົມແຫ່ງລັດ ໃຫ້ເຕີບໃຫຍ່ເຂັ້ມແຂງ ແລະ ຍືນຍົງ. ສຸມໃສ່ຮັກສາສະຖຽນລະພາບເງິນຕາ, ຮັບປະກັນຄວາມປອດໄພຂອງລະບົບການເງິນ-ທະນາຄານ, ຍົກສູງຄວາມສາມາດໃນການວາງແຜນ, ບໍລິຫານນະໂຍບາຍເງິນຕາຂອງທະນາຄານ ແຫ່ງ ສປປ ລາວ ໃຫ້ມີຄວາມຮັດກຸມ, ຄ່ອງຕົວ, ກົມກຽວກັນລະຫວ່າງເປົ້າໝາຍການຄວບຄຸມເງິນເຟີ້ ແລະ ການເຕີບໂຕເສດຖະກິດ, ໂດຍສະເພາະແມ່ນການເພີ່ມຄັງສຳຮອງເງິນຕາຕ່າງປະເທດ ໃຫ້ສອດຄ່ອງກັບມາດຖານຂອງສາກົນ; ຄຸ້ມຄອງເງິນຕາຕ່າງປະເທດຢ່າງເຂັ້ມງວດ, ເສີມຂະຫຍາຍຄຸນຄ່າ ແລະ ຄວາມເຊື່ອໝັ້ນຕໍ່ສະກຸນເງິນຕາພາຍໃນ, ພັດທະນາຕະຫຼາດການເງິນທີ່ໝັ້ນຄົງ ແລະ ຍືນຍົງ; ຫັນການຄຸ້ມຄອງການເງິນ, ເງິນຕາໄປສູ່ທັນສະໄໝ ແລະ ນຳໃຊ້ລະບົບດິຈິຕອນ ໃຫ້ເທົ່າທຽມກັບພາກພື້ນ ແລະ ສາກົນ ເທື່ອລະກ້າວ.

**1.ຄາດໝາຍລະດັບແຜນວຽກຈຸດສຸມ**

+ດ້ານການເງິນ:

- ເກັບລາຍຮັບງົບປະມານທັງໝົດ 5ປີ ໃຫ້ໄດ້ 554,400 ຕື້ກີບ ເທົ່າກັບ 21.1% ຂອງ GDP, ໃນນີ້ ລາຍຮັບພາຍໃນ ໃຫ້ໄດ້ 528,000 ຕື້ກີບ ເທົ່າກັບ 20.0% ຂອງ GDP ແລະ ການຊ່ວຍເຫຼືອຕ່າງປະເທດ 26,400 ຕື້ກີບ ເທົ່າກັບ 1% ຂອງ GDP;
- ລາຍຈ່າຍທັງໝົດ 5 ປີ ຢູ່ໃນລະດັບ 528,400 ຕື້ກີບ ເທົ່າກັບ 20.1% ຂອງ GDP, ລາຍຈ່າຍບໍລິຫານປົກກະຕິ 341,700 ຕື້ກີບ ເທົ່າກັບ 13.1% ຂອງ GDP ແລະ ລາຍຈ່າຍການລົງທຶນ 186,700 ຕື້ກີບ ເທົ່າກັບ 7.0% ຂອງ GDP;
- ດຸນງົບປະມານທັງໝົດ ຢູ່ໃນລະດັບ 26,000 ຕື້ກີບ ເທົ່າກັບ 1.0% ຂອງGDP;
- ຄັງສະສົມແຫ່ງລັດ 9,700 ຕື້ກີບ;
- ສູ້ຊົນຫຼຸດຜ່ອນໜີ້ສາທາລະນະ ໃຫ້ຢູ່ໃນລະດັບຕໍ່າກວ່າ 70% ຂອງ GDP.

+ດ້ານເງິນຕາ:

- ຮັບປະກັນສະຖຽນລະພາບເງິນຕາແຫ່ງຊາດ ໃຫ້ມີຄວາມໝັ້ນທ່ຽງ, ສູ້ຊົນໃຫ້ອັດຕາເງິນເຟີ້ ໃຫ້ຢູ່ໃນລະດັບບໍ່ເກີນ 5% (ເໜັງຕີງ ±2%,
- ປະລິມານເງິນ M2 ໃຫ້ເໜັງຕີງຢູ່ໃນລະດັບບໍ່ສ້າງແຮງກົດດັນຕໍ່ອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນ;
- ອັດຕາແລກປ່ຽນໃຫ້ເໜັງຕີງສອດຄ່ອງກັບດຸນຍະພາບຂອງເສດຖະກິດ ແລະ ບໍ່ສ້າງແຮງກົດດັນຕໍ່ອັດຕາເງິນເຟີ້,
- ຄັງສຳຮອງເງິນຕາຕ່າງປະເທດສາມາດກຸ້ມການນຳເຂົ້າ ຢ່າງໜ້ອຍ 5 ເດືອນ,
- ອັດຕາສ່ວນໜີ້ບໍ່ເກີດດອກອອກຜົນ (NPLs) ຢູ່ໃນລະດັບບໍ່ເກີນ 3%,
- ຄຸ້ມຄອງການສົ່ງອອກ ຜ່ານລະບົບທະນາຄານ ໃຫ້ໄດ້ຢ່າງໜ້ອຍ 75% (ບໍ່ລວມຫົວໜ່ວຍສົ່ງອອກທີ່ໄດ້ຮັບການຍົກເວັ້ນບາງມາດຕາຂອງກົດໝາຍ),
- ສູ້ຊົນການເຂົ້າເຖິງການບໍລິການທາງການເງິນຕໍ່ປະຊາກອນທັງໝົດ ໃຫ້ບັນລຸ 85% ແລະ ປະຊາກອນອາຍຸ 18 ປີຂຶ້ນໄປ ຖືບັນຊີກັບສະຖາບັນການເງິນ ໃຫ້ຫຼາຍກວ່າ 80% ຂອງປະຊາກອນທັງໝົດໃນທ້າຍປີ 2030;
- ຊຸກຍູ້ ທທກ ປະຕິບັດລະບຽບຄວາມໝັ້ນຄົງໃຫ້ຢູ່ໃນລະດັບທີ່ ທຫລ ກຳນົດໄວ້ໃນແຕ່ລະໄລຍະຕາມຫຼັກການບາແຊວ II;

DRAFT

- ສ້າງຕະຫຼາດທຶນໃຫ້ມີຄວາມເຂັ້ມແຂງ ແລະ ສາມາດສະໜອງແຫຼ່ງລະດົມທຶນເຂົ້າສູ່ລະບົບໃຫ້ໄດ້ 26% ຂອງ GDP.

**2.ວຽກຈຸດສຸມ**

**1) ດ້ານການເງິນ**

- ສືບຕໍ່ສ້າງລາຍຮັບງົບປະມານໃຫ້ເພີ່ມຂຶ້ນ ແລະ ຫຼຸດຜ່ອນລາຍຈ່າຍງົບປະມານເພື່ອຍົກສູງຄຸນນະພາບຂອງງົບປະມານແຫ່ງລັດ ໂດຍສຸມໃສ່ປັບປຸງໂຄງສ້າງດ້ານການເກັບລາຍຮັບ ແລະ ການໃຊ້ຈ່າຍງົບປະມານແຫ່ງລັດຄືນໃໝ່ ເພື່ອຫຼຸດຜ່ອນລາຍຈ່າຍປົກກະຕິທີ່ບໍ່ຈຳເປັນ, ຮັບປະກັນຄວາມໝັ້ນຄົງ ແລະ ຄວາມຍືນຍົງ ຂອງລະບົບການເງິນແຫ່ງຊາດ. ຕ້ອງລວມສູນທຸກລາຍຮັບງົບປະມານ ແລະ ໃຫ້ຂະແໜງການເງິນ ເປັນຜູ້ຈັດເກັບ ແລະ ຈັດສັນລາຍຮັບ-ລາຍຈ່າຍ ໃຫ້ຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ຕາມແຜນງົບປະມານທີ່ສະພາແຫ່ງຊາດ ຮັບຮອງ.

- ປະຕິບັດຢ່າງເຂັ້ມງວດຫຼັກການງົບປະມານແຫ່ງລັດ, ຫຼຸດຜ່ອນການຂາດດຸນ, ເຮັດໃຫ້ງົບປະມານສົມດຸນ ແລະ ກ້າວໄປສູ່ເກີນດຸນງົບປະມານ ໃຫ້ມີສ່ວນເຫຼືອເພື່ອແຮໄວ້ຄັງສະສົມແຫ່ງລັດ.

- ປະຕິບັດນະໂຍບາຍເກັບລາຍຮັບ ຕິດພັນກັບການປັບປຸງໂຄງສ້າງ ຂອງລາຍຮັບງົບປະມານແຫ່ງລັດ ຕາມທິດໃຫ້ກວມເອົາທຸກແຫຼ່ງລາຍຮັບ, ຂະຫຍາຍຖານລາຍຮັບ ໂດຍສະເພາະແຫຼ່ງລາຍຮັບໃໝ່ໃຫ້ສອດຄ່ອງກັບນິຕິກຳ; ເພີ່ມສັດສ່ວນລາຍຮັບພາຍໃນປະເທດ, ຮັບປະກັນສັດສ່ວນທີ່ເໝາະສົມ ລະຫວ່າງອາກອນທາງອ້ອມ ແລະ ອາກອນທາງກົງ, ຕ້ອງຍຸດຕິຍົກການເວັ້ນພາສີ-ອາກອນ ນອກເໜືອທີ່ກຳນົດໃນກົດໝາຍ; ຄຸ້ມຄອງການເກັບລາຍຮັບງົບປະມານດ້ວຍເຄື່ອງມືທັນສະໄໝ; ຄົ້ນຄວ້າສ້າງອາກອນປະເພດໃໝ່ທີ່ຕິດພັນກັບຂະແໜງຊັບພະຍາກອນທຳມະຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມ.

- ປັບປຸງໂຄງສ້າງລາຍຈ່າຍງົບປະມານແຫ່ງລັດ ຕາມທິດເພີ່ມສັດສ່ວນລາຍຈ່າຍ ເພື່ອການລົງທຶນ, ຫຼຸດຜ່ອນສັດສ່ວນລາຍຈ່າຍປົກກະຕິ ຫັນເອົາໜ່ວຍງານຂະແໜງວິຊາຊີບ ຂອງພາກລັດ ໃຫ້ໄປຕາມກົນໄກກຸ້ມຕົນເອງ ແລະ ປັບປຸງກົງຈັກການຈັດຕັ້ງ, ພະນັກງານໃຫ້ກະທັດຮັດ. ປະຕິຮູບລະບອບເງິນເດືອນ, ຄ່າຄອງຊີບ ແລະ ນະໂຍບາຍສະຫວັດດີການຕໍ່ພະນັກງານ, ລັດຖະກອນ, ພາລະກອນ, ກຳລັງປະກອບອາວຸດ, ລວມທັງຜູ້ອອກແຮງງານຢູ່ຕາມວິສາຫະກິດຕ່າງໆ ໃຫ້ສອດຄ່ອງ ເພື່ອຮັບປະກັນລະດັບຄ່າຄອງຊີບອັນຈຳເປັນ ໃຫ້ສອດຄ່ອງຕາມສະພາບເສດຖະກິດ-ສັງຄົມແຕ່ລະໄລຍະ.

- ເພີ່ມທະວີການປະຕິບັດລະບຽບວິໄນ ແຜນການ-ການເງິນໃຫ້ເຂັ້ມງວດ, ມີປະສິດທິຜົນ ໃນການຄຸ້ມຄອງງົບປະມານ,ໜີ້ສາທາລະນະ ແລະ ຫົວໜ່ວຍທຸລະກິດຂອງລັດ ກຳນົດການແບ່ງຂັ້ນຄຸ້ມຄອງດ້ານການເງິນລະຫວ່າງສູນກາງ ແລະ ທ້ອງຖິ່ນໃຫ້ຈະແຈ້ງ ; ສະກັດກັ້ນ ແລະ ນຳໃຊ້ມາດຕະການຢ່າງເຂັ້ມງວດຕໍ່ຜູ້ຫຼົບຫຼີກສິນຄ້າໜີພາສີ ແລະ ການມອບພັນທະ ທີ່ເປັນການສູນເສຍລາຍຮັບ.

- ການຄຸ້ມຄອງ ແລະ ແກ້ໄຂໜີ້ສິນ:

- ເພີ່ມທະວີການຄຸ້ມຄອງ ແລະ ແກ້ໄຂໜີ້ສິນສາທາລະນະ ດ້ວຍການເຈລະຈາກັບເຈົ້າໜີ້ຕ່າງປະເທດແຕ່ຫົວທີ ເພື່ອຂໍປັບໂຄງສ້າງໜີ້, ຍືດເວລາຊຳລະ, ໄປຄຽງຄູ່ກັບການຍົກສູງປະສິດທິຜົນ ຂອງການນຳໃຊ້ເງິນກູ້; ການລະດົມ ແລະ ນຳໃຊ້ທຶນກູ້ຢືມຕ່າງປະເທດ ຕ້ອງຕິດພັນກັບຄວາມຕ້ອງການດ້ານປະສິດທິຜົນເສດຖະກິດ-ສັງຄົມ ໂດຍສະເພາະແມ່ນຂະແໜງສ້າງລາຍຮັບແຫ່ງຊາດ ແລະ ຄວາມສາມາດໃນການຊຳລະ.

- ປັບປຸງບັນດາລະບອບ, ກົນໄກ ໂດຍສະເພາະແມ່ນນະໂຍບາຍ, ເຄື່ອງມື, ກົງຈັກຄຸ້ມຄອງໜີ້ສິນສາທາລະນະ ເພື່ອຮັບປະກັນການປະຕິບັດ ຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງ ເພື່ອຄວບຄຸມຄວາມສ່ຽງຢ່າງຮອບດ້ານ, ຄຸ້ມຄອງ ແລະ ແກ້ໄຂໜີ້ສິນສາທາລະນະ ຢ່າງມີປະສິດທິຜົນ; ສ້າງຍຸດທະສາດແກ້ໄຂໜີ້ສິນໃນໄລຍະສັ້ນ ແລະ ໄລຍະຍາວ; ຄົ້ນຄ້ວາປັບປຸງຂອບເຂດເພດານໜີ້ສາທາລະນະ ໃຫ້ສອດຄ່ອງກັບການປະຕິບັດຕາມມາດຕະຖານສາກົນເທື່ອລະກ້າວ. ສືບຕໍ່ປັບໂຄງສ້າງໜີ້ພາກລັດຄືນໃໝ່ ຕາມທິດຂະຫຍາຍໄລຍເວລາຊຳລະ, ຫຼຸດຜ່ອນຄວາມກົດດັນໃນການຊຳລະໜີ້ສິນໄລຍສັ້ນ ແລະ ຫຼຸດຜ່ອນລາຍຈ່າຍຕົ້ນທຶນໃນການກູ້ຢືມ.

- ຄວບຄຸມຢ່າງເຂັ້ມງວດໜີ້ສາທາລະນະ, ບໍ່ໃຫ້ມີການຈ່າຍນອກແຜນງົບປະມານທີ່ໄດ້ຮັບຮອງໃນແຕ່ລະປີ, ຮັບປະກັນການຮັບມືກັບບັນດາຄວາມສ່ຽງທີ່ອາດເກີດຂຶ້ນ ; ຕິດຕາມ, ກວດກາ ຢ່າງໃກ້ສິດໃນການປ່ອຍກູ້ ແລະ ການນຳໃຊ້ທຶນ ຂອງບັນດາກອງທຶນຂອງລັດ, ລວມທັງການນຳໃຊ້ຄັງແຮສຳຮອງເງິນຕາຕ່າງປະເທດ ແລະ ເງິນກູ້ຢືມຈາກທະນາຄານແຫ່ງ ສປປລາວ. ຍົກສູງປະສິດທິຜົນການນຳໃຊ້ເງິນກູ້ຢືມ, ຮັບປະກັນການຊຳລະໜີ້ສິນຢ່າງຄົບຖ້ວນ ແລະ

DRAFT

ທັນການ. ຄຸ້ມຄອງ, ຕິດຕາມ, ກວດກາ, ກວດສອບບັນຊີຕໍ່ບັນດາກອງທຶນຂອງລັດ, ຈັດສັນຄືນບັນດາກອງທຶນທີ່ມີແຫຼ່ງລາຍຮັບ, ມີການຈ່າຍຊໍ້າຊ້ອນກັບງົບປະມານ ທີ່ເຫັນວ່າ ບໍ່ມີຄວາມສອດຄ່ອງກັນ.

- ຫັນປ່ຽນການກູ້ຢືມ ໃນເງື່ອນໄຂອັດຕາດອກເບ້ຍທຸລະກິດ ໄປສູ່ການກູ້ຢືມ ໃນເງື່ອນໄຂອັດຕາດອກເບ້ຍແບບຜ່ອນຜັນຫຼາຍຂຶ້ນ ; ເພີ່ມທະວີການຄຸ້ມຄອງການຊໍາລະເງິນກູ້ໃຫ້ຖືກຕ້ອງຕາມລະບຽບການ, ປັບປຸງກົນໄກການຄຸ້ມຄອງ ບັນດາສັນຍາກູ້ຢືມ.

- ເພີ່ມທະວີວຽກງານກວດສອບ, ກວດກາບັນຊີ, ປະຕິບັດຫຼັກການເປີດເຜີຍ, ໂປ່ງໃສ,ຍົກສູງຄວາມຮັບຜິດຊອບ ໃນການອະທິບາຍຊີ້ແຈງ ກ່ຽວກັບງົບປະມານລັດ, ການຄຸ້ມຄອງ ແລະ ແກ້ໄຂໜີ້ສິນສາທາລະນະ.

- ໃນສະເພາະໜ້ານີ້ ການກູ້ຢືມຕ້ອງປະຕິບັດກ່ຽວກັບຫຼັກການ ເພື່ອດຸນດ່ຽງການຂາດດຸນງົບປະມານແຫ່ງລັດ, ນໍາໃຊ້ສະເພາະເຂົ້າການລົງທຶນພັດທະນາເທົ່ານັ້ນ, ບໍ່ນໍາໃຊ້ເຂົ້າໃນລາຍຈ່າຍປົກກະຕິ ; ປັບປຸງການດຸນດ່ຽງງົບປະມານແຫ່ງລັດ, ເພີ່ມການສະສົມເທື່ອລະກ້າວ ເພື່ອການລົງທຶນພັດທະນາ ແລະ ຊໍາລະໜີ້ສິນ.

- ສືບຕໍ່ປັບປຸງປ່ຽນແປງໃໝ່ວຽກງານຄຸ້ມຄອງພະນັກງານ ແລະ ບໍາລຸງວິຊາສະເພາະໃຫ້ແກ່ຖັນແຖວພະນັກງານທີ່ເຮັດວຽກການເງິນ ຢ່າງເປັນປະຈໍາ, ຍົກສູງຄວາມສາມາດໃນການຄາດຄະເນ ແລະ ສ້າງແຜນການ ການເງິນ-ງົບປະມານແຫ່ງລັດ, ການຄຸ້ມຄອງ ແລະ ແກ້ໄຂໜີ້ສາທາລະນະ.

**2) ດ້ານເງິນຕາ**

- ດໍາເນີນນະໂຍບາຍເງິນຕາໃຫ້ມີຄວາມເປັນເອກະລາດ ເປັນເຈົ້າຕົນເອງ ເພື່ອເປົ້າໝາຍຮັກສາສະຖຽນລະພາບດ້ານເງິນຕາ ເປັນຕົ້ນ ການກໍານົດອັດຕາດອກເບ້ຍພື້ນຖານຂອງ ທຫລ, ອັດຕາສ່ວນເງິນແຮຝາກບັງຄັບ ແລະ ບັນດາເຄື່ອງມືນະໂຍບາຍເງິນຕາອື່ນໆໃຫ້ແທດເໝາະ ແລະ ສອດຄ່ອງຕາມສະພາບເສດຖະກິດໃນແຕ່ລະໄລຍະ;

- ດໍາເນີນນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ, ຄົ້ນຄວ້າ ແລະ ພັດທະນາເຄື່ອງມືດ້ານນະໂຍບາຍ ແລະ ໝູນໃຊ້ເຕັກໂນໂລຊີທີ່ທັນສະໄໝ ເພື່ອຄຸ້ມຄອງຕະຫຼາດແລກປ່ຽນເງິນຕາຕ່າງປະເທດໃຫ້ມີຄວາມຄ່ອງຕົວ ແລະ ຮັບປະກັນການສະໜອງເງິນຕາຕ່າງປະເທດໃຫ້ແກ່ຄວາມຕ້ອງການສັງຄົມທີ່ເໝາະສົມ ເພື່ອເຮັດໃຫ້ອັດຕາແລກປ່ຽນມີສະຖຽນລະພາບ ແລະ ຫຼຸດຜ່ອນຄວາມກົດດັນຕໍ່ອັດຕາເງິນເຟີ້;

- ພັດທະນາ ແລະ ຄຸ້ມຄອງລະບົບການຊໍາລະແຫ່ງຊາດ ໃຫ້ມີຄວາມທັນສະໄໝ ແລະ ລວມສູນ ທັງຍົກສູງບົດບາດເງິນກີບ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນຫຼາກຫຼາຍຮູບແບບ;

- ປັບປຸງຖານະການເງິນ ຂອງທະນາຄານ ແຫ່ງ ສປປ ລາວ ໃຫ້ມີຄວາມເຂັ້ມແຂງ ;

- ຍົກລະດັບການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ໃຫ້ໄດ້ມາດຕະຖານສາກົນຫຼາຍຂຶ້ນ ;

- ພັດທະນາລະບົບຊໍາລະສະກຸນເງິນທ້ອງຖິ່ນໃຫ້ໂປ່ງໃສ, ສະດວກໃຫ້ແກ່ຜູ້ຊົມໃຊ້ ເຂົ້າໃນການເຊື່ອມໂຍງທາງດ້ານການຄ້າ-ການລົງທຶນກັບພາກພື້ນ ແລະ ສາກົນ; ສົ່ງເສີມການຊໍາລະແບບບໍ່ໃຊ້ເງິນສົດ, ການເງິນຮອບດ້ານ ແລະ ການເຂົ້າເຖິງການບໍລິການທາງດ້ານການເງິນຂອງປະຊາກອນ.

- ພັດທະນາລະບົບທະນາຄານ (ຕະຫຼາດເງິນຕາ) ແລະ ລະບົບຕະຫຼາດທຶນ ໃຫ້ເປັນແຫຼ່ງສໍາຄັນໃນການສະສົມທຶນຮອນ-ການລົງທຶນ ແລະ ເປັນກົນໄກກະຈາຍແຫຼ່ງທຶນ ກໍ່ຄືລະບົບການຊໍາລະສະສາງທີ່ສະດວກ, ວ່ອງໄວ, ປອດໄພ ແລະ ຮັບປະກັນການສະໜອງທຶນໃຫ້ແກ່ການດໍາເນີນການຜະລິດ-ທຸລະກິດ ແລະ ການບໍລິການ ໂດຍສະເພາະແມ່ນເປົ້າໝາຍວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ;

- ຄຸ້ມຄອງອັດຕາເງິນເຟີ້ໃຫ້ໄປຕາມເປົ້າໝາຍທີ່ກໍານົດໄວ້, ສ້າງຄວາມກົມກຽວລະຫວ່າງການຄຸ້ມຄອງເປົ້າໝາຍເງິນເຟີ້ ແລະ ການເຕີບໂຕເສດຖະກິດ ແລະ ເພີ່ມຄັງສໍາຮອງເງິນຕາຕ່າງປະເທດ ດ້ວຍການເລັ່ງສ້າງ ແລະ ເກັບລາຍຮັບທີ່ເປັນເງິນຕາ, ສຸມໃສ່ການຜະລິດ ແລະ ບໍລິການທີ່ຫຼາກຫຼາຍ ເພື່ອສະໜອງຕະຫຼາດພາຍໃນ ແລະ ສົ່ງອອກ.

- ຄຸ້ມຄອງເງິນຕາຕ່າງປະເທດ ໃຫ້ມີຄວາມເຂັ້ມແຂງ, ທັນສະໄໝ ແລະ ເປັນລະບົບຄົບຊຸດ, ແທດເໝາະກັບສະພາບຕົວຈິງ, ເຂັ້ມງວດການປະຕິບັດມາດຕະການໃນການຄຸ້ມຄອງເງິນຕາຕ່າງປະເທດ, ພ້ອມທັງຍົກສູງຄຸນຄ່າເງິນກີບ ແລະ ຫັນການຄຸ້ມຄອງທຸກແຫຼ່ງເງິນຕາຕ່າງປະເທດ ໃຫ້ເຂົ້າສູ່ລະບົບທະນາຄານໃຫ້ຫຼາຍຂຶ້ນ ເພື່ອປະກອບສ່ວນເພີ່ມຄວາມອາດສາມາດໃນການຊໍາລະລະຫວ່າງປະເທດ ແລະ ສ້າງຖານະຄັງສໍາຮອງເງິນຕາຕ່າງປະເທດ ໃຫ້ມີຄວາມເຂັ້ມແຂງ.

DRAFT

### *3.1.3ແຜນວຽກຈຸດສຸມທີ 3: ຍົກສູງປະສິດທິພາບການລົງທຶນ ໃຫ້ມີຄຸນນະພາບ ແລະ ມີປະສິດທິຜົນສູງ*

**1. ຄາດໝາຍລະດັບແຜນວຽກຈຸດສຸມ**

- ຄວາມຕ້ອງການທຶນເພື່ອການພັດທະນາ 5 ປີ ຈຳນວນ 584.033 ຕື້ກີບ ເທົ່າກັບ 22.24% ຂອງ GDP ຂຶ້ນໄປ, ໃນນີ້
  - ການລົງທຶນຈາກງົບປະມານພາຍໃນ 116,000 ຕື້ກີບເທົ່າກັບ 19.86% ຂອງການລົງທຶນທັງໝົດ,
  - ການຊ່ວຍເຫຼືອທາງການເພື່ອການພັດທະນາ 71,277 ຕື້ກີບ ເທົ່າກັບ 12.20% ຂອງການລົງທຶນທັງໝົດ,
  - ການລົງທຶນຂອງພາກເອກະຊົນພາຍໃນ ແລະ ຕ່າງປະເທດ 360,406 ຕື້ກີບ ເທົ່າກັບ 61.71% ຂອງການລົງທຶນທັງໝົດ ແລະ
  - ການລົງທຶນອື່ນໆ 36,349 ຕື້ກີບ ເທົ່າກັບ 6.22% ຂອງການລົງທຶນທັງໝົດ.

**2. ວຽກຈຸດສຸມ**

1) ການລົງທຶນພາກລັດ: ສຸມໃສ່ປັບໂຄງສ້າງການລົງທຶນຄືນໃໝ່, ຍົກສູງປະສິດທິຜົນການລົງທຶນຂອງລັດ, ສຸມງົບປະມານເຂົ້າໃນບັນດາໂຄງການຈຸດສຸມ ເພື່ອແກ້ໄຂບັນຫາການພັດທະນາຂອງຊາດ, ເຂດແຄວ້ນ ແລະ ທ້ອງຖິ່ນ, ໃຫ້ບູລິມະສິດ ການລົງທຶນການພັດທະນາໂຄງລ່າງພື້ນຖານຄົມມະນາຄົມ, ການສຶກສາ, ສາທາລະນະສຸກ ສຳລັບເຂດຊົນນະບົດ, ເຂດພູດອຍຫ່າງໄກສອກຫຼີກ ເພື່ອຮັບປະກັນການເຊື່ອມຕໍ່ຢ່າງເປັນລະບົບ ລະຫວ່າງຊົນນະບົດກັບຕົວເມືອງ, ເຂດພູດອຍກັບເຂດທົ່ງພຽງ ແນໃສ່ສ້າງເງື່ອນໄຂສິ່ງອຳນວຍຄວາມສະດວກ ໃນການດຶງດູດການລົງທຶນຂອງພາກເອກະຊົນພາຍໃນ ແລະ ການລົງທຶນໂດຍກົງ ຈາກຕ່າງປະເທດ ເພື່ອສ້າງເປັນປັດໄຈພື້ນຖານໃຫ້ແກ່ການສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງທີ່ຍືນຍົງ ແລະ ທົ່ວເຖິງ; ຫຼີກເວັ້ນການສ້າງໂຄງການລົງທຶນທີ່ບໍ່ໄປຕາມກົດໝາຍ ແລະ ລະບຽບການ, ເລັ່ງຊຳລະໜີ້ສິນໂຄງການລົງທຶນ, ກວດກາ ແລະ ພິຈາລະນາຄືນ ການໂຈະໂຄງການລົງທຶນລັດທີ່ບໍ່ສອດຄ່ອງກັບ ແຜນການ 5 ປີ ຄັ້ງທີ X ຫຼື ໂຄງການທີ່ມີຄ່າໃຊ້ຈ່າຍສູງຂຶ້ນ ແຕ່ຜົນຕອບແທນຕໍ່າ ຖ່ວງດຶງງົບປະມານ, ຮັບປະກັນຄວາມກົມກຽວລະຫວ່າງ ການວາງແຜນພັດທະນາ ແລະ ແຜນງົບປະມານ.

2) ການຊ່ວຍເຫຼືອທາງການເພື່ອການພັດທະນາ: ຮັບປະກັນຄວາມມີປະສິດທິພາບ ແລະ ປະສິດທິຜົນຂອງ ODA ດ້ວຍການສືບຕໍ່ຜັນຂະຫຍາຍ,ປັບປຸງນິຕິກຳ ໃນການຄຸ້ມຄອງ ແລະ ນຳໃຊ້ການຊ່ວຍແຫຼືອທາງການເພື່ອການພັດທະນາໃຫ້ສອດຄ່ອງກັບສະພາບຕົວຈິງແຕ່ລະໄລຍະ ແລະ ສຸມໃສປັບປຸງລະບົບຄຸ້ມຄອງການຊ່ວຍເຫຼືອທາງການເພື່ອການພັເດທະນາ(ODA-MIS) ລະບົບເອເລັກໂຕຣນິກ, ເພື່ອເປັນບ່ອນອີງໃຫ້ແກ່ການຈັດສັນງົບປະມານ ແລະ ການກຳນົດແຜນວຽກຂອງບັນດາກະຊວງຂະແໜງການ, ແຂວງ ແລະ ຄູ່ຮ່ວມພັດທະນາໃຫ້ມີຄວາມສອດຄ່ອງ ກັບແຜນບູລິມະສິດການພັດທະນາ. ເຖິງແນວໃດກໍ່ຕາມ ຄວາມສາມາດຂອງພາກລັດ ໃນການນຳໃຊ້ທຶນຊ່ວຍເຫຼືອເພື່ອການພັດທະນາແມ່ນຈຳກັດ, ຂອດການປະສານງານກັບຄູ່ຮ່ວມພັດທະນາ ແລະ ລະຫວ່າງຄູ່ຮ່ວມພັດທະນາເອງ ຍັງບໍ່ທັນກົມກຽວສະແດງອອກ ລະບຽບການ ແລະ ເງື່ອນໄຂທີ່ມີຄວາມສະລັບຊັບຊ້ອນໃນການຈັດຕັ້ງປະຕິບັດ. ພ້ອມກັນນີ້, ຜັນຂະຫຍາຍບັນດານະໂຍບາຍ ແລະ ມາດຕະການທີ່ໄດ້ກຳນົດໃນຍຸດທະສາດການຂ້າມຜ່ານແບບໂລ່ງລ່ຽນ ເພື່ອຮັບປະກັນການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ບໍ່ໃຫ້ກະທົບຕໍ່ການພັດທະນາ. ທົບທວນຂອບສັນຍາການຮ່ວມມືສາກົນ ແລະ ຂະບວນການກອງປະຊຸມໂຕະມົນ ແລະ ໜ່ວຍງານຂະແໜງການ ເພື່ອສົ່ງເສີມກົນໄກການຮ່ວມມືແບບມີສ່ວນຮ່ວມແນໃສ່ອຳນວຍຄວາມສະດວກໃນການວາງແຜນຮ່ວມກັນໂດຍອີງໃສ່ຫຼັກຖານ ແລະ ການຈັດຕັ້ງປະຕິບັດແຜນງານ ທີ່ປະກອບສ່ວນຕໍ່ກັບເປົ້າໝາຍໃຫຍ່ແຜນການ 5 ປີ ຄັ້ງທີ X.

3) ການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ: ເລັ່ງຈັດຕັ້ງປະຕິບັດຄຳສັ່ງນາຍົກລັດຖະມົນຕີ ເລກທີ 02/ນຍ ແລະ 03/ນຍ ເພື່ອສ້າງສະພາບແວດລ້ອມສິ່ງອຳນວຍຄວາມສະດວກໃຫ້ແກ່ການເລີ່ມຕົ້ນ ແລະ ດຳເນີນທຸລະກິດ, ໂດຍສະເພາະການເຜີຍແຜ່ກ່ຽວກັບການປ່ຽນແປງດ້ານນິຕິກຳລະບຽບການທີ່ຕິດພັນກັບວຽກການວິສະຫະກິດ ແລະ ວຽກງານຂອງອະນຸຍາດດຳເນີນທຸລະກິດ, ສຸມໃສສ້າງ ແລະ ພັດທະນາລະບົບການຂຶ້ນທະບຽນວິສະຫະກິດທາງເອເລັກໂຕຣນິກໃຫ້ສຳເລັດ ແລະ ສາມາດປະຕິບັດໄດ້ເພື່ອເປັນການຫລຸດຜ່ອນຄ່າໃຊ້ຈ່າຍທີ່ບໍ່ຈຳເປັນ, ຫລຸດຜ່ອນເວລາ ແນໃສ່

DRAFT

ດຶງດູດການລົງທຶນເຂົ້າໃນຂະແໜງບູລິມະສິດ ແລະ ຂະແໜງສີຂຽວ ໄປຄຽງຄູ່ກັບການສ້າງຄວາມເຊື່ອໝັ້ນໃຫ້ຜູ້ລົງທຶນ; ສົ່ງເສີມການລົງທຶນຮ່ວມມືພາກລັດ-ເອກະຊົນ (PPP) ທີ່ມີປະສິດຕິພາບ ເຂົ້າໃນການກໍ່ສ້າງໂຄງລ່າງພື້ນຖານສາທາລະນະ ໂດຍສະເພາະ ເສັ້ນທາງຄົມມະນາຄົມເພື່ອເຊື່ອມໂຍງເຊື່ອມຈອດ, ດ້ານ ICT,... ພ້ອມນັ້ນ, ກໍ່ຄົ້ນຄວ້າປັບປຸງນະໂຍບາຍເອື້ອອໍານວຍ ແລະ ສ້າງແຮງຈູງໃຈ ດ້ວຍການພັດທະນາ ຂະແໜງການບູລິມະສິດ, ການເຊື່ອມໂຍງຕ່ອງໂສ້ການຜະລິດພາກພື້ນ ແລະ ສາກົນ ແລະ ຮັບປະກັນການດໍາເນີນທຸລະກິດ ຢ່າງມີຄວາມຮັບຜິດຊອບ; ສ້າງຄວາມກົມກຽວອັດຕາອາກອນເພື່ອຊຸກຍູ້ການເກັບລາຍຮັບ ລວມທັງຄວາມສາມາດໃນການຄາດຄະເນລາຍຮັບ, ການຂຶ້ນທະບຽນທຸລະກິດ ແລະ ອື່ນໆ.

4) ການລົງທຶນຈາກແຫຼ່ງທຶນອື່ນໆ: ສົ່ງເສີມການປະກອບສ່ວນຂອງສັງຄົມຕໍ່ການພັດທະນາເສດຖະກິດ-ສັງຄົມ, ອໍານວຍຄວາມສະດວກໃນການໂອນເງິນກັບປະເທດຂອງແຮງງານລາວ ທີ່ໄປເຮັດວຽກຢູ່ຕ່າງປະເທດ ໃຫ້ມີຄວາມວ່ອງໄວ ແລະ ມີຄ່າທໍານຽມທີ່ເໝາະສົມ.

### *3.1.4ແຜນວຽກຈຸດສຸມທີ 4: ພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໄປສູ່ຄຸນນະພາບໃໝ່ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ.*

**1. ຄາດໝາຍລະດັບແຜນວຽກຈຸດສຸມ**

- ຈໍານວນວິສາຫະກິດຂຶ້ນທະບຽນໃໝ່ ໃຫ້ເພີ່ມຂຶ້ນ 10% ຕໍ່ປີ.
- ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ປະກອບສ່ວນຕໍ່ GDP 20% ຕໍ່ປີ.
- ຊຸກຍູ້ການເຂົ້າເຖິງສິນເຊື່ອຂອງຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs) ໃຫ້ເພີ່ມຂຶ້ນກວມເອົາ 35% ຕໍ່ຈໍານວນສິນເຊື່ອຂອງຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs) ທັງໝົດ, ອັດຕາສ່ວນສິນເຊື່ອຂະແໜງກະສິກໍາ-ປຸງແຕ່ງ ຕໍ່ສິນເຊື່ອທັງໝົດ ເພີ່ມເປັນຢ່າງໜ້ອຍ 20% ໃນທ້າຍປີ 2030;
- ຫົວໜ່ວຍທຸລະກິດ ໄດ້ຮັບໂອດ໊ອບ (ODOP) ເພີ່ມຂຶ້ນ 20 ຫົວໜ່ວຍຕໍ່ປີ.
- ແຮງງານ ທີ່ສັງກັດຢູ່ໃນ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງກວມເອົາ 80%.

**2. ວຽກຈຸດສຸມ:**

1) ການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ຈນກ) ເຂົ້າເຖິງແຫຼ່ງທຶນ: ປັບປຸງໂຄງລ່າງ ແລະ ສະພາບແວດລ້ອມ ດ້ານສິນເຊື່ອ ໂດຍຫຼຸດຜ່ອນຂອດຂັ້ນ ແລະ ເງື່ອນໄຂທີ່ບໍ່ຈໍາເປັນໃນການເຂົ້າເຖິງສິນເຊື່ອ, ພ້ອມທັງ ສ້າງເງື່ອນໄຂໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ສາມາດເຂົ້າລະດົມທຶນຜ່ານຕະຫຼາດທຶນ, ສະໜອງທຶນໃຫ້ທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ໃຫ້ຫຼາຍຂຶ້ນ ໃນອັດຕາດອກເບ້ຍ, ໄລຍະເວລາ ແລະ ເງື່ອນໄຂ ທີ່ເໝາະສົມ ໂດຍໃຫ້ບູລິມະສິດແກ່ ຈນກ ທີ່ຢູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ; ສ້າງຄວາມເຂັ້ມແຂງຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ໃຫ້ສາມາດສະໜອງສິນເຊື່ອແກ່ ຈນກ ໃນການປະເມີນຄວາມສ່ຽງ ແລະ ສະໜອງສິນເຊື່ອທີ່ມີຫົວຄິດປະດິດສ້າງທີ່ແທດເໝາະຕາມສະພາບຕົວຈິງ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ ; ສ້າງຄວາມເຂັ້ມແຂງໃຫ້ ຈນກ ຮູ້ຫຼັກການ ແລະ ສ້າງຄວາມເຂົ້າໃຈກ່ຽວກັບຂັ້ນຕອນໃນການສະເໜີຂໍສິນເຊື່ອ ເພື່ອເຮັດໃຫ້ຂັ້ນຕອນການອະນຸມັດວ່ອງໄວ ແລະ ທັນການ.

2) ການສົ່ງເສີມໃຫ້ເກີດມີທຸລະກິດໃໝ່ ແລະ ທຸລະກິດແບບສະຕາດອັບ (start-up) : ເພື່ອສົ່ງເສີມ ແລະ ຍົກລະດັບຄວາມເຂັ້ມແຂງຂອງລະບົບນິເວດທຸລະກິດແບບສະຕາດອັບ, ທຸລະກິດແຟຣນຊາຍ, ທຸລະກິດແບບທົ່ວເຖິງ, ທຸລະກິດເພື່ອສັງຄົມ ແລະ ຮູບແບບອື່ນ ທີ່ກະຕຸ້ນໃຫ້ເກີດມີຜູ້ປະກອບກິດຈະການໃໝ່ ລັດຖະບານ ແລະ ພາກເອກະຊົນຕ້ອງຮ່ວມມືກັນຢ່າງໃກ້ຊິດ ເພື່ອປຶກສາຫາລື ແລະ ປັບປຸງສະພາບແວດລ້ອມທີ່ເອື້ອອໍານວຍ ເປັນຕົ້ນ ການບຸກທະລຸດ້ານເຕັກໂນໂລຊີ, ປັບປຸງພື້ນຖານໂຄງລ່າງຄົມມະນາຄົມ, ອິນເຕີເນັດທີ່ມີຄຸນນະພາບ ແລະ ອັດຕາຄ່າບໍລິການທີ່ບໍ່ສູງ, ສ້າງນະໂຍບາຍ ແລະ ຍຸດທະສາດໃນການພັດທະນາ ແລະ ສົ່ງເສີມຜູ້ປະກອບການໃໝ່ ໃຫ້ມີຄວາມເຂັ້ມແຂງ, ຍືນຍົງ ແລະ ສາມາດແຂ່ງຂັນໄດ້ ໃນລະດັບພາກພື້ນ ແລະ ສາກົນ. ພ້ອມນີ້, ຄົ້ນຄວ້າລະບຽບການກ່ຽວກັບ ການຄຸ້ມຄອງ ແລະ ປົກປ້ອງຊັບສິນທາງປັນຍາເພື່ອຫຼີກລ້ຽງການເສຍປຽບຂອງຜູ້ປະກອບການ. ເສີມຂະຫຍາຍເຄືອຂ່າຍການຮ່ວມມືກັບບັນດາມະຫາວິທະຍາໄລ ແລະ ໂຮງຮຽນວິຊາຊີບ ເພື່ອຍົກລະດັບຄວາມຮູ້ຄວາມສາມາດ ຂອງໄວໜຸ່ມ ທັງຍັງເປັນການສ້າງສັງຄົມຂອງຜູ້ປະກອບການແຕ່ຫົວທີ ແລະ ສ້າງກົນໄກເຊື່ອມໂຍງລະຫວ່າງສະຖາບັນການສຶກສາເຫຼົ່ານີ້ກັບຫົວໜ່ວຍທຸລະກິດ.

DRAFT

3) ການສ້າງຄວາມເຂັ້ມແຂງ: ເພີ່ມທະວີການຮ່ວມມືລະຫວ່າງຜູ້ສະໜອງບໍລິການວິຊາການ, ສະພາອຸດສາຫະກຳ ແລະ ການຄ້າ ແລະ ຄູ່ຮ່ວມພັດທະນາ ໃນການສະໜອງບໍລິການວິຊາການ ເພື່ອພັດທະນາທຸລະກິດດ້ານຕ່າງໆ ເຊັ່ນ ການຄຸ້ມຄອງບໍລິຫານທຸລະກິດ, ການເງິນ ແລະ ການເຂົ້າເຖິງຕະຫຼາດ ໃຫ້ ຈນກ ຢ່າງກວ້າງຂວາງ ແລະ ແທດເໝາະ ກັບຄວາມຕ້ອງການ ເປັນຕົ້ນ ເຂດຊົນນະບົດແລະ ຫ່າງໄກສອກຫຼີກ ; ຈັດຕັ້ງປະຕິບັດບັນດາໂຄງການຈຸດສຸມທີ່ບັນຈຸໃນແຜນແມ່ບົດຜະລິດຕະພາບແຫ່ງຊາດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ; ພ້ອມກັນນັ້ນ ຊຸກຍູ້, ສົ່ງເສີມ ຈນກ ຄົ້ນຄວ້າ ແລະ ນຳໃຊ້ເຕັກໂນໂລຊີທີ່ກ້າວໜ້າ ແລະ ເປັນມິດຕໍ່ສິ່ງແວດ ລ້ອມ ເຂົ້າໃນການຜະລິດສິນຄ້າ, ການຄ້າ ແລະ ການບໍລິການ, ສ້າງເງື່ອນໄຂສະດວກໃຫ້ ຈນກ ປະດິດສ້າງ, ປະດິດຄິດແຕ່ງ, ສ້າງເສດຖະກິດພູມປັນຍາ ແລະ ນຳໃຊ້ສິດທາງດ້ານຊັບສິນທາງປັນຍາ.

4) ການເຂົ້າເຖິງ ແລະ ຂະຫຍາຍຕະຫຼາດ: ສ້າງເງື່ອນໄຂໃຫ້ພາກສ່ວນຕ່າງໆ ຈັດງານວາງສະແດງສິນຄ້າ ແລະ ການບໍລິການ ຢູ່ພາຍໃນ ແລະ ຕ່າງປະເທດ ພ້ອມທັງສ້າງເງື່ອນໄຂ ແລະ ໃຫ້ການຊ່ວຍເຫຼືອ ຜູ້ປະກອບກິດຈະການ ສາມາດເຂົ້າຮ່ວມງານວາງສະແດງສິນຄ້າຢູ່ພາຍໃນ ແລະ ຕ່າງປະເທດ, ສ້າງເງື່ອນໄຂ ແລະ ໃຫ້ໂອກາດ ຈນກ ສາມາດເຂົ້າເຖິງ ການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ແລະ ໂຄງການຕ່າງໆ ; ພ້ອມກັນນັ້ນ ສ້າງເງື່ອນໄຂ ໃຫ້ມີການຈັບຄູ່ໃນການຊື້-ຂາຍ ສິນຄ້າ ; ການຊື້ຂາຍຜ່ານລະບົບການຄ້າທາງເອເລັກໂຕຣນິກ ; ສົ່ງເສີມໃຫ້ ຈນກ ຮ່ວມມືກັບທຸລະກິດຂະໜາດໃຫຍ່ ພ້ອມທັງ ເຂົ້າຮ່ວມໃນຕ່ອງໂສ້ມູນຄ່າເພີ່ມຢູ່ພາຍໃນ, ພາກພື້ນ ແລະ ສາກົນ.

### *3.1.5ແຜນວຽກຈຸດສຸມທີ 5: ພັດທະນາລັດວິສາຫະກິດ ແລະ ເສດຖະກິດລວມໝູ່ຂອງປະຊາຊົນ ມີຄຸນນະພາບ ແລະ ມີຄວາມເຂັ້ມແຂງ.*

ປະຕິຮູບ, ຄຸ້ມຄອງ ແລະ ພັດທະນາພາກວິສະຫະກິດລັດລົງທຶນໃຫ້ມີຄວາມເຂັ້ມແຂງຫຼາຍຂຶ້ນ ໃຫ້ສາມາດປະກອບສ່ວນໃນລະບົບເສດຖະກິດແຫ່ງຊາດແຂງແຮງ ເພື່ອສ້າງລາຍຮັບທີ່ໝັ້ນຄົງເຂົ້າງົບປະມານ, ເຮັດໜ້າທີ່ບໍລິການສັງຄົມໃນວຽກງານທີ່ເປັນຍຸດທະສາດຂອງລັດ ແລະ ລັດຖະບານ. ບັນດາຫົວໜ່ວຍທຸລະກິດທີ່ໄດ້ປັບປຸງແລ້ວ ຕ້ອງດຳເນີນທຸລະກິດມີຜົນກຳໄລ ແລະ ມອບພັນທະໃຫ້ລັດຖະບານ ນັບມື້ເພີ່ມຂຶ້ນ ໂດຍສະເພາະ ບໍລິສັດໄຟຟ້າລາວ, ນ້ຳມັນເຊື້ອໄຟລາວ, ການບິນລາວ ແລະ ບໍລິສັດຫຸ້ນສ່ວນຕ່າງໆ. ຮີບຮ້ອນສ້າງຕັ້ງ ແລະ ປັບປຸງລັດວິສາຫະກິດຈຳນວນໜຶ່ງ. ສົ່ງເສີມເສດຖະກິດລວມໝູ່ຂອງປະຊາຊົນ ໃຫ້ມີຄວາມເຂັ້ມແຂງ ແລະ ສ້າງວຽກເຮັດງານທຳ ແລະ ລາຍຮັບໃຫ້ແກ່ຊຸມຊົນທີ່ຍືນຍົງ.

1. **ຄາດໝາຍລະດັບແຜນວຽກຈຸດສຸມ**
2. **ວຽກຈຸດສຸມ:**

- ສຸມໃສ່ດຳເນີນການປະເມີນບັນດາວິສະຫະກິດເພື່ອກຳນົດເອົາວິສະຫະກິດລັດລົງທຶນທີ່ບໍ່ມີປະສິດທິຜົນເຂົ້າໃນແຜນປະຕິຮູບ ແລະ ສືບຕໍ່ປະຕິຮູບ 21 ຫົວໜ່ວຍ ທີ່ຍັງເຫຼືອ ຕາມມະຕິສະບັບເລກທີ 10/ລບ, ລົງວັນທີ 15 ຕຸລາ 2021;
- ສ້າງຍຸດທະສາດການປະຕິຮູບ, ຄຸ້ມຄອງ ແລະ ພັດທະນາ ໄລຍະ 2026-2030;
- ສືບຕໍ່ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳທີ່ກ່ຽວກັບການປະຕິຮູບ, ຄຸ້ມຄອງ ແລະ ພັດທະນາ ເພື່ອຫຼຸດຜ່ອນສິ່ງອຸດຕັນທີ່ພາໃຫ້ເກີດປະກົດການຫຍໍ້ທໍ້ໃນການຄຸ້ມຄອງ ວິສາຫະກິດລັດລົງທຶນໃຫ້ຂາດຕົວ, ຍົກສູງຄວາມເປັນເຈົ້າການໃນການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການກ່ຽວຂ້ອງໃຫ້ມີຄວາມໂປ່ງໃສ ແລະ ສາມາດກວດສອບໄດ້
- ສືບຕໍ່ປັບປຸງຖານຂໍ້ມູນຂອງວິສະຫະກິດລັດລົງທຶນທົ່ວປະເທດໃຫ້ມີຄວາມຊັດເຈນ ແລະ ເຂົ້າສູ່ລະບົບຄຸ້ມຄອງທີ່ທັນສະໄໝ;
- ເພີ່ມທະວີສ້າງຄວາມສາມາດໃຫ້ແກ່ພະນັກງານໃນຂັ້ນບໍລິຫານ ແລະ ວິຊາການ ພ້ອມທັງ ສົ່ງເສີມການນຳໃຊ້ນະວັດຕະກຳ ແລະ ເຕັກໂນໂລຢີທີ່ທັນສະໄໝເຂົ້າໃນການປະຕິບັດ ຕາມມະຕິສະບັບເລກທີ 10/ລບ, ລົງວັນທີ 15 ຕຸລາ 2021;
- ຫັນວິສາຫະກິດໃຫ້ເປັນມະຫາຊົນເທື່ອລະກ້າວ ແລະ ໃຫ້ມີຄວາມໂປ່ງໃສ, ຄຽງຄູ່ກັບການກຳນົດຕົວຊີ້ບອກ ທີ່ສາມາດວັດແທກ ແລະ ລາຍງານໄດ້ ; ຄົ້ນຄວ້າກິດຈະການທີ່ມີຄວາມແທດເໝາະສຳລັບການມີສ່ວນຮ່ວມຂອງພາກເອກະຊົນ ເພື່ອຫຼຸດຜ່ອນຄວາມສ່ຽງຕໍ່ຖານະການເງິນພາກລັດ ແລະ ອື່ນໆ.

### *3.1.6 ແຜນວຽກຈຸດສຸມທີ 6: ພັດທະນາເສດຖະກິດດິຈິຕອນໃຫ້ມີຄວາມເຂັ້ມແຂງ ເພື່ອຂັບເຄື່ອນການພັດທະນາເສດຖະກິດ-ສັງຄົມ ໃຫ້ມີການຂະຫຍາຍຕົວທີ່ຍືນຍົງ*

1. **ຄາດໝາຍລະດັບແຜນວຽກຈຸດສຸມ**
2. **ວຽກຈຸດສຸມ**

- ການພັດທະນາໂຄງລ່າງດິຈິຕອນ: ເພື່ອຮັບປະກັນການຫັນເປັນດິຈິຕອນ ຈະຕ້ອງສຸມໃສ່ການຈັດສັນງົບປະມານ ແລະ ລະດົມການສະໜັບສະໜູນຈາກທຸກແຫຼ່ງ ເພື່ອພັດທະນາໂຄງລ່າງດິຈິຕອນ ໂດຍສະເພາະລະບົບ ບອດແບນ (Broadband) ເປັນຕົ້ນ ສາຍໄຍແກ້ວ (Fiber Optic) ເພື່ອຮັບປະກັນອິນເຕີເນັດຄວາມໄວສູງ ໂດຍສະເພາະຢູ່ເຂດຫ່າງໄກສອກຫຼີກ ຄຽງຄູ່ກັບການຂະຫຍາຍໂຄງລ່າງ ແລະ ຕາໜ່າງສັນຍານໂທລະສັບມືຖື ແລະ ສ້າງຕັ້ງກວດກາຄຸນນະພາບການບໍລິການແຫ່ງຊາດ ແລະ ຄຸ້ມຄອງຄຸນນະພາບໃຫ້ໄດ້ຕາມມາດຖານສາກົນ ເພື່ອອໍານວຍຄວາມສະດວກໃຫ້ແກ່ການໂທລະຄົມມະນາຄົມ. ພ້ອມນີ້, ສ້າງ ແລະ ພັດທະນາສູນຂໍ້ມູນຂ່າວສານ (data center) ແລະ ການຄຸ້ມຄອງການຈັດເກັບຂໍ້ມູນຜ່ານລະບົບຄຼາວ (cloud), ສ້າງສູນກວດກາຄຸນນະພາບອຸປະກອນດິຈິຕອນ, ຍົກລະດັບການລົງທຶນໃນຂະແໜງໂຄງລ່າງດິຈິຕອນພາກລັດ ເພື່ອການສະໜອງການບໍລິການທີ່ວ່ອງໄວ ແລະ ໂປ່ງໃສ ຮັບປະກັນຄວາມປອດໄພ ແລະ ສະກັດກັ້ນການໂຈລະກໍາທາງໄຊເບີ ເພື່ອສ້າງຄວາມໝັ້ນໃຈໃຫ້ແກ່ຜູ້ຊົມໃຊ້, ຂະຫຍາຍລະບົບການຊໍາລະດິຈິຕອນໃນຫຼາກຫຼາຍຂະແໜງການຜະລິດ ແລະ ບໍລິການ, ສຸມທຶນໃສ່ລະບົບໂຄງລ່າງການສຶກສາດິຈິຕອນ ເພື່ອຮັບປະກັນການສ້າງແຮງງານໃນຂະແໜງດິຈິຕອນທີ່ມີຄຸນນະພາບ ແລະ ມີຄວາມສາມາດແຂ່ງຂັນ, ຈັດສັນທຶນຮອນເຂົ້າໃນຂະແໜງເທັກສະຕາດອັບ (Tech start-up) ແລະ ຈັດການແຂ່ງຂັນຜູ້ປະກອບການໃນຂະແໜງດິຈິຕອນ ເພື່ອກະຕຸ້ນນະວັດຕະກໍາໃໝ່ໆ.
- ການຮ່ວມມືເສດຖະກິດດິຈິຕອນໃນລະດັບພາກພື້ນ: ສືບຕໍ່ມີສ່ວນຮ່ວມຢ່າງຫ້າວຫັນໃນຂອບຮ່ວມມືດິຈິຕອນ ເປັນຕົ້ນ ຂອບການຮ່ວມມືເຊື່ອມໂຍງດິຈິຕອນອາຊຽນ (ASEAN Digital Integration Framework) ເພື່ອຍົກລະດັບການເຊື່ອມຕໍ່ກິດຈະກໍາດິຈິຕອນລະຫວ່າງປະເທດສະມາຊິກ ; ເຄືອຄ່າຍຕົວເມືອງອັດສະລິຍະອາຊຽນ (ASEAN Smart Cities Network) ເພື່ອປຶກສາຫາລື ແລະ ແກ້ໄຂບັນຫາການຂະຫຍາຍຕົວຂອງຕົວເມືອງ ດ້ວຍການນໍາໃຊ້ເຕັກໂນໂລຢີທັນສະໄໝ ເຊິ່ງໃນນີ້ ນະຄອນຫຼວງວຽງຈັນ ໄດ້ຖືກກໍານົດໃຫ້ເປັນໜຶ່ງໃນຕົວເມືອງທົດລອງໃນໂຄງການດັ່ງກ່າວ ; ຂອບການຟື້ນຟູອາຊຽນ (ASEAN Comprehensive Recovery Framework) ເພື່ອແກ້ໄຂບັນຫາ ແລະ ສິ່ງທ້າທາຍທີ່ເກີດຈາກການແຜ່ລະບາດໂຄວິດ-19 ໂດຍສຸມໃສ່ການຫັນປ່ຽນດ້ານດິຈິຕອນຂອງອາຊຽນ ແລະ ຂອບການຮ່ວມມືອື່ນໆເຊັ່ນ: ການຊ່ວຍເຫຼືອດ້ານວິຊາການ ແລະ ການສ້າງຂີດຄວາມສາມາດ (ASEAN Capacity Building and Technical Assistance), ແຜນແມ່ບົດການເຊື່ອມຈອດອາຊຽນ 2025 (ASEAN Connectivity Master Plan 2025) ແລະ ອື່ນໆ.

## 3.2 ເປົ້າໝາຍທີ 2: ພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບສູງຂຶ້ນ ແລະ ສາມາດຮູ້ນໍາໃຊ້ເຕັກໂນໂລຊີທີ່ທັນສະໄໝ

ສືບຕໍ່ພັດທະນາເສດຖະກິດໃຫ້ເຂັ້ມແຂງຕ້ອງໄປຄຽງຄູ່ກັບພັດທະນາສັງຄົມ ໂດຍສະເພາະແມ່ນການພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບສູງຂຶ້ນ ໂດຍສອດຄ່ອງກັບທ່າແຮງບົ່ມຊ້ອນ ແລະ ຕອບສະໜອງຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ ແລະ ຄວາມຕ້ອງການຂອງຕະຫຼາດແຮງງານ, ສ້າງ ແລະ ພັດທະນາຊັບພະຍາກອນມະນຸດໃຫ້ກາຍເປັນທຶນ, ຖືເອົາການພັດທະນາການສຶກສາໃຫ້ໄປກ່ອນບາດກ້າວໜຶ່ງ ໂດຍສະເພາະ ການນໍາໃຊ້ທ່າແຮງຂອງປະຊາກອນໜຸ່ມ ທີ່ເປັນນັກຮຽນຮູ້-ປັນຍາຊົນ ໃຫ້ສາມາດປະກອບສ່ວນເຂົ້າໃນການຄົ້ນຄວ້າ ແລະ ການປະດິດສ້າງໃໝ່ ນັບມື້ນັບຫຼາຍຂຶ້ນ. ສຸມໃສ່ການສ້າງຜູ້ຊ່ຽວຊານສະເພາະດ້ານ, ນັກຄົ້ນຄ້ວາ, ນັກວິທະຍາສາດ ແລະ ນັກວິຊາການ ທີ່ເປັນມືອາຊີບ ໂດຍສະເພາະຂະແໜງການທີ່ຍັງຂາດແຄນ ແລະ ຂະແໜງເສດຖະກິດທີ່ເປັນທ່າແຮງຂອງຊາດ.

**+ ຄາດໝາຍລະດັບເປົ້າໝາຍ**

- ຄາດໝາຍທີ່ຕິດພັນກັບການຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ (LDCs):
  - + ດັດສະນີດ້ານຊັບພະຍາກອນມະນຸດ (HAI) ໃຫ້ບັນລຸສູງກວ່າຄ່າມາດຕະຖານ 66 ໃນປີ 2030 (ຜົນການປະເມີນປີ 2024 = 74.8);
- ອັດຕາການຕາຍຂອງເດັກເກີດໃໝ່ ໃຫ້ຕໍ່າກວ່າ 10/1,000 ຄົນເດັກນ້ອຍເກີດມີຊີວິດ;
- ອັດຕາການຕາຍຂອງເດັກນ້ອຍລຸ່ມ 05 ປີ ໃຫ້ຕໍ່າກວ່າ 25/1,000 ຄົນເດັກນ້ອຍເກີດມີຊີວິດ;

- ອັດຕາສ່ວນການຕາຍຂອງແມ່ ໃຫ້ຕ່ຳກວ່າ 70/100,000 ຄົນເດັກນ້ອຍເກີດມີຊີວິດ;
- ຮອດປີ 2030 ອາຍຸຍືນສະເລ່ຍລວມ ໃຫ້ໄດ້ສູງກວ່າ 74 ປີ.

### *3.2.1ແຜນວຽກຈຸດສຸມທີ 1: ພັດທະນາການສຶກສາໃຫ້ມີຄຸນນະພາບ ເພື່ອຮອງຮັບການພັດທະນາຂອງປະເທດຊາດ*

ສືບຕໍ່ສຸມໃສ່ສົ່ງເສີມໃຫ້ມີການພັດທະນາເດັກ, ເບິ່ງແຍງ, ລ້ຽງດູ ແລະ ກຽມຄວາມພ້ອມຂອງເດັກຢ່າງໜ້ອຍ 1 ປີ ກ່ອນເຂົ້າຮຽນຊັ້ນປະຖົມສຶກສາຢ່າງເທົ່າທຽມ; ພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນຄອບຄົວ ໄດ້ມີສ່ວນຮ່ວມໃນການພັດທະນາເດັກ ແລະ ການກຽມຄວາມພ້ອມຂອງເດັກ ກ່ອນເຂົ້າຮຽນຊັ້ນປະຖົມສຶກສາ; ປັບປຸງພື້ນຖານການຮຽນຮູ້ ໂດຍສະເພາະ ໃນຊັ້ນປະຖົມຂັ້ນຕົ້ນ ເພື່ອຮັບປະກັນໃຫ້ນັກຮຽນອ່ານອອກ ແລະ ຄິດໄລ່ເລກພື້ນຖານໄດ້ ຕາມມາດຕະຖານຂອງຫຼັກສູດ; ສ້າງແຜນທີ່ການສຶກສາຄືນໃໝ່ ເພື່ອເປັນບ່ອນອີງໃນການລວມໂຮງຮຽນຂະໜາດນ້ອຍ ແລະ ໂຮງຮຽນທີ່ຢູ່ໃກ້ຄຽງເຂົ້າກັນ ແນ່ໃສ່ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຄຸ້ມຄອງການຮຽນການສອນໃນໂຮງຮຽນ; ປັບປຸງ ແລະ ສ້າງຄວາມເຂັ້ມແຂງໃຫ້ລະບົບນິເທດພາຍໃນກຸ່ມໂຮງຮຽນ ຫຼື ພາຍໃນສຶກສາຕາແສງ; ສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ການປະເມີນຜົນການຮຽນຂອງນັກຮຽນໃນຫ້ອງຮຽນ ແລະ ດຳເນີນການປະເມີນຢ່າງເປັນປົກກະຕິ ພ້ອມທັງປັບປຸງລະບົບການສອບເສັງເລື່ອນຂັ້ນ ແລະ ຈົບຊັ້ນໃຫ້ມີຄຸນນະພາບ; ພ້ອມທັງນຳໃຊ້ມາດຕະຖານຄຸນນະພາບຂັ້ນພື້ນຖານ ເພື່ອເປັນເຄື່ອງມືໃນການປະເມີນການຮຽນຮູ້ຂອງນັກຮຽນ ປ.3, ປີສຸດທ້າຍຂອງຊັ້ນປະຖົມສຶກສາ ແລະ ປີສຸດທ້າຍຂອງຊັ້ນມັດທະຍົມສຶກສາຕອນຕົ້ນ ໃນແຕ່ລະປີ; ແກ້ໄຂບັນຫາການປະລະການຮຽນຂອງນັກຮຽນ ໂດຍສ້າງແຜນງານການນຳນ້ອງກັບຄືນສູ່ໂຮງຮຽນ; ກະກຽມການປັບປຸງລະບົບການສຶກສາຊັ້ນປະຖົມຈາກ 5 ປີ ເປັນ 6 ປີ; ສືບຕໍ່ຝຶກອົບຮົມຄູປະຈຳການ ໃນການນຳໃຊ້ຫຼັກສູດ, ລວມທັງຝຶກອົບຮົມໃນຫົວຂໍ້ຕ່າງໆ; ປັບປຸງຄຸນນະພາບການຮຽນການສອນ ໂດຍພັດທະນາມາດຕະຖານຄຸນນະພາບຂັ້ນພື້ນຖານຂອງການສຶກສາ; ສ້າງນິຕິກຳ ເພື່ອສົ່ງເສີມໃຫ້ນັກຮຽນຈົບຊັ້ນມັດທະຍົມສຶກສາຕອນຕົ້ນ ໄດ້ເຂົ້າຮຽນຕໍ່ສາຍຕ່າງໆ ຕາມຄວາມຮູ້ ແລະ ຄວາມສາມາດຂອງຕົນ; ສືບຕໍ່ຈັດຕັ້ງປະຕິບັດຫຼັກສູດສາມັນວິຊາຊີບໃຫ້ກວ້າງຂວາງ ແລະ ມີຈຸດສຸມ, ພ້ອມທັງຮັບປະກັນດ້ານຄຸນນະພາບ; ສົ່ງເສີມການຮຽນຮູ້ຕະຫຼອດຊີວິດສຳລັບທຸກຄົນເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດດຳລັດວ່າດ້ວຍຮຽນຮູ້ຕະຫຼອດຊີວິດ; ສົ່ງເສີມວຽກງານແນະແນວວິຊາຊີບໃຫ້ກວ້າງຂວາງ ແລະ ທົ່ວເຖິງ, ໂດຍສະເພາະຢູ່ບັນດາໂຮງຮຽນສາມັນກິນນອນຊົນເຜົ່າ ແລະ ໂຮງຮຽນມັດທະຍົມສຶກສາໃນເຂດຫ່າງໄກສອກຫຼີກ; ສືບຕໍ່ເພີ່ມໂອກາດການເຂົ້າເຖິງອາຊີວະສຶກສາ ແລະ ອົບຮົມວິຊາຊີບໃຫ້ກວ້າງຂວາງ, ສືບຕໍ່ພັດທະນາມາດຕະຖານອາຊີບໃຫ້ກວມເອົາຫຼາຍສາຂາອາຊີບ; ປັບປຸງຫຼັກສູດການຝຶກອົບຮົມວິຊາຊີບໃຫ້ສອດຄ່ອງກັບຄວາມຕ້ອງການຂອງຜູ້ປະກອບການ, ຜູ້ຮຽນ ແລະ ການພັດທະນາຂອງທ້ອງຖິ່ນ ໂດຍການສະໜອງຫຼັກສູດທີ່ຫຼາກຫຼາຍ, ລວມທັງການຝຶກອົບຮົມແບບຄວບຄູ່, ການຝຶກອົບຮົມທີ່ເນັ້ນໃສ່ສະມັດຖະພາບ; ຫັນມະຫາວິທະຍາໄລໃຫ້ກາຍເປັນສະຖາບັນທີ່ເຮັດໜ້າທີ່ທັງການສອນ ແລະ ການຄົ້ນຄວ້າວິທະຍາສາດ ເພື່ອສົ່ງເສີມການຄົ້ນຄວ້າວິທະຍາສາດ, ນະວັດຕະກຳ ແລະ ການບໍລິການວິຊາການ ພ້ອມທັງຫັນໄປສູ່ການກຸ້ມຕົນເອງເທື່ອລະກ້າວ; ສຸມໃສ່ກຳນົດຫົວຂໍ້ຄົ້ນຄວ້າວິທະຍາສາດຂອງບັນດາຂະແໜງການລະດັບຊາດ ແລະ ພັດທະນາບຸກຄະລາກອນ ໃນວຽກງານການຄຸ້ມຄອງ, ການຄົ້ນຄ້ວາ ແລະ ການພັດທະນາວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ໃຫ້ມີບາດກ້າວດີຂຶ້ນ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ໃນໄລຍະໃໝ່; ສືບຕໍ່ສົ່ງເສີມວຽກງານກິລາ-ກາຍຍະກຳມວນຊົນຢ່າງກວ້າງຂວາງ ແລະ ສະເໝີພາບ ເປັນຕົ້ນແມ່ນ ການອອກກຳລັງກາຍເພື່ອສຸຂະພາບ, ກິລາພື້ນເມືອງ, ການແຂ່ງຂັນກິລາ ທີ່ຕິດພັນກັບການສ້າງຂະບວນການ ແລະ ສົ່ງເສີມເດັກທີ່ມີພອນສະຫວັນດ້ານກິລາ ເພື່ອສືບສ້າງໃຫ້ເປັນນັກກິລາອາຊີບ, ພ້ອມທັງສືບຕໍ່ພັດທະນາໂຮງຮຽນພອນສະຫວັນກິລາ ເພື່ອເປັນບ່ອນສ້າງເດັກທີ່ມີພອນສະຫວັນ ໃຫ້ກາຍເປັນນັກກິລາອາຊີບ.

**1. ຄາດໝາຍວັດແທກລະດັບແຜນວຽກຈຸດສຸມ**

DRAFT

- ອັດຕາເຂົ້າຮຽນຂອງເດັກອາຍຸ 5 ປີ ໄດ້ກຽມຄວາມພ້ອມກ່ອນເຂົ້າຮຽນປະຖົມສຶກສາ ສະເລ່ຍໃນທົ່ວປະເທດໃຫ້ບັນລຸໄດ້ 90% ພາຍໃນປີ 2030;
- ອັດຕາເຂົ້າຮຽນໃໝ່ສຸດທິຊັ້ນປະຖົມສຶກສາປີທີ 1 ໃຫ້ບັນລຸໄດ້ສູງກວ່າ 99% ພາຍໃນປີ 2030;
- ອັດຕາປະລະການຮຽນຊັ້ນປະຖົມສຶກສາ ບໍ່ໃຫ້ເກີນ 2.2%;
- ອັດຕາເລື່ອນຊັ້ນຂອງນັກຮຽນຈົບ ປ 5 ຂຶ້ນ ມ 1 ໃຫ້ບັນລຸໄດ້ 95.2%;
- ອັດຕາເຂົ້າຮຽນລວມ ຊັ້ນມັດທະຍົມຕອນຕົ້ນ ໃຫ້ບັນລຸໄດ້ 80%;
- ອັດຕາປະລະການຮຽນຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນ ບໍ່ໃຫ້ເກີນ 8%;
- ອັດຕາຄູປະຈຳການ ແລະ ຜູ້ເຮັດວຽກສຶກສານິເທດ ທຸກຊັ້ນ ໄດ້ຮັບການພັດທະນາວິຊາຊີບແບບຕໍ່ເນື່ອງສະເລ່ຍ 20% ຕໍ່ປີ;
- ປະຊາກອນໜຸ່ມ ແລະ ຜູ້ປະລະການຮຽນ ໃຫ້ໄດ້ບຳລຸງຜ່ານການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບ (ກສນ) ບໍ່ໃຫ້ຫຼຸດ 30,000 ຄົນ ໃນແຕ່ລະປີ;
- ຈຳນວນນັກສຶກສາທີ່ຈົບອາຊີວະສຶກສາ ແລະ ອົບຮົມວິຊາຊີບ ຕາມຫຼັກສູດທາງການ ພາຍໃນປີ 2030 ໃຫ້ບັນລຸໄດ້ 50,000 ຄົນ;
- ຫຼັກສູດການຮຽນ-ການສອນ ທີ່ເປັນຫຼັກສູດສາກົນ ມີຈຳນວນເພີ່ມຂຶ້ນເພື່ອເຊື່ອມໂຍງກັບພາກພື້ນ ແລະສາກົນ ໃຫ້ໄດ້ 20 ຫຼັກສູດ ພາຍໃນປີ 2030;
- ຈຳນວນຫົວຂໍ້ຄົ້ນຄວ້າວິທະຍາສາດທີ່ນຳໃຊ້ເງິນກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ຕາມ 24 ຂົງເຂດບູລິມະສິດເພື່ອຮັບໃຊ້ ແຜນພັດທະນາເສດຖະກິດ-ສັງຄົມ 2026-2030 ໃຫ້ໄດ້ຫຼາຍກວ່າ 45 ຫົວຂໍ້ ໃນແຕ່ລະປີ;
- ຈຳນວນກຳມະການຕັດສິນໃນລະດັບສາກົນ ໃຫ້ບັນລຸໄດ້ຫຼາຍກວ່າ 6 ຄົນ ໃນແຕ່ລະປີ;
- ອັດຕາມວນຊົນທຸກເພດ, ທຸກໄວ ເຂົ້າຮ່ວມຫັດກາຍຍະບໍລິຫານ, ອອກກຳລັງກາຍ ແລະ ຫຼິ້ນກິລາ-ກາຍຍະກຳ ຢ່າງສະໝ່ຳສະເໝີ ໃຫ້ບັນລຸ 5% ຕໍ່ປີ ຂອງປະຊາກອນທົ່ວປະເທດທີ່ມີເກນອາຍຸ 3 ປີຂຶ້ນໄປ.

**2. ວຽກຈຸດສຸມ**

- **ວຽກງານການສຶກສາກ່ອນໄວຮຽນ:** ສືບຕໍ່ສຸມໃສ່ການພັດທະນາເດັກ ແລະ ກຽມຄວາມພ້ອມຂອງເດັກຢ່າງໜ້ອຍ 1 ປີ ກ່ອນເຂົ້າຮຽນຊັ້ນປະຖົມສຶກສາຢ່າງເທົ່າທຽມ; ຈັດຕັ້ງປະຕິບັດມາດຕະຖານຄຸນນະພາບຂັ້ນພື້ນຖານສຳລັບການສຶກສາກ່ອນໄວຮຽນ ເພື່ອແນໃສ່ປັບປຸງຄຸນນະພາບຂອງການສຶກສາກ່ອນໄວຮຽນ ແລະເສີມສ້າງພັດທະນາການຂອງເດັກໃນ 5 ດ້ານ ໃຫ້ທົ່ວເຖິງ ໂດຍສະເພາະ ຢູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ; ສືບຕໍ່ສົ່ງເສີມວຽກງານໂພຊະນາການ ແລະ ສຸຂະອະນາໄມ ໃນໂຮງຮຽນ ແລະ ສືບຕໍ່ສົ່ງເສີມໃຫ້ພາກເອກະຊົນລົງທຶນໃສ່ການສຶກສາກ່ອນໄວຮຽນໃຫ້ກວ້າງຂວາງ.
- **ວຽກງານປະຖົມສຶກສາ:** ສຸມໃສ່ການສອນພາສາລາວ ແລະ ຄະນິດສາດ ເພື່ອປັບປຸງພື້ນຖານການຮຽນຮູ້ໂດຍສະເພາະ ໃນຂັ້ນ ປ.1 ແລະ ປ.2 ເພື່ອຮັບປະກັນໃຫ້ນັກຮຽນອ່ານອອກ ແລະ ຄິດໄລ່ເລກພື້ນຖານເປັນຕາມມາດຕະຖານຂອງຫຼັກສູດ; ສືບຕໍ່ສະ ໜອງສື່ ແລະ ອຸປະກອນຮັບໃຊ້ການຮຽນ-ການສອນ ແລະສິ່ງອຳນວຍຄວາມສະດວກຕ່າງໆ; ຈັດຕັ້ງປະຕິບັດມາດຕະຖານຄຸນນະພາບຂັ້ນພື້ນຖານຂອງຊັ້ນປະຖົມສຶກສາໃຫ້ປະກົດຜົນເປັນຈິງ; ສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ວິທີການປະເມີນຜົນການຮຽນຂອງນັກຮຽນໃນຫ້ອງຮຽນ ພ້ອມທັງ ປັບປຸງລະບົບການສອບເສັງເລື່ອນຂັ້ນ ແລະ ຈົບຊັ້ນໃຫ້ມີຄຸນນະພາບ; ສືບຕໍ່ສ້າງຄວາມເຂັ້ມແຂງໃນການຮ່ວມມືກັບຊຸມຊົນ ແລະ ທ້ອງຖິ່ນ ເພື່ອແກ້ໄຂບັນຫາການຫຼຸດລົງຂອງການເຂົ້າຮຽນ ແລະການເພີ່ມຂຶ້ນຂອງການປະລະການຮຽນ. ສືບຕໍ່ຮ່ວມມືກັບພາກເອກະຊົນ ໃນການສະໜອງການສຶກສາຊັ້ນປະຖົມໃຫ້ກວ້າງຂວາງ ພ້ອມທັງຮັບປະກັນດ້ານຄຸນນະພາບ ເພື່ອປະກອບສ່ວນຊ່ວຍລັດຖະບານ.
- **ວຽກງານມັດທະຍົມສຶກສາ:** ສືບຕໍ່ພັດທະນາວິຊາຊີບຄູ-ຜູ້ບໍລິຫານແບບຕໍ່ເນື່ອງ ເພື່ອປັບປຸງຄຸນນະພາບການຮຽນການສອນ ໂດຍພັດທະນາມາດຕະຖານຄຸນນະພາບຂັ້ນພື້ນຖານຂອງການສຶກສາ; ລວມທັງສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ທີ່ເຮັດວຽກງານນິເທດ ທັງພາຍໃນ ແລະ ພາຍນອກ; ປັບປຸງລະບົບການສອບເສັງເລື່ອນຂັ້ນ ແລະ ຈົບຊັ້ນ ແລະ ວິທີການປະເມີນຜົນການຮຽນຂອງນັກຮຽນໃນຫ້ອງຮຽນ ແລະ ດຳເນີນການປະເມີນຢ່າງເປັນປົກກະຕິ; ສ້າງນິຕິກຳ ເພື່ອສົ່ງເສີມໃຫ້ນັກຮຽນຈົບຊັ້ນມັດທະຍົມສຶກສາຕອນຕົ້ນ ສາມາດມີ

DRAFT

ທາງເລືອກ ໃນການເຂົ້າຮຽນຕໍ່ສາຍຕ່າງໆ ຕາມຄວາມຮູ້ ແລະ ຄວາມສາມາດຂອງຕົນ; ລວມທັງ ສືບຕໍ່ຈັດຕັ້ງປະຕິບັດຫຼັກສູດສາມັນວິຊາຊີບຢ່າງມີຈຸດສຸມ ແລະ ຮັບປະກັນດ້ານຄຸນນະພາບ ແລະ ສົ່ງເສີມການຮຽນການສອນ ໃນສາຍວິຊາ ວິທະຍາສາດ, ເຕັກໂນໂລຊີ, ວິສະວະກຳ ແລະ ຄະນິດສາດ, ລວມທັງ ເຕັກໂນໂລຊີດີຈິຕອນ. ສືບຕໍ່ສ້າງຄວາມເຂັ້ມແຂງໃນການຮ່ວມມືກັບຊຸມຊົນ ແລະ ທ້ອງຖິ່ນ ເພື່ອແກ້ໄຂບັນຫາການຫຼຸດລົງຂອງການເຂົ້າຮຽນ ແລະ ການເພີ່ມຂຶ້ນຂອງການປະລະການຮຽນ. ສືບຕໍ່ຮ່ວມມືກັບພາກເອກະຊົນ ໃນການສະໜອງການສຶກສາຊັ້ນມັດທະຍົມຕອນຕົ້ນພາກບັງຄັບ ໃຫ້ກວ້າງຂວາງ ພ້ອມທັງຮັບປະກັນດ້ານຄຸນນະພາບ ເພື່ອປະກອບສ່ວນຊ່ວຍລັດຖະບານ.

- **ວຽກງານການສຶກສານອກໂຮງຮຽນ:** ສືບຕໍ່ສະໜອງການສຶກສານອກໂຮງຮຽນໃຫ້ແກ່ກຸ່ມເປົ້າໝາຍຊາວໜຸ່ມ ແລະ ຜູ້ໃຫຍ່ທີ່ດ້ອຍໂອກາດ, ຜູ້ທີ່ຕ້ອງການຍົກລະດັບທັກສະ, ຜູ້ທີ່ປະລະຕົກຫຼົ່ນຈາກສາຍສາມັນ ໂດຍຜ່ານສູນການສຶກສາຊຸມຊົນ, ສູນການສຶກສານອກໂຮງຮຽນ, ຝຶກອົບຮົມກັບທີ່, ເຄື່ອນທີ່, ຜ່ານໂທລະພາບສຶກສາ ແລະ ກີລາ ແລະ ຊ່ອງທາງອື່ນໆ ໂດຍສະເພາະແມ່ນຂະຫຍາຍໄປສູ່ເຂດຫ່າງໄກສອກຫຼີກ ແລະ ດ້ອຍໂອກາດ; ສົ່ງເສີມການຮຽນຮູ້ຕະຫຼອດຊີວິດສຳລັບທຸກຄົນເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດດຳລັດວ່າດ້ວຍຮຽນຮູ້ຕະຫຼອດຊີວິດ.
- **ວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບ:** ປັບປຸງ ການເຂົ້າເຖິງອາຊີວະສຶກສາ ແລະ ສະໜອງອຸປະກອນເຕັກນິກໃຫ້ແກ່ສາຂາວິຊາທີ່ນອນຢູ່ໃນ ຂະແໜງ ເສດຖະກິດປາຍແຫຼມ (ຂະແໜງ ການຜະລິດກະສິກຳ ແລະ ປຸງແຕ່ງຜະລິດຕະພັນກະສິກຳເພື່ອສົ່ງອອກ, ຂະແໜງບໍລິການທ່ອງທ່ຽວ, ຂະແໜງ ອຸດສາຫະກຳປຸງແຕ່ງທີ່ເປັນຕ່ອງໂສ້ຖານການຜະລິດພາກພື້ນ (ຕິດພັນກັບທ່າແຮງດ້ານຊັບພະຍາກອນ, ດ້ານທີ່ຕັ້ງ ແລະ ການເຊື່ອມຈອດ), ຂະແໜງບໍລິການຂົນສົ່ງ ແລະ ໂລຈິສຕິກ (ຕິດພັນກັບທ່າແຮງດ້ານທີ່ຕັ້ງ) ແລະ ຂະແໜງ ເສດຖະກິດສະໜັບ ສະໜູນ (ຂະແໜງພະລັງງານໄຟຟ້າ, ຂະແໜງຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ, ຂະແໜງ ເຕັກໂລໂນຊີ ແລະ ຂໍ້ມູນຂ່າວສານຮັບໃຊ້ເສດຖະກິດດີຈິຕອນ); ສົ່ງເສີມການຮຽນຮູ້ດ້ານດີຈິຕອນ, ພ້ອມທັງນຳໃຊ້ ໄອຊີທີເຂົ້າໃນການຮຽນ-ການສອນ, ໂຄສະນາແນະແນວວິຊາຊີບ, ການພັດທະນາວິຊາຊີບຄູ ແລະ ການບໍລິຫານ-ຄຸ້ມຄອງຢ່າງເປັນລະບົບ ແລະ ທັນເປັນທັນສະໄໝ. ນອກຈາກນັ້ນ, ຕິດຕາມການຈັດຕັ້ງປະຕິບັດຂອບວຸດທິການສຶກສາແຫ່ງຊາດ; ປັບປຸງ ແລະ ພັດທະນາ ມາດຕະຖານອາຊີບ; ສ້າງຄູ່ມື ແລະ ມາດຕະຖານ ການແຂ່ງຂັນທັກສະວິຊາຊີບ; ສ້າງຄວາມເຂັ້ມແຂງວຽກງານປະກັນຄຸນນະພາບ ແລະ ຕິດຕາມນັກສຶກສາຮຽນຈົບສາຍອາຊີວະສຶກສາ ແລະ ເຮັດການສຳຫຼວດຄວາມເພິ່ງພໍໃຈຂອງຜູ້ໃຊ້ແຮງງານ; ສົ່ງເສີມການຮຽນຮູ້ວິຊາສະເພາະອັນໃໝ່ ເຊັ່ນ: ທັກສະໄອຊີທີ, ເຕັກໂນໂລຊີ, ເຕັກໂນໂລຊີດີຈິຕອນ. ສືບຕໍ່ສົ່ງເສີມການຮ່ວມມື ລະຫວ່າງສະຖານອາຊີວະສຶກສາ, ຄູ່ຮ່ວມງານ, ພາກທຸລະກິດທັງພາກລັດ, ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ພ້ອມທັງສະໜອງການຝຶກອົບຮົມແບບຍືດຢຸ່ນ ຫຼື ປະສົມປະສານ ເພື່ອໃຫ້ຜູ້ຮຽນມີທາງເລືອກທີ່ເໝາະສົມ.
- **ວຽກງານການສຶກສາຊັ້ນສູງ:** ສະໜອງສິ່ງອຳນວຍຄວາມສະດວກ ແລະ ຍົກລະດັບໃຫ້ແກ່ອາຈານສອນໃນມະຫາວິທະຍາໄລ ເພື່ອຍົກລະດັບການບໍລິການ; ຫັນມະຫາວິທະຍາໄລໃຫ້ກາຍເປັນສະຖາບັນທີ່ເຮັດໜ້າທີ່ທັງການສິດສອນ ແລະ ການຄົ້ນຄວ້າວິທະຍາສາດ, ນະວັດຕະກຳ ແລະ ການບໍລິການວິຊາການ; ສົ່ງເສີມການຈັດການຮຽນການສອນແບບປະສົມປະສານ (ທາງໄກ ແລະ ກັບທີ່) ແລະ ແບບຍືດຍຸ່ນ ເພື່ອໃຫ້ນັກຮຽນ-ນັກສຶກສາມີທາງເລືອກທີ່ເໝາະສົມ; ສຸມໃສ່ການຮ່ວມມືກັບສະຖານການສຶກສາຊັ້ນສູງ ຂອງສາກົນ ແລະ ພາກພື້ນ, ລວມທັງຄົ້ນຄວ້າສ້າງຫຼັກສູດສາກົນໃນບັນດາມະຫາວິທະຍາໄລ; ສ້າງ ແລະ ປັບປຸງນະໂຍບາຍ, ກົນໄກ ເພື່ອດຶງດູດຊ່ຽວຊານ ແລະ ນັກວິທະຍາສາດທີ່ມີຄວາມຊຳນານງານທັງພາຍໃນ ແລະ ຕ່າງປະເທດ, ຖ່າຍທອດຄວາມຮູ້ ແລະ ປະສົບການທາງເຕັກໂນໂລຊີດີຈິຕອນ ແລະ ນະວັດຕະກຳ ເພື່ອພັດທະນາປະເທດ; ສຸມໃສ່ພັດທະນາບຸກຄະລາກອນ ແລະ ຫຼັກສູດຂອງລະບົບການສຶກສາຊັ້ນສູງໃຫ້ຮັບປະກັນຄຸນນະພາບ ແລະ ມີຫຼາຍຂະແໜງການ.
- **ວຽກງານວິທະຍາສາດ:** ສຸມໃສ່ພັດທະນາບຸກຄະລາກອນ ໃນວຽກງານການຄຸ້ມຄອງ, ການຄົ້ນຄ້ວາ ແລະ ການພັດທະນາ ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ໃຫ້ມີບາດກ້າວດີຂຶ້ນ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ໃນໄລຍະໃໝ່; ສຸມໃສ່ຢ່າງເລັ່ງດ່ວນ ໃນການສ້າງຊ່ຽວຊານສະເພາະດ້ານ, ນັກຄົ້ນຄວ້າ, ນັກວິທະຍາສາດ ທັງພາຍໃນ ແລະ ຕ່າງປະເທດ ບົນພື້ນຖານຄວາມຕ້ອງການໃນການພັດທະນາເສດຖະກິດ-ສັງຄົມ; ເລັ່ງສ້າງຜູ້ກຳນົດນະໂຍບາຍ ໃນດ້ານວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ເພື່ອ

DRAFT

ສ້າງກຳລັງຄົນທີ່ເປັນຊ່ຽວຊານໃນລະດັບຊາດ ທີ່ຈະສະໜັບສະໜູນການສ້າງນະໂຍບາຍ ແລະ ແຜນການພັດທະນາ ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກໍາ ໃນຕໍ່ໜ້າ; ສຸມໃສ່ສົ່ງເສີມການໄປແລກປ່ຽນຄວາມຮູ້ຂອງບຸກຄະລາກອນສະເພາະດ້ານ ຈາກມະຫາວິທະຍາໄລ, ສະຖາບັນຄົ້ນຄວ້າ, ສະຖາບັນການສຶກສາ, ອຸດສາຫະກໍາທັງພາກລັດ ແລະ ເອກະຊົນ ເພື່ອຍົກລະດັບທັກສະວິຊາການຢູ່ພາຍໃນ, ພາກພື້ນ ແລະ ສາກົນ; ສຸມໃສ່ການເພີ່ມຄວາມຮູ້, ຄວາມເຂົ້າໃຈ ແລະ ສ້າງຈິດສຳນຶກດ້ານວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກໍາ ໃຫ້ແກ່ເຍົາວະຊົນ, ຊາວໜຸ່ມ, ແມ່ຍິງ, ນັກຮຽນ ແລະ ນັກສຶກສາ, ໂດຍຜ່ານການຈັດກິດຈະກໍາໂຄສະນາເຜີຍແຜ່ ເປັນຕົ້ນແມ່ນ ການສໍາມະນາວັນວິທະຍາສາດແຫ່ງຊາດ, ງານສັບປະດາວິທະຍາສາດ, ການແຂ່ງຂັນວິທະຍາສາດ ແລະ ອື່ນໆ; ສືບຕໍ່ເສີມຂະຫຍາຍການພົວພັນຮ່ວມມື ແລະ ຍາດແຍ່ງການສະໜັບສະ ໜູນຊ່ວຍເຫຼືອຈາກປະເທດເພື່ອນມິດ, ຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງຂອງພາກພື້ນ ແລະ ສາກົນ ເຂົ້າໃນການພັດທະນາພັດທະນາຊັບພະຍາກອນມະນຸດ ແລະ ການພັດທະນາວຽກງານການຄົ້ນຄວ້າ ແລະ ພັດທະນາ ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກໍາ ຢ່າງມີຈຸດສຸມ ແລະ ປະກົດຜົນເປັນຈິງ.

- **ວຽກງານກິລາ-ກາຍຍະກຳ:** ສືບຕໍ່ສົ່ງເສີມວຽກງານກິລາ-ກາຍຍະກຳມວນຊົນຢ່າງກວ້າງຂວາງ ເປັນຕົ້ນແມ່ນການອອກກຳລັງກາຍເພື່ອສຸຂະພາບ, ກິລາພື້ນເມືອງ, ການແຂ່ງຂັນກິລາ ທີ່ຕິດພັນກັບການສ້າງຂະບວນການ ແລະ ອື່ນໆ; ກໍ່ສ້າງ ແລະ ພັດທະນາບຸກຄະລາກອນກິລາ-ກາຍຍະກຳທີ່ເປັນທ່າແຮງຢ່າງມີຈຸດສຸມ ແລະ ມີວິທະຍາສາດການກິລາ ໂດຍເລີ່ມຈາກສະຖານການສຶກສາ; ປັບປຸງການບໍລິຫານ-ຄຸ້ມຄອງວຽກງານກິລາ-ກາຍຍະກຳ; ພັດທະນາລະບົບບໍລິຫານບັນດາສະຫະພັນກິລາ ແລະ ສະໂມສອນກິລາໃຫ້ເຂັ້ມແຂງ; ຊຸກຍູ້ສົ່ງເສີມການຈັດຕັ້ງສະໂມສອນກິລາ-ກາຍຍະກຳໃນສະຖານການສຶກສາ ແລະ ສັງຄົມ; ເພີ່ມທະວີການຮ່ວມມື, ຍາດແຍ່ງການຊ່ວຍເຫຼືອ ແລະ ແລກປ່ຽນບົດຮຽນກັບບັນດາປະເທດເພື່ອນມິດ ແລະ ສາກົນ ໃນການພັດທະນາກິລາສູ່ໂອແລມປິກ ແລະ ພາຣາແລມປິກ; ສືບຕໍ່ພັດທະນາໂຮງຮຽນພອນສະຫວັນກິລາ ເພື່ອເປັນບ່ອນສ້າງເດັກທີ່ມີພອນສະຫວັນ ໃຫ້ກາຍເປັນນັກກິລາອາຊີບ.
- **ວຽກງານບໍລິຫານ-ຄຸ້ມຄອງ:** ສຸມໃສ່ສືບຕໍ່ຜັນຂະຫຍາຍນະໂຍບາຍ ແລະ ມາດຕະການແກ້ໄຂການຂາດແຄນຄູສອນ, ການປະລະການຮຽນ ແລະ ການສົ່ງເສີມເຂົ້າຮຽນວິຊາຊີບ ຕາມມະຕິ ເລກທີ 09/ລບ, ລົງວັນທີ 17 ກໍລະກົດ 2023; ສືບຕໍ່ປັບປຸງການຈັດຕັ້ງປະຕິບັດບັນດາແຜນງານ/ໂຄງການ ແລະ ກົນໄກການເງິນຕ່າງໆ ເພື່ອຫຼຸດຜ່ອນຄວາມແຕກໂຕນສຳລັບກຸ່ມທີ່ດ້ອຍໂອກາດ ແລະ ການນຳໃຊ້ຊັບພະຍາກອນໃຫ້ເກີດປະໂຫຍດສູງສຸດ; ສືບຕໍ່ສ້າງ ແລະ ປັບປຸງກົດໝາຍ ແລະ ນິຕິກຳຕ່າງໆ ເພື່ອຮັບໃຊ້ການພັດທະນາການສຶກສາໃນໄລຍະໃໝ່, ລວມທັງສຶກສາຄວາມເປັນໄປໄດ້ໃນການປັບປຸງໂຄງສ້າງການສຶກສາສາຍສາມັນ ຈາກ 5+4+3 ເປັນ 6+3+3.

**+ການແກ້ໄຂບັນຫາການຂາດແຄນຄູສອນ ແລະ ການປະລະການຮຽນ,** ສຸມໃສ່ສືບຕໍ່ຜັນຂະຫຍາຍນະໂຍບາຍ ແລະ ມາດຕະການແກ້ໄຂການຂາດແຄນຄູສອນ, ການປະລະການຮຽນ ແລະ ການສົ່ງເສີມເຂົ້າຮຽນວິຊາຊີບ ຕາມມະຕິ ເລກທີ 09/ລບ, ລົງວັນທີ 17 ກໍລະກົດ 2023:

- **ການແກ້ໄຂບັນຫາການຂາດແຄນຄູ** ຊຸກຍູ້ສົ່ງເສີມໃຫ້ຜູ້ບໍລິຫານການສຶກສາ, ວິທະຍາສາດ ແລະ ກິລາ ສຶກສາອົບຮົມການເມືອງ-ແນວຄິດ ຄູ ໃຫ້ມີຄວາມໜັກແໜ້ນ ແລະ ເຂັ້ມແຂງ ແລະ ຕິດຕາມການຮຽນ-ການສອນຂອງຄູຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ, ສົ່ງເສີມອົງການປົກຄອງທ້ອງຖິ່ນ, ຊຸມຊົນ ແລະ ຄອບຄົວ ເບິ່ງແຍງຊ່ວຍເຫຼືອຊີວິດການເປັນຢູ່ຂອງຄູ ຕາມຄວາມອາດສາມາດ ແລະ ເງື່ອນໄຂຕົວຈິງຂອງແຕ່ລະທ້ອງຖິ່ນ; ປັບປຸງນະໂຍບາຍຄູແຫ່ງຊາດ, ແຜນການກໍ່ສ້າງ ແລະ ນຳໃຊ້ຄູໃນໄລຍະສັ້ນ ແລະ ໄລຍະຍາວ ໃຫ້ສອດຄ່ອງກັບຄວາມຕ້ອງການຕົວຈິງ; ສົ່ງເສີມ ແລະ ສ້າງກິດຈະກຳ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຄູ ກ່ຽວກັບການປູກ-ການລ້ຽງ ແລະ ອື່ນໆ ແລະ ຄົ້ນຄ້ວາສ້າງສິ່ງຈູງໃຈ ແລະ ປະຕິບັດນະໂຍບາຍໃຫ້ແກ່ຄູທີ່ຖືກຈັດສັນໄປສິດສອນຢູ່ເຂດຫ່າງໄກສອກຫຼີກ.
- **ການແກ້ໄຂບັນຫາການປະລະການຮຽນ** ສຸມໃສ່ສືບຕໍ່ຈັດຕັ້ງປະຕິບັດນະໂຍບາຍໃຫ້ເງິນເບ້ຍລ້ຽງນັກສຶກສາສາມັນຜູ້ທຸກຍາກດ້ອຍໂອກາດ ສຳລັບຊັ້ນປະຖົມ, ສະໜອງອາຫານທ່ຽງໃນໂຮງຮຽນ ແລະ ສະໜອງເບ້ຍລ້ຽງໃຫ້ນັກຮຽນສາມັນກິນນອນຊົນເຜົ່າ, ໂຮງຮຽນສອນນັກຮຽນພິເສດ; ຈັດບຳລຸງນັກຮຽນທີ່ມີການຮຽນອ່ອນ ຕາມຈຸດພິເສດຂອງແຕ່ລະທ້ອງຖິ່ນ; ສະໜອງປຶ້ມແບບຮຽນ ແລະ ອຸປະກອນການຮຽນ; ສຶກສາອົບຮົມພໍ່ແມ່ຜູ້ປົກຄອງຂອງນັກຮຽນ-ນັກສຶກສາ ເຫັນໄດ້ຄວາມສຳຄັນຂອງການສຶກສາ ເພື່ອສົ່ງເສີມລູກຫຼານ

ຂອງຄົນເຂົ້າຮຽນ ແລະ ຮຽນຈົບການສຶກສາພາກບັງຄັບ (ມັດທະຍົມສຶກສາປີທີ 4), ອາຊີວະສຶກສາ ແລະ ການສຶກສາຊັ້ນສູງ; ຄົ້ນຄ້ວານະໂຍບາຍ ແລະ ສ້າງສິ່ງອຳນວຍຄວາມສະດວກໃຫ້ແກ່ນັກຮຽນທີ່ທຸກຍາກ ໃນເຂດຫ່າງໄກສອກຫຼີກ ໄດ້ເຂົ້າຮຽນໃນຊັ້ນມັດທະຍົມສຶກສາຕອນຕົ້ນ, ມັດທະຍົມສຶກສາຕອນປາຍ, ອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ໃຫ້ຫຼາຍຂຶ້ນ; ສ້າງ ແລະ ຂະຫຍາຍຫໍພັກໃຫ້ນັກຮຽນທີ່ຢູ່ບ້ານໄກ; ສະໜອງເບ້ຍລ້ຽງໃຫ້ໃຫ້ນັກຮຽນອາຊີວະສຶກສາ ໃນວິຊາທີ່ມີຄວາມຕ້ອງການຂອງສັງຄົມ; ປັບປຸງຫຼັກສູດ, ບຸກຄະລາກອນ, ສະພາບແວດລ້ອມ ແລະ ສິ່ງອຳນວຍຄວາມສະດວກ ຂອງຖານອາຊີວະສຶກສາ ແລະ ສະຖານການສຶກສາຊັ້ນສູງ ໃຫ້ດີຂຶ້ນ ເພື່ອສ້າງແຮງຈູງໃຈໃຫ້ນັກຮຽນມາຮຽນຫຼາຍຂຶ້ນ.

### *3.2.2 ແຜນວຽກຈຸດສຸມທີ 2: ປັບປຸງວຽກງານສາທາລະນະສຸກ ແລະ ການບໍລິການດ້ານສາທາລະນະສຸກ ໃຫ້ມີຄຸນນະພາບ ແລະ ທົ່ວເຖິງ*

ປັບປຸງຕາໜ່າງສາທາລະນະສຸກໃຫ້ມີຄຸນນະພາບໃນທຸກຂັ້ນ ແລະ ທັນໂຮງໝໍ ສູນກາງ, ແຂວງໃຫ້ມີຄວາມທັນສະໄໝ ແລະ ກ້າວໄປສູ່ການກຸ້ມຕົນເອງ ທາງດ້ານການເງິນ; ສ້າງເງື່ອນໄຂໃຫ້ປະຊາຊົນທຸກຊັ້ນຄົນສາມາດເຂົ້າຮັບການບໍລິການສຸຂະພາບທີ່ຈຳເປັນຢ່າງທົ່ວເຖິງ, ສະເໝີພາບ ແລະ ຍຸດຕິທຳ ໂດຍມີລະບົບປະກັນສັງຄົມ-ປະກັນສຸຂະພາບແຫ່ງຊາດທີ່ເຂັ້ມແຂງ ແລະ ຍືນຍົງ; ປັບປຸງລະບົບຮັກສາສຸຂະພາບຂັ້ນຕົ້ນ, ສົ່ງເສີມສຸຂະພາບ ແລະ ກັນພະຍາດຕິດຕໍ່ ແລະ ບໍ່ຕິດຕໍ່ ຢ່າງແຂງແຮງ ແຕ່ສູນກາງ ຮອດທ້ອງຖິ່ນ. ພັດທະນາບຸກຄະລາກອນສາທາລະນະສຸກໃຫ້ມີຄຸນນະພາບ, ມີຊ່ຽວຊານແຕ່ລະດ້ານຄົບຊຸດ, ພຽງພໍ ແລະ ທັນລົງທ້ອງຖິ່ນຢ່າງແຂງແຮງ. ປັບປຸງຄຸນນະພາບ ແລະ ມາດຕະຖານການຮຽນ, ການສອນ ຂອງສະຖານການສຶກສາສາທາລະນະສຸກ ເພື່ອຮັບປະກັນຄຸນນະພາບການສຶກສາສາທາລະນະສຸກໃຫ້ທຽບເທົ່າພາກພື້ນ ແລະ ສາກົນ; ພັດທະນາດ້ານການຢາ (ຢາຫຼວງ ແລະ ຢາພື້ນເມືອງ) ໃຫ້ສາມາດເພິ່ງພາການຜະລິດພາຍໃນເປັນສ່ວນໃຫຍ່ ແລະ ມີສ່ວນສົ່ງອອກ, ຮັບປະກັນຄຸນນະພາບ ແລະ ຄວາມປອດໄພຂອງ ອາຫານ, ຢາ ແລະ ຜະລິດຕະພັນທາງການແພດ.

**1. ຄາດໝາຍວັດແທກລະດັບແຜນວຽກຈຸດສຸມ**

- ອັດຕາເກີດລູກມີແພດຊ່ວຍ ໃຫ້ໄດ້ຫຼາຍກວ່າ 90% ຂອງປະຊາກອນເປົ້າໝາຍ;
- ອັດຕາໃຫ້ວັກຊີນກັນພະຍາດໃນເດັກລຸ່ມ 01 ປີ ໃຫ້ໄດ້ 95% ຂອງປະຊາກອນເປົ້າໝາຍ;
- ອັດຕາການປົກຄຸມການປິ່ນປົວພະຍາດວັນນະໂລກ ໃຫ້ໄດ້ 90%;
- ອັດຕາການຕິດເຊື້ອໄຂ້ມາລາເຣຍປະຈຳປີ (ລວມທຸກຊະນິດເຊື້ອ) ໃຫ້ເຫຼືອ 0 ກໍລະນີ (ປີ 2024 ພົບ 02 ກໍລະນີ);
- 80% ຂອງຊາຍ-ຍິງທີ່ມີອາຍຸ 15-24 ປີ ມີຄວາມຮູ້ ຄວາມເຂົ້າໃຈ ກ່ຽວກັບການປ້ອງກັນການຕິດເຊື້ອເຮສໄອວີ ທີ່ຖືກຕ້ອງ;
- ອັດຕາປົກຄຸມປະກັນສຸຂະພາບ ໃຫ້ຫຼາຍກວ່າ 94.5% ຂອງປະຊາກອນທັງໝົດ.

**2. ວຽກຈຸດສຸມ**

1) ຍົກລະດັບການສ້າງຄວາມເຂັ້ມແຂງວຽກງານຮັກສາສຸຂະພາບຂັ້ນຕົ້ນ, ວຽກງານໂຄສະນາສຸຂະພາບສຶກສາ ແລະ ຫັນເອົາວຽກງານຮັກສາສຸຂະພາບເປັນຂອງທົ່ວປວງຊົນ;

2) ສຸມໃສ່ປັບປຸງການບໍລິການໃຫ້ວັກຊີນກັນພະຍາດດ້ວຍການສະໜອງອຸປະກອນ, ວັກຊີນ, ອົບ ຮົມດ້ານວິຊາການໃຫ້ແກ່ພະນັກງານຂັ້ນແຂວງ, ເມືອງ ແລະ ສຸກສາລາ, ໄປພ້ອມກັບການສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງລະບົບເຢັນ ແລະ ການເກັບຮັກສາວັກຊີນໃຫ້ແຂວງ, ເມືອງ ແລະ ສຸກສາລາ. ພ້ອມທັງຕິດຕາມການບັນທຶກ-ລາຍງານສັກຢາຊີນກັນພະຍາດໃຫ້ມີປະສິດທິຜົນ;

3) ປັບປຸງ ແລະ ຈັດຕັ້ງປະຕິບັດການບໍລິການສົ່ງເສີມສຸຂະພາບແມ່ ແລະ ເດັກໃຫ້ມີປະສິດທິຜົນ, ໂດຍສຸມໃສ່ການບໍລິການແບບເອົາຄົນເປັນໃຈກາງໃນການໃຫ້ບໍລິການ ສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ ໂດຍເນັ້ນໃສ່ການຍົກສູງອັດຕາການບໍລິການ ວາງແຜນຄອບຄົວ, ການດູແລກ່ອນເກີດ, ເວລາເກີດ, ຫຼັງເກີດ, ການກັ່ນຕອງແມ່ສ່ຽງໄພການໃຫ້ຄຳປຶກສາດູແລກ່ອນເກີດ ແລະ ການນຳສົ່ງຕໍ່ໄປຫາບ່ອນທີ່ມີເງື່ອນໄຂ ພ້ອມທັງການ

DRAFT

ບໍລິການປ້ອງກັນການຕິດເຊື້ອຈາກແມ່ຫາລູກ ແລະ ສົ່ງເສີມສຸຂະພາບໄວໜຸ່ມ ລວມທັງການດູແລເດັກດີ ແລະ ເດັກເຈັບ ແລະ ສືບຕໍ່ພັດທະນາຄູ່ມືມາດຖານແຫ່ງຊາດການດູແລຫຼັງເກີດ ແລະ ຜັນຂະຫຍາຍຄູ່ມືມາດຕະຖານການກັ່ນຕອງຄວາມຜິດປົກກະຕິຂອງປາກມີດລູກໃນຂອບເຂດທົ່ວປະເທດ;

4) ຍົກລະດັບປະສິດທິພາບຂອງການບໍລິຫານ, ການຄຸ້ມຄອງວຽກງານສາທາລະນະສຸກໃຫ້ມີຄວາມໜັກແໜ້ນ ແລະ ທັນສະໄໝ ໂດຍເພີ່ມທະວີການພົວພັນປະສານງານພາຍໃນຂະແໜງການ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ແລະ ກັບຂະແໜງການອື່ນທີ່ກ່ຽວຂ້ອງ ແລະ ກັບປະເທດເພື່ອນມິດ, ອົງການຈັດຕັ້ງສາກົນຕ່າງໆ ໃຫ້ມີຄວາມກົມກຽວໂລ່ງລ່ຽນ; ປັບປຸງຕາໜ່າງສາທາລະນະສຸກໃນທຸກຂັ້ນ ໂດຍສະເພາະຂັ້ນສູນກາງ ແລະ ແຂວງໃຫ້ມີຄວາມທັນສະໄໝຫຼາຍຂຶ້ນ, ສາມາດກຸ້ມຕົນເອງດ້ານການເງິນ, ການຈັດຕັ້ງ ແລະ ວິຊາສະເພາະ, ຫຼຸດຜ່ອນການແບກຫາບງົບປະມານຂອງລັດ;

5) ພັດທະນາກອງທຶນປະກັນສຸຂະພາບແຫ່ງຊາດໃຫ້ເປັນເຈົ້າຕົນເອງເທື່ອລະກ້າວ ແລະ ມີແຫລ່ງທຶນທີ່ພຽງພໍ, ສ້າງກອງທຶນທີ່ໂຮມທຸກກຸ່ມເປົ້າໝາຍຮັບປະກັນສຸຂະພາບເຂົ້າເປັນອົງການຄຸ້ມຄອງດຽວກັນ ໂດຍລັດຖະບານຄຸ້ມຄອງໂດຍກົງ ເພື່ອໃຫ້ປະຊາຊົນທຸກຄົນສາມາດເຂົ້າເຖິງການບໍລິການປິ່ນປົວສຸຂະພາບຂັ້ນພື້ນຖານຢ່າງທົ່ວເຖິງ ດ້ວຍການເກັບພາສີທີ່ສົ່ງຜົນກະທົບຕໍ່ສຸຂະພາບ ເຊັ່ນ: ຢາສູບ, ເຄື່ອງດື່ມທີ່ມີທາດເຫລົ້າ, ເຄື່ອງດື່ມທີ່ມີທາດນໍ້າຕານ ແລະ ງົບປະມານຈາກການເກັບເງິນສົມທົບຈາກສະມາຊິກປະກັນສັງຄົມພາກວິສະຫະກິດ, ພາກສະມັກໃຈ ແລະ ປະຊາຊົນຜູ້ມີເງື່ອນໄຂຈ່າຍ ເພື່ອຕອບສະໜອງຕໍ່ກັບຊຸດຜົນປະໂຫຍດຂອງປະກັນສຸຂະພາບ, ນອກຈາກວຽກງານປິ່ນປົວສຸຂະພາບແລ້ວ ກໍ່ຕ້ອງປົກຄຸມເອົາວຽກງານສົ່ງເສີມສຸຂະພາບ ແລະ ປ້ອງກັນພະຍາດ ເພື່ອໃຫ້ສອດຄ່ອງກັບອົງປະກອບໃນການບັນລຸປົກຄຸມສຸຂະພາບທົ່ວປວງຊົນ (Universal Health Coverage) ກໍ່ຄືການບັນລຸ SDG ໃນປີ 2030 ຂອງ ສປປ ລາວ;

6) ປັບປຸງຍົກລະດັບໂຄງລ່າງພື້ນຖານດ້ານສາທາລະນະສຸກທັງຢູ່ສູນກາງ ແລະ ທ້ອງຖິ່ນຮາກຖານ ໃຫ້ໄດ້ມາດຕະຖານ, ຍົກລະດັບໂຮງໝໍເມືອງສາມາດຜ່າຕັດແກ້ໄຂສຸກເສີນ ໄປພ້ອມກັບການປັບປຸງພື້ນຖານໂຄງລ່າງພາລະທີການການແພດ, ການປະກອບເຄື່ອງມື, ອຸປະກອນການແພດ ທີ່ທັນສະໄໝໃຫ້ສາມາດຕອບສະໜອງການບໍລິການທີ່ມີຄຸນນະພາບ ແລະ ສອດຄ່ອງກັບການຂະຫຍາຍດ້ານເສດຖະກິດ-ສັງຄົມໃນໄລຍະໃໝ່. ຫັນປ່ຽນໃໝ່ຈາກການບໍລິຫານຄຸ້ມຄອງໂຮງໝໍລັດໄປສູ່ກົນໄກການກຸ້ມຕົນເອງດ້ານການເງິນຂອງບັນດາໂຮງໝໍສູນກາງ, ໂຮງໝໍແຂວງ ໃຫ້ເປັນຮູບປະທໍາ, ພ້ອມທັງຫັນໂຮງໝໍສູນກາງໃຫ້ມີຄວາມທັນສະໄໝ, ກາຍເປັນສະຖານທີ່ບໍລິການທີ່ດີເລີດ ໂດຍມີການຄຸ້ມຄອງ ແລະ ດັດສົມຂອງລັດ. ຊຸກຍູ້, ສົ່ງເສີມການປະກອບສ່ວນຂອງພາກເອກະຊົນເຂົ້າໃນການສະໜອງບໍລິການດ້ານສາທາລະນະສຸກ ໄປພ້ອມກັບການຄຸ້ມຄອງສະຖານທີ່ບໍລິການຂອງພາກເອກະຊົນ ຕາມແນວທາງຄຸ້ມຄອງລັດ-ຄຸ້ມຄອງສັງຄົມ ດ້ວຍລະບຽບກົດໝາຍໃຫ້ປາກົດຜົນເປັນຈິງ.

7) ສ້າງລະບົບບໍລິການສຸຂະພາບທີ່ດີ ຖືເອົາຄົນເປັນໃຈກາງ, ມີຈັນຍາທໍາ ເອົາໃຈໃສ່ດູແລສຸຂະພາບ ຂອງປະຊາຊົນ ທັງຮ່າງກາຍ ແລະ ຈິດໃຈ ຕາມນະໂຍບາຍ 5 ດີ 1 ພໍໃຈ;

8) ສ້າງຄວາມເຂັ້ມແຂງການປະເມີນຄວາມສ່ຽງໂດຍນໍາໃຊ້ຂໍ້ມູນຈາກຫຼາຍແຫຼ່ງ ຜ່ານການອົບຮົມ ແລະ ການຝຶກຊ້ອມຕົວຈິງ; ສ້າງຄວາມສາມາດໃນການກວດວິເຄາະການແພດ ເພື່ອສະໜອງການບົ່ງມະຕິພະຍາດ ແລະການເຝົ້າລະວັງ, ໂຕ້ຕອບການລະບາດຂອງພະຍາດ ໃຫ້ຂັ້ນແຂວງ ແລະ ຂັ້ນເມືອງ.

9) ປັບປຸງລະບົບຮັກສາສຸຂະພາບຂັ້ນຕົ້ນ, ສົ່ງເສີມສຸຂະພາບ, ສ້າງຄວາມເຂັ້ມແຂງວຽກງານເຝົ້າລະວັງການລະບາດຂອງພະຍາດ ແລະ ຕອບໂຕ້ທຸກເຫດການສຸກເສີນດ້ານສາທາລະນະສຸກຢ່າງທັນການ ລວມທັງ ພະຍາດຕິດຕໍ່ ແລະ ພະຍາດບໍ່ຕິດຕໍ່, ຍົກລະດັບຄຸນນະພາບຂອງການກວດວິເຄາະພະຍາດ, ລົບລ້າງບັນດາພະຍາດທີ່ເປັນບັນຫາດ້ານສາທາລະນະສຸກ ເຊັ່ນ: ພະຍາດເອດສ, ພະຍາດວັນນະໂລກ, ພະຍາດໄຂ້ມະເລເລຍ ແລະ ພະຍາດອື່ນໆ ຕາມຍຸດທະສາດການພັດທະນາທີ່ຍືນຍົງ ໃນປີ 2030. ຟື້ນຟູສະຂະພາບຂອງຜູ້ຕິດຢາເສບຕິດຢ່າງແຂງແຮງ ແຕ່ສູນກາງຮອດທ້ອງຖິ່ນ;

10) ພັດທະນາດ້ານການຢາ (ນັບທັງຢາຫຼວງ ແລະ ຢາພື້ນເມືອງ) ໃຫ້ສາມາດເພິ່ງພາການຜະລິດພາຍໃນເປັນສ່ວນໃຫຍ່, ມີສ່ວນສົ່ງອອກຢາພື້ນເມືອງທີ່ລາວເຮົາມີທ່າແຮງ, ຫຼຸດຜ່ອນການນໍາເຂົ້າຢາທີ່ ສປປ ລາວ ຜະລິດໄດ້ແລ້ວ, ກ້າວໄປສູ່ການກຸ້ມຕົນເອງ, ທົດແທນການນໍາເຂົ້າ ແລະ ສົ່ງອອກ, ຮັບປະກັນຄຸນນະພາບ ແລະ ຄວາມປອດໄພອາຫານ, ຢາ ແລະ ຜະລິດຕະພັນການແພດ; ສ້າງຕາໜ່າງ ແລະ ລະບົບກວດກາອາຫານ, ຢາ ແລະ ຜະລິດຕະພັນການແພດ ທີ່ທັນສະໄໝຢູ່ສູນກາງ ແລະ ທ້ອງຖິ່ນ. ເຜີຍແຜ່ຂໍ້ມູນຂ່າວສານດ້ານອາຫານ, ຢາ ແລະ ຜະລິດຕະພັນການແພດ ໃຫ້ກວ້າງຂວາງທົ່ວສັງຄົມ.

11) ເອົາໃຈໃສ່ຄຸ້ມຄອງການຜະລິດ, ການນໍາເຂົ້າອາຫານ, ຢາ ແລະ ຜະລິດຕະພັນທາງການແພດ ເພື່ອຮັບປະກັນຄຸນນະພາບ ແລະ ຄວາມປອດໄພຂອງຜູ້ບໍລິໂພກ, ເອົາໃຈໃສ່ການອານຸລັກພືດ-ສັດ ທີ່ເປັນຢາທີ່ຫາຍາກໃກ້ຈະສູນພັນ; ຊຸກຍູ້,

ສົ່ງເສີມ ການຄົ້ນຄວ້າ, ການຜະລິດ ແລະ ການສົມທົບການນຳໃຊ້ຢາພື້ນເມືອງ ແລະ ຢາຫຼວງ ເຂົ້າໃນການປິ່ນປົວ ແລະ ຮັກສາສຸຂະພາບຂອງປະຊາຊົນລາວບັນດາເຜົ່າໃຫ້ນັບມື້ຫຼາຍຂຶ້ນ.

12) ພາຍໃນປີ 2030 ໃຫ້ມີການເຊື່ອມສານສຸຂະພາບໜຶ່ງດຽວ ໂດຍການມີສ່ວນຮ່ວມຂອງຫຼາຍພາກສ່ວນ ທີ່ຍືນຍົງ ເພື່ອຮັບປະກັນຄວາມໝັ້ນຄົງ ແລະ ຄວາມປອດໄພ ທາງດ້ານສຸຂະພາບຄົນ, ສັດ ແລະ ສິ່ງແວດລ້ອມ ໃຫ້ເກີດຜົນປະໂຫຍດສູງສຸດ.

13) ພັດທະນາບຸກຄະລະກອນແພດ ໃຫ້ມີຄຸນນະພາບ, ຊ່ຽວຊານແຕ່ລະດ້ານຄົບຊຸດ, ພຽງພໍ ແລະ ສາມາດບໍລິການຮັບໃຊ້ສັງຄົມຢ່າງທົ່ວເຖິງ; ປັບປຸງຄຸນນະພາບ ແລະ ມາດຕະຖານການຮຽນ, ການສອນ ຂອງສະຖາບັນການສຶກສາດ້ານສາທາລະນະສຸກ, ເລືອກຜູ້ຮຽນດີ ຮຽນເກັ່ງ ເພື່ອສ້າງເປັນຄູ, ອາຈານ ໃນອະນາຄົດ.

14) ປະຕິຮູບສະຖາບັນການສຶກສາ-ສາທາລະນະສຸກໃຫ້ມີມາດຕະຖານ ແລະ ຄຸນນະພາບສູງຂຶ້ນກວ່າເກົ່າ ເພື່ອໃຫ້ການບຳລຸງ, ສ້າງບຸກຄະລາກອນສາທາລະນະສຸກມີຄຸນນະພາບ ມີຄວາມກຽມພ້ອມປັບຕົວເຂົ້າໃນທຸກສະຖານະການ.

### *3.2.3 ແຜນວຽກຈຸດສຸມທີ 3: ພັດທະນາສີມືແຮງງານໃຫ້ໄດ້ປະລິມານ ແລະ ຄຸນນະພາບ ເພື່ອຕອບສະໜອງຄວາມຕ້ອງການພັດທະນາ*

ພັດທະນາສີມືແຮງງານ ໃຫ້ພົນລະເມືອງ ທີ່ເປັນກຳລັງແຮງງານ ເພື່ອກາຍເປັນກຳລັງການຜະລິດຕົ້ນຕໍ, ສົ່ງເສີມໃຫ້ທຸກຫົວໜ່ວຍແຮງງານ ສ້າງມາດຕະຖານສີມືແຮງງານຂັ້ນຂອງຕົນ, ດຳເນີນການທົດສອບ ແລະ ຢັ້ງຢືນສີມືແຮງງານໃຫ້ຜູ້ອອກແຮງງານຂອງຕົນ ເພື່ອເປັນບ່ອນອີງໃນການຈ່າຍຄ່າແຮງງານ ໃຫ້ເໝາະສົມ ແລະ ຍຸຕິທຳ; ສະຖານພັດທະນາສີມືແຮງງານ ໂດຍນຳໃຊ້ມາດຕະຖານສີມືແຮງງານແຫ່ງຊາດ ດຳເນີນການທົດສອບ ແລະ ອອກໃບຢັ້ງຢືນສີມືແຮງງານສາຂາອາຊີບຕ່າງໆທີ່ຕະຫຼາດແຮງງານຕ້ອງການ ໃຫ້ແກ່ກຳລັງແຮງງານ ທີ່ປະກອບອາຊີບອິດສະລະ ຫຼື ເປັນແຮງງານນອກລະບົບ, ມາດຕະຖານສີມືແຮງງານແຫ່ງຊາດ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ໄດ້; ພັດທະນາລະບົບຂໍ້ມູນຂ່າວສານຕະຫລາດແຮງງານ ໃຫ້ເປັນເຄື່ອງມືທັນສະໄໝ ໃນການດັດສົມຄວາມຕ້ອງການ ແລະ ຄວາມອາດສາມາດໃນການສະໜອງແຮງງານ; ສົ່ງເສີມການຈັດຫາວຽກເຮັດງານທຳ ໃຫ້ກຳລັງແຮງງານ ໄດ້ເຂົ້າເຖິງຕະຫລາດແຮງງານ ທັງພາຍໃນ ແລະ ຕ່າງ ປະເທດ, ສາມາດປະກອບອາຊີບອິດສະລະ ແລະ ກາຍເປັນຜູ້ປະກອບການ, ມີວຽກເຮັດງານທຳ ທີ່ໝັ້ນຄົງ, ມີລາຍໄດ້ ທີ່ສົມເຫດສົມຜົນ; ຄຸ້ມຄອງ ແລະ ປົກປ້ອງສິດ ແລະ ຜົນປະໂຫຍດ ຂອງຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ ຕາມກົດໝາຍ ແລະ ລະບຽບການ

1. **ຄາດໝາຍອັດແທກລະດັບແຜນວຽກຈຸດສຸມ**
   - ພັດທະນາສີມືແຮງງານ ແລະ ຫົວໜ່ວຍແຮງງານ ມີສ່ວນຮ່ວມໃນການຝຶກ, ຍົກລະດັບ, ທົດສອບ ແລະ ອອກໃບຢັ້ງຢືນ ສີມືແຮງງານໃຫ້ໄດ້ 650,000 ຄົນ ໃນນີ້: ຝຶກສີມືແຮງງານ 400,000 ຄົນ, ທົດສອບ ແລະ ອອກໃບຢັ້ງຢືນສີມືແຮງງານແຫ່ງຊາດ 50,000 ຄົນ ແລະ ຕາມມາດຕະຖານສີມືແຮງງານຂອງຫົວໜ່ວຍແຮງງານ 200,000 ຄົນ
   - ສົ່ງເສີມການຈັດຫາວຽກເຮັດງານທຳເຂົ້າສູ່ຕະຫຼາດແຮງງານພາຍໃນ ແລະ ຕ່າງປະເທດ ໃຫ້ໄດ້ 411,000 ຄົນ;
   - ພັດທະນາລະບົບຂໍ້ມູນຂ່າວສານຕະຫລາດແຮງງານ ໃຫ້ມີປະສິດທິພາບ ສາມາດເຊື່ອມຕໍ່ກັບລະບົບຂໍ້ມູນຂອງ 5 ຂະແໜງການ ທີ່ກ່ຽວຂ້ອງ ນັບທັງສູນກາງ ແລະ ທ້ອງຖິ່ນ ແລະ ພາກສ່ວນທຸລະກິດ ໃຫ້ໄດ້ 500 ຫົວໜ່ວຍ;
   - ຮັບຮູ້ມາດຕະຖານສີມືແຮງງານຂອງຫົວໜ່ວຍແຮງງານ 600 ຫົວໜ່ວຍແຮງງານ, ໃນນີ້: ຂະແໜງກະສິກຳ 150 ຫົວໜ່ວຍ, ອຸດສາຫະກຳ 300 ຫົວໜ່ວຍ ແລະ ບໍລິການ 150 ຫົວໜ່ວຍ;
   - ປັບປຸງມາດຕະຖານສີມືແຮງງານແຫ່ງຊາດ ໃຫ້ໄດ້ 26 ສາຂາອາຊີບ ແລະ ສ້າງໃໝ່ມາດຕະຖານສີມືແຮງງານແຫ່ງຊາດ ໃຫ້ໄດ້ 20 ສາຂາອາຊີບ;
   - ປັບປຸງຫຼັກສູດການຝຶກສີມືແຮງງານຕາມມາດຕະຖານສີມືແຮງງານແຫ່ງຊາດ ໃຫ້ໄດ້ 25 ຫຼັກສູດ ແລະ ສ້າງຫຼັກສູດສີມືແຮງງານ ຕາມມາດຕະຖານສີມືແຮງງານແຫ່ງຊາດ ໃຫ້ໄດ້ 15 ຫຼັກສູດ;

DRAFT

- ສະໜອງວັດຖຸອຸປະກອນ ແລະ ເຄື່ອງຈັກຮັບໃຊ້ການພັດທະນາສີມືແຮງງານ ໃຫ້ 7 ແຫ່ງ;
- ສ້າງຄວາມເຂັ້ມແຂງໃຫ້ແກ່ຄູຝຶກ 500 ເທື່ອຄົນ;
- ຈັດຕັ້ງການແຂ່ງຂັນສີມືແຮງງານ ລະດັບຕ່າງໆ 45 ຄັ້ງ;
- ສ້າງຄວາມເຂັ້ມແຂງກ່ຽວກັບການບໍລິການຈັດຫາງານ ໃຫ້ອີງການບໍລິການຈັດຫາງານ 36 ແຫ່ງ;
- ຕິດຕາມການອອກເລກລະຫັດແຮງງານລາວ ແລະ ແຮງງານຕ່າງປະເທດ ໃຫ້ຫົວໜ່ວຍແຮງງານ ແລະ ໂຄງການລົງທຶນ ໃນຂອບເຂດທົ່ວປະເທດ ຈຳນວນ 22,750 ຄົນ.

**2. ວຽກງານຈຸດສຸມ**

- ເລັ່ງໃສ່ຝຶກ ແລະ ຍົກລະດັບສີມືແຮງງານ ໃຫ້ມີຄວາມຫຼາກຫຼາຍສາຂາອາຊີບ, ຫຼາກຫຼາຍລະດັບສີມື, ມີຄວາມຊຳນານງານ ແລະ ມີລະບຽບວິໄນ ໂດຍການມີສ່ວນຮ່ວມຂອງທຸກພາກສ່ວນເສດຖະກິດ-ສັງຄົມ; ສົ່ງເສີມການສ້າງວຽກເຮັດງານທຳທີ່ໝັ້ນຄົງ ແລະ ມີລາຍໄດ້ທີ່ສົມເຫດສົມຜົນ ;
- ສ້າງ ແລະ ຮັບຮູ້ມາດຕະຖານສີມືແຮງງານ, ສ້າງຫຼັກສູດ, ສ້າງລະບົບປະກັນຄຸນນະພາບການພັດທະນາສີມືແຮງງານໃຫ້ມີຄວາມຫຼາກຫຼາຍລະດັບສີມືແຮງງານ ແລະ ຈັດຕັ້ງການທົດລອງ ແລະ ອອກໃບຢັ້ງຢືນສີມືແຮງງານໃຫ້ກຸ່ມເປົ້າ ໝາຍຕ່າງໆ ຕາມຄວາມຕ້ອງການ ແລະ ໜ້າວຽກຂອງຫົວໜ່ວຍແຮງງານ.
- ຈັດຕັ້ງການແຂ່ງຂັນສີມືແຮງງານໃນລະດັບຫົວໜ່ວຍແຮງງານ, ສະຖານພັດທະນາສີມືແຮງງານ, ລະດັບທ້ອງຖິ່ນ, ລະດັບແຫ່ງຊາດ ແລະ ເຂົ້າຮ່ວມແຂ່ງຂັນສີມືແຮງງານອາຊຽນ.
- ພັດທະນາລະບົບຂໍ້ມູນຂ່າວສານຕະຫຼາດແຮງງານ ແລະ ລະບົບການບໍລິການຈັດຫາງານ ໃຫ້ມີຄວາມທັນສະໄໝ, ສະດວກ, ວ່ອງໄວ, ຫຼາຍຮູບແບບ ເພື່ອສາມາດສະໜອງຂໍ້ມູນໃຫ້ແກ່ການດັດສົມ ແລະ ດຸ່ນດ່ຽງຄວາມອາດສາມາດໃນການສະໜອງກຳລັງແຮງງານ ໃຫ້ເຂົ້າເຖິງຕຳແໜ່ງງານ ແລະ ສາມາດປະກອບອາຊີບອິດສະຫຼະ;
- ສ້າງກົນໄກການປະສານງານກັບບັນດາຄູ່ຮ່ວມງານຈາກພາກລັດ ແລະ ພາກເອກະຊົນ ເພື່ອສົ່ງເສີມການຫັນການຈ້າງງານນອກລະບົບ ໄປສູ່ການຈ້າງງານໃນລະບົບ ພ້ອມທັງປັບປຸງກົນໄກການບໍລິການຈັດຫາງານໃຫ້ແຮງງານເຄື່ອນຍ້າຍພາຍໃນ ແລະ ຕ່າງປະເທດ ໃຫ້ຖືກຕ້ອງ ແລະ ປອດໄພ.
- ສົ່ງເສີມການສ້າງວຽກເຮັດງານທຳໃນຊົນນະບົດ ເພື່ອສ້າງຕຳແໜ່ງງານ, ການປະກອບອາຊີບອິດສະຫຼະ ຫຼື ວຽກເຮັດງານທຳທີ່ມີຄຸນຄ່າ ແລະ ເປັນທຳ ໂດຍໃຫ້ບູລິມະສິດແກ່ແຮງງານທ້ອງຖິ່ນ.
- **ວຽກງານແກ້ໄຂບັນຫາແຮງງານ:**

  + ສືບຕໍ່ຄົ້ນຄວ້າສ້າງນະໂຍບາຍການດັດສົມມະຫາພາກການພັດທະນາສີມືແຮງງານ ເພື່ອຕອບສະໜອງແຮງງານທີ່ມີຄຸນນະພາບຕາມຄວາມຕ້ອງການຂອງຕະຫຼາດແຮງງານພາຍໃນ; ປະສານສົມທົບພາກສ່ວນກ່ຽວຂ້ອງ ເພື່ອສືບຕໍ່ປັບປຸງພື້ນຖານໂຄງລ່າງ, ສະໜອງອຸປະກອນ ແລະ ເຄື່ອງມືຮັບໃຊ້ໃຫ້ແກ່ການຝຶກ ແລະ ພັດທະນາສີມືແຮງງານໃນແຕ່ລະສະຖານພັດທະນາສີມືແຮງງານ ເພື່ອໃຫ້ການພັດທະນາສີມືໃຫ້ກຸ່ມເປົ້າໝາຍຕ່າງໆ ຕາມຄວາມຕ້ອງການຂອງຕະຫລາດແຮງງານ; ສ້າງ ແລະ ປັບປຸງຄູ່ມືມາດຕະຖານສີມືແຮງງານ ແລະ ຫລັກສູດພັດທະນາສີມືແຮງງານ, ສ້າງຖານຂໍ້ມູນຜູ້ຕ້ອງການຝຶກສີມືແຮງງານ ແລະ ຕິດຕາມຜູ້ສຳເລັດການຝຶກສີມືແຮງງານ ພ້ອມທັງຊຸກຍູ້ໃນການປະກອບອາຊີບຕາມເງື່ອນໄຂ ແລະ ສະພາບຕົວຈິງ ໂດຍການມີສ່ວນຮ່ວມຂອງຜູ້ໃຊ້ແຮງງານຢ່າງກວ້າງຂວາງ. ປະສານສົມທົບກັບຫົວໜ່ວຍແຮງງານ ແລະ ໂຄງການພັດທະນາຕ່າງໆ ໃນການພັດທະນາສີມືແຮງງານ ເພື່ອຕອບສະໜອງແຮງງານທີ່ມີຄຸນນະພາບຕາມຄວາມຕ້ອງການຂອງຕະຫຼາດແຮງງານ. ຊຸກຍູ້ໃຫ້ມີການຝຶກ ແລະ ພັດທະນາສີມືແຮງງານ ຄວບຄູ່ການຈ້າງງານ, ຝຶກທັກສະ ແລະ ສີມືແຮງງານ ເພື່ອເພີ່ມຜະລິດຕະພາບແຮງງານ;

  + ຄົ້ນຄ້ວາສ້າງນະໂຍບາຍເພື່ອດັດສົມມະຫາພາກການດຸ່ນດ່ຽງແຮງງານຕາມຄວາມຕ້ອງການຂອງຕະຫຼາດແຮງງານ;ສືບຕໍ່ປັບປຸງລະບົບຖານຂໍ້ມູນຂ່າວສານຕະຫຼາດແຮງງານໃຫ້ສາມາດພະຍາກອນດ້ານແຮງງານ ແລະ ຄຸ້ມຄອງຂໍ້ມູນດ້ານສັນຍາແຮງງານ ແລະ ເງິນເດືອນພື້ນຖານ ຂອງແຮງງານພາຍໃນ ແລະ ແຮງງານຕ່າງປະເທດທີ່ມາເຮັດວຽກຢູ່ ສປປ ລາວ ເພື່ອເຊື່ອມກັບຂໍ້ມູນຂອງຂະແໜງການເງິນ ໃນການສົມທຽບ ແລະ ຄິດໄລ່ອາກອນລາຍໄດ້ຂອງແຮງງານຢ່າງຖືກຕ້ອງ. ປະສານກັບພາກສ່ວນທີ່ກ່ຽວຂ້ອງເກັບກຳຕຳແໜ່ງງານວ່າງ ຈາກຫົວໜ່ວຍແຮງງານ ແລະ ໂຄງການລົງທຶນຕ່າງໆ ທີ່ມີຄວາມຕ້ອງການນຳໃຊ້ແຮງງານລາວ, ພ້ອມທັງຈັດງານຕະຫຼາດນັດແຮງງານຢູ່ສູນກາງ ແລະ ທ້ອງຖິ່ນ ເພື່ອສ້າງເງື່ອນໄຂໃຫ້ຜູ້

ອອກແຮງງານສາມາດເຂົ້າເຖິງຕໍາແໜ່ງງານໃນຫຼາກຫຼາຍສາຂາອາຊີບ; ປັບປຸງຕາໜ່າງບໍລິການຈັດຫາງານຢູ່ສູນກາງ ແລະ ບັນດາແຂວງໃຫ້ມີຄວາມເຂັ້ມແຂງ ສາມາດໃຫ້ບໍລິການທີ່ມີປະສິດທິພາບ ແລະ ຂະຫຍາຍຕາໜ່າງການບໍລິການຈັດຫາງານຂັ້ນເມືອງໃຫ້ໄດ້ຕາມຄາດໝາຍ; ໂຄສະນາເຜີຍແຜ່ນິຕິກໍາ ແລະ ຄູ່ມືການເຄື່ອນຍ້າຍທີ່ປອດໄພໃຫ້ເຂົ້າເຖິງກຸ່ມເປົ້າໝາຍໃນຂອບເຂດທົ່ວປະເທດ ພ້ອມທັງເອົາໃຈໃສ່ ຄວບຄຸມອັດຕາວ່າງງານໃຫ້ຢູ່ລະດັບບໍ່ເກີນ 5%.

+ ຂະຫຍາຍລະບົບການຂຶ້ນທະບຽນແຮງງານຕ່າງປະເທດທີ່ເຂົ້າມາເຮັດວຽກຢູ່ ສປປ ລາວ ໄປສູ່ບັນດາແຂວງ ແລະ ເຂດເສດຖະກິດພິເສດ; ສືບຕໍ່ສ້າງລະບົບການຂຶ້ນທະບຽນຄົນຕ່າງປະເທດທີ່ມາອອກແຮງງານ ສປປ ລາວ; ຕິດ ຕາມການຈັດຕັ້ງປະຕິບັດຄ່າຄອງຊີບກັບຄ່າແຮງງານຂັ້ນຕໍ່າໃຫ້ຜູ້ອອກແຮງງານພາກທຸລະກິດ ເພື່ອຮັບປະກັນຊີວິດການເປັນຢູ່ ແລະ ສະຫວັດດີການແຮງງານຕາມເງື່ອນໄຂຕົວຈິງ**;** ສືບຕໍ່ ໂຄສະນາເຜີຍແຜ່ແລະກວດກາການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍແຮງງານ ແລະ ຊຸກຍູ້ຫົວໜ່ວຍແຮງງານໃຫ້ໄດ້ມາດຕະຖານແຮງງານແຫ່ງຊາດໃຫ້ໄດ້ ທັງໝົດ**.**

### *3.2.4 ແຜນວຽກຈຸດສຸມທີ 4: ບຸກຄະລາກອນຂອງພາກລັດໄດ້ຮັບການພັດທະນາ ແລະ ມີຄຸນນະພາບສູງຂຶ້ນ*

**1. ຄາດໝາຍອັດແທກລະດັບແຜນວຽກຈຸດສຸມ**

- ພະນັກງານລັດຖະກອນ ໄດ້ຮັບການຍົກລະດັບ ດ້ານການບໍລິຫານ-ຄຸ້ມຄອງລັດ ຈໍານວນ….ທ່ານ;
- ພະນັກງານລັດຖະກອນ ໄດ້ຮັບການຍົກລະດັບ ດ້ານວິຊາສະເພາະ ລະດັບປະລິນຍາຕີ ຈໍານວນ...ທ່ານ, ລະດັບປະລິນຍາໂທຈໍານວນ...ທ່ານ, ລະດັບປະລິນຍາເອກຈໍານວນ.....ທ່ານ;
- ບັນດາສະຖາບັນການຝຶກອົບຮົມ ແລະ ພັດທະນາລັດຖະກອນ ມີຫຼັກສູດຕາມຄວາມຮັບຜິດຊອບຂອງຕົນທີ່ໄດ້ມາດຕະຖານ ສອດຄ່ອງກັບນະໂບາຍຂອງລັດຖະບານ ແລະ ສາກົນ ;
- ສ້າງ ແລະ ພັດທະນາ ຫຼັກສູດຝຶກອົບຮົມກ່ຽວກັບການຄຸ້ມຄອງ ແລະ ບໍລິຫານລັດ ໃຫ້ໄດ້ 6 ຫຼັກສູດ.
- ວິທະຍາກອນມີຄວາມຮູ້, ຄວາມສາມາດ, ປະສົບການ ແລະ ຮັບປະກັນວິທີການສົ່ງຄວາມຮູ້ ແລະ ແລກປ່ຽນສົນທະນາມີຄຸນນະພາບ;
- ມີລະບົບເຕັກໂນໂລຊີທີ່ທັນສະໄໝ ເພື່ອສັງລວມຜົນການຝຶກອົບຮົມ, ການຮຽນຕໍ່ຍົກລະດັບວິຊາສະເພາະ ປະຈໍາປີເປັນປົກກະຕິ ;
- ສູ້ຊົນປະຕິບັດແຜນຝຶກອົບຮົມຕາມເນື້ອໃນດັ່ງນີ້: ແນວທາງ, ນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ, ທິດສະດີການເມືອງ ແລະ ການປົກຄອງ, ຈັນຍາບັນ,ຈັນຍາທໍາ, ການບໍລິຫານຄຸ້ມຄອງລັດ, ເຕັກນິກວິຊາການ, ພາສາຕ່າງປະເທດ, ວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກໍາ, ເຕັກໂນໂລຊີດີຈີຕອນ, ການນໍາໃຊ້ AI ແລະ ຂໍ້ມູນຂ່າວສານ, ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ແລະ ເນື້ອໃນການຝຶກອົບຮົມອື່ນໆ ຕາມຫຼັກສູດທີ່ໄດ້ກໍານົດໄວ້ຕາມລະບຽບການ ;
- ສູ້ຊົນຍົກລະດັບວິຊາສະເພາະໃຫ້ລັດຖະກອນສູງຂຶ້ນ.
- ສູ້ຊົນຫັນລັດຖະກອນໄປເປັນພາລະກອນ ຕາມກົງຈັກທີ່ຫັນເປັນຫົວໜ່ວຍວິຊາການ ໃຫ້ໄດ້ 100%;
- ພັດທະນາລະບົບຄຸ້ມຄອງພາລາກອນ ໃຫ້ໄດ້ 1 ລະບົບ.
- ສູ້ຊົນພັດທະນາພາລະກອນ ໃຫ້ມີຄຸນນະພາບ ແລະ ເປັນມືອາຊີບ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ ແລະ ສັງຄົມ ຂອງຊາດ.
- ຄົ້ນຄວ້າສ້າງ, ປັບປຸງກົດໝາຍ ແລະ ລະບົບນິຕິກໍາລຸ່ມກົດໝາຍໃນການຄຸ້ມຄອງພາລະກອນ, ປັບປຸງ-ພັດທະນາ ລະບົບການປະເມີນຜົນການປະຕິບັດໜ້າທີ່ວຽກງານ ໃຫ້ສອດຄ່ອງກັບຂົງເຂດວິຊາການ ແລະ ແທດເໝາະ ກັບສະພາບໃນໄລຍະໃໝ່, ສ້າງລະບອບ-ລະບົບໂຄງສ້າງເງິນເດືອນໃໝ່, ພ້ອມທັງສ້າງລະບົບ ຄຸ້ມຄອງ ແລະ ປະເມີນຜົນວຽກງານພາລະກອນ ທີ່ຫັນເປັນທັນສະໄໝດ້ວຍລະບົບ IT ສາມາດເຊື່ອມໂຍງກັບບັນດາກະຊວງ, ອົງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ.

**2. ວຽກງານຈຸດສຸມ**

- ປັບປຸງ ແລະ ພັດທະນາຫລັກສູດ ໃນຂົງເຂດວຽກງານການປົກຄອງ ແລະ ຄຸ້ມຄອງລັດຖະກອນ ໃຫ້ມີຄວາມສອດຄ່ອງກັບແຕ່ລະຂົງເຂດວຽກງານ ແລະ ບັນດາເປົ້າໝາຍຝຶກອົບຮົມ;

- ສ້າງ ແລະ ຍົກລະດັບສະຖາບັນ ແລະ ສູນຝຶກອົບຮົມ ພະນັກງານລັດຖະກອນ ໃຫ້ສາມາດສະໜອງການບໍລິການຝຶກອົບຮົມທີ່ມີປະສິດທິພາບ ແລະ ປະສິດທິຜົນສູງ;

- ເພີ່ມທະວີການພົວພັນ ຮ່ວມມືກັບພາກພື້ນ ແລະ ສາກົນ ເພື່ອສ້າງຄວາມເຂັ້ມແຂງ ພ້ອມທັງການສະໜອງອຸປະກອນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ໃຫ້ແກ່ສະຖາບັນການຝຶກອົບຮົມ;

- ສ້າງແຜນການຝຶກອົມຮົມ ແລະ ພັດທະນາລັດຖະກອນ (ໄລຍະສັ້ນ-ຍາວ);

- ສຳຫຼວດຄວາມຕ້ອງການການຝຶກອົບຮົມ ແລະ ພັດທະນາຂອງພະນັກງານ-ລັດຖະກອນທົ່ວປະເທດ (Training Need Analysis);

- ສ້າງລະບົບ ແລະ ພັດທະນາຫລັກສູດຝຶກອົບຮົມແບບເອເລັກໂຕນິກທີ່ມີປະສິດທິພາບ (E-Training System & Program);

- ປັບປຸງຫລັກສູດຝຶກອົບຮົມໃຫ້ຜູ້ບໍລິຫານລະດັບຕ່າງໆ (ລະດັບສູງ, ກາງ ແລະ ຕົ້ນ) ແລະ ຫລັກສູດອື່ນໆ ;

- ຄົ້ນຄວ້າ, ສ້າງລະບົບນິຕິກຳ ກ່ຽວກັບການປະເມີນຜົນການປະຕິບັດໜ້າທີ່ວຽກງານຂອງພາລະກອນ ທີ່ມີຄຸນນະພາບສູງ ພ້ອມທັງຄົ້ນຄວ້າສ້າງ ແລະ ນຳໃຊ້ລະບອບ-ລະບົບໂຄງສ້າງເງິນເດືອນໃໝ່ ຂອງພາລະກອນ ທີ່ສາມາດປະຕິບັດນະໂຍບາຍ ແລະ ສິ່ງຈູງໃຈໄດ້ເໝາະສົມ ໃນຂົງເຂດວິຊາການ ;

- ໂຄສະນາ-ເຜີຍແຜ່, ແນະນຳ, ຊຸກຍູ້, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງ ປະຕິບັດບັນດານິຕິກຳກ່ຽວກັບວຽກງານຄຸ້ມຄອງພາລະກອນ ປີ 2026-2030;

- ຄົ້ນຄວ້າ, ສ້າງລະບົບຖານຂໍ້ມູນຄຸ້ມຄອງ ແລະ ລະບົບປະເມີນຜົນການປະຕິບັດໜ້າທີ່ວຽກງານ ຂອງພາ ລະກອນໃນຂົງເຂດວິຊາການທີ່ທັນເປັນທັນສະໄໝສາມາດເຊື່ອມໂຍງກັບບັນດາກະຊວງ, ອົງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ.

### 3.3 ເປົ້າໝາຍທີ 3: ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ, ຕົວເມືອງ ແລະ ຊົນນະບົດໄດ້ຮັບການພັດທະນາຢ່າງສົມຄູ່ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ຫຼຸດລົງເທື່ອລະກ້າວ

ປັບປຸງຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈ ຂອງປະຊາຊົນ ໃຫ້ດີຂຶ້ນໂດຍສະເພາະ ຢູ່ເຂດຊົນນະບົດ, ຫ່າງໄກຊອກຫຼີກ ເຂດທີ່ໝັ້ນການປະຕິວັດ, ເຂດວິລະຊົນ ແລະ ເຂດຊາຍແດນ ເພື່ອອັດຊ່ອງວ່າງຄວາມແຕກໂຕນດ້ານການພັດທະນາ ລະຫວ່າງ ຕົວເມືອງ ແລະ ຊົນນະບົດ, ລະຫວ່າງ ຜູ້ທີ່ມີລາຍຮັບສູງ ແລະ ຜູ້ທີ່ມີລາຍຮັບຕໍ່າ, ເກັບກູ້ລະເບີດທີ່ຍັງບໍ່ທັນແຕກອອກຈາກພື້ນທີ່ການຜະລິດກະສິກຳ ເພື່ອຂະຫຍາຍພື້ນທີ່ການປູກຝັງ, ລ້ຽງສັດ ໃຫ້ຊາວກະສິກອນ ໃນການຜະລິດສະບຽງອາຫານໃຫ້ພຽງພໍສະໜອງຕໍ່ສັງຄົມ . ຍົກສູງບົດບາດຂອງແມ່ຍິງ, ໄວໜຸ່ມ ໃນການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ. ເອົາໃຈໃສ່ວຽກງານປົກປ້ອງເດັກ, ແມ່ຍິງ ພ້ອມທັງຮັບປະກັນ ແມ່ມານ ແລະ ເດັກໄດ້ຮັບໂພຊະນາການ, ສານອາຫານໃນປະລິມານທີ່ພຽງພໍ ແລະ ໄດ້ຮັບການປິ່ນປົວເວລາເຈັບເປັນ. ສັງຄົມມີຄວາມສະຫງົບ, ຊາວຜູ້ອອກແຮງງານເຂົ້າລະບົບປະກັນສັງຄົມ ແລະ ປະກັນສຸຂະພາບ, ປະຊາຊົນຜູ້ດ້ອຍໂອກາດ ແລະ ຜູ້ທີ່ມີຜົນງານຕໍ່ການປະຕິວັດຊາດປະຊາທິປະໄຕ ໄດ້ຮັບນະໂຍບາຍທີ່ເໝາະສົມ; ວັດທະນາທຳ, ຮີດຄອງປະເພດີອັນດີງາມຂອງຊາດໄດ້ຮັບການປົກປັກຮັກສາ ແລະ ເສີມຂະຫຍາຍຢ່າງຕັ້ງໜ້າ.

**+ ຄາດໝາຍລະດັບເປົ້າໝາຍ**

- ອັດຕາຄວາມທຸກຍາກໃຫ້ຍັງເຫຼືອ 10% ຂອງປະຊາກອນທັງໝົດ;
- ສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ ໂດຍວັດແທກຈາກ ຄ່າດັດຊະນີຄວາມສະເໝີພາບຍິງ-ຊາຍ ເພີ່ມຂຶ້ນ ຈາກ 0.700 ໃນປີ 2024 ເປັນ 0.733 ໃນປີ 2030;
- ຊຸກຍູ້ສ້າງເງື່ອນໄຂໃຫ້ພະນັກງານເພດຍິງໄດ້ບັນຈຸສັບຊ້ອນເປັນພະນັກງານນຳພາ-ຄຸ້ມຄອງ ແຕ່ລະຂັ້ນ ໂດຍສະເລ່ຍ ໃຫ້ກວມເອົາ 20% ຂອງຜູ້ໄດ້ຮັບຕຳແໜ່ງບໍລິຫານທັງໝົດ; ຊຸກຍູ້ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ແມ່ຍິງໄດ້ບັນຈຸສັບຊ້ອນເຂົ້າເປັນສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ເພດຍິງກວມ 30% ຂຶ້ນໄປ.
- ຫຼຸດຜ່ອນອັດຕາເດັກນ້ອຍລຸ່ມ 05 ປີທີ່ມີນ້ຳໜັກຕ່ຳກວ່າມາດຕະຖານ ໃຫ້ຍັງເຫຼືອ 18% ຂອງປະຊາກອນເປົ້າໝາຍ;


DRAFT

- ຫຼຸດຜ່ອນອັດຕາເດັກນ້ອຍລຸ່ມ 05 ປີ ທີ່ມີລວງສູງຕ່ຳກວ່າມາດຕະຖານ ໃຫ້ຍັງເຫຼືອ 27% ຂອງປະຊາກອນເປົ້າໝາຍ;
- ຫຼຸດຜ່ອນອັດຕາເດັກນ້ອຍລຸ່ມ 05 ປີ ທີ່ຂາດສານອາຫານກະທັນຫັນ (ຈ່ອຍຜອມ) ໃຫ້ຍັງເຫຼືອ 5 % ຂອງປະຊາກອນເປົ້າໝາຍ;

### *3.3.1 ແຜນວຽກຈຸດສຸມທີ 1: ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ມີຄຸນນະພາບດີຂຶ້ນ*

**1. ຄາດໝາຍ ລະດັບແຜນວຽກຈຸດສຸມ**

- ສູ້ຊົນສ້າງຄອບຄົວພົ້ນທຸກໃຫ້ໄດ້ຫຼາຍກວ່າ 100,000 ຄອບຄົວ;
- ສ້າງບ້ານພົ້ນທຸກໃຫ້ໄດ້ຫຼາຍກວ່າ 1,000 ບ້ານ;
- ສ້າງເມືອງພົ້ນທຸກໃຫ້ໄດ້ຫຼາຍກວ່າ 25 ເມືອງ;
- ສ້າງຄອບຄົວພັດທະນາໃຫ້ໄດ້ຫຼາຍກວ່າ 200,000 ຄອບຄົວ;
- ສ້າງບ້ານພັດທະນາໃຫ້ໄດ້ຫຼາຍກວ່າ 2,000 ບ້ານ;
- ສ້າງເມືອງເຂັ້ມແຂງຮອບດ້ານໃຫ້ໄດ້ 20 ເມືອງ;
- ສ້າງບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ ໃຫ້ໄດ້ 40 ບ້ານ;
- ສືບຕໍ່ສ້າງຈຸດສຸມພັດທະນາຊົນນະບົດໃໝ່ ເພື່ອໃຫ້ກາຍເປັນຕົວແບບໃນການພັດທະນາ ທີ່ຍືນຍົງ ໃຫ້ໄດ້ 15 ຈຸດສຸມ;
- ສືບຕໍ່ຈັດສັນພູມລຳເນົາ ແລະ ອາຊີບ ຂອງປະຊາຊົນ ຢູ່ 25 ຈຸດ ຕາມກົດໝາຍກຳນົດ ໃຫ້ຮັບປະກັນຄວາມໝັ້ນຄົງ ແລະ ຍືນຍົງ;
- ສືບຕໍ່ການຂະຫຍາຍກອງທຶນພັດທະນາຂັ້ນບ້ານ ຢູ່ເມືອງທຸກຍາກ ໃຫ້ໄດ້ຢ່າງໜ້ອຍ 100 ບ້ານ.
- ຂະຫຍາຍອັດຕາການຊົມໃຊ້ໄຟຟ້າ ໃຫ້ໄດ້ 98% ຂອງຄົວເຮືອນທົ່ວປະເທດ.

**2. ວຽກງານຈຸດສຸມ**

1) ວຽກງານການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ:

- ສືບຕໍ່ລຶບລ້າງຄວາມທຸກຍາກຢູ່ຊົນນະບົດ ຢ່າງມີຈຸດສຸມ, ສຸມໃສ່ພັດທະນາໂຄງລ່າງຢູ່ຊົນນະບົດໃຫ້ສະດວກສະບາຍຂຶ້ນ ເປັນຕົ້ນ: ແກ້ໄຂເສັ້ນທາງ, ໄຟຟ້າ, ນ້ຳປະປາ, ໂຮງຮຽນ ແລະ ສຸກສາລາ ເພື່ອຍົກລະດັບຊີວິດການເປັນຢູ່ ແລະ ການແກ້ໄຂຄວາມທຸກຍາກ ຂອງປະຊາຊົນ ຢູ່ເຂດຊົນນະບົດ ເທື່ອລະກ້າວ; ສົ່ງເສີມການຜະລິດ ເສດຖະກິດເປັນເຈົ້າຕົນເອງ, ສົ່ງເສີມການຜະລິດກະສິກຳເປັນສິນຄ້າ ຕິດພັນກັບອຸດສາຫະກຳປຸງແຕ່ງ ແລະ ການຕະຫຼາດຕາມທ່າແຮງໄດ້ປຽບຂອງທ້ອງຖິ່ນ ແລະ ເຂດແຄວ້ນ; ຊຸກຍູ້ການພັດທະນາວິສາຫະກິດ, ຟາມ, ຄອບຄົວຕົວແບບໃນການຜະລິດສິນຄ້າສົດ, ຊີວະພາບ, ສະອາດ (ປອດສານເຄມີ) ເພື່ອສະໜອງໃຫ້ແກ່ຕົວເມືອງເພື່ອທົດແທນການນຳເຂົ້າ ແລະ ເພື່ອສົ່ງອອກ ;
- ສ້າງໃຫ້ມີຕົວແບບໃນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກແບບໃໝ່ໃຫ້ເຂັ້ມແຂງ ເປັນຕົ້ນ: ກຸ່ມການຜະລິດ, ປຸງແຕ່ງ, ການບໍລິການ, ນິຄົມ (ຟາມ), ສະຫະກອນ, ຫົວໜ່ວຍທຸລະກິດຂະໜາດນ້ອຍ ແລະ ກາງ.
- ສືບຕໍ່ຈັດຕັ້ງການຜະລິດ ແລະ ການບໍລິການໃຫ້ແກ່ຊາວກະສິກອນ ໂດຍເລີ່ມຈາກການສ້າງເສດຖະກິດຮ່ວມມືຮູບແບບຕ່າງໆ ຢູ່ຊົນນະບົດໃຫ້ເຄື່ອນໄຫວມີຄຸນນະພາບ ແລະ ມີປະສິດທິຜົນ; ປັບປຸງການຈັດຕັ້ງຮ່ວມມື ຂອງຊາວກະສິກອນໃຫ້ເຂັ້ມແຂງ; ສົ່ງເສີມບັນດາວິສາຫະກິດຈາກພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃສ່ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂອງປະຊາຊົນ ຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝເທື່ອລະກ້າວ; ສ້າງເງື່ອນໄຂໃຫ້ແກ່ຊາວກະສິກອນໄດ້ເຂົ້າຮ່ວມຜະລິດສິນຄ້າໃຫ້ຫຼາຍຂຶ້ນ;
- ສຳຫຼວດຈັດສັນທີ່ດິນທຳການຜະລິດໃຫ້ປະຊາຊົນ ຕິດພັນກັບການນຳໃຊ້ຢ່າງມີປະສິດທິຜົນ ແລະ ຍືນຍົງ; ຮັບປະກັນສິດນຳໃຊ້ທີ່ດິນ ຂອງປະຊາຊົນ ເພື່ອໃຫ້ທີ່ດິນເປັນພາຫະນະການຜະລິດທີ່ຍືນຍົງ; ພັດທະນາທີ່ດິນກະສິກຳຕິດພັນກັບການສ້າງການເຕີບໂຕສີຂຽວ, ປົກປັກຮັກສາສິ່ງແວດລ້ອມ ແລະ ລະບົບນິເວດກະສິກຳ;
- ສ້າງເງື່ອນໄຂ ແລະ ໂອກາດໃຫ້ແກ່ປະຊາຊົນຊາວກະສິກອນ ໄດ້ຮຽນຮູ້ ແລະ ນຳໃຊ້ຜົນການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກຳ, ແລະ ເຕັກນິກວິທະຍາສາດກະສິກຳສະໄໝໃໝ່ໃຫ້ຫຼາຍຂຶ້ນ ເພື່ອຫັນປ່ຽນ

ແບບວິທີການຜະລິດທີ່ຫຼ້າຫຼັງ, ຫັດຖະກຳແບບພື້ນບ້ານ ໄປນຳໃຊ້ຊັບພະຍາກອນທຳມະຊາດ, ທີ່ດິນ... ໃຫ້ມີປະສິດທິພາບ, ມີຄຸນນະພາບ ຜະລິດຕະພາບສູງຂຶ້ນ;

- ສະຫຼຸບຕີລາຄາຄືນການພັດທະນາບັນດາຈຸດສຸມພັດທະນາທີ່ເປັນບຸລິມະສິດ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ຜ່ານມາ ເພື່ອຄົ້ນຄວ້າກຳນົດ ແລະ ສືບຕໍ່ພັດທະນາໃຫ້ກາຍເປັນຕົວແບບໃນການພັດທະນາຊົນນະບົດໃໝ່ ແລະ ການຈັດສັນພູມລຳເນົາ ແລະ ອາຊີບ ຂອງປະຊາຊົນ ທີ່ໝັ້ນຄົງ ແລະ ຍືນຍົງ; ສຸມໃສ່ຈັດສັນພູມລຳເນົາຄົງທີ່ ແລະ ອາຊີບໝັ້ນຄົງໃຫ້ປະຊາຊົນບັນດາເຜົ່າ ຕິດພັນກັບບັນຫາການຍຸດຕິການເຄື່ອນຍ້າຍ ຂອງພົນລະເມືອງແບບຊະຊາຍ;

- ສ້າງແຜນແມ່ບົດພັດທະນາຮອບດ້ານ, ຍຸດທະສາດ, ມາດຕະຖານ ແລະ ຕົວຊີ້ວັດຕ່າງໆ ກ່ຽວກັບການພັດທະນາຊົນນະບົດໃໝ່, ມາດຕະຖານການພົ້ນທຸກ ແລະ ພັດທະນາ; ຄົ້ນຄວ້າກຳນົດນະໂຍບາຍສົ່ງເສີມທີ່ສົມເຫດສົມຜົນ ເພື່ອດຶງດູດເອົາຫຼາຍພາກສ່ວນເສດຖະກິດ, ບຸກຄົນ ແລະ ສັງຄົມ ເຂົ້າຮ່ວມໃນວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃຫ້ຫຼາຍຂຶ້ນ; ຄົ້ນຄວ້າຈັດລຽງບຸລິມະສິດການພັດທະນາເຂດແຄວ້ນ, ຂະແໜງການ ຢ່າງລະອຽດ ຕາມທ່າແຮງເງື່ອນໄຂ ຂອງແຕ່ລະທ້ອງຖິ່ນ ເພື່ອສຸມທຶນຮອນເຂົ້າໃສ່ການພັດທະນາຢ່າງຖືກຕ້ອງສອດຄ່ອງ ແລະ ມີຈຸດສຸມ, ທັງຮັບປະກັນປະສິດທິພາບ, ປະສິດທິຜົນ ແລະ ຍືນຍົງ;

- ປັບປຸງນະໂຍບາຍສິນເຊື່ອຊົນນະບົດ, ການຈັດຕັ້ງກອງທຶນຕ່າງໆ ທີ່ເຄື່ອນໄຫວຢູ່ຊົນນະບົດ ໃຫ້ເຂັ້ມແຂງ ແລະ ສາມາດເຄື່ອນໄຫວໄດ້ຢ່າງມີປະສິດທິຜົນ ; ຊຸກຍູ້ທະນາຄານພັດທະນາຊົນນະບົດ ໃຫ້ເຄື່ອນໄຫວຖືກຕ້ອງກັບເປົ້າໝາຍແກ້ໄຂຄວາມທຸກຍາກ;

- ສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ (ຊາວບ້ານ), ສ້າງຄົນຊົນນະບົດໃຫ້ເປັນເຈົ້າຊົນນະບົດ ແລະ ກາຍເປັນນັກພັດທະນາ; ປັບປຸງລະບົບການເມືອງ ແລະ ການບໍລິຫານລັດ ຢູ່ຂັ້ນຮາກຖານໃຫ້ມີຄວາມເຂັ້ມແຂງ ແລະ ໜັກແໜ້ນກວ່າເກົ່າ; ສືບຕໍ່ຫັນພະນັກງານ ລົງສູ່ຮາກຖານ ເພື່ອນຳພາປະຊາຊົນ, ຊາວກະສິກອນ ເຮັດຕົວຈິງ, ກຳ ໃຫ້ໄດ້ບັນຫາ ຈຸດພິເສດສະເພາະ ຂອງຊົນນະບົດ ແລະ ຄວາມທຸກຍາກ ຂອງປະຊາຊົນ ເພື່ອຊອກຫາແນວທາງ ວິທີການແກ້ໄຂ ຢ່າງຖືກ ແລະ ມີປະສິດທິຜົນ;

- ຍູ້ແຮງຕົວແບບການພັດທະນາ ມີສ່ວນຮ່ວມຂອງຊຸມຊົນໃຫ້ຫຼາຍຂຶ້ນ ເປັນຕົ້ນ: ເສັ້ນທາງ, ໄຟຟ້າ,ນ້ຳປະປາ, ຊົນລະປະທານ, ສຶກສາ, ສາທາ ແລະ ອື່ນໆ ຢ່າງເປັນເຈົ້າການ. ກຳນົດໃຫ້ຈະແຈ້ງອັນໃດແມ່ນລັດເຮັດ, ອັນໃດລັດຮ່ວມກັບປະຊາຊົນ, ອັນໃດໃຫ້ຊຸມຊົນເຮັດ ແລະ ອັນໃດມອບໃຫ້ຊຸມຊົນປຸກລະດົມຂົນຂວາຍ ສ້າງຄວາມເປັນເຈົ້າຕົນເອງ.

- ສືບຕໍ່ພົວພັນຮ່ວມມືກັບພາກພື້ນ ແລະ ສາກົນ ເພື່ອປຸກລະດົມ, ຍາດແຍ່ງທຶນຮອນເຂົ້າໃສ່ການພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກ ໃຫ້ໄດ້ຫຼາຍ ແລະ ມີປະສິດທິຜົນກວ່າເກົ່າ.

2) ວຽກງານປັບປຸງຮາກຖານການເມືອງ ໃຫ້ມີຄວາມເຂັ້ມແຂງ ແລະ ໜັກແໜ້ນ

- ສຸມໃສ່ປັບປຸງຄວາມສາມາດການເຄື່ອນໄຫວຕາມພາລະບົດບາດ, ໜ້າທີ່ ແລະ ຄວາມຮັບຜິດຊອບຢູ່ຊຸມຊົນ ແລະ ຕາແສງ ໃຫ້ມີຄວາມເຂັ້ມແຂງ ແລະ ມີປະສິດທິຜົນ ຕິດພັນກັບສືບຕໍ່ຈັດຕັ້ງປະຕິບັດ 4 ເນື້ອໃນ ແລະ 4 ຄາດໝາຍ (ດ້ານການເມືອງ, ດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ດ້ານເສດຖະກິດ ແລະ ດ້ານວັດທະນະທຳ-ສັງຄົມ);

- ສຸມໃສ່ ຍົກສູງຄວາມສາມາດໃນການນຳພາ-ຄຸ້ມຄອງຂອງຄະນະພັກ-ຄະນະນຳແຕ່ລະບ່ອນ, ປັບປຸງຄຸນນະພາບການດຳເນີນຊີວິດຂອງການຈັດຕັ້ງພັກ ແລະ ການຈັດຕັ້ງມະຫາຊົນ ຕິດພັນກັບການກວດກາ, ຕີລາຄາຄວາມເປັນແບບຢ່າງນຳໜ້າຂອງສະມາຊິກ; ເພີ່ມທະວີການສະກັດກັ້ນ ແລະ ແກ້ໄຂບັນຫາປະກົດການຫຍໍ້ທໍ້ໃນກົງຈັກການຈັດຕັ້ງ, ສ້າງການຫັນປ່ຽນແບບບຸກທະລຸດ້ານກົນໄກ ແລະ ແບບແຜນການເຄື່ອນໄຫວນຳພາຄຸ້ມຄອງໃນແຕ່ລະກົງຈັກໃຫ້ມີຄວາມປອດໃສຂາວສະອາດ. ປັບປຸງການຈັດຕັ້ງພັກ ແລະ ອົງການຈັດຕັ້ງມະຫາຊົນໃນບັນດາວິສາຫະກິດ ໃຫ້ມີຄວາມໂປ່ງໃສໃນການບໍລິຫານຈັດການ, ຕ້ານການຟູມເຟືອຍ, ປົກປ້ອງສິດຜົນປະໂຫຍດຂອງລັດ ແລະ ລວມໝູ່ ແລະ ພັດທະນາວິສາຫະກິດໃຫ້ມີປະສິດທິຜົນທາງດ້ານທຸລະກິດ;

- ສືບຕໍ່ຫັນລົງກໍ່ສ້າງຮາກຖານການເມືອງ, ສ້າງທ່າສະໜາມ ປກຊ-ປກສ ທົ່ວປວງຊົນຮອບດ້ານຢ່າງແຂງແຮງ ແລະ ໜັກແໜ້ນ; ປັບປຸງເນື້ອໃນ, ຮູບການ ແລະ ວິທີການກໍ່ສ້າງຮາກຖານການເມືອງໃຫ້ໜັກແໜ້ນ, ສົມທົບກັບແໜ້ນ 4 ເນື້ອໃນ ແລະ 4 ຄາດໝາຍ ກັບການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ໃຫ້ປະກົດຜົນເປັນຈິງ, ສ້າງຄວາມເປັນເຈົ້າຕົນເອງຮອບດ້ານຂອງອຳນາດການປົກຄອງ ແລະ ຊຸມຊົນຫລາຍຂຶ້ນ. ເປັນເຈົ້າການຕອບຕ້ານ, ສະກັດກັ້ນ ແລະ ແກ້ໄຂໜໍ່ແໜງປັດໄຈຄວາມບໍ່ສະຫງົບທີ່ຈະພາໃຫ້ກະທົບຕໍ່ຄວາມໝັ້ນຄົງທາງດ້ານການເມືອງ,

ເສດຖະກິດ ແລະ ວັດທະນະທຳ-ສັງຄົມ, ຄວາມບໍ່ເປັນລະບຽບຮຽບຮ້ອຍ ເປັນຕົ້ນ ຢາເສບຕິດ, ອາຊະຍາກຳທຸກຮູບແບບ, ການຄ້າມະນຸດ ແລະ ອື່ນໆ.

### *3.3.2 ແຜນວຽກຈຸດສຸມທີ 2: ປັບປຸງວຽກງານຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ ໃຫ້ທົ່ວເຖິງ ແລະ ມີຄຸນນະພາບສູງຂຶ້ນ*

ຊຸກຍູ້, ສົ່ງເສີມການຜະລິດກະສິກຳໃຫ້ມີຄວາມຫຼາກຫຼາຍເພື່ອຄ້ຳປະກັນສະບຽງອາຫານ, ໂພຊະນາການ ແລະ ຄວາມໝັ້ນຄົງຂອງຊາດ ໂດຍສະເພາະການຜະລິດເຂົ້າ, ພືດຜັກ, ຊີ້ນ, ໄຂ່, ປາ ແລະ ອື່ນໆ ໃຫ້ສາມາດກຸ້ມຕົນເອງ, ຮັບປະກັນຕໍ່ການສະໜອງພາຍໃນໃຫ້ທົ່ວເຖິງ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ. ປັບປຸງການສະໜອງການຮັກສາສຸຂະພາບຂອງແມ່, ເດັກອ່ອນ ແລະ ເດັກ, ວຽກງານໂພຊະນາການໃນເດັກລຸ່ມ 5 ປີ ໃຫ້ມີຄຸນນະພາບ, ມີຄວາມເຊື່ອມສານຢ່າງເປັນລະບົບ ແລະ ທົ່ວເຖິງ.

**1. ຄາດໝາຍລະດັບແຜນວຽກຈຸດສຸມ**

- ຜະລິດເຂົ້າເປືອກ ໃຫ້ໄດ້ 4 ລ້ານໂຕນ/ປີ (ສຳລັບຄ້ຳປະກັນສະບຽງ 2,5 ລ້ານໂຕນ/ປີ, ຄັງແຮເຂົ້າ 0.4 ລ້ານໂຕນ/ປີ, ໄວ້ເປັນແນວພັນ 0.1 ໂຕນ/ປີ, ປຸງແຕ່ງພາຍໃນ ແລະ ເປັນສິນຄ້າສົ່ງອອກ 0,8 ລ້ານໂຕນ).
- ຜະລິດພືດສະບຽງອາຫານໃຫ້ໄດ້ ໃຫ້ໄດ້ 2.6 ລ້ານໂຕນ/ປີ, ໃນນັ້ນ: ສາລີຫວານ: ໃຫ້ໄດ້ 34,450 ເຮັກຕາ, ຜົນຜະລິດໃຫ້ໄດ້ 0,2 ລ້ານໂຕນ/ປີ; ພືດຜັກໃຫ້ໄດ້ທັງໝົດ 200,000 ເຮັກຕາ,ຜົນຜະລິດໃຫ້ໄດ້ 7 ລ້ານໂຕນ/ປີ; ເຜືອກມັນ ໃຫ້ໄດ້ 18,000 ເຮັກຕາ, ຜົນຜະລິດ 0,17 ລ້ານໂຕນ/ປີ; ໝາກໄມ້ໃຫ້ໄດ້ ທັງໝົດ 52,000 ເຮັກຕາ, ຜົນຜະລິດໃຫ້ໄດ້ 0,53 ລ້ານໂຕນ/ປີ.
- ສູ້ຊົນຜະລິດ ຊີ້ນ, ໄຂ່ ແລະ ປາ ໃນປີ 2030 ໃຫ້ໄດ້ 716,430 ໂຕນ ເຮັດໃຫ້ອັດຕາການບໍລິໂພກ ບັນລຸໄດ້ 87,2 ກິໂລ/ຄົນ/ປີ, ໃນນັ້ນ ຊີ້ນໃຫ້ໄດ້ 387.200 ໂຕນ/ປີ (ຜະລິດຊີ້ນສັດປີກ 106,670 ໂຕນ/ປີ) ໄຂ່ ໃຫ້ໄດ້ປະມານ 47,100 ໂຕນ/ປີ, ຜົນຜະລິດປາ ແລະ ສັດນ້ຳ ໄດ້ 291,130 ໂຕນ (ໃນນັ້ນ ຜົນຜະລິດປາລ້ຽງ 70 %).
- ເພີ່ມອັດຕາການບໍລິໂພກເກືອໄອໂອດີນຂອງຄົວເຮືອນ 60% ຂອງປະຊາກອນເປົ້າໝາຍ;
- ອັດຕາຊົມໃຊ້ນ້ຳສະອາດ ໃຫ້ໄດ້ຫຼາຍກວ່າ 95% ຂອງປະຊາກອນທັງໝົດ;
- ອັດຕາຊົມໃຊ້ວິດຖ່າຍຄອບຄົວ ໃຫ້ໄດ້ຫຼາຍກວ່າ 90% ຂອງຄອບຄົວທັງໝົດ.

**2. ວຽກງານຈຸດສຸມ**

- ກຳນົດໂຄງປະກອບການຜະລິດກະສິກຳ ເປັນຕົ້ນແມ່ນ ດ້ານສະບຽງອາຫານ ເພື່ອສົ່ງເສີມການຜະລິດພາຍໃນທົດແທນການນຳເຂົ້າ;
- ສົ່ງເສີມການຜະລິດສະບຽງອາຫານ ເພື່ອຊົມໃຊ້ໃນຄົວເຮືອນ ໃຫ້ມີຄວາມຫຼາກຫຼາຍ ແລະ ປອດໄພ ໂດຍສະເພາະ ແມ່ນ ເຂດຊົນນະບົດ ທີ່ມີພາວະໂພຊະນາການຕ່ຳ;
- ສົ່ງເສີມ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ຊາວກະສິກອນ ໃນການປູກຝັງ, ລ້ຽງສັດ ເພື່ອບໍລິໂພກໃນຄົວເຮືອນ ໃຫ້ມີຄວາມຫຼາກຫຼາຍ, ໂດຍສະເພາະ ແມ່ນ ການປູກພືດອາຍຸສັ້ນ, ການລ້ຽງສັດນ້ອຍ (ປາ, ສັດນ້ຳ, ສັດປີກ) ຢູ່ເຂດຊົນນະບົດຫ່າງໄກສອກຫຼີກ ທີ່ມີພາວະໂພຊະນາການຕ່ຳ;
- ຄຸ້ມຄອງການສະສົມ (ຄັງແຮ), ການດຸ່ນດ່ຽງ ແລະ ການຈໍລະຈອນແຈກຢາຍ ສະບຽງອາຫານໃຫ້ສາມາດເຂົ້າເຖິງ ໃນຂອບເຂດທົ່ວປະເທດ;
- ຄຸ້ມຄອງ, ນຳໃຊ້ ແລະ ພັດທະນາທີ່ດິນ ກະສິກຳ ເພື່ອເປົ້າໝາຍການຄ້ຳປະກັນສະບຽງອາຫານ ໃຫ້ມີປະສິດທິຜົນ ແລະ ມີຄວາມຍືນຍົງ;
- ຄຸ້ມຄອງ, ນຳໃຊ້ ແລະ ພັດທະນາລະບົບຊົນລະປະທານ ໃຫ້ມີປະສິດທິຜົນ, ເພີ່ມເນື້ອທີ່ສະໜອງນ້ຳໃຫ້ຫຼາຍຂຶ້ນ, ຄົ້ນຄວ້າ ແນວພັນ ເຂົ້າ, ພືດ, ໄມ້ໃຫ້ໝາກ ແລະ ສັດ ເພື່ອຍົກສະມັດຕະພາບການຜະລິດ ແລະ ເໝາະສົມກັບສະພາບພື້ນທີ່ແຕ່ລະເຂດ;
- ຄົ້ນຄວ້າ, ພັດທະນາ ແລະ ນຳໃຊ້ ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ, ຫັນເປັນອຸດສາຫະກຳ ແລະ ທັນສະໄໝ ເຂົ້າໃນການປູກ, ການລ້ຽງ;
- ຊຸກຍູ້ສົ່ງເສີມເຕັກນິກການຜະລິດ ແລະ ຈັດຕັ້ງກຳລັງການຜະລິດ;

DRAFT

- ເອົາໃຈໃສ່ຊຸກຍູ້ການຜະລິດກະສິກຳ ທີ່ເປັນທ່າແຮງຂອງປະເທດ ເພື່ອຫຼຸດຜ່ອນການນຳເຂົ້າ ດ້ວຍການສະໜອງປັດໄຈການຜະລິດ ໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ ເປັນຕົ້ນ ເຕັກນິກວິຊາການ, ແນວພັນພືດ, ແນວພັນສັດ , ຝຸ່ນ ແລະ ອາຫານສັດ ຢ່າງແຂງແຮງ ເພື່ອຫຼຸດຜ່ອນການນຳເຂົ້າຈາກຕ່າງປະເທດ;

- ຈັດຕັ້ງປະຕິບັດ ມາດຕະການປົກປ້ອງການຜະລິດພາຍໃນ ດ້ວຍການອອກນິຕິກຳທີ່ກ່ຽວຂ້ອງ ເພື່ອກຳນົດຜະລິດຕະພັນໃດທີ່ຜະລິດພາຍໃນໄດ້, ໃຫ້ຈຳກັດການນຳເຂົ້າ ດ້ວຍມາດຕະການທາງດ້ານເຕັກນິກທີ່ບໍ່ແມ່ນພາສີ ເພື່ອຫຼຸດຜ່ອນການໄຫຼອອກຂອງເງິນຕາຕ່າງປະເທດ;

- ເພີ່ມທະວີການຈັດຕັ້ງປະຕິບັດວຽກງານໂພຊະນາການ ແນໃສ່ຫຼຸດຜ່ອນອັດຕາການຂາດສານອາຫານ, ລວງສູງບໍ່ໄດ້ມາດຖານ, ນ້ຳໜັກບໍ່ໄດ້ມາດຕະຖານ, ການຂາດສານອາຫານກະທັນຫັນ (ຈ່ອຍຜອມ) ແລະ ເພີ່ມອັດຕາການບໍລິໂພກເກືອໄອໂອດີນຂອງຄົວເຮືອນ ຊຶ່ງສະໜັບສະໜູນບັນດາກິດຈະກຳເຊັ່ນ: ໂຮງງານເກືອສືບຕໍ່ປະສົມໄອໂອດີນເຂົ້າໃນເກືອ, ສົ່ງເສີມປະຊາຊົນໃຊ້ເກືອໄອໂດດີນ,

- ສະໜອງຄວາມຮູ້ດ້ານໂພຊະນາການ ແລະ ເພີ່ມທະວີວຽກງານກ່ຽວກັບ ການສື່ສານເພື່ອປ່ຽນແປງພຶດຕິກຳຂອງ ສັງຄົມ (SBCC) ໂດຍຫຼາຍຊ່ອງທາງ, ໃນທົ່ວປວງຊົນ ແລະ ໃນລະບົບການສຶກສາ ໂດຍມີການເຊື່ອມຄວາມຮູ້ແລະການປະຕິບັດຕົວຈິງດ້ານໂພຊະນາການເຂົ້າຫຼັກສູດການຮຽນການສອນ;

- ສົ່ງເສີມ ໂພຊະນາການໃນແມ່ຍິງ, ເດັກອ່ອນ ແລະ ເດັກນ້ອຍ (MIYCN) ການໃຫ້ຄຳປຶກ ແລະ ການບໍລິການ ກ່ຽວກັບການລ້ຽງລູກດ້ວຍນົມແມ່ຢ່າງດຽວແຕ່ເກີດຮອດ ອາຍຸ 6 ເດືອນ ແລະ ສືບຕໍ່ຮອດ 02 ປີ, ການໃຫ້ອາຫານເສີມ ແລະ ການຕິດຕາມພັດທະນາການເດັກ;

- ສະໜອງຈຸລະສານອາຫານ ທີ່ຈຳເປັນໃຫ້ແກ່ ແມ່ຍິງ ແລະ ເດັກນ້ອຍ ໃນກຸ່ມເປົ້າໝາຍ ເປັນຕົ້ນ ທາດເຫຼັກ-ອາຊິດໂຟລິກສຳລັບແມ່ຍິງຖືພາ ແລະ ແມ່ຍິງໄວຈະເລີນພັນ, ວິຕາມິນອາ, ຢາຂ້າແມ່ທ້ອງ, ເພີ່ມອັດຕາການບໍລິໂພກເກືອໄອໂອດີນ , ເສີມວິຕະມິນ ແລະ ແຮ່ທາດໃສ່ໃນອາຫານ;

- ສະໜອງຄວາມຮູ້ ດ້ານໂພຊະນາການ ແລະ ຕັ້ງກຳມະການການຄຸ້ມຄອງການຂາດສານອາຫານກະທັນຫັນ, ການປິ່ນປົວ ແລະ ການເບິ່ງແຍງການຂາດສານອາຫານກະທັນຫັນໂດຍກົງໃນເດັກນ້ອຍ-ເດັກອ່ອນ;ແບບເຊື່ອມສານ ແລະ ການບໍລິການໂພຊະນາບຳບັດໃຫ້ ທົ່ວເຖິງ ແລະ ມີຄຸນນະພາບ;

- ໃຫ້ບໍລິການດ້ານສຸຂະພາບແບບປະສົມປະສານສຳລັບໂພຊະນາການ ໂດຍໃຫ້ອາຫານເສີມສຸຂະພາບໃນລະຫວ່າງການຖືພາສຳລັບແມ່ ແລະ ໄວໜຸ່ມ, ໂດຍການເສີມ micronutrients, ປະສົມປະສານໂພຊະນາການເຂົ້າໃນການຄຸ້ມຄອງສຸຂະພາບແບບລວມສູນ (UHC); ລວມເອົາດ້ານໂພຊະນາການທີ່ຈຳເປັນເຂົ້າໃນລະດັບການບໍລິການສຸຂະພາບຂັ້ນພື້ນຖານ;

- ສ້າງຄວາມເຂັ້ມແຂງດ້ານຄວາມສາມາດຂອງສະຖາບັນ, ການປົກຄອງ, ການຄຸ້ມຄອງ, ການວາງແຜນ ແລະ ການປະສານງານ ລະຫວ່າງຂະແໜງທີ່ກ່ຽວຂ້ອງດ້ານວຽກງານໂພຊາການໃນທຸກລະດັບ;

- ສ້າງຄວາມເຂັ້ມແຂງດ້ານການຄຸ້ມຄອງທາງດ້ານການເງິນ, ການວາງແຜນ, ການຕິດຕາມ ແລະ ການລາຍງານດ້ານການເງິນ ທັງພາກລັດ ແລະ ການຊ່ວຍເຫຼືອທາງການດ້ານພັດທະນາ (ODA) ໃນທຸກຂະແໜງການ ແລະ ທຸກຂັ້ນ ເພື່ອໃຫ້ສາມາດລາຍງານການເງິນກ່ຽວກັບວຽກໂພຊະນາການ ເພື່ອສາມາດຕີລາຄາການລົງທຶນໃສ່ວຽກງານດັ່ງກ່າວໃນແຕ່ລະໄລຍະ;

- ພັດທະນາ ແລະ ຈັດຕັ້ງປະຕິບັດແຜນງານແບບປະສົມປະສານຂອງຫຼາຍຂະແໜງການເພື່ອໃຫ້ການບໍລິການທັນເວລາ ແລະ ພາຍໃຕ້ປະຕິບັດຕາມແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການ (NPAN), ໃຫ້ມີປະສິດທິພາບ, ແລະ ປະສິດທິຜົນ ຂອງກຸ່ມກິດຈະກຳໂພຊະນາການ ເພື່ອຕອບໂຕ້ພາວະສຸກເສີນ, ແລະ ສຸມໃສ່ເຫດການໄພພິບັດ,ສະໜອງປັດໃຈທີ່ຈຳເປັນໃນການໃຫ້ກຸ່ມປະຊາກອນທີ່ສ່ຽງ;

- ເສີມສ້າງລະບົບເຕືອນໄພລ່ວງໜ້າ ແລະ ມາດຕະການທີ່ກ່ຽວຂ້ອງ ເພື່ອລວມເອົາຕົວຊີ້ບອກຄວາມປອດໄພຂອງ ອາຫານ ແລະ ໂພຊະນາການ; ນຳໃຊ້ໂພຊະນາການທາງອອ້ອມ, ການຈັດຊື້ອາຫານ ຕາມສະພາບການຕົວຈິງໃນສະຖານບໍລິການສຸຂະພາບ; ຮັບຮອງເອົາວິທີການສຸຂະພາບນຶ່ງດຽວ (ຕົວຢ່າງ: ພິຈາລະນາບັນຫາສຸຂະພາບແບບລວມສູນໃນສິ່ງທີ່ມີຊີວິດທຸກຊະນິດ ແລະ ທຸກຂະແໜງການ ຕ່າງໆ);

- ສົ່ງເສີມການປ່ຽນແປງພຶດຕິກຳທາງສັງຄົມເພື່ອປັບປຸງການກິນອາຫານໃນທ່າມກາງແມ່ຍິງ ແລະ ເດັກນ້ອຍ. ເພີ່ມຄວາມເຂັ້ມແຂງໃຫ້ແກ່ສະພາບແວດລ້ອມທີ່ອຳນວຍຄວາມສະດວກ (ຄວາມສາມາດຂອງສະຖາບັນ, ການປະສານ

ງານ, PPPs, ການວາງແຜນ, ການຕິດຕາມ, ການຄົ້ນຄວ້າ, ການປະເມີນຜົນ, ການເຝົ້າລະວັງ ແລະ ລະບົບຂໍ້ມູນຂ່າວສານ) ເພື່ອການສົ່ງເສີມໂຄງການອາຫານ ແລະ ໂພຊະນາການ ຢ່າງມີປະສິດທິພາບ;

- ປັບປຸງ ລະບົບສຸຂະອະນາໄມ, ນ້ຳສະອາດ ແລະ ສຸຂາພິບານ ດ້ວຍການເພີ່ມການເຂົ້າເຖິງ ແລະ ສົ່ງເສີມ ທາງດ້ານພຶດຕິກຳ ແລະ ພາກປະຕິບັດ ທາງດ້ານອະນາໄມ ໃນຊຸມຊົນ, ໂຮງຮຽນ, ສະຖານທີ່ບໍລິການ, ຮ້ານອາຫານ, ຫ້ອງການສຳນັກງານຂອງລັດ ແລະ ເອກະຊົນ, ພ້ອມທັງປົກປ້ອງແຫ່ງ ນ້ຳ ທຳມາຊາດ ໃຫ້ມີຄວາມຍືນຍົງ ແລະ ປອດໄພ;

- ສ້າງຄວາມເຂັ້ມແຂງດ້ານຄວາມອາດສາມາດ ດ້ານໂພຊະນາການຂອງ ແຫຼ່ງຊັບພະຍາກອນມະນຸດ ໃນທຸກຂະແໜງການ ແລະ ໃນທຸກຂັ້ນ.

### *3.3.3 ແຜນວຽກຈຸດສຸມທີ 3: ສົ່ງເສີມ ແລະ ພັດທະນາໄວໜຸ່ມ, ແມ່ຍິງ, ເດັກ ແລະ ຄວາມສະເໝີພາບຍິງ-ຊາຍ ໃຫ້ມີຄຸນນະພາບດີຂຶ້ນ*

ສືບຕໍ່ຊຸກຍູ້ ແລະ ສົ່ງເສີມສະມາຊິກແມ່ຍິງ, ແມ່ຍິງລາວບັນດາເຜົ່າ, ອະນຸລັກຮັກສາ ຄຸນລັກສະນະທີ່ເປັນມູນເຊື້ອຂອງແມ່ຍິງລາວ ແລະ ສົ່ງເສີມມູນເຊື້ອວັດທະນະທຳອັນດີງາມຂອງຊາດ ແລະ ຂອງແມ່ຍິງລາວ; ແມ່ຍິງໄດ້ເຂົ້າເຖິງຂໍ້ມູນຂ່າວສານ, ມີຄວາມຮູ້ ແລະ ສາມາດນຳໃຊ້ເຕັກນິກວິທະຍາສາດ, ເຕັກໂນໂລຍີທີ່ ທັນສະໄໝເຂົ້າໃນການປະຕິບັດໜ້າທີ່ວຽກງານ, ພັດທະນາຄຸນນະພາບຊີວິດຂອງຕົນເອງ ແລະ ຄອບຄົວພ້ອມທັງສົ່ງເສີມແມ່ຍິງ ເຂົ້າເຖິງການຮຽນຮູ້, ການຄົ້ນຄ້ວາພັດທະນາ ແລະ ການນຳໃຊ້ວິທະຍາສາດເຕັກໂນໂລຊີ ແລະ ນະວັດຕະກຳ ເພື່ອຍົກສູງບົດບາດຂອງເພດຍິງເຂົ້າໃນການພັດທະນາເສດຖະກິດສັງຄົມ; ເອົາໃຈໃສ່ ປົກປ້ອງສິດ ຜົນປະໂຫຍດອັນຊອບທຳຂອງແມ່ຍິງ ແລະ ເດັກນ້ອຍ ເຂົ້າເຖິງ ຄວາມຍຸຕິທຳຢ່າງທົ່ວເຖິງ ແລະ ປະກອບສ່ວນ ແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ. ຊຸກຍູ້, ສົ່ງເສີມ ແມ່ຍິງລາວບັນດາເຜົ່າ ເຂົ້າເຖິງ ການພັດທະນາທັກສະສີມືແຮງງານ, ວິຊາຊີບ, ວຽກເຮັດງານທຳ, ກຸ່ມທ້ອນເງິນແມ່ຍິງຂັ້ນບ້ານ, ກອງທຶນຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກເພື່ອພັດທະນາແມ່ຍິງ ແລະ ຄອບຄົວ ເພື່ອບໍລິການດ້ານການເງິນ ເພື່ອຍົກສູງຄຸນນະພາບຊີວິດ; ສົ່ງເສີມ ການຜະລິດ, ຜູ້ປະກອບການເພດຍິງໃນຂະແໜງທຸລະກິດຂະໜາດນ້ອຍ ແລະ ກາງ ຕາມທິດເສດຖະກິດເອກະລາດ ເປັນເຈົ້າຕົນເອງ.

1. **ຄາດໝາຍ ລະດັບແຜນວຽກຈຸດສຸມ**
   1) ວຽກງານພັດທະນາໄວໜຸ່ມ-ເຍົາວະຊົນ
      - ສູ້ຊົນ ແລະ ຊຸກຍູ້ເລຂາຄະນະບໍລິຫານງານຊາວໜຸ່ມກະຊວງ-ອົງການ, ແຂວງ, ນະຄອນຫຼວງ ແລະ ເມືອງ ໃຫ້ຕິດຄະນະພັກຂັ້ນຂອງຕົນ ຢ່າງໜ້ອຍ 90% ຂຶ້ນໄປ.
      - ຊຸກຍູ້ຄະນະຊາວໜຸ່ມແຂວງ, ນະຄອນຫຼວງ ໃຫ້ໄດ້ເປັນຄະນະຊາວໜຸ່ມ 4 ບຸກ 100% ແລະ ເປັນແຂວງທີ່ໄດ້ຮັບທຸງໄຊນຳໜ້າ 90%.
      - ຊຸກຍູ້ຄະນະຊາວໜຸ່ມ ກະຊວງ ໃຫ້ໄດ້ເປັນຄະນະຊາວໜຸ່ມ 4 ບຸກ 95% ແລະ ເປັນກະຊວງທີ່ໄດ້ຮັບທຸງໄຊນຳໜ້າ 85% ແລະ ຊຸກຍູ້ຄະນະຊາວໜຸ່ມ ອົງການ ໃຫ້ໄດ້ເປັນຄະນະຊາວໜຸ່ມ 4 ບຸກ 90% ແລະ ເປັນອົງການທີ່ໄດ້ຮັບທຸງໄຊນຳໜ້າ 75%.
      - ຂະຫຍາຍສະມາຊິກສະຫະພັນຊາວໜຸ່ມໃຫ້ເພີ່ມຂຶ້ນຈາກ ຈຳນວນສະມາຊິກໃນກອງປະຊຸມໃຫຍ່ ຄັ້ງທີ I ໃຫ້ໄດ້ 5%.
      - ຍົກລະດັບວຽກງານໃຫ້ຄຳປຶກສາໃນ ຂັ້ນສູນກາງ ແລະ ຂັ້ນແຂວງ ໃຫ້ໄດ້ 5 ຄັ້ງ
      - ພັດທະນາຊັບພະຍາກອນໜຸ່ມໃຫ້ມີຄຸນນະພາບ ແລະ ມີວຽກເຮັດງານທຳ ໂດຍການສຸມໃສ່ລິເລີ່ມໃຫ້ຊາວໜຸ່ມຮູ້ຈັກການດຳເນີນທຸລະກິດ (Start up)ໃຫ້ໄດ້ຢ່າງນ້ອຍ 5 ຄັ້ງ
      - ສ້າງວິຊາຊີບດ້ານປູກຝັ່ງ, ລ້ຽງສັດ, ຕັດຫຍິບ, ເສີມສວຍ, ຊ່າງຈອດເຊື່ອມ, ສ້ອມແປງລົດຈັກ, ຊ່າງໄຟ ແລະອື່ນໆໃຫ້ແກ່ຊາວໜຸ່ມຜູ້ທຸກຍາກດ້ອຍໂອກາດ ໃຫ້ໄດ້ 250 ຄົນ
   2) ການສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ
      - ຄ່າດັດຊະນີຄວາມສະເໝີພາບຍິງ-ຊາຍ ເພີ່ມຂຶ້ນ ຈາກ 0.700 ໃນປີ 2024 ເປັນ 0.733 ໃນປີ 2030 ໃນນີ້ໃຫ້ປະເມີນໄດ້ ຄ່າດັດຊະນີ ໂອກາດ ແລະ ການມີສ່ວນຮ່ວມທາງດ້ານເສດຖະກິດ ເພີ່ມຂຶ້ນຈາກ

0.714 ໃນປີ 2024 ເປັນ 0.851 ໃນປີ 2030; ຄ່າດັດຊະນີ ການສຳເລັດທາງດ້ານການສຶກສາໃຫ້ເພີ່ມຂຶ້ນຈາກ 0.972 ໃນປີ 2024 ເປັນ 0.976 ໃນປີ 2030, ຄ່າດັດຊະນີສຸຂະພາບ ແລະ ການລອດຊີວິດ ໃຫ້ຢູ່ຄົງເກົ່າໃນປີ 2024 ຄື 0.975 ແລະ ຄ່າດັດຊະນີການເສີມສ້າງອຳນາດໃນເອທິການເມືອງ ໃຫ້ເພີ່ມຂຶ້ນຈາກ 0.140 ໃນປີ 2024 ເປັນ 0.141 ໃນປີ 2030;

- ດັດສະນີຄວາມບໍ່ສະເໝີພາບຍິງ-ຊາຍ ໃຫ້ຫລຸດລົງຈາກ 0.467 ໃນປີ 2024 ເປັນ 0.436 ໃນປີ 2030;
- ດັດສະນີການພັດທະນາຄວາມສະເໝີພາບຍິງ-ຊາຍ ໃຫ້ເພີ່ມຂຶ້ນຈາກ 0.919 ໃນປີ 2024 ມາເປັນ0.927 ໃນປີ 2030;
- ດັດສະນີການພັດທະນາຊັບພະຍາກອນມະນຸດແມ່ຍິງ ໃຫ້ເພີ່ມຂຶ້ນຈາກ 0.593 ໃນປີ 2024 ເປັນ 0.675 ໃນປີ 2030;
- ສະມາຊິກສະພາແຫ່ງຊາດເພດຍິງ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ກວມ 30% ຂຶ້ນໄປ;
- ການນຳທີ່ເປັນເພດຍິງຂັ້ນສູນກາງ (ຂັ້ນລັດຖະມົນຕີ, ຂັ້ນກົມ, ຂັ້ນພະແນກ) ກວມ 30%;
- ການນຳທີ່ເປັນເພດຍິງຂັ້ນແຂວງ, ນະຄອນຫຼວງ (ປະທານ-ຮອງປະທານຄະນະກຳມະການປົກຄອງແຂວງ, ຂັ້ນພະແນກການ ແລະ ຂັ້ນຂະແໜງ) ກວມ 20%;
- ການນຳທີ່ເປັນເພດຍິງຂັ້ນເມືອງ (ປະທານ-ຮອງປະທານຄະນະກຳມະການປົກຄອງເມືອງ, ຂັ້ນຫ້ອງການ ແລະ ຂັ້ນໜ່ວຍງານ) ກວມ 20%;
- ການນຳທີ່ເປັນເພດຍິງຂັ້ນຕາແສງ, ບ້ານ ກວມ 10%.
- ສະມາຊິກສະຫະພັນແມ່ຍິງໄດ້ເຂົ້າຮ່ວມການຄົ້ນຄ້ວາເຊື່ອມຊຶມ ແນວທາງນະໂຍບາຍຂອງລັດ, ລັດຖະທຳມະນູນ, ກົດໝາຍ, ສົນທິສັນຍາຕ່າງໆ ທີ່ພົວພັນເຖິງແມ່ຍິງ ແລະ ເດັກ, ແຜນພັດທະນາ, ມູນເຊື້ອປະຫວັດສາດ ແລະ ວັດທະນະທຳ ຕ່າງໆກວມເອົາ 80% ຂຶ້ນໄປ;
- ແມ່ຍິງ ແລະ ມວນຊົນທົ່ວສັງຄົມໄດ້ເຂົ້າເຖິງຂໍ້ມູນຂ່າວສານ ທີ່ເປັນປະໂຫຍດໃນການພັດທະນາຕົນເອງ ແລະ ຄອບຄົວ (ໂດຍສະເພາະສື່ແບບໃໝ່)ກວມ 1,500,000 ຄັ້ງ
- ສະຫະພັນແມ່ຍິງຂັ້ນເມືອງ ແລະ ຂັ້ນແຂວງ ໄດ້ຮັບການຍົກລະດັບຄວາມຮູ້ຄວາມສາມາດກ່ຽວກັບວຽກງານໃຫ້ ຄຳປຶກສາແກ່ແມ່ຍິງ ແລະ ເດັກນ້ອຍ 05 ປີ ໃຫ້ໄດ້ 250 ຄົນ;
- ແມ່ຍິງຜູ້ທຸກຍາກ, ດ້ອຍໂອກາດໃນບັນດາແຂວງໄດ້ຮັບການຝຶກອົບຮົມວິຊາຊີບ ໄລຍະສັ້ນ ແລະ ໄລຍະຍາວ ທີ່ໄດ້ຮັບການຝຶກອົບຮົມຈາກສູນອົບຮົມແມ່ຍິງ ໃຫ້ໄດ້ 2,000 ຄົນ;
- ສ້າງເຄື່ອງມືການຮັບຮູ້ ແລະ ໂຄສະນາປູກຈິດສຳນຶກ ພ້ອມທັງຂໍ້ແນະນຳການເຊື່ອມວຽກງານເບິ່ງແຍງດູແລເຂົ້າໃນນະໂຍບາຍຂອງອົງການຈັດຕັ້ງ ແລະ ຜະລິດໃຫ້ໄດ້ຢ່າງໜ້ອຍ 2,000 ຊຸດ.
- ສ້າງຄູຝຶກ ຈຳນວນ 100 ຄົນ, ໃຫ້ຄວາມຮູ້ ແລະ ປູກຈິດສຳນຶກຜ່ານການຝຶກອົຮົມໃຫ້ ຢ່າງໜ້ອຍ 10,000 ຄົນ ໃນທົ່ວປະເທດ, ແລະ ໂຄສະນາໃຫ້ຄວາມຮູ້ຜ່ານຊື່ອອນລາຍ, ສັງຄົມ ເຂົ້າເຖິງຂໍ້ມູນຂ່າວສານ ຜ່ານຊື່ອອນລາຍ ຈຳນວນ 5,000,000 ຄົນ.
- ໂຄສະນາປູກຈິດສຳນຶກກ່ຽວກັບວຽກງານເສດຖະກິດການດູແລເບິ່ງແຍງ, ວຽກງານທີ່ມີຄຸນຄ່າໃຫ້ສະມາຊິກແມ່ຍິງ, ແມ່ຍິງລາວບັນດາເຜົ່າ ໃນການພັດທະນາສົ່ງເສີມໃຫ້ເຂົ້າເຖິງການປົກປ້ອງທາງສັງຄົມ, ຮັບປະກັນຄຸນນະພາບຊີວິດ ແລະ ການບໍລິການເພື່ອການພັດທະນາຊີວິດການເປັນຢູ່ ແລະ ລາຍຮັບ ໃຫ້ໄດ້ 100 ຄັ້ງ ຕໍ່ປີ ແລະ ໃຫ້ໄດ້ 500 ຄັ້ງ.
- ສ້າງຖານຂໍ້ມູນບັນທຶກແຮງງານທີ່ເຮັດວຽກດູແລເບິ່ງແຍງ ທີ່ໄດ້ຮັບຄ່າຈ້າງ ແລະ ບໍ່ໄດ້ຮັບຄ່າຈ້າງ ຂອງສູນກາງສະຫະພັນແມ່ຍິງ.
- ຮ່ວມກັບກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ ເພື່ອສົ່ງເສີມແຮງງານເພດຍິງ ໃນລະບົບ ແລະ ນອກລະບົບ ໃຫ້ເຂົ້າເຖິງລະບົບສະຫວັດດີການສັງຄົມ ແລະ ປະກັນສຸຂະພາບ ໃຫ້ເພີ່ມຂຶ້ນຢ່າງໜ້ອຍ 10% ໃນແຕ່ລະປີ.
- ສົ່ງເສີມການສ້າງເສດຖະກິດຂອງແຮງງານ ເບິ່ງແຍງດູແລ ແລະ ສະໜັບສະໜູນທຶນ ໃນການສ້າງເສດຖະກິດໃຫ້ໄດ້ 400 ກຸ່ມ ຫຼື ບຸກຄົນ.

DRAFT

- ສະຫະພັນແມ່ຍິງຂັ້ນເມືອງ ແລະ ຂັ້ນແຂວງ ໄດ້ຮັບການຍົກລະດັບຄວາມຮູ້ຄວາມສາມາດກ່ຽວກັບວຽກງານໃຫ້ ຄໍາປຶກສາແກ່ແມ່ຍິງ ແລະ ເດັກນ້ອຍ 05 ປີ ໃຫ້ໄດ້ 250 ຄົນ. ມີສູນໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຢູ່ຂັ້ນແຂວງເພີ່ມຂຶ້ນ 03ສູນ ຢູ່ແຂວງຜົ້ງສາລີ, ຫຼວງພະບາງ ແລະ ອຸດົມໄຊ;
- ແມ່ຍິງ ແລະ ໄວໜຸ່ມ ມີຄວາມຮູ້ພື້ນຖານທາງດ້ານການເງິນ ແລະ ການບໍລິຫານເງິນພາຍໃນຄອບຄົວເພີ່ມຂຶ້ນ (ຄາດໝາຍມີຜູ້ເຂົ້າຮ່ວມ 15,000 ເທື່ອຄົນ) ແລະ ແມ່ຍິງໄດ້ເຂົ້າເຖິງແຫລ່ງທຶນ ເພື່ອນໍາໄປສ້າງອາຊີບ, ສ້າງທຸລະກິດ ລະດັບຄົວເຮືອນເພີ່ມຂຶ້ນ (ແມ່ຍິງສາມາດກູ້ຢືມເງິນ/ຈໍານວນຜູ້ກູ້ຢືມ ເພີ່ມຂຶ້ນ 30%).
- ປຸກລະດົມສະມາຊິກສະຫະພັນແມ່ຍິງ, ແມ່ຍິງລາວບັນດາເຜົ່າເຂົ້າຮ່ວມປະຕິບັດຄໍາຂວັນ ແລະ ຂໍ້ແຂ່ງຂັນຂອງສະມາຊິກສະຫະພັນແມ່ຍິງຕິດພັນກັບຂະບວນການລວມຂອງພັກ-ລັດ ກວມ 90% ຂຶ້ນໄປ;
- ອັດຕາສ່ວນຄວາມຮຸນແຮງຕໍ່ແມ່ຍິງ ໂດຍຄູ່ຮ່ວມຊີວິດໃນຊ່ວງຊີວິດ: ທາງດ້ານຮ່າງກາຍ ໃຫ້ຫຼຸດລົງຈາກ 11.6% ໃນປີ 2014 ເປັນ 8.7% ໃນປີ 2030; ຄວາມຮຸນແຮງທາງເພດ ໃຫ້ຫຼຸດລົງເປັນ 5.4% ໃນປີ 2030 ຈາກ 7.2%; ຄວາມຮຸນແຮງທາງຈິດໃຈ ໃຫ້ຫຼຸດລົງເປັນ 19.65% ໃນປີ 2030 ຈາກ 26.2% ໃນປີ 2014 ແລະ ຄວາມຮຸນແຮງທາງເສດຖະກິດ ໃຫ້ຫຼຸດລົງເປັນ 5.1% ໃນປີ 2030 ຈາກ 6.8% ໃນປີ 2014;
- ອັດຕາສ່ວນຄວາມຮຸນແຮງຕໍ່ແມ່ຍິງໂດຍບຸກຄົນອື່ນໃນຊ່ວງຊີວິດ: ຄວາມຮຸນແຮງທາງດ້ານຮ່າງກາຍ ໃຫ້ຫຼຸດລົງເປັນ 3.8% ໃນປີ 2030 ຈາກ 5.1% ໃນປີ 2014 ແລະ ຄວາມຮຸນແຮງທາງດ້ານເພດ ໃຫ້ຫຼຸດລົງເປັນ 3.9% ໃນປີ 2030 ຈາກ 5.3% ໃນປີ 2014.

3) ການສົ່ງເສີມ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ
- ເປີເຊັນຂອງເດັກທີ່ຂາດເຂີນໃນຫລາຍມິຕິ ໂດຍອີງໃສ່ນິຍາມແຫ່ງຊາດກ່ຽວກັບຄວາມຂາດເຂີນໃຫ້ເຫລືອ 30%ໃນແຕ່ລະແຂວງ ໃນປີ 2030;
- ການແຕ່ງດອງຂອງເດັກກ່ອນໄວອັນຄວນ ອາຍຸລະຫວ່າງ 15-19 ປີ: ເດັກຍິງໃຫ້ຫຼຸດລົງຈາກ 26.6% ໃນປີ 2023 ມາເປັນ 23.94% ແລະ ເດັກຊາຍ ໃຫ້ຫລຸດລົງຈາກ 10.2% ໃນປີ 2023 ມາເປັນ 9%;
- ອັດຕາສ່ວນຮ້ອຍການຖືພາ ແລະ ເກີດລູກກ່ອນໄວອັນຄວນຂອງແມ່ຍິງ ອາຍຸ 20-24 ປີ ທີ່ເຄີຍເກີດລູກມີຊີວິດກ່ອນອາຍຸ 18 ປີ ຫຼຸດລົງຈາກ 15.4% ໃນປີ 2023 ເປັນ 11.5% ໃນປີ 2030.

**2. ວຽກງານຈຸດສຸມ**

1) ວຽກງານພັດທະນາໄວໜຸ່ມ-ເຍົາວະຊົນ
- ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ທີ່ເຮັດວຽກງານຊາວໜຸ່ມ-ເຍົາວະຊົນໃນຂອບເຂດທົ່ວປະເທດ;
- ເຜີຍແຜ່ຜົນສໍາເລັດ ແລະ ມະຕິກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມທົ່ວປະເທດ ຄັ້ງທີ IX, ກົດໝາຍຄະນະຊາວໜຸ່ມປະຊາຊົນປະຕິວັດລາວ (ສະບັບປັບປຸງ), ກົດໝາຍວ່າດ້ວຍຊາວໜຸ່ມລາວ, ກົດໝາຍວ່າດ້ວຍເຍົາວະຊົນລາວ ແລະ ກົດໝາຍອື່ນໆ;
- ລົງຕິດຕາມ, ຊຸກຍູ້, ກວດກາ ແລະ ປະເມີນຜົນຂອງການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກຂອງຊາວໜຸ່ມ, ຂໍ້ແຂ່ງຂັນ 3 ດີ 4 ຮູ້ຂອງເຍົາວະຊົນທັນວາ;
- ສຸມໃສ່ໃນວຽກງານການລົງກໍ່ສ້າງຮາກຖານການເມືອງ ຕິດພັນກັບການສ້າງວຽກດີຄົນເດັ່ນ, ວຽກຈິງຄົນແທ້ຢູ່ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ;
- ສ້າງແຜນຈັດຕັ້ງປະຕິບັດຍຸດທະສາດການພັດທະນາຊາວໜຸ່ມ-ເຍົາວະຊົນລາວ ປີ 2021-2030 ໃນຂັ້ນແຂວງ, ຈັດກອງປະຊຸມຄະນະຊີ້ນໍາລະດັບຊາດ, ກອງປະຊຸມຄະນະກໍາມະການປະສານງານລະດັບຊາດ, ກອງປະຊຸມຄະນະຮັບຜິດຊອບປະສານງານຂັ້ນແຂວງ;
- ສຸມໃສ່ການເປີດກອງປະຊຸມໃຫຍ່ຄະນະບໍລິຫານງານສະຫະພັນຊາວໜຸ່ມ ຄັ້ງທີ I ແລະ ຂະຫຍາຍສະມາຊິກສະຫະພັນຊາວໜຸ່ມ;
- ສົ່ງເສີມພອນສະຫວັນຂອງຊາວໜຸ່ມ-ເຍົາວະຊົນ ເປັນຕົ້ນແມ່ນການຈັດງານຕັ້ງຄ້າຍຊາວໜຸ່ມ-ເຍົາວະຊົນ, ການແຂ່ງຂັນສ້າງຄິບວິດີໂອສັ້ນ, ການແຂ່ງຂັນລະຄອນເວທີ, ການແຂ່ງຂັນໂຕ້ວາທີ ໃນຫົວຂໍ້ ສິ່ງແວດລ້ອມ, ການຖືພາພາ ແລະ ການແຕ່ງດອງແຕ່ອາຍຸຍັງນ້ອຍ ແລະການແຂ່ງຂັນອື່ນໆ;

- ປູກຈິດສຳນຶກແກ່ຊາວໜຸ່ມໜຸ່ມເຍົາວະຊົນ ໃຫ້ຮູ້ມູນເຊື້ອ ແລະ ປະຫວັດສາດ, ຮູ້ຜົນຮ້າຍ, ພະຍາດຕິດຕໍ່ທາງເພດສຳພັນ, ການປ້ອງກັນພະຍາດໂລກເອດ, ການໃຊ້ຄວາມຮຸນແຮງເນື່ອງຈາກຄວາມແຕກຕ່າງທາງເພດ,ຂອງການນຳໃຊ້ສານເສບຕິດ, ການຂັບຂີ່ປອດໄພ, ການຄ້າມະນຸດ, ການແຕ່ງດອງຂອງເດັກ ແລະການຖືພາກ່ອນໄວອັນຄວນ , ສາຍດ່ວນໃຫ້ຄຳປຶກສາ MHPSS ຂອງ ສຊປລ 1554, ແອັບນ້ອຍຢາກຮູ້ ແລະ ແຄມເປນ ຂ້ອຍ, ຮ່າງກາຍຂອງຂ້ອຍ, ໂລກຂອງຂ້ອຍ ແລະອານາຄົດຂອງຂ້ອຍຢູ່ໂຮງຮຽນ ແລະ ຊຸມຊົນ;

- ຝຶກອົບຮົມ ແລະ ປູກຈິດສຳນຶກໃຫ້ຊາວໜຸ່ມ-ເຍົາວະຊົນ ຮູ້ນຳໃຊ້ຂໍ້ມູນຂ່າວສານ, ວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກຳ, ເຕັກໂນໂລຊີດີຈີຕອນ, ການນຳໃຊ້ AI ແລະ ເຕັກໂນໂລຊີ ICT ໃຫ້ເກີດປະໂຫຍດພ້ອມກັນ ນັ້ນກໍ່ສຶກສາອົບຮົມໃຫ້ຮູ້ເຖິງຜົນຮ້າຍຂອງໂລກອອນລາຍ ເພື່ອບໍ່ໃຫ້ຕົກເປັນເຫຍື່ອຂອງອາດຊະຍາກຳທາງອອນລາຍ ແລະໃຫ້ຄວາມຮູ້ກ່ຽວກັບການປ່ຽນແປງຂອງດິນຟ້າອາກາດທີ່ມີຜົນກະທົບຕໍ່ການດຳລົງຊີວິດຂອງຊາວໜຸ່ມ-ເຍົາວະຊົນ;

- ໃຫ້ຄວາມຮູ້ແກ່ອຳນາດປົກຄອງທ້ອງຖິ່ນ, ຜູ້ໃຫ້ບໍລິການ ແລະ ຊາວໜຸ່ມອາສາສະໝັກອ້ອມຂ້າງບັນດາສະຖານີໃຫຍ່ຂອງເສັ້ນທາງ ລົດໄຟລາວ-ຈີນ ໃຫ້ມີຄວາມຮັບຮູ້ ແລະ ເຂົ້າໃຈ ໃນການປ້ອງກັນ ແລະ ຕ້ານໂລກເອດສ໌, ຄວາມຮຸນແຮງເນື່ອງຈາກຄວາມແຕກຕ່າງທາງເພດ (Gender-Based Violence, GBV) ແລະ ແຄມເປນ ຂ້ອຍ, ຮ່າງກາຍຂອງຂ້ອຍ, ໂລກຂອງຂ້ອຍ ແລະ ອານາຄົດຂອງຂ້ອຍ;

- ຝຶກອົບຮົມການນຳໃຊ້ຄູ່ມືການສ້າງຕົວແບບປະຕິບັດການທົດລອງທາງດ້ານການສື່ສານປ່ຽນແປງດ້ານສັງຄົມ ແລະ ພຶດຕິກຳ ( SBCC ) ສຳລັບໄວໜຸ່ມໃນຂອບເຂດທົ່ວປະເທດ ແລະ ສ້າງລະຄອນສັ້ນທີ່ສ່ອງແສງເຖິງບັນຫາໃນທ້ອງຖິ່ນຕົນເອງ ເພື່ອເປັນການໂຄສະນາ ແລະ ສ້າງຈິດສຳນຶກໃຫ້ແກ່ຊາວໜຸ່ມ-ເຍົາວະຊົນ;

- ສ້າງຄວາມເຂັ້ມແຂງ ແລະ ຍົກລະດັບການໃຫ້ຄຳປຶກສາໃນ ຂັ້ນສູນກາງ ແລະ ຂັ້ນແຂວງ ພ້ອມທັງບໍລິການໃຫ້ຄຳປຶກສາບັນຫາຂອງຊາວໜຸ່ມ-ເຍົາວະຊົນ;

- ປຸກລະດົມໃຫ້ຊາວໜຸ່ມຮັບຮູ້ຄວາມສຳຄັນ ແລະ ເຂົ້າເຖິງສຶກສາຂັ້ນອາຊີວະສຶກສາ ໂດຍມີຈຸດສຸມແນໃສ່ເມືອງທີ່ທຸກຍາກ ແລະ ຊາວໜຸ່ມດ້ອຍໂອກາດ;

- ການພັດທະນາຊັບພະຍາກອນໜຸ່ມໃຫ້ມີຄຸນນະພາບ ແລະ ມີວຽກເຮັດງານທຳ ໂດຍການສຸມໃສ່ລິເລີ່ມໃຫ້ຊາວໜຸ່ມຮູ້ຈັກການດຳເນີນທຸລະກິດ (Strat up), ສ້າງວິຊາຊີບດ້ານປູກຝັງ, ລ້ຽງສັດ, ຕັດຫຍິບ, ເສີມສວຍ, ຊ່າງຈອດເຊື່ອມ, ສ້ອມແປງລົດຈັກ, ຊ່າງໄຟ ແລະອື່ນໆໃຫ້ແກ່ຊາວໜຸ່ມຜູ້ທຸກຍາກດ້ອຍໂອກາດ;

- ຄົ້ນຄວ້າວິໄຈສະພາບຊາວໜຸ່ມ-ເຍົາວະຊົນລາວ;

- ຝຶກອົບຮົມ, ທັດສະນະສຶກສາ ແລະ ແລກປ່ຽນບົດຮຽນກັບບັນດາປະເທດເພື່ອນມິດຍຸດທະສາດ, ສອງຝ່າຍ ແລະ ຫຼາຍຝ່າຍ.

2) ການສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ

- ປັບປຸງ, ສ້າງ ບັນດານິຕິກຳ ແລະ ນະໂຍບາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ກົນໄກຕິດຕາມຊຸກຍູ້ ແລະການບັງຄັບໃຊ້ກົດໝາຍ ທີ່ຕິດພັນກັບຄວາມສະເໝີພາບ ຍິງ-ຊາຍ, ສົນທິສັນຍາ ຊີດໍ ແລະ ສົນທິສັນຍາສິດທິເດັກ;

- ສ້າງຄວາມເຂັ້ມແຂງໃນການເຊື່ອມສານວຽກງານສົ່ງເສີມຄວາມສະເໝີພາບຍິງ-ຊາຍ ເຂົ້າໃນບັນດາແຜນພັດທະນາ, ແຜນງານ, ໂຄງການ, ກິດຈະກຳ ລວມທັງການຈັດສັນງົບປະມານທີ່ເອົາໃຈໃສ່ບົດບາດຍິງ-ຊາຍ ຂອງບັນດາຂະແໜງ ການ ແລະ ທ້ອງຖິ່ນ ໂດຍສະເພາະ ໂອກາດ ແລະ ການສ້າງຄວາມເຂັ້ມແຂງທາງດ້ານເສດຖະກິດຂອງຊຸມຊົນຂະໜາດນ້ອຍ ແລະ ກາງ, ການເຂົ້າເຖິງການສຶກສາ, ເຂົ້າເຖິງສາທາລະນະສຸກ, ເຂົ້າເຖິງແຫຼ່ງທຶນ, ສະຫວັດດີການສັງຄົມ, ປະກັນສຸຂະພາບ, ການມີວຽກເຮັດງານທຳ, ເສດຖະກິດການດູແລເບິ່ງແຍງ, ຫຼຸດຜ່ອນຄວາມສ່ຽງຈາກໄພພິບັດ ແລະ ການປັບຕົວຕໍ່ຈາກການປ່ຽນແປງດິນຟ້າອາກາດ, ການເຂົ້າເຖິງຂໍ້ມູນຂ່າວສານ ວິທະຍາສາດເຕັກໂນໂລຊີ ແລະ ເຂົ້າເຖິງຕຳແໜ່ງນຳພາຄຸ້ມຄອງໃນຂະແໜງການພາກລັດ ແລະ ເອກະການເມືອງ ເພື່ອໃຫ້ສາມາດບັນລຸຄວາມສະເໝີພາບຍິງ-ຊາຍຕາມແຜນການທີ່ວາງໄວ້;

- ປະຕິບັດພັນທະຂອງລັດຖະບານ ສປປ ລາວ ໃນການຈັດຕັ້ງປະຕິບັດສົນທິສັນຍາສາກົນ, ອານຸສັນຍາ, ສັນຍາ ແລະ ທີ່ຕິດພັນກັບສິດທິແມ່ຍິງ ແລະ ສິດທິເດັກ;

- ສ້າງຄວາມເຂັ້ມແຂງໃນການສ້າງ ແລະ ນຳໃຊ້ສະຖິຕິຄວາມສະເໝີພາບຍິງ-ຊາຍ ຂອງບັນດາຂະແໜງການ ແລະ ທ້ອງຖິ່ນ.

DRAFT

- ໂຄສະນາແນວທາງນະໂຍບາຍຂອງພັກ-ລັດ, ລັດຖະທຳມະນູນ, ກົດໝາຍ, ສົນທິສັນຍາຕ່າງໆ ທີ່ພົວພັນເຖິງແມ່ຍິງ ແລະ ເດັກ, ແຜນພັດທະນາ, ມູນເຊື້ອປະຫວັດສາດ ແລະ ວັດທະນະທຳອັນດີງາມຂອງຊາດ,ຂອງແມ່ຍິງລາວ, ແມ່ຍິງໄດ້ເຂົ້າເຖິງຂໍ້ມູນຂ່າວສານ ແລະ ຮູ້ນຳໃຊ້ເຕັກນິກວິທະຍາສາດທີ່ທັນສະໄໝ; ສົ່ງເສີມຜະລິດຕະພັນຫັດຖະກຳທີ່ເປັນເອກະລັກຂອງແມ່ຍິງລາວບັນດາເຜົ່າ ແລະ ພ້ອມທັງເຜີຍແຜ່ຜ່ານຫ້ອງວາງສະແດງມູນເຊື້ອແມ່ຍິງລາວ ເພື່ອພັດທະນາຄຸນນະພາບຊີວິດຂອງຄອບຄົວໃຫ້ດີຂຶ້ນ;

- ຂະຫຍາຍສະມາຊິກສະຫະພັນແມ່ຍິງໃຫ້ກວມເອົາທຸກຂົງເຂດວຽກງານ, ສ້າງຄວາມເຂັ້ມແຂງໃຫ້ພະນັກງານນຳພາຄຸ້ມຄອງເພດຍິງ ແລະ ພະນັກງານສືບທອດປ່ຽນແທນ;

- ສ້າງຄວາມເຂັ້ມແຂງ, ຄວາມຮັບຮູ້ ແລະ ເຂົ້າໃຈໃນການຈັດຕັ້ງປະຕິບັດຄຳຂວັນ ແລະ ຂໍ້ແຂ່ງຂັນຂອງສະຫະພັນແມ່ຍິງໃຫ້ເພີ່ມຂຶ້ນກວ່າເກົ່າ;

- ຝຶກອົບຮົມວິຊາຊີບ ໄລຍະສັ້ນ ແລະ ໄລຍະຍາວ ໃຫ້ແມ່ຍິງຜູ້ທຸກຍາກ, ດ້ອຍໂອກາດທີ່ຢູ່ໃນເປົ້າໝາຍໃນບັນດາແຂວງທົ່ວປະເທດ; ຊຸກຍູ້ສົ່ງເສີມໃຫ້ແມ່ຍິງໄດ້ຮັບການຝຶກອົບຮົມທາງດ້ານເຕັກນິກວິຊາການ, ວິຊາຊີບ ກ່ຽວການຜະລິດ, ກະສິກຳ, ຫັດຖະກຳ, ການບໍລິຫານທາງດ້ານການເງິນ, ດ້ານທຸລະກິດ, ການເຂົ້າເຖິງແຫຼ່ງທຶນ ເພື່ອຫາລາຍໄດ້ແກ້ໄຂຄວາມທຸກຍາກຂອງແມ່ຍິງໃຫ້ດີຂຶ້ນເທື່ອລະກ້າວ;

- ຈັດຝຶກອົບຮົມຄູຝຶກພາວະການເປັນຜູ້ນຳສຳລັບເພດຍິງ ໃຫ້ແກ່ສະຫະພັນແມ່ຍິງຂັ້ນສູນກາງ, ຂັ້ນແຂວງ ເມືອງ, ຕາແສງ ແລະ ຂັ້ນບ້ານ; ສ້າງຄວາມເຂັ້ມແຂງໃຫ້ສະມາຊິກແມ່ຍິງ, ແມ່ຍິງກ່ຽວກັບການມີສ່ວນຮ່ວມໃນການຕັດສິນບັນຫາຕ່າງໆໃນຊຸມຊົນ.

- ຊຸກຍູ້ສົ່ງເສີມ ໃຫ້ສັງຄົມ, ຊຸມຊົນ ແລະ ຄອບຄົວ ເອົາໃຈໃສ່ຕໍ່ ເສດຖະກິດການດູແລເບິ່ງແຍງ ທີ່ໄດ້ຮັບຄ່າຈ້າງ ແລະ ບໍ່ໄດ້ຮັບຄ່າຈ້າງ ເພື່ອຮັບປະກັນໃຫ້ແມ່ຍິງ ມີທີ່ຢູ່ອາໃສ, ສາມາດເຂົ້າເຖິງການບໍລິການຕ່າງໆ, ມີສະຫວັດດີການທີ່ດີ, ສ້າງເງື່ອນໄຂຮອບດ້ານໃຫ້ແມ່ຍິງ ມີສຸຂະພາບຮ່າງກາຍທີ່ແຂງແຮງ, ສຸຂະພາບຈິດທີ່ດີ, ເຂົ້າເຖິງຂະບວນການຍຸຕິທຳ ແລະ ໄດ້ຮັບການປົກປ້ອງ, ດູແລເບິ່ງແຍງ;

- ສົ່ງເສີມການເຂົ້າເຖິງສິນເຊື່ອ ແລະ ສົ່ງເສີມຜູ້ປະກອບການເພດຍິງ, ສ້າງຄວາມເຂັ້ມແຂງ ຄວາມຮູ້ດ້ານການເງິນຂອງແມ່ຍິງ.

3) ການສົ່ງເສີມ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ

- ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອສົ່ງເສີມສິດທິເດັກ ໃຫ້ໄດ້ຮັບການພັດທະນາ, ການປົກປ້ອງ, ການຢູ່ລອດ ແລະ ການມີສ່ວນຮ່ວມ ຂອງເດັກ;

- ພັດທະນາຊີວິດການເປັນຢູ່ຂອງເດັກ ໃຫ້ຫລຸດຜ່ອນຈາກການຂາດເຂີນໃນຫລາຍມິຕິ (ໂພສະນາການ, ສຸຂະພາບ, ການປົກປ້ອງເດັກ, ສຸຂະອະນາໄມ, ທີ່ຢູ່ອາໃສ, ການພັດທະນາກ່ອນໄວຮຽນ, ການສຶກສາ ແລະ ຂໍ້ມູນຂ່າວສານ);

- ເພີ່ມທະວີຈັດຕັ້ງປະຕິບັດ ແຜນດຳເນີນງານແຫ່ງຊາດເພື່ອປ້ອງກັນ ແລະ ລົບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ (National Action Plan on Prevention and Elimination of Violence against Women and Violence against Children) ໂດຍສຸມໃສ່ປ້ອງກັນ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ການຄ້າມະນຸດ ແລະ ການແຕ່ງງານກ່ອນໄວ, ໃຫ້ການບໍລິການຊ່ວຍເຫຼືອທີ່ຈຳເປັນ ດ້ານສຸຂະພາບ, ດ້ານຂະບວນການຍຸຕິທຳ ແລະ ດ້ານສັງຄົມ, ພ້ອມທັງ ສ້າງຄວາມເຂັ້ມແຂງໃຫ້ຜູ້ໃຫ້ບໍລິການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ, ລວມທັງສ້າງ ແລະ ປັບປຸງສູນໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ.

- ຊຸກຍູ້ອົງການປົກຄອງແຂວງ, ເມືອງ, ຕາແສງ, ບ້ານ ແລະ ຜູ້ຊົງຄຸນວຸດທິ ໃນການປົກປ້ອງເດັກ, ຊ່ວຍໄກ່ເກ່ຍການຂັດແຍ້ງ, ໃຫ້ຄຳແນະນຳ, ຫຼື ສົ່ງກໍລະນີໄປຫາການບໍລິການທີ່ເໝາະສົມ ເພື່ອຕ້ານການປະຕິບັດທີ່ເປັນອັນຕະລາຍລະເມີດສິດທິເດັກ ເຊັ່ນ: ການແຕ່ງດອງກ່ອນໄວອັນຄວນ, ການລົງໂທດທາງຮ່າງກາຍ ແລະ ການຂູດຮີດເດັກ;

### *3.3.4 ແຜນວຽກຈຸດສຸມທີ 4: ພັດທະນາວຽກງານຖະແຫຼງຂ່າວໃຫ້ທັນສະໄໝ ແລະ ວ່ອງໄວ, ສົ່ງເສີມວັດທະນະທຳ ທີ່ເປັນເອກະລັກຂອງຊາດ, ກ້າວໜ້າ ແລະ ສ້າງໃຫ້ສັງຄົມມີຄວາມສາມັກຄີເປັນປຶກແຜ່ນ ແລະ ສີວິໄລ*

**1. ຄາດໝາຍ ລະດັບແຜນວຽກຈຸດສຸມ**

- ສ້າງຄອບຄົວວັດທະນະທຳໃຫ້ໄດ້ 94,150 ຄອບຄົວ, ບ້ານວັດທະນະທຳໃຫ້ໄດ້ 394 ບ້ານ; ສ້າງບ້ານວັດທະນະທຳຕົວແບບ ໃຫ້ໄດ້ 80 ບ້ານ; ສ້າງເມືອງວັດທະນາທຳໃຫ້ໄດ້ຫລາຍກວ່າ 7 ເມືອງ;
- ສູ້ຊົນສະເໜີແຫຼ່ງມໍຣະດົກອຸທິຍານແຫ່ງຊາດນາກາຍ-ນ້ຳເທີນເຂົ້າເປັນມໍຣະດົກໂລກ ແລະ ສະເໜີມໍຣະດົກວັດທະນະທຳ ເສົາຫີນຕັ້ງ, ແຂວງຫົວພັນ ແລະ ທາດອີງຮັງເຂົ້າບັນຊີສຳຮອງມໍຣະດົກໂລກຂອງອົງການອຸຍແນັສໂກ;
- ສູ້ຊົນສະເໜີມໍຣະດົກວັດທະນະທຳນາມມະທຳ **"ລາບ, ພິທີສູ່ຂວັນ, ປູ່ເຍີຍ່າເຍີ-ບຸນປີໃໝ່ລາວ; ເຂົ້າຕົ້ມ-ເຂົ້າຫຼາມ"** ເຂົ້າເປັນມໍຣະດົກວັດທະນະທຳນາມມະທຳຂອງມວນມະນຸດ;
- ສູ້ຊົນສຳຫຼວດແຫຼ່ງບູຮານວິທະຍາ ໃຫ້ໄດ້ 10 ແຫຼ່ງ ແລະ ຂຸດຄົ້ນທາງບູຮານວິທະຍາ ໄດ້ 5 ແຫຼ່ງ;
- ສູ້ຊົນຂຶ້ນທະບຽນບັນຊີວັດຖຸບູຮານ ແລະ ພຣະພຸດທະຮູບໃຫ້ທັນກັບການພົບເຫັນ ແລະ ລາຍງານໄດ້ 5 ແຫ່ງ;
- ສູ້ຊົນສຳຫຼວດ, ເກັບກຳຂໍ້ມູນ ແລະ ຂຶ້ນບັນຊີມໍຣະດົກວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດຈາກລະດັບທ້ອງ ຖິ່ນໃຫ້ເປັນລະດັບຊາດໃຫ້ໄດ້ 10 ແຫ່ງ;
- ສູ້ຊົນຂຶ້ນທະບຽນບັນຊີສະກຸນຊ່າງສີນ ໃຫ້ໄດ້ 5 ແຫ່ງ;
- ສູ້ຊົນຂຶ້ນທະບຽນມໍຣະດົກນາມມະທຳລະດັບທ້ອງຖິ່ນໃຫ້ເປັນລະດັບຊາດ 15 ຫົວຂໍ້;
- ສູ້ຊົນສຳຫຼວດເກັບກຳຂໍ້ມູນວັດຖຸພັນໃນຫໍພິພິທະພັນທົ່ວປະເທດ ໃຫ້ໄດ້ 5 ແຫ່ງ;
- ສູ້ຊົນສຳຫຼວດຂອບເຂດດິນວັດທະນະທຳ ໃຫ້ໄດ້ 10 ແຫ່ງ.

**2. ວຽກງານຈຸດສຸມ**

- ຄຸ້ມຄອງ ແລະ ສົ່ງເສີມການອະນຸລັກ, ປົກປັກຮັກສາ, ຟື້ນຟູສືບທອດ ເສີມຂະຫຍາຍມູນເຊື້ອ ແລະ ຄຸນຄ່າມໍຣະດົກວັດທະນະທຳອັນດີງາມຂອງຊາດ ໃຫ້ມີຄວາມຍືນຍົງ; ສ້າງຜະລິດຕະພັນດ້ານວັດທະນະທຳໃຫ້ຫຼາກຫຼາຍ ແລະ ໃຫ້ກາຍເປັນອຸດສະຫະກຳທາງດ້ານວັດທະນະທຳ ເພື່ອເປັນບ່ອນຮຽນຮູ້ ແລະ ບໍລິການທ່ອງທ່ຽວ;

- ເອົາໃຈໃສ່ຄຸ້ມຄອງ ແລະ ເສີມຂະຫຍາຍຄຸນຄ່າຂອງມໍລະດົກໂລກ ແລະ ມໍລະດົກແຫ່ງຊາດ ທີ່ໄດ້ຮັບການຢັ້ງຢືນ ໃຫ້ມີປະສິດທິຜົນ ແລະ ນຳຜົນປະໂຫຍດແກ່ສັງຄົມ ດ້ວຍການປົກປັກຮັກສາ, ບູລະນະປະຕິສັງຂອນມໍລະດົກດັ່ງກ່າວ ມີຄວາມຍືນຍົງ, ສົ່ງເສີມໃຫ້ຄົນລາວ ຮຽນຮູ້ ແລະ ເຂົ້າໃຈ ປະຫວັດຄວາມເປັນມາ ມໍລະດົກໂລກ ເພື່ອສືບທອດໃຫ້ລຸ້ນຕໍ່ໆໄປ.

- ພັດທະນາ, ຍົກລະດັບ ແລະ ຄຸ້ມຄອງການນຳໃຊ້ພາສາລາວຢ່າງຖືກຕ້ອງ ແລະ ເປັນລະບົບ, ມີຄວາມເປັນເອກະພາບ;

- ຟື້ນຟູ ແລະ ສົ່ງເສີມເອກກະລັກສິນລະປະ ແລະ ວັນນະຄະດີ ກໍຄືຄຸນຄ່າວັດທະນະທຳດ້ານຈິດໃຈຂອງຊາດ-ຂອງເຜົ່າ ໃຫ້ແຂງແຮງ;

- ເສີມຂະຫຍາຍຈິດໃຈຊາດ ແລະ ມູນເຊື້ອຄວາມສາມັກຄີເປັນປຶກແຜ່ນ, ຄວາມເອື້ອເຟື້ອເພື່ອແຜ່ໃນຊຸມຊົນ. ກະຕຸ້ນໃຫ້ເກີດຄ່ານິຍົມຮັກການຮຽນ, ສະແຫວງຫາຄວາມຮູ້ໃໝ່ຂອງປະຊາຊົນ, ຍົກລະດັບການສຶກສາ ແລະ ການຮຽນຮູ້ຂອງຄົນລຸ້ນໃໝ່ຕໍ່ຄຸນຄ່າວັດທະນະທຳ,ຄ່ານິຍົມຂອງຄວາມເປັນຊາດລາວ, ສ້າງຄົນລາວ ໃຫ້ຮູ້ຜະລິດ, ມີຄ່ານິຍົມ, ມີຄວາມພາກພູມໃຈ, ກະຕືລືລົ້ນໃນການນຳໃຊ້ຜະລິດຕະພັນລາວໂດຍຄົນລາວໃຫ້ນັບມື້ນັບຫຼາຍຂຶ້ນ.

- ສ້າງ, ປັບປຸງ ບັນດາກົດໝາຍ ແລະ ນິຕິກຳໃນຂະແໜງການວັດທະນະທຳ ໃຫ້ຮັດກຸມ ແລະ ສອດຄ່ອງກັບສະພາບຄວາມເປັນຈິງໃນແຕ່ລະໄລຍະ ແລະ ເຜີຍແຜ່ໃຫ້ທົ່ວເຖິງ;

- ສ້າງ, ພັດທະນາໂຄງລ່າງພື້ນຖານໃນຂະແໜງວັດທະນະທຳ ໃຫ້ສົມຄູ່ກັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ;

- ພັດທະນາບຸກຄະລາກອນໃນຂະແໜງວັດທະນະທຳໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງມີຄວາມຮູ້; ມີຄວາມສາມາດທາງດ້ານວິຊາການ, ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ.

### *3.3.5 ແຜນວຽກຈຸດສຸມທີ 5: ປັບປຸງລະບົບປະກັນສັງຄົມ-ປົກປ້ອງສັງຄົມໃຫ້ກວ້າງຂວາງ ແລະ ມີຄຸນນະພາບ*

**1. ຄາດໝາຍລະດັບແຜນວຽກຈຸດສຸມ**

- ເພີ່ມທະວີການໂຄສະນາປະຊາສຳພັນໃຫ້ແກ່ບັນດາອົງການຈັດຕັ້ງລັດ, ຫົວໜ່ວຍວິສາຫະກິດ ແລະ ຜູ້ປະກອບອາ ຊີບອິດສະລະ ໃຫ້ໄດ້ 8,210 ຄັ້ງ;
- ຂະຫຍາຍການຄຸ້ມຄອງຫົວໜ່ວຍວິສະຫະກິດໃຫ້ໄດ້ຕື່ມ 7,000 ຫົວໜ່ວຍ; ຂະຫຍາຍສະມາຊິກປະກັນສັງຄົມໃໝ່ໃຫ້ໄດ້ 724,000 ຄົນ, ໃນນີ້: ພາກລັດ 4,000 ຄົນ, ວິສະຫະກິດ 350,000 ຄົນ ແລະ ຜູ້ສະ ໝັກໃຈ 370,000 ຄົນ; ສູ້ຊົນເກັບລາຍຮັບໃຫ້ໄດ້ທັງໝົດ 13,572.63 ຕື້ກີບ, ໃນນີ້ພາກລັດ 9,426.86 ຕື້ກີບ , ພາກວິສາຫະກິດ ແລະ ສະໝັກໃຈ 4,145.76 ຕື້ກີບ ແລະ ຄາດຄະເນການປະຕິບັດລາຍຈ່າຍອຸດໜູນປະກັນສັງຄົມ ແລະ ບໍລິຫານຕ່າງໆບໍ່ໃຫ້ເກີນ 11,859.45 ຕື້ກີບ ຊຶ່ງພາກລັດມີລາຍຈ່າຍປະມານ 9,426.86 ຕື້ກີບ, ພາກວິສາຫະກິດ ແລະ ສະໝັກໃຈ 2,432.58 ຕື້ກີບ; ຄາດຄະເນຍອດທ້າຍປີ 2030 ກອງທຶນປະກັນສັງຄົມ ຈະມີຄັງສະສົມທັງໝົດ 1,713.17 ຕື້ກີບ, ພາກວິສະຫະກິດ ແລະ ສະໝັກໃຈ 1,713.17 ຕື້ກີບ; ຄາດຄະເນພິຈາລະນາ ແລະ ຈ່າຍເງິນອຸດໜູນປະກັນສັງຄົມປະເພດຕ່າງໆທັງໝົດ 269.425 ເທື່ອຄົນ, ໃນນີ້ພາກລັດ 154,172 ເທື່ອຄົນ, ພາກວິສາຫະກິດ ແລະ ສະໝັກໃຈ 115,253 ເທື່ອຄົນ;
- ປະຕິບັດນະໂຍບາຍສະແດງຄວາມກະຕັນຍູຮູ້ບຸນຄຸນຕໍ່ຜູ້ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດປະຕິວັດຊາດປະຊາທິປະໄຕ ຈຳນວນ 36,172 ທ່ານ
- ສ້າງນັກສັງຄົມສົງເຄາະສະເພາະດ້ານໃຫ້ຄຳປຶກສາແກ່ຜູ້ອອກຢາເສບຕິດ ໃຫ້ໄດ້ 250 ຄົນ; ໃຫ້ການຊ່ວຍເຄື່ອງອຸປະໂພກ-ບໍລິໂພກ ໃຫ້ຜູ້ປະສົບໄພພິບັດ, ຜູ້ທຸກຍາກ ແລະ ຜູ້ດ້ອຍໂອກາດທາງສັງຄົມ ໃຫ້ໄດ້ 416,000 ຄົນ ແລະ ປັບປຸງຄຸນນະພາບຊີວິວິດ ໃຫ້ໄດ້ 500 ຄອບຄົວ;
- ຂະຫຍາຍຕາໜ່າງປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກຂັ້ນບ້ານ ໃຫ້ໄດ້ 3,752 ບ້ານ ພ້ອມທັງສ້າງຄວາມອາດສາມາດ ກ່ຽວກັບວຽກປົກປ້ອງ ແລະ ຊ່ວຍເຫຼືອເດັກ ເພື່ອໃຫ້ຄຳປຶກສາດ້ານຈິດຕະສັງຄົມ ຂັ້ນພື້ນຖານ ໃຫ້ໄດ້ 2,000 ຄົນ; ໃຫ້ການຊ່ວຍເຫຼືອດ້ານການຝຶກອົບຮົມວິຊາຊີບ, ການມີວຽກເຮັດງານທຳ, ປະກອບອາຊີບ ໃຫ້ແກ່ຜູ້ດ້ອຍໂອກາດ, ຜູ້ອອກຢາເສບຕິດ, ກຸ່ມສ່ຽງ ແລະ ຜູ້ຖືກ ເຄາະຮ້າຍຈາກການຄ້າມະນຸດ ໃຫ້ໄດ້ 1,000 ຄົນ, ໃນນີ້: ຜູ້ ດ້ອຍໂອກາດ ແລະ ອອກຢາເສບຕິດ 550 ຄົນ ແລະ ຜູ້ຢູ່ໃນຄວາມສ່ຽງການຄ້າມະນຸດ 450 ຄົນ;
- ດຳເນີນການກວດກາ ແລະ ເຜີຍແຜ່ນິຕິກຳດ້ານແຮງງານໃຫ້ຫົວໜ່ວຍແຮງານ ໃຫ້ໄດ້ 15, 000 ຄັ້ງ;
- ເຜີຍແຜ່ ນິຕິກຳທີ່ຕິດພັນກັບການຫ້າມ ນຳໃຊ້ແຮງງານໄວໜຸ່ມເຮັດວຽກທີ່ເປັນອັນຕະລາຍ ຫຼື ເຂົ້າຂ່າຍເປັນການນຳໃຊ້ແຮງງານເດັກ ໃຫ້ແກ່ບ້ານທັງໝົດທົ່ວປະເທດ (8,389 ບ້ານ);
- ຊຸກຍູ້ຫົວໜ່ວຍແຮງງານຂະໜາດໃຫຍ່ ແລະ ທຸກຫົວໜ່ວຍແຮງງານທີ່ມີຄວາມສ່ຽງສູງ ໃຫ້ສາມາດສ້າງຕັ້ງໜ່ວຍງານຄວາມປອດໄພ ແລະ ສຸຂະພາບແຮງງານໃຫ້ໄດ້ 300 ຫົວໜ່ວຍ ພ້ອມທັງຊຸກຍູ້ທຸກຫົວໜ່ວຍແຮງງານໃຫ້ຜູ້ອອກແຮງງານຂອງຕົນໄດ້ຮັບການກວດສຸຂະພາບປະຈຳປີ ໃຫ້ໄດ້ 280 ຫົວໜ່ວຍ
- ເອົາໃຈໃສ່ປັບປຸງລະບົບການຄຸ້ມຄອງແຮງງານ ແລະ ການຂຶ້ນທະບຽນແຮງງານລາວ ແລະ ຕ່າງປະເທດ ເພື່ອສາມາດ ເຊື່ອມໂຍງ ເຂົ້າລະບົບຂອງຂະແໜງການກ່ຽວຂ້ອງ ໃຫ້ສຳເລັດ.
- ຊຸກຍູ້ສ້າງສັນຍາແຮງງານລວມໝູ່ ແລະ ຕິດຕາມການເບີກຈ່າຍຄ່າແຮງງານໃຫ້ກຳມະກອນຕາມໜ່ວຍແຮງງານ ໃຫ້ໄດ້ 80% ຂຶ້ນໄປ.

**2. ວຽກງານຈຸດສຸມ**

- ປັບປຸງກົດໝາຍວ່າດ້ວຍການປະກັນສັງຄົມ, ກົດໝາຍວ່າດ້ວຍແຮງງານ ແລະ ສ້າງຮ່າງກົດໝາຍວ່າຄວາມປອດໄພ ແລະ ສຸຂະພາບ ລວມທັງນິຕິກຳລຸ່ມກົດໝາຍ ດັ່ງກ່າວ ໃຫ້ມີເນື້ອໃນຄົບຖ້ວນ;

- ເພີ່ມທະວີການໂຄສະນາປະຊາສຳພັນວຽກງານປະກັນສັງຄົມດ້ວຍຫລາກຫຼາຍຮູບແບບ ແລະ ຊ່ອງທາງ ໃຫ້ມີຄວາມເຂັ້ມແຂງ ແລະ ກ້ວາງຂວາງ ເພື່ອໃຫ້ທຸກກຸ່ມເປົ້າໝາຍໃນສັງຄົມເຂົ້າເຖິງຂໍ້ມູນຂ່າວສານ ຮັບຮູ້ເຂົ້າໃຈ ກ່ຽວກັບສິດທິ ແລະ ຜົນປະໂຫຍດ ຈາກລະບົບປະກັນສັງຄົມ;

- ພັດທະນາ, ປັບປຸງ ແລະ ຍົກລະດັບລະບົບຖານຂໍ້ມູນປະກັນສັງຄົມໃຫ້ທັນສະໄໝ ສາມາດເຊື່ອມໂຍງກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອພັດທະນາລະບົບການບໍລິການວຽກງານປະກັນສັງຄົມໃຫ້ເປັນລະບົບທີ່ທັນສະໄໝ ວ່ອງໄວ ໂປ່ງໃສ ແລະ ສາມາດກວດສອບໄດ້.

DRAFT

- ສົ່ງເສີມການປະກອບສ່ວນຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການປະກັນສັງຄົມ ຢ່າງເຂັ້ມງວດ ໂດຍການສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດການກວດກາຫົວໜ່ວຍວິສາຫະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດແລ້ວແຕ່ຍັງບໍ່ໄດ້ເຂົ້າປະກັນສັງຄົມ ແລະ ບັນດາຫົວໜ່ວຍວິສາຫະກິດທີ່ເຂົ້າປະກັນສັງຄົມແລ້ວໃຫ້ສືບຕໍ່ປະຕິບັດພັນທະຕາມລະບຽບການປະກັນສັງຄົມຢ່າງສອດຄ່ອງ;

- ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອປັບປຸງການຈັດຕັ້ງປະຕິບັດອຸດໜູນປະກັນສຸຂະພາບໃຫ້ມີຄວາມເປັນເອກະພາບ, ມີຄຸນນະພາບ ແລະ ຄວາມເພິ່ງພໍໃຈຂອງຜູ້ປະກັນຕົນ;

- ປະຕິບັດນະໂຍບາຍໃຫ້ຜູ້ມີຜົນງານ ແລະ ຄຸນງາມຄວາມດີ ໃນພາລະກິດຮັບໃຊ້ການປະຕິວັດຊາດປະຊາທິປະໄຕ ດ້ວຍການກວດກາຂໍ້ມູນ, ລາຍຊື່, ຢັ້ງຢືນຜົນງານ ແລະ ຄຸນງາມຄວາມດີ ໃນການສະໜອງງົບປະມານ, ທີ່ຢູ່ອາໄສ ແລະ ນະໂຍບາຍອື່ນໆ.

- ຊຸກຍູການສ້າງກອງທຶນ, ສ້າງລະບົບຂໍ້ມູນຂ່າວສານ, ປຸກລະດົມການຊ່ວຍເຫຼືອຈາກທຸກພາກສ່ວນທົ່ວສັງຄົມ ໃນວຽກງານສັງຄົມສົງເຄາະ, ປົກປ້ອງ ແລະ ຊ່ວຍເຫຼືອເດັກ ໃຫ້ເຂັ້ມແຂງ; ຝຶກອົບຮົມວິຊາຊີບ ເພື່ອປັບປຸງຄຸນນະພາບຊີວິດ ໃຫ້ແກ່ເປົ້າໝາຍ(ກຸ່ມຄົນດ້ອຍໂອກາດ ແລະ ຄົນພິການ ລວມທັງຜູ້ອອກຢາເສບຕິດ;

- ປັບປຸງລະບົບ ແລະ ກົນໄກການກວດກາແຮງງານໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ດ້ວຍການສ້າງຄວາມອາດສາມາດໃຫ້ເຈົ້າໜ້າທີ່ກວດກາແຮງງານ, ປັບປຸງເຄື່ອງມືໃນການຮັບໃຊ້ວຽກງານກວດກາແຮງງານ, ປະເມີນ ແລະ ຢັ້ງຢືນຫົວໜ່ວຍແຮງງານທີ່ໄດ້ມາດຕະຖານແຮງງານແຫ່ງຊາດ ພ້ອມທັງພັດທະນາລະບົບການບັນທຶກຂໍ້ມູນ ແລະ ລາຍງານຜົນການກວດກາໃຫ້ທັນສະໄໝ;

- ເອົາໃຈໃສ່ຄຸ້ມຄອງການນຳໃຊ້ແຮງງານທີ່ມີຄວາມສ່ຽງ ເປັນຕົ້ນແມ່ນ ແຮງງານນອກລະບົບ, ແຮງງານແມ່ຍິງ, ແຮງງານໄວໜຸ່ມທີ່ເຮັດວຽກເປັນອັນຕະລາຍ, ລຶບລ້າງການນຳໃຊ້ແຮງງານເດັກ, ຂຶ້ນທະບຽນ ແລະ ແກ້ໄຂແຮງງານຕ່າງປະເທດທີ່ເຂົ້າມາເຮັດວຽກແບບບໍ່ຖືກຕ້ອງຕາມກົດໝາຍ;

- ຊຸກຍູ້ໃຫ້ຜູ້ໃຊ້ແຮງງານເອົາຜູ້ອອກແຮງງານໄດ້ຮັບການກວດສຸຂະພາບປະຈຳປີ ແລະ ສ້າງສະພາບແວດລ້ອມໃນສະຖານທີ່ເຮັດວຽກໃຫ້ມີຄວາມປອດໄພ, ມີການແຕ່ງຕັ້ງພະນັກງານຮັບຜິດຊອບ-ໜ່ວຍງານຄວາມປອດໄພ ແລະ ສຸຂະພາບແຮງງານໃນການເຮັດວຽກ ເພື່ອຫຼຸດຜ່ອນອຸປະຕິເຫດແຮງງານ, ລວມທັງການຕິດຕາມຄຸ້ມຄອງການເຄື່ອນໄຫວຂອງໜ່ວຍງານຄວາມປອດໄພ ແລະ ສຸຂະພາບແຮງງານ;

- ຫັນເອົາວຽກງານຄຸ້ມຄອງແຮງງານໄປສູ່ການບໍລິການແບບອີເລັກໂທນິກ ແລະ ທັນສະໄໝ ເປັນຕົ້ນການນຳເຂົ້າ, ການຂຶ້ນທະບຽນແຮງງານລາວ ແລະ ຕ່າງປະເທດ, ການລາຍງານວຽກຄວາມປອດໄພ ແລະ ສຸຂະພາບແຮງງານ, ການໃຫ້ຄຳປຶກສາດ້ານນິຕິກຳ, ແລະ ເກັບກຳຄ່າແຮງງານຫຼືເງິນເດືອນຂອງຜູ້ອອກແຮງງານ ຢ່າງເປັນລະບົບ;

- ເພີ່ມທະວີການຮ່ວມມື ໃນລະບົບໄຕພາຄີ (ສາມຝ່າຍ) ທັງສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມເຂັ້ມແຂງ ເພື່ອສ້າງສາຍພົວພັນແຮງງານທີ່ດີ ເປັນຕົ້ນແມ່ນ ການສ້າງນິຕິກຳ, ການກຳນົດຄ່າແຮງງານຂັ້ນຕ່ຳ, ການສ້າງສັນຍາແຮງງານລວມໝູ່ ແລະ ການແກ້ໄຂຂໍ້ຂັດແຍ່ງທາງດ້ານແຮງງານ;

- ປະສານສົມທົບກັບບັນດາອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ແລະ ອົງການຈັດຕັ້ງສັງຄົມໃຫ້ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດວຽກສະຫວັດດີການສັງຄົມໃຫ້ມີປະສິດທິຜົນ.

- ເອົາໃຈໃສ່ການຊ່ວຍເຫຼືອສັງຄົມສົງເຄາະແກ່ຜູ້ດ້ອຍໂອກາດໃຫ້ມີຊີວິດການເປັນຢູ່ທີ່ດີຂຶ້ນ.

- ລົງເກັບກຳຜົນກະທົບ ແລະ ຄວາມຕ້ອງການຂອງຜູ້ອອກແຮງງານ ເພື່ອສະເໜີຂໍຂຶ້ນຄ່າແຮງງານຂັ້ນຕ່ຳ ແລະ ສະຫວັດດີການ ໃນຂົງເຂດຜູ້ອອກແຮງງານໃນລະບົບ ແລະ ນອກລະບົບ;

- ຄົ້ນຄວ້າປັບປຸງຮ່າງສັນຍາແຮງງານລວມໝູ່ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດ ອັນຊອບທຳຂອງສະມາຊິກກຳມະບານ, ກຳມະກອນ ແລະ ຜູ້ອອກແຮງງານ;

- ລົງໂຄສະນາປູກຈິດສຳນຶກການເຄື່ອນຍ້າຍແຮງງານທີ່ປອດໄພ ແລະ ຕິດພັນກັບຂະບວນການຕ້ານການຄ້າມະນຸດ ໃຫ້ຜູ້ອອກແຮງງານທັງໃນ ແລະ ນອກລະບົບ ໃນທົ່ວປະເທດ; ພ້ອມທັງປູກຈິດສຳນຶກກ່ຽວກັບການລຶບລ້າງ ແລະ ຕ້ານການໃຊ້ຄວາມຮຸນແຮງຕໍ່ການນຳໃຊ້ແຮງງານເດັກ ແລະ ແຮງງານເພດຍິງ.

### *3.3.6 ແຜນວຽກຈຸດສຸມທີ 6: ແກ້ໄຂບັນຫາລະເບີດບໍ່ທັນແຕກ ແລະ ປັບປຸງຊີວິດການເປັນຢູ່ຂອງ ປະຊາຊົນທີ່ໄດ້ຮັບຜົນກະທົບຈາກລະເບີດບໍ່ທັນແຕກ ໃຫ້ດີຂຶ້ນເທື່ອລະກ້າວ*

**1. ຄາດໝາຍລະດັບວຽກຈຸດສຸມ**

- ສືບຕໍ່ເກັບກູ້ ແລະ ທຳລາຍລະເບີດຕົກຄ້າງບໍ່ທັນແຕກ ອອກຈາກເນື້ອທີ່ທຳການຜະລິດ ແລະ ພື້ນທີ່ການພັດທະນາຕ່າງໆ ໃຫ້ໄດ້ 16,450 ເຮັກຕາ;
- ດຳເນີນການສຳຫຼວດດ້ານວິຊາການ ເພື່ອກຳນົດຂອບເຂດພື້ນທີ່ອັນຕະລາຍທີ່ມີ ລບຕ ຕົກຄ້າງ ໃຫ້ໄດ້ 49,250 ເຮັກຕາ, ສຳຫຼວດບໍ່ແມ່ນດ້ານວິຊາການ ເພື່ອກຳນົດຈຸດພິກັດຂອງ ລບຕ ທີ່ພົບເຫັນພາຍໃນຊຸມຊົນ ໃຫ້ໄດ້ 775 ບ້ານ;
- ດຳເນີນການໂຄສະນາສຶກສາຄວາມສ່ຽງໄພອັນຕະລາຍຈາກ ລບຕ ໃຫ້ໄດ້ 2,250 ບ້ານ;
- ປຸກສ້າງສູນວາງສະແດງລະເບີດເປົ່າ ໃຫ້ໄດ້ 1 ຫຼັງ ແລະ ປຸກສ້າງຫ້ອງການ ຄກລ ໃໝ່ ຢູ່ 2 ແຂວງ.
- ຫຼຸດຜ່ອນຈຳນວນຜູ້ບາດເຈັບ ແລະ ເສຍຊີວິດຈາກ ລບຕ ແຍກຕາມກຸ່ມອາຍຸ ແລະ ເພດ ໃຫ້ຕໍ່າກວ່າ 190 ຄົນ, ສະເລ່ຍ 38 ຄົນ/ປີ.
- ຈັດຕັ້ງຫາສຳຫຼວດແບບວິຊາການ ເພື່ອຊອກຫາຈຸດຫຼັກຖານລະເບີດບໍ່ທັນແຕກ ໃຫ້ໄດ້ 3,000 ບ້ານ, ສະເລ່ຍ 600 ບ້ານຕໍ່ປີ.

**2. ວຽກງານຈຸດສຸມ**

- ໂຄສະນາສຶກສາອົບຮົມຄວາມສ່ຽງຈາກລະເບີດບໍ່ທັນແຕກໃຫ້ຊຸມຊົນຢ່າງກວ້າງຂວາງ ແລະ ໃຫ້ການຊ່ວຍເຫຼືອຜູ້ທີ່ຖືກເຄາະຮ້າຍຢ່າງທັນການ ເພື່ອໃຫ້ເຂົາເຈົ້າສາມາດສືບຕໍ່ດຳລົງຊີວິດ ແລະ ປະກອບສ່ວນເຂົ້າໃນການພັດທະນາ.

- ນຳໃຊ້ນະວັດຕະກຳ ໃນການດຳເນີນການສຳຫຼວດບໍ່ແມ່ນວິຊາການ, ການສຳຫຼວດວິຊາການ ແລະ ກວດກູ້, ທຳລາຍ ລະເບີດບໍ່ທັນແຕກຕາມຈຸດຕ່າງໆ ໃຫ້ໄດ້ຫຼາຍຂຶ້ນ.

- ສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາອົງການເກັບກູ້ລະເບີດ ທາງດ້ານວິຊາການ, ການປະສານງານ ແລະ ການວາງແຜນໃຫ້ມີປະສິດທິພາບ ແລະ ຄວາມຮັບຜິດຊອບຂອງແຕ່ລະຂະແໜງການ; ເພີ່ມການລະດົມທຶນຈາກພາຍໃນ ແລະ ຕ່າງປະເທດຢ່າງກວ້າງຂວາງ.

- ເພີ່ມທະວີການປະສານສົມທົບ ລະຫວ່າງພາກລັດ, ຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອດຶງດູດທຶນຊ່ວຍເຫຼືອວຽກງານດັ່ງກ່າວ, ເຊິ່ງມີບົດບາດ ສຳຄັນໃນການປະກອບສ່ວນຊ່ວຍເຫຼືອແກ່ລັດຖະບານ ໃນການຈັດຕັ້ງປະຕິບັດວຽກງານລະເບີດບໍ່ທັນແຕກ.

## 3.4 ເປົ້າໝາຍທີ 4: ປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໃຫ້ມີຄວາມຍືນຍົງ ແລະ ສາມາດກຽມພ້ອມຮັບມືກັບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດຕ່າງໆ

ເພີ່ມທະວີການປົກປັກຮັກສາ ແລະ ຄຸ້ມຄອງການນຳໃຊ້ຊັບພະຍາກອນທຳມະຊາດ ໄປຕາມແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຢ່າງປະສິດທິຜົນສູງ; ສ້າງພື້ນຖານໃຫ້ແກ່ການຮັບປະກັນໃຫ້ການພັດທະນາເສດຖະກິດ-ສັງຄົມມີຄວາມສົມດູນລະຫວ່າງການຂະຫຍາຍຕົວຂອງເສດຖະກິດ, ພັດທະນາສັງຄົມ ແລະ ການປົກປັກຮັກສາສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ; ສົ່ງເສີມການຄັດເລືອກການລົງທຶນທີ່ເປັນມິດຕໍ່ສິ່ງແວດລ້ອມ, ຄຸ້ມຄອງໂຄງການລົງທຶນໃຫ້ປະຕິບັດຢ່າງເຂັ້ມງວດໃນວຽກຄຸ້ມຄອງສິ່ງແວດລ້ອມ ເພື່ອປ້ອງກັນ ແລະ ຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ໄປຄຽງຄູ່ກັບ ການສ້າງລະບົບກົນໄກການຄຸ້ມຄອງການນຳໃຊ້ ແລະ ພັດທະນາຊັບພະຍາກອນທຳມະຊາດໃຫ້ມີປະສິດທິຜົນ ແລະ ປະສິດທິພາບ, ການສົ່ງເສີມການນຳໃຊ້ເຕັກໂນໂລຊີທີ່ສະອາດ; ສົ່ງເສີມການມີສ່ວນຮ່ວມ ແລະ ການເປັນເຈົ້າການຂອງສັງຄົມເຂົ້າໃນການປົກປັກຮັກສານສິ່ງແວດລ້ອມ; ປັບປຸງລະບົບການຄຸ້ມຄອງ ແລະ ກຳຈັດສິ່ງເສດເຫຼືອ, ການຄວບຄຸມມົນລະພິດ ແລະ ຮັບປະກັນຄຸນນະພາບສິ່ງແວດລ້ອມໃຫ້ໄດ້ມາດຕະຖານ, ສ້າງຕົວເມືອງຂຽວສະອາດງາມຕາ ໃຫ້ເພີ່ມຂຶ້ນໃນແຕ່ລະແຂວງ; ສົ່ງເສີມທ່າແຮງດ້ານຊັບພະຍາກອນນ້ຳ ເຂົ້າໃນການພັດທະນາເສດ-ສັງຄົມໃຫ້ມີຄວາມຍືນຍົງ ໄປພ້ອມກັບການຄຸ້ມຄອງ ແລະ ຈັດສັນການນຳໃຊ້ນ້ຳໃຫ້ມີຄວາມສົມດູນ ແລະ ພຽງພໍຕໍ່ການຜະລິດ ແລະ ການດຳລົງຊີວິດ; ປັບປຸງກົນໄກ, ຂັ້ນຕອນ ແລະ ກວດກາການຄຸ້ມຄອງ ແລະ ນຳໃຊ້ທີ່ດິນຂອງລັດໃຫ້

DRAFT

ເຂັ້ມແຂງ, ເອົາໃຈໃສ່ຄຸ້ມຄອງການເຊົ່າ ແລະ ສຳປະທານທີ່ດິນໃຫ້ໄປຕາມກົດໝາຍ ແລະ ລະບຽບການ, ປ້ອງກັນການຈັບຈອງທີ່ດິນແບບຊະຊາຍ ແລະ ສ້າງວຽກງານທີ່ດິນໃຫ້ເປັນຖານລາຍຮັບທີ່ໝັ້ນຄົງຂອງລັດຖະບານ; ເອົາໃຈໃສ່ປະຕິບັດພັນທະສາກົນ ດ້ານການປ່ຽນແປງດິນຟ້າອາກາດ ແລະ ປົກປັກຮັກສາຊີວະນາໆພັນ ທີ່ ສປປ ລາວ ເປັນພາຄີ ແລະ ເປົ້າໝາຍຫຼຸດຜ່ອນການປ່ອຍ ແລະ ດູດຊັບທາດອາຍເຮືອນແກ້ວໃຫ້ເປັນສູນ ໃນປີ 2050 ພ້ອມທັງ ສຶກສາບັນດາເຂດທີ່ມີຄວາມສ່ຽງ ຄວາມບອບບາງຕໍ່ການປ່ຽນແປງດິນຟ້າອາກາດ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ການສ້າງຄວາມພ້ອມໃນການຮັບມືກັບການປ່ຽນແປງດິນຟ້າອາກາດ ແລະ ເສີມຂະຫຍາຍທ່າແຮງການຊື້-ຂາຍສິນເຊື່ອກາກບອນ; ສ້າງລະບົບການພະຍາກອນໄພແຫ້ງແລ້ງ ແລະ ໄພນໍ້າຖ້ວມໃຫ້ມີປະສິດທິຜົນ; ຫັນວຽກງານອຸຕຸນິຍົມ-ອຸທົກກະສາດ ໃຫ້ທັນສະໄໝ, ໄດ້ມາດຕະຖານສາກົນ ແລະ ສະໜອງຂໍ້ມູນທີ່ຊັດເຈນ ແລະ ທັນກັບສະພາບການ; ສົ່ງເສີມການພັດທະນາພະລັງງານສະອາດ, ພະລັງງານທົດແທນ, ສົ່ງເສີມການຜະລິດທີ່ເປັນມິດຕໍ່ສິ່ງແວດລ້ອມ ແລະ ການຜະລິດທີ່ປ່ອຍທາດອາຍກາກບອນຕ່ຳ.

**+ ຄາດໝາຍລະດັບເປົ້າໝາຍ**

- ສູ້ຊົນຜັນຂະຫຍາຍແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແລະ ແຜນຈັດສັນທີ່ດິນຂັ້ນທ້ອງຖິ່ນ ໂດຍການສຳຫຼວດ ແລະ ຈັດສັນທີ່ດິນ ເພື່ອກຳນົດປະເພດທີ່ດິນ 8 ປະເພດ ໃຫ້ສຳເລັດໃນຂອບເຂດທົ່ວປະເທດ ໃນປີ 2030,
- ສູ້ຊົນສຳຫຼວດ ແລະ ຈັດສັນທີ່ດິນທີ່ຈະສະຫງວນ ແລະອະນຸລັກ ກໍ່ຄືທີ່ດິນປ່າໄມ້ ເພື່ອກຳນົດເຂົ້າໃນທີ່ດິນ 3 ປະເພດປ່າ ຈຳນວນ 16.5 ລ້ານເຮັກຕາ ຫຼື ເທົ່າກັບ 70% ແລະ ທີ່ດິນເພື່ອການພັດທະນາ 30% ໂດຍສະເພາະທີ່ດິນກະສິກຳ ແລະ ທີ່ດິນທີ່ນຳໃຊ້ເຂົ້າໃນຂະແໜງການຕ່າງໆ ຂອງເນື້ອທີ່ທົ່ວປະເທດໃນປີ 2030;
- ຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ໃຫ້ໄດ້ 60% ທຽບໃສ່ລະດັບການປ່ອຍປົກກະຕິ; ຍົກລະດັບຄວາມສາມາດການປັບຕົວ ແລະ ເສີມສ້າງຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ໃຫ້ໄດ້ໂດຍພື້ນຖານ; ປະເມີນຄວາມສ່ຽງ ແລະ ສ້າງແຜນທີ່ຄວາມບອບບາງຕໍ່ການປ່ຽນແປງດິນຟ້າອາກາດ ແບບລະອຽດ ໃນຂອບເຂດທົ່ວປະເທດ;
- ສູ້ຊົນສ້າງກົນໄກການຄຸ້ມຄອງອ່າງຮັບນໍ້າ ທີ່ເຂັ້ມແຂງ ແລະ ມີປະສິດທິພາບ ເພື່ອຊຸກຍູ້ ການຈັດຕັ້ງປະຕິບັດແຜນຄຸ້ມຄອງອ່າງຮັບນໍ້າຂະໜາດໃຫຍ່ 14 ອ່າງຮັບນໍ້າ;
- ປະເມີນ ການໄຫຼຂອງນໍ້າ (ລະດັບນໍ້າຕໍ່າສຸດ, ສູງສຸດ, ສະເລ່ຍ ແລະ ຮອບວຽນການເກີດຊໍ້າ) ໃຫ້ໄດ້ 10 ອ່າງຮັບນໍ້າ;
- ສ້າງ ແລະ ຈັດຕັ້ງປະຕິບັດແຜນຄຸ້ມຄອງນໍ້າໃຕ້ດິນ ຕາມແຜນທີ່ຮັບຮອງແລ້ວ ໃຫ້ໄດ້ຢ່າງນ້ອຍ 12 ແຂວງ
- ຂະຫຍາຍຕາໜ່າງສະຖານີອຸຕຸນິຍົມ ຢູ່ບັນດາເມືອງ ທີ່ຍັງບໍ່ທັນມີສະຖານີອຸຕຸນິຍົມ ໃຫ້ໄດ້ 35 ສະຖານີ; ຂະຫຍາຍຕາໜ່າງສະຖານີອຸທົກກະສາດ ໃນເຂດທີ່ມີຄວາມສ່ຽງໄພນໍ້າຖ້ວມ ໃຫ້ໄດ້ 25 ສະຖານີ; ປັບປຸງ ແລະ ສ້ອມແປງ ສະຖານີອຸຕຸນິຍົມ ໃຫ້ໄດ້ 40 ສະຖານີ; ປັບປຸງ ແລະ ສ້ອມແປງ ສະຖານີອຸທົກກະສາດ ໃຫ້ໄດ້ 40 ສະຖານີ; ປັບປຸງ ແລະ ສ້ອມແປງ ສະຖານີແຜ່ນດິນໄຫວ ໃຫ້ໄດ້ 5 ສະຖານີ; ສ້າງຕັ້ງສະຖານີເຣດ້າອຸຕຸນິຍົມ ໃຫ້ໄດ້ 2 ສະຖານີ;

### *3.4.1 ແຜນວຽກຈຸດສຸມທີ 1: ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດປ່າໄມ້, ທີ່ດິນ, ນໍ້າ ແລະ ແຮ່ທາດ ຢ່າງມີແຜນການ, ປະຢັດ, ໃຫ້ເກີດຜົນປະໂຫຍດສູງສຸດ ແລະ ມີຄວາມຍືນຍົງ*

**1. ຄາດໝາຍລະດັບແຜນວຽກຈຸດສຸມ:**

- ຊຸກຍູ້ການຂຶ້ນທະບຽນອອກໃບຕາດິນ ໃຫ້ໄດ້ຈຳນວນ ໃຫ້ໄດ້ 550,000 ຕອນ ແລະ ສືບຕໍ່ມອບວຽກງານຂຶ້ນທະບຽນອອກໃບຕາດິນ ໃຫ້ຫ້ອງການ ຊສ ຈຳນວນ 34 ເມືອງ ທີ່ຍັງເຫຼືອ ແລະ ສືບຕໍ່ມອບວຽກງານຈົດທະບຽນທີ່ດິນ ໃຫ້ຫ້ອງການ ຊສ ຈຳນວນ 60 ເມືອງ ຂອງຈຳນວນ 148 ເມືອງທີ່ຍັງເຫຼືອໃນຂອບເຂດທົ່ວປະເທດ;
- ສຳຫຼວດ ແລະ ຈັດສັນທີ່ດິນປ່າໄມ້ ແລະ ກຳນົດ ເຂົ້າໃນທີ່ດິນ 3 ປະເພດປ່າ ໃຫ້ໄດ້ຈຳນວນ 16.5 ລ້ານເຮັກຕາ ຫຼື ເທົ່າກັບ 70% ຂອງເນື້ອທີ່ທົ່ວປະເທດ, ໃນນັ້ນ: ທີ່ດິນປ່າປ້ອງກັນ ຈຳນວນ 8.2 ລ້ານ ເຮັກຕ້າ ຫຼື

ເທົ່າກັບ 35%, ທີ່ດິນປ່າສະຫງວນ ຈຳນວນ 4.7 ລ້ານ ເຮັກຕາ ຫຼື ເທົ່າກັບ 20%, ທີ່ດິນປ່າຜະລິດ ຈຳນວນ 3.1 ລ້ານ ເຮັກຕາ ຫຼື ເທົ່າກັບ 13% ແລະ ທີ່ດິນເພື່ອປູກໄມ້ ຈຳນວນ 0.1 ລ້ານ ເຮັກຕາ ໃນປີ 2030;

- ສູ້ຊົນສ້າງແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຮອບດ້ານຂັ້ນເມືອງ ໃຫ້ສຳເລັດໃນຂອບເຂດທົ່ວປະເທດ ແລະ ຈັດສັນທີ່ດິນຂັ້ນບ້ານ ຈຳນວນ 3,167 ບ້ານໃນເຂດທີ່ດິນປ່າໄມ້ ໃຫ້ສຳເລັດເພື່ອເປັນບ່ອນອີງໃນການຮັບຮູ້ສິດນຳໃຊ້ທີ່ດິນ;
- ສູ້ຊົນສ້າງກົນໄກຄຸ້ມຄອງບັນດາໂຄງການລົງທຶນ ແລະ ກິດຈະການໃຫ້ມີປະສິດທິຜົນ ເພື່ອຮັບປະກັນວຽກງານຄຸ້ມຄອງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃຫ້ເກີດຜົນປະໂຫຍດສູງສຸດ ແລະ ສົ່ງເສີມການສ້າງຕົວເມືອງສີຂຽວ ສະອາດ ງາມຕາ;
- ປະເມີນ ການໄຫຼຂອງນໍ້າ (ລະດັບນໍ້າຕໍ່າສຸດ, ສູງສຸດ, ສະເລ່ຍ ແລະ ຮອບວຽນການເກີດຊໍ້າ) ໃຫ້ໄດ້ 10 ອ່າງຮັບນໍ້າ; ອອກອະນຸຍາດການນຳໃຊ້ນໍ້າ ແລະ ຍັ້ງຢືນການໄຫຼຂອງນໍ້າເພື່ອສິ່ງແວດລ້ອມ ໃຫ້ໄດ້ 50 ໂຄງການ, ອອກອະນຸ ຍາດການປ່ອຍນໍ້າເປື້ອນທີ່ຜ່ານການບຳບັດແລ້ວ ໃຫ້ໄດ້ 30 ໂຄງການ (ຂັ້ນສູນກາງ ແລະ ທ້ອງຖິ່ນ)
- ສ້າງ ແລະ ຈັດຕັ້ງປະຕິບັດແຜນຄຸ້ມຄອງນໍ້າໃຕ້ດິນ ຕາມແຜນທີ່ຮັບຮອງແລ້ວ ໃຫ້ໄດ້ຢ່າງນ້ອຍ 12 ແຂວງ.

**2. ແຜນວຽກຈຸດສຸມ**

1) ດ້ານພັດທະນາປ່າໄມ້

- ສົ່ງເສີມການປູກປ່າທົດແທນ ເພື່ອເລັ່ງໃສ່ການ ຟື້ນຟູປ່າ ແລະ ປັບປຸງຄຸນນະພາບຂອງປ່າ ໃນເຂດປ່າປ້ອງກັນ 34 ແຫ່ງ, ປ່າສະຫງວນແຫ່ງຊາດ 18 ແຫ່ງ,  ອຸທິຍານແຫ່ງຊາດ 7 ແຫ່ງ ແລະ ປ່າຜະລິດແຫ່ງຊາດ 51 ແຫ່ງ.

- ສຸມໃສ່ທົບທວນຂອບເຂດ ເນື້ອທີ່ປ່າປ້ອງກັນ ແລະ ນຳສະເໜີລັດຖະບານ ອອກດຳລັດສ້າງຕັ້ງປ່າປ້ອງກັນ ໃຫ້ໄດ້ຈ 32 ແຫ່ງ ແລະ ສຳຫຼວດ ແລະ ວາງແຜນຈັດສັນປ່າປ້ອງກັນແຫ່ງຊາດ ຈຳນວນ 8 ແຫ່ງ ແລະ ປ່າປ້ອງກັນລະດັບແຂວງ 1 ແຫ່ງ;

- ຊຸກຍູ້ ແລະ ສົ່ງເສີມ ການຈັດຕັ້ງປະຕິບັດ ແຜນການຄຸ້ມຄອງ ແລະ ປົກປັກຮັກສາ ປ່າປ້ອງກັນ ເຊັ່ນ: ການຕິດປ້າຍບອກທີ່ຕັ້ງ ຈຳນວນ 6,130 ປ້າຍ, ປັກຫຼັກໝາຍເຂດແດນ 1,865 ຫຼັກ ແລະ ການກວດກາລາດຕະເວນໂດຍເລັ່ງໃສ່ຈັດຕັ້ງປະນເປັນປ່າສະຫງວນແຫ່ງຊາດ 4 ແຫ່ງ: ປ່າຫງວນພສີທົນ-ພຈອມວອຍແຂວງບລິຄາໄຊ, ປ່າສະຫງວນດົງຄັນທຸງ ແຂວງຈປາສັກ, ປ່າສະຫງວນພມີດ-ພູສັນເຂື່ອນ-ພູໄກ່ຄອນ ແຂວງວຽງຈັນ, ປ່າສະຫງວນນໍ້ລານ ແຂວງຜົ້ງສາລີ;

- ສົ່ງເສີມການທ່ອງທ່ຽວທາມະຊາດ ດ້ວຍຮູບການເຊົ່າ, ສຳປະທານ ແລະ ການຮ່ວມມືຄຸ້ມຄອງ ຕິດພັນກັບການປັບປຸງຊີວິດການເປັນຢູ່ໂດຍບໍ່ທຳລາຍປ່າໄມ້ ໃນ 10 ເຂດ ປ່າສະຫງວນ/ອຸທິຍານແຫ່ງຊາດ.

- ຄົ້ນຄວ້ານຳສະເໜີ ປ່າສະຫງວນແຫ່ງຊາດ ເຂົ້າໃນບັນຊີ ອຸທິຍານມໍລະດົກທາງທາມະຊາດ ໃນພາກພື້ນອາຊຽນ ໃຫ້ໄດ້ 9 ແຫ່ງ

2) ດ້ານທີ່ດິນ:

- ສືບຕໍ່ສ້າງແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ແຕ່ລະຂັ້ນ ເພື່ອເຊື່ອມໂຍງ ແລະ ສອດຄ່ອງກັບການກຳນົດຂອບເຂດການພັດທະນາ ຕາມທິດຂອງແຜນພັດທະນາເສດຖະກິດ-ສັງຄົມຂອງ ແຫ່ງຊາດ ແລະ ຂະແໜງການຢ່າງເປັນລະບົບ ແລະ ຍືນຍົງ.

- ປັບປຸງກົນໄກ, ຂັ້ນຕອນ ແລະ ກວດກາຄຸ້ມຄອງ ແລະ ນຳໃຊ້ທີ່ດິນຂອງລັດໃຫ້ເຂັ້ມງວດ, ເອົາໃຈໃສ່ການເຊົ່າ ແລະ ສຳປະທານທີ່ດິນໃຫ້ໄປຕາມກົດໝາຍ ດ້ວຍການກວດກາການເຊົ່າ ແລະ ສຳປະທານທີ່ດິນ ເພື່ອຮັບປະກັນການນຳໃຊ້ຊັບພະຍາກອນດິນໃຫ້ເກີດຜົນປະໂຫຍດສູງສຸດ ແລະ ຮັບປະກັນຜົນປະໂຫຍດລວມຂອງຊາດ ທັງສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ວາງອອກ, ມີປະສິດທິພາບ ແລະ ຍືນຍົງ.

- ສຸມໃສ່ການສ້າງໃຫ້ວຽກງານຄຸ້ມຄອງທີ່ດິນທັນເປັນທັນສະໄໝຢ່າງຕັ້ງໜ້າ ແລະ ກວ້າງຂວາງ ໂດຍສ້າງຍຸດທະສາດການທັນເປັນທັນສະໄໝ, ປະເມີນສະພາບລະບົບຄຸ້ມຄອງຖານຂໍ້ມູນທີ່ດິນ, ປັບປຸງ ແລະ ສ້າງລະບົບໂຄງລ່າງພື້ນຖານຂອງ ICT ເພື່ອຄຸ້ມຄອງຂໍ້ມູນທີ່ດິນ ໃຫ້ເປັນລະບົບຄົບຊຸດ, ຮ່ວມມືກັບບໍລິສັດເອກະຊົນ ແລະ ພາກສ່ວນກ່ຽວຂ້ອງ ເພື່ອສືບຕໍ່ພັດທະນາ ແລະ ຄຸ້ມຄອງລະບົບທະບຽນທີ່ດິນ (Lao Land Reg, LLR) ແລະ ເຊື່ອມຕໍ່ຂໍ້ມູນທີ່ດິນ ເພື່ອເກັບຄ່າທຳນຽມ ແລະ ຄ່າບໍລິການໃນການຄຸ້ມຄອງນຳໃຊ້ທີ່ດິນໃຫ້ຄົບຖ້ວນ.

- ສຸມໃສ່ການສ້າງຖານຂໍ້ມູນໃບຕາດິນໃຫ້ເປັນລະບົບ ເພື່ອທັນການເກັບຄ່າທໍານຽມ, ຄ່າບໍລິການ, ພາສີທີ່ດິນໃຫ້ສະດວກວ່ອງໄວ ແລະ ໂປ່ງໃສ ເປັນທັນສະໄໝ ເພື່ອເພີ່ມປະສິດທິພາບການເກັບລາຍຮັບຈາກທີ່ດິນ ເປັນທ່າແຮງໃນການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ຊຸກຍູ້ໃນການພັດທະນາເສດຖະກິດ-ສັງຄົມ;

- ສຸມໃສ່ໃນການກວດກາການເຊົ່າ ແລະ ສໍາປະທານທີ່ດິນ ເພື່ອຮັບປະກັນການນໍາໃຊ້ຊັບພະຍາກອນດິນໃຫ້ຖືກຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ວາງອອກ, ມີປະສິດທິພາບ ແລະ ມີຄວາມຍືນຍົງ.

3) ດ້ານສິ່ງແວດລ້ອມ

- ຄຸ້ມຄອງ ແລະ ຕິດຕາມກວດກາບັນດາໂຄງການລົງທຶນ ແລະ ທຸລະກິດຄອບຄົວ ເພື່ອຮັບປະກັນການປະຕິບັດມາດຕະການໃນການປ້ອງກັນ, ຫຼຸດຜ່ອນ ແລະ ແກ້ໄຂຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຄວບຄຸມມົນລະພິດ ໃຫ້ຢູ່ໃນເກນມາດຕະຖານຢ່າງເຂັ້ມງວດ; ປັບປຸງການຕິດຕາມກວດກາ, ປະເມີນ ແລະ ສະຫຼຸບລາຍງານສະພາບຄຸນນະພາບສິ່ງແວດລ້ອມ (ນໍ້າ, ດິນ, ອາກາດ) ຢ່າງເປັນລະບົບ, ຖືກຕ້ອງ ແລະ ທັນການ.

- ສົ່ງເສີມການນໍາໃຊ້ເຕັກໂນໂລຊີທີ່ສະອາດ, ປະຕິບັດຫຼັກການຫຼຸດຜ່ອນສິ່ງເສດເຫຼືອ, ນໍາໃຊ້ສິ່ງເສດເຫຼືອເຂົ້າໃນການຜະລິດ ແລະ ນໍາໃຊ້ຄືນໃໝ່ (3Rs) ແລະ ເສດຖະກິດໝູນວຽນເຂົ້າໃນການຄຸ້ມຄອງສິ່ງເສດເຫຼືອຂອງໂຮງງານ ແລະ ການຊົມໃຊ້ໃນສັງຄົມໃຫ້ຖືກວິທີ; ຊຸກຍູ້ໃຫ້ມີສະໜາມຂີ້ເຫຍື້ອແບບມາດຕະຖານ, ຮັບປະກັນການເກັບມ້ຽນ ແລະ ກໍາຈັດໃຫ້ຖືກວິທີ, ສົ່ງເສີມການຫຼຸດຜ່ອນສິ່ງເສດເຫຼືອ ແລະ ມົນລະພິດ;

- ສຶກສາຄົ້ນຄ້ວາ ແຫຼ່ງກໍາເນີດມົນລະພິດທາງອາກາດ ແລະ ນໍ້າ, ຕິດຕາມຄຸນນະພາບອາກາດ, ຄຸນນະພາບນໍ້າ ພ້ອມທັງຫຼຸດຜ່ອນບັນຫາມົນລະພິດໝອກຄວັນ ຢ່າງມີປະສິດທິຜົນ; ເຜີຍແຜ່ຂໍ້ມູນ ແລະ ຊຸກຍູ້ໃຫ້ທຸກຄົນເຂົ້າໃຈ ແລະ ມີສ່ວນຮ່ວມໃນການຮັບຜິດຊອບ ແລະ ເປັນເຈົ້າການໃນການປົກປັກຮັກສາ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ;

- ສົ່ງເສີມການພັດທະນາຕົວເມືອງ ສີຂຽວ, ສະອາດ, ງາມຕາ ໃຫ້ເປັນຕົວເມືອງອັດສະລິຍະທີ່ມີສະເໜ່ ແລະ ຍືນຍົງ, ສ້າງສວນສາທາລະນະທີ່ມີພື້ນທີ່ປົກຫຸ້ມຂອງຕົ້ນໄມ້ໃຫ້ຫຼາຍຂຶ້ນ;

- ປົກປັກຮັກສາຊັບພະຍາກອນທໍາມະຊາດ ຕິດພັນກັບສົ່ງເສີມການທ່ອງທ່ຽວແບບອະນຸລັກທໍາມະຊາດ ແລະ ການມີສ່ວນຮ່ວມຂອງຊຸມຊົນ.

4) ດ້ານການຄຸ້ມຄອງຊັບພະຍາກອນນໍ້າ:

ເພີ່ມທະວີການຄຸ້ມຄອງນໍ້າ ແລະ ຊັບພະຍາກອນນໍ້າໃຫ້ເປັນລະບົບຄົບຊຸດ, ຈັດສັນການນໍາໃຊ້ນໍ້າ ໃຫ້ມີຄວາມສົມດູນ ແລະ ພໍພຽງເພື່ອຮັບປະກັນໃຫ້ແກ່ການພັດທະນາ ໃນແຕ່ລະຂະແໜງການ ຢ່າງເໝາະສົມ ໂດຍສຸມໃສ່ບາງວຽກສໍາຄັນດັ່ງນີ້:

- ຂະຫຍາຍຈຸດຕິດຕາມຄຸນນະພາບນໍ້າ ຕາມລໍາແມ່ນໍ້າຂອງໃຫ້ໄດ້ 8 ຈຸດ ແລະ ຂະຫຍາຍຈຸດຕິດຕາມຄຸນນະພາບອາກາດໃຫ້ໄດ້ 148 ເມືອງ, ປັບປຸງຄຸນນະພາບຫ້ອງທົດລອງປະຈໍາ 3 ພາກໃຫ້ໄດ້ມາດຕະຖານສາກົນ;

- ສໍາຫຼວດສ້າງແຜນທີ່ ແລະ ສ້າງແບບຈໍາລອງນໍ້າ ເຂດທີ່ເກີດໄພພິບັດນໍ້າຖ້ວມໃນແຕ່ລະພື້ນທີ່ ແລະ ປະເມີນພື້ນທີ່ສ່ຽງໄພນໍ້າຖ້ວມ ໃນແຕ່ລະອ່າງຮັບນໍ້າຢູ່ ເຂດພາກເໜືອ, ພາກກາງ ແລະ ພາກໃຕ້ ເພື່ອນໍາໃຊ້ເຂົ້າໃນການບໍລິຫານນໍ້າຢ່າງເປັນລະບົບ.

- ສ້າງລະບົບການຄຸ້ມຄອງທີ່ມີປະສິດທິຜົນ ແລະ ເປັນລະບົບສາມາດຕ້ານແລ້ງ ແລະ ຕ້ານຖ້ວມ; ດໍາເນີນການຕິດຕາມກວດກາ ແລະ ຄຸ້ມຄອງການປ່ອຍນໍ້າເປື້ອນ ແລະ ຮັກສາຄຸນນະພາບນໍ້າ ໃນອ່າງຮັບນໍ້າ ແລະ ສາຍນໍ້າທໍາມະຊາດ ໃຫ້ໄດ້ມາດຕະຖານ.

- ຄຸ້ມຄອງດິນບໍລິເວນນໍ້າໃຫ້ມີປະສິດທິຜົນ, ຈັດຕັ້ງປະຕິບັດສົນທິສັນຍາ ຣາມຊາ ແລະ ສັນຍາແມ່ນໍ້າຂອງ 1995 ຢ່າງເປັນເຈົ້າການ ແລະ ມີປະສິດທິຜົນ;

- ເສີມຂະຫຍາຍທ່າແຮງ ແລະ ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງການນໍາໃຊ້ນໍ້າ ແລະ ຊັບພະຍາກອນນໍ້າ ຕາມຫຼັກການຄຸ້ມຄອງແບບເຊື່ອມສານເພື່ອຮັບປະກັນໃຫ້ແກ່ການເກັບລາຍຮັບຢ່າງຄົບຖ້ວນຈາກການນໍາໃຊ້ນໍ້າໜ້າດິນ ແລະ ນໍ້າໃຕ້ດິນ ຈາກວິສາຫະກິດ ແລະ ໂຄງການພັດທະນາຕ່າງໆ ເປັນຕົ້ນ: ການຜະລິດພະລັງງານໄຟຟ້າ, ຊົນລະປະທານ, ອຸດສາຫະກໍາ, ການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ, ນໍ້າປະປາ ແລະ ການທ່ອງທ່ຽວ.

- ຊຸກຍູ້ສົ່ງເສີມການສ້າງກົນໄກປະສານງານໃນການຄຸ້ມຄອງ, ຈັດສັນ ແລະ ນໍາໃຊ້ແບບມີສ່ວນຮ່ວມຂອງຫຼາຍຂະແໜງການ ແລະ ທ້ອງຖິ່ນຢ່າງກົມກຽວເພື່ອຮັບປະກັນປະສິດທິພາບ, ປະສິດທິຜົນ ແລະ ຄວາມຍືນຍົງ.

### *3.4.2 ແຜນວຽກຈຸດສຸມທີ 2: ສົ່ງເສີມວຽກງານການເຕີບໂຕສີຂຽວ ແລະ ວຽກງານການແກ້ໄຂບັນຫາປ່ຽນແປງດິນຟ້າອາກາດ ເພື່ອຫຼຸດຜ່ອນ ແລະ ເພີ່ມການດູດຊັບທາດອາຍເຮືອນແກ້ວ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ແລະ ກວ້າງຂວາງ*

**1. ຄາດໝາຍລະດັບແຜນວຽກຈຸດສຸມ**

- ຂະຫຍາຍຕາໜ່າງສະຖານີອຸຕຸນິຍົມ ຢູ່ບັນດາເມືອງ ທີ່ຍັງບໍ່ທັນມີສະຖານີອຸຕຸນິຍົມ ໃຫ້ໄດ້ 35 ສະຖານີ; ຂະຫຍາຍຕາໜ່າງສະຖານີອຸທົກກະສາດ ໃນເຂດທີ່ມີຄວາມສ່ຽງໄພນໍ້າຖ້ວມ ໃຫ້ໄດ້ 25 ສະຖານີ; ປັບປຸງ ແລະ ສ້ອມແປງ ສະຖານີອຸຕຸນິຍົມ ໃຫ້ໄດ້ 40 ສະຖານີ; ປັບປຸງ ແລະ ສ້ອມແປງ ສະຖານີອຸທົກກະສາດ ໃຫ້ໄດ້ 40 ສະຖານີ; ປັບປຸງ ແລະ ສ້ອມແປງ ສະຖານີແຜ່ນດິນໄຫວ ໃຫ້ໄດ້ 5 ສະຖານີ; ສ້າງຕັ້ງສະຖານີເຣ ດ້າ ອຸຕຸນິຍົມ ໃຫ້ໄດ້ 2 ສະຖານີ;
- ຕິດຕາມຄຸນນະພາບນໍ້າໜ້າດິນ ໃຫ້ໄດ້ຢ່າງໜ້ອຍ 10 ອ່າງຮັບນໍ້າ (ອ່າງລະ 1 ຈຸດ); ຕິດຕາມລະດັບ ແລະ ຄຸນນະພາບນໍ້າ ໃຕ້ດິນ ໃນ 18 ແຂວງ (ຢ່າງໜ້ອຍແຂວງລະ 1 ຈຸດ); ຄຸ້ມຄອງທີ່ດິນບໍລິເວນນໍ້າ ແລະ ດິນຖ່ານຕົມໃຫ້ໄດ້ຢ່າງໜ້ອຍ 2 ແຫ່ງ.
- ກໍ່ສ້າງສະໜາມຂີ້ເຫຍື້ອ ໃຫ້ໄດ້ 04 ແຫ່ງ ຄື: ແຂວງຫຼວງພະບາງ, ນະຄອນຫຼວງວຽງຈັນ, ແຂວງອຸດົມໄຊ ແລະ ແຂວງຫຼວງນໍ້າທາ.

**2. ວຽກງານຈຸດສຸມ**

1) ວຽກງານເຕີບໂຕສີຂຽວ
   - ເພີ່ມທະວີການປະຕິບັດວຽກງານການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ ແລະ ສ້າງ ແລະ ປັບປຸງກົນໄກຄຸ້ມຄອງ ວຽກງານຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ;
   - ສ້າງ ແລະ ປັບປຸງກົນໄກຄຸ້ມຄອງວຽກງານຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ;
   - ປະເມີນສິ່ງແວດລ້ອມແບບຍຸດທະສາດ ເພື່ອສືບຕໍ່ຈັດຕັ້ງປະຕິບັດຍຸດທະສາດເພື່ອການເຕີບໂຕສີຂຽວແຫ່ງຊາດ ຂອງ ສປປ ລາວ ຮອດປີ 2030 (SEA-Green Growth Strategy Lao PDR until 2030) ໃຫ້ມີປະສິດທິຜົນສູງ;
   - ຊຸກຍູ້ ແລະ ສົ່ງເສີມການລົງທຶນຂອງນັກລົງທຶນພາຍໃນ ແລະ ການລົງທຶນໂດຍກົງຈາກຕ່າງປະເທດທີ່ລົງທຶນເຂົ້າໃນການປູກປ່າ ຫລື ຕົ້ນໄມ້ອຸດສາຫະກໍາແບບປະສົມປະສານ ແລະ ໝູນວຽນໃສ່ດິນປອກໂລ້ນ ແລະ ດິນເຊື່ອມໂຊມ ເພື່ອຂະຫຍາຍເນື້ອທີ່ການປົກຫຸ້ມຂອງປ່າ, ຟື້ນຟູຄຸນນະພາບຂອງດິນ, ສະ ໜອງໄມ້ເພື່ອຕອບສະໜອງ ຄວາມຕ້ອງການຂອງອຸດສາຫະກໍາປຸງແຕ່ງພາຍໃນ ແລະ ການສົ່ງອອກ ເພື່ອຊຸກຍູ້ການຂະຫຍາຍຕົວ ຂອງເສດຖະກິດ, ສ້າງວຽກເຮັດງານທໍາ ແລະ ຫລຸດຜ່ອນຄວາມທຸກຍາກ; ຈໍາ ກັດ ແລະ ຫລຸດຜ່ອນການປູກໄມ້ຊະນິດດຽວແກ່ຍາວເປັນເວລາດົນນານ ທີ່ສົ່ງຜົນກະທົບຕໍ່ຄຸນນະພາບ ຂອງດິນ.
   - ປົກປັກຮັກສາ ແລະ ຟື້ນຟູ ນໍ້າ ແລະ ຊັບພະຍາກອນນໍ້າ ໂດຍສະເພາະທີ່ດິນບໍລິເວນນໍ້າ ແລະ ດິນຖ່ານຕົມ; ຄຸ້ມຄອງຄຸນນະພາບນໍ້າໜ້າດິນ ແລະ ນໍ້າໃຕ້ດິນ.
2) ວຽກງານແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ
   - ສ້າງຄວາມເຂັ້ມແຂງ ໃນການຈັດຕັ້ງປະຕິບັດຍຸດທະສາດ, ແຜນງານ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ ໃຫ້ມີປະສິດທິຜົນ.
   - ຂະຫຍາຍລະບົບຕິດຕາມຄຸນນະພາບອາກາດ ຝຸ່ນລະອອງຂະໜາດນ້ອຍ PM2.5 ດ້ວຍເຄື່ອງວັດແທກຂະໜາດນ້ອຍລະບົບ Sen sors ຈໍານວນ: 148 ເຄື່ອງ, ໃນ 148 ເມືອງ ທົ່ວປະເທດ.
   - ສ້າງຍຸດທະສາດແຫ່ງຊາດທ້ອງຟ້າສົດໃສ 2025-2030;
   - ເພີ່ມທະວີການຈັດຕັ້ງປະຕິບັດ ວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ເປັນຕົ້ນ: ພັດທະນາໂຄງລ່າງພື້ນຖານທີ່ຈໍາເປັນ ໃຫ້ມີຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ;
   - ສົ່ງເສີມການນໍາໃຊ້ເຕັກໂນໂລຊີ ໃນຂະບວນການຜະລິດ ທີ່ເປັນມິດຕໍ່ສິ່ງແວດລ້ອມ ແລະ ການປ່ອຍກາກບອນຕໍ່າ;

DRAFT

- ເສີມຂະຫຍາຍທ່າແຮງການຊື້-ຂາຍກາກບອນ ເພື່ອຮັບປະກັນການຮັບມື ແລະ ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ທັງເປັນການສ້າງລາຍຮັບ ແລະ ປັບປຸງຊີວິດການເປັນຢູ່ໃຫ້ແກ່ຊຸມຊົນຫຼາຍຂຶ້ນ;
- ເພີ່ມທະວີການເຂົ້າເຖິງແຫຼ່ງທຶນສາກົນ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ, ກອງທຶນອື່ນໆ ເພື່ອນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານບູລິມະສິດ ໃຫ້ມີປະສິດທິຜົນສູງ.

### *3.4.3 ແຜນວຽກຈຸດສຸມທີ 3: ເພີ່ມທະວີການປ້ອງກັນ, ການຄວບຄຸມ ແລະ ການຟື້ນຟູຫຼັງໄພພິບັດຕ່າງໆ.*

**1. ຄາດໝາຍລະດັບແຜນວຽກຈຸດສຸມ**

- ປັບປຸງສູນປະຕິບັດງານສຸກເສີນ EOC ຢູ່ສູນກາງ ແລະ ສ້າງໃໝ່ຢູ່ຂັ້ນແຂວງ 5 ແຫ່ງ;
- ຊຸກຍູ້ໃຫ້ບັນດາເມືອງ ສ້າງກອງທຶນຄຸ້ມຄອງໄພພິບັດ ໃຫ້ໄດ້ 80 ເມືອງ ແລະ ລະບົບການຄຸ້ມຄອງໃຫ້ມີປະສິດທິຜົນ;
- ສ້າງຍຸດທະສາດຫຼຸດຜ່ອນຄວາມສ່ຽງໄພພິບັດຢູ່ 11 ແຂວງ ແລະ ແຜນປະຕິບັດງານຢູ່ 70 ເມືອງ;
- ສ້າງແຜນກຽມພ້ອມຕອບໂຕໄພພິບັດຂັ້ນສູນກາງ ແລະ ຂັ້ນແຂວງ ປະຈຳປີ, ກຳນົດ ແລະ ສ້າງແຜນຄວາມສ່ຽງໄພພິບັດ ໃຫ້ໄດ້ 30 ເມືອງ ໃນ 5 ແຂວງ.

**2. ວຽກງານຈຸດສຸມ**

1) ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

- ສ້າງລະບົບການຄຸ້ມຄອງຕ້ານແລ້ງ ແລະ ຕ້ານຖ້ວມໃຫ້ມີປະສິດທິຜົນ ໂດຍສືບຕໍ່ປັບປຸງລະບົບເຕືອນໄພລ່ວງໜ້າ, ທັນວຽກງານອຸຕຸນິຍົມ-ອຸທົກກະສາດ ໃຫ້ເປັນລະບົບຄົບຊຸດທີ່ທັນສະໄໝ, ຖືກຕ້ອງ, ຊັດເຈນ ແລະ ທັນສະພາບການ;

- ຍົກລະດັບການພະຍາກອນອາກາດໃຫ້ໄດ້ມາດຕະຖານພາກພື້ນ ແລະ ສາກົນ ເພື່ອຕອບສະໜອງຂໍ້ມູນຂ່າວສານ ໃຫ້ແກ່ສັງຄົມ ແລະ ຂະແໜງການ ໃຫ້ວ່ອງໄວ, ທັນການ ແລະ ຊັດເຈນ;

- ສ້າງຄວາມເຂັ້ມແຂງໃຫ້ແກ່ກອງທຶນໄພພິບັດ ເພື່ອນຳໃຊ້ເຂົ້າໃນການແກ້ໄຂໄພພິບັດ ແລະ ປ້ອງກັນຄວາມສ່ຽງໃຫ້ທັນການ, ໂປ່ງໃສ ແລະ ສາມາດກວດສອບໄດ້.

- ພັດທະນາລະບົບຂໍ້ມູນສະຖິຕິຂອງ ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ທັນເປັນລະບົບທັນສະໃໝ.

2) ຂະແໜງກະສິກຳ ແລະ ປ່າໄມ້

- ສ້າງແຜນຄຸ້ມຄອງ ແລະ ຫຼຸດຜ່ອນຄວາມສ່ຽງຈາກໄພພິບັດໃນ ຂະແໜງກະສິກຳຂັ້ນ ເມືອງ ແລະ ຂັ້ນບ້ານ ໂດຍໃຫ້ມີການແຂແນວພັນ, ປັດໃຈການຜະລິດ, ຝຸ່ນ, ຢາ, ອຸປະກອນເຄື່ອງຈັກ, ເຄື່ອງມືໃນການສູບ ແລະ ລະບາຍນ້ຳ ໃນກໍລະນີມີພາວະແຫ້ງແລ້ງ ແລະ ນ້ຳຖ້ວມ, ການລະບາດຂອງພະຍາດ, ແມງໄມ້ ລວມທັງມີການຈັດສັນພື້ນທີ່ອົບພະຍົບສັດລ້ຽງ.

- ສຶກສາ, ວິເຄາະ, ວິໄຈ ແລະ ຄາດຄະເນການປ່ຽນແປງຂອງສະພາບດິນຟ້າອາກາດຕໍ່ການຜະລິດກະສິກຳ ທີ່ຄາດວ່າຈະມີຄວາມສ່ຽງໃນການເກີດໄພນ້ຳຖ້ວມ, ແຫ້ງແລ້ງ, ການລະບາດຂອງສັດຕູພືດ-ແມງໄມ້ໃນແຕ່ລະດູການ ແລະ ຕໍ່ໜ້າ (ພາກເໜືອ, ພາກກາງ ແລະ ພາກໃຕ້):

3) ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ:

- ສ້າງຄວາມເຂັ້ມແຂງວຽກງານຄຸ້ມຄອງໄພພິບັດ  ແລະ ການປະເມີນໄພພິບັດສຸກເສີນ ໃຫ້ແກ່ຄະນະກຳມະການຄຸ້ມຄອງໄພພິບັດແຕ່ລະຂັ້ນ;

- ສ້າງຄວາມເຂັ້ມແຂງຂອງຄະນະກຳມະການຄຸ້ມຄອງໄພພິບັດທຸກຂັ້ນ ໃນການປະເມີນຜົນກະທົບ, ການວາງແຜນ, ການປະສານງານ, ການສະຫຼຸບລາຍງານ ກ່ຽວກັບແກ້ໄຂສຸກເສີນ, ຟື້ນຟູ ແລະ ສ້ອມແປງຫຼັງໄພບັດທາງທຳມະຊາດ;

- ກຳນົດ ແລະ ສຳຫຼວດບັນດາແຂວງ ແລະ ເມືອງທີ່ມີຄວາມສ່ຽງສູງ ເພື່ອສ້າງແຜນທີ່ຄວາມສ່ຽງໄພພິບັດ;

- ສ້າງ ແລະ ປັບປຸງລະບົບຖານຂໍ້ມູນເກັບກຳຄວາມເສຍຫາຍ ແລະ ການສູນເສຍຈາກໄພພິບັດຕ່າງໆ ທີ່ຖືກຕ້ອງ, ເປັນລະບົບເອກະພາບໃນຂັ້ນສູງກາງ ແລະ ທ້ອງຖິ່ນ.

DRAFT

## 3.5 ເປົ້າໝາຍທີ 5: ການເຊື່ອມໂຍງ-ເຊື່ອມຈອດກັບພາກພື້ນ ແລະ ສາກົນຢ່າງກວ້າງຂວາງ ແລະ ມີປະສິດທິຜົນ

ການເຊື່ອມໂຍງ-ເຊື່ອມຈອດຂອງ ສປປ ລາວ ກັບພາກພື້ນ ແລະ ສາກົນ ໄດ້ນຳຜົນປະໂຫຍດມາສູ່ປະເທດຢ່າງຫຼວງຫຼາຍ ເປັນຕົ້ນ ການຂະຫຍາຍຕະຫຼາດໄປສູ່ພາກພື້ນ ແລະ ສ້າງຖານການຜະລິດຂອງລາວເຊື່ອມເຂົ້າກັບຕ່ອງໂສ້ການຜະລິດຂອງພາກພື້ນ ແລະ ຂອງໂລກ, ຊ່ວຍດຶງດູດການລົງທຶນເຂົ້າມາໃນ ສປປ ລາວ ຫຼາຍຂຶ້ນ ທັງເປັນການສ້າງວຽກເຮັດງານທຳໃນສັງຄົມ ໂດຍສະເພາະການປະຕິບັດຍຸດທະສາດ "ການຫັນປະເທດບໍ່ມີຊາຍແດນຕິດກັບທະເລ ເປັນປະເທດເຊື່ອມຈອດ" ໂດຍສະເພາະການພັດທະນາໂຄງລ່າງພື້ນຖານເຊື່ອມໂຍງ-ເຊື່ອມຈອດທີ່ສຳຄັນຕ່າງໆ ຕິດພັນກັບການພັດທະນາເຂດເສດຖະກິດພິເສດ ເພື່ອເປັນແຮງແກ່ດຶງໃຫ້ຂະແໜງການອື່ນຂະຫຍາຍຕົວໄປນຳ ເຊັ່ນ: ການຜະລິດສິນຄ້າກະສິກຳທີ່ເປັນທ່າແຮງ, ການຜະລິດອຸດສາຫະກຳປຸງແຕ່ງ, ການພັດທະນາດ້ານໂລຊິດສຕິກ, ການຄ້າ ແລະ ການທ່ອງທ່ຽວ. ນອກຈາກຊ່ວຍເລັ່ງການຂະຫຍາຍຕົວຂອງເສດຖະກິດໂດຍລວມຂອງປະເທດແລ້ວ ທີ່ສຳຄັນຍັງຊ່ວຍຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນເທື່ອກ້າວ ຫຼຸດຜ່ອນຄວາມແຕກໂຕນກັນລະຫວ່າງຕົວເມືອງ ແລະ ຊົນນະບົດ ກ້າວສູ່ການພັດທະນາເຂດແຄ້ວນໃຫ້ມີເສດຖະກິດສຳພັນກັນ ແລະ ການພັດທະນາຕົວເມືອງໃຫ້ມີຄວາມຍືນຍົງ.

ການຮ່ວມມືກັບພາກພື້ນ ແລະ ສາກົນ ແມ່ນນັບມື້ນັບມີບົດບາດສຳຄັນຫຼາຍ ເພື່ອຍາດແຍ່ງເອົາຜົນປະໂຫຍດ ໂດຍສະເພາະແມ່ນເພີ່ມທະວີການຍົກບົດບາດການຮ່ວມມື ແລະ ການຊ່ວຍເຫຼືອຈາກປະເທດເພື່ອນມິດຍຸດທະສາດ, ການສະໜັບສະໜູນຈາກເພື່ອນມິດສາກົນ ໃນເວທີພາກພື້ນ ແລະ ສາກົນ ໂດຍສຸມໃສ່ເພີ່ມທະວີຄວາມເປັນເຈົ້າການ ແລະ ເສີມຂະຫຍາຍການພົວພັນຮ່ວມມືແບບຫຼາຍທິດ, ຫຼາຍຝ່າຍ, ຫຼາຍຮູບແບບ ແລະ ຫຼາຍລະດັບ ສົມທົບແໜ້ນກັບການປະຕິບັດພັນທະຕ່າງໆ ພາຍໃຕ້ສົນທິສັນຍາສາກົນ ແລະ ສິດທິພິເສດຕ່າງໆ ໃນກອບການຮ່ວມມືຕ່າງໆທີ່ ສປປ ລາວ ເປັນພາຄີ.

+ **ຄາດໝາຍລະດັບເປົ້າໝາຍ**
  - ສັດສ່ວນຂອງມູນຄ່າການສົ່ງອອກພາຍໃຕ້ສິດທິພິເສດທາງດ້ານການຄ້າຕໍ່ການສົ່ງອອກສິນຄ້າທັງໝົດ ບໍ່ໃຫ້ຫຼຸດ 45% ຂອງການສົ່ງອອກສິນຄ້າທັງໝົດໃນແຕ່ລະປີ.
  - ຫຼຸດຜ່ອນຂັ້ນຂອດ ແລະ ເວລາການນຳເຂົ້າ-ສົ່ງອອກສິນຄ້າ ໃຫ້ໄດ້ 45% ໃນປີ 2030
  - ການຂົນສົ່ງຜູ້ໂດຍສານໃນຕາໜ່າງການເຊື່ອມໂຍງ-ເຊື່ອມຈອດກັບບັນດາປະເທດໃນພາກພື້ນໃນທຸກຮູບແບບການຂົນສົ່ງ:
    - ປະລິມານການຂົນສົ່ງສິນຄ້າທາງບົກ ເພີ່ມຂຶ້ນ .....ຕໍ່ປີ ແລະ ໂດຍສານ ເພີ່ມຂຶ້ນ 05% ຕໍ່ປີ.
    - ປະລິມານການຂົນສົ່ງສິນຄ້າທາງ ແລະ ໂດຍສານ ທາງລົດໄຟ ເພີ່ມຂຶ້ນ 5% ຕໍ່ປີ.
    - ປະລິມານການຂົນສົ່ງສິນຄ້າທາງ ແລະ ໂດຍສານ ທາງອາກາດ ເພີ່ມຂຶ້ນ 8% ຕໍ່ປີ.
    - ປະລິມານການຂົນສົ່ງສິນຄ້າທາງ ແລະ ໂດຍສານ ທາງນ້ຳ ເພີ່ມຂຶ້ນ .....% ຕໍ່ປີ.
  - ຂະຫຍາຍສະຖານີຮັບ-ສົ່ງສັນຍານມືຖື ລະບົບ 4G ຄອບຄຸມໃຫ້ໄດ້ 80%, 5G ຄອບຄຸມໃຫ້ໄດ້ຕົວເມືອງໃຫຍ່ໃນ 18 ແຂວງທົ່ວປະເທດ ໃນປີ 2030.
  - ເສດຖະກິດດິຈິຕອນ ສ້າງລາຍຮັບໃຫ້ໄດ້ 7% ຂອງ GDP.

### *3.5.1 ແຜນວຽກຈຸດສຸມທີ 1: ພັດທະນາໂຄງລ່າງພື້ນຖານທີ່ສາມາດເຊື່ອມຈອດ-ເຊື່ອມໂຍງພາຍໃນ, ພາກພື້ນ ແລະ ສາກົນ ເພື່ອເອື້ອອຳນວຍໃຫ້ແກ່ການຜະລິດ, ການບໍລິການ, ການຄ້າ ແລະ ການລົງທຶນ*

1. **ຄາດໝາຍລະດັບແຜນວຽກຈຸດສຸມ**
   - ຕາໜ່າງເສັ້ນທາງຫຼວງແຫ່ງຊາດທີ່ເປັນເສັ້ນທາງຫຼວງອາຊຽນ ໄດ້ມາດຕະຖານອາຊຽນສາມາດຮັບນ້ຳໜັກລົດບັກທຸກໄດ້ 11 ໂຕນ/ເພົາ ເພີ່ມຂຶ້ນຈາກ 974 ກິໂລແມັດ ເປັນ 1,410 ກິໂລແມັດ.
   - ປັບປຸງ ແລະ ຍົກລະດັບໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກ ຕາມດ່ານຊາຍແດນສາກົນຢ່າງໜ້ອຍ ໃຫ້ໄດ້ 3 ດ່ານ.

DRAFT

- ເນື້ອທີ່ເຂດໂລຊິດສະຕິກທີ່ເຊື່ອມຈອດກັບລະບົບຂົນສົ່ງພາກພື້ນ ແລະ ສາກົນ ເພີ່ມຂຶ້ນ....% ທຽບໃສ່ ປີ 2025 (ພາກສ່ວນກ່ຽວຂ້ອງກໍາລັງຄົ້ນຄ້ວາ).
- ສັນຍາ ແລະ ອະນຸສັນຍາ ຂົນສົ່ງສອງຝ່າຍກັບປະເທດອ້ອມຂ້າງໄດ້ຮັບການປັບປຸງ.
- ສ້າງສູນພັດທະນາໄປສະນີທັນເປັນດິຈິຕອນ ໃຫ້ໄດ້ 1 ແຫ່ງ.
- ສ້າງສູນຄຸ້ມຄອງບໍລິການຂໍ້ມູນພາບຖ່າຍດາວທຽມ ໃຫ້ໄດ້ 1 ແຫ່ງ.
- ຫຼຸດຈໍານວນບ້ານທີ່ບໍ່ມີສັນຍານໂທລະສັບ (ຈໍານວນ 670 ບ້ານ) ໃຫ້ຫຼຸດລົງເຄິ່ງໜຶ່ງ.
- ຫັນການບໍລິຫານ ແລະ ການບໍລິການຂອງລັດດ້ວຍລະບົບອອນລາຍໃຫ້ໄດ້ 50%.
- ສ້າງເຂດພັດທະນາເຕັກໂນໂລຊີ ລະດັບສູງ ໃຫ້ໄດ້ 1 ແຫ່ງ.
- ສ້າງອຸທະຍານດິຈິຕອນ ໃຫ້ໄດ້ຕື່ມ 03 ແຫ່ງ (ພາກເໜືອ, ພາກກາງ ແລະ ພາກໃຕ້)

**2. ວຽກງານຈຸດສຸມ:**

1) ຂະແໜງໂຍທາທິການ ແລະ ຂົນສົ່ງ:

ສຸມໃສ່ກໍ່ສ້າງ, ຍົກລະດັບ, ຄຸ້ມຄອງ, ບູລະນະຮັກສາ ແລະ ສ້ອມແປງ ບັນດາໂຄງລ່າງພື້ນຖານຄົມມະນາຄົມຂົນສົ່ງ ທີ່ເປັນຕາໜ່າງນອນໃນບັນດາແລວເສດຖະກິດ (ລາວ-ຈີນ, ເໜືອ-ໃຕ້ ແລະ ຕາເວັນອອກ-ຕາເວັນຕົກ) ຕາມມາດຕະຖານຂອງ ASEAN ຢ່າງມີຈຸດສຸມ ເພື່ອໃຫ້ຮັບປະກັນການສັນຈອນໃຫ້ປອດໄພ ແລະ ສາມາດຮອງຮັບປະລິມານການຂົນສົ່ງ ແລະ ກາຍເປັນທາງເລືອກໃນການຂົນສົ່ງປະສົມປະສານຫຼາຍຮູບແບບ (Multimodal Transport), ມີຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ເພື່ອສະໜັບສະໜູນ-ສົ່ງເສີມການຄ້າພາຍໃນ ແລະ ການຄ້າຂ້າມແດນ, ການໃຫ້ບໍລິການສັງຄົມ ໄປຄຽງຄູ່ກັບການປົກປັກຮັກສາເຂດນໍ້າແດນດິນ ເປັນຕົ້ນ:

- ວຽກທາງບົກ: (1) ຂົນຂວາຍການຊ່ວຍເຫຼືອທາງການເພື່ອການພັດທະນາ ນໍາບັນດາຄູ່ຮ່ວມພັດທະນາເພື່ອມາຍົກລະດັບເສັ້ນທາງຫຼວງແຫ່ງຊາດ ແລະ ຂົວຂ້າງນໍ້າຂອງ ທີ່ນອນໃນແລວເສດຖະກິດ ລາວ-ຈີນ, ແລວເສດຖະກິດເໜືອ-ໃຕ້ ແລະ ແລວເສດຖະກິດຕາເວັນອອກ-ຕາເວັນຕົກ ໃຫ້ໄດ້ມາດຕະຖານເຕັກນິກ ຂອງ ASEAN ເຊັ່ນ: ທາງເລກ 2E-2W ຢ່າງມີຈຸດສຸມ(ໃຫ້ສໍາເລັດ), ທາງເລກ 12 (ໃຫ້ສໍາເລັດ), ທາງເລກ 13 ໃຕ້ ຊ່ວງ ກມ 21 - ກມ 71 (ໃຫ້ສໍາເລັດ), ທາງເລກ 8 (ຊອກຫາແຫຼ່ງທຶນ ແລະ ໄດ້ເຊັ່ນສັນຍາກັບຜູ້ໃຫ້ທຶນ),... (ກໍາລັງຄົ້ນຄ້ວາເຖິງຄວາມເປັນໄປໄດ້ ແລະ ຈັດລຽງບູລິມະສິດ ທາງເລກ 13 ເໜືອ ຊ່ວງໂພນໂຮງ-ວັງວຽງ-ກາສີ, ທາງເລກ 13 ໃຕ້ ຊ່ວງທ່າແຂກ-ສະຫວັນນະເຂດ, ທາງເລກ 14, ທາງເລກ 17, ທາງເລກ 18), ຂົວຂ້າມນໍ້າຂອງ ຫຼວງພະບາງ-ຈອມເພັດ (ໃຫ້ໄດ້ລົງມືກໍ່ສ້າງ), ຂົວມິດຕະພາບລາວ-ໄທ ແຫ່ງທີ 6 ສາລະວັນອຸບົນ (ໃຫ້ໄດ້ສໍາເລັດການສໍາຫຼວດ-ອອກແບບລະອຽດ); (2) ຊຸກຍູ້ການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ ໃຫ້ສໍາເລັດການກໍ່ສ້າງເສັ້ນທາງດ່ວນວຽງຈັນ-ບໍ່ເຕັນ ຊ່ວງທີ 4 ອຸດົມໄຊ-ບໍ່ເຕັນ, ທາງດ່ວນຄູ່ຂະໜານທາງ R3 ແຕ່ບໍ່ເຕັນ (ແຂວງຫຼວງນໍ້າທາ) ຫາ ຫ້ວຍຊາຍ (ແຂວງບໍ່ແກ້ວ), ທາງດ່ວນແຕ່ນະຄອນຫຼວງວຽງຈັນ-ແຂວງໄຊສົມບູນ-ແຂວງຊຽງຂວາງ-ແຂວງຫົວພັນ-ດ່ານນໍ້າໂສຍ(ຊາຍແດນລາວ-ຫວຽດນາມ). ສໍາລັບທາງດ່ວນອື່ນໆແມ່ນສືບຕໍ່ຊຸກຍູ້ນັກລົງທຶນໃນການພັດທະນາໂຄງການ; (3) ເອົາໃຈໃສ່ບູລະນະ ແລະ ສ້ອມແປງບັນດາເສັ້ນທາງຫຼວງແຫ່ງຊາດ ແລະ ທາງຫຼວງທ້ອງຖິ່ນ ໂດຍສະເພາະ ເສັ້ນທາງເຊື່ອມຈອດເຂດການຜະລິດ, ເຂດກະສິກໍາ ແລະ ເຂດການທ່ອງທ່ຽວ ເຂົ້າຫາແລເສດຖະກິດ; ແລະ (4) ເອົາໃຈໃສ່ໃນວຽກງານການຄຸ້ມຄອງນໍ້າໜັກລົດບັນທຸກ ເຊັ່ນ: ປັບປຸງກົນໄກ, ນິຕິກໍາ ແລະ ການບັງຄັບໃຊ້ນິຕິກໍາໃຫ້ເຂັ້ມແຂງ ໄປຄຽງຄູ່ກັບການກໍ່ສ້າງ ແລະ ຕິດຕັ້ງສະຖານີຊັ່ງນໍ້າໜັກລົດບັນທຸກໜັກ ຕາມບັນດາເສັ້ນທາງການຂົນສົ່ງຫຼັກ.

- ວຽກທາງລົດໄຟ: (1) ຂົນຂວາຍທຶນຈາກຕ່າງປະເທດ ເພື່ອພັດທະນາ ແລະ ຂະຫຍາຍຕາໜ່າງເສັ້ນທາງລົດໄຟ ໃຫ້ເຊື່ອມຈອດກັບບັນດາປະເທດອ້ອມຂ້າງ ເປັນຕົ້ນ:ເສັ້ນທາງລົດໄຟແຕ່ນະຄອນຫຼວງວຽງຈັນ-ທ່າແຂກ-ນາເພົ້າ ແຂວງຄໍາມ່ວນ (ຊາຍແດນລາວ-ຫວຽດນາມ) ເຊື່ອມຈອດກັບເສັ້ນທາງລົດໄຟ ສສ ຫວຽດນາມ ແລະ ຂົວຂ້າມນໍ້າຂອງສະເພາະທາງລົດໄຟ ທ່ານາແລ້ງ-ໜອງຄາຍ ເພື່ອເຊື່ອມຈອດກັບເສັ້ນທາງລົດໄທ; (2) ສູ້ຊົນໃຫ້ສໍາເລັດການສຶກສາ, ສໍາຫຼວດ-ອອກແບບ ແລະ ການປັກຫຼັກໝາຍ-ເຂດສະຫງວນ ຂອງບັນດາຕາໜ່າງທາງລົດໄຟ ສາຍຕັ້ງ-ສາຍຂວາງ ຂອງ ສປປ ລາວ; (3) ສືບຕໍ່ສ້າງນິຕິກໍາຕ່າງໆ ໃນການຄຸ້ມຄອງວຽກງານທາງລົດໄຟໃນຂອບເຂດທົ່ວປະເທດ; ແລະ (4) ສົ່ງເສີມພາກເອກະຊົນ ແລະ ຕ່າງປະເທດ ໃຫ້ມີສ່ວນຮ່ວມເຂົ້າໃນບັນດາກິດຈະການປົ່ນອ້ອມກັບການໃຫ້ບໍລິການຂົນສົ່ງຂອງລົດໄຟ ລາວ-ຈີນ ໃຫ້ຫຼາຍຂຶ້ນ.

– ວຽກທາງນ້ຳ: (1) ຖືເອົາວຽກງານປ້ອງກັນຕາຝັ່ງເຈື່ອນຢູ່ຕາມແມ່ນ້ຳຂອງ (ລວມທັງບັນດາດອນ), ນ້ຳເຫືອງ ແລະ ນ້ຳສາຂາຕ່າງໆ ເປັນວຽກສຳຄັນຕິດພັນກັບການປົກປັກຮັກສາເຂດນ້ຳແດນດິນອະທິປະໄຕ ແລະ ພື້ນແຜ່ນດິນຂອງຊາດ, ພ້ອມທັງປ້ອງກັນນ້ຳຖ້ວມຢູ່ບັນດາຕົວເມືອງ ທີ່ໄດ້ຮັບຜົນກະທົບຮ້າຍແຮງຢູ່ໃນລະດູຝົນຂອງທຸກໆປີ; (2) ພັດທະນາທ່າເຮືອ ແລະ ແລວທາງການເດີນເຮືອ ໃຫ້ມີຄວາມສະດວກ, ປອດໄພ ຕິດພັນກັບການສົ່ງເສີມການທ່ອງທ່ຽວ ແລະ ການຂົນສົ່ງທາງນ້ຳ, ໂດຍການສ້າງ ແລະ ປັບປຸງໂຄງລ່າງພື້ນຖານເພື່ອໃຫ້ສາມາດຮອງຮັບປະລິມານການຂົນສົ່ງ ແລະ ກາຍເປັນທາງເລືອກໃນການຂົນສົ່ງຮູບແບບໜຶ່ງເຊື່ອມກັບການຂົນສົ່ງຮູບແບບປະສົມປະສານຫຼາຍຮູບແບບ ທີ່ເປັນມິດກັບສິ່ງແວດລ້ອມ; (3) ເສີມຂະຫຍາຍທ່າທຽບເຮືອ 1, 2 ແລະ 3 ຂອງທ່າເຮືອຫວຸ້ງອ່າງ ເພື່ອສ້າງລາຍຮັບ, ສ້າງຜົນປະໂຫຍດໃຫ້ແກ່ ສປປ ລາວ.

– ວຽກການບິນພົນລະເຮືອນ: (1) ສຸມໃສ່ສືບຕໍ່ ປັບປຸງໂຄງລ່າງພື້ນຖານ, ສິ່ງອຳນວຍຄວາມສະດວກ ແລະ ບັນດານິຕິກຳ ທີ່ຍັງເປັນຂໍ້ຄົງຄ້າງຕາມການປະເມີນຂອງອົງການ-ການບິນພົນລະເຮືອນສາກົນ ICAO ເພື່ອເຮັດໃຫ້ວຽກງານການບິນພົນລະເຮືອນມີຄຸນນະພາບ, ຮັບປະກັນຄວາມປອດໄພ ແລະ ປ້ອງກັນຄວາມປອດໄພການບິນ, (2) ປັບປຸງ ແລະ ຂະຫຍາຍ ສະໜາມບິນສາກົນວັດໄຕ, ສະໜາມບິນສາກົນຫຼວງພະບາງ ແລະ ສະໜາມບິນສາກົນປາກເຊ; (3) ສູ້ຊົນໃຫ້ໄດ້ປັບປຸງສະໜາມບິນອຸດົມໄຊ, ຫຼວງນ້ຳທາ, ບຸນເໜືອ ແລະ ຊຽງຂວາງ; ແລະ (4) ປັບປຸງ ແລະ ຍົກລະດັບໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກວຽກງານຈະລາຈອນທາງອາກາດ ໃຫ້ທັນສະໄໝ ແລະ ໄດ້ມາດຕະຖານຂອງອົງກອນການບິນພົນລະເຮືອນສາກົນ (ICAO).

– ວຽກຂົນສົ່ງ: (1) ສຸມໃສ່ເຊື່ອມຈອດການຂົນສົ່ງທາງບົກ, ທາງລົດໄຟ, ທາງນ້ຳ ແລະ ທາງອາກາດ ເພື່ອຫັນເປັນການຂົນສົ່ງຫຼາຍຮູບແບບ ໄປຄຽງຄູ່ກັບການພັດທະນາລະບົບການບໍລິການ-ການຂົນສົ່ງ ແລະ ໂລຊິດສະຕິກຕາມແລວທາງເສດຖະກິດ ໂດຍສະເພາະບັນດາໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກຕ່າງໆທີ່ຈຳເປັນໃຫ້ພຽງພໍກັບຄວາມຕ້ອງການ, ຫັນເປັນທັນສະໄໝ, ມີຄວາມສະດວກ ແລະ ປອດໄພ; (2) ສົ່ງເສີມພາກເອກະຊົນເຂົ້າມາມີສ່ວນຮ່ວມໃນການພັດທະນາເຂດໂລຊິດສະຕິກຢ່າງມີຈຸດສຸມ; (3) ປັບປຸງບັນດານິຕິກຳ ແລະ ລະບຽບການພາຍໃນ ເພື່ອຮອງຮັບການຂົນສົ່ງຫຼາຍຮູບແບບທີ່ທັນສະໄໝ ແລະ ລວມສູນຂອງວຽກງານການຂົນສົ່ງ ໃຫ້ມີປະສິດທິຜົນສູງ; (4) ເສີມຂະຫຍາຍການເຊື່ອມໂຍງ-ເຊື່ອມຈອດລະບົບການຄົມມະນາຄົມຂົນສົ່ງ ຂອງ ສປປລາວ ກັບ ລະບົບຄົມມະນາຄົມຂົນສົ່ງຂອງພາກພື້ນ ເພື່ອຊຸກຍູ້ການພັດທະນາແລວທາງເສດຖະກິດ ເປັນຕົ້ນ: ປັບປຸງ ແລະ ຍົກລະດັບບັນດາສິ່ງອຳນວຍຄວາມສະດວກບັນດາດ່ານຊາຍແດນສາກົນ ໄປຄຽງຄູ່ກັບການບັຍປຸງບັນດາສັນຍາ ແລະ ອະນຸສັນຍາສອງຝ່າຍ ໃຫ້ມີຄວາມສອດຄ່ອງ ແລະ ຮັບປະກັນຜົນປະໂຫຍດລວມຂອງຊາດ.

2) ຂະແໜງເຕັກໂນໂລຊີ ແລະ ການສື່ສານ:

– ຫັນເປັນທັນສະໄໝໃນການຊຳລະສະສາງ ແລະ ການເກັບລາຍຮັບເຂົ້າງົບປະມານດ້ວຍລະບົບຕ່າງໆເປັນຕົ້ນຜ່ານຊ່ອງທາງການຊຳລະເອເລັກໂຕຣນິກ (Electronic Payment Channel) ເພື່ອຫຼຸດຜ່ອນການນຳໃຊ້ເງິນສົດໃນສັງຄົມ, ວິຖີຊີວິດປົກກະຕິແບບໃໝ່ ແລະ ການພັດທະນາເສດຖະກິດດິຈິຕອນໃນໄລຍະໃໝ່, ສ້າງຕະຫຼາດເອເລັກໂທນິກ, ປັບປຸງ-ພັດທະນາການບໍລິການສາງພັກສິນຄ້າ ແລະ ທ່າບົກ.

– ສົ່ງເສີມ ແລະ ນຳໃຊ້ໂທລະຄົມມະນາຄົມ, ເຕັກໂນໂລຊີການສື່ສານ-ຂໍ້ມູນຂ່າວສານ ທີ່ທັນສະໄໝ ມີຄວາມປອດໄພສູງ ເຂົ້າໃນທຸກຂົງເຂດວຽກງານ ແລະ ທຸກຂະແໜງເສດຖະກິດ-ສັງຄົມ ແຕ່ສູນກາງລົງຮອດທ້ອງຖິ່ນ.

– ສົ່ງເສີມ ແລະ ພັດທະນາແຫຼ່ງການຮຽນຮູ້ທີ່ທັນສະໄໝແບບຍືນຍົງ ເພື່ອຄົ້ນຄວ້າ-ວິໄຈ, ສ້າງນະວັດຕະກຳວິທະຍາສາດດ້ານ ໄອຊີທີ ອັນໃໝ່ ແລະ ເປັນການສົ່ງເສີມໃຫ້ຜູ້ຮຽນຮູ້ ມີຄວາມເຂັ້ມແຂງ ສາມາດຖ່າຍທອດຫຼັກວິຊາການທາງດ້ານເຕັກນິກ ໃຫ້ທຸກຄົນໃນສັງຄົມ.

– ນຳໃຊ້ຜົນການຄົ້ນຄວ້າ ແລະ ຖ່າຍທອດເຕັກໂນໂລຊີ ແລະ ນະວັດຕະກຳ ເພື່ອຍູ້ແຮງຂະບວນການຜະລິດ, ການຄ້າ ແລະ ການບໍລິການ ໃຫ້ກາຍເປັນຜະລິດຕະພັນທີ່ມີຄວາມຫຼາກຫຼາຍ ທັນຍຸກທັນສະໄໝ ສາມາດສ້າງມູນຄ່າເພີ່ມ ແລະ ມີຄວາມອາດສາມາດໃນການແຂ່ງຂັນກັບພາກພື້ນ ແລະ ສາກົນ.

– ລວມສູນລະບົບການສື່ສານ ແລະ ສ້າງລະບົບເຊື່ອມໂຍງດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດເຊື່ອມຕໍ່ອາຊຽນ ແລະ ບັນດາປະເທດໃນພາກພື້ນ.

– ພັດທະນາໂຄງລ່າງພື້ນຖານໂທລະຄົມມະນາຄົມ, ໄອຊີທີ ແລະ ດິຈິຕອນ ໃຫ້ມີຄວາມໄວສູງ, ໄດ້ມາດຕະຖານສາກົນ ແລະ ມີເຄື່ອງມືຄຸ້ມຄອງທີ່ທັນສະໄໝ ເພື່ອຮັບປະກັນໃຫ້ມີຄວາມປອດໄພແກ່ຜູ້ນຳໃຊ້, ສາມາດໃຫ້ບໍລິການທຸກແຂວງ, ທຸກເມືອງ, ເຊື່ອມໂຍງກັບພາກພື້ນ ແລະ ສາກົນ ໃນຍຸກແຫ່ງດິຈິຕອນ.

– ພັດທະນາສູນສະກັດກັ້ນ ແລະ ແກ້ໄຂເຫດສຸກເສີນທາງຄອມພິວເຕີ ໃຫ້ໄດ້ມາດຕະຖານທຽບເທົ່າກັບບັນດາສູນຂອງປະເທດໃນພາກພື້ນ ແລະ ສາກົນ; ສ້າງລະບົບເຝົ້າລະວັງໄພຄຸກຄາມ ແລະ ປ້ອງກັນການໂຈມຕີທາງໄຊເບີ ເພື່ອແກ້ໄຂບັນຫາສື່ສັງຄົມອອນລາຍທີ່ຜິດຕໍ່ກົດໝາຍ ແລະ ລະບຽບການ ຄຽງຄູ່ກັບການປ້ອງກັນອາດຊະຍາກຳທາງລະບົບຄອມພິວເຕີ.

– ສ້າງເງື່ອນໄຂໃນການພັດທະນາອຸດສາຫະກຳ ໄອຊີທີ ແລະ ຜູ້ປະກອບການ ໄອຊີທີ ໃໝ່ (Strat up) ໃຫ້ກາຍເປັນທ່າແຮງຂອງການຂັບເຄື່ອນເສດຖະກິດ; ສົ່ງເສີມການນຳໃຊ້ເຕັກໂນໂລຊີດິຈິຕອນ ເຂົ້າໃນທຸລະກິດບໍລິການ; ສ້າງງເງື່ອນໄຂສະດວກໃຫ້ການນຳໃຊ້ ແລະ ການບໍລິການໄອຊີທີ ຂະຫຍາຍຕົວທົ່ວສັງຄົມ ເພື່ອສົ່ງເສີມການຫັນສູ່ສັງຄົມ ແລະ ເສດຖະກິດດິຈິຕອນ ໂດຍມີການປັບປຸງການປະສານງານ ແລະ ການຄຸ້ມຄອງໃຫ້ເຂັ້ມງວດ ມີປະສິດທິຜົນສູງ.

– ນຳໃຊ້ເຕັກໂນໂລຊີດາວທຽມ ເພື່ອຊ່ວຍໃນສຳຫຼວດພື້ນທີ່ ແລະ ການບໍລິການ ເປັນຕົ້ນ: ການສຳຫຼວດພື້ນທີ່ກະສິກຳ-ປ່າໄມ້, ການຄຸ້ມຄອງການຈໍລະຈອນ ແລະ ຂົນສົ່ງ.

– ສຶກສາຄວາມເປັນໄປໄດ້ໃນການສ້າງສູນພັດທະນາໄປສະນີຫັນເປັນດິຈິຕອນ ໃຫ້ມີຄວາມທັນສະໄໝ ແລະ ເປັນລະບົບຄົບຊຸດ.

### ***3.5.2 ແຜນວຽກຈຸດສຸມທີ 2: ເສີມຂະຫຍາຍການພົວພັນຮ່ວມມື, ການເຊື່ອມໂຍງການຄ້າ ແລະ ການລົງທຶນກັບພາກພື້ນ ແລະ ສາກົນ ຢ່າງຕັ້ງໜ້າ ແລະ ກວ້າງຂວາງຂຶ້ນກວ່າເກົ່າ***

**1. ຄາດໝາຍລະດັບແຜນວຽກຈຸດສຸມ**

- ສູ້ຊົນມູນຄ່າສົ່ງອອກສິນຄ້າທັງໝົດ ຂະຫຍາຕົວ 10% ຕໍ່ປີຂຶ້ນໄປ ແລະ ມູນຄ່າການນຳເຂົ້າທັງໝົດ ບໍ່ເກີນ 9% ຕໍ່ປີ.
- ຫຼຸດຜ່ອນຂັ້ນຂອດ ແລະ ເວລາການນຳເຂົ້າ-ສົ່ງອອກສິນຄ້າ ໃຫ້ໄດ້ 25% ໃນປີ 2030.
- ຫຼຸດຜ່ອນເວລາການອອກອະນຸຍາດ, ຢັ້ງຢືນການນຳເຂົ້າ ແລະ ສົ່ງອອກສິນຄ້າຂອງຂະແໜງການທີ່ກ່ຽວຂ້ອງ ໃຫ້ໄດ້ 25% ໃນປີ 2030.
- ຫຼຸດຜ່ອນເວລາໃນການກວດປ່ອຍສິນຄ້ານຳເຂົ້າ-ສົ່ງອອກ ແລະ ຜ່ານແດນຢູ່ດ່ານສາກົນ ໃຫ້ໄດ້ 25% ໃນປີ 2030.
- ຫຼຸດຜ່ອນຈຸດກວດກາຕາມເສັ້ນທາງ ທີ່ບໍ່ຈຳເປັນ ເພື່ອອຳນວຍຄວາມສະດວກໃຫ້ແກ່ການເຄື່ອນຍ້າຍ ແລະ ຂົນສົ່ງສິນຄ້າ ໃຫ້ໄດ້ 25% ໃນປີ 2030.
- ສູ້ຊົນສ້າງຖານຂໍ້ມູນຄວາມຮຽກຮ້ອງຕ້ອງການພັດທະນາເສດຖະກິດ-ສັງຄົມ ໃນລະດັບປະເທດ ແລະ ຂັ້ນແຂວງ ໃຫ້ເປັນລະບົບຂໍ້ມູນປະຕູດຽວ ໃຫ້ໄດ້ໃນປີ 2030 ແລະ ຊຸກຍູ້ໃຫ້ບັນດາສຳນັກງານແຫ່ງ ສປປ ລາວ ຢູ່ຕ່າງປະເທດ ແລະ ພາກສ່ວນກ່ຽວຂ້ອງ ນຳໃຊ້ຖານຂໍ້ມູນດັ່ງກ່າວ ໃຫ້ໄດ້ 20 ແຫ່ງ (ທັງໝົດ 42 ແຫ່ງ).

**2. ວຽກງານຈຸດສຸມ**

– ເສີມຂະຫຍາຍວຽກງານການເຂົ້າຮ່ວມເປັນພາຄີ ຂອງສົນທິສັນຍາ, ສັນຍາສາກົນ, ຂະຫຍາຍການພົວພັນການທູດກັບບັນດາປະເທດ, ການເຂົ້າເປັນສະມາຊິກອົງການຈັດຕັ້ງພາກພື້ນ ແລະ ສາກົນ; ເຂົ້າຮ່ວມກອບການຮ່ວມມືຕ່າງໆ ທີ່ຕິດພັນກັບວຽກງານໃນຂົງເຂດເສດຖະກິດ-ສັງຄົມ ໃນກອບການຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍ ເພື່ອສ້າງສະພາບແວດລ້ອມທີ່ດີ ໃນການຊຸກຍູ້ ແລະ ພັດທະນາເສດຖະກິດ-ສັງຄົມ ໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ຍືນຍົງ.

– ເພີ່ມທະວີການພົວພັນຮ່ວມມືດ້ານການທູດເສດຖະກິດ, ຍົກສູງບົດບາດການເຄື່ອນໄຫວຂອງສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ຢູ່ຕ່າງປະເທດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນກວ່າເກົ່າ ເພື່ອປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

– ສ້າງເງື່ອນໄຂທີ່ເອື້ອອຳນວຍໃຫ້ແກ່ການເຄື່ອນໄຫວວຽກງານການພົວພັນຮ່ວມມືກັບສາກົນ ໂດຍອີງໃສ່ພື້ນຖານຕ່າງຝ່າຍຕ່າງໄດ້ຮັບປະໂຫຍດ ເປັນຕົ້ນ ສ້າງເວັບໄຊ້ອອນລາຍທີ່ສັງລວມຂໍ້ມູນທີ່ເປັນທ່າແຮງ, ຄວາມຕ້ອງການໃນ

DRAFT

ການລົງທຶນ, ການສົ່ງເສີມການຄ້າ ແລະ ການທ່ອງທ່ຽວຂອງ ສປປ ລາວ ເພື່ອເປັນຂໍ້ມູນພື້ນຖານສະໜອງໃຫ້ແກ່ ສຳນັກງານຜູ້ຕາງໜ້າແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ.

– ສ້າງ ແລະ ປັບປຸງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການຄ້າ, ການລົງທຶນ ແລະ ການທ່ອງທ່ຽວ ເປັນຕົ້ນປັບປຸງລະບຽບຫຼັກການໃຫ້ມີຄວາມຄ່ອງຕົວ, ຫຼຸດຜ່ອນຂອດຂັ້ນ ທີ່ມີຄວາມຊໍ້າຊ້ອນ ແລະ ຫຼຸດຜ່ອນການໃຊ້ເວລາໃນການອະນຸມັດ ໃຫ້ກະທັດຮັດ ແລະ ວ່ອງໄວຫຼາຍຂຶ້ນເຊັ່ນ: ມາດຕະການກີດກັນທາງດ້ານການສົ່ງອອກ, ມາດຕະການສຸຂະນາໄມພືດ ແລະ ສັດ, ມາດຕະການເຕັກນິກຕໍ່ການຄ້າ ແລະ ມາດຕະການອື່ນໆ ໂດຍໃຫ້ມີຄວາມສອດຄ່ອງກັບສັນຍາ ແລະສົນທິສັນຍາຕ່າງໆ ທີ່ ສປປ ລາວ ເປັນພາຄີ ທັງຮັບປະກັນຜົນປະໂຫຍດລວມຂອງຊາດ.

– ສືບຕໍ່ຈັດຕັ້ງປະຕິບັດແຜນປະຕິບັດງານຕ່າງໆ ທີ່ ສປປ ລາວ ເປັນສະມາຊິກ ລວມທັງຕິດຕາມ, ກວດກາ ແລະປະເມີນຜົນການຈັດຕັ້ງປະຕິບັດບັນດາພັນທະ ແລະ ຂໍ້ຜູກພັນຕ່າງໆ ພາຍໃຕ້ຂອບການຮ່ວມມືທີ່ເປັນພາຄີ ເຊັ່ນ: WTO, ASEAN, GMS, CLV, CLMV, ກອບການຮ່ວມມືແມ່ນໍ້າຂອງ-ແມ່ນໍ້າລ້ານຊ້າງ ແລະ ສັນຍາການຄ້າສອງຝ່າຍ ເພື່ອເປັນຂໍ້ມູນໃນການປັບປຸງ ແລະ ເສີມຂະຫຍາຍການຮ່ວມມືໃຫ້ມີໝາກຜົນສູງຂຶ້ນ.

– ຄຸ້ມຄອງການຄ້າຊາຍແດນໃຫ້ເປັນລະບົບ, ສະກັດກັ້ນການຄ້ານອກລະບົບ, ສ້າງຕະຫຼາດການຄ້າຊາຍແດນເພື່ອອຳນວຍຄວາມສະດວກໃນການຊື້-ຂາຍໃຫ້ແກ່ປະຊາຊົນລຽບຕາມເຂດຊາຍແດນ ລະຫວ່າງ ລາວ-ຫວຽດນາມ,ລາວ-ກຳປູເຈຍ ແລະ ລາວ-ມຽນມ້າ.

– ຄຸ້ມຄອງ ແລະ ດັດສົມວິສາຫະກິດການນຳເຂົ້າ ແລະ ສົ່ງອອກ, ຫຼຸດຜ່ອນວິສາຫະກິດທີ່ເຮັດແຕ່ການນຳເຂົ້າຢ່າງດຽວ; ຫັນມາລົງທຶນ ຫຼື ເກັບຊື້ຜະລິດຕະພັນພາຍໃນ ເພື່ອສົ່ງອອກ; ອັດຊ່ອງຫວ່າງການລົບຫຼີກພາສີ-ອາກອນ ແລະການຊຳລະສະສາງຕ້ອງຜ່ານລະບົບທະນາຄານ.

### *3.5.3 ແຜນວຽກຈຸດສຸມທີ 3: ພັດທະນາເຂດແຄວ້ນ ແລະ ທ້ອງຖິ່ນ ໃຫ້ມີຄວາມສົມດຸນ, ເຂັ້ມແຂງ ແລະ ສອດຄ່ອງກັບທ່າແຮງບົ່ມຊ້ອນ*

ການພັດທະນາເຂດແຄວ້ນ ແລະ ທ້ອງຖິ່ນ ຢ່າງກົມກຽວ, ມີຄວາມສົມດຸນ ແລະ ສອດຄ່ອງກັບທ່າແຮງບົ່ມຊ້ອນມີບົດບາດສຳຄັນຫຼາຍໃນການຂັບເຄື່ອນເສດຖະກິດແຫ່ງຊາດ ໃຫ້ເຕີບໂຕໄວ ແລະ ໝັ້ນຄົງ ໂດຍສະເພາະ ທ່າແຮງທາງດ້ານທີ່ຕັ້ງພູມສັນຖານ, ປະຊາກອນ, ຊັບພະຍາກອນ ທຳມະຊາດ ແລະ ພູມປັນຍາທີ່ເປັນເອກະລັກ ຂອງທ້ອງຖິ່ນໄດ້ກາຍເປັນຈຸດພິເສດທີ່ສຳຄັນ ທີ່ຈະຊ່ວຍພັກດັນການຂະຫຍາຍຕົວຂອງເສດຖະກິດແຫ່ງຊາດ. ສະນັ້ນ, ຈະຕ້ອງໄດ້ເອົາໃຈໃສ່ພັດທະນາແຂດແຄວ້ນ ແລະ ທ້ອງຖິ່ນ ໄປໃນທິດທາງດຽວກັນ, ມີການສະໜັບສະໜູນເຊິ່ງກັນ ແລະ ກັນ ທັງຮັບປະກັນໃຫ້ການຂຸດຄົ້ນນຳໃຊ້ທ່າແຮງຂອງປະເທດ, ຂະແໜງການ ແລະ ທ້ອງຖິ່ນ ໃຫ້ກາຍເປັນຖານການຜະລິດແລະ ຖານລາຍຮັບທີ່ໝັ້ນຄົງ ຕາມທິດສີຂຽວ ແລະ ຍືນຍົງ. ນອກຈາກນີ້, ການພັດທະນາເຂດແຄວ້ນ ທີ່ມີປະສິດທິພາບຍັງຈະຊ່ວຍແກ້ໄຂສິ່ງທ້າທາຍຕ່າງໆ ເປັນຕົ້ນ: ການຫັນເປັນຕົວເມືອງ; ຄວາມບໍ່ສົມດຸນການພັດທະນາລະຫວ່າງແຂວງ,ພາກ ແລະ ຄວາມບໍ່ສະເໝີພາບ; ການນຳໃຊ້ຊັບພະຍາກອນທຳມະຊາດໃຫ້ມີປະສິດທິຜົນ; ແກ້ໄຂບັນຫາການເສື່ອມໂຊມດ້ານສິ່ງແວດລ້ອມ ແລະ ການປັບປຸງ; ໂຄງລ່າງຄົມມະນາຄົມ; ຄຽງຄູ່ກັນນັ້ນ, ແຜນພັດທະນາເຂດແຄວ້ນ ຊ່ວຍສະໜັບສະໜຸນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນການພັດທະນາເສດຖະກິດ-ສັງຄົມຂອງຂະແໜງການ ແລະ ທ້ອງຖິ່ນ. ສະນັ້ນ, ການກຳນົດແຜນການລົງທຶນຢ່າງມີຈຸດສຸມ ໝາຍຄວາມວ່າສຸມໃສ່ພັດທະນາໂຄງການທີ່ບັນດາແຂວງສາມາດນຳໃຊ້ຮ່ວມກັນ, ການສ້າງຄວາມຫຼາກຫຼາຍທາງດ້ານເສດຖະກິດ, ການສ້າງສຳພັນເສດຖະກິດທີ່ມີປະສິດທິພາບ ແລະ ເສີມສ້າງຄວາມສາມາດໃນການແຂ່ງຂັນຂອງ ສປປ ລາວ ໃນພາກພື້ນ ແລະສາກົນ ລ້ວນແຕ່ມີບົດບາດສຳຄັນໃນການພັດທະນາ ແລະ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

**1. ຄາດໝາຍລະດັບແຜນວຽກຈຸດສຸມ**

– ອັດຕາການຂະຫຍາຍຕົວຂອງລວມຍອດຜະລິດຕະພັນພາຍໃນຂອງພາກ ໃຫ້ໄດ້ບັນລຸ ........ ຕໍ່ປີ,
  + ຂະແໜງກະສິກຳ ກວມ ...... % ຂອງ GDP ພາກ;
  + ຂະແໜງອຸດສາຫະກຳ ກວມ ...... % ຂອງ GDP ພາກ;

DRAFT

+ ຂະແໜງບໍລິການ ກວມ ...... % ຂອງ GDP ພາກ;

**2. ວຽກງານຈຸດສຸມ**

**1) ພາກເໜືອ (ປະກອບມີ ແຂວງຜົ້ງສາລີ, ແຂວງບໍ່ແກ້ວ, ແຂວງຫຼວງນ້ຳທາ, ແຂວງອຸດົມໄຊ, ແຂວງຫຼວງພະບາງ, ແຂວງໄຊຍະບູລີ, ແຂວງຫົວພັນ, ແຂວງຊຽງຂວາງ ແລະ ແຂວງວຽງຈັນ):** ພັດທະນາຢ່າງມີຈຸດສຸມເພື່ອກາຍເປັນປະຕູເຊື່ອມຕໍ່ກັບຕະຫຼາດສິນຄ້າທີ່ໃຫຍ່ທີ່ສຸດ ຄື: ສປ ຈີນ, ໄທ ແລະ ສສ ຫວຽດນາມ ໂດຍການນຳໃຊ້ທ່າແຮງໄດ້ປຽບຂອງເສັ້ນທາງລົດໄຟລາວ-ຈີນ, ທີ່ຕັ້ງພູມມີສາດ ແລະ ອື່ນໆ ເຂົ້າໃນການພັດທະນາຢ່າງກົມກຽວ ແລະ ມີໝາກຜົນສູງ ໂດຍສຸມໃສ່: (1) ພັດທະນາໂຄງລ່າງພື້ນຖານຄົມມະນາຄົມ, ການຄ້າ ແລະ ການຂົນສົ່ງທີ່ເຊື່ອມຈອດກັບທາງລົດໄຟລາວ-ຈີນ, ເສັ້ນທາງແລວເສດຖະກິດຕ່າງໆ, ທາງດ່ວນນະຄອນຫຼວງວຽງຈັນ-ໄຊສົມບູນ-ຊຽງຂວາງ-ຫົວພັນ-ຊາຍແດນລາວ-ຫວຽດນາມ, ທາງຫຼວງແຫ່ງຊາດ ເລກ 4 ແຕ່ທ່າເດື່ອ ເມືອງໄຊຍະບູລີ - ດ່ານສາກົນນ້ຳເຫືອງ ເມືອງແກ່ນທ້າວ; ເສັ້ນທາງເຂົ້າຫາເຂດການຜະລິດ, ເຂດກະສິກຳ, ເຂດທ່ອງທ່ຽວ ແລະ ເຂດຊາຍແດນໃຫ້ມີຄວາມສະດວກ ເພື່ອສ້າງເງື່ອນໄຂໃຫ້ແກ່ການລົງທຶນ, ການທ່ອງທ່ຽວ ແລະ ການຄ້າກັບປະເທດໃກ້ຄຽງ ເປັນຕົ້ນກໍ່ສ້າງເສັ້ນທາງດ່ວນວຽງຈັນ-ບໍ່ເຕັນ ຊ່ວງທີ 4 ອຸດົມໄຊ-ບໍ່ເຕັນ ແລະ ທາງດ່ວນຄູ່ຂະໜານທາງ R3 ແຕ່ບໍ່ເຕັນ (ແຂວງຫຼວງນ້ຳທາ) ຫາ ຫ້ວຍຊາຍ (ແຂວງບໍ່ແກ້ວ),ຍົກລະດັບທາງເລກ 2E-2W, ສ້ອມແປງເສັ້ນທາງແຕ່ບໍລິຄຳໄຊ-ຊຽງຂວາງ-ຫົວພັນ ແລະ ອື່ນໆຢ່າງມີຈຸດສຸມ, ກໍ່ສ້າງຂົວຂ້າມນ້ຳຂອງ ຫຼວງພະບາງ-ຈອມເພັດ; (2) ຊຸກຍູ້ສົ່ງເສີມການຜະລິດກະສິກຳ ທີ່ເປັນທ່າແຮງຂອງທ້ອງຖິ່ນຕິດພັນກັບອຸດສາຫະກຳປຸງແຕ່ງ ເພື່ອຕອບສະໜອງຄວາມຕ້ອງການພາຍໃນ ແລະເປັນສິນຄ້າສົ່ງອອກ ໂດຍສະເພາະ ປະເພດພືດ ແລະ ສັດ ທີ່ໄດ້ມີສັນຍາເປີດເຕັກນິກຕະຫຼາດແລ້ວ; ສົ່ງເສີມການຜະລິດເຂົ້າໄກ່ນ້ອຍ ທີ່ເປັນເອກະລັກຢູ່ແຂວງຫົວພັນ ແລະ ແຂວງຊຽງຂວາງ ໂດຍຕິດພັນກັບການຊອກຫາຕະຫຼາດສະເພາະຢູ່ພາຍໃນ ແລະ ຕ່າງປະເທດ, ການຜະລິດຊາ 400 ປີ ແລະ ຊາ 1000 ປີ ຢູ່ແຂວງຜົ້ງສາລີ ແລະ ແຂວງອຸດົມໄຊ. (3) ຊຸກຍູ້ການພັດທະນາອຸດສາຫະກຳປຸງແຕ່ງ ສະບຽງອາຫານ, ຢາງພາລາ ແລະ ແຮ່ທາດ ຕິດພັນກັບການພັດທະນາເຂດຕົວເມືອງທັນສະໄໝຂອງບໍລິສັດ ອຳມະຕະ ຢູ່ແຂວງຫຼວງນ້ຳທາ ແລະ ອຸດົມໄຊ ເພື່ອກາຍເປັນສູນກາງພັດທະນາດ້ານອຸດສາຫະກຳ; (4) ພັດທະນາດ້ານການຄ້າ ແລະ ການລິການຂົນສົ່ງ ຕາມດ່ານຊາຍແດນ ແລະ ເຂດເສດຖະກິດພິເສດ, ໃນນີ້ ເຂດການຄ້າ ແມ່ນສຸມໃສ່ພັດທະນາເຂດບໍ່ເຕັນ-ບໍ່ຫານ, ເຂດຖະກິດພິເສດ ສາມຫຼ່ຽມຄຳ ເປັນໃຈກາງ, ພັດທະນາເຂດການບໍລິການໂລຊິສຕິກ ຢູ່ແຂວງຫຼວງນ້ຳທາ, ອຸດົມໄຊ ແລະ ແຂວງຫຼວງພະບາງ; (5) ສົ່ງເສີມການຜະລິດຕະກຳແຜ່ນແພທີ່ມີມູນເຊື້ອໃຫ້ແຂງແຮງກວ່າເກົ່າ ເປັນຕົ້ນແມ່ນ ແຜ່ນແພ ແລະ ສິ້ນໄໝມ້ອນ ຄຽງຄູ່ກັບການຊຸກຍູ້ສົ່ງເສີມຫັດຖະກຳໄມ້ທີ່ມີທ່າແຮງ; (6) ສົ່ງເສີມ ແລະ ພັດທະນາການທ່ອງທ່ຽວຕິດພັນກັບການອະນຸລັກທຳມະຊາດ, ມໍລະດົກວັດທະນະທຳໂດຍເລັ່ງໃສ່ພັດທະນາເຂດທ່ອງທ່ຽວຫຼວງພະບາງ, ທົ່ງໄຫຫີນ ແຂວງຊຽງຊວາງ, ຖ້ຳບັນດາຜູ້ນຳຢູ່ວຽງໄຊ ແຂວງຫົວພັນແລະ ທ່ອງທ່ຽວກະສິກຳ ເປັນຕົ້ນ: ຊາ 1000 ປີ ຢູ່ແຂວງຜົ້ງສາລີ, ທ່ອງທ່ຽວທຳມະຊາດນ້ຳກັດຍໍລະປ່າ ແຂວງອຸດົມໄຊ, ບຸນຊ້າງຢູ່ແຂວງໄຊຍະບູລີ, ເຂດທ່ອງທ່ຽວເມືອງວັງວຽງ-ເມືອງເຟືອງ ແຂວງວຽງຈັນ ແລະ ແຫຼ່ງທ່ອງທ່ຽວອື່ນໆ.

- **ໂຄງການບູລິມະສິດ ຂອງພາກເໜືອ:**

1. ໂຄງການທາງດວນ ບໍ່ເຕັນ, ແຂວງຫຼວງນຳທາ-ຫ້ວຍຊາຍ, ແຂວງບໍ່ແກ້ວ;
2. ໂຄງການກໍ່ສ້າງທາງດ່ວນ ລາວ-ຈີນ ຊ່ວງ 4 ແຕ່ແຂວງອຸດົມໄຊ ຫາ ແຂວງຫຼວງນຳທາ;
3. ໂຄງການເຂື່ອນໄຟຟ້ານ້ຳຂອງ ຫຼວງພະບາງ ຢູ່ເຂດເມືອງຈອມເພັດ ແຂວງຫຼວງພະບາງ;
4. ໂຄງການເຂື່ອນໄຟຟ້າ ນ້ຳຂອງ ປາກແບ່ງ ຢູ່ແຂວງອຸດົມໄຊ-ໄຊຍະບູລີ ຂອງບໍລິສັດ ໄຟຟ້າ ປາກແບ່ງ ຈຳກັດ ທີ່ພວມກຳລັງກະກຽມລົງມືກໍ່ສ້າງ, ເຊິ່ງໂຄງການດັ່ງກ່າວ ໄດ້ສຳເລັດການຮັບຮອງບັນດາເອກະສານຊ້ອນທ້າຍຂອງໂຄງການເປັນທີ່ຮຽບຮ້ອຍແລ້ວ;

DRAFT

5. ໂຄງການເຂື່ອນໄຟຟ້າ ນ້ຳຂອງ ປາກລາຍ ຢູ່ແຂວງໄຊຍະບູລີ ຂອງບໍລິສັດ ໄຟຟ້າ ປາກລາຍ ຈຳກັດ ທີ່ພວມກຳລັງກະກຽມລົງມືກໍ່ສ້າງ, ເຊິ່ງໂຄງການດັ່ງກ່າວ ໄດ້ສຳເລັດການຮັບຮອງບັນດາເອກະສານຊ້ອນທ້າຍຂອງໂຄງການເປັນທີ່ຮຽບຮ້ອຍແລ້ວ.

**2) ພາກກາງ (ປະກອບມີ ນະຄອນຫຼວງວຽງຈັນ, ແຂວງບໍລິຄຳໄຊ, ແຂວງໄຊສົມບູນ, ແຂວງຄຳມ່ວນ ແລະ ແຂວງສະຫັວນນະເຂດ):** ເປັນເຂດທີ່ມີທ່າແຮງໄດ້ປຽບທາງດ້ານເນື້ອທີ່ການຜະລິດ, ເປັນເຂດໃຈກາງທາງດ້ານເສດຖະກິດ, ການຄ້າ, ການຜະລິດ-ບໍລິການ, ການລົງທຶນ ແລະ ວັດທະນະທຳ. ສະນັ້ນ, ໃນ 5 ປີຕໍ່ໜ້າ ໃຫ້ສຸມໃສ່ (1) ພັດທະນາຕົວເມືອງ, ເຂດເສດຖະກິດພິເສດ ແລະ ນິຄົມອຸດສາຫະກຳຕ່າງໆ ເພື່ອຍູ້ແຮງການຂະຫຍາຍຕົວເສດຖະກິດ ໃຫ້ມີຄວາມໜັກແໜ້ນ ແລະ ເຂັ້ມແຂງ ເຊັ່ນ: ເຂດພັດທະນາກວມລວມໄຊເສດຖາ ນະຄອນຫຼວງວຽງຈັນ, ເຂດເສດຖະກິດທ່າແຂກ ແຂວງຄຳມ່ວນ ແລະ ເຂດເສດຖະກິພິເສດສະຫັວນນະເຂດ ໃຫ້ພັດທະນາເປັນອຸດສາຫະກຳທີ່ຕິດພັນກັບຕ່ອງໂສ້ການຜະລິດຂອງພາກພື້ນ ແລະ ສາກົນ; ເຂດບຶງທາດຫຼວງ ແລະ ລ່ອງແຫ່ງ-ວຽງຈັນ ນະຄອນຫຼວງວຽງຈັນ ພັດທະນາເປັນເຂດບໍລິການ ແລະ ທີ່ພັກອາໃສ, (2) ຊຸກຍູ້ການຜະລິດກະສິກຳເພື່ອຄ້ຳປະກັນສະບຽງອາຫານ ແລະ ການຜະລິດເປັນສິນຄ້າ ເປັນຕົ້ນ ການປູກເຂົ້າເພື່ອສົ່ງອອກ ໂດຍເລັ່ງໃສ່ ທົ່ງພຽງແຂວງຄຳມ່ວນ ແລະ ສະຫວັນນະເຂດ, ການປູກອ້ອຍ, ມັນຕົ້ນ ແລະ ປູກໄມ້ ເພື່ອປ້ອນໂຮງງານປຸງແຕ່ງພາຍໃນ, ໄປຄຽງຄູ່ກັບການພັດທະນາໂຄງລ່າງພື້ນຖານດ້ານຊົນລະປະທານ; (3) ສຸມໃສ່ຊຸກຍູ້ສົ່ງເສີມອຸດສາຫະກຳປຸງແຕ່ງກະສິກຳ, ອຸດສາຫະກຳປຸງແຕ່ງແຮ່ທາດຕ່າງໆ ເປັນຕົ້ນ: ໂຮງງານຂຸດຄົ້ນ ແລະ ປຸງແຕ່ແຮ່ຄຳ-ທອງ ຢູ່ແຂວງສະຫັວນນະເຂດ, ແຂວງໄຊສົມບູນ, ໂຮງງານຜະລິດເຈ້ຍ ຢູ່ແຂວງສະຫັວນນະເຂດ, ໂຮງງານຜະລິດປຸ໋ຍ (ອຸດສາຫະກຳຕໍ່ເນື່ອງ) ໃຫ້ສຳເລັດ 3 ແຫ່ງ ຄື: ນະຄອນຫຼວງວຽງຈັນ 1 ແຫ່ງ ແລະ ແຂວງຄຳມ່ວນ 2 ແຫ່ງ ແລະ ໂຮງງານປຸງແຕ່ງອື່ນໆ, (4) ພັດທະນາແຫຼ່ງທ່ອງທ່ຽວທາງທຳມະຊາດ ເປັນຕົ້ນ ສະຖານທີ່ທ່ອງທ່ຽວວັດທະນະທຳ ແລະ ປະຫັວດສາດ ຢູ່ນະຄອນຫຼວງວຽງຈັນ (ພະທາດຫຼວງ, ປະຕູໄຊ), ນ້ຳປຽນຍໍ່ລະປ່າ, ອຸທິຍານແຫ່ງຊາດຫີນໜາມໜໍ່, ປ່າສະຫງວນແຫ່ງຊາດ, ພູຜາມານ, ທາດອີຮັງ, ພະທາດໂພນ ແລະ ອື່ນໆ , (5) ຊຸກຍູ້ ແລະ ສົ່ງເສີມການພັດທະນາພະລັງງານໄຟຟ້າ (ພະລັງງານນ້ຳ,ພະລັງງານລົມ ແລະ ພະລັງງານທົດແທນ) ເຊັ່ນ: ໂຄງການພະລັງງານລົມ ຢູ່ແຂວງບໍລິຄຳໄຊ, (6) ເອົາໃຈໃສ່ພັດທະນາໂຄງລ່າງພື້ນຖານດ້ານຄົມມະນາຄົມ ເປັນຕົ້ນ ເສັ້ນທາງເຊື່ອມຈອດແລວເສດຖະກິດຕາເວັນອອກ-ຕາເວັນຕົກ, ເສັ້ນທາງເຂົ້າຫາເຂດການຜະລິດ ແລະ ເຂດທ່ອງທ່ຽວ ເປັນຕົ້ນ ໂຄງການທາງດ່ວນ (ແລວໃໝ່) ແຕ່ບ້ານໄຮ່ ເຂດທ່າງອນ ເມືອງໄຊທານີ ນະຄອນຫຼວງວຽງຈັນ - ບ້ານນາຊ່າງເຫຼັກ, ເມືອງທຸລະຄົມ,ແຂວງວຽງຈັນ, ທາງລົດໄຟ ແຕ່ວຽງຈັນ-ທາຊາຍແດນລາວຫວຽດນາມ, ທາງເລກ 8, ທາງເລກ 9 ແລະ ທາງເລກ 13 ໃຕ້.

- **ໂຄງການບູລິມະສິດ:**
  1. ໂຄງການປູກໄມ້, ສົ່ງເສີມປູກໄມ້ ແລະ ສ້າງຕັ້ງໂຮງງານຜະລິດເຈ້ຍ ເພື່ອສົ່ງອອກຕ່າງປະເທດ ຢູ່ແຂວງສະຫວັນນະເຂດ ຂອງບໍລິສັດ ຊັນເປເປີ້ ໂຮນດິ້ງ ຈຳກັດ ທີ່ດຳເນີນການຜະລິດໃນປະຈຸບັນ ເປັນໂຄງການໜຶ່ງທີ່ເປັນທ່າແຮງໃນການຊຸກຍູ້ເສດຖະກິດຂອງແຂວງສະຫວັນນະເຂດ, ນອກຈາກກິດຈະການຜະລິດເຈ້ຍແລ້ວ ຍັງມີໂຮງງານຜະລິດໄຟຟ້າ ຈາກສິ່ງເສດເຫຼືອ ທີ່ສາມາດສະໜອງໄຟຟ້າໃຫ້ແກ່ໂຮງງານ ແລະ ຂາຍເຂົ້າລະບົບຂອງ ຟຟລ;
  2. ໂຄງການຂຸດຄົ້ນ ແລະ ປຸງແຕ່ງ ແຮ່ຄຳ-ທອງ ຢູ່ແຂວງສະຫວັນນະເຂດ;
  3. ໂຄງການສ້າງຕັ້ງໂຮງງານຂ້າສັດ ຢູ່ນະຄອນຫຼວງວຽງຈັນ ຂອງບໍລິສັດ ຄຸນເຊີງສາກົນ (ລາວ) ຈຳກັດ ທີ່ພວກດຳເນີນການກໍ່ສ້າງໂຮງງານ, ເຊິ່ງໂຄງການດັ່ງກ່າວຄາດວ່າຈະເປັນທ່າແຮງໃນການສະໜອງສະບຽງອາຫານໃຫ້ໃນທົ່ວປະເທດ ທີ່ມີກຳລັງການຜະລິດ 120,000 ໂຕ/ປີ;
  4. ໂຄງການຂຸດຄົ້ນ ແລະ ປຸງແຕ່ງ ແຮ່ຄຳ-ທອງ ຢູ່ແຂວງໄຊສົມບູນ;
  5. ໂຄງການກໍ່ສ້າງພະລັງງານລົມ ເຈື່ອງເຊີນ ຢູ່ແຂວງບໍລິຄຳໄຊ ທີ່ພວມດຳເນີນການກໍ່ສ້າງໃນປະຈຸບັນ;
  6. ໂຄງການ ທ່າບົກ-ທ່ານາແລ້ງ ຢູ່ນະຄອນຫຼວງວຽງຈັນ ທີ່ພວມດຳເນີນການຈັດຕັ້ງປະຕິບັດໂຄງການຢູ່ໃນປະຈຸບັນ;

DRAFT

7. ໂຄງການທາງດ່ວນ (ແລວໃໝ່) ແຕ່ເມືອງປາກຊັນ ຫາ ເມືອງວຽງທອງ ຊາຍແດນລາວ-ຫວຽດນາມ (ດານ ແທງທຸຍ) ແຂວງບໍລິຄຳໄຊ;
8. ໂຄງການທາງດ່ວນ (ແລວໃໝ່) ແຕ່ບ້ານໄຮ່ ເຂດທ່າງອນ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ ຫາ ບ້ານນາຊ່າງເຫຼັກ, ເມືອງທຸລະຄົມ, ແຂວງວຽງຈັນ ຂອງບໍລິສັດ ມາລີນີ ຈຳກັດຜູ້ດຽວ ຄາດຄະເນມູນຄ່າປະມານ 150 ລ້ານ ໂດລາສະຫະລັດ;
9. ໂຄງການທາງລົດໄຟ ລາວ-ຫວຽດນາມ.

**3) ພາກໃຕ້ (ປະກອບມີ ແຂວງຈຳປາສັກ, ແຂວງສາລະວັນ, ແຂວງເຊກອງ ແລະ ແຂວງອັດຕະປື):** ເປັນເຂດທີ່ມີທ່າແຮງບົ່ມຊ້ອນ ແລະ ມີຄວາມໄດ້ປຽບໃນການ ການຜະລິດກະສິກຳ ແລະ ປຸງແຕ່ງອາຫານ ແລະ ເຄື່ອງດື່ມ, ມີຊາຍແດນຕິດກັບ 3 ປະເທດ (ໄທ, ຫວຽດນາມ ແລະ ກາປູເຈຍ), ໃນ 5 ປີຕໍ່ໜ້າ ຄວນສຸມໃສ່ (1) ສົ່ງເສີມການຜະລິດກະສິກຳ ພືດ-ຜັກ ສະບຽງອາຫານ, ກະສິກຳປອດສານພິດ (Organic agriculture Product) ເປັນຕົ້ນ: ກາເຟ, ໝາກໄມ້, ພືດຜັກ ເພື່ອຕອບສະໜອງຄວາມຕ້ອງການພາຍໃນ ແລະ ຕ່າງປະເທດ, ສົ່ງເສີມການລ້ຽງສັດໃຫຍ່, ການປະມົງ ໂດຍສະເພາະ ການລ້ຽງປາ ສະຫວາຍຢູ່ເຂດສີທັນດອນ; (2) ສົ່ງເສີມອຸດສາຫະກຳປຸງແຕ່ງ(ກະສິກຳ, ແຮ່ທາດ ແລະ ອື່ນໆ) ແລະ ພັດທະນາພະລັງງານລົມຢູ່ເຂດທີ່ມີເງື່ອນໄຂ, (3) ສົ່ງເສີມການພັດທະນາການຄ້າ ແລະ ການລົງທຶນ ຕາມເຂດຊາຍແດນ, ເຂດເສດຖະກິດພິເສດ, (4) ສືບຕໍ່ເສີມຂະຫຍາຍ ເຂດໂລຊິດສະຕິກ ປາກເຊ ເພື່ອເປັນໃຈກາງການຂົນສົ່ງ ຂອງປະເທດໃກ້ຄຽງ, (5) ສຸມໃສ່ພັດທະນາໂຄງລ່າງພື້ນຖານດ້ານຄົມມະນາຄົມ ທີ່ສາມາດເຊື່ອມໂຍງ-ເຊື່ອມຈອດທັງພາຍໃນ ແລະ ຕ່າງປະເທດ ເປັນຕົ້ນ ເສັ້ນທາງ ເລກ 15, ທາງເລກ 16, ທາງເລກ 18, (6) ສົ່ງເສີມການທ່ອງທ່ຽວຕິດພັນກັບດ້ານທຳມະຊາດ, ສະຖານທີ່ປະຫວັດສາດ ແລະ ວັດທະນະທຳ ເປັນຕົ້ນ ວັດພູຈຳປາສັກ, ນ້ຳຕົກຕາດ, ການທ່ຽວເກາະດອນ ໃນເຂດສີທັນດອນ.

- **ໂຄງການບູລິມະສິດ:**

1. ໂຄງການພັດທະນາ ແຮ່ບົກຊິດ ແລະ ສ້າງຕັ້ງໂຮງງານຜະລິດອາລູມິນາ-ອາລູມິນຽມ ຢູ່ແຂວງເຊກອງ ແລະ ແຂວງອັດຕະປື ຂອງກຸ່ມບໍລິສັດ ຫວຽດເຟືອງ ທີ່ມີແຜນພັດທະນາໂຮງງານຜະລິດອາລູມິນາ-ອາລູມິນຽມ ຮອງຮັບເອົາແຮ່ບົກຊິດ ທີ່ມີການດຳເນີນການຂຸດຄົ້ນ ຢູ່ 3 ແຂວງພາກໃຕ້ ຄື: ແຂວງຈຳປາສັກ, ແຂວງເຊກອງ ແລະ ແຂວງອັດຕະປື ທີ່ເປັນທ່າແຮງໃນການຊຸກຍູ້ເສດຖະກິດ ຂອງ 3 ແຂວງພາກໃຕ້;
2. ໂຮງງານຜະລິດໄຟຟ້າຖ່ານຫີນ ເຊກອງ ຂອງບໍລິສັດ ພະລັງງານໄຟຟ້າ ເຊກອງ ຈຳກັດ (ກຸ່ມບໍລິສັດ ພອນສັກ ຈຳກັດ) ທີ່ກຳລັງດຳເນີນການກໍ່ສ້າງ, ມີກຳລັງຕິດຕັ້ງ 1,800 MW, ມີມູນຄ່າ 4.25 ຕື້ ໂດລາສະຫະລັດ ເຊິ່ງໃນເດືອນມີນາ 2025 ທີ່ຜ່ານມາ ບໍລິສັດໄດ້ເຊັນສັນຍາການສະໜອງບັນດາອຸປະກອນກໍ່ສ້າງໂຮງງານກັບ ບໍລິສັດ ຈາກ ສປ ຈີນແລ້ວ ແລະ ມີພິທີວາງສີລາລຶກຂອງໂຄງການ ໃນວັນທີ 1 ເມສາ 2025 ທີ່ຜ່ານມາ, ເຊິ່ງເຫັນວ່າເປັນໂຄງການໜຶ່ງທີ່ເປັນທ່າແຮງໃນການຊຸກຍູ້ເສດຖະກິດ ຂອງພາກໃຕ້;
3. ໂຄງການສຳປະທານຜະລິດກະສິກຳ ຄົບວົງຈອນຕິດພັນກັບການທ່ອງທ່ຽວທຳມະຊາດ ແບບອະນຸລັກ ຢູ່ແຂວງອັດຕະປື ໃນເນື້ອທີ່ 5,000 ເຮັກຕາ ທີ່ມີແຜນການຜະລິດບັນດາຜະລິດຕະພັນກະສິກຳ ເປັນຕົ້ນ: ໄມ້ກິນໝາກ, ໄມ້ຢືນຕົ້ນ ແລະ ການພັດທະນາແຫຼ່ງທ່ອງທ່ຽວໃນເຊີງອະນຸລັກທຳມະຊາດ, ເຊິ່ງເປັນໂຄງການໜຶ່ງ ທີ່ມີທ່າແຮງໃນການຊຸກຍູ້ເສດຖະກິດ ຂອງແຂວງອັດຕະປື;
4. ໂຄງການຜະລິດກະສິກຳ, ປູກຝັງ ແລະ ລ້ຽງສັດ ຢູ່ແຂວງເຊກອງ ຂອງບໍລິສັດ ເອັນທີເອັບ ພັດທະນາກະສິກຳ ຈຳກັດ ທີ່ພວມດຳເນີນການຢູ່ໃນປະຈຸບັນ ເຊິ່ງໂຄງການດັ່ງກ່າວ ເປັນໂຄງການທີ່ສະໜອງສະບຽງອາຫານ ດ້ານຜະລິດຕະພັນຊີ້ນງົວ, ນົມງົວ ແລະ ແນວພັນ, ເຊິ່ງເປັນທ່າແຮງໃນການຊຸກຍູ້ເສດຖະກິດຂອງແຂວງເຊກອງ ທີ່ພວກກຳລັງຈັດຕັ້ງປະຕິບັດໂຄງການຢູ່ໃນປະຈຸບັນ;
5. ໂຄງການປູກຢາງພາລາ ແລະ ສ້າງຕັ້ງໂຮງງານຜະລິດຢາງພາລາ ເພື່ອສົ່ງອອກ ຢູ່ແຂວງຈຳປາສັກ ຂອງບໍລິສັດ ກາວຊູເຢົາຕຽງ ຫວຽດ-ລາວ ຈຳກັດ ທີ່ພວມດຳເນີນການຜະລິດຢູ່ປະຈຸບັນ;

6. ໂຄງການປູກ ແລະ ສ້າງຕັ້ງໂຮງງານຜະລິດເມັດກາເຟ ສົ່ງອອກ ຕ່າງປະເທດ ຢູ່ແຂວງຈໍາປາສັກ ຂອງບໍລິສັດ ອາວສະເປນ ບໍໂລເວັນ ຈໍາກັດ ດໍາເນີນການປູກ ແລະ ຜະລິດເມັດກາເຟ ສົ່ງອອກຕ່າງປະເທດ, ເຊິ່ງໂຄງການດັ່ງກ່າວ ແມ່ນໄດ້ຮັບໂຄຕ້າສົ່ງໄປຂາຍຢູ່ທະວີບເອີຣົບ ທີ່ໄດ້ຄຸນນະພາບສູງ ເຊິ່ງເປັນທ່າແຮງສໍາຄັນໃນການກະຕຸ້ນເສດຖະກິດ ຂອງແຂວງຈໍາປາສັກ.

7. ໂຄງການ ພະລັງງານລົມ ຢູ່ແຂວງເຊກອງ-ອັດຕະປື ຂອງບໍລິສັດ ມອນຊູນ ວິນພາວເວີ້ ຈໍາກັດ ທີ່ພວກດໍາເນີນ ການກໍ່ສ້າງ ໃນປະຈຸບັນ ທີ່ຄາດວ່າຈະສໍາເລັດໃນທ້າຍປີ 2025 ນີ້ ເຊິ່ງຈະສ້າງລາຍຮັບສົມທົບໃຫ້ແກ່ ແຂວງພາກໃຕ້.

### *3.5.4 ແຜນວຽກຈຸດສຸມທີ 4: ການພັດທະນາຕົວເມືອງ ແລະ ເຂດເສດຖະກິດພິເສດ ໃຫ້ກາຍເປັນ ຖານການຜະລິດ, ການລົງທຶນ, ການຄ້າ ແລະ ການທ່ອງທ່ຽວ ເພື່ອເຊື່ອມໂຍງກັບພາກພື້ນ ແລະ ສາກົນ*

**1. ຄາດໝາຍລະດັບແຜນວຽກຈຸດສຸມ**

- ສູ້ຊົນສ້າງຕົວເມືອງຕາມແລວທາງເສດຖະກິດ, ແລວທາງອະນຸພາກພື້ນແມ່ນໍ້າຂອງ GMS ໃຫ້ສໍາເລັດຢ່າງ ໜ້ອຍຈໍານວນ 2 ເມືອງ ຄື: ເມືອງທ່າແຂກ ແຂວງຄໍາມ່ວນ ແລະ ເມືອງປາກຊັນ ແຂວງ ບໍລິຄໍາໄຊ;
- ດຶງດູດການລົງທຶນທີ່ມີຄຸນນະພາບຈາກເອກະຊົນພາຍໃນ ແລະ ຕ່າງປະເທດເຂົ້າໃນເຂດເສດຖະກິດພິເສດ ໃຫ້ໄດ້ 700 ບໍລິສັດ.
- ສູ້ຊົນໃຫ້ມູນຄ່າການສົ່ງອອກສິນຄ້າທີ່ຜະລິດໃນເຂດເສດຖະກິດພິເສດ ໃຫ້ໄດ້ 5 ຕື້ໂດລາສະຫະລັດ (ສະເລ່ຍເພີ່ມຂຶ້ນ 15% ຕໍ່ປີ);
- ສູ້ຊົນເກັບພັນທະໃນເຂດເສດຖະກິດພິເສດເຂົ້າງົບປະມານ ໃຫ້ໄດ້ຢ່າງໜ້ອຍ 1,100 ຕື້ກີບ (ສະເລ່ຍເພີ່ມ ຂຶ້ນ 20% ຕໍ່ປີ;
- ສ້າງວຽກເຮັດງານທໍາໃຫ້ແກ່ແຮງງານລາວ ໃນຂົງເຂດອຸດສາຫະກໍາປຸງແຕ່ງ, ການທ່ອງທ່ຽວ ແລະ ການ ບໍລິການ ໃຫ້ໄດ້ 3,800 ຄົນ.

**2. ວຽກງານຈຸດສຸມ**

1) ການພັດທະນາຕົວເມືອງ:

- ສຸມໃສ່ພັດທະນາ ນະຄອນຫຼວງ, ນະຄອນ ແລະ ຕົວເມືອງ ສໍາຄັນ ຕາມແລວທາງເສດຖະກິດໃຫ້ ກາຍເປັນຕົວເມືອງທີ່ມີການວາງແຜນຮອບດ້ານ ແລະ ເປັນເອກະລັກສະເພາະ ໂດຍນໍາໃຊ້ທ່າແຮງແຕ່ລະຂົງເຂດ, ໃນ ການສ້າງແຜນພັດທະນາ ໃຫ້ປະກອບມີແຜນພັດທະນາໂຄງລ່າງທີ່ຈໍາເປັນ ເຊັ່ນ: ແຜນຜັງການນໍາໃຊ້ທີ່ດິນ, ແຜນຜັງໂຄງ ລ່າງພື້ນຖານ ແລະ ສິ່ງອໍານວຍຄວາມສະດວກສາທາລະນະ, ແຜນຜັງສວນສາທາລະນະ, ເຂດສີຂຽວ ແລະ ເຂດສະ ຫວຽນຕ່າງໆ ທີ່ສາມາດຕອບສະໜອງກັບຄວາມຕ້ອງການພື້ນຖານ ໃນການດໍາລົງຊີວິດຂອງປະຊາຊົນ ຢ່າງມີຄຸນ ນະພາບ ໄປຄຽງຄູ່ກັບການປົກປັກຮັກສາສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ.
- ສຸມໃສ່ຂົນຂວາຍທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ນໍາຄູ່ຮ່ວມພັດທະນາ ເຂົ້າໃນການ ພັດທະນາຕົວເມືອງ ແລະ ສິ່ງແວດລ້ອມຕົວເມືອງ ໂດຍສະເພາະ ຕົວເມືອງຕາມແລວທາງເສດຖະກິດ ທີ່ມີທ່າແຮງທີ່ຈະ ກາຍເປັນຖານການຜະລິດ, ການລົງທຶນ, ການຄ້າ ແລະ ການທ່ອງທ່ຽວ ຕາມແຜນພັດທະນາຕົວເມືອງທີ່ໄດ້ຮັບການ ຮັບຮອງ.
- ສືບຕໍ່ເອົາໃຈໃສ່ໃນການຕິດຕາມ ແລະ ຊຸກຍູ້ ການສ້າງບັນດາຕົວເມືອງທັນສະໄໝ ທີ່ລັດຖະບານໄດ້ ອະນຸມັດ ເພື່ອໃຫ້ເປັນຕົວແບບໃນການຂະຫຍາຍໄປສູ່ຕົວເມືອງອື່ນໆ ພ້ອມທັງໃຫ້ມີການກວດກາ ແລະ ປະເມີນ ການຈັດຕັ້ງປະຕິບັດເປັນແຕ່ລະໄລຍະ.
- ຊຸກຍູ້ ແລະ ສົ່ງເສີມບັນດາວິສາຫະກິດ ແລະ ເອກະຊົນ ເຂົ້າມີສ່ວນຮ່ວມໃນການໃຫ້ບໍລິການ ສາທາລະນະໃຫ້ຫຼາຍຂຶ້ນ ເປັນຕົ້ນ: ການບໍລິການເກັບມ້ຽນ-ຂົນສົ່ງ-ກໍາຈັດຂີ້ເຫຍື້ອ, ການບໍລິການຂົນສົ່ງສາທາລະນະ ໃນຕົວເມືອງ, ການບໍລິການນໍ້າປະປາໃນຕົວເມືອງ ແລະ ອື່ນໆ ເພື່ອເປັນການຍົກສູງຄຸນນະພາບຂອງການໃຫ້ບໍລິການ ແລະ ມີການແຂ່ງຂັນດ້ານລາຄາໃຫ້ປະຊາຊົນມີທາງເລືອກ ແລະ ໄດ້ຮັບການບໍລິການທີ່ດີ, ເໝາະສົມ ແລະ ປອດໄພ.

DRAFT

- ສຸມໃສ່ພັດທະນາວຽກງານນ້ຳປະປາ ໃຫ້ໄດ້ມາດຕະຖານ,ມີຄຸນນະພາບ,ປະຊາຊົນໃນເຂດເທດສະບານເມືອງໃນຂອບເຂດທົ່ວປະເທດໄດ້ຊົມໃຊ້ ແລະ ເຂົ້າເຖິງ.

2) ການພັດທະນາເຂດເສດຖະກິດພິເສດ:

- ດຶງດູດການລົງທຶນເພື່ອພັດທະນາເຂດເສດຖະກິດພິເສດ 5 ເຂດ ຄື: (1) ໂຄງການພັດທະນາເຂດເສດຖະກິດພິເສດລານຕຸຍ ແຂວງຜົ້ງສາລີ, (2) ໂຄງການພັດທະນາເມືອງທັນສະໄໝ AMATA SMART & ECO CITY ເມືອງນາໝໍ້ ແຂວງອຸດົມໄຊ, (3) ໂຄງການພັດທະນາເຂດຕົວເມືອງທັນສະໄໝ (SMART CITY) ນະຄອນຫຼວງວຽງຈັນ 450 ປີ, (4) ໂຄງການພັດທະນາເມືອງທັນສະໄໝ AMATA SMART & ECO CITY ເມືອງໄຊ ແຂວງອຸດົມໄຊ, (5) ໂຄງການພັດທະນາເຂດການຄ້າ ແລະ ປຸງແຕ່ງເພື່ອສົ່ງອອກຜະລິດຕະພັນກະສິກຳ ຢູ່ເມືອງປາກງື່ມ ນະຄອນຫຼວງວຽງຈັນ.

- ຄົ້ນຄ້ວາປັບປຸງດຳລັດກ່ຽວກັບການສົ່ງເສີມ, ພັດທະນາ ແລະ ການຄຸ້ມຄອງເຂດເສດຖະກິດພິເສດ ເພື່ອໃຫ້ເນື້ອໃນສອດຄ່ອງກັບກົດໝາຍສົ່ງເສີມການລົງທຶນ ສະບັບປັບປຸງປີ 2024, ສຸມໃສ່ຄົ້ນຄ້ວານະໂຍບາຍສົ່ງເສີມການລົງທຶນ ກຸ່ມສະເພາະ ເຊັ່ນ: ຍີ່ປຸ່ນ, ເກົາຫຼີ ແລະ ອື່ນໆ ສອດຄ່ອງກັບຂອບການຮ່ວມມື ອາຊຽນ+1, RCEP ແລະ ອື່ນໆ.

- ສຸມໃສ່ປັບປຸງບັນດານິຕິກຳສົ່ງເສີມ ແລະ ຄຸ້ມຄອງທີ່ຕິດພັນກັບການພັດທະນາເຂດເສດຖະກິດພິເສດ ໃຫ້ສອດຄ່ອງ ມີຄວາມຍືດຍຸ່ນ ສາມາດປັບໄດ້ຕາມຍຸກສະໄໝຂອງການພັດທະນາ ແນໃສ່ສົ່ງເສີມຂະແໜງບູລິມະສິດ ທີ່ເປັນທ່າແຮງ ທີ່ສ້າງເປັນຖານການຜະລິດ ສາມາດສ້າງຮັບທີ່ຍືນຍົງ; ສ້າງນະໂຍບາຍສົ່ງເສີມທີ່ເປັນເອກະພາບ ໃນເຂດເສດຖະກິດພິເສດ ໃນທົ່ວປະເທດ; ຫຼຸດຜ່ອນຂອດຂັ້ນ ແລະ ຂັ້ນຕອນພິຈາລະນາ ໃຫ້ມີຄວາມໂປ່ງໃສ, ມີປະສິດທິພາບ ແລະ ປະສິດທິຜົນ ສາມາດຈັດຕັ້ງປະຕິບັດໄດ້ຢ່າງເປັນຮູບປະທຳ.

- ພັດທະນາກົນໄກການບໍລິການປະຕູດຽວໃນເຂດເສດຖະກິດພິເສດ ໃຫ້ມີຄວາມກະທັດຮັດ, ວ່ອງໄວ, ໂປ່ງໃສ ແລະ ທັນສະໄໝ ເປັນຕົ້ນ: ກົນໄກການອອກໃບອະນຸຍາດການສ້າງຕັ້ງ ແລະ ດຳເນີນທຸລະກິດໃນເຂດ ດ້ວຍລະບົບເອເລັກໂຕຣນິກ ເພື່ອຫຼຸດຜ່ອນຂັ້ນຕອນອະນຸມັດ ແລະ ຫັນສູ່ການອອກອະນຸຍາດໄດ້ທັນທີ; ນຳໃຊ້ລະບົບທັນສະໄຫມເຂົ້າຊ່ວຍໃນການບໍລິການປະຕູດຽວ ແນໃສ່ການບໍລິຫານ ແລະ ຄຸ້ມຄອງເຂດ ໃຫ້ໄດ້ມາດຕະຖານສາກົນ;

- ພັດທະນາພື້ນຖານໂຄງລ່າງໃນເຂດເສດຖະກິດພິເສດ ສາມາດເຂົ້າຮ່ວມຂະບວນການເຊື່ອມໂຍງພາກພື້ນ ແລະ ສາກົນ ສຸມໃສ່ຍົກລະດັບພື້ນຖານໂຄງລ່າງດ້ານຄົມມະນາຄົມ, ລະບົບສາຍສົ່ງໄຟຟ້າ, ນ້ຳປະປາ ແລະ ສິ່ງອຳນວຍຄວາມສະດວກອື່ນໆ ໂດຍສະເພາະໂຄງລ່າງເຊື່ອມຈອດເຂດບໍລິການຂົນສົ່ງໂລຈິສຕິກ, ຈຸດບໍລິການຄ່ຽນຖ່າຍສິນຄ້າ (ICD) ເຊື່ອມຈອດກັບເສັ້ນທາງລົດໄຟລາວ-ຈີນ; ສຸມໃສ່ການຮ່ວມມືດ້ານການຄ້າ, ການລົງທຶນ ແລະ ການບໍລິການ ຕາມບໍລິເວນຊາຍແດນທີ່ມີເຂດເສດຖະກິດຕັ້ງຢູ່ ແລະ ການລົງທຶນສ້າງເຂດເສດຖະກິດພິເສດແຫ່ງໃໝ່ຕາມແລວທາງລົດໄຟລາວ-ຈີນ ເພື່ອເປັນແຮງຍູ້ໜູນໃຫ້ການລົງທຶນໃສ່ຂະແໜງອຸດສາຫະກຳປຸງແຕ່ງທີ່ເປັນບູລິມະສິດ, ການຄ້າ ແລະ ການທ່ອງທ່ຽວ.

- ສຸມໃສ່ສ້າງກຳລັງແຮງງານທີ່ມີຄຸນນະພາບ ສາມາດຕອບສະໜອງກັບຂະບວນການເຊື່ອມໂຍງພາກພື້ນ, ສາກົນ ຄຽງຄູ່ກັບການພັດທະນາອຸດສາຫະກຳ ຍຸກ 4.0 ໂດຍການຊຸກຍູ້ໃຫ້ ຜູ້ພັດທະນາ ແລະ ນັກລົງທຶນ ໃນເຂດສ້າງໂຮງຮຽນວິຊາຊີບ ຫຼື ສູນພັດທະນາສີມືແຮງງານ ທີ່ແທດເໝາະກັບຂະແໜງການຜະລິດໃນເຂດ ເພື່ອຮັບປະກັນໃຫ້ການດຸນດ່ຽງ ແລະ ດຶງດູດແຮງງານລາວທີ່ມີທັກສະສີມືແຮງງານ ເຂົ້າໃນເຂດ ເພື່ອຍົກສູງລະດັບສີມືແຮງງານສາມາດຖ່າຍທອດຄວາມຮູ້ດ້ານຕ່າງໆ ໃຫ້ແຮງງານນອກເຂດ ຄຽງຄູ່ກັບປະສານສົມທົບກັບຂະ ແໜງການທັງພາກລັດ ແລະ ເອກະຊົນ ດຸນດ່ຽງແຮງງານໃຫ້ສົມສ່ວນກັບຄວາມຕ້ອງການຂອງຕະຫຼາດແຮງງານ ເພື່ອເປັນແຮງສະໜັບສະໜູນສະໜອງແຮງງານໃນບັນດາຫົວໜ່ວຍອຸດສາຫະກຳພາຍໃນເຂດ.

- ສົ່ງເສີມການມີສ່ວນຮ່ວມຂອງປະຊາຊົນທ້ອງຖິ່ນ ຕິດພັນກັບຂະບວນການຜະລິດທີ່ນຳໃຊ້ວັດຖຸດິບພາຍໃນ ແລະ ຮ່ວມມືກັບພາກສ່ວນຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ SMEs ໂດຍສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການເຊື່ອມໂຍງເຂດເສດຖະກິດພິເສດກັບເສດຖະກິດທ້ອງຖິ່ນ, ຊຸກຍູ້ໃຫ້ແຮງງານທ້ອງຖິ່ນ ແລະ ຫົວໜ່ວຍ SMEs ພາຍໃນ ເຂົ້າສູ່ຕ່ອງໂສ້ອຸປະທານ ເພື່ອສະໜອງແຮງງານ, ວັດຖຸດິບ, ສິນຄ້າ ແລະ ການບໍລິການ ເຂົ້າໃນເຂດ.

DRAFT

- ເພີ່ມທະວີປັບປຸງເງື່ອນໄຂໃຫ້ແຮງງານພາຍໃນເຂດ ສາມາດເຂົ້າເຖິງກົນໄກຍຸຕິທຳ ແລະ ການຊ່ວຍເຫຼືອດ້ານກົດໝາຍ ສົມທົບແໜ້ນກັບຂະແໜງການທີ່ກ່ຽວຂ້ອງໃນການປ້ອງກັນຄວາມສະຫງົບ ເປັນຕົ້ນ: ການເຂົ້າເຖິງລະບົບປ້ອງກັນສັງຄົມ, ການເຄື່ອນຍ້າຍເຂົ້າ-ອອກເມືອງ ໃຫ້ເປັນລະບົບ, ຕ້ານການຄ້າ-ຂາຍຜິດກົດໝາຍທຸກຮູບແບບ ແລະ ບັນຫາອາດຊະຍາກຳຂ້າມຊາດ.

## 3.6 ເປົ້າໝາຍທີ 6: ການຄຸ້ມຄອງ-ບໍລິຫານລັດໃຫ້ມີປະສິດທິພາບ, ການເມືອງມີສະຖຽນລະພາບ, ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ຍຸຕິທຳ ແລະ ສີວະໄລ

### *3.6.1 ແຜນວຽກຈຸດສຸມທີ 1: ຍົກສູງປະສິດທິພາບການປົກຄອງ-ການຄຸ້ມຄອງບໍລິຫານລັດໃຫ້ມີຄວາມກະທັດຮັດ, ວ່ອງໄວ ແລະ ເຂັ້ມງວດຕາມກົດໝາຍ ແລະ ແລະ ວຽກງານ 3 ສ້າງ ໃຫ້ເຂົ້າສູ່ລວງເລິກ ແລະ ປະຕິບັດຕົວຈິງຢ່າງມີປະສິດທິຜົນສູງ*

**1. ຄາດໝາຍລະດັບແຜນວຽກຈຸດສຸມ**

- ສູ້ຊົນ ສ້າງແຂວງເປັນຫົວໜ່ວຍຍຸດທະສາດ ໃຫ້ໄດ້ຢ່າງໜ້ອຍ 03 ແຂວງ;
- ສູ້ຊົນ ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ໃຫ້ໄດ້ຢ່າງໜ້ອຍ 18 ເມືອງ;
- ສູ້ຊົນສ້າງຕັ້ງຕາແສງ ໃຫ້ໄດ້ 600 ຕາແສງ;
- ສູ້ຊົນແກ້ໄຂບັນຫາເຂດແດນເຊື່ອມຕໍ່ຂັ້ນເມືອງໃນທົ່ວແຂວງ, ນະຄອນຫຼວງ ໃຫ້ສຳເລັດຢ່າງໜ້ອຍ 7 ແຂວງໃນຂອບເຂດທົ່ວປະເທດ;
- ຫຼຸດຜ່ອນຈຳນວນລັດຖະກອນທົ່ວປະເທດ ໃຫ້ໄດ້ຢູ່ລະດັບ 2% ຂອງພົນລະເມືອງ;
- ສູ້ຊົນຈົດທະບຽນ ແລະ ອອກໃບຢັ້ງຢືນ ການເກີດ ໃຫ້ໄດ້ 100% ຂອງພົນລະເມືອງທົ່ວປະເທດ;
- ສູ້ຊົນຈົດທະບຽນ ແລະ ອອກໃບຢັ້ງຢືນ ການເສຍຊີວິດ ໃຫ້ໄດ້ 80% ຂອງພົນລະເມືອງທີ່ເສຍຊີວິດທົ່ວປະເທດ;
- ສູ້ຊົນຫັນຫົວໜ່ວຍວິຊາການ ຈຳນວນ 64 ຫົວໜ່ວຍ, ໃນນີ້ ຢູ່ຂັ້ນສູນກາງ 53 ຫົວໜ່ວຍ ແລະ 11 ຫົວໜ່ວຍ.

**2. ວຽກງານຈຸດສຸມ**

- ປັບປຸງການຄຸ້ມຄອງບໍລິຫານລັດ ແລະ ກົງຈັກຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມກະທັດຮັດ, ວ່ອງໄວ ແລະ ທັນສະໄໝ, ຮັບປະກັນການບໍລິການຮັບໃຊ້ປະຊາຊົນ, ສັງຄົມ ວ່ອງໄວ, ສະເໝີພາບ, ຍຸຕິທຳ ແລະ ມີປະສິດທິຜົນ;
- ປັບປຸງການບໍລິຫານຄຸ້ມຄອງລັດ ຢູ່ຂັ້ນທ້ອງຖິ່ນ ໂດຍສະເພາະຈັດຕັ້ງຕາແສງ ເປັນກົງຈັກຂັ້ນຕໍ່າສຸດຢູ່ຂັ້ນຮາກຖານໃຫ້ສອດຄ່ອງກັບສະພາບການໃໝ່, ພ້ອມກັນນັ້ນ ກໍ່ປັບປຸງຮູບແບບການຈັດຕັ້ງຂອງບ້ານ ກາຍເປັນການຈັດຕັ້ງຂອງຊຸມຊົນ ທີ່ເຂັ້ມແຂງ; ຫັນລະບົບການປົກຄອງທ້ອງຖິ່ນໃນປັດຈຸບັນທີ່ມີເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ, ເຈົ້າເມືອງ, ເຈົ້ານະຄອນ, ໄປສູ່ຮູບແບບປະທານຄະນະກຳມະການປົກຄອງແຂວງ, ນະຄອນຫຼວງວຽງຈັນ, ເມືອງ, ນະຄອນ ແລະ ຕາແສງ;
- ຄົ້ນຄວ້າປັບປຸງ ແລະ ສ້າງນິຕິກຳເປັນຕົ້ນ: ຍຸດທະສາດວຽກງານຈົດທະບຽນ ແລະ ສະຖິຕິພົນລະເມືອງ, ກົດໝາຍ, ດຳລັດ, ຄຳແນະນຳ, ຄູ່ມື ແລະ ແບບຟອມຕ່າງໆ ກ່ຽວກັບວຽກງານການຈົດທະບຽນຄອບຄົວ ໂດຍປະສານສົມທົບກັບບັນດາຂະແໜງການກ່ຽວຂ້ອງ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ;
- ໂຄສະນາເຜີຍແຜ່ຍຸດທະສາດວຽກງານຈົດທະບຽນ ແລະ ສະຖິຕິພົນລະເມືອງ ແລະ ນິຕິກຳ ກ່ຽວກັບວຽກງານຈົດທະບຽນຄອບຄົວໃຫ້ປະຊາຊົນ ໂດຍນຳໃຊ້ໂຄສະນາສື່ສານວຽກງານ ການຈົດທະບຽນ ເປັນຕົ້ນ: ແຜ່ນພັບ, ໂພດສະເຕີ, ລະຄອນສັ້ນ, ຂໍ້ຄວາມທາງໂທລະພາບ, ວິທະຍຸ, ສື່ສັງຄົມອອນລາຍ ແລະ ໂທລະໂຄ່ງບ້ານ;
- ຕິດຕາມ, ກວດກາ, ຊຸກຍູ້ ແລະ ປະເມີນຜົນ ກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດ, ກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ກ່ຽວກັບວຽກງານຄຸ້ມຄອງພົນລະເມືອງ ຢ່າງເປັນປົກກະຕິ.

DRAFT

- ເອົາໃຈໃສ່ການບໍລິການຮັບໃຊ້ປະຊາຊົນ, ການບໍລິການຜ່ານປະຕູດຽວຕາມກົດໝາຍ ເພື່ອໃຫ້ປະຊາຊົນໄດ້ຂະຫຍາຍການຜະລິດ, ກຳລັງການຜະລິດຢ່າງແຂງແຮງ;
- ເພີ່ມທະວີການປັບປຸງສະພາບແວດລ້ອມໃນການດຳເນີນທຸລະກິດ ແລະ ການພັດທະນາພາກເອກະຊົນໃຫ້ມີຄວາມເຂັ້ມແຂງ;
- ສ້າງຍຸດທະສາດວຽກງານປັບປຸງກົງຈັກການຈັດຕັ້ງ ແລະ ສ້າງດຳລັດວ່າດ້ວຍລະບົບກົງຈັກການຈັດຕັ້ງ;
- ຊຸກຍູ້, ຕິດຕາມ ແລະ ປະເມີນກົງຈັກການຈັດຕັ້ງ ຂອງລັດຖະບານ ຊຸດທີ x, ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງຂັ້ນທ້ອງຖິ່ນ;
- ສ້າງກົດໝາຍການປົກຄອງ;
- ສ້າງຖານຂໍ້ມູນໂຄງປະກອບກົງຈັກການຈັດຕັ້ງ ແລະ ຕຳແໜ່ງງານ;
- ຕິດຕາມ, ຊຸກຍູ້ ແລະ ປະເມີນຜົນການກຳນົດຕຳແໜ່ງງານຂອງບັນດາກະຊວງ, ອົງການ ແລະ ທ້ອງຖິ່ນ, ທົບທວນ ແລະ ປັບປຸງນິຕິກຳ ກ່ຽວກັບການກຳນົດຕຳແໜ່ງງານ; ສ້າງຂີດຄວາມສາມາດໃນການກຳນົດຕຳແໜ່ງງານໃຫ້ແກ່ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນ;
- ໂຄສະນາ ແລະ ເຜີຍແຜ່ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງໃໝ່ ປີ 2025); ສ້າງ ແລະ ປັບປຸງນິຕິກຳ ໃຕ້ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງປີ 2025) ເປັນຕົ້ນແມ່ນ ລັດຖະບັນຍັດວ່າດ້ວຍນະຄອນຫລວງວຽງຈັນ, ຄຳແນະນຳກ່ຽວກັບການສ້າງຕັ້ງເມືອງ ແລະ ຕາແສງ, ຄຳແນະນຳກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງວ່າການຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນຕາແສງ, ພ້ອມທັງເຜີຍແຜ່, ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດນິຕິກຳດັ່ງກ່າວ;
- ສ້າງ ແລະ ເຜີຍແຜ່ ນິຕິກຳການຄຸ້ມຄອງ, ປົກປັກຮັກສານຳໃຊ້ ແລະ ແກ້ໄຂບັນຫາເຂດແດນເຊື່ອມຕໍ່; ຕິດຕາມ, ຊຸກຍູ້ ສົມທົບອົງການປົກຄອງຂັ້ນແຂວງ ເພື່ອຊ່ວຍດ້ານວິຊາການ ໃນການແກ້ໄຂບັນຫາເຂດແດນເຊື່ອມຕໍ່ຂັ້ນເມືອງພາຍໃນແຂວງ, ນະຄອນຫລວງ ໃຫ້ສຳເລັດ;
- ຊຸກຍູ້ການສ້າງຕັ້ງຕາແສງໂດຍເລີ່ມຈາກທ້ອງຖິ່ນ ທີ່ມີຄວາມພ້ອມ ແລ້ວຈຶ່ງຂະຫຍາຍອອກໄປໃນທົ່ວປະເທດ;
- ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນການຜັນຂະຫຍາຍວຽກງານ 3 ສ້າງ ຂອງບັນດາການຈັດຕັ້ງ ທັງສູນກາງ ແລະ ທ້ອງຖິ່ນ;
- ສືບຕໍ່ຈັດຕັ້ງປະຕິບັດວຽກງານ 3 ສ້າງ ໃຫ້ເຂົ້າສູ່ລວງເລິກ ແລະ ກວ້າງຂວາງກວ່າເກົ່າ ດ້ວຍການປັບປຸງນິຕິກຳຮັບໃຊ້ວຽກງານ 03 ສ້າງ ໃຫ້ສອດຄ່ອງກັບລັດຖະທຳມະນູນ ແລະ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັງປຸງ ປີ 2025);
- ເຜີຍແຜ່ບັນດານິຕິກຳ 3 ສ້າງ ປີ 2026-2027 ແລະ ປະເມີນ ແລະ ທົບທວນນິຕິກຳ 3 ສ້າງ ປີ 2026-2030;
- ສືບຕໍ່ພັດທະນາວຽກງານຄຸ້ມຄອງລັດຖະກອນໃຫ້ທັນສະໄໝ, ປັບປຸງວິທີການປະເມີນລັດຖະກອນໃຫ້ສະດວກ ແລະ ຊັດເຈນຂຶ້ນຕື່ມ, ສືບຕໍ່ປັບປຸງນິຕິກຳກ່ຽວກັບວຽກງານຄຸ້ມຄອງລັດຖະກອນ.
- ສືບຕໍ່ພັດທະນາລະບົບຄຸ້ມຄອງຂໍ້ມູນພົນລະເມືອງ ໃຫ້ໄດ້ 7 ປະເພດ ຄື: ການເກີດ, ການເສຍຊີວິດ, ການແຕ່ງດອງ, ການຢ່າຮ້າງ, ການປ່ຽນຊື່ ຫຼື ນາມສະກຸນ, ການຍົກຍ້າຍ ແລະ ການປ່ຽນແປງສັນຊາດ ໃຫ້ ສົມບູນ, ວ່ອງໄວ;
- ຫັນເປັນທັນສະໄໝໃນວຽກງານການບໍລິຫານລັດໃນຍຸກອຸດສາຫະກຳ 4.0 ໂດຍການຫັນເປັນການບໍລິຫານລັດແບບເອເລັກໂຕຼນິກ (e-government ຫຼື Digital government);
- ເພີ່ມທະວີປະສິດທິພາບ ແລະ ຄຸນນະພາບຂອງການລະບົບການຄຸ້ມຄອງພະນັກງານ-ລັດຖະກອນ ລວມທັງສະຖິຕິ ແລະ ແຜນກໍ່ສ້າງ ໃຫ້ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງຕາມທິດກະທັດຮັດ ແຕ່ມີປະສິດທິຜົນ;
- ສືບຕໍ່ປັບປຸງກົງຈັກ-ການຈັດຕັ້ງໃຫ້ມີຄວາມສອດຄ່ອງ ແລະ ໜັກແໜ້ນ ໃຫ້ສອດຄ່ອງກັບກົດໝາຍ ແລະ ວຽກງານ 3 ສ້າງ ຢ່າງຈະແຈ້ງ ແລະ ສືບຕໍ່ສ້າງຕຳແໜ່ງງານໃຫ້ຄົບຊຸດກັບທຸກຕຳແໜ່ງງານໃຫ້ຖືກຕ້ອງ;
- ຊຸກຍູ້ ແລະ ສົ່ງເສີມອົງການຈັດຕັ້ງສັງຄົມໃຫ້ມີສ່ວນຮ່ວມໃນການພັດທະນາເສດຖະກິດ-ສັງຄົມ.

### *3.6.2 ແຜນວຽກຈຸດສຸມທີ 2: ປັບປຸງກົນໄກ, ລະບຽບການປະສານງານລະຫວ່າງພາກລັດດ້ວຍກັນໃຫ້ມີຄວາມເປັນເອກະພາບ ແລະ ວ່ອງໄວຂຶ້ນ*

**1. ຄາດໝາຍລະດັບແຜນວຽກຈຸດສຸມ**

- ສູ້ຊົນສ້າງຕັ້ງສູນບໍລິການຜ່ານປະຕູດຽວ ຢ່າງໜ້ອຍໃຫ້ໄດ້ 35 ສູນ;
- ສືບຕໍ່ປັບປຸງລະບົບກົນໄກການບໍລິການຜ່ານປະຕູດຽວໃຫ້ມີຄວາມທັນສະໄໝກວ່າເກົ່າ ແລະ ຂະຫຍາຍໄປສູ່ເມືອງອື່ນໆ ຢ່າງໜ້ອຍ 15 ສູນ;

**2. ວຽກງານຈຸດສຸມ**

- ປັບປຸງກົນໄກ, ແບບແຜນວິທີເຮັດວຽກ, ການແບ່ງຂັ້ນຄຸ້ມຄອງ ລະຫວ່າງສູນກາງ ກັບທ້ອງຖິ່ນຮາກຖານ;
- ປັບປຸງນິຕິກຳ, ມາດຕະຖານ ແລະ ການໂຄສະນາເຜີຍແຜ່ວຽກງານບໍລິການຜ່ານປະຕູດຽວ, ແບ່ງຂັ້ນຄຸ້ມຄອງກ່ຽວກັບການປະຕິບັດພາລະບົດບາດຢູ່ສູນບໍລິການຜ່ານປະຕູດຽວ, ສ້າງຄູ່ມືການເຮັດວຽກ ແລະ ຫຼັກສູດການຝຶກອົບຮົມສຳລັບພະນັກງານຜູ້ມາປະຈຳຢູ່ສູນບໍລິການຜ່ານປະຕູດຽວ ແລະ ໂຄງປະກອບການຈັດຕັ້ງທີ່ຮັບຜິດຊອບວຽກງານການບໍລິການຜ່ານປະຕູດຽວ. ພັດທະນາພື້ນຖານໂຄງລ່າງ ແລະ ປັບປຸງສະພາບແວດລ້ອມ ຫລື ສິ່ງເອື້ອອຳນວຍຄວາມສະດວກ ໃນການສ້າງຕັ້ງສູນບໍລິການຜ່ານປະຕູດຽວ, ພັດທະນາວຽກງານບໍລິການຜ່ານປະຕູດຽວແບບທັນສະໄໝ ຫຼື SMART ODSC ແລະ ຫັນຮູບແບບລະບົບທັນສະໄໝ ຫຼື SMART ODSC ໄປເປັນລະບົບດີຈີຕອນ (ອອນລາຍ);
- ຄົ້ນຄ້ວາກົນໄກຕິດຕາມ, ກວດກາ ແລະ ຊຸກຍູ້ເຊິ່ງກັນ ແລະ ກັນ ລະຫວ່າງກະຊວງ, ອົງການ ແລະ ທ້ອງຖິ່ນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ແກ້ໄຂການລ່ວງລະເມີດສິດອຳນາດ, ການມອບວຽກບໍ່ເຮັດ, ເຮັດແຕ່ຂາດຄວາມຮັບຜິດຊອບຢ່າງເດັດຂາດ.
- ແກ້ໄຂຂາດຕົວການແບ່ງຂັ້ນຄຸ້ມຄອງລະຫວ່າງສູນກາງ ແລະ ທ້ອງຖິ່ນ ກໍ່ຄືການແບ່ງຄວາມຮັບຜິດຊອບ, ແບ່ງວຽກ, ພາລະບົດບາດ ລະຫວ່າງສູນກາງດ້ວຍກັນ ໃຫ້ຈະແຈ້ງ, ມີຄວາມກົມກຽວ ແລະ ບໍ່ກົດໜ່ວງຖ່ວງດຶງກັນ.
- ອົງການຄຸ້ມຄອງແຕ່ລະຂັ້ນ ຕ້ອງມີການຫັນປ່ຽນໃນຂອດການປະສານງານ ໃຫ້ມີຄຸນນະພາບ; ເພີ່ມທະວີບົດບາດການຄຸ້ມຄອງມະຫາພາກດ້ານເສດຖະກິດຂອງລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນກວ່າເກົ່າ, ກຳນົດກົນໄກຄຸ້ມຄອງເສດຖະກິດ, ມອບສິດການຕົກລົງອະນຸຍາດ, ຂັ້ນການຄຸ້ມຄອງດ້ານເສດຖະກິດ ຢູ່ທ້ອງຖິ່ນຈຳນວນໜຶ່ງ ໃຫ້ໄປຂຶ້ນກັບສູນກາງໂດຍກົງ;
- ຄົ້ນຄ້ວາກົນໄກ ຫັນແນວທາງຂອງພັກ ເປັນແຜນປະຕິບັດງານຂອງລັດຖະບານ ແລະ ທ້ອງຖິ່ນ ເພື່ອເຮັດໃຫ້ແນວທາງຂອງພັກ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນຮູບປະທຳ ແລະ ເປັນເອກະພາບ, ມີການສະຫຼຸບປະເມີນຜົນຢ່າງມີວິທະຍາສາດ ເປັນຕົ້ນແມ່ນ: ການວາງວິໄສທັດ, ການວາງຍຸດທະສາດ, ການສ້າງແຜນກວມລວມ, ການສ້າງແຜນດຳເນີນງານ ແລະ ແຜນການຈັດຕັ້ງປະຕິບັດຕົວຈິງຢູ່ແຕ່ລະຂົງເຂດວຽກງານ ແລະ ທ້ອງຖິ່ນ.
- ຫັນການຄຸ້ມຄອງ-ບໍລິຫານລັດແຕ່ລະຂັ້ນເປັນທັນສະໄໝ ແລະ ເປັນດີຈິຕອນ ເພື່ອເຮັດໃຫ້ການເກັບກຳຂໍ້ມູນ ແລະ ສະໜອງຂໍ້ມູນມີຄວາມຊັດເຈນ ແລະ ທັນເວລາ.
- ພັດທະນາ ແລະ ສ້າງລະບົບຂໍ້ມູນເປີດພາກລັດ (Open Government Data) ເພື່ອໃຫ້ທຸກພາກສ່ວນສາມາດນຳໃຊ້ເພື່ອພັດທະນາບໍລິການໃຫ້ປະຊາຊົນ.
- ພັດທະນາ ແລະ ສ້າງລະບົບລາຍງານພາກລັດ (Dashboard) ເພື່ອເປັນມາດຕະຖານໃນບໍລິການຂໍ້ມູນສະຖິຕິພາກລັດ;

### *3.6.3 ແຜນວຽກຈຸດສຸມທີ 3: ຮັບປະກັນໃຫ້ມີສະຖຽນລະພາບທາງດ້ານການເມືອງ, ມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ສັງຄົມມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ*

**1. ຄາດໝາຍລະດັບແຜນວຽກຈຸດສຸມ**

+ ວຽກງານຍຸຕິທຳ

- ປັບປຸງກົດໝາຍ ແລະ ສ້າງນິຕິກຳໃຕ້ກົດໝາຍກ່ຽວຂ້ອງກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໃຫ້ໄດ້ມາດຕະຖານສາກົນ ແລະ ຄົບຖ້ວນ ຢ່າງໜ້ອຍ 3 ນິຕິກຳ;
- ສູ້ຊົນຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທີ່ຍັງຄ້າງ ແລະ ຄຳຕັດສິນເຂົ້າໃໝ່ ໃຫ້ໄດ້ 85% ຕໍ່ປີ;
- ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ໄດ້ 75% ຕໍ່ປີ.

+ ວຽກງານສານປະຊາຊົນ

- ສູ້ຊົນປັບປຸງກົນໄກ, ຂັ້ນຕອນ ການຄົ້ນຄ້ວາຕັດສິນຄະດີ, ພິພາກສາຄະດີ, ໃຫ້ໂປ່ງໃສ, ວ່ອງໄວ, ຍຸຕິທຳ, ຮັບປະກັນຄວາມເປັນທຳ, ສາມາດກວດສອບໄດ້ ແລະ ສະເໝີພາບຕໍ່ໜ້າກົດໝາຍ. ຄະດີອາຍາ ໃຫ້ໄດ້

DRAFT

90% ຂຶ້ນໄປ, ຄະດີແພ່ງ 75% ຂຶ້ນໄປ, ຄະດີການຄ້າ 75% ຂຶ້ນໄປ, ຄະດີແຮງງານ 85% ຂຶ້ນໄປ, ຄະດີຄອບຄົວ 85% ຂຶ້ນໄປ, ຄະດີເດັກ ໃຫ້ໄດ້ 85% ຂຶ້ນໄປ, ຄະດີປົກຄອງ 85% ຂຶ້ນໄປ ແລະ ການຂໍອຸທອນບໍ່ໃຫ້ກາຍ 15%.

- ສູ້ຊົນປັບປຸງກົງຈັກການຈັດຕັ້ງສານປະຊາຊົນທຸກຂັ້ນ ເພື່ອໃຫ້ປະຊາຊົນເຂົ້າຫາຂະບວນການຍຸຕິທຳໄດ້ງ່າຍ ແລະ ຫຼາຍຂຶ້ນ, ສ້າງສານປະຊາຊົນເຂດໃຫ້ໄດ້ 5 ແຫ່ງ, ສານເດັກ 1 ແຫ່ງ, ສານທະຫານປະຈຳນະຄອນຫຼວງວຽງຈັນ 1 ແຫ່ງ, ສານທະຫານປະຈຳແຂວງ 1-2 ແຫ່ງ.

+ ວຽກງານອົງການໄອຍະການປະຊາຊົນ

- ສູ້ຊົນໃຫ້ອອກຄຳຖະແຫຼງຂອງອົງການໄອຍະການປະຊາຊົນ ຮັບປະກັນຄວາມຖືກຕ້ອງຕາມກົດໝາຍ ແລະ ສານປະຊາຊົນເອົາຕາມຄຳຖະແຫຼງຂອງອົງການໄອຍະການປະຊາຊົນ ໃຫ້ໄດ້ 95% ຂຶ້ນໄປ.

+ ວຽກງານການຕ້ານການຄ້າມະນຸດ:

- ດຳເນີນຄະດີສຳເລັດ 85% ຂຶ້ນໄປ, ສ້າງຄວາມເຂັ້ມແຂງໃຫ້ຂະແໜງການທີ່ເຮັດວຽກງານການກຳນົດຕົວໃຫ້ຖືກຕ້ອງ, ຊັດເຈນ ແລະ ວ່ອງໄວຂຶ້ນ ແລະ ນຳເອົາຜູ້ກະທຳຜິດມາລົງ ໂທດຢ່າງເຂັ້ມງວດ;

## 2. ວຽກງານຈຸດສຸມ

1) ວຽກງານຍຸຕິທຳ

- ປັບປຸງ, ສ້າງກົດໝາຍຕາມຫຼັກວິທະຍາສາດ, ຜັນຂະຫຍາຍແນວທາງ, ແຜນນະໂຍບາຍຂອງພັກ ໃຫ້ເປັນກົດໝາຍ ແລະ ສອດຄ່ອງກັບສະພາບເງື່ອນໄຂຕົວຈິງ ຂອງປະເທດ ໄປຄຽງຄູ່ກັບການເພີ່ມທະວີໂຄສະນາເຜີຍແຜ່ກົດໝາຍໃຫ້ເລິກເຊິ່ງ ແລະ ກວ້າງຂວາງດ້ວຍຫຼາຍຮູບການ, ວິທີການ, ມີສີສັນ, ແທດ ເໝາະກັບລະດັບຄວາມຮູ້ ແລະ ວິຖີຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ.
- ສ້າງເງື່ອນໄຂໃຫ້ປະຊາຊົນ ໄດ້ມີສ່ວນຮ່ວມໃນການສ້າງກົດໝາຍ, ຕິດຕາມການປະຕິບັດກົດໝາຍ ແລະ ຮັບປະກັນການເຂົ້າເຖິງລະບົບກົດໝາຍ;
- ເພີ່ມທະວີການໂຄສະນາເຜີຍແຜ່ວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ເອົາໃຈໃສ່ຄຸ້ມຄອງ ແລະ ບໍລິການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໃຫ້ມີປະສິດທິຜົນຂຶ້ນຕື່ມ. ສືບຕໍ່ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການປັບປຸງກົນໄກປະສານງານ ແລະ ບໍລິການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ ແລະ ຍຸຕິທຳ.
- ປັບປຸງຕາໜ່າງສະໜອງຂໍ້ມູນຂ່າວສານ, ສະຖິຕິວຽກງານກົດໝາຍ ແລະ ຍຸຕິທຳ ໃຫ້ທັນສະໄໝ ສະໜອງຄວາມຮຽກຮ້ອງຕ້ອງການຂອງພາກລັດ ແລະ ເອກະຊົນ ຢ່າງຖືກຕ້ອງ ແລະ ທັນກຳນົດເວລາ;
- ສືບຕໍ່ປັບປຸງ ແລະ ຍົກສູງປະສິດທິພາບ ແລະ ຄຸນນະພາບຂອງ "ຈຸດບໍລິການປະຕູດຽວ" ຂອງການບໍລິການວຽກງານຍຸຕິທຳໃຫ້ປະຊາຊົນ ໃຫ້ວ່ອງໄວ ແລະ ສາມາດຕິດຕາມໄດ້ງ່າຍດາຍ;
- ສືບຕໍ່ປັບປຸງ ແລະ ສ້າງຕັ້ງອົງການປະຕິບັດຄຳຕັດສິນຂອງສານໃຫ້ໄດ້ 5 ກອງ;
- ສ້າງ ແລະ ປັບປຸງຫຼັກສູດການເຝິກອົບຮົມ, ບຳລຸງຍົກລະດັບສ້າງພະນັກງານກົດໝາຍຂອງຂະແໜງການໃຫ້ໄດ້ລະດັບ ຕາມຂັ້ນ ແລະ ຊັ້ນ ຕາມການກຳນົດໄວ້ໃນກົດໝາຍ, ໃນນີ້ ສ້າງ ແລະ ປັບປຸງຫຼັກສູດເຝິກອົບຮົມກົດໝາຍ 3 ເດືອນ, 45 ວັນ ໃຫ້ແທດເໝາະກັບການພັດທະນາເສດຖະກິດ-ສັງຄົມ ແລະ ຄວາມຮຽກຮ້ອງຕ້ອງການ;
- ປັບປຸງ ແລະ ສ້າງຫຼັກສູດການຮຽນ-ການສອນກົດໝາຍທຸກຊັ້ນ (ຊັ້ນສູງ, ປະລິນຍາຕີ, ປະລິນຍາໂທ) ໃນທຸກຂະແໜງກົດໝາຍ ໃຫ້ໜັກແໜ້ນ ແລະ ສອດຄ່ອງກັບກັບການພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ; ບຳລຸງ ແລະ ກໍ່ສ້າງບຸກຄະລາກອນຄູກົດໝາຍໃນລະດັບປະລິນຍາຕີ ໃຫ້ໄດ້ 15 ຄົນ , ປະລິນຍາໂທ 5 ຄົນ ແລະ ປະລິນຍາເອກກົດໝາຍ 2 ຄົນ, ສ້າງນັກກົດໝາຍປະລິນຍາໂທ ໃຫ້ໄດ້ 30ຄົນ/ປີ;
- ເປັນໃຈກາງການປະສານງານກັບພາກສ່ວນທີ່ກ່ຽວຂ້ອງໃນການດຳເນີນຄະດີຕາມຂະບວນຍຸຕິທຳ ເພື່ອເຮັດໃຫ້ກົນ ໄກປະສານງານ ໄດ້ຮັບການຈັດຕັ້ງປະຕິບັດໃຫ້ສອດຄ່ອງ, ກົມກ່ຽວ ແລະ ມີຄວາມເປັນເອກະພາບ.

2) ວຽກງານສານປະຊາຊົນ

- ສ້າງຄວາມເຊື່ອຖືໃຫ້ປະຊາຊົນມີຕໍ່ ສານປະຊາຊົນ ໂດຍການໂຄສະນາ ສິດ ແລະ ພາລະບົດບາດ ສານປະຊາຊົນ, ກົດໝາຍກ່ຽວກັບສານປະຊາຊົນ, ພື້ນຖານໂຄງລ່າງ ສິ່ງອຳນວຍຄວາມສະດວກ ໃນການດຳເນີນຄະດີ, ສຳນັກງານບ່ອນເຮັດວຽກ, ວັດຖຸອຸປະກອນຮັບໃຊ້ວິຊາສະເພາະ, ພະຫະນະຮັບໃຊ້.
- ສ້າງພະນັກງານໃນຂົງເຂດຕຸລາການ ໃຫ້ມີຄຸນທາດການເມືອງທີ່ໜັກແໜ້ນ, ມີຈັນຍາບັນ-ຈັນຍາທຳ, ມີຄວາມຊຳນິຊຳນານ ໃນວິຊາສະເພາະ ຢ່າງເປັນມືອາຊີບ.
- ປັບປຸງ ນິຕິກຳລຸ່ມກົດໝາຍ.
- ການຄຸ້ມຄອງບໍລິຫານສານ, ບໍລິຫານຄະດີ ທັນເປັນທັນສະໄໝ(ກ່ຽວກັບຂໍ້ມູນຂ່າວສານ ແລະ ການຕ້ານສໍ້ລາດບັງຫຼວງແນວໃດ).
- ສືບຕໍ່ປັບປຸງອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານໃຫ້ເປັນລະບົບ, ໜັກແໜ້ນ ແລະ ເຂັ້ມແຂງ, ສາມາດປະຕິບັດພາລະບົດບາດ, ໜ້າທີ່ ໄດ້ຢ່າງມີປະສິດທິຜົນ.
- ສ້າງຄວາມເຂັ້ມແຂງໃນການພົວພັນຮ່ວມມືກັບຕ່າງປະເທດ(ທັງພາກພື້ນ ແລະ ສາກົນ). ເອົາວຽກງານຮ່ວມມືສາກົນເປັນວຽກໜຶ່ງໂຄສະນາວຽກງານຕຸລາການ ສປປ ລາວ.
- ສ້າງຄວາມເປັນເອກະລາດຂອງສານໃນການຕັດສິນຄະດີ.
- ການສົ່ງເສີມບົດບາດ ຍິງ-ຊາຍ ຕິດພັນກັບຄຳໝັ້ນສັນຍາ ຕໍ່ວຽກງານສາກົນ.

3) ວຽກງານອົງການໄອຍະການປະຊາຊົນ
   - ປັບປຸງລະບົບກົງຈັກ, ການຈັດຕັ້ງອົງການໄອຍະການປະຊາຊົນຢູ່ເຂດ, ເມືອງ, ນະຄອນ, ເທດສະບານ ໃຫ້ສົມຄູ່ກັບສະພາບການ ແລະ ເງື່ອນໄຂໃໝ່ ໃຫ້ສາມາດປະຕິບັດພາລະບົດບາດຂອງຕົນຢ່າງເຕັມສ່ວນ ເຂົ້າໃນການດຳເນີນການຕິດຕາມ, ກວດກາການປະຕິບັດກົດໝາຍ ແລະ ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ແລະ ການແກ້ໄຂຄະດີຕາມຂະບວນການຍຸຕິທຳຢ່າງຄົບຖ້ວນ, ພາວະວິໄສ ແລະ ຖືກຕ້ອງຕາມກົດໝາຍ.
   - ເພີ່ມທະວີບົດບາດໃນການກວດກາການປະຕິບັດໜ້າທີ່ຂອງພະນັກງານໄອຍະການໃນການດຳເນີນຄະດີຕາມຂະບວນຍຸຕິທຳ ແລະ ແກ້ໄຂຜົນການກວດກາໃຫ້ຖືກຕ້ອງ ແລະ ຮັບປະກັນຄວາມເປັນຈິງ ແລະ ມີຄວາມຍຸຕິທຳໃນສັງຄົມ.
   - ປັບປຸງກົນໄກການປະສານງານລະຫວ່າງບັນດາເຈົ້າໜ້າທີ່ສືບສວນ-ສອບສວນ ກໍ່ຄືຕຳຫຼວດ, ໄອຍະການ, ສານ, ຂະແໜງຍຸຕິທຳ ແລະ ອົງການກວດກາແຫ່ງລັດ ໃຫ້ກົມກຽວ, ໂລ່ງລ່ຽນ ແລະ ເຄື່ອນໄຫວຢ່າງມີປະສິດທິພາບ ບົນພື້ນຖານແນວທາງ, ແຜນນະໂຍບາຍຂອງພັກ, ລັດຖະທຳມະນູນ ແລະ ກົດໝາຍ ເພື່ອຮັບປະກັນຄວາມເປັນທຳ ແລະ ເຮັດໃຫ້ການດຳເນີນຄະດີສິ້ນສຸດຕາມຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຕາມກົດໝາຍ;
   - ປັບປຸງ, ກໍ່ສ້າງພື້ນຖານໂຄງລ່າງ ໃນລະບົບອົງການໄອຍະການປະຊາຊົນ. ອົງການໄອຍະການທະຫານ ແລະ ປັບປຸງພື້ນຖານວັດຖຸເຕັກນິກ-ເຕັກໂນໂລຊີ, ມີລະບົບຖານຂໍ້ມູນໃຫ້ມີອັນທັນສະໄໝສູ່ລະດັບໃໝ່.

4) ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ
   - ສຸມໃສ່ສ້າງ ແລະ ປັບປຸງກຳລັງປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ ໃນທຸກລະດັບ ໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ, ມີຄວາມຊື່ສັດ, ຈົ່ງຮັກພັກດີຕໍ່ພັກ-ລັດ, ປະເທດຊາດ ແລະ ປະຊາຊົນ, ເປັນກຳລັງປະກອບອາວຸດປະຊາຊົນທີ່ມີທາດແທ້ປະຕິວັດ, ມີລະບຽບວິໄນເຂັ້ມງວດ ແລະ ມີແບບແຜນທັນສະໄໝ ທາງດ້ານການຈັດຕັ້ງ, ກຳລັງພົນ, ພາຫານະອຸປະກອນຄົບຖ້ວນ.
   - ສືບຕໍ່ພັດທະນາພື້ນຖານປ້ອງກັນຊາດ-ປ້ອງກັນຄວາມສະຫງົບໃຫ້ເຂັ້ມແຂງ, ສືບຕໍ່ຫັນລົງກໍ່ສ້າງຮາກຖານການເມືອງ, ສ້າງທ່າສະໜາມ ກປຊ-ປກສ ທີ່ວປວງຊົນຮອບດ້ານຢ່າງແຂງແຮງ; ສົມທົບແໜ້ນກັບທຸກພາກສ່ວນທີ່ກ່ຽວຂ້ອງປະຕິບັດວຽກງານ 3ສ້າງ ຕາມ 4 ເນື້ອໃນ ແລະ 4 ຄາດໝາຍ ຕິດພັນກັບການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ດີຂຶ້ນ, ສ້າງຄວາມເປັນເຈົ້າຕົນເອງຮອບດ້ານຂອງອຳນາດການປົກຄອງ ແລະ ຊຸມຊົນໃຫ້ຫຼາຍຂຶ້ນ;

- ເປັນເຈົ້າການຕອບຕ້ານ, ສະກັດກັ້ນ ແລະ ແກ້ໄຂໜໍ່ແໜງປັດໄຈຄວາມບໍ່ສະຫງົບທີ່ຈະພາໃຫ້ກະທົບຕໍ່ຄວາມໝັ້ນຄົງທາງດ້ານການເມືອງ, ເສດຖະກິດ ແລະ ວັດທະນະທຳສັງຄົມ, ຄວາມບໍ່ເປັນລະບຽບຮຽບຮ້ອຍ ເປັນຕົ້ນ ຢາເສບຕິດ, ອາຊະຍາກຳທຸກຮູບແບບ, ການຄ້າມະນຸດ ແລະ ອື່ນໆ;
- ສືບຕໍ່ສ້າງຂີດຄວາມສາມາດ ໃຫ້ກຳລັງ ປກຊ-ປກສ ໃຫ້ສູງຂຶ້ນ ໃນການຮັບປະກັນສະຖຽນລະພາບດ້ານການເມືອງ, ມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ການກະກຽມຄວາມພ້ອມປະຕິບັດໜ້າທີ່ ໃນການຊ່ວຍເຫຼືອປະຊາຊົນ ເພື່ອກອບກູ້ຊີວິດ ແລະ ຊັບສິນ ໃນກໍລະນີເກີດໄພພິບັດຕ່າງໆ.

5) ວຽກງານການຕ້ານການຄ້າມະນຸດ:
- ເພີ່ມທະວີການຈັດຕັ້ງປະຕິບັດກົດໝາຍ, ການປະສານງານ-ແລກປ່ຽນຂໍ້ມູນທີ່ພົວພັນກັບການຄ້າມະນຸດຢູ່ພາຍໃນ ແລະ ຕ່າງປະເທດ ໃຫ້ເປັນລະບົບ, ການກຳນົດຕົວຜູ້ຖືກເຄາະຮ້າຍຢ່າງວ່ອງໄວ ແລະ ຊັດເຈນ, ນຳເອົາຜູ້ກະທຳຜິດມາລົງໂທດຢ່າງເຂັ້ມງວດ;
- ໂຄສະນາປູກຈິດສຳນຶກດ້ວຍຫຼາຍຮູບແບບ ໂດຍສະເພາະຜ່ານສື່ສັງຄົມອອນລາຍຮູບແບບຕ່າງໆ ໃຫ້ທົ່ວສັງຄົມໂດຍສະເພາະແມ່ຍິງ, ເດັກນ້ອຍ, ກຸ່ມສ່ຽງຮັບຮູ້ຜົນຮ້າຍ, ຜົນກະທົບຂອງການຄ້າມະນຸດ ມີສະຕິປ້ອງກັນຕົວເອງ ແລະ ເປັນເຈົ້າການເຂົ້າຮ່ວມໃນວຽກງານຕ້ານການຄ້າມະນຸດ;
- ຊຸກຍູ້, ສົ່ງເສີມການປົກປ້ອງຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ກຸ່ມສ່ຽງຈາກການຄ້າມະນຸດ, ສົ່ງເສີມ ການສຶກສາຮ່ຳຮຽນ-ຝຶກອົບຮົມວິຊາຊີບ, ການພັດທະນາສີມືແຮງງານ ແລະ ການຄຸ້ມຄອງແຮງງານ ເພື່ອບໍ່ໃຫ້ຕົກເປັນ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.
- ສ້າງແລະ ປັບປຸງແຜນງານແຫ່ງຊາດ ວ່າດ້ວຍການຕ້ານການຄ້າມະນຸດ ແລະ ບັນດານິຕິກຳທີ່ກ່ຽວຂ້ອງໃຫ້ມີຄວາມສອດຄ່ອງ ແລະ ມີຄວາມຄົບຖ້ວນ.
- ສົ່ງເສີມການຮ່ວມມື ສອງຝ່າຍ ແລະ ຫຼາຍຝ່າຍໃນລະດັບສາກົນ ແລະ ພາກພື້ນ ເພື່ອຮ່ວມມືໃນການຈັດຕັ້ງວຽກງານຕ້ານການຄ້າມະນຸດ.

6) ວຽກງານກວດສອບ-ກວດກາແຫ່ງລັດ
- ປັບປຸງອົງການກວດສອບແຫ່ງລັດໃຫ້ເຂັ້ມແຂງທາງດ້ານການຈັດຕັ້ງ ແລະ ພະນັກງານ, ມີຄວາມໜັກແໜ້ນດ້ານການເມືອງ ແລະ ແນວຄິດ. ສ້າງນັກກວດສອບໃຫ້ມີຄວາມຊື່ສັດ, ບໍລິສຸດ, ໂປ່ງໃສ ແລະ ເຂັ້ມງວດ; ສ້າງນັກກວດສອບຂັ້ນ 1 ແລະ ຂັ້ນ 2 ໃຫ້ໄດ້ສົມສັດສ່ວນຂອງພະນັກງານ.
- ຍູ້ແຮງການກວດສອບ ການຈັດຕັ້ງປະຕິບັດແນວທາງ ແລະ ນະໂຍບາຍຂອງພັກ-ລັດ ໂດຍສະເພາະການກວດສອບຫົວຂໍ້ສະເພາະ ລົງເລິກການກວດສອບຜົນການຈັດຕັ້ງປະຕິບັດ.
- ສຸມໃສ່ການສ້າງນິຕິກຳ, ຊຸກຍູ້ ແລະ ຕິດຕາມການແກ້ໄຂຜົນກວດສອບ ໃຫ້ເປັນລະບົບຄົບຖ້ວນ ແລະ ຮັດກຸມ ເຮັດໃຫ້ການແກ້ໄຂຜົນກວດສອບມີຄຸນນະພາບ.

DRAFT

# ພາກທີ 3:
# ມາດຕະການ, ນະໂຍບາຍ
# ແລະ ກົນໄກຈັດຕັ້ງປະຕິບັດແຜນ
# ພັດທະນາເສດຖະກິດ-ສັງຄົມແຫ່ງ
# ຊາດ 5 ປີ ຄັ້ງທີ X (2026-2030)

DRAFT

## I. ມາດຕະການ ແລະ ນະໂຍບາຍ

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ (2026-2030) ມີປະສິດທິພາບ, ປະສິດທິຜົນ ແລະ ມີຜົນສຳເລັດຕາມແຜນການທີ່ວາງໄວ້ ບັນດາຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ຈະຕ້ອງໄດ້ສຸມໃສ່ຈັດຕັ້ງຜັນຂະຫຍາຍ 6 ເປົ້າໝາຍໃຫຍ່ ທີ່ກຳນົດໄວ້ໃຫ້ເປັນແຜນພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນຕົນ ໂດຍຜັນຂະຫຍາຍເປົ້າໝາຍ, ຄາດໝາຍ, ວຽກງານຈຸດສຸມ ເປັນແຜນງານ, ໂຄງການລະອຽດຕື່ມອີກ; ພ້ອມຊຸດຄົ້ນຊອກຫາແຫຼ່ງທຶນຕ່າງໆມາຈັດຕັ້ງປະຕິບັດ ແລະ ມີນະໂຍບາຍສົ່ງເສີມພິເສດໃນການສ້າງໂຄງລ່າງພື້ນຖານທາງດ້ານເສດຖະກິດ-ສັງຄົມຢ່າງມີຈຸດສຸມ; ນອກນັ້ນ, ຍັງຈະຕ້ອງໄດ້ສຸມໃສ່ຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ມາດຕະການຈຳນວນໜຶ່ງ ຄື:

### 1. ການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ

1) ຊຸກຍູ້ທຸກພາກສ່ວນເສດຖະກິດ ເຂົ້າຮ່ວມຂະບວນການຜະລິດ ແລະ ບໍລິການຕາມທ່າແຮງບົ່ມຊ້ອນຂອງຊາດ, ຂອງທ້ອງຖິ່ນ ຢ່າງມີຄວາມຮັບຜິດຊອບ, ເປັນຂະບວນກວ້າງຂວາງ ແລະ ເລິກເຊິ່ງເຖິງຖອງ, ທັງເປັນການຟື້ນຟູເສດຖະກິດຢ່າງຕັ້ງໜ້າ ເພື່ອໃຫ້ເສດຖະກິດມີການເຕີບໂຕຢ່າງມີຄຸນນະພາບ ສາມາດສ້າງລາຍຮັບເພີ່ມຂຶ້ນຕາມທ່າແຮງບົ່ມຊ້ອນ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ.
2) ຊຸກຍູ້, ສົ່ງເສີມ ແລະ ຄຸ້ມຄອງການລົງທຶນໃນຂະແໜງການເສດຖະກິດປາຍແຫຼມທີ່ເປັນທ່າແຮງຂອງຊາດ ແລະ ຂອງທ້ອງຖິ່ນເພື່ອຍູ້ແຮງການຜະລິດ ແລະ ການບໍລິການພາຍໃນ ຢ່າງມີຈຸດສຸມ ຕາມທ່າແຮງຂອງແຕ່ລະທ້ອງຖິ່ນ ໃຫ້ມີຄວາມເຂັ້ມແຂງ ດ້ວຍການສົ່ງເສີມການນຳໃຊ້ຜະລິດຕະພັນລາວ ແລະ ເພື່ອການສົ່ງອອກ ເພື່ອຫຼຸດຜ່ອນລະດັບການຂາດດຸນກັບຕ່າງປະເທດ.
3) ຮັບປະກັນໃຫ້ເສດຖະກິດມະຫາພາກມີຄວາມໝັ້ນທ່ຽງ ເພື່ອເປັນພື້ນຖານທີ່ໜັກແໜ້ນໃຫ້ແກ່ການຊຸກຍູ້ເສດຖະກິດໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງຕາມທິດສີຂຽວ ແລະ ຍືນຍົງ;
4) ສືບຕໍ່ປະຕິຮູບ ລະບົບການເງິນ-ງົບປະມານຂອງລັດ ຢ່າງແຂງແຮງ ແລະ ຮັດກຸມ ດ້ວຍການສຳຫຼວດ, ເກັບກຳ, ສ້າງຖານຂໍ້ມູນໃຫ້ຖືກຕ້ອງຊັດເຈນ, ປັບປຸງລະບົບການເກັບທຸກລາຍຮັບງົບປະມານຕາມກົດໝາຍກຳນົດໃຫ້ຄົບຖ້ວນ, ຄຸ້ມຄອງລາຍຮັບ-ລາຍຈ່າຍງົບປະມານດ້ວຍເຄື່ອງມືທັນສະໄໝ, ປະຕິບັດມາດຕະການນຳໃຊ້ລະບົບບັນຊີຢ່າງເປັນເອກະພາບ; ສຸມໃສ່ປະກາດໃຊ້ ແລະ ປະຕິບັດກົດໝາຍວ່າດ້ວຍອາກອນສະບັບປັບປຸງ, ຂະຫຍາຍຖານລາຍຮັບໃໝ່ຢ່າງຕັ້ງໜ້າ ເຊັ່ນ: ອາກອນຊັບສິນຢູ່ເຂດຕົວເມືອງໃຫຍ່, ອາກອນລາຍໄດ້, ອາກອນສິ່ງແວດລ້ອມ, ນຳໃຊ້ເຄື່ອງມືທັນສະໄໝ ໃນການເກັບອາກອນ ແລະ ຄ່າທຳນຽມຕ່າງໆຕາມດ່ານຊາຍແດນ ແລະ ເຂດເສດຖະກິດທີ່ສຳຄັນ, ດຳລັດວ່າດ້ວຍການຄຸ້ມຄອງພາສີສຳລັບວິສາຫະກິດທີ່ມີຄວາມສ່ຽງດ້ານການປ່ຽນແປງລາຄາ ແລະ ອື່ນໆ. ພ້ອມກັນນີ້, ຂະຫຍາຍຖານລາຍຮັບດ້ວຍການສົ່ງເສີມໃຫ້ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSME) ໃຫ້ສາມາດຂັບເຄື່ອນ ແນໃສ່ຊຸກຍູ້ສົ່ງເສີມໃຫ້ບັນດາຜູ້ປະກອບການ ແລະ ຫົວໜ່ວຍທຸລະກິດເຂົ້າມາມີສ່ວນຮ່ວມໃນລະບົບເສດຖະກິດຫຼາຍຂຶ້ນ ເພື່ອສ້າງລາຍຮັບເພີ່ມຂຶ້ນ ແລະ ສ້າງສະພາບຄ່ອງດ້ານການເງິນ-ງົບປະມານ.
   - ປັບປຸງກົດໝາຍວ່າດ້ວຍພາສີອາກອນ, ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, ອາກອນລາຍຮັບວິສາຫະກິດ, ອາກອນຊັບພະຍາກອນ, ອາກອນນຳເຂົ້າ-ສົ່ງອອກ,... ເພື່ອຊຸກຍູ້ສົ່ງເສີມວິສາຫະກິດລົງທຶນ ແລະ ດຳເນີນທຸລະກິດໃນຂົງເຂດທີ່ລັດຊຸກຍູ້ ເພື່ອປະກອບສ່ວນໃນການສ້າງພື້ນຖານເສດຖະກິດເອກະລາດເປັນເຈົ້າຕົນເອງ, ສົ່ງເສີມອຸດສາຫະກາປຸງແຕ່ງ,... ເພື່ອເສີມຂະຫຍາຍທ່າແຮງພື້ນຖານເສດຖະກິດລາວ, ຈຳກັດການຂຸດຄົ້ນ ແລະ ສົ່ງອອກແຮ່ດິບທີ່ຍັງບໍ່ທັນປຸງແຕ່ງ, ຈາກັດການນາເຂົ້າສິນຄ້າຟູມເຟືອຍ, ຜະລິດຕະພັນທີ່ພາຍໃນສາມາດຕອບສະໜອງຄວາມຕ້ອງການ.
   - ປັບປຸງກົດໝາຍວ່າດ້ວຍການຄຸ້ມຄອງພາສີ ເພື່ອຊຸກຍູ້ການປະຕິຮູບ, ຫັນເປັນທັນສະໄໝ, ການຫັນເປັນດີຈິຕອນຂອງການຄຸ້ມຄອງພາສີອາກອນ, ການປະກອບສ່ວນສະກັດກັ້ນການສູນເສຍລາຍຮັບ, ຫຼຸດຜ່ອນການໃຊ້ຈ່າຍໃນການປະຕິບັດຕາມກົດໝາຍພາສີອາກອນ, ສ້າງສະພາບແວດລ້ອມການດາເນີນທຸລະກິດທີ່ໂປ່ງໃສ ແລະ ສະດວກໃຫ້ແກ່ປະຊາຊົນ ແລະ ວິສາຫະກິດ.

DRAFT

5) ປະກາດໃຊ້ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບປັບປຸງ, ປະກາດໃຊ້ກົດໝາຍວ່າດ້ວຍການຄຸ້ມຄອງຄັງເງິນຂອງລັດສະບັບໃໝ່, ກົດໝາຍວ່າດ້ວຍການບັນຊີ ແລະ ກວດສອບ,... ແນ່ໃສ່ເພີ່ມທະວີການແບ່ງຂັ້ນຄຸ້ມຄອງການເງິນ ແລະ ເພີ່ມທະວີຄວາມຮັບຜິດຊອບ, ສິດອ□ນາດ ແລະ ສ້າງແຮງຈູງໃຈໃຫ້ອົງການປົກຄອງແຂວງ ແລະ ນະຄອນຫຼວງວຽງຈັນ ໃນຂົງເຂດປະຕິຮູບສະພາບແວດລ້ອມການລົງທຶນ, ດຶງດູດທຸກຄົນ, ວິສາຫະກິດລົງທຶນພັດທະນາການຜະລິດທຸລະກິດ; ຍູ້ແຮງການຫັນເປັນສັງຄົມເພື່ອດຶງດູດແຫຼ່ງກ□າລັງໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະຂົງເຂດສຶກສາ-ບໍລຸງ-ວິຊາຊີບ-ສາທາລະນະສຸກ, ວັດທະນະທຳ, ກິລາກາຍະກຳ,..., ພັດທະນາພື້ນຖານໂຄງລ່າງເສດຖະກິດ-ສັງຄົມ ຢູ່ທ້ອງຖິ່ນ, ແກ້ໄຂບັນຫາຊີວິດການເປັນຢູ່ຂອງປະຊາຊົນຢູ່ທ້ອງຖິ່ນຢ່າງມີປະສິດທິຜົນ.
6) ຄົ້ນຄ້ວາ ແລະ ປະກາດໃຊ້ກົດໝາຍວ່າດ້ວຍການປະຢັດ ແລະ ຕ້ານການຟູມເຟືອຍ ລາຍຈ່າຍງົບປະມານຂອງລັດ, ລາຍຈ່າຍໃນຂົງເຂດວິສາຫະກິດ,ເອກະຊົນ, ຊຸມຊົນ ເພື່ອສົ່ງເສີມການປະຢັດລາຍຈ່າຍ ແລະ ເພື່ອເພີ່ມການປະຢັດຂອງສັງຄົມໃຫ້ແກ່ການລົງທຶນພັດທະນາປະເທດ.
7) ຄົ້ນຄ້ວາກົດໝາຍວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ ສະບັບປັບປຸງ ແນ່ໃສ່ການກຳນົດຄວາມເຂັ້ມງວດ, ສອດຄ່ອງກັບສະພາບຕົວຈິງລະບົບມາດຕະຖານ, ລະບອບອຸປະກອນ, ເນື້ອທີ່ດິນຂອງເຮືອນ, ຫ້ອງການ, ສະຖານການສຶກສາ, ບ□າລຸງສ້າງ ແລະ ສາທາລະນະສຸກ, ພາຫະນະອຸປະກອນຂອງລັດ ແລະ ຫົວໜ່ວຍວິຊາການໃນຂອບເຂດທົ່ວປະເທດ; ກ□ານົດລະບົບການຄຸ້ມຄອງການລົງທຶນ ແລະ ການຈັດຊື້ຢ່າງເຂັ້ມງວດ, ກຳນົດຢ່າງຄົບຖ້ວນລະບອບການຄຸ້ມຄອງນຳໃຊ້, ການຊ□າລະຊະສາງ..., ປະກາດໃຊ້ບັນດາກົດບັງຄັບເພື່ອເກັບຄືນ, ແກ້ໄຂບັນດາກໍລະນີການນ□າໃຊ້ບໍ່ຖືກເປົ້າໝາຍ, ການນ□າໃຊ້ຊັບສິນສ່ວນຕົວ....
8) ອອກນະໂຍບາຍຄຸ້ມຄອງການເງິນສຳລັບທີ່ດິນ ຕາມທິດ: ເພີ່ມການລົງທຶນງົບປະມານເພື່ອຊຸກຍູ້ວຽກງານ ສຳຫຼວດທໍລະນີສາດ, ວຽກງານກວດກາການເງິນ, ຕາດິນ ເພື່ອສຳເລັດໂດຍໄວວຽກງານການມອບໃບຢັ້ງຢືນສິດນຳໃຊ້ ທີ່ດິນ, ສິດເຊົ່າທີ່ດິນໃຫ້ປະຊາຊົນ, ວິສາຫະກິດ ເພື່ອສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການລົງທຶນການຜະລິດ ທຸລະກິດ, ໂດຍຈັດສັນລາຍຮັບໃຫ້ໄດ້ປະມານ 20-30% ຈາກການໃຫ້ເຊົ່າ, ໂອນສິດນຳໃຊ້ທີ່ດິນ; ພາສີນຳໃຊ້ທີ່ດິນ ທີ່ບໍ່ແມ່ນກະສິກຳເພື່ອປະຕິບັດວຽກງານທີ່ສຳຄັນນີ້.
9) ສ້າງກົດໝາຍປະຕິຮູບລັດວິສາຫະກິດ; ປັບປຸງໃໝ່ກົນໄກຄຸ້ມຄອງທຶນລັດຢູ່ວິສາຫະກິດ, ດ້ວຍເນື້ອໃນຕົ້ນຕໍ:
   + ປະຕິບັດຍຸດທະສາດໂຄງປະກອບທຶນຂອງລັດຢູ່ບັນດາວິສາຫະກິດຄືນໃໝ່, ສຸມທຶນລັດໃຫ້ວິສາຫະກິດດຳເນີນຜະລິດທຸລະກິດໃນບັນດາຂະແໜງຫຼັກແຫຼ່ງຂອງພື້ນຖານເສດຖະກິດ (ພະລັງງານ, ສາຍສົ່ງໄຟຟ້າແຫ່ງຊາດ, ໂທລະຄົມ, ທະນາຄານສິນເຊື່ອການຄ້າ...) ແລະ ໃນຂະນະດຽວກັນກໍ່ໄດ້ຖອນທຶນຈາກຂະແໜງການທີ່ລັດບໍ່ຈຳເປັນຕ້ອງຖື.
   + ສ້າງກົດໝາຍວ່າດ້ວຍການຄຸ້ມຄອງ, ນຳໃຊ້ທຶນ, ຊັບສິນຂອງລັດຢູ່ວິສາຫະກິດ ເພື່ອປະກອບສ່ວນເຂົ້າໃນການປະຕິຮູບລັດວິສາຫະກິດ, ມອບສິດເປັນເຈົ້າການໃຫ້ລັດວິສາຫະກິດໃນການຄຸ້ມຄອງ ແລະ ຕັດສິນຍຸດທະສາດ, ແຜນການຜະລິດທຸລະກິດ, ການຄຸ້ມຄອງທຶນ; ແນໃສ່ຍົກສູງປະສິດທິຜົນການຜະລິດທຸລະກິດ, ຄວາມສາມາດແຂ່ງຂັນ ຂອງລັດວິສາຫະກິດ; ພ້ອມກັນນັ້ນ, ເພີ່ມທະວີຄວາມໂປ່ງໃສ, ກົນໄກກວດກາ, ຕິດຕາມລະບຽບວິໄນສຳລັບລັດວິສາຫະກິດ.
   + ປັບປຸງໃໝ່ວິທີການຄຸ້ມຄອງລັດວິສາຫະກິດ.
   + ແຍກພາລະບົດບາດການຄຸ້ມຄອງ, ບໍລິຫານວິສາຫະກິດ ແລະ ພາລະບົດບາດການຖືກຳມະສິດອອກຢ່າງຈະແຈ້ງ. ເພີ່ມທະວີຄວາມໂປ່ງໃສ, ຄວາມຮັບຜິດຊອບອະທິບາຍຈະແຈ້ງຂອງລັດວິສາຫະກິດ; ວິສາຫະກິດທັງຫມົດທີ່ມີທຶນລັດ>51% ຕ້ອງໄດ້ຮັບການກວດເອກະລາດຮອບດ້ານ (ບໍ່ມີການຍົກເວັ້ນ) ປະຈຳປີໂດຍບໍລິສັດກວດສອບທີ່ມີຊື່ສຽງ, ສາກົນຮັບຮູ້; ບົດລາຍງານການກວດສອບຖືກເຜີຍແຜ່ຢ່າງເປີດເຜີຍ ແລະ ໂປ່ງໃສ.
   + ສ້າງລະບຽບກົດໝາຍກ່ຽວກັບການຫັນເປັນຫຸ້ນສ່ວນລັດວິສາຫະກິດ ເພື່ອລະດົມທຶນຂອງສັງຄົມ, ປະຊາຊົນໃຫ້ລັດວິສາຫະກິດ; ເສີມຂະຫຍາຍການແຂ່ງຂັນລັດວິສາຫະກິດເຄື່ອນໄຫວໃນຂະແໜງເສດຖະກິດທີ່ສຳຄັນ.

DRAFT

+ ຫັນເປັນຫຸ້ນສ່ວນລັດວິສາຫະກິດຕາມຫຼັກການ: ຮັກສາ (ບໍ່ຫຼຸດ) ລະດັບທຶນຂອງລັດ; ປະຕິບັດການຫັນເປັນຫຸ້ນສ່ວນຕາມທິດລະດົມທຶນປະຊາຊົນ, ສັງຄົມໃຫ້ແກ່ວິສາຫະກິດດ້ວຍລະດັບການຖືຄອງລັດເປັນເວລາຍາວນານບໍ່ຕໍ່າກວ່າ 65%; ດ້ວຍຮູບການປະຕິບັດການປະເມີນລາຄາຄືນໃໝ່ຢ່າງຄົບຖ້ວນ, ຖືກຕ້ອງວ່າດ້ວຍການເງິນຂອງວິສາຫະກິດ, ມູນຄ່າຂອງວິສາຫະກິດ, ມູນຄ່າຍີ່ຫໍ້, ມູນຄ່າຜົນປະໂຫຍດທີ່ດິນ; ສຸມໃສ່ຄັດເລືອກນັກລົງທຶນຍຸດທະສາດ.... ດຳເນີນ ການກວດສອບໂດຍບໍລິສັດກວດສອບເອກະລາດທີ່ໄດ້ຮັບການຍອມຮັບຈາກສາກົນ; ບົນພື້ນຖານນັ້ນ, ປະຕິບັດການລົງ ທະບຽນ IPO ໃນຕະຫຼາດຫຼັກຊັບລາວເພື່ອລະດົມທຶນເພີ່ມຕື່ມ 30-35% ໃຫ້ແກ່ນັກລົງທຶນພາຍໃນປະເທດຕາມຮູບ ແບບແຂ່ງຂັນກ່ຽວກັບລາຄາຢ່າງເປີດເຜີຍ ແລະ ໂປ່ງໃສ.

10) ໂຄງການລົງທຶນໂດຍກົງຈາກຕ່າງປະເທດທັງໝົດ (FDI) ໃນຮູບແບບ BOT, ເມື່ອໝົດອາຍຸການດຳເນີນທຸລະກິດຕາມສັນຍາ BOT ກັບບັນດາອົງການຂອງລັດຄື: ປະຕິບັດການເກັບຄືນບໍ່ມີຄ່າຕອບແທນ, ບໍ່ຕໍ່ອາຍຸຜະລິດທຸລະກິດສຳລັບໂຄງການໃດໆເພື່ອຮັບປະກັນຜົນປະໂຫຍດຂອງປະເທດ. ດຳເນີນການປະເມີນຄືນມູນຄ່າທັງຫມົດຂອງຊັບສິນທີ່ຖືກມອບໃຫ້; ດຳເນີນການກວດສອບລັດ ຫຼື ການກວດສອບເອກະລາດໂດຍບໍລິສັດກວດສອບທີ່ມີຊື່ສຽງ ສາກົນ; ຫັນເປັນລັດວິສາຫະກິດ 100%, ພ້ອມກັນດຳເນີນ IPO ໃນຕະຫຼາດຫຼັກຊັບ ແລະ ຂາຍທຶນປະມານ 40-45% ພາຍໃນ 3-5 ປີ. ລາຍຮັບສ່ວນໜຶ່ງຈະເກັບເຂົ້າງົບປະມານຂອງລັດເພື່ອຊໍາລະໜີ້ສາທາລະນະ; ສ່ວນໜຶ່ງແມ່ນໄດ້ລົງທຶນ ຄືນໃໝ່ໃຫ້ລັດວິສາຫະກິດໃນບັນດາຂະແໜງການທີ່ສຳຄັນຂອງພື້ນຖານເສດຖະກິດ.

11) ຄົ້ນຄວ້າປັບປຸງ, ເພີ່ມເຕີມກົດໝາຍວ່າດ້ວຍຫຼັກຊັບໂດຍໄວ; ປັ່ງນໃໝ່ບັນດາລະບຽບກົດໝາຍທີ່ກ່ຽວຂ້ອງ (ກົດໝາຍວິສາຫະກິດ; ກົດໝາຍວ່າດ້ວຍການຄຸ້ມຄອງທຶນ ແລະ ຊັບສິນຂອງລັດຢູ່ວິສາຫະກິດ, ກົດໝາຍວ່າດ້ວຍບັນຊີ, ກົດໝາຍວ່າດ້ວຍການກວດກາ...) ເພື່ອພັດທະນາຕະຫຼາດຫຼັກຊັບໃນປັດຈຸບັນ. ດ້ວຍເປົ້າໝາຍຮອດປີ 2030 ຍອດລວມການຫັນເປັນທຶນຂອງຕະຫຼາດຫຼັກຊັບບັນລຸ 30-50% GDP ເພື່ອລະດົມທຶນຈາກສັງຄົມ ແລະ ປະຊາຊົນເພື່ອລົງທຶນພັດທະນາ[2]

12) ອອກດຳລັດຄຸ້ມຄອງເງິນກູ້ຂອງລັດຖະບານເພື່ອລົງທຶນພັດທະນາຢ່າງເຂັ້ມງວດ ແລະ ມີປະສິດທິຜົນ; ໂດຍສະເພາະແມ່ນເງິນກູ້ຈາກຕ່າງປະເທດໃຫ້ລັດວິສາຫະກິດປ່ອຍກູ້ຄືນ ຫຼື ຄໍ້າປະກັນຂອງລັດຖະບານໃຫ້ລັດວິສາຫະກິດ ກູ້ຢືມເງິນກູ້ຕ່າງປະເທດເພື່ອລົງທຶນເຂົ້າໃນໂຄງການຜະລິດທຸລະກິດ. ປັ່ງນໃໝ່ຂະບວນການທັງໝົດ, ກຳນົດຄວາມຮັບ ຜິດຊອບຂອງພາກສ່ວນທີ່ກ່ຽວຂ້ອງຢ່າງຈະແຈ້ງ (ອົງການເຈລະຈາສັນຍາ; ອົງການຄຸ້ມຄອງໜີ້ ສາທາລະນະ; ສະຖາບັນການເງິນສິນເຊື່ອທີ່ ລັດມອບສິດຄຸ້ມຄອງເງິນກູ້, ຫົວໜ່ວຍຈັດຕັ້ງເສດຖະກິດນຳໃຊ້ເງິນກູ້...) ເພື່ອຄຸ້ມຄອງຢ່າງເຂັ້ມງວດ: ເພດານໜີ້ສິນສາທາລະນະເພື່ອຮັບປະກັນຄວາມປອດໄພໃຫ້ແກ່ລະບົບການເງິນແຫ່ງຊາດ; ປະສິດທິຜົນຂອງການຜະລິດທຸລະກິດ; ຄຸ້ມຄອງ, ຮັບປະກັນຄວາມສາມາດຊໍາລະໜີ້ຢ່າງຄົບຖ້ວນຕາມກຳນົດເວລາໃຫ້ລັດທັງເງິນຕົ້ນ ແລະ ດອກເບ້ຍ; ປ້ອງກັນທຸກຄວາມສ່ຽງດ້ານສິນເຊື່ອ. ສ້າງກອງທຶນສະສົມຊໍາລະໜີ້ເພື່ອຮັບປະກັນຢ່າງຄົບຖ້ວນບັນດາພັນທະໃນການຊໍາລະເງິນຕົ້ນ ແລະ ດອກເບ້ຍໃຫ້ຕ່າງປະເທດ; ບັນດາພັນທະໜີ້ສຳຮອງ...

13) ສືບຕໍ່ປັບປຸງລາຍຈ່າຍງົບປະມານໃຫ້ມີຄວາມຮັດກຸມ, ປະຢັດມັດທະຍັດ ແລະ ຫຼີກລ່ຽງການໃຊ້ຈ່າຍທີ່ບໍ່ຈຳເປັນ ແລະ ສິ້ນເປືອງ; ຄຸ້ມຄອງການຈັດຊື້-ຈັດຈ້າງຕາມກົດໝາຍ ແລະ ປະຕິບັດວິໄນແຜນການ ແລະ ການເງິນຢ່າງເຄັ່ງຂັດ.

14) ບັນດາກະຊວງ, ອົງການລັດທຽບເທົ່າຂັ້ນສູງການ ແລະ ອົງການປົກຄອງທ້ອງຖິ່ນເປັນເຈົ້າການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XII ຂອງສູນກາງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ເປັນແຜນງານ-ໂຄງການ ລະອຽດ ຕິດພັນກັບເປົ້າໝາຍການພັດທະນາຂອງແຕ່ລະພາກສ່ວນ ຢ່າງສອດຄ່ອງ ແລະ ກົມກຽວກັນ.

15) ຄຸ້ມຄອງໜີ້ສາທາລະນະຕາມແຜນຍຸດທະສາດການຄຸ້ມຄອງໜີ້ສາທາລະນະ ຢ່າງຮັດກຸມ, ຈັດລຽງບູລິມະສິດແນໃສ່ການກູ້ຢືມທີ່ມີເງື່ອນໄຂຜ່ອນຜັນຕໍ່າ; ຄຸ້ມຄອງໜີ້ໂຄງການລົງທຶນຂອງລັດຢ່າງຮັດກຸມ ດ້ວຍການເພີ່ມທະວີຄຸນນະພາບຂອງໂຄງການລົງທຶນລັດ ເພື່ອຮັບປະກັນບໍ່ໃຫ້ສະພາບໜີ້ສິນກົດດັນຕໍ່ເສດຖະກິດມະຫາພາກ ກໍຄືລະບົບການເງິນ-ເງິນຕາຕ່າງປະເທດ.

DRAFT

16) ດຳເນີນນະໂຍບາຍເງິນຕາ ໃຫ້ມີຄວາມເປັນເອກະລາດ ແລະ ໃຫ້ມີເປົ້າໝາຍທີ່ຈະແຈ້ງຂຶ້ນກວ່າເກົ່າ ແລະ ດຳເນີນນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ ມີການຄຸ້ມຄອງຂອງລັດ, ປະຢັດການໃຊ້ເງິນຕາຕ່າງປະເທດ, ກຳນົດນະໂຍບາຍເພື່ອຈູງໃຈຕໍ່ຜູ້ສົ່ງອອກໃຫ້ນຳເງິນມາຜ່ານລະບົບທະນາຄານ; ເພີ່ມທະວີບັນດາມາດຕະການຄວບຄຸ້ມການຊຳລະເງິນຂ້າມຊາຍແດນ, ຍົກສູງຄວາມສາມາດໃນການຄຸ້ມຄອງການເງິນຂອງລະບົບສະຖາບັນສິນເຊື່ອ ແລະ ຮັບປະກັນການດຳເນີນງານທີ່ປອດໄພ ແລະ ມີປະສິດທິຜົນ, ຄຸ້ມຄອງອັດຕາສ່ວນໜີ້ບໍ່ເກີດດອກອອກຜົນ (NPL) ຂອງລະບົບທະນາຄານ ໃຫ້ຢູ່ໃນລະດັບບໍ່ເກີນ 3% ຂອງຍອດສິນເຊື່ອທັງໝົດ ແລະ ປະຕິບັດມາດຕະການເກັບກູ້ໜີ້ສິນຢ່າງເດັ່ງຄັດ ແລະ ມີປະສິດທິຜົນສູງ.

17) ສືບຕໍ່ນຳໃຊ້ໜ່ວຍງານເສດຖະກິດມະຫາພາກ ແລະ ໜ່ວຍງານແກ້ໄຂໜີ້ສິນຂັ້ນສູນກາງ ໃຫ້ເຄື່ອນໄຫວຢ່າງເປັນປົກກະຕິ ເພື່ອຕິດຕາມສະພາບເສດຖະກິດມະຫາພາກ, ກຳນົດນະໂຍບາຍ ແລະ ມາດຕະການແກ້ໄຂໃຫ້ສອດຄ່ອງ ແລະ ທັນເວລາ.

18) ສົ່ງເສີມສັງຄົມຫັນມາຊົມໃຊ້ຜະລິດຕະພັນລາວ ຫຼື ''ລາວຜະລິດ ລາວໃຊ້'' ເພື່ອເປັນການສົ່ງເສີມການຜະລິດ ແລະ ທັງເປັນການປະຢັດເງິນຕາຕ່າງປະເທດ.

19) ສ້າງສະພາບແວດລ້ອມທີ່ເອື້ອອຳນວຍເພື່ອດຶງດູດການລົງທຶນພາກເອກະຊົນ ດ້ວຍສິ່ງຈູງໃຈຫຼາຍຮູບແບບ ຄຽງຄູ່ກັບການປັບປຸງກົນໄກໃຫ້ທັນສະໄໝ, ວ່ອງໄວ ແລະ ບັງຄັບໃຊ້ກົດໝາຍ ແລະລະບຽບການຢ່າງມີປະສິດທິພາບ; ສ້າງກົນໄກໃນການລະດົມທຶນພາຍໃນ ເພື່ອເປັນທຶນສະສົມໃນການກໍ່ສ້າງໂຄງລ່າງສາທາລະນະທີ່ຈຳເປັນ. ລະດົມພາກເອກະຊົນພາຍໃນ ແລະ ຕ່າງປະເທດ ດ້ວຍຮູບແບບ PPP ເພື່ອລົງທຶນໃສ່ການກໍ່ສ້າງໂຄງລ່າງພື້ນຖານເພື່ອເຊື່ອມຈອດ-ເຊື່ອມໂຍງເສດຖະກິດ. ການອະນຸມັດການລົງທຶນໃນການຂຸດຄົ້ນ ແລະ ສຳປະທານແຮ່ທາດ ຕ້ອງໄດ້ມີການປະເມີນຜົນກະທົບທາງດ້ານເສດຖະກິດ, ສິ່ງແວດລ້ອມ ແລະ ສັງຄົມ ກ່ອນດຳເນີນຈັດຕັ້ງປະຕິບັດ ເພື່ອຫຼີກລ້ຽງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ.

20) ຫັນເປັນອຸດສາຫະກຳ ແລະ ທັນສະໄໝ ສົມທົບກັບການນຳໃຊ້ ແລະ ພັດທະນາວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ຫຼື ການປະດິດສ້າງໃໝ່ໃນຂະແໜງກະສິກຳ-ປ່າໄມ້, ຂະແໜງອຸດສາຫະກຳ ແລະ ການຄ້າ, ຂະແໜງພະລັງງານ ແລະ ບໍ່ແຮ່, ຂະແໜງເຕັກໂນໂລຊີ ແລະ ການສື່ສານ, ຂະແໜງໂຍທາທິການ ແລະຂົນສົ່ງ, ຂະແໜງການທ່ອງທ່ຽວ, ຂະແໜງວິທະຍາສາດ, ຂະແໜງການເງິນ, ຂະແໜງທະນາຄານ, ຂະແໜງການລົງທຶນ ເພື່ອຍົກສູງປະສິດທິພາບ ແລະ ປະສິດທິຜົນ ຂອງການຜະລິດ ແລະ ບໍລິການ, ການເອື້ອອຳນວຍຄວາມສະດວກດ້ານການລົງທຶນ, ການຄ້າ ແລະ ການທ່ອງທ່ຽວ.

21) ສ້າງໃຫ້ໄດ້ສຳພັນເສດຖະກິດລະຫວ່າງຂະແໜງການ ແລະ ທ້ອງຖິ່ນດ້ວຍກັນ ເປັນຕົ້ນ: ວິສາຫະກິດກ່ຽວກັບການທ່ອງທ່ຽວຄົບວົງຈອນ, ວິສາຫະກິດປຸງແຕ່ງຜະລິດຕະພັນກະສິກຳ, ຫັດຖະກຳ, ຜະລິດຕະພັນການທ່ອງທ່ຽວ ແລະ ອື່ນໆ.

## 2. ການພັດທະນາຊັບພະຍາກອນມະນຸດ

1) ເພີ່ມທະວີການລົງທຶນເຂົ້າໃນວຽກງານພັດທະນາຊັບພະຍາກອນມະນຸດ ນັບຕັ້ງແຕ່ການສຶກສາກ່ອນໄວຮຽນ ຈົນໄປຮອດການສຶກສາວິຊາຊີບ, ອາຊີວະສຶກສາ ແລະ ຂັ້ນມະຫາວິທະຍາໄລ ເພື່ອພັດທະນາລະບົບການຮຽນການສອນ ໃຫ້ມີຄຸນນະພາບສູງຂຶ້ນ, ປັບປຸງຫຼັກສູດການຮຽນ-ການສອນໃຫ້ມີຄວາມແທດເໝາະທຽບທັນກັບພາກພື້ນ ແລະ ສາກົນ ເພື່ອກະກຽມຊັບພະຍາກອນມະນຸດ ໃຫ້ສາມາດແຂ່ງຂັນໄດ້ໃນຍຸກອຸດສະຫະກຳ 4.0 ແລະ ຍຸກຂອງການພັດທະນາດີຈິຕອນ.

2) ວາງແຜນການນຳໃຊ້ທ່າແຮງຈາກຊັບພະຍາກອນໜຸ່ມນ້ອຍ ດ້ວຍການຄົ້ນຄວ້າ ແລະ ວິໄຈກ່ຽວກັບຂະແໜງທີ່ເປັນບູລິມະສິດ ເພື່ອສຸມການລົງທຶນໃສ່ຂະແໜງນັ້ນ ເປັນຕົ້ນ ຫຼັກສູດທີ່ສົ່ງເສີມໃຫ້ນັກຮຽນມີທັກສະສະເພາະດ້ານຕ່າງໆ ເປັນຕົ້ນ ປັບປຸງຄຸນນະພາບການສຶກສາ, ສົ່ງເສີມໃຫ້ນັກຮຽນມີທັກສະໃນການແກ້ໄຂບັນຫາ, ທັກສະໃນການເປັນຜູ້ນຳ, ທັກສະໃນການບໍລິຫານເວລາ ແລະ ມີຫົວຄິດປະດິດສ້າງ ເຊິ່ງຈະເປັນທັກສະທີ່ຕ້ອງການຫຼາຍໃນອະນາຄົດ ແລະ ແກ້ໄຂການປະລະການຮຽນ, ປັບປຸງການເຂົ້າເຖິງການບໍລິການສາທາລະນະສຸກ, ການສ້າງວຽກເຮັດງານທຳ ແລະ ການສ້າງກຳລັງແຮງງານໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ.

DRAFT

3) ຫັນປ່ຽນຈິນຕະນາການຂອງຊັບພະຍາກອນມະນຸດ ໂດຍສະເພາະແມ່ນ ສະຕິຕໍ່ການຕັ້ງປະຕິບັດໜ້າທີ່ດ້ວຍຄວາມຮັບຜິດຊອບສູງ, ຮັກການຄົ້ນຄວ້າຮໍ່າຮຽນ, ມີຄວາມອົດທົນ ແລະ ມີຄວາມບຸກບືນໃນການຮຽນຮູ້ ແລະ ປະຕິບັດໜ້າທີ່ວຽກງານ ແລະ ອື່ນໆ ເພື່ອປະກອບສ່ວນການພັດທະນາເສດຖະກິດ-ສັງຄົມຢ່າງເຕັມສ່ວນ.
4) ຊຸກຍູ້ສົ່ງເສີມໃຫ້ທຸກຄົນມີໂພຊະນາການທີ່ດີ ເປັນຕົ້ນ ການກິນອາຫານຖືກຫຼັກໂພຊະນາການ, ເຂົ້າເຖິງແຫຼ່ງສະບຽງອາຫານທີ່ພຽງພໍ, ນໍ້າດື່ມສະອາດ, ສຸຂາພິບານທີ່ມີຄຸນນະພາບ; ຫຼຸດຜ່ອນອັດຕາການຕາຍຂອງແມ່ ແລະ ເດັກລຸ່ມ 5 ປີ ແລະ ໃຫ້ທຸກຄົນມີອາຍຸຍືນຍາວ.
5) ວາງແຜນໃນໄລຍະຍາວ ໂດຍອີງໃສ່ແນວໂນ້ມຂອງປະຊາກອນ ເພື່ອສຸມໃສ່ພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບ ເພື່ອກະກຽມຄວາມພ້ອມຮັບມືໃນເວລາທີ່ສັງຄົມ ສປປ ລາວ ກ້າວເປັນສັງຄົມທີ່ ກໍາລັງຊະລາ ໃນປີ 2030 ແລະ ສັງຄົມອາຍຸສູງ ໃນປີ 2052.
6) ສ້າງຄວາມສາມາດທາງດ້ານພາສາຕ່າງປະເທດ ໃຫ້ໄວໜຸ່ມຮຸ່ນຕໍ່ໄປໃຫ້ສາມາດມີຄວາມຮູ້ພາສາຕ່າງປະເທດໃນລະດັບທີ່ດີ ເພື່ອພັດທະນາຕົນເອງ ແລະ ປະກອບສ່ວນພັດທະນາປະເທດຊາດໃຫ້ມີປະສິດທິຜົນສູງ.
7) ເພີ່ມວິຊາຮຽນທີ່ຕິດພັນກັບສິ່ງແວດລ້ອມ ດ້ວຍການຮຽນ ແລະ ປະຕິບັດຕົວຈິງ ແນໃສ່ສ້າງຈິດສໍານຶກໃຫ້ນັກຮຽນ ແລະ ນັກສຶກສາໃຫ້ມີຄວາມຜູກພັນກັບທໍາມະຊາດແຕ່ໄວເດັກ ແລະ ເປັນເຈົ້າການໃນການປົກປັກຮັກສາທໍາມະຊາດ ແລະ ສະພາບແວດລ້ອມ.
8) ສ້າງຄວາມສົມດູນລະຫວ່າງຄວາມຕ້ອງການ ແລະ ການສ້າງຄວາມອາດສາມາດໃນການສະໜອງກໍາລັງແຮງງານເຂົ້າໃນການພັດທະນາເສດຖະກິດ-ສັງຄົມ.
9) ການແກ້ໄຂບັນຫາແຮງງານ (1) ກໍານົດນະໂຍບາຍ, ນິຕິກໍາ, ວິທີການ ແລະ ກົນໄກ ຮ່ວມກັບ ພາກລັດ ແລະ ພາກທຸລະກິດທີ່ກ່ຽວຂ້ອງ ໃນການສະໜອງຂໍ້ມູນຄວາມຕ້ອງການແຮງງານທີ່ລະອຽດ ແລະ ຊັດເຈນ ໃນຕະຫຼາດແຮງງານພາຍໃນປະເທດ ເພື່ອເປັນຂໍ້ມູນໃນການວາງແຜນການດັດສົມຄວາມຕ້ອງການ ແລະ ການສະໜອງແຮງງານ ໃຫ້ພຽງພໍກັບຄວາມຕ້ອງການພາຍໃນປະເທດ, ໃນການກໍານົດເງິນເດືອນ ຫຼື ຄ່າແຮງງານ, ສະຫວັດດີການ, ເງື່ອນໄຂ ແລະ ສະພາບແວດລ້ອມໃນການເຮັດວຽກຂອງແຮງງານ ໃຫ້ສອດຄ່ອງ ແລະ ເໝາະກັບສະພາບຄ່າຄອງຊີບ, ຄວາມສາມາດ, ປະສົບການ ແລະ ໜ້າວຽກຕົວຈິງ ຂອງຕໍາແໜ່ງງານ ຊຶ່ງສາມາດຊ່ວຍຊຸກຍູ້ການຂັບເຄື່ອນການພັດທະນາເສດຖະກິດ-ສັງຄົມ ຢູ່ພາຍໃນປະເທດ; (2) ຊຸກຍູ້ ແລະ ສົ່ງເສີມ ບັນດາຂະແໜງການທີ່ກ່ຽວຂ້ອງກັບການສ້າງ ແລະ ພັດທະນາສີມືແຮງງານ ໃຫ້ສອດຄ່ອງກັບຕະຫຼາດແຮງງານພາຍໃນໂດຍການນໍາໃຊ້ຂໍ້ມູນຄວາມຕ້ອງການແຮງງານພາຍໃນປະເທດ ແລະ ສາກົນ ເຂົ້າໃນການສ້າງ ແລະ ພັດທະນາລະບົບການຮຽນ-ການສອນ ແລະ ການພັດທະນາສີມືແຮງງານ ໃຫ້ມີປະສິດທິພາບ; (3) ການພັດທະນາລະບົບກົນໄກການບໍລິຫານຕະຫຼາດແຮງງານ ໃຫ້ມີປະສິດທິພາບ ນໍາໄປສູ່ຄວາມສົມດຸ່ນດ້ານແຮງງານ; (4) ການຊຸກຍູ້, ສົ່ງເສີມ ແລະ ສ້າງແຮງຈູງໃຈ ໃຫ້ຜູ້ຢູ່ນອກກໍາລັງແຮງງານໃຫ້ເຂົ້າສູ່ຕະຫຼາດແຮງງານ; ປະສານສົມທົບ ແລະ ຮ່ວມມືກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອຊຸກຍູ້ ແລະ ສົ່ງເສີມໃຫ້ຜູ້ອອກແຮງງານລາວໄປເຮັດວຽກຢູ່ຕ່າງປະເທດແບບຖືກຕ້ອງຕາມກົດໝາຍແນໃສ່ໃຫ້ຜູ້ອອກແຮງງານໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດ ໂດຍຊອບທໍາ ບົນພື້ນຖານກົດໝາຍ ແລະ ລະບຽບການຂອງປະເທດສົ່ງ ແລະ ປະເທດຮັບ.

## 3. ສົ່ງເສີມຊີວິດການເປັນຢູ່ທີ່ດີ ແລະ ສັງຄົມທີ່ໜ້າຢູ່

1) ເພີ່ມທະວີການລະດົມການລົງທຶນຈາກທຸກພາກສ່ວນເສດຖະກິດເຂົ້າໃສ່ການພັດທະນາຊົນນະບົດ ແລະ ແກ້ໄຂ ຄວາມທຸກຍາກຂອງປະຊາຊົນ ຢູ່ເຂດຫ່າງໄກສອກຫຼີກ, ເຂດທີ່ໝັ້ນການປະຕິວັດ ແລະ ເຂດຊາຍແດນ ໃຫ້ເຂົ້າສູ່ລ່ວງເລິກ ແລະ ມີໝາກຜົນສູງ.
2) ສົ່ງເສີມ ແລະ ພັດທະນາໄວໜຸ່ມ, ຄວາມກ້າວໜ້າຂອງແມ່ຍິງ, ຄວາມບໍ່ສະເໝີພາບຍິງ-ຊາຍ ແລະ ຫຼຸດຜ່ອນຄວາມແຕກໂຕນລະຫວ່າງຊົນນະບົດ ແລະ ຕົວເມືອງ, ຄົນຮັ່ງ ແລະ ຄົນທຸກ ເຊັ່ນ ຄວາມບໍ່ເທົ່າທຽມທາງດ້ານການກະຈາຍລາຍໄດ້ ແລະ ການຊົມໃຊ້ໃຫ້ຫຼຸດລົງ (Gini Coefficient), ສັດສ່ວນແຮງງານຂອງເພດຍິງຕໍ່ເພດຊາຍໃຫ້ມີການເພີ່ມຂຶ້ນ.
3) ສືບຕໍ່ແກ້ໄຂບັນຫາລູກລະເບີດທີ່ບໍ່ທັນແຕກ ແນໃສ່ຫຼຸດຜ່ອນຜູ້ທີ່ໄດ້ຮັບເຄາະຮ້າຍ, ປ້ອງກັນອຸບັດຕິເຫດໃນອະນາຄົດ ແລະ ປະຊາຊົນດໍາລົງຊີວິດດ້ວຍຄວາມປອດໄພ.

DRAFT

4) ເພີ່ມທະວີການປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ແລະ ຍຸດທະສາດແຫ່ງຊາດເພື່ອສົ່ງເສີມວຽກເຮັດງານທໍາໃນຊົນນະບົດ ໃຫ້ມີປະສິດທິຜົນສູງ.
5) ປົກປ້ອງສິດ ແລະ ສະຫວັດດີການຂອງເດັກນ້ອຍ, ຫຼຸດຜ່ອນ ແລະ ຕໍ່ຕ້ານການທາລຸນເດັກໃນທຸກຮູບແບບ, ສົ່ງເສີມໃຫ້ພວກເຂົາໃຫ້ມີສ່ວນຮ່ວມ ແລະ ໃຫ້ມີສິດມີສຽງຫຼາຍຂຶ້ນ ແລະ ປະກອບສ່ວນເຂົ້າໃນຂະບວນການພັດທະນາຫຼາຍຂຶ້ນ.
6) ປະຕິບັດນະໂຍບາຍເບິ່ງແຍງຜູ້ສູງອາຍຸ, ຜູ້ເສຍອົງຄະ ແລະ ສົ່ງເສີມໃຫ້ພວກເຂົາສາມາດມີສ່ວນຮ່ວມໃນສັງຄົມໄດ້ຫຼາຍຂຶ້ນ, ສ້າງໂຄງລ່າງພື້ນຖານທີ່ຮັບໃຊ້ຜູ້ພິການ; ຊ່ວຍເຫຼືອສັງຄົມ ແລະ ດໍາເນີນການກາຍະພາບບໍາບັດຜູ້ພິການ.
7) ພັດທະນາລະບົບປົກປ້ອງສັງຄົມໃຫ້ມີປະສິດທິຜົນເພື່ອສະໜອງສະຫວັດດີການສັງຄົມທີ່ເທົ່າທຽມກັນ ແລະ ສາມາດຮັບປະກັນແຕ່ລະໄລຍະຂອງຊີວິດແຕ່ມື້ເກີດຈົນຮອດມື້ເສຍຊີວິດ.
8) ເພີ່ມຄວາມປອດໄພຢູ່ໃນສັງຄົມ ດ້ວຍການສົ່ງເສີມການຂັບຂີ່ສັນຈອນທີ່ມີຄວາມປອດໄພ ແລະ ເປັນລະບຽບຮຽບຮ້ອຍ, ເພີ່ມສາຍດ່ວນ, ກ້ອງວົງຈອນປິດ ແລະ ລະບົບການແກ້ໄຂບັນຫາສຸກເສີນ.
9) ເພີ່ມທະວີການປະສານງານ ລະຫວ່າງຂະແໜງກະສິກໍາ-ປ່າໄມ້, ອຸດສາຫະກໍາ ແລະ ການຄ້າ ແລະ ພາກສ່ວນກ່ຽວຂ້ອງຂອງຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ເປັນລະບົບ ແລະ ມີຄວາມສອດຄ່ອງກົມກຽວກັນ.
10) ສະໜອງທາງດ້ານເຕັກນິກ-ວິຊາການ ແລະ ງົບປະມານໃຫ້ພຽງພໍ ໃນການຊຸກຍູ້ຕິດຕາມການປູກ, ການລ້ຽງ, ສ້າງກຸ່ມການຜະລິດ ແລະ ສະຫະກອນຕາມທ່າແຮງໄດ້ປຽບຂອງແຕ່ລະທ້ອງຖິ່ນ, ທັງມີການຊຸກຍູ້ຕິດຕາມຢ່າງເປັນລະບົບ.

### 4. ປົກປັກຮັກສາສິ່ງແວດລ້ອມ ແລະ ຫຼຸດຜ່ອນຄວາມສ່ຽງຈາກຜົນກະທົບຕ່າງໆ

1) ຜັນຂະຫຍາຍວຽກງານຈຸດສຸມທັນມາເປັນແຜນດໍາເນີນງານຂອງຕົນ ແລະ ດໍາເນີນການຈັດຕັ້ງປະຕິບັດແຕ່ຫົວທີ ພ້ອມທັງປະຕິບັດລະບົບການຕິດຕາມ ກວດກາ ແລະ ຖອດຖອນບົດຮຽນເປັນແຕ່ລະໄລຍະ;
2) ປູກຈິດສໍານຶກໃຫ້ທຸກຄົນໃນສັງຄົມເປັນເຈົ້າການ ປົກປັກສິ່ງແວດລ້ອມ ແລະ ນໍາໃຊ້ຊັບພະຍາກອນທໍາມະຊາດແບບຍືນຍົງ.
3) ເພີ່ມທະວີບົດບາດການຄຸ້ມຄອງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ປະຕິບັດກົນໄກ, ນິຕິກໍາ ຢ່າງມີປະສິດຕິພາບ, ປະກອບສ່ວນຊຸກຍູ້ການພັດທະນາຕາມທິດສີຂຽວ ແລະ ຍືນຍົງ.
4) ເພີ່ມທະວີການທັນເປັນທັນສະໄໝ ໃນການລາຍງານຂໍ້ມູນສະພາບດິນຟ້າອາກາດ, ອຸຕຸນິຍົມ, ອຸທົກກະສາດ, ແຜ່ນດິນໄຫວ ພ້ອມທັງແຈ້ງເຕືອນໄພລ່ວງຫນ້າກ່ຽວກັບສະພາບດິນຟ້າອາກາດໃຫ້ມີຄວາມຖືກຕ້ອງ, ຊັດເຈນ, ວ່ອງໄວ ແລະ ທັນກັບສະພາບການເພື່ອຍົກລະດັບຄວາມສາມາດໃນການກຽມພ້ອມຮັບມືເພື່ອກູ້ໄພ, ຫຼຸດຜ່ອນຜົນກະທົບ ແລະ ການຟື້ນຟູຜົນເສຍຫາຍຈາກໄພພິບັດທໍາມະຊາດ ໃຫ້ມີປະສິດທິຜົນ.
5) ສົ່ງເສີມຮູບແບບເສດຖະກິດຮອບວຽນເພື່ອຫຼຸດຜ່ອນການເອື່ອຍອີງການນໍາໃຊ້ຊັບພະຍາກອນທໍາມະຊາດ ແລະ ຫຼຸດຜ່ອນການທໍາລາຍສິ່ງແວດລ້ອມ ເປັນຕົ້ນ: ການຫຼຸດຜ່ອນຂີ້ເຫຍື້ອ ແລະ ສິ່ງເສດເຫຼືອ, ຫຼຸດຜ່ອນມົນລະພິດທາງອາກາດ, ນໍ້າເປື້ອນ, ມີລະບົບການຈັດການ ແລະ ນໍາສິ່ງເສດເຫຼືອກັບມາໃຊ້ຄືນໃໝ່ໃຫ້ຫຼາຍ.
6) ເພີ່ມທະວີການຮ່ວມມືກັບຂະແໜງການກ່ຽວກັບ ການປະຕິບັດການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວຕາມແຜນງານແຫ່ງຊາດການປະກອບສ່ວນການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ. ສົ່ງເສີມການລົງທຶນ ໃນວຽກງານການປັບຕົວ ແລະ ຫຼຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດ;
7) ປະຕິບັດແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແລະ ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງຢ່າງເຂັ້ມງວດ ພ້ອມທັງ ສືບຕໍ່ຄວາມພະຍາຍາມໃນການເພີ່ມເນື້ອທີ່ປ່າໄມ້, ຟື້ນຟູປ່າ ແລະ ຊີວະນານາພັນທີ່ມີຄວາມສ່ຽງຈະສູນພັນ;
8) ເພີ່ມທະວີການປະສານງານລະຫວ່າງສູນກາງ ແລະ ທ້ອງຖິ່ນ, ການປະສານງານກັບຂະແໜງການ ແລະ ຮ່ວມມືກັບພາກພື້ນ ແລະ ສາກົນ ເພື່ອຍາດແຍ່ງທຶນ ແລະ ການຊ່ວຍເຫຼືອດ້ານວິຊາການ; ສ້າງເງື່ອນໄຂໃນການເຂົ້າເຖິງກອງທຶນສາກົນດ້ານການປ່ຽນແປງດິນຟ້າອາກາດ ແລະ ກອງທຶນອື່ນໆ ເພື່ອມາສະໜັບສະໜູນການຈັດຕັ້ງປະຕິບັດບັນດາໜ້າວຽກຈຸດສຸມຢ່າງມີປະສິດທິຜົນ
9) ປະຕິບັດພັນທະສາກົນ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງດ້ານສິ່ງແວດລ້ອມຢ່າງເຂັ້ມງວດ.

## 5. ສ້າງໂຄງລ່າງທີ່ມີຄວາມທົນທານ ເພື່ອເຊື່ອມຈອດ-ເຊື່ອມໂຍງໃນທຸກລະດັບ

1) ເພີ່ມທະວີການຮ່ວມມື, ເຊື່ອມໂຍງ ແລະ ເຊື່ອມຈອດຮອບດ້ານຢູ່ພາຍໃນປະເທດ, ກັບພາກພື້ນ ແລະ ສາກົນ ເປັນຕົ້ນການຮ່ວມມືດ້ານການຄ້າ-ການລົງທຶນ ເພື່ອສົ່ງເສີມການຜະລິດ, ການຊົມໃຊ້ພາຍໃນ ແລະ ການສົ່ງອອກ. ເພີ່ມຫົວຄິດປະດິດສ້າງໃນການນໍາເອົາຕະຫຼາດ (ອອນລາຍ) ໄປຫາຜູ້ຜະລິດທີ່ຢູ່ຫ່າງໄກສອກຫຼີກ.
2) ຊຸກຍູ້ສົ່ງເສີມການລົງທຶນທຸກພາກສ່ວນ ໂດຍສະເພາະ ການລົງທຶນຮູບແບບ PPP ເຂົ້າໃສ່ກໍ່ສ້າງຕາໜ່າງເສັ້ນທາງແຫ່ງຊາດ, ທາງລົດໄຟ, ທາງນໍ້າ ແລະ ທາງອາກາດໃຫ້ມີຫຼາຍເສັ້ນຫຼາຍສາຍ ແລະ ມີຄຸນນະພາບ ເພື່ອສົ່ງເສີມການເຊື່ອມຈອດກັບຕະຫຼາດພາກພື້ນ ທີ່ມີຜົນຜະລິດ ແລະ ຕະຫຼາດຂະໜາດໃຫຍ່.
3) ສົ່ງເສີມໂຄງລ່າງຂະແໜງພະລັງງານໃຫ້ມີຄວາມຍືນຍົງ, ຂຸດຄົ້ນທ່າແຮງຂອງຂະແໜງພະລັງງານໃຫ້ສາມາດຕອບສະໜອງຄວາມຕ້ອງການຊົມໃຊ້ພາຍໃນ, ພ້ອມກັນນີ້, ກໍ່ສຶກສາ ແລະ ຂຸດຄົ້ນຂະແໜງອຸດສະຫະກໍາອື່ນທີ່ມີຄວາມຕ້ອງການໃຊ້ພະລັງງານຫຼາຍ ເພື່ອຫຼີກລ້ຽງການຜະລິດພະລັງງານທີ່ເກີນຄວາມຈໍາເປັນການນໍາໃຊ້ ຕົວຢ່າງ: ຍານພາຫະນະໄຟຟ້າ ເພື່ອຫຼຸດຜ່ອນການໃຊ້ນໍ້າມັນ ແລະ ສົ່ງເສີມການໃຊ້ໄຟຟ້າທົດແທນໃຫ້ຫຼາຍຂຶ້ນ.
4) ເພີ່ມເນື້ອທີ່ຊົນລະປະທານທີ່ສາມາດທໍາການຜະລິດໄດ້ຕະຫຼອດປີໃຫ້ຫຼາຍຂຶ້ນ;
5) ເຊື່ອມສານວຽກງານການວາງແຜນເຄຫາຜັງເມືອງແຕ່ຫົວທີ ເພື່ອພັດທະນານະຄອນ, ຕົວເມືອງ ແລະ ຈັດສັນເຂດທີ່ຢູ່ອາໄສໃນຕົວເມືອງໃຫ້ມີຄວາມສະດວກ ແລະ ທັນສະໄໝ (ລວມທັງການສ້າງເຄຫາສະຖານທີ່ມີຄວາມປອດໄພ, ທົນທານ ແລະ ເຂົ້າເຖິງໄດ້) ເພື່ອຫຼຸດຜ່ອນຄວາມແອອັດຂອງຕົວເມືອງທີ່ເກີດຈາກການເຄື່ອນຍ້າຍປະຊາຊົນຈາກຊົນນະບົດເຂົ້າສູ່ຕົວເມືອງ.
6) ນໍາໃຊ້ເຄື່ອງມື ໄອທີ ທີ່ທັນສະໄໝເຂົ້າມາຊ່ວຍອໍານວຍຄວາມສະດວກໃນການເຂົ້າເຖິງ ແລະ ຄຸ້ມຄອງໂຄງລ່າງບາງປະເພດ ເຊັ່ນ: ແອັບພຼີເຄຊັນມືຖືສໍາລັບຕາຕະລາງການສັນຈອນລົດເມ, ການຈ່າຍທໍານຽມປີ້ລົດເມດ້ວຍມືຖື.
7) ເສີມຂະຫຍາຍ ແລະ ເພີ່ມທະວີການພົວພັນຮ່ວມມືກັບບັນດາປະເທດອາຊຽນ, ປະເທດເພື່ອນມິດໃນໂລກ ແລະ ອົງການຈັດຕັ້ງສາກົນ ຕາມແນວທາງການຕ່າງປະເທດ ເພື່ອສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມື ເພື່ອສ້າງກໍາລັງແຮງໃນການພັດທະນາເສດຖະກິດ-ສັງຄົມ, ເປັນເຈົ້າການໃນການຈັດຕັ້ງປະຕິບັດ, ຕິດຕາມ ແລະ ປະເມີນຜົນ ການຊ່ວຍເຫຼືອໃຫ້ມີປະສິດທິຜົນສູງ.

## 6. ປັບປຸງການຄຸ້ມຄອງບໍລິຫານພາກລັດ

1) ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນ, ຊຸກຍູ້ ແລະ ສ້າງເງື່ອນໄຂໃຫ້ທຸກຄົນໃນທົ່ວສັງຄົມມີສ່ວນຮ່ວມໃນການພັດທະນາ ດ້ວຍການນໍາໃຊ້ສ່ອງທາງອອນລາຍເພື່ອສັງລວມຄວາມຄິດຄວາມເຫັນດ້ວຍຄວາມຮັບຜິດຊອບກ່ຽວກັບການປັບປຸງບໍລິການພາກລັດແບບມີຫົວຄິດປະດິດສ້າງ.
2) ສືບຕໍ່ປັບປຸງ ແລະ ຫຼຸດຜ່ອນຂໍ້ຄົງຄ້າງເພື່ອໃຫ້ລໍາດັບ ດັດຊະນີຄວາມໂປ່ງໃສສາກົນ ຢູ່ໃນລະດັບທີ່ດີຂຶ້ນພາຍໃນປີ 2030.
3) ຫັນເປັນທັນສະໄໝໃນການຄຸ້ມຄອງ ແລະ ບໍລິຫານລັດ, ຄົ້ນຄ້ວາ ແລະ ຈັດສັນທຶນຮອນທີ່ຊັດເຈນ ແລະ ເໝາະສົມສໍາລັບຂະແໜງ ICT ແລະ ການຄົ້ນຄວ້າເພື່ອການ ພັດທະນາ.
4) ຍົກລະດັບຄວາມຮູ້ຄວາມສາມາດຂອງບຸກຄະລາກອນ, ປັບປຸງແນວຄິດຂອງຂະແໜງບໍລິການພາກລັດໃຫ້ເຂົ້າໃຈ ແລະ ມີແນວຄວາມຄິດທີ່ຖືກຕ້ອງກ່ຽວກັບການໃຫ້ບໍລິການຕໍ່ສາທາລະນະຊົນ ເພື່ອເພີ່ມຄວາມເຊື່ອໝັ້ນຂອງສັງຄົມຕໍ່ພາກລັດ.
5) ສຶກສາຄວາມເປັນໄປໄດ້ໃນການນໍາໃຊ້ເຄື່ອງມື ICT ເຂົ້າໃນການດໍາເນີນທຸລະກໍາໃນຫຼາຍຂະແໜງ ເພື່ອເປັນການປະຢັດເວລາ, ມີປະສິດທິພາບສູງ ແລະ ສາມາດຕິດຕາມໄດ້ ເປັນຕົ້ນ ເສຍອາກອນຜ່ານລະບົບທະນາຄານທີ່ມີການຄຸ້ມຄອງທີ່ຮັດກຸມ ແລະ ມີປະສິດທິຜົນສູງ.
6) ປັບປຸງການບໍລິຫານຄຸ້ມຄອງຂອງລັດ ແລະ ຂອດປະສານງານລະຫວ່າງສູນກາງ ແລະ ທ້ອງຖິ່ນໃຫ້ມີປະສິດທິພາບ, ປັບປຸງການບໍລິຫານລັດໃຫ້ມີຄວາມໂປ່ງໃສຫຼາຍຂຶ້ນ ແລະ ສາມາດກວດສອບໄດ້.
7) ສືບຕໍ່ຮ່ວມມືກັບຄູ່ຮ່ວມພັດທະນາໃນການຈັດຕັ້ງຜັນຂະຫຍາຍຖະແຫຼງການວຽງຈັນ ໃນການຊ່ວຍເຫຼືອເພື່ອການພັດທະນາຢ່າງເປັນທາງການໃຫ້ມີຄວາມສອດຄ່ອງກັບບູລິມະສິດແຫ່ງຊາດ.

DRAFT

8) ເພີ່ມທະວີການປະສານສົມທົບລະຫວ່າງ ອົງການປົກຄອງທຸກຂັ້ນ, ສະພາປະຊາຊົນ ແລະ ຂົງເຂດຍຸຕິທຳ ຕາມພາລະບົດບາດ ແລະ ຂອບເຂດສິດຢ່າງສອດຄ່ອງກົມກຽວ.
9) ປູກຈິດສຳນຶກສັງຄົມເຄົາລົບ ແລະ ເປັນເຈົ້າການປະຕິບັດກົດໝາຍ ແລະ ລະບຽບການ ຢ່າງເຄັ່ງຄັດ;
10) ປັບປຸງ, ສ້າງກົດໝາຍ ແລະ ນິຕິກຳໃຫ້ເປັນລະບົບຄົບຊຸດ ເພື່ອເປັນເຄື່ອງມືໃນການຄຸ້ມຄອງບໍລິຫານລັດຢ່າງມີປະສິດທິພາບ.
11) ຍົກສູງຄວາມຮັບຜິດຊອບທາງດ້ານການເມືອງທຸກຂັ້ນ ໃນການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ຂອງຕົນ. ພ້ອມທັງ ເຂັ້ມງວດການກວດກາ ແລະປະຕິບັດກົດໝາຍໃຫ້ມີຄວາມເຂັ້ມແຂງ.
12) ຕ້ານ ແລະ ແກ້ໄຂການສໍ້ລາດບັງຫຼວງໃນທຸກລະດັບ.
13) ປັບປຸງລະບົບຂໍ້ມູນສະຖິຕິ ເພື່ອຮັບໃຊ້ການສ້າງ, ຕິດຕາມ, ປະເມີນຜົນ ແລະ ສະຫຼຸບລາຍງານການຈັດ ຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ພ້ອມທັງ ຮັບປະກັນໃຫ້ມີງົບປະມານໃນການຊຸກຍູ້ ແລະ ຕິດຕາມຢ່າງເປັນລະບົບ.
14) ສືບຕໍ່ຫັນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ເປັນໜ້າທີ່ຂອງທົ່ວປວງຊົນ ຢ່າງແຂງແຮງກວ່າເກົ່າ ເພື່ອຮັກສາສະຖຽນລະພາບດ້ານການເມືອງ, ຮັບປະກັນຄວາມສະຫງົບ ແລະ ຄວາມປອດໄພໃນສັງຄົມ.
15) ບັນດາຂະແໜງການ ແລະ ທ້ອງຖິ່ນ ຕ້ອງເປັນເຈົ້າການໃນການຕິດຕາມ, ກວດກາ, ປະເມີນຜົນ ແລະ ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ X (2026-2030) ຕາມສິດ ໜ້າທີ່ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ.

## II. ກົນໄກການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030)

- ລັດຖະບານອອກດຳລັດຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X(2026-2030), ກະຊວງການເງິນ ອອກບົດແນະນຳດ້ານວິຊາການ ແລະ ເປັນໃຈກາງໃນການປະສານງານກັບ ບັນດາຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນໃນການຈັດຕັ້ງຜັນຂະຫຍາຍໃຫ້ເປັນອັນລະອຽດ, ມີປະສິທິພາບ ແລະ ປະສິດທິຜົນສູງສຸດ.
- ບັນດາລັດຖະມົນຕີ, ເຈົ້າແຂວງ-ເຈົ້າຄອງນະຄອນຫຼວງ ຕ້ອງໄດ້ຍົກສູງຄວາມຮັບຜິດຊອບໃຫ້ຫຼາຍຂຶ້ນ ໂດຍຫັນບັນດາຄາດໝາຍ, ແຜນວຽກຈຸດສຸມໃຫ້ເປັນອັນລະອຽດຕາມພາລະບົດບາດຂອງຕົນ ໃຫ້ສອດຄ່ອງລະຫວ່າງແຜນງານ, ແຜນເງິນ ແລະ ແຜນຄົນ ໂດຍການນຳໃຊ້ກົນໄກການຄຸ້ມຄອງຕາມທິດ 3 ສ້າງ ແຕ່ຂັ້ນສູນກາງ ຫາ ຂັ້ນທ້ອງຖິ່ນຮາກຖານ ເພື່ອໃຫ້ມີຄວາມສະດວກ ແລະ ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີຜົນສຳເລັດ ແລະ ປະສິດທິຜົນສູງ.
- ເພີ່ມທະວີການປະສານງານຢ່າງເປັນເຈົ້າການ ລະຫວ່າງພາກລັດດ້ວຍກັນ (ສາຍຕັ້ງ ແລະ ສາຍຂວາງ), ພາກລັດກັບເອກະຊົນ ແລະ ຄູ່ຮ່ວມພັດທະນາກ່ຽວກັບການຈັດຕັ້ງປະຕິບັດ ແລະ ການຕິດຕາມແຜນພັດທະນາເສດຖະກິດ-ສັງຄົມ.
- ເພີ່ມທະວີກົນໄກການປະສານສົມທົບໃນການກໍ່ສ້າງ, ພັດທະນາ, ຍົກລະດັບ ດ້ານສີມືແຮງງານ ລະຫວ່າງກະຊວງ ສຶກສາທິການ ແລະ ກິລາ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ອົງການກຳມະບານ ກັບສະພາການຄ້າ ແລະ ອຸດສາຫະກຳ ເພື່ອຫັນເຂົ້າສູ່ການຜະລິດ-ທຸລະກິດ, ການຈ້າງງານ, ສ້າງລາຍຮັບໃຫ້ສັງຄົມກໍຄືຕອບສະໜອງໃຫ້ແກ່ຕະຫຼາດ ຢ່າງມີຈຸດສຸມ ແລະ ມີຄຸນນະພາບກວ່າເກົ່າ.
- ເສີມຂະຫຍາຍພາລະບົດບາດຂອງທຸກອົງການຈັດຕັ້ງທັງພາກລັດ ແລະ ເອກະຊົນ, ແນວໂຮມ, ບັນດາອົງການຈັດຕັ້ງມະຫາຊົນ, ປະຊາຊົນ, ບັນດາອົງການຈັດຕັ້ງທາງສັງຄົມ, ພາກທຸລະກິດທັງພາຍໃນ ແລະຕ່າງປະເທດເຂົ້າຮ່ວມໃນການຈັດຕັ້ງຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ມີຜົນສຳເລັດ.
- ກະຊວງການເງິນ ຮ່ວມກັບ ທຸກຂະແໜງການ ແລະ ທ້ອງຖິ່ນ ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດໃນແຕ່ລະໄລຍະຕາມຂອບແຜນການ 5 ປີ ແລະ ລາຍງານສະພາບການຈັດຕັ້ງປະຕິບັດແຜນພັດທະນາໃນແຕ່ລະໄລຍະ ໂດຍການນຳໃຊ້ເຄື່ອງມືໃນການຄຸ້ມຄອງລະບົບຕິດຕາມ ແລະ ປະເມີນຜົນຢ່າງມີ ປະສິດທິພາບ ແລະ ປະສິດທິຜົນ.

DRAFT

## III. ການແບ່ງຄວາມຮັບຜິດຊອບຈຳນວນໜຶ່ງໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ:

1) ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສືບຕໍ່ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ປັບປຸງບັນດາລະບຽບການ, ກົນໄກໃນການດຳເນີນທຸລະກິດ ແລະ ວຽກງານບໍລິການອອກໃບອະນຸຍາດການລົງທຶນ ແລະ ໃບອະນຸຍາດດຳເນີນທຸລະກິດ ຢ່າງມີປະສິດທິຜົນ, ຊຸກຍູ້ ແລະ ດຶງດູດການລົງທຶນຈາກເອກະຊົນພາຍໃນ ແລະ ການລົງທຶນໂດຍກົງຈາກຕ່າງປະເທດ ທີ່ມີຄຸນນະພາບໃຫ້ຫຼາຍຂຶ້ນ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍສົ່ງເສີມການລົງທຶນ ສະບັບປັບປຸງ ປີ 2024, ສືບຕໍ່ສົ່ງເສີມການລົງທຶນເຂົ້າໃນເຂດເສດຖະກິດພິເສດໃຫ້ຫຼາຍ ແລະ ມີຄຸນນະພາບສູງຂຶ້ນ;

2) ກະຊວງການເງິນ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຊຸກຍູ້, ຕິດຕາມ ແລະ ຄຸ້ມຄອງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ໃຫ້ບັນລຸຕາມຄາດໝາຍວາງໄວ້ ແລະ ຄຸ້ມຄອງເສດຖະກິດມະຫາພາກໃຫ້ມີສະຖຽນລະພາບ; ຮີບຮ້ອນຫັນເປັນທັນສະໄໝໃນການຄຸ້ມຄອງການເກັບລາຍຮັບ ແລະ ລາຍຈ່າຍ ໃຫ້ໄວກວ່າເກົ່າ ແລະ ກວ້າງຂວາງ; ປະຕິບັດມາດຕະການໃຫ້ບັນດາຫົວໜ່ວຍທຸລະກິດນຳໃຊ້ລະບົບບັນຊີຢ່າງເປັນເອກະພາບ ແລະ ເຂົ້າຮ່ວມໃນລະບົບການເສຍອາກອນມູນຄ່າເພີ່ມ ດ້ວຍຄວາມເປັນເຈົ້າການ ແລະ ມີຄວາມຮັບຜິດຊອບ ເພື່ອເພີ່ມລາຍຮັບງົບປະມານ; ປັບປຸງລັດວິສາຫະກິດໃຫ້ມີປະສິດທິຜົນ; ຍົກສູງປະສິດທິຜົນການລົງທຶນຂອງລັດ, ປັບປຸງກົນໄກການສ້າງ ແລະ ຄຸ້ມຄອງການລົງທຶນຂອງລັດ; ລະດົມການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ຕາມກົນໄກຂະບວນການໂຕມົນ, ແຜນການຮ່ວມມື ລະຫວ່າງລາວ ແລະ ຄູ່ຮ່ວມພັດທະນາ, ພ້ອມທັງ ໃຫ້ນຳໃຊ້ທຶນ ODA ຢ່າງມີປະສິດທິຜົນ.

3) ທະນາຄານແຫ່ງ ສປປ ລາວ ສືບຕໍ່ຄຸ້ມຄອງຢ່າງເຂັ້ມງວດ ເພື່ອຮັກສາສະຖຽນລະພາບເງິນຕາໃຫ້ມີຄວາມໝັ້ນທ່ຽງ ຕາມຂອບແຜນທີ່ກຳນົດໄວ້, ຊຸກຍູ້ ແລະ ສ້າງເງື່ອນໄຂອຳນວຍດ້ານແຫຼ່ງທຶນ ເພື່ອສົ່ງເສີມການຜະລິດ ແລະ ການບໍລິການຢ່າງມີປະສິດທິຜົນ ແລະ ສອດຄ່ອງກັບເປົ້າໝາຍບູລິມະສິດຂອງລັດຖະບານ, ສ້າງຄວາມເຂັ້ມແຂງໃຫ້ພື້ນຖານການຜະລິດພາຍໃນ ແລະ ການສ້າງລາຍຮັບໃຫ້ປະເທດ; ເພີ່ມທະວີການຄຸ້ມຄອງທະນາຄານທຸລະກິດ, ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ໃຫ້ເຄື່ອນໄຫວຕາມກົດໝາຍ-ລະບຽບການຢ່າງເຄັ່ງຄັດ;

4) ກະຊວງອຸດສາຫະກຳ ແລະ ການຄ້າ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຊອກຫາຕະຫຼາດ ແລະ ກຳນົດລາຍການສິນຄ້າ ຕາມຄວາມຕ້ອງການຕະຫຼາດພາຍໃນ ແລະ ການສົ່ງອອກສິນຄ້າ ເພື່ອເປັນບ່ອນອີງໃຫ້ພາກສ່ວນກ່ຽວຂ້ອງສ້າງແຜນການຜະລິດໃຫ້ພຽງພໍກັບຄວາມຕ້ອງການ; ກຳນົດ, ຕິດຕາມ ແລະ ຄຸ້ມຄອງ ລາຄາສິນຄ້າຢ່າງເປັນລະບົບ ແລະ ມີປະສິດທິຜົນ ເປັນຕົ້ນແມ່ນສິນຄ້າອຸປະໂພກ ແລະ ບໍລິໂພກ ເພື່ອຮັບປະກັນໃຫ້ຄ່າຄອງຊີບຫຼຸດລົງ;

5) ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການຊຸກຍູ້ຂະ ແໜງ ການຜະລິດເພື່ອຊົມໃຊ້ພາຍໃນ, ທົດແທນການນຳເຂົ້າ ແລະ ການຜະລິດເພື່ອສົ່ງອອກ ໂດຍສະເພາະການຜະລິດບັນດາສິນຄ້າທີ່ມີຕະຫຼາດຮອງຮັບໃຫ້ໄດ້ມາດຕະຖານ ເປັນຕົ້ນ ໂຄຕ້າທີ່ໄດ້ຮັບ ຈາກ ສປ ຈີນ, ຫວຽດນາມ, ໄທ ແລະ ປະເທດອື່ນໆ ເຊັ່ນ: ເຂົ້າ, ສັດລ້ຽງ, ພືດ ແລະ ອື່ນໆ ເພື່ອວາງແຜນການຜະລິດ ຫຼື ໂຄງການຜະລິດໃໝ່ ເພື່ອໃຫ້ສາມາດຕອບສະໜອງຄວາມຕ້ອງການຂອງຕະຫຼາດ; ເພີ່ມທະວີ ແລະ ເປັນເຈົ້າການຜັນຂະຫຍາຍນິຕິກຳຕ່າງໆ ໃນການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ໃຫ້ມີປະສິດທິຜົນສູງຂຶ້ນ; ຕິດ ຕາມກວດກາຢ່າງເປັນລະບົບ ພ້ອມທັງເຝົ້າລະວັງ ແລະ ລາຍງານ-ແຈ້ງເຕືອນ ສະພາບການກ່ຽວກັບການປ່ຽນແປງດິນຟ້າອາກາດ ເພື່ອໃຫ້ສັງຄົມ ແລະ ປະຊາຊົນຮັບຮູ້ຂໍ້ມູນຂ່າວສານ ແລະ ກະກຽມຮັບມືຜົນກະທົບ ຈາກໄພພິບັດທຳມະຊາດຕ່າງໆ ຢ່າງທັນການ;

6) ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ເອົາໃຈໃສ່ໂຄສະນາ ແລະ ຊຸກຍູ້ສົ່ງເສີມການທ່ອງທ່ຽວ (ນັກທ່ອງທ່ຽວຕ່າງປະເທດ ແລະ ນັກທ່ອງທ່ຽວພາຍໃນ) ເພື່ອກະຕຸ້ນເສດຖະກິດ, ເປັນເຈົ້າການຊຸກຍູ້ແນະນຳບັນດາຫົວໜ່ວຍທຸລະກິດທ່ອງທ່ຽວ ປັບປຸງສະຖານທີ່ທ່ອງທ່ຽວ, ການບໍລິການສະຖານທີ່ພັກ-ຮ້ານອາຫານ ແລະ ຜະລິດຕະພັນການທ່ອງທ່ຽວ ໃຫ້ມີຄຸນນະພາບ ແລະ ມີຄວາມຫຼາກຫຼາຍ; ຊຸກຍູ້ ແລະ ຍົກລະດັບຂະບວນການ "ລາວທ່ຽວລາວ-ລາວຊົມໃຊ້ຜະລິດຕະພັນລາວ";

7) ກະຊວງສຶກສາທິການ ແລະ ກິລາ ເປັນເຈົ້າການຈັດຕັ້ງຜັນຂະຫຍາຍຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ, ຍຸດທະສາດ ແລະ ແຜນພັດທະນາ ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ແຫ່ງຊາດ ແລະ ວຽກງານຈຸດສຸມຂອງແຜນພັດທະນາຂະແໜງສຶກສາທິການ, ວິທະຍາສາດ ແລະ ກິລາ ເພື່ອຍົກສູງຄຸນນະພາບຂອງຊັບພະຍາກອນມະນຸດ, ເອົາໃຈໃສ່ປັບປຸງຫຼັກສູດການຮຽນ-ການສອນໃຫ້ມີຄຸນນະພາບສູງຂຶ້ນໃນທຸກລະດັບ, ຍົກສູງ

DRAFT

ຄຸນນະພາບຂອງການຄົ້ນຄວ້າ, ການພັດທະນາ ແລະ ການນຳໃຊ້ ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ. ພ້ອມທັງສະໜອງອຸປະກອນ, ເຄື່ອງທົດລອງ ແລະ ນະໂຍບາຍທີ່ຈຳເປັນໃຫ້ແກ່ຄູ ແລະ ນັກຮຽນ ໂດຍສະເພາະໃນເຂດຫ່າງໄກສອກຫຼີກ;

8) ກະຊວງສາທາລະນະສຸກ ເພີ່ມທະວີການສົ່ງເສີມສຸຂາອະນາໄມ, ສຸຂະພາບຈະເລີນພັນຂອງແມ່ ແລະ ເດັກ, ການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດມາດຕະການການປ້ອງກັນ, ສະກັດກັ້ນ ແລະ ການແກ້ໄຂການແຜ່ລະບາດຂອງພະຍາດຕ່າງໆ ຢ່າງປົກກະຕິ ແລະ ທັນການ; ສືບຕໍ່ເອົາໃຈໃສ່ສ້າງກອງທຶນປະກັນສຸຂະພາບເປັນເຈົ້າຕົນເອງເທື່ອລະກ້າວ, ຂະຫຍາຍຕາໜ່າງສາທາລະນະສຸກໄປຫາເຂດຫ່າງໄກສອກຫຼີກ ຄຽງຄູ່ກັບການຍົກລະດັບບຸກຄະລາກອນແພດໝໍໃຫ້ມີຄຸນນະພາບ ແລະ ມີຈັນຍາບັນດ້ານວິຊາຊີບສູງຂຶ້ນ;

9) ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນເຈົ້າການປະສານສົມທົບກັບກະຊວງສຶກສາທິການ ແລະ ກິລາ, ສູນກາງຊາວໜຸ່ມ, ສູນກາງສະຫະພັນແມ່ຍິງ ແລະ ສະຫະພັນກຳມະບານ ເພື່ອປັບປຸງກົນໄກການປະສານງານໃນການຝຶກ ແລະ ພັດທະນາສີມືແຮງງານ ໃຫ້ມີຄວາມກົມກຽວກັນ ແລະ ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດ; ພ້ອມທັງສົມທົບກັບເຂດເສດຖະກິດພິເສດ, ໂຄງການລົງທຶນຂອງພາກເອກະຊົນ ແລະ ພາກສ່ວນ ອື່ນໆ ເພື່ອກຳນົດຄວາມຕ້ອງການແຮງງານ; ປັບປຸງຫຼັກສູດການຝຶກອົບຮົມ ໃຫ້ໄດ້ມາດຖານສາກົນ; ເອົາໃຈໃສ່ແກ້ໄຂບັນຫາການຂາດແຄນແຮງງານຢູ່ພາຍໃນປະເທດ;

10) ຂະແໜງການ ແລະ ທ້ອງຖິ່ນ ເປັນເຈົ້າການຄົ້ນຄວ້າວາງແຜນການຜະລິດ ແລະ ການບໍລິການ ຕາມທ່າແຮງບົ່ມຊ້ອນທີ່ໄດ້ປຽບຂອງຕົນ ເພື່ອນຳໃຊ້ກາລະໂອກາດໃນການຮ່ວມມືດ້ານເສດຖະກິດ, ເສັ້ນທາງລົດໄຟລາວ-ຈີນ, ທ່າບົກຕ່າງໆ ຢ່າງມີປະສິດທິຜົນ; ປະສານງານກັນຢ່າງກົມກຽວ ໃນການຈັດຕັ້ງຜັນຂະຫຍາຍທິດການພັດທະນາເຂດແຄວ້ນເພື່ອສ້າງສຳພັນເສດຖະກິດທີ່ມີປະສິດທິຜົນ ແລະ ມີຈຸດສຸມ, ບໍ່ຊ້ຳຊ້ອນກັນ, ແຕ່ສະໜັບສະໜູນເຊິ່ງກັນ ແລະ ກັນ ເພື່ອພ້ອມກັນແກ້ໄຂບັນຫາ ແລະ ພ້ອມກັນພັດທະນາຢ່າງມີໝາກຜົນສູງ.

11) ອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ ສືບຕໍ່ປະຕິບັດພາລະບົດບາດໜ້າທີ່ຂອງຕົນໃນການກວດສອບການຄຸ້ມຄອງການນຳໃຊ້ງົບປະມານ, ການເງິນ ແລະ ຊັບສິນຂອງລັດ, ໃຫ້ຄຳແນະນຳໃນການປັບປຸງແກ້ໄຂບັນຫາດ້ານວິໄນແຜນການ-ການເງິນຂອງບັນດາຫົວໜ່ວຍງົບປະມານຂອງກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ.

------------------------